ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

(ຜ່ານກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ VIII
ຄັ້ງວັນທີ 20-23 ເມສາ 2016 ທີ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ)

**ກະຊວງແຜນການ ແລະ ການລົງທຶນ**
**ມິຖຸນາ 2016**

# ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

(ຜ່ານກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ VIII
ຄັ້ງວັນທີ 20-23 ເມສາ 2016 ທີ່ສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ)

ກະຊວງແຜນການ ແລະ ການລົງທຶນ
ມິຖຸນາ 2016

# ອະລຳພະບົດ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ເປັນແຜນຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ສືບຕໍ່ສຸມໃສ່ແກ້ໄຂຂໍ້ຄົງຄ້າງຂອງແຜນ 5 ປີ ຄັ້ງຜ່ານມາໃຫ້ປະກົດຜົນສຳເລັດ. ນອກ ນັ້ນ, ຍັງເປັນແຜນຜັນຂະຫຍາຍຍຸດທະສາດພັດທະນາເສດຖະກິດ-ສັງຄົມ ຮອດປີ 2025 ແລະ ວິໄສທັດຮອດປີ 2030, ສ້າງ ພື້ນຖານບາດລ້ຽວໃໝ່ໃຫ້ແກ່ການພັດທະນາ ເພື່ອນຳພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ໃນປີ 2020 ແລະ ກ້າວໄປສູ່ປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງໃນປີ 2030. ດັ່ງນັ້ນ, ແຜນພັດທະນາເສດຖະ ກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ຈຶ່ງມີຄວາມສຳຄັນຫຼາຍຕໍ່ພາລະກິດປົກປັກຮັກສາ ແລະ ພັດທະນາປະ ເທດຊາດຕາມແນວທາງການປ່ຽນແປງໃໝ່ຂອງພັກ.

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) ເປັນແຜນບຸກທະລຸທາງດ້ານຈິນ ຕະນາການທີ່ສ້າງຂຶ້ນໂດຍອີງໃສ່ໝາກຜົນ ຫຼື ເປົ້າໝາຍໃຫຍ່ທີ່ຄາດວ່າຈະໄດ້ຮັບໃນທ້າຍສະໄໝຂອງແຜນການ 5 ປີ ຊຶ່ງໄດ້ມີການຄົ້ນຄວ້າ, ກຳນົດເປົ້າໝາຍ ແລະ ໜ້າວຽກຈຸດສຸມໃນການພັດທະນາທີ່ຈະແຈ້ງ ແລະ ສອດຄ່ອງກັບແຜນພັດທະນາຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້ຢ່າງເປັນເອກະພາບ ຕາມກອບແຫຼ່ງທຶນທີ່ຄາດວ່າຈະສາມາດຕອບສະໜອງໄດ້ຈາກແຫຼ່ງຕ່າງໆເຊັ່ນ: ການລົງທຶນຈາກງົບປະມານພາຍໃນ, ການຊ່ວຍເຫຼືອລ້າ ແລະ ກູ້ຢືມ, ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ແລະ ການລົງທຶນຈາກລະບົບການເງິນ-ເງິນຕາ; ນອກນີ້, ແຜນການຄັ້ງນີ້ຍັງ ໄດ້ກຳນົດຂອບຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນ ເພື່ອເປັນບ່ອນອີງໃຫ້ແກ່ທຸກພາກສ່ວນໃນການຊຸກຍູ້, ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຕົວຈິງໃນແຕ່ລະໄລຍະ ໂດຍສະເພາະການສະຫຼຸບຕີລາຄາການຈັດຕັ້ງປະຕິບັດປະຈຳ ແຕ່ລະປີ, ກາງສະໄໝ ແລະ ທ້າຍສະໄໝ ເພື່ອໃຫ້ສາມາດເຫັນໄດ້ຜົນສຳເລັດ, ຈຸດອ່ອນ, ຂໍ້ຄົງ ຄ້າງ ແລະ ສິ່ງທ້າທາຍຕ່າງໆ ເພື່ອປັບປຸງ ແລະ ແກ້ໄຂໃຫ້ທັນສະພາບການ.

**ນະຄອນຫຼວງວຽງຈັນ, ວັນທີ**

**ລັດຖະມົນຕີ**
**ກະຊວງແຜນການ ແລະ ການລົງທຶນ**

**ດຣ. ສຸພັນ ແກ້ວມີໄຊ**

# ສາລະບານ


**ອະລຳພະບົດ** ii

**ພາກທີໜຶ່ງ: ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015)** 1

**1. ທົບທວນຄາດໝາຍ ແລະ ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015)** 2

**2. ສະພາບແວດລ້ອມສາກົນ, ພາກພື້ນ ແລະ ພາຍໃນ** 3

**3. ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VII (2011-2015)** 4

3.1. ດ້ານເສດຖະກິດມະຫາພາກ 4

3.2. ການດຸ່ນດ່ຽງມະຫາພາກ 7

3.2.1. ການດຸ່ນດ່ຽງແຫຼ່ງທຶນເພື່ອການພັດທະນາ 7

3.2.2. ການດຸ່ນດ່ຽງງົບປະມານແຫ່ງລັດ 9

3.2.3. ການດຸ່ນດ່ຽງຂາເຂົ້າ-ຂາອອກ: 10

3.2.4. ການດຸ່ນດ່ຽງແຮງງານ ແລະ ການສ້າງວຽກເຮັດງານທຳ: 11

3.3. ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ 11

3.4. ຜົນສຳເລັດຂອງຂະແໜງການ 12

3.4.1. ການພັດທະນາຂົງເຂດເສດຖະກິດ 12

3.4.2. ການພັດທະນາຂົງເຂດສັງຄົມ 28

3.4.3. ການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ 38

3.4.4. ການພັດທະນາວິສາຫະກິດ 40

3.4.5. ການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດດ້ານການພັດທະນາ: 41

3.4.6. ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ 47

3.4.7. ການພັດທະນາຂົງເຂດລັດ 55

3.4.8. ການຈັດຕັ້ງປະຕິບັດວຽກງານການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ 57

3.4.9. ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 58

3.4.10. ການຮ່ວມມືສາກົນແລະພາກພື້ນ 59

3.5. ຕີລາຄາຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຂອງຂະແໜງການ ແລະ ສິ່ງທ້າທາຍ 62

3.5.1. ສັງລວມຜົນສຳເລັດ 62

3.5.2. ຂໍ້ຄົງຄ້າງ 64

3.5.3. ບາງບົດຮຽນທີ່ຖອດຖອນໄດ້ຈາກແຜນ 5 ປີ ຄັ້ງທີ VII ເພື່ອນຳໃຊ້ເຂົ້າໃນການສ້າງແຜນຄັ້ງທີ VIII 66

## ພາກທີສອງ: ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020)___69


**1. ສະພາບແວດລ້ອມທີ່ອຳນວຍ ແລະ ສິ່ງທ້າທາຍ___70**

1.1. ສະພາບແວດລ້ອມທີ່ເອື້ອອຳນວຍ___70

1.2. ສິ່ງທ້າທາຍ___70

1.3. ສະພາບດ້ານປະຊາກອນ___71

1.4. ການພັດທະນາແບບຍືນຍົງ___72

1.5. ການຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ (LDCs)___73

**2. ວິໄສທັດຮອດປີ 2030, ຍຸດທະສາດຮອດປີ 2025 ແລະ ທິດທາງໜ້າທີ່ລວມ 2016-2020___74**

2.1. ວິໄສທັດຮອດປີ 2030:___74

2.2. ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025):___74

2.3. ທິດທາງ, ໜ້າທີ່ລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020):___75

**3. ຈຸດໝາຍລວມ, ໝາກຜົນ (ຫຼື ເປົ້າໝາຍ) ແລະ ແຜນວຽກຈຸດສຸມຂອງແຜນ 5 ປີ ຄັ້ງທີ VIII___76**

3.1. ຈຸດໝາຍລວມ, ຕົວຊີ້ບອກ ແລະ ຄາດໝາຍຕົ້ນຕໍ___76

3.2. ໝາກຜົນ ຫຼື ເປົ້າໝາຍທີ່ຄາດວ່າຈະໄດ້ຮັບໃນທ້າຍໄລຍະແຜນການ 5 ປີ ຄັ້ງທີ VIII (2016-2020)___78

3.3. ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020___83

3.4. ເພື່ອບັນລຸເປົ້າໝາຍ 1 ຕ້ອງສຸມໃສ່ບັນດາແຜນວຽກຈຸດສຸມດັ່ງນີ້:___84

3.4.1. ແຜນວຽກຈຸດສຸມ 1: ຮັບປະກັນໃຫ້ເສດຖະກິດແຫ່ງຊາດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສົມດຸນ.___84

3.4.2. ແຜນວຽກຈຸດສຸມ 2: ຮັບປະກັນໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ:___92

3.4.3. ແຜນວຽກຈຸດສຸມ 3: ຮັບປະກັນຄວາມສອດຄ່ອງ ແລະ ກົມກຽວລະຫວ່າງ ຄວາມສາມາດສະໜອງແຫຼ່ງທຶນກັບການວາງແຜນພັດທະນາ.___93

3.4.4. ແຜນວຽກຈຸດສຸມ 4: ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນຢ່າງມີຄວາມສອດຄ່ອງ ແລະ ສົມດູນ.___94

3.4.5. ແຜນວຽກຈຸດສຸມ 5: ພັດທະນາກຳລັງແຮງງານໃຫ້ມີຄຸນນະພາບ, ດຸໝັ່ນ ແລະ ອົດທົນ___103

3.4.6. ແຜນວຽກຈຸດສຸມ 6: ພັດທະນາຜູ້ປະກອບການ, ສ້າງວິຊາການ ແລະ ຜູ້ຊຳນານງານ___104

3.4.7. ແຜນວຽກຈຸດສຸມ 7: ເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ___105

3.5. ເພື່ອບັນລຸເປົ້າໝາຍ 2 ຕ້ອງສຸມໃສ່ບັນດາວຽກຈຸດສຸມດັ່ງນີ້:___110

3.5.1. ແຜນວຽກຈຸດສຸມ 1: ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ໄດ້ຢ່າງໜັກແໜ້ນ ແລະ ກວ້າງຂວາງຕາມທິດ 3 ສ້າງ.___110

3.5.2. ແຜນວຽກຈຸດສຸມ 2: ຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ___112

3.5.3. ແຜນວຽກຈຸດສຸມ 3: ທຸກຄົນເຂົ້າເຖິງການສຶກສາໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ.___115

3.5.4. ແຜນວຽກຈຸດສຸມ 4: ຮັບປະກັນການບໍລິການດ້ານສາທາລະນະສຸກໄດ້ຢ່າງ ທົ່ວເຖິງ ແລະ ມີຄຸນນະພາບ.___117

3.5.5. ແຜນວຽກຈຸດສຸມ 5: ການບໍລິການທາງດ້ານການປົກປ້ອງສັງຄົມໄດ້ຮັບການຍົກ ລະດັບ ແລະ ທຸກຄົນໄດ້ເຂົ້າເຖິງຢ່າງກວ້າງຂວາງ___118

3.5.6. ແຜນວຽກຈຸດສຸມ 6: ພັດທະນາ ແລະ ປົກປັກຮັກສາຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ.___119

3.5.7. ແຜນວຽກຈຸດສຸມ 7: ຮັບປະກັນສະຖຽນລະພາບທາງດ້ານການເມືອງຢ່າງໜັກ ແໜ້ນ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳແລະ ສີວິໄລ.___120

3.6. ເພື່ອບັນລຸເປົ້າໝາຍ 3 ຕ້ອງສຸມໃສ່ແຜນວຽກຈຸດສຸມດັ່ງນີ້:___122

3.6.1. ແຜນວຽກຈຸດສຸມ 1: ການປົກປັກຮັກສາສະພາບແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ.___122

3.6.2. ແຜນວຽກຈຸດສຸມ 2: ກຽມຄວາມພ້ອມໃນການຮັບມືໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ. 126
3.6.3. ແຜນວຽກຈຸດສຸມ 3: ຫຼຸດຜ່ອນຄວາມບໍ່ມີສະຖຽນລະພາບຂອງການຜະລິດ ກະສິກຳທີ່ເກີດຈາກຜົນກະທົບຂອງໄພພິບັດ. 128
3.7. ບັນດາແຜນວຽກຈຸດສຸມປິ່ນອ້ອມທີ່ພົວພັນກັບຫຼາຍຂະແໜງການມີ ດັ່ງນີ້: 129
3.7.1. ແຜນວຽກຈຸດສຸມທີ 1: ເພີ່ມທະວີປະສິດທິພາບຂອງການຄຸ້ມຄອງ ແລະ ບໍລິຫານລັດ 129
3.7.2. ແຜນວຽກຈຸດສຸມທີ 2: ສົ່ງເສີມຄວາມຮູ້ພູມປັນຍາໃສ່ການຄົ້ນຄ້ວາ, ການພັດທະນາວິທະຍາ ສາດ, ການຄຸ້ມຄອງ ແລະ ນຳໃຊ້ເຕັກໂນໂລຊີ, ນະວັດຕະກຳ ແລະ ການສື່ສານ: 133
3.7.3. ແຜນວຽກຈຸດສຸມທີ 3: ສົ່ງເສີມ ແລະ ພັດທະນາແມ່ຍິງ, ເຍົາວະຊົນ ແລະ ໄວໜຸ່ມ 137

## ພາກທີສາມ: ນະໂຍບາຍ, ມາດຕະການ ແລະ ກົນໄກ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) 145

**1. ນະໂຍບາຍ 146**

**2. ມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) 146**
2.1. ຂອບວຽກທາງດ້ານເສດຖະກິດມະຫາພາກ 146
2.2. ດ້ານແຫຼ່ງທຶນ 147
2.3. ດ້ານການຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ: 148
2.4. ມາດຕະການດ້ານການຜະລິດ 148
2.5. ມາດຕະການດ້ານການບໍລິການ ແລະ ການບໍລິການທາງຜ່ານ (ໂລຈິດສະຕິກ) 149
2.6. ມາດຕະການໃນການຄົ້ນຄ້ວາ ແລະ ນຳໃຊ້ຜົນການຄົ້ນຄ້ວາວິທະຍາສາດ-ເຕັກໂນໂລຊີ 149
2.7. ມາດຕະການດ້ານຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) 149
2.8. ການສ້າງຂີດຄວາມສາມາດ ແລະ ການສ້າງສີມືແຮງງານ 150

**3. ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020) 150**

**4. ການຕິດຕາມ ແລະ ປະເມີນຜົນແຜນການ 5 ປີ ຄັ້ງທີ VIII (2016-2020) 151**
4.1. ອົງປະກອບສຳຄັນໃນລະບົບການຕິດຕາມ ແລະ ປະເມີນຜົນແຜນການ 5 ປີ ຄັ້ງທີ VIII 151
4.2. ການຕິດຕາມກວດກາ ແລະ ປະເມີນຜົນ 151
4.3. ການປະເມີນຜົນ 152
4.4. ການລາຍງານຜົນການຕິດຕາມ ແລະ ປະເມີນຜົນ 153
4.5. ການນຳໃຊ້ຜົນການຕິດຕາມ ແລະ ປະເມີນຜົນ 153
4.6. ລະບົບການຕິດຕາມ ແລະ ປະເມີນຜົນແບບຍືນຍົງ 154

# ຕາຕະລາງ

ຕາຕະລາງ 1: ອັດຕາການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ ແລະ ຄາດໝາຍຂອງແຜນການ 5 ປີ ຄັ້ງທີ VII (2011-2015) 4
ຕາຕະລາງ 2: ລວມຍອດຜະລິດຕະພັນພາຍໃນ (GDP) ສະເລ່ຍຕໍ່ຫົວຄົນ 5
ຕາຕະລາງ 3: ການປ່ຽນແປງໂຄງປະກອບເສດຖະກິດໃນແຕ່ລະສົກປີ ທຽບໃສ່ຄາດໝາຍແຜນການ 5 ປີ ຄັ້ງທີ VII (2011-2015) 5
ຕາຕະລາງ 4: ການປ່ຽນແປງໂຄງປະກອບອັດຕາເງິນເຟີ້ 6
ຕາຕະລາງ 5: ການປ່ຽນແປງອັດຕາແລກປ່ຽນ 7
ຕາຕະລາງ 6: ອັດຕາການຂະຫຍາຍຕົວປະລິມານເງິນ 7
ຕາຕະລາງ 7: ຄັງສຳຮອງເງິນຕາຕ່າງປະເທດ 7
ຕາຕະລາງ 8: ສິນເຊື່ອລະບົບທະນາຄານ 9
ຕາຕະລາງ 9: ລາຍຮັບ, ລາຍຈ່າຍ ແລະ ຂາດດຸນງົບປະມານໃນແຕ່ລະສົກປີ ໃນໄລຍະແຜນການ 5 ປີ ຄັ້ງທີ VII (2011-2015) 10
ຕາຕະລາງ 10: ຕາຕະລາງຈຳນວນນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວ 33
ຕາຕະລາງ 11: ຕົວຊີ້ບອກການເຂົ້າເຖິງການສຶກສາຂັ້ນປະຖົມຢ່າງທົ່ວເຖິງ 42
ຕາຕະລາງ 12: ຕົວຊີ້ບອກການສົ່ງເສີມບົດບາດຍິງ-ຊາຍ ແລະ ສົ່ງເສີມຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ 43
ຕາຕະລາງ 13: ຕົວຊີ້ບອກການຫຼຸດຜ່ອນການເສຍຊີວິດຂອງເດັກນ້ອຍ 44
ຕາຕະລາງ 14: ຕົວຊີ້ບອກການປັບປຸງສຸຂະພາບຂອງແມ່ 44
ຕາຕະລາງ 15: ສັງລວມການຈັດຕັ້ງປະຕິບັດຕົວເລກຄາດຫມາຍແຜນການ 5 ປີ (2011-2015) ຂອງພາກເໜືອ 50
ຕາຕະລາງ 16: ສັງລວມການຈັດຕັ້ງປະຕິບັດຕົວເລກຄາດຫມາຍແຜນການ 5 ປີ ຄັ້ງທີ VII ຂອງພາກກາງ 52
ຕາຕະລາງ 17: ສັງລວມການຈັດຕັ້ງປະຕິບັດຕົວເລກຄາດຫມາຍແຜນການ 5 ປີ ຄັ້ງທີ VII ຂອງພາກໃຕ້ 54
ຕາຕະລາງ 18: ຕົວຊີ້ບອກ ແລະ ຄາດໝາຍເພື່ອບັນລຸຈຸດໝາຍລວມ 76
ຕາຕະລາງ 19: ຕົວຊີ້ບອກ ແລະ ຄາດໝາຍສູ້ຊົນໃນລະດັບໝາກຜົນ 78

# ເອກະສານຊ້ອນທ້າຍ

ເອກະສານຊ້ອນທ້າຍ 1: ຂອບຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020). 156
ເອກະສານຊ້ອນທ້າຍ 2: ຕາຕະລາງສັງລວມຕົວເລກການຈັດຕັ້ງປະຕິບັດຄາດໝາຍແຜນການ 5 ປີ ຄັ້ງທີ VII (2011-2015) 167
ເອກະສານຊ້ອນທ້າຍ 3: ຄາດໝາຍຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) 169
ເອກະສານຊ້ອນທ້າຍ 4: ຕາຕະລາງສັງລວມຄວາມທຸກຍາກ, ຊ່ອງວ່າງ, ຄວາມຮຸນແຮງຂອງຄວາມທຸກຍາກ ແລະ ຄວາມແຕກໂຕນຂອງສັງຄົມ 170
ເອກະສານຊ້ອນທ້າຍ 5: ອະທິບາຍຄຳສັບ 171

# ພາກທີໜຶ່ງ

## ການສະຫຼຸບຕີລາຄາການ
## ຈັດຕັ້ງປະຕິບັດແຜນພັດທະນາ
## ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ
## ຄັ້ງທີ VII (2011-2015)

# ພາກທີໜຶ່ງ: ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015)

## 1. ທົບທວນຄາດໝາຍ ແລະ ທິດທາງລວມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011-2015)

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII ໄດ້ວາງຄາດໝາຍສູ້ຊົນສ້າງເສດຖະກິດທີ່ມີການເຕີບໂຕ ແບບຍືນຍົງເລັ່ງໃສ່ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນໂດຍການຫັນປະເທດໄປສູ່ການເປີດກວ້າງທາງດ້ານເສດຖະກິດ, ສ້າງຄວາມເຂັ້ມແຂງໃຫ້ແກ່ພາກເອກະຊົນເພື່ອເປັນພື້ນຖານການພັດທະນາເສດຖະກິດ ແລະ ທັງສຸມໃສ່ການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາໃຫ້ໄດ້ພາຍໃນປີ 2015. ຄາດໝາຍລວມຂອງແຜນ 5 ປີ ຄັ້ງທີ VII ມີທັງໝົດ 4 ຄາດໝາຍດັ່ງລຸ່ມນີ້:

- ເຮັດໃຫ້ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ມີຄວາມສະຫງົບໝັ້ນທ່ຽງ ດ້ວຍອັດຕາການເຕີບ ໂຕຂອງ (GDP) ເພີ່ມຂຶ້ນ 8% ຕໍ່ປີຂຶ້ນໄປ, ລວມຍອດຜະລິດຕະພັນສະເລ່ຍຕໍ່ຫົວຄົນ ໃຫ້ໄດ້ 1.700 ໂດລາສະ ຫະລັດໃນປີ 2015.
- ບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ ແລະ ເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນໃນປີ 2015, ສ້າງພື້ນຖານວັດຖຸເຕັກນິກ ແລະ ເງື່ອນໄຂທີ່ຈຳເປັນ ເພື່ອນຳເອົາປະເທດຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ໃນປີ 2020.
- ຮັບປະກັນຄວາມຍືນຍົງຂອງການພັດທະນາ, ໂດຍເນັ້ນການພັດທະນາເສດຖະກິດຕິດພັນກັບການພັດທະນາວັດ ທະນະທຳ-ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມທຳມະຊາດອັນເປັນທ່າແຮງຂອງຊາດ, ຫຼຸດຜ່ອນ ຄວາມສ່ຽງຈາກໄພທຳມະຊາດ ແລະ ການປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ.
- ຮັບປະກັນສະຖຽນລະພາບທາງການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ; ຄວາມປອດໄພໃຫ້ພົນລະເມືອງຢ່າງໜັກແໜ້ນ ພ້ອມທັງຮັບປະກັນການເປີດກວ້າງການເຊື່ອມໂຍງກັບພາກພື້ນແລະສາກົນ.

ເພື່ອບັນລຸໄດ້ຈຸດໝາຍລວມເຫຼົ່ານີ້, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄດ້ສຸມໃສ່ ທິດທາງດັ່ງລຸ່ມນີ້:

- ຖືເອົາເສດຖະກິດເປັນໃຈກາງຂອງການພັດທະນາ, ຮັບປະກັນຄວາມຍືນຍົງ ແລະ ສົມດູນ; ຫຼຸດຜ່ອນຄວາມທຸກຍາກໃຫ້ແກ່ປະຊາຊົນ; ຍູ້ແຮງການຫັນປ່ຽນເສດຖະກິດຕາມທິດທັນສະໄໝ,
- ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ໂດຍພື້ນຖານດ້ວຍມາດຕະການທີ່ສອດຄ່ອງ, ຫຼຸດຜ່ອນຄວາມແຕກໂຕນລະຫວ່າງຕົວເມືອງ-ຊົນນະບົດ, ສົ່ງເສີມຄວາມສະເໝີພາບລະຫວ່າງຜູ້ທຸກ-ຜູ້ຮັ່ງ.
- ພັດທະນາຊັບພະຍາກອນມະນຸດ, ໂດຍຖືເອົາການປະຕິຮູບການສຶກສາ, ການຍົກສູງຄຸນນະພາບ ແລະ ການຂະຫຍາຍໂອກາດດ້ານການສຶກສາ ແລະ ພັດທະນາເສດຖະກິດພູມປັນຍາເປັນສຳຄັນ; ບຳລຸງສ້າງຊັບພະຍາກອນມະ ນຸດໃຫ້ມີຄວາມຮູ້, ມີສຸຂະພາບ ແລະ ມີພາລານາໄມສົມບູນ; ສ້າງໃຫ້ໄດ້ພະນັກງານຄຸ້ມຄອງເກັ່ງ, ນັກວິຊາການຊຳ ນານງານ ແລະ ເປັນກຳມະກອນທີ່ມີສີມືດີ.
- ຍົກສູງຄວາມສັກສິດ ແລະ ປະສິດທິຜົນຂອງການຄຸ້ມຄອງບໍລິຫານລັດແຕ່ສູນກາງລົງຮອດຮາກຖານຕາມທິດລັດ ແຫ່ງກົດໝາຍ ແລະ ຕ້ານການສໍ້ລາດບັງຫຼວງ.
- ເສີມຂະຫຍາຍກຳລັງແຮງສັງລວມຂອງຊາດ ແລະ ກຳລັງແຮງຂອງຍຸກສະໄໝເຂົ້າໃນການພັດທະນາປະເທດ; ຈັດ ສັນ, ຟື້ນຟູ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງໃຫ້ເກີດປະໂຫຍດສູງສຸດ; ຂະຫຍາຍການພົວພັນ ຮ່ວມມືກັບເພື່ອນມິດ, ບັນດາປະເທດໃນພາກພື້ນ ແລະ ສາກົນ; ສ້າງລະບົບໂຄງລ່າງເສດຖະກິດ-ສັງຄົມ ແບບຄົບ ຊຸດ ແລະ ວາງນະໂຍບາຍສົ່ງເສີມການລົງທຶນ ແລະ ຈັດຕັ້ງປະຕິບັດຍຸດທະສາດຫັນເປັນອຸດສະຫະກຳ ແລະ ທັນສະໄໝດ້ວຍບາດກ້າວທີ່ຕັ້ງໜ້າ.

# 2. ສະພາບແວດລ້ອມສາກົນ, ພາກພື້ນ ແລະ ພາຍໃນ

## 2.1. ສະພາບແວດລ້ອມສາກົນ ແລະ ພາກພື້ນ[1]

ການຈັດ ຕັ້ງ ປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ 5 ປີຜ່ານມາ ໄດ້ດຳເນີນໄປໃນທ່າມກາງສະພາບແວດລ້ອມສາກົນ, ພາກພື້ນ ແລະ ພາຍໃນ ມີສິ່ງທ້າທາຍ ແລະ ຄວາມຫຍຸ້ງຍາກຫລາຍປະການ ເປັນຕົ້ນ: (1) ສະພາບໜີ້ສິນ ແລະ ບັນຫາວິກິດການດ້ານການເງິນທີ່ເກີດຂຶ້ນຢູ່ສະຫະລັດອາເມລິກາ, ປະເທດໄອແລນ ແລະ ປະເທດອື່ນໆໃນກຸ່ມສະຫະພາບເອີຣົບ, (2) ການເໜັງຕີງຂອງລາຄານ້ຳມັນ ແລະ ລາຄາສິນຄ້າສະບຽງອາຫານບາງຊະນິດໃນຕະຫຼາດໂລກ, (3) ສະພາບຄວາມວຸ້ນວາຍທາງການເມືອງ ຢູ່ບາງປະເທດໃນຕາເວັນອອກກາງ ແລະ ອາຟຣິກາເໜືອ ໂດຍສະເພາະການເກີດສົງຄາມຢູ່ປະເທດລີເບຍ, (4) ໄພທຳມະຊາດ: ການເກີດແຜ່ນດິນໄຫວ ແລະ ຊູນາມິຄັ້ງຮຸນແຮງ ຢູ່ປະເທດຍີ່ປຸ່ນ ໃນ ເດືອນມີນາ 2011. ສະພາບດັ່ງກ່າວ, ໄດ້ເຮັດໃຫ້ເສດຖະກິດຢູ່ບັນດາປະເທດທີ່ພັດທະນາແລ້ວ ແລະ ປະເທດກຳລັງພັດທະ ນາຂະຫຍາຍຕົວຊ້າລົງ ເຊັ່ນ: ສະພາບເສດຖະກິດໂລກຂະຫຍາຍຕົວຫລຸດລົງເລັກຫນ້ອຍຈາ ກປີ 2014 ປະມານ 0,3% ຊຶ່ງ ໃນປີ 201 5 ຂະ ຫຍາຍ ຕົ ວໃນ ລະ ດັ ບ 3, 1%, ສຳລັບປະເທດສະຫະລັດອາເມລິກາ ຈາກ 3,5% ໃນສົກປີ 2010 ມາເປັນ 2,6% ໃນສົກປີ 2015, ຍີ່ປຸ່ນ ຈາກ 3,3% ມາເປັນ 0,6% ໃນປີ 2015, ສປ ຈີນ ຈາກ 10,9% ມາເປັນ 6,8% ໃນປີ 2015; ສຳລັບເສດຖະກິດຂອງບັນດາປະເທດອາຊຽນ[2]: ອັດຕາການຂະຫຍາຍຕົວຂອງປະເທດສິງກະໂປ ຈາກ 2,9% ໃນປີ 2014 ມາເປັນ 3,0% ໃນປີ 2015, ອິນໂດເນເຊຍ ຂະຫຍາຍຕົວ 5% ມາເປັນ 5,5%, ມາເລເຊຍຈາກ 6,0% ມາເປັນ 4,7%, ໄທ ຈາກ 0,7% ມາເປັນ 3,6% ແລະ ສສ ຫວຽດນາມ ຈາກ 6% ມາເປັນ 6,1%. ສຳລັບເສດຖະກິດຂອງກຸ່ມປະເທດເອີຣົບຄາດວ່າຢູ່ໃນລະດັບ 1,4% ໃນປີ 2015 ເພີ່ມຂຶ້ນເລັກນ້ອຍຈາກປີຜ່ານມາ ຊຶ່ງຂະຫຍາຍຕົວພຽງ 0,9% ປັດ ໃຈຊຸກຍູ້ຕົ້ນຕໍມາຈາກການຂະຫຍາຍຕົວຂອງການຊົມໃຊ້ຄົວເຮືອນເນື່ອງຈາກລາຍຮັບຕົວຈິງຂອງຄົວເຮືອນມີທ່າອ່ຽງເພີ່ມຂຶ້ນ, ສະພາບການຈ້າງງານດີຂຶ້ນ ບວກກັບການຫລຸດລົງຂອງລາຄາພະລັງງານ. ມາຮອດໄລຍະທ້າຍຂອງແຜນ 5 ປີ ເຫັນວ່າສະພາບສາກົນໂດຍລວມມີທ່າອ່ຽງດີຂຶ້ນ ເປັນຕົ້ນ ອັດຕາການຂະຫຍາຍຕົວມີທ່າອ່ຽງທີ່ດີຂຶ້ນ ແລະ ອັດຕາເງິນເຟີ້ຂອງໂລກແມ່ນມີແນວໂນ້ມຫລຸດລົງ.

## 2.2. ສະພາບແວດລ້ອມພາຍໃນປະເທດ

ນັບແຕ່ປີ 2010 ມາຮອດປະຈຸບັນ, ປະເທດເຮົາຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍຢ່າງໜັກແໜ້ນ, ມີການຮ່ວມມືກັບສາກົນຢ່າງກ້ວາງຂວາງ ອັນທີ່ພົ້ນເດັ່ນ ສປປ ລາວ ໄດ້ຮັບກຽດເປັນ ເຈົ້າ ພ າບ ຫຼາຍໆ ກອງປະ ຊຸ ມທີ່ສຳຄັນຂອງສາກົນ ເຊັ່ນ: ກອງປະຊຸມລັດຖະສະພາອາຊີ-ເອີລົບ ຄັ້ງທີ 7 ແລະ ກອງປະຊຸມສຸດຍອດອາຊີ-ເອີລົບ ຄັ້ງທີ 9 ໃນເດືອນຕຸລາ ແລະ ເດືອນພະຈິກ 2012, ກອງປະຊຸມສຸດຍອດຜູ້ນຳກຳປູເຈຍ-ລາວ-ມຽນມາ -ຫ ວຽດ ນ າມ ( CLMV ) ຄັ້ ງທີ 6, ກອງປະຊຸມສຸດຍ ອດຂອບການຮ່ວມມືດ້ານເສດຖະກິດແມ່ນ້ຳອີຣະວະດີ-ເຈົ້າພະຍາ-ແມ່ນ້ຳຂອງ (ACMECS) ຄັ້ງທີ 4 ແຕ່ວັນທີ 12-13 ມີນາ 2013, ກອງປະຊຸມລັດຖະສະພາອາຊຽນ ຄັ້ງທີ 35 ໃນປີ 2014 ເຊິ່ງຖືໄດ້ວ່າເປັນເຫດການປະຫວັດສາດອັນສຳຄັນ ແລະ ເປັນໂອກາດອັນດີທີ່ຈະໃຫ້ບັນດາປະເທດເພື່ອນມິດ ແລະ ຄູ່ຮ່ວມພັດ ທະນ າ ໄດ້ ຮູ້ເຖິງການ ພັ ດທະນາ ແລະ ທ່າແຮງບົ່ມຊ້ອນຂອງປະເທດເຮົາ, ຮູ້ເຖິງນະໂຍບາຍການຮ່ວມມືກັບຕ່າງປະເທດອັນຖືກຕ້ອງສະເໝີຕົ້ນສະເໝີປາຍຂອງລັດຖະບານເຮົາ ທັງເປັນການຍົກສູງບົດບາດຂອງ ສປປລາວ ໃນເວທີສາກົນ; ການເຂົ້າເປັນສະມາຊິກອົງການການຄ້າໂລກໃນວັນທີ 2 ກຸມພາ 2013 ແລະ ເປັນເຈົ້າພາບແຂ່ງຂັນກິລາມະຫາວິທະຍາໄລອາຊຽນ ຄັ້ງທີ 16 ໃນເດືອນທັນວາ 2012. ພ້ອມດຽວກັນນັ້ນ, ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ, ຄວາມບຸກບືນສ້າງຜົນງານຂອງບັນດາສະມ າຊິກ ພັ ກ - ພະນັ ກງານ ແລະ ຄວ າ ມກະຕື ລືລົ້ນຂອ ງປະ ຊາຊົ ນທຸກຊັ້ ນ ຄົນ ໃ ນສັງ ຄົມ ໃນ ກາ ນຈັດ ຕັ້ງ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ, ງານສະເຫຼີມສະຫຼອງວຽງຈັນເປັນນະຄອນຫຼວງ ຄົບຮອບ 450 ປີ, ສ້າງຜົນງານຄຳນັບຮັບຕ້ອນວັນສະຖາປານາ ສປປລາວ ຊາດ ຄົບຮອບ 40 ປີ ແລະ ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບ ຮອບ 60 ປີ ແລະ ວັນບຸນໃຫຍ່ຕ່າງໆຂອງຊາດ ໄດ້ກາຍເປັນປັດໄຈພື້ນຖານທີ່ອຳນວຍໃຫ້ແກ່ການພັດທະນາ, ການຜະລິດ, ການບໍລິການ, ການດຳເນີນ ທຸລະກິດ, ການຄ້າ ແລະ ການລົງທຶນ ເພື່ອກາຍເປັນກຳລັງແຮງຊຸກດັນໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດ

1 ແຫຼ່ງຂໍ້ມູນ: ຈາກບົດລາຍງານເສດຖະກິດໂລກ, ກອງທຶນການເງິນສາກົນ (World Economic Outlook, IMF October 2015)

2 ແຫຼ່ງຂໍ້ມູນ: ຈາກບົດລາຍງານການພັດທະນາຂອງທະນາຄານພັດທະນາອາຊີ ປີ 2015 (Asian Development Outlook 2015)

ຖະກິດ-ສັງຄົມແຫ່ງຊາດ. ເຖິງຢ່າງໃດກໍຕາມ, ປະເທດເຮົາ ຍັງໄດ້ຖືກຄຸກຄາມຈາກໄພທຳມະຊາດ ໃນລະ ດູຝົນສົກປີ 2012-13 ໄດ້ເກີດອຸທົກກະໄພ ເນື່ອງຈາກໄດ້ຮັບຜົນກະທົບຈາກພະຍຸຕ່າງໆທີ່ພັດຜ່ານປະເທດເຮົາ ເຊິ່ງໄດ້ເຮັດໃຫ້ເນື້ອທີ່ການຜະລິດ, ພື້ນຖານໂຄງລ່າງ, ເຮືອນຊານບ້ານຊ່ອງຂອງປະຊາຊົນໄດ້ເສຍຫາຍຫຼາຍສົມຄວນ. ແຕ່ລັດຖະບານໄດ້ຕັດສິນໃຈສູງ ໂດຍສະເພາະໄດ້ສຸມທຶນແກ້ໄຂສະພາບດັ່ງກ່າວ ເຮັດໃຫ້ເສດ ຖະກິດຂອງປະເທດສືບຕໍ່ຂະຫຍາຍຕົວ ແລະ ມີຄວາມໝັ້ນທ່ຽງພໍສົມຄວນ.

# 3. ຜົນສຳເລັດຂອງການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VII (2011-2015)

ຜ່ານການຈັດຕັ້ງປະຕິບັດໃນໄລຍະ 5 ປີ ຜ່ານມາ, ເຫັນວ່າເສດຖະກິດຂອງລາວໄດ້ມີການເຕີບໂຕຢ່າງຕໍ່ເນື່ອງ ແລະໝັ້ນທ່ຽງ, ສັງຄົມມີຄວາມສະຫງົບປົກກະຕິ ສະແດງອອກປະຊາຊົນລາວມີວຽກເຮັດງານທຳສ້າງລາຍໄດ້ເພີ່ມຂຶ້ນເຮັດໃຫ້ມີຊີວິດການເປັນຢູ່ດີຂຶ້ນ, ອັດຕາເງິນເຟີ້ຢູ່ໃນລະດັບຕ່ຳ, ການຜະລິດຂອງຂະແໜງກະສິກຳ, ອຸດສາຫະກຳ ແລະ ການບໍລິການໄດ້ເພີ່ມຂຶ້ນໃນລະດັບທີ່ເພິ່ງພໍໃຈ, ການສົ່ງອອກ-ນຳເຂົ້າ, ການລົງທຶນທັງພາກລັດ ແລະ ເອກະຊົນກໍເພີ່ມຂຶ້ນ, ການເກັບລາຍຮັບງົບປະມານປະຕິບັດໄດ້ບັນລຸຄາດໝາຍແຜນການໃນແຕ່ລະປີ, ສ່ວນການຄຸ້ມຄອງລາຍຈ່າຍງົບປະມານສາມາດຮັບ ປະກັນໄດ້ລາຍຈ່າຍບໍລິຫານ ເປັນເງິນເດືອນພະນັກງານ-ລັດຖະກອນ ແລະ ລາຍຈ່າຍການລົງທຶນ. ອັດຕາຄວາມທຸກຍາກໄດ້ຫຼຸດລົງຈາກ 27,6% ໃນປີ 2008 ມາເປັນ 23,2% ໃນສົກປີ 2012-2013 (ຜົນການສຳຫລວດ LECS V). ດັດຊະນີພັດທະນາມະນຸດ (HDI) ສປປ ລາວ ເພີ່ມຂຶ້ນຈາກ 0.539 ໃນປີ 2010 ມາເປັນ 0.575 ໃນປີ 2014 ເຊິ່ງໄດ້ຖືກຈັດຢູ່ໃນປະເທດທີ່ມີການພັດທະນາມະນຸດລະດັບປານກາງ ແລະ ຈັດຢູ່ເປັນອັນດັບທີ 141 ໃນປີ 2014 ໃນຈຳນວນ 188 ປະເທດ[3]; ຜົນສຳເລັດລະອຽດໃນແຕ່ລະດ້ານມີດັ່ງນີ້:

## 3.1. ດ້ານເສດຖະກິດມະຫາພາກ

- **ການເຕີບໂຕເສດຖະກິດ:**

ໃນໄລຍະ 5 ປີ ຜ່ານມາ ເສດຖະກິດມີການເຕີບໂຕຢ່າງຕໍ່ເນື່ອງ ດ້ວຍອັດຕາສະເລ່ຍ 7,9% ຕໍ່ປີ (ແຜນການ 8% ຂຶ້ນໄປ). ການເພີ່ມຂຶ້ນຢ່າງຕໍ່ເນື່ອງຂອງເສດຖະກິດ ແມ່ນຍ້ອນລັດຖະບານມີລະບົບກົນໄກ ແລະ ມາດຕະການຄຸ້ມຄອງເສດຖະກິດມະຫາພາກທີ່ຖືກຕ້ອງ; ປະເທດຊາດມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍທາງດ້ານສັງຄົມ, ມີສະຖຽນລະພາບທາງການເມືອງ ແລະ ເສດຖະກິດ; ມີການເຊື່ອມໂຍງເຂົ້າສູ່ສາກົນ ແລະ ພາກພື້ນຫຼາຍຂຶ້ນ.

**ຕາຕະລາງ 1: ອັດຕາການເຕີບໂຕຂອງລວມຍອດຜະລິດຕະພັນພາຍໃນ ແລະ ຄາດໝາຍຂອງແຜນການ 5 ປີ ຄັ້ງທີ VII (2011-2015)**

| ລາຍລະອຽດ | ຄາດໝາຍສູ້ຊົນ 2011-2015 | ສົກປີ 2010-11 | ສົກປີ 2011-12 | ສົກປີ 2012-13 | ສົກປີ 2013-14 | ປະຕິບັດສົກປີ 2014-15 | ສະເລ່ຍ (5 ປີ) |
|---|---|---|---|---|---|---|---|
| GDP ເພີ່ມຂຶ້ນ (%) | >8 | 8,1 | 8,3 | 8,0 | 7,8 | 7,5 | 7,9 |
| - ກະສິກຳ-ປ່າໄມ້ (%) | 3,5 | 2,9 | 2,8 | 3,1 | 3,0 | 3,0 | |
| - ອຸດສາຫະກຳ (%) | 15,0 | 15,8 | 14,4 | 7,4 | 8,5 | 8,9 | |
| - ການບໍລິການ (%) | 6,5 | 7,8 | 8,1 | 9,7 | 9,3 | 9,1 | |

ແຫຼ່ງຂໍ້ມູນ: ບົດສະຫລຸບແຜນພັດທະນາເສດຖະກິດ-ສັງຄົມ ປະຈຳແຕ່ລະສົກປີ 2010-2011 ຫາ 2014-2015.

- ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ ຫົວຄົນ: ໄດ້ເພີ່ມຂຶ້ນຈາກ 1.217 ໂດລາສະຫະລັດ ໃນສົກປີ 2010-2011 ມາເປັນ 1.970 ໂດລາສະຫາລັດ ໃນສົກປີ 2014-15 ສາມາດບັນລຸລື່ນແຜນການວາງໄວ້ (ແຜນການ: 1.700 ໂດລາ).

3 ຈາກບົດລາຍງານການພັດທະນາມະນຸດປີ 2015

**ຕາຕະລາງ 2: ລວມຍອດຜະລິດຕະພັນພາຍໃນ (GDP) ສະເລ່ຍຕໍ່ຫົວຄົນ**

| ສົກປີ | ມູນຄ່າ GDP ລາຄາປະຈຸບັນ(ຕື້ກີບ) | ແຜນການ (ໂດລາ/ຄົນ) | ປະຕິບັດ (ໂດລາ/ຄົນ) | ສົມທຽບປະຕິບັດ ແຜນການ (%) |
|---|---|---|---|---|
| 2010-2011 | 62.458 | 1.155 | 1.217 | 5,37 |
| 2011-2012 | 70.343 | 1.332 | 1.349 | 1,28 |
| 2012-2013 | 80.199 | 1.520 | 1.534 | 0,92 |
| 2013-2014 | 90.823 | 1.674 | 1.671 | -0,01 |
| 2014-2015 | 102.320 | 1.860 | 1.970 | 5,91 |

ແຫຼ່ງຂໍ້ມູນ: ແຜນພັດທະນາເສດຖະກິດ-ສັງຄົມປະຈຳປີ ແລະ ສູນຖິຕິແຫ່ງຊາດ, ກະຊວງແຜນການແລະການລົງທຶນ

- ການປ່ຽນແປງໂຄງປະກອບເສດຖະກິດ: ເຫັນວ່າໄດ້ຫັນປ່ຽນໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະ ໄໝ ຄື: ຂະແໜງກະສິກຳ-ປ່າໄມ້ ໄດ້ຫຼຸດລົງຈາກ 27,9% ໃນສົກປີ 2010-2011 ມາເປັນ 24,8% ໃນສົກປີ 2013-2014 ແລະ ສົກປີ 2014-2015 ຫຼຸດລົງມາເປັນ 23,7% (ແຜນການ 23%); ຂະແໜງອຸດສາຫະກຳ ໄດ້ເພີ່ມຂຶ້ນຈາກ 26,9% ໃນສົກປີ 2010-2011 ມາເປັນ 27,5% ໃນສົກປີ 2013-2014 ແລະ ສົກປີ 2014-2015 ເພີ່ມຂຶ້ນເປັນ 29,1% (ແຜນການ 39%); ແລະ ຂະແໜງບໍລິການໄດ້ເພີ່ມຂຶ້ນຈາກ 45,2% ໃນສົກປີ 2010-2011 ມາເປັນ 47,7% ໃນສົກປີ 2013-2014 ແລະ ສົກປີ 2014-2015 ຢູ່ໃນລະດັບ 47,2% ຂອງລວມຍອດຜະລິດຕະພັນພາຍໃນ (GDP) (ແຜນການ 38%).

**ຕາຕະລາງ 3: ການປ່ຽນແປງໂຄງປະກອບເສດຖະກິດໃນແຕ່ລະສົກປີ ທຽບໃສ່ຄາດໝາຍແຜນການ 5 ປີ ຄັ້ງທີ VII (2011-2015)**

| ລາຍລະອຽດ | ຄາດໝາຍສູ້ຊົນ ໃນປີ 2015 (ແຜນການ 5ປີ) | ປະຕິບັດສົກປີ 2010-11 | ປະຕິ ບັດສົກປີ 2011-12 | ປະຕິ ບັດສົກປີ 2012-13 | ປະຕິ ບັດສົກປີ 2013-14 | ຄາດຄະເນ ປະຕິບັດສົກປີ 2014-2015 |
|---|---|---|---|---|---|---|
| ມູນຄ່າ GDP ໃນລາຄາ ປະຈຸບັນ (ຕື້ກີບ) | 104.000 | 62.458 | 70.343 | 80.199 | 90.823 | 102.320 |
| ໂຄງປະກອບ (%) | 100 | 100 | 100 | 100 | 100 | 100 |
| - ກະສິກຳ-ປ່າໄມ້ (%) | 23 | 27,9 | 26,7 | 25,2 | 24,8 | 23,7 |
| - ອຸດສາຫະກຳ (%) | 39 | 26,9 | 29,6 | 28,0 | 27,5 | 29,1 |
| - ການບໍລິການ (%) | 38 | 45,2 | 43,7 | 46,8 | 47,7 | 47,2 |

ແຫຼ່ງຂໍ້ມູນ: ແຜນພັດທະນາເສດຖະກິດສັງຄົມ 2011-2015 ແລະ ການຄາດຄະເນຂອງສູນຖິຕິແຫ່ງຊາດ.

- **ອັດຕາເງິນເຟີ້**

ໄດ້ມີການເໜັງຕີງເພີ່ມຂຶ້ນຢູ່ໃນລະດັບສະເລ່ຍ 5% ຕໍ່ປີ (ແຜນການ: ຕໍ່າກວ່າອັດຕາການຂະຫຍາຍຕົວຂອງເສດ ຖະກິດ), ປັດໄຈຕົ້ນຕໍທີ່ສົ່ງຜົນກະທົບເຮັດໃຫ້ເງິນເຟີ້ເພີ່ມຂຶ້ນ ຄື: ໝວດສະບຽງອາຫານ ແລະເຄື່ອງດື່ມ (ບໍ່ແມ່ນເຫຼົ້າ) ສະເລ່ຍເພີ່ມຂຶ້ນ 8,27%, ໝວດທີ່ພັກອາ ໃສ, ໄຟຟ້າ, ນໍ້າປະປາ ແລະ ເຊື້ອເພີງ ເພີ່ມຂຶ້ນ 6,72%, ໝວດຮ້ານອາຫານ ແລະໂຮງແຮມ ເພີ່ມຂຶ້ນ 6,5%, ໝວດເຄື່ອງນຸ່ງ ແລະ ເກີບ 3,88% ແລະ ໝວດສິນຄ້າ ແລະ ການບໍລິການເພີ່ມຂຶ້ນ 3,6%. ນອກ ຈາກນັ້ນ, ແມ່ນຍ້ອນຄວາມກົດດັນດ້ານລາຄາຈາກພາຍນອກ ແລະ ຄວາມ ບໍ່ສົມດຸນຂອງການສະໜອງ ແລະ ຄວາມຕ້ອງ ການພາຍໃນປະເທດ ຄື: ຄວາມບໍ່ແນ່ນອນຂອງລາຄານໍ້າມັນໃນຕະຫຼາດໂລກ ມີຜົນກະທົບໂດຍກົງຕໍ່ລາຄານໍ້າມັນພາຍໃນປະເທດ ເຊິ່ງສົກປີ 2010-2011 ລາຄານໍ້າມັນພາຍໃນປະ

ເທດສະເລ່ຍເພີ່ມຂຶ້ນ 20% ແລະ ໄດ້ມີການປັບປ່ຽນເຖິງ 17 ຄັ້ງ, ໃນນັ້ນ ປັບຂຶ້ນເຖິງ 13 ຄັ້ງ ແລະ ປັບລົງ 4 ຄັ້ງ; ພ້ອມນັ້ນ, ລະດັບລາຄາສິນຄ້າໃນປະເທດເພື່ອນບ້ານ ແລະ ພາກພື້ນກໍ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ ເຊັ່ນ: ໄທ, ສສ ຫວຽດນາມ ແລະ ສປ ຈີນ. ສ່ວນປັດໄຈພາຍໃນແມ່ນມີສາເຫດມາຈາກການສະໜອງຍັງບໍ່ທັນພຽງພໍກັບຄວາມຕ້ອງການ ເປັນຕົ້ນ ແມ່ນສິນຄ້າປະເພດຊີ້ນ.

**ຕາຕະລາງ 4: ການປ່ຽນແປງໂຄງປະກອບອັດຕາເງິນເຟີ້**

| **ລາຍລະອຽດແຕ່ລະໝວດ** | **ສົກປີ 2010-11** | **ສົກປີ 2011-12** | **ສົກປີ 2012-13** | **ສົກປີ 2013-14** | **ສົກປີ 2014-15** | **ສະເລ່ຍ** |
|---|---|---|---|---|---|---|
| 1. ສະບຽງອາຫານ (%) | 10,39 | 6,97 | 10,37 | 9,17 | 4,44 | 8,27 |
| 2. ເຄື່ອງດື່ມປະເພດເຫລົ້າ (%) | 2,28 | 3,07 | 3,38 | 5,47 | 2,48 | 3,34 |
| 3. ເຄື່ອງນຸ່ງຫົ່ມ ແລະ ເກີບ (%) | 2,39 | 2,35 | 4,42 | 6,02 | 4,22 | 3,88 |
| 4. ທີ່ພັກອາໃສ, ນໍ້າປະປາ, ໄຟຟ້າ (%) | 3,14 | 9,15 | 9,09 | 3,64 | 8,57 | 6,72 |
| 5. ເຄື່ອງໃຊ້ໃນເຮືອນ (%) | 1,40 | 2,54 | 2,70 | 2,10 | 1,30 | 2,01 |
| 6. ຮັກສາສຸຂະພາບ (%) | 2,25 | 1,20 | 1,31 | 1,34 | 0,18 | 1,26 |
| 7. ຄົມມະນາຄົມ ແລະຂົນສົ່ງ (%) | 7,90 | 4,88 | 0,43 | 0,65 | -5,24 | 1,72 |
| 8. ໄປສະນີ ແລະ ໂທລະຄົມມະນາຄົມ (%) | 2,41 | 2,13 | 1,71 | 0,85 | 1,19 | 1,66 |
| 9. ບັນເທີງ ແລະ ພັກຜ່ອນ (%) | 0,94 | 1,63 | 1,81 | 2,22 | 0,18 | 1,36 |
| 10. ການສຶກສາ (%) | 0,57 | 0,92 | 2,19 | 1,31 | 0,26 | 1,05 |
| 11. ຮ້ານອາຫານ ແລະ ໂຮງແຮມ (%) | 3,50 | 7,93 | 8,63 | 8,60 | 3,83 | 6,50 |
| 12. ສິນຄ້າ ແລະ ບໍລິການ (%) | 9,24 | 5,61 | 1,50 | 1,41 | 0,24 | 3,60 |
| **ອັດຕາເງິນເຟີ້ (%)** | **7,42** | **5,12** | **5,64** | **5,16** | **1,68** | **5,00** |

ແຫຼ່ງຂໍ້ມູນ: ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ

- **ການຄຸ້ມຄອງນະໂຍບາຍການເງິນ-ເງິນຕາ**

– ອັດຕາແລກປ່ຽນ: ໃນໄລຍະ 5 ປີ ອັດຕາແລກປ່ຽນມີຄວາມສະຫງົບ, ເງິນກີບທຽບໃສ່ໂດລາສະຫະລັດ ແຂງ ຄ່າສະເລ່ຍ 0,63% ຕໍ່ປີ, ເງິນກີບທຽບໃສ່ບາດແຂງຄ່າ ສະເລ່ຍ 0,99%.

ສາເຫດທີ່ພາໃຫ້ເງິນກີບແຂງຄ່າຂຶ້ນທຽບໃສ່ເງິນໂດລາສະຫະລັດ ໃນໄລຍະ ສົກປີ 2010-2011 ຫາ ສົກປີ 2012-2013 ຍ້ອນກະແສເງິນທຶນໄຫຼເຂົ້າສູ່ປະເທດຢ່າງຕໍ່ເນື່ອງ, ການອ່ອນຄ່າຂອງເງິນໂດລາໃນຕະຫຼາດສາກົນມີສາເຫດມາຈາກສະພາບເສດຖະກິດຂອງສະຫະລັດອາເມລິກາ ແລະ ບັນຫາໜີ້ສິນຢູ່ເອີຣົບ ແລະ ໃນສົກປີ 2013-2014 ເຫັນວ່າເງິນກີບທຽບໃສ່ໂດລາມີທ່າອ່ຽງອ່ອນຄ່າລົງ ຍ້ອນການອອກມາດຕະການຂອງລັດຖະບານ ເພື່ອຫຼຸດຜ່ອນສະພາບບໍ່ຄ່ອງຕົວຂອງເງິນຕາຕ່າງປະເທດ. ສໍາລັບເງິນກີບທຽບໃສ່ບາດແຂງຄ່າຂຶ້ນ, ຍ້ອນການອ່ອນຄ່າເງິນບາດທຽບໂດລາສະຫະລັດ. ໃນສົກປີ 2014-2015 ເຫັນວ່າເງິນກີບທຽບໃສ່ໂດລາຍັງສືບຕໍ່ອ່ອນຄ່າຍ້ອນການປ່ຽນແປງອັດຕາແລກປ່ຽນໃນຕະຫລາດໂລກ.

**ຕາຕະລາງ 5: ການປ່ຽນແປງອັດຕາແລກປ່ຽນ**

| ລາຍລະອຽດ | ສົກປີ 2010-11 | ສົກປີ 2011-12 | ສົກປີ 2012-13 | ສົກປີ 2013-14 | ສົກປີ 2014-15 | ສະເລ່ຍ 5 ປີ |
|---|---|---|---|---|---|---|
| ອັດຕາແລກປ່ຽນກີບ/ໂດລາ | 8.036,34 | 8.010,73 | 7.867,92 | 8.033,20 | 8.123,15 | 8.014,27 |
| – ແຂງຄ່າ/ອ່ອນຄ່າ | 4,16% | 0.32% | 1,82% | -2,06% | -1,11% | 0,63% |
| ອັດຕາແລກປ່ຽນກີບ/ບາດ | 266,51 | 258,13 | 259,32 | 251,13 | 245,52 | 256,12 |
| – ແຂງຄ່າ/ອ່ອນຄ່າ | -3,39% | 3,25% | -0,46% | 3,26% | 2,29% | 0,99% |

– ປະລິມານເງິນລວມ ($M_2$): ໃນໄລຍະ 5 ປີ ຜ່ານມາ ປະລິມານເງິນເພີ່ມຂຶ້ນຢ່າງຕໍ່ເນື່ອງຕາມການຂະຫຍາຍຕົວຂອງເສດຖະກິດ, ສະເລ່ຍ 26,87% ຕໍ່ປີ. ສາເຫດຫຼັກແມ່ນຍ້ອນຂະແໜງທະນາຄານໄດ້ປະກອບສ່ວນສິນເຊື່ອໃຫ້ແກ່ພາກສ່ວນເສດຖະກິດ ຕາມຄວາມຮຽກຮ້ອງຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ.

**ຕາຕະລາງ 6: ອັດຕາການຂະຫຍາຍຕົວປະລິມານເງິນ**

| ລາຍລະອຽດ | ສົກປີ 2010-11 | ສົກປີ 2011-12 | ສົກປີ 2012-13 | ສົກປີ 2013-14 | ສົກປີ 2014-15 | ສະເລ່ຍ 5 ປີ |
|---|---|---|---|---|---|---|
| ອັດຕາການຂະຫຍາຍຕົວຂອງປະລິມານເງິນທຽບໃສ່ສົກປີຜ່ານມາ | 37,94% | 28,01% | 20,61% | 27,14% | 20,66% | 26,87% |

– ຄັງສຳຮອງເງິນຕາຕ່າງປະເທດ: ໃນ 5 ປີຜ່ານມາ ຄັງສຳຮອງເງິນຕາຕ່າງປະເທດ ເພີ່ມຂຶ້ນຈາກ 531,2 ລ້ານ ໂດລາ ໃນທ້າຍສົກປີ 2009-2010 ມາເປັນ 798,2 ລ້ານໂດລາ ໃນທ້າຍສົກປີ 2014-2015, ສະເລ່ຍຕໍ່ປີກຸ້ມການນຳເຂົ້າໄດ້ 5 ເດືອນ.

**ຕາຕະລາງ 7: ຄັງສຳຮອງເງິນຕາຕ່າງປະເທດ**

| ລາຍລະອຽດ | ສົກປີ 2009-10 | ສົກປີ 2010-11 | ສົກປີ 2011-12 | ສົກປີ 2012-13 | ສົກປີ 2013-14 | ສົກປີ 2014-15 |
|---|---|---|---|---|---|---|
| ຄັງສຳຮອງເງິນຕາຕ່າງປະເທດ (ລ້ານໂດລາ) | 531,20 | 718,10 | 658,57 | 583,44 | 834,70 | 798,20 |
| ສາມາດກຸ້ມການນຳເຂົ້າ | ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າສະເລ່ຍຕໍ່ປີ 5 ເດືອນ | | | | | |

## 3.2. ການດຸ່ນດ່ຽງມະຫາພາກ

### 3.2.1. ການດຸ່ນດ່ຽງແຫຼ່ງທຶນເພື່ອການພັດທະນາ

ມາຮອດ 5 ປີ ຂອງແຜນການ 5 ປີ ຄັ້ງທີ VII (2011-2015), ທົ່ວສັງຄົມສາມາດສະໜອງທຶນ (ຈາກງົບ ປະມານພາຍໃນ, ຊ່ວຍເຫຼືອລ້າ-ກູ້ຢືມ, ການລົງທຶນຈາກເອກະຊົນພາຍໃນ-ຕ່າງປະເທດ ແລະ ສິນເຊື່ອທະນາຄານ) ໄດ້ທັງໝົດ 249.507,59 ຕື້ກີບ ເທົ່າກັບ 196,11% ຂອງແຜນການ 5 ປີ (127 ພັນຕື້ກີບ) ໃນນັ້ນ: ມູນຄ່າການລົງທຶນລວມ ເພີ່ມຂຶ້ນຈາກ 28.663,23 ຕື້ກີບ ເທົ່າກັບ 45,89% ຂອງ GDP ໃນສົກປີ 2010-2011 ແລະ ໃນສົກປີ 2014-2015 ປະຕິບັດໄດ້ 44.359,03 ຕື້ກີບ ເທົ່າກັບ 43,35% ຂອງ GDP ແລະ ມາຮອດເດືອນ 9/2015, ຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນຄາດວ່າຈະສາມາດຈັດຕັ້ງປະຕິບັດໄດ້ດັ່ງນີ້:

1. ທຶນພາຍໃນຈາກງົບປະມານລັດ ປະຕິບັດໄດ້ 13.314 ຕື້ກີບ ເທົ່າກັບ 98,62% ຂອງແຜນການ 5 ປີ.
2. ທຶນຊ່ວຍເຫຼືອລ້າ-ກູ້ຢືມ (ODA) ປະຕິບັດໄດ້ 26.981,26 ຕື້ກີບ ເທົ່າກັບ 91,05% ຂອງແຜນການ 5 ປີ.

3. ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ ປະຕິບັດໄດ້ 167.268,83 ຕື້ກີບ ເທົ່າກັບ 247,81% ຂອງແຜນ ການ 5 ປີ;

4. ສິນເຊື່ອທະນາຄານ ປະຕິບັດໄດ້ 41.493,50 ຕື້ກີບ ເທົ່າກັບ 307,36% ຂອງແຜນການ 5 ປີ.

» ການລົງທຶນຈາກງົບປະມານພາຍໃນ: ໄດ້ສຸມທຶນໃສ່ແກ້ໄຂສະພາບຜົນກະທົບຈາກອຸທົກກະໄພທໍາມະຊາດຢູ່ທ້ອງຖິ່ນ, ເພື່ອກະຕຸ້ນເສດຖະກິດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ເຮັດໃຫ້ການລົງທຶນຈາກງົບປະມານພາຍໃນ ໄດ້ຄ່ອຍໆເພີ່ມຂຶ້ນ ໃນສົກປີ 2010-2011 ຈາກ 1.753,23 ຕື້ກີບ ກວມເອົາ 6,13% ຂອງການລົງທຶນທັງໝົດ ມາເປັນ3.424,93 ຕື້ກີບ ກວມເອົາ 7,72% ຂອງການລົງທຶນທັງໝົດ ໃນສົກປີ 2014-2015; ເຮັດໃຫ້ສາມາດບັນລຸໄດ້ 5 ປີ ໂດຍ ລວມ 13.314 ຕື້ກີບ ກວມເອົາ 5,35% ຂອງການລົງທຶນທັງໝົດ ແລະ ບັນລຸໄດ້ 98,62% ຂອງແຜນການ 5 ປີ (ແຜນ ການ 5 ປີ 12.000-15.000 ຕື້ກີບ); ໃນນີ້, ບັນດາຂະແໜງການ ແລະ ທ້ອງຖິ່ນໄດ້ຈັດສັນທຶນເຂົ້າໃສ່ບັນດາໂຄງການທີ່ມີປະສິດທິຜົນສູງພໍສົມຄວນ ແລະ ໂດຍລວມ ແມ່ນໄປຕາມໂຄງການຈຸດສຸມຂອງລັດຖະບານ. ໃນນັ້ນ:

– ຂົງເຂດເສດຖະກິດ ກວມປະມານ 30% ຂອງການລົງທຶນລັດທັງໝົດ.

– ຂົງເຂດສັງຄົມ ກວມປະມານ 35%; ໃນນີ້, ສຶກສາ 17% ແລະ ສາທາລະນະສຸກ 9% ແລະ ພາກສ່ວນອື່ນໆ 9% ຂອງການລົງທຶນລັດທັງໝົດ.

– ເສັ້ນທາງ ແລະ ສໍານັກງານອົງການ ໃຫ້ກວມປະມານ 35%; ໃນນັ້ນ, ເສັ້ນທາງ 28% ແລະ ເຄຫາສະຖານ 7% ຂອງການລົງທຶນລັດທັງໝົດ.

ການລົງທຶນໂດຍລວມເຫັນວ່າປະຕິບັດຕາມລະບຽບກົດໝາຍໄດ້ດີສົມຄວນ, ແຕ່ຍັງເຫັນວ່າການລົງທຶນຂອງບາງຂະ ແໜງການ ແລະ ທ້ອງຖິ່ນຍັງກະແຈກກະຈາຍບໍ່ມີຈຸດສຸມເທົ່າທີ່ຄວນ, ການສ້າງໂຄງການຍັງຂາດການວິເຄາະ, ວິໄຈ ແລະ ບໍ່ສອດຄ່ອງ ແລະ ຖືກເປົ້າໝາຍການພັດທະນາຈຶ່ງເຮັດໃຫ້ມີການດັດແກ້ໂຄງການໃນກາງປີຫຼາຍສົມຄວນ. ການຈັດຕັ້ງທຶນຕ່າງປະເທດບາງຂະ ແໜງການ ແລະ ທ້ອງຖິ່ນບໍ່ບັນລຸຕາມແຜນການ ເຊິ່ງສາເຫດໜຶ່ງແມ່ນເນື່ອງມາຈາກຄວາມສາມາດຂອງການຈັດຕັ້ງປະຕິບັດຂອງ ພາກລັດເອົາ. ການຕິດຕາມການຈັດຕັ້ງປະຕິບັດໂຄງການຢູ່ຂະແໜງການ ແລະ ທ້ອງຖິ່ນຍັງບໍ່ທັນເປັນລະບົບອາໄສການລາຍງານເປັນ ຕົ້ນຕໍ. ໃນຕໍ່ໜ້າຕ້ອງໄດ້ເອົາໃຈໃສ່ການປະເມີນຜົນໂຄງການຂຶ້ນຕື່ມອີກ ໂດຍສະເພາະການປະເມີນກ່ອນເອົາເຂົ້າແຜນການລົງທຶນ ຢ່າງມີຈຸດສຸມ, ບໍ່ປະຕິບັດຫຼາຍໂຄງການໃນເວລາດຽວກັນ ແລະ ມີມາດຕະການສະກັດກັ້ນ ແລະ ແກ້ໄຂໜີ້ສິນທີ່ມີໃນປະຈຸບັນ.

» ທຶນຊ່ວຍເຫຼືອລ້າ ແລະກູ້ຢືມ: ໄລຍະຜ່ານມາ, ລັດຖະບານໄດ້ເອົາໃຈໃສ່ຈັດຕັ້ງກອງປະຊຸມໂຕະມົນປະຈໍາປີ ແລະ ໂຕະມົນລະດັບສູງ ເພື່ອປຶກສາຫາລື ແລະ ລະດົມຂົນຂວາຍທຶນກັບຄູ່ຮ່ວມພັດທະນາ ເພື່ອຮັບໃຊ້ໃຫ້ແກ່ການພັດທະ ນາເສດຖະກິດ-ສັງຄົມແຕ່ລະປີ ແລະ 5 ປີ ຄັ້ງທີ VII (2011-2015), ໃນນີ້ ໄດ້ຈັດກອງປະຊຸມໂຕະມົນລະດັບສູງ 2 ຄັ້ງ ຄື: ກອງປະຊຸມລະດັບສູງ ຄັ້ງທີ 10 ໃນເດືອນພະຈິກ 2010 ແລະ ຄັ້ງທີ 11 ໃນເດືອນພະຈິກ 2013 ທີ່ຢູ່ໃນໄລຍະສະພາບເສດຖະກິດໂລກພວມຢູ່ໃນພາ ວະສັບສົນ ແຕ່ບັນດາຄູ່ຮ່ວມພັດທະນາກໍ່ຍັງສະແດງເຈດຈໍານົງສືບຕໍ່ ໃຫ້ການຊ່ວຍເຫຼືອແກ່ ສປປລາວ, ສະແດງອອກໃນໄລຍະ 5 ປີ ສາມາດລະດົມທຶນຊ່ວຍເຫຼືອທາງການເພື່ອການພັດທະນາໄດ້ລວມທັງໝົດ 26.981,26 ຕື້ກີບ ຫຼື ປະມານ 3.369 ລ້ານໂດລາ ເທົ່າກັບ 91,05% ຂອງແຜນການ 5 ປີ (ແຜນການ 5 ປີ 30.000-33.000 ຕື້ກີບ); ໃນນັ້ນ: ທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ ປະຕິບັດໄດ້ 5.062,89 ຕື້ກີບ (ປະມານ 630 ລ້ານໂດລາ) ກວມເອົາ 17,66% ຂອງການລົງທຶນທັງໝົດ ໃນສົກປີ 2010-2011 (ແຜນ 2010-2011: 600 ລ້ານໂດລາ) ແລະ ປະຕິບັດໄດ້ 5.361,27 ຕື້ກີບ (ປະມານ 660 ລ້ານໂດລາ) ກວມເອົາ 12,09% ໃນສົກປີ 2014-2015 (ແຜນ 2010-2011: 660 ລ້ານໂດລາ).

ເປົ້າໝາຍໃນການນໍາໃຊ້ທຶນຊ່ວຍເຫຼືອລ້າ ແລະ ກູ້ຢືມ (ODA) ແມ່ນສຸມໃສ່ວຽກງານຕົ້ນຕໍຂອງຂົງເຂດວັດທະນະ ທໍາ-ສັງຄົມ ແລະ ຂົງເຂດເສດຖະກິດດັ່ງນີ້:

i. ທຶນຊ່ວຍເຫຼືອລ້າ ສ່ວນໃຫຍ່ແມ່ນນໍາໃຊ້ເຂົ້າໃນການພັດທະນາຂະແໜງວັດທະນະທໍາ-ສັງຄົມ ເພື່ອບັນລຸເປົ້າ ໝາຍສະຫັດ ສະວັດດ້ານການພັດທະນາ (MDGs).

ii. ທຶນກູ້ຢືມ ຕົ້ນຕໍແມ່ນເລັ່ງໃສ່ພັດທະນາຂົງເຂດເສດຖະກິດ ແລະ ພື້ນຖານໂຄງລ່າງເຊັ່ນ: ຂະແໜງພະລັງງານ-ບໍ່ແຮ່, ກະສິກໍາ-ປ່າໄມ້, ໂຍທາທິການ ແລະ ຂົນສົ່ງ.

» ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ: ໄດ້ເອົາໃຈໃສ່ປັບປຸງລະບົບກົນໄກ ເພື່ອສ້າງສະພາບແວດລ້ອມທີ່ດີ ແລະ ເອື້ອອໍານວຍຄວາມສະດວກໃຫ້ແກ່ນັກລົງທຶນ. ອັນພົ້ນເດັ່ນແມ່ນໄດ້ເປີດການບໍລິການການລົງທຶນຜ່ານປະ ຕູດຽວໃນວັນທີ 01 ຕຸລາ 2011 ເປັນຕົ້ນມາເພື່ອອໍານວຍຄວາມສະດວກ, ວ່ອງໄວ ແລະ ໂປ່ງໃສຮັບປະກັນຜົນປະໂຫຍດ ສ່ວນລວມ; ນອກຈາກນັ້ນ,

ໄດ້ສ້າງເວັບໄຊເພື່ອໃຫ້ນັກລົງທຶນສາມາດຮັບຮູ້ ແລະ ເຂົ້າເຖິງຂໍ້ມູນຂ່າວສານໃນການລົງທຶນຢ່າງສະດວກ. ເຮັດໃຫ້ສາມາດດຶງດູດການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ໄດ້ລວມທັງໝົດ 167.268,83 ຕື້ກີບ ຫຼື ປະມານ 20.871,37 ລ້ານໂດລາ ເທົ່າກັບ 247,81% ຂອງແຜນການ 5 ປີ (ແຜນການ 5 ປີ 64.000-71.000 ຕື້ກີບ ແລະ ກວມເອົາ 50-56% ຂອງການລົງທຶນທັງໝົດ); ໃນນັ້ນ: ການລົງທຶນໄດ້ເພີ່ມຂຶ້ນ ຈາກ 15.348,70 ຕື້ກີບ ຫຼື ປະມານ 1.918,59 ລ້ານໂດລາ ກວມເອົາ 53,55% ຂອງການລົງທຶນທັງໝົດໃນສົກປີ 2010-2011 ມາເປັນ 28.081,73 ຕື້ກີບ ກວມເອົາ 63,31% ຂອງການລົງທຶນທັງໝົດໃນສົກປີ 2014-2015.

ການລົງ ທຶນເອກະຊົນພາຍໃນ ແລະ ຕ່າງປະເທດສ່ວນໃຫຍ່ ແມ່ນເລັ່ງໃສ່ຂະແໜງພະລັງງານ ແລະ ບໍ່ແຮ່, ຮອງລົງມາຂະແໜງການບໍລິການ ແລະ ຂະແໜງກະສິກຳ ໃນນັ້ນ: **ຂະແໜງກະສິກຳ**: ໂຄງການສົ່ງເສີມການປູກສາລີ, ອ້ອຍ, ຢາງພາລາ ແລະ ຕົ້ນໄມ້ອຸດສາຫະກຳ, ໂຄງການປູກຊາ-ກາເຟເພື່ອສົ່ງອອກ, ໂຄງການສົ່ງເສີມການປູກຢາງພາລາ ແລະ ອື່ນໆ. **ຂະແໜງພະລັງງານ**: ໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າ, **ຂະແໜງອຸດສາຫະກຳບໍ່ແຮ່**: ໂຄງການຂຸດຄົ້ນແຮ່ບົກຊິດ ແລະ ສ້າງຕັ້ງໂຮງງານປຸງແຕ່ງອາລູມິນາ ແລະ ອາລູມິນຽມ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກ, ໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ຄຳ ແລະ ແຮ່ທອງພັນ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ ແລະ **ຂະແໜງບໍລິການ**: ໂຮງ ແຮມ 5 ດາວ, ວິນລາລະດັບສູງ, ສະໜາມກ໋ອຟ, ສູນການຄ້າ, ອາພາດເມັ້ນ, ລີສອດ, ຫໍປະຊຸມ ແລະ ສູນກິລາ, ໂຄງການບໍ ລິການດ້ານໂທລະຄົມຄົບວົງຈອນ.

» ການປ່ອຍສິນເຊື່ອຂອງທະນາຄານ: ທະນາຄານແຫ່ງ ສປປ ລາວ ໄດ້ດຳເນີນນະໂຍບາຍ ແລະ ລະບຽບການຄຸ້ມຄອງທີ່ເອື້ອອຳນວຍໃຫ້ແກ່ທະນາຄານທຸລະກິດມີແຫຼ່ງທຶນປ່ອຍກູ້ ແລະ ມີຕົ້ນທຶນຕໍ່າ. ຜະລິດຕະພັນເງິນກູ້ໄດ້ຮັບການພັດທະ ນາຢ່າງຕໍ່ເນື່ອງ, ການປ່ອຍສິນເຊື່ອມີຫຼາຍຮູບແບບສອດຄ່ອງກັບລູກຄ້າແຕ່ລະປະເພດ; ພ້ອມກັນນັ້ນ, ທະນາຄານທຸລະກິດໄດ້ເປັນເຈົ້າການສະໜອງສິນເຊື່ອໃຫ້ແກ່ໂຄງການທີ່ມີປະສິດທິຜົນໂດຍສຸມໃສ່ປັບປຸງລະບຽບ, ກົນໄກ ແລະ ຂັ້ນຕອນການພິຈາ ລະນາເງິນກູ້ເພື່ອໃຫ້ຜູ້ປະກອບການເຂົ້າຫາແຫຼ່ງທຶນໄດ້ງ່າຍຂຶ້ນ ພ້ອມທັງຄວບຄຸມສິນເຊື່ອໃຫ້ມີຄຸນນະພາບເພື່ອຮັບປະກັນໜີ້ເສຍ (NPL) ບໍ່ໃຫ້ເກີນ 3%; ຫຼຸດຜ່ອນ ແລະ ໂຈະການປ່ອຍສິນເຊື່ອຂອງທະນາຄານ ແຫ່ງ ສປປ ລາວ ໃຫ້ແກ່ບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງ, ໂຄງການໄລຍະຍາວທີ່ມີຜົນຕອບແທນຊ້າ.

ໃນໄລຍະ 5ປີ ຜ່ານມາ ການປ່ອຍສິນເຊື່ອ ເພື່ອຊຸກຍູ້ເສດຖະກິດໃຫ້ຂະຫຍາຍຕົວ ເຫັນວ່າ ເພີ່ມຂຶ້ນສຸດທິ 41.493,50 ຕື້ກີບ ສະເລ່ຍເພີ່ມຂຶ້ນ 31,09% ຕໍ່ປີ (ຈາກ 14.805,09 ຕື້ກີບໃນທ້າຍສົກປີ 2009-2010 ມາເປັນ 56.298,59 ຕື້ກີບໃນທ້າຍສົກປີ 2014-2015). ໃນນັ້ນ, ສິນເຊື່ອທະນາຄານທຸລະກິດສະເລ່ຍເພີ່ມຂຶ້ນ 32,67% ຕໍ່ປີ.

**ຕາຕະລາງ 8: ສິນເຊື່ອລະບົບທະນາຄານ**

| ລາຍລະອຽດ | ສົກປີ 2010-11 | ສົກປີ 2011-12 | ສົກປີ 2012-13 | ສົກປີ 2013-14 | ສົກປີ 2014-15 | ລວມ 5 ປີ |
|---|---|---|---|---|---|---|
| ມູນຄ່າການເພີ່ມຂຶ້ນຂອງສິນເຊື່ອລະບົບທະນາຄານທຽບໃສ່ສົກປີຜ່ານມາ (ຕື້ກີບ) | 6.498,41 | 6.926,90 | 11.772,94 | 8.804,15 | 7.491,10 | 41.493,50 |

## 3.2.2. ການດຸ່ນດ່ຽງງົບປະມານແຫ່ງລັດ

ໃນ 5 ປີຜ່ານມາ, ລັດຖະບານໄດ້ປັບປຸງກົນໄກລະບົບການເກັບລາຍຮັບງົບປະມານເຮັດໃຫ້ສາມາດເກັບລາຍຮັບງົບ ປະມານລວມເພີ່ມຂຶ້ນ ແລະ ລາຍຈ່າຍສາມາດແກ້ໄຂວຽກບໍລິຫານ ແລະ ການລົງທຶນສະແດງອອກດັ່ງນີ້:

– **ດ້ານລາຍຮັບລວມ**: ເກັບໄດ້ທັງໝົດ 99.549 ຕື້ກີບ ກວມເອົາ 24,6% ຂອງ GDP (ແຜນ 5 ປີ 19-21% ຂອງ GDP) ໃນນັ້ນ: ສົກປີ 2010-2011 ປະຕິບັດໄດ້ 14.310 ຕື້ກີບ ກວມເອົາ 23,10% ຂອງ GDP ແລະ ໃນສົກປີ 2014-2015 ປະຕິບັດໄດ້ 24.468 ຕື້ກີບ ກວມ 23,9% ຂອງ GDP.

ລາຍຮັບພາຍໃນ: ໄດ້ທັງໝົດ 76.648 ຕື້ກີບ ກວມເອົາ 18,9% ຂອງ GDP (ແຜນ 5 ປີ 16-18% ຂອງ GDP) ໃນນັ້ນ: ສົກປີ 2010-2011 ປະຕິບັດໄດ້ 10.601 ຕື້ກີບ ກວມ 17,10% ຂອງ GDP ແລະ ໃນສົກປີ 2014-2015 ປະຕິບັດໄດ້ 19.923 ຕື້ກີບ ກວມເອົາ 19,50% ຂອງ GDP.

– **ດ້ານລາຍຈ່າຍງົບປະມານ**: ປະຕິບັດໄດ້ທັງໝົດ 118.639 ຕື້ກີບ ກວມເອົາ 29,30% ຂອງ GDP (ແຜນ 5 ປີ 22-25% ຂອງ GDP); ໃນນັ້ນ: ສົກປີ 2010-2011 ປະຕິບັດໄດ້ 15.115 ຕື້ກີບກວມເອົາ 27,2% GDP ແລະ ໃນ ສົກປີ 2014-2015 ປະຕິບັດໄດ້ 29.097 ຕື້ກີບ ກວມເອົາ 28,40% ຂອງ GDP. ສາມາດແກ້ໄຂຊີວິດການເປັນຢູ່ຂອງພະນັກງານ ລັດຖະກອນ, ທະຫານ, ຕຳຫຼວດ ເປັນຕົ້ນໄດ້ປັບປຸງຄ່າຄອງຊີບ ແລະ ເງິນນະໂຍບາຍອຸດໜູນຕ່າງໆໃຫ້ພະນັກງານ-ລັດ ຖະກອນ, ຮັບປະກັນການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດໃຫ້ໄດ້ຢ່າງຄ່ອງຕົວ ແລະ ທັນເວລາ.

– ຂາດດຸນງົບປະມານ: ປະຕິບັດໄດ້ທັງໝົດ 19.090 ຕື້ກີບ ກວມເອົາ 4,7% ຂອງ GDP (ແຜນ 5 ປີ 3-5% ຂອງ GDP) ໃນນັ້ນ: ສົກປີ 2010-2011 ປະຕິບັດໄດ້ 1.687 ຕື້ກີບ ກວມເອົາ 2,7% ຂອງ GDP ແລະ ໃນສົກປີ 2014-2015 ປະຕິບັດໄດ້ 4.629 ຕື້ກີບ ກວມເອົາ 4,60% ຂອງ GDP.

**ຕາຕະລາງ 9: ລາຍຮັບ, ລາຍຈ່າຍ ແລະ ຂາດດຸນງົບປະມານໃນແຕ່ລະສົກປີ ໃນໄລຍະແຜນການ 5 ປີ ຄັ້ງທີ VII (2011-2015)**

| ລາຍລະອຽດ | ສົກປີ 2010-11 | ສົກປີ 2011-12 | ສົກປີ 2012-13 | ສົກປີ 2013-14 | ສົກປີ 2014-15 | ລວມ 5 ປີ |
|---|---|---|---|---|---|---|
| ລາຍຮັບງົບປະມານທັງໝົດ (ຕື້ກີບ) | 14.310 | 17.263 | 20.176 | 23.331 | 24.468 | 99.549 |
| ລາຍຮັບງົບປະມານພາຍໃນ (ຕື້ກີບ) | 10.601 | 12.698 | 15.264 | 18.161 | 19.923 | 76.648 |
| ລາຍຈ່າຍງົບປະມານ (ຕື້ກີບ) | 15.997 | 19.115 | 26.269 | 28.160 | 29.097 | 118.639 |
| ຂາດດຸນງົບປະມານ (ຕື້ກີບ) | 1.687 | 1.852 | 6.093 | 4.829 | 4.629 | 19.090 |

ແຫຼ່ງຂໍ້ມູນ: ການສະຫລຸບການຈັດຕັ້ງປະຕິບັດງົບປະມານແຫ່ງລັດໃນໄລຍະ 5 ປີ (2011-2015), ເລກທີ 795/ກງ.ຫກ, ວັນທີ 31 ມີນາ 2016.

## 3.2.3. ການດຸ່ນດ່ຽງຂາເຂົ້າ-ຂາອອກ:

ລັດຖະບານໄດ້ເອົາໃຈໃສ່ປັບປຸງກົນໄກລະບົບການຄ້າລະຫວ່າງປະເທດ ໂດຍສະເພາະໄດ້ເປີດສູນຂໍ້ມູນຂ່າວສານໃນຮູບແບບ ເວັບໄຊເພື່ອສະໜອງຂໍ້ມູນ ແລະ ອຳນວຍຄວາມສະດວກທາງດ້ານການອະນຸຍາດນຳເຂົ້າ-ສົ່ງອອກສິນຄ້າໃຫ້ແກ່ພາກທຸລະກິດເຮັດໃຫ້ ມູນຄ່າການນຳເຂົ້າ-ສົ່ງອອກມີທ່າອ່ຽງເພີ່ມຂຶ້ນ ສະແດງອອກດັ່ງນີ້:

**ການສົ່ງອອກ**: ປະຕິບັດໄດ້ໂດຍລວມ 14.229,23 ລ້ານໂດລາ ກວມເອົາ 28,08% ຂອງ GDP, ໃນນັ້ນ: ປະຕິບັດໄດ້ 2.027,15 ລ້ານໂດລາ ໃນສົກປີ 2010-2011; 1.696,44 ລ້ານໂດລາ ໃນສົກປີ 2011-2012; 3.645,86 ລ້ານໂດລາ ສົກປີ 2012-2013; 3.433,71 ລ້ານໂດລາ ໃນສົກປີ 2013-2014 ແລະ 3.426,07 ໃນສົກປີ 2014-2015.

**ການນຳເຂົ້າ**: ປະຕິບັດໄດ້ໂດຍລວມ 17.629,67 ລ້ານໂດລາ ກວມເອົາ 34,79% ຂອງ GDP; ໃນນັ້ນ: ປະຕິ ບັດ ໄດ້ 2.324,58 ລ້ານໂດລາ ໃນສົກປີ 2010-2011 ມາເປັນ 2.566,78 ລ້ານໂດລາ ໃນສົກປີ 2011-2012; 3.649,75 ລ້ານໂດລາ ສົກປີ 2012-2013; 4.680,84 ລ້ານໂດລາ ໃນສົກປີ 2013-2014 ແລະ 4.407,72 ໃນສົກປີ 2014-2015.

**ຂາດດຸນ**: ປະຕິບັດໄດ້ໂດຍລວມ 3.400,45 ລ້ານໂດລາ ກວມເອົາ 6,71% ຂອງ GDP, ໃນນັ້ນ: 297,43 ລ້ານ ໂດລາ ໃນສົກປີ 2010-2011 ມາເປັນ 870,34 ລ້ານໂດລາ ໃນສົກປີ 2011-2012; 3,89 ລ້ານໂດລາ ສົກປີ 2012-2013; 1.247,13 ລ້ານໂດລາ ໃນສົກປີ 2013-2014 ແລະ 981,65 ໃນສົກປີ 2014-2015.

### 3.2.4. ການດຸ່ນດ່ຽງແຮງງານ ແລະ ການສ້າງວຽກເຮັດງານທຳ:

ຈຳນວນປະຊາກອນເພີ່ມຂຶ້ນຈາກ 5,62 ລ້ານຄົນ ໃນປີ 2005 ມາເປັນ 6,49 ລ້ານຄົນ ໃນປີ 2015, ໂຄງປະກອບຂອງກຳລັງແຮງງານ ໃນ 5 ປີ ຜ່ານມາໄດ້ຫັນໄປຕາມທິດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ການພັດທະນາເສດຖະກິດເທື່ອລະກ້າວ ເຊິ່ງສະແດງອອກອັດຕາສ່ວນແຮງງານທີ່ມີວຽກເຮັດງານທຳໃນຂົງເຂດກະສິກຳໄດ້ຫຼຸດລົງຈາກ 71,3% ໃນປີ 2010[4] ແລະ ຄາດວ່າຈະຫຼຸດລົງເປັນ 65,2% ໃນປີ 2015 (ແຜນການຮອດປີ 2015 ໃຫ້ຫຼຸດລົງເຫຼືອ 70%), ຂົງ ເຂດອຸດສາຫະກຳເພີ່ມຂຶ້ນຈາກ 8,3% ໃນປີ 2010 ແລະ ຄາດວ່າຈະເພີ່ມຂຶ້ນເປັນ 11,4% ໃນປີ 2015 (ແຜນການຮອດປີ 2015 ໃຫ້ເພີ່ມຂຶ້ນເປັນ 7%) ແລະ ຂົງເຂດການບໍລິການເພີ່ມຂຶ້ນຈາກ 20,4% ໃນປີ 2010 ແລະ ຄາດວ່າຈະເພີ່ມຂຶ້ນເປັນ 23,4% ໃນປີ 2015[5] (ແຜນການຮອດປີ 2015 ໃຫ້ເພີ່ມຂຶ້ນເປັນ 23%). ການມີວຽກເຮັດງານທຳຂອງຜູ້ອອກແຮງງານມີ 3.021.212 ຄົນ, ກວມເອົາ 51,92% ຂອງພົນລະເມືອງທັງໝົດ ປີ 2010 ແລະ ຄາດວ່າຈະກວມເອົາ 55,67% ຂອງພົນ ລະເມືອງ ປີ 2015.

ໂດຍລວມແລ້ວເຫັນວ່າ ການດຸ່ນດ່ຽງແຮງງານໄລຍະຜ່ານມາຍັງບໍ່ທັນມີຄວາມຄ່ອງຕົວຍັງຂາດລະບົບຂໍ້ມູນຂ່າວສານຕະຫຼາດແຮງງານເຮັດໃຫ້ການຂຶ້ນແຜນສ້າງ ແລະ ພັດທະນາກຳລັງແຮງງານບໍ່ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແລະ ຕະຫຼາດແຮງງານເທົ່າທີ່ຄວນ; ແຜນການນຳໃຊ້ແຮງງານຂອງຫົວໜ່ວຍແຮງງານບໍ່ໄປຄຽງຄູ່ກັບແຜນວຽກ ແລະ ແຜນເງິນ; ການລົງທຶນສ່ວນຫຼາຍຂະຫຍາຍຕົວຢູ່ໃນເຂດຕົວເມືອງທີ່ມີພື້ນຖານໂຄງລ່າງເອື້ອອຳນວຍ ແຕ່ຍັງບໍ່ທັນໄດ້ສຸມໃສ່ການພັດທະນາອຸດສາຫະກຳປຸງແຕ່ງຫຼາຍເທົ່າທີ່ຄວນ, ການສົ່ງເສີມທຸລະກິດຂະໜາດນ້ອຍ ແລະ ກາງ ບໍ່ທັນກວ້າງຂວາງ ເຮັດໃຫ້ແຮງງານໃນເຂດຊົນນະບົດເຄື່ອນຍ້າຍເຂົ້າສູ່ຕົວເມືອງພາໃຫ້ເກີດແຮງງານຢູ່ຊົນນະບົດ.

## 3.3. ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ

ໃນໄລຍະ 5 ປີ ຜ່ານມາເຫັນວ່າ ບັນດາຂະແໜງການ ແລະ ທ້ອງຖິ່ນ ໄດ້ເອົາໃຈໃສ່ຫັນລົງສູ່ຮາກຖານ ເພື່ອສຸມໃສ່ການສ້າງບ້ານ ແລະຈຸດສຸມພັດທະນາຕາມ 4 ເນື້ອໃນ ແລະ 4 ຄາດໝາຍ, ປະຕິບັດວຽກງານ 3 ສ້າງ (ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ) ໂດຍໄດ້ເຮັດທົດລອງຢູ່ 52 ເມືອງ ກວມເອົາ 109 ບ້ານເປົ້າໝາຍ. ຜົນສຳເລັດອັນພົ້ນເດັ່ນໄດ້ສະແດງອອກດັ່ງນີ້:

1. ການຫັນລົງຮາກຖານໄດ້ເປັນຂະບວນການແຂງແຮງກວ່າເກົ່າ, ມາຮອດປະຈຸບັນ ໄດ້ມີພະນັກງານລົງເຮັດວຽກກໍ່ສ້າງພື້ນຖານການເມືອງປະຈຳຢູ່ບ້ານ ແລະ ກຸ່ມບ້ານຈຳນວນ 15.135 ຄົນ, ໃນນັ້ນ ພະນັກງານຂັ້ນສູນກາງ 1.065 ຄົນ, ແຂວງ 1.196 ຄົນ, ເມືອງ 12.874 ຄົນ ແລະ ນັກສຶກສາຈຳນວນໜຶ່ງ.
2. ລະບົບການເມືອງຢູ່ຂັ້ນບ້ານ ແລະ ກຸ່ມບ້ານໄດ້ຮັບການປັບປຸງໜັກແໜ້ນເຂັ້ມແຂງເທື່ອລະກ້າວ. ບ້ານທີ່ມີລະ ບົບການຈັດຕັ້ງໜັກແໜ້ນມີໜ່ວຍພັກແຂງຮູ້ນຳພາຮອບດ້ານເພີ່ມຂຶ້ນ 68%, ບ້ານໄດ້ຮັບການຢັ້ງຢືນເປັນບ້ານ ປກສ ກວມເຖິງ 80,98%, ບ້ານປອດຢາເສບຕິດ ກວມ 68,25% ແລະ ບ້ານປອດຄະດີ ກວມ 74,47% ຂອງຈຳນວນບ້ານທັງໝົດໃນຂອບເຂດທົ່ວປະເທດ.
3. ໄດ້ສຸມໃສ່ການກໍ່ສ້າງໂຄງລ່າງພື້ນຖານເສດຖະກິດຢູ່ຮາກຖານ ຄື: ເສັ້ນທາງເຂົ້າໄປຫາເມືອງ, ບ້ານຕໍ່ບ້ານ ມາຮອດປະຈຸບັນໄດ້ມີເສັ້ນທາງເຂົ້າຫາບ້ານກວມເອົາ 84,51% ຂອງຈຳນວນບ້ານທັງໝົດ, ທຽບໃສ່ຄາດໝາຍທີ່ວາງໄວ້ໃນປີ 2015 ເຫັນວ່າມີຄວາມເປັນໄປໄດ້ສູງທີ່ຈະມີທາງເຂົ້າເຖິງທຸກບ້ານທີ່ມີເງື່ອນໄຂ. ສຳເລັດການປັບປຸງ ແລະ ກໍ່ສ້າງເສັ້ນທາງລົດເຂົ້າຫາ 6 ເມືອງ ເຊັ່ນ: ເມືອງກະລຶມ, ດັກຈຶ້ງ, ສະໝ້ອຍ, ໄຊຈຳພອນ, ໄຊສະຖານ ແລະ ໂພນທອງ; ພ້ອມກັນນັ້ນ, ກໍໄດ້ສືບຕໍ່ເອົາໃຈໃສ່ຂະຫຍາຍຕາໜ່າງການສຶກສາ, ສາທາລະນະສຸກ ແລະ ລະບົບນໍ້າສະອາດລົງສູ່ຊົນນະບົດບ່ອນຫ່າງໄກສອກຫຼີກ ແລະ ທຸກຍາກ. ຈາກຜົນຂອງການປະເມີນຄວາມທຸກຍາກ ແລະ ມາດຖານບ້ານພັດທະນາເຫັນວ່າບ້ານທີ່ໄດ້ປະກາດໃຫ້ເປັນບ້ານສຳເລັດການສຶກສາພາກບັງຄັບ (ຈົບຊັ້ນປະຖົມ) ເພີ່ມຂຶ້ນຈາກ 80% ໃນປີ 2011 ມາເປັນ 99,63%

4 ການສຳຫລວດກຳລັງແຮງງານ ແລະ ແຮງງານເດັກ ປີ 2010, ກະຊວງແຮງງານ-ສະຫວັດດີການສັງຄົມ, ສູນສະຖິຕິແຫ່ງຊາດ ກະຊວງແຜນການ ແລະ ການລົງທຶນ

5 ການຄາດຄະເນຈາກການສຳຫລວດການຊົມໃຊ້ ແລະ ການໃຊ້ຈ່າຍຄົວເຮືອນ ປີ 2013 ສູນສະຖິຕິແຫ່ງຊາດ

ຂອງຈຳນວນບ້ານທັງໝົດໃນປີ 2014 ແລະ ປະກາດບ້ານແບບຢ່າງດ້ານສາທາລະນະສຸກເພີ່ມຂຶ້ນຈາກ 24,5% ໃນປີ 2011 ມາເປັນ 64,84% ຂອງຈຳນວນບ້ານທັງໝົດໃນປີ 2014.

4. ການຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນ, ການພັດທະນາຕາມຊາຍແດນ ແລະ ຈຸດສຸມຕ່າງໆຂອງລັດຖະບານ ໄດ້ເຮັດໃຫ້ຫຼາຍຄອບຄົວໃນເຂດດັ່ງກ່າວມີການຫັນອາຊີບຈາກການຖາງປ່າເຮັດໄຮ່ປູກເຂົ້າມາຜະລິດເປັນສິນຄ້າຕາມທ່າແຮງຂອງທ້ອງຖິ່ນຕົນ, ມີບ່ອນທຳມາຫາກິນຖາວອນອາຊີບໝັ້ນທ່ຽງ, ມີການຫັນປ່ຽນແບບແຜນການທຳມາຫາກິນແບບເກົ່າທີ່ຂຶ້ນກັບທຳ ມະຊາດມານຳໃຊ້ເຕັກນິກ-ວິທະຍາສາດ ເຮັດໃຫ້ການແກ້ໄຂຄວາມທຸກຍາກ, ການສ້າງບ້ານພັດທະນາ, ການພັດທະນາຈຸດສຸມ ແລະ ຕົວເມືອງໃໝ່ໄດ້ມີຄວາມຄືບໜ້າຫຼາຍດ້ານ.

ສັງລວມແລ້ວໃນໄລຍະ 5 ປີ ຜ່ານມາ, ເຫັນວ່າວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກໄດ້ມີຜົນສຳເລັດຫຼາຍດ້ານ. ຕາມຜົນການປະເມີນຄວາມທຸກຍາກ ປີ 2014 (ຕາມດຳລັດວ່າດ້ວຍມາດຖານຄວາມທຸກຍາກ ແລະ ມາດຖານການພັດທະນາໄລຍະ 2012-2015 ສະບັບເລກທີ 309/ນຍ) ເຫັນວ່າມີຄອບຄົວທຸກຍາກຍັງເຫຼືອ 76.604 ຄອບຄົວ, ບ້ານທຸກຍາກຍັງເຫລືອຈຳນວນ 1.736 ບ້ານ ເທົ່າກັບ 23,09% ຂອງຈຳນວນບ້ານທັງໝົດທົ່ວປະເທດ; ເຖິງຢ່າງໃດກໍຕາມ, ຈາກຜົນການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຄົວເຮືອນຄັ້ງທີ 5 (LECS5) ເຫັນໄດ້ວ່າອັດຕາສ່ວນຄວາມທຸກຍາກໄດ້ຫຼຸດລົງຈາກ 27,6% ໃນສົກປີ 2007-2008 (LECS4) ມາເປັນ 23,2% ໃນສົກປີ 2012-2013 ແລະ ໃນປີ 2015 ຈະຍັງເຫຼືອປະມານ 20%.

## 3.4. ຜົນສຳເລັດຂອງຂະແໜງການ

### 3.4.1. ການພັດທະນາຂົງເຂດເສດຖະກິດ

#### 1. ກະສິກຳ ແລະ ປ່າໄມ້

ໃນໄລຍະ 5 ປີຜ່ານມາ ເຖິງແມ່ນວ່າຂະແໜງກະສິກຳ-ປ່າໄມ້ໄດ້ຮັບຜົນກະທົບຈາກສະພາບການປ່ຽນແປງດິນຟ້າອາກາດ, ການເກີດໄພພິບັດທຳມະຊາດທີ່ມີຄວາມຮຸນແຮງ, ການເໜັງຕີງຂອງລາຄາສິນຄ້າກະສິກຳ, ການເພີ່ມຂຶ້ນຂອງລາຄານ້ຳມັນໃນຕະຫຼາດໂລກ ແລະອື່ນໆ ກໍ່ຕາມ ແຕ່ດ້ວຍຄວາມພະຍາຍາມຂອງຂະແໜງການ ແລະ ທ້ອງຖິ່ນ ຈຶ່ງສາມາດມີຜົນສຳເລັດສຳຄັນຫຼາຍດ້ານທີ່ເປັນໜ້າຊື່ນຊົມ ແລະ ສາມາດບັນລຸຄາດໝາຍໃຫຍ່ທີ່ວາງໄວ້ໃນແຜນການ 5 ປີ ຄັ້ງທີ VII ໂດຍສະເພາະການຜະລິດທາງດ້ານສະບຽງອາຫານ, ການສົ່ງເສີມການຜະລິດເປັນສິນຄ້າເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ, ການຍົກສູງຄຸນນະພາບ ແລະ ສະມັດຕະພາບການຜະລິດ ເຊິ່ງສະແດງອອກດັ່ງນີ້:

**ກ. ດ້ານສະບຽງອາຫານ:**

» **ການປູກເຂົ້າ**: ສາມາດສະໜອງເຂົ້າໃຫ້ແກ່ສັງຄົມໄດ້ໂດຍພື້ນຖານ, ໃນ 5 ປີ ຜ່ານມາ ຜົນຜະລິດເຂົ້າລວມ ສະ ເລ່ຍ 3 ລ້ານກວ່າໂຕນຕໍ່ປີ, ໃນສົກປີ 2010-2011 ຜະລິດເຂົ້າໄດ້ 3,06 ລ້ານໂຕນ ແລະ ໃນສົກປີ 2014-2015 ຜະລິດໄດ້ 4,1 ລ້ານໂຕນ ແລະ ທຽບໃສ່ແຜນການ 5 ປີ ຄັ້ງທີ VII ປະຕິບັດໄດ້ 97% ຂອງແຜນການ (4,2 ລ້ານໂຕນ) ໃນນັ້ນ:

– ເຂົ້ານາປີ: ໃນປີ 2011 ປະຕິບັດໄດ້ 598.358 ເຮັກຕາ, ຜົນຜະລິດ 2,32 ລ້ານໂຕນ; ປີ 2012 ປະຕິບັດໄດ້ 706.028 ເຮັກຕາ, ຜົນຜະລິດ 2,76 ລ້ານໂຕນ; ປີ 2013 ປະຕິບັດໄດ້ 683.125 ເຮັກຕາ, ຜົນຜະລິດ 2,73 ລ້ານໂຕນ; ປີ 2014 ປະຕິບັດໄດ້ 762.566 ເຮັກຕາ ຜົນຜະລິດ 3,21 ລ້ານໂຕນ ແລະ ປີ 2015 ປະຕິບັດໄດ້ 755.950 ເຮັກຕາ, ຜົນຜະ ລິດ 3,36 ລ້ານໂຕນ ທຽບໃສ່ແຜນການ 5 ປີ ຄັ້ງທີ VII ທີ່ວາງໄວ້ ບັນລຸລື່ນແຜນການ 12% (ແຜນການ 740.000 ເຮັກຕາ, ຜົນຜະລິດ 2,97 ລ້ານໂຕນ).

– ເຂົ້ານາແຊງ: ສົກປີ 2010-2011 ປະຕິບັດໄດ້ 112.210 ເຮັກຕາ, ຜົນຜະລິດ 540.315 ໂຕນ ແລະ ສົກປີ 2014-2015 ປັກດຳໄດ້ 101.525 ເຮັກຕາ, ຜົນຜະລິດ 520.000 ໂຕນ ທຽບໃສ່ແຜນການ 5 ປີ (200.000 ເຮັກຕາ) ປະຕິບັດໄດ້ພຽງ 51% ຂອງແຜນການ ເນື່ອງມາຈາກຫຼາຍປັດໄຈທີ່ກ່ຽວຂ້ອງ ເປັນຕົ້ນແມ່ນ: ການປ່ຽນແປງຂອງສະພາບດິນຟ້າອາກາດ, ປະລິມານນ້ຳຝົນໜ້ອຍກວ່າປີທີ່ຜ່ານມາ, ຝົນຢຸດເຊົາຜິດປົກກະຕິເຮັດໃຫ້ແມ່ນ້ຳລຳເຊບົກແຫ້ງກະທົບຕໍ່ລະ ບົບຫົວງານຊົນລະປະທານເຮັດວຽກບໍ່ເຕັມປະສິດຕິພາບ, ພ້ອມດຽວກັນນັ້ນ ກໍເກີດໄພພິບັດເຮັດໃຫ້ລະບົບຄອງເໝືອງເປ່ເພສ້ອມແປງບໍ່ທັນຕາມລະດູກ

ນຜະລິດ, ບາງພື້ນທີ່ສະພາບອາກາດໜາວສົ່ງຜົນເຮັດໃຫ້ການຕົກກ້າບໍ່ໄດ້ຮັບຜົນໂດຍສະເພາະແມ່ນເຂດພາກເໜືອ; ເນື້ອທີ່ນາແຊງທີ່ສາມາດຮັບນໍ້າລະບົບຊົນລະປະທານ ແລະ ສາມາດປັກດໍານາແຊງໄດ້ພັດຖືກຫັນປ່ຽນໄປປຸກສ້າງເຄຫະສະຖານ ແລະ ຖະໜົນຫົນທາງຕ່າງໆ.

– ເຂົ້າເນີນສູງ: ໃນປີ 2011 ປະຕິບັດໄດ້ 106.682 ເຮັກຕາ, ຜົນຜະລິດ 202.250 ໂຕນ ແລະ ປີ 2015 ປະຕິບັດໄດ້ 91.060 ເຮັກຕາ, ຜົນຜະລິດ 224.360 ໂຕນ ທຽບໃສ່ແຜນການ 5 ປີ (100.000 ເຮັກຕາ) ປະຕິບັດໄດ້ພຽງ 91% ຂອງແຜນການ ເຊິ່ງສ່ວນໃຫຍ່ການຜະລິດແມ່ນຢູ່ບັນດາແຂວງພາກເໜືອໂດຍສະເພາະ ແຂວງຫົວພັນ, ຊຽງຂວາງ, ໄຊຍະ ບູລີ, ໄຊສົມບູນ ແລະ ຜົ້ງສາລີ.

» **ການປູກພືດສະບຽງອາຫານຕ່າງໆ:** ແມ່ນສືບຕໍ່ຂະຫຍາຍຕົວດີພໍສົມຄວນໂດຍສະເພາະແມ່ນ:

– ສາລີຫວານ: ຜົນຜະລິດເພີ່ມຂຶ້ນຈາກ 108.275 ໂຕນໃນສົກປີ 2010-2011 ມາເປັນ 259.870 ໂຕນ ໃນສົກປີ 2014-2015 ເພີ່ມຂຶ້ນ 44% ທຽບໃສ່ແຜນການ 5 ປີ (228.474 ໂຕນ) ເກີນແຜນການ 13,74%. ປູກຫຼາຍກວ່າໝູ່ແມ່ນຢູ່ແຂວງຈໍາປາສັກ, ວຽງຈັນ, ອຸດົມໄຊ, ບໍລິຄໍາໄຊ ແລະ ຫຼວງພະບາງ.

– ເຜືອກມັນ: ຜະລິດໄດ້ 304.120ໂຕນ ໃນສົກປີ 2010-2011 ແລະ 268.560 ໂຕນ ໃນສົກປີ 2014-2015 ທຽບໃສ່ແຜນການ 5 ປີ (303.500 ໂຕນ) ບັນລຸ 88,48% ຂອງແຜນການ, ໂດຍລວມແລ້ວການຜະລິດເຜືອກ-ມັນມີທ່າອ່ຽງຄົງຕົວຢູ່ໃນລະດັບ 300.000 ໂຕນ. ປູກຫຼາຍກວ່າໝູ່ຢູ່ແຂວງຈໍາປາສັກ, ສາລະວັນ, ວຽງຈັນ, ຜົ້ງສາລີ ແລະຊຽງຂວາງ.

– ໝາກໄມ້ໃຫ້ໝາກ: ຜົນຜະລິດເພີ່ມຂຶ້ນຈາກ 626.805 ໂຕນ ໃນສົກປີ 2010-2011 ມາເປັນ 790.840 ໂຕນ ໃນສົກປີ 2014-2015, ທຽບໃສ່ແຜນການ 5 ປີ (700.000 ໂຕນ) ບັນລຸລື່ນແຜນການ 12,98%.

– ພືດຜັກຕ່າງໆ: ຜົນຜະລິດເພີ່ມຂຶ້ນຈາກ 1.225.370 ໂຕນ ໃນສົກປີ 2010-2011 ມາເປັນ 1.402.690 ໂຕນໃນສົກປີ 2014-2015 ເພີ່ມຂຶ້ນ 14%, ທຽບໃສ່ແຜນການ 5 ປີ (1,50 ລ້ານໂຕນ) ບັນລຸໄດ້ 93% ຂອງແຜນການ. ປູກຫຼາຍກວ່າໝູ່ ແມ່ນແຂວງຈໍາປາສັກ, ວຽງຈັນ, ອຸດົມໄຊ, ນະຄອນຫຼວງວຽງຈັນ. ເດັ່ນກວ່າໝູ່ແມ່ນໂຄງການປູກຜັກອິນຊີ(ຜັກປອດສານພິດ) ເນື່ອງຈາກສັງຄົມມີຄວາມຕ້ອງການສູງ ເຊິ່ງປະຈຸບັນກຸ່ມຜະລິດກະສິກໍາອິນຊີ ຂະຫຍາຍອອກຕື່ມ 8 ແຂວງ, ລວມມີທັງໝົດ 59 ກຸ່ມ ແລະ ສາມາດຕອບສະໜອງໃຫ້ແກ່ການບໍລິໂພກຂອງສັງຄົມໄດ້ໂດຍພື້ນຖານ.

» **ການລ້ຽງສັດ ແລະ ການປະມົງ:** ມີທ່າຂະຫຍາຍຕົວດີພໍສົມຄວນຍ້ອນມີການຊຸກຍູ້ສົ່ງເສີມການຫັນປ່ຽນເຕັກນິກການລ້ຽງໃໝ່, ມີການສະໜອງວັດຖຸອຸປະກອນ ແລະປັດໃຈການຜະລິດ, ການຝຶກອົບຮົມເຕັກນິກການລ້ຽງສັດ, ການເກັບຮັກສາອາຫານສັດ, ການປູກຫຍ້າລ້ຽງສັດ, ການສັກຢາປ້ອງກັນພະຍາດສັດ ເຊິ່ງໄດ້ເຮັດໃຫ້ຝູງສັດມີການຂະຫຍາຍ ຕົວໃນລະດັບ 5% ຕໍ່ປີ (ແຜນການ 4-6% ຕໍ່ປີ) ໃນນັ້ນ: ຄວາຍ: ມີການຂະຫຍາຍຕົວໃນລະດັບ 1-2% ຕໍ່ປີ ໃນສົກປີ 2010-2011 ປະຕິບັດໄດ້ 1,19 ລ້ານໂຕ ມາເປັນ 1,21 ລ້ານໂຕ ໃນສົກປີ 2014-2015 ທຽບໃສ່ແຜນການ 5 ປີ (1,26 ລ້ານໂຕ) ບັນລຸ 96%, ງົວ: ມີການຂະຫຍາຍຕົວໂດຍສະເລ່ຍໃນລະດັບ 5% ຕໍ່ປີ ໃນສົກປີ 2010-2011 ປະຕິບັດໄດ້ 1,52 ລ້ານໂຕ ມາເປັນ 1,81 ລ້ານໂຕ ໃນສົກປີ 2014-2015 ເພີ່ມຂຶ້ນ 19%, ທຽບໃສ່ແຜນການ 5 ປີ (1,86 ລ້ານໂຕ) ບັນລຸ 97% ຂອງແຜນການ. ໝູ: ມີການຂະຫຍາຍຕົວໃນລະດັບ 3-5% ຕໍ່ປີ ໃນສົກປີ 2010-2011 ປະຕິບັດໄດ້ 2,65 ລ້ານໂຕ ມາເປັນ 3,04 ລ້ານໂຕ ໃນສົກປີ 2014-2015 ເພີ່ມຂຶ້ນ 14%, ທຽບໃສ່ແຜນການ 5 ປີ (3,05 ລ້ານໂຕ) ບັນລຸ 99,67% ຂອງແຜນການ. ແບ້: ເພີ່ມຂຶ້ນໂດຍສະເລ່ຍໃນລະດັບ 4% ຕໍ່ປີ ໃນສົກປີ 2010-2011 ປະຕິບັດໄດ້ 431.000 ໂຕ ມາເປັນ 525.725 ໂຕ ໃນສົກປີ 2014-2015 ເພີ່ມຂຶ້ນ 21%, ທຽບໃສ່ແຜນການ 5 ປີ (522.500ໂຕ) ບັນລຸຕາມແຜນການ. ສັດປີກ: ມີການຂະຫຍາຍຕົວໃນລະດັບ 7-8% ຕໍ່ປີ ໃນສົກປີ 2010-2011 ປະຕິບັດໄດ້ 26,85 ລ້ານໂຕ ມາເປັນ 34,36 ລ້ານໂຕໃນສົກປີ 2014-2015 ເພີ່ມຂຶ້ນ 27%, ທຽບໃສ່ແຜນການ 5 ປີ (33,52 ລ້ານໂຕ) ບັນລຸລື່ນແຜນ ການ 2% ຂອງແຜນການ.

ສາມາດສະໜອງຊີ້ນ, ປາແລະໄຂ່ໃຫ້ແກ່ສັງຄົມເພີ່ມຂຶ້ນໄດ້ທັງໝົດ 296.086 ໂຕນໃນສົກປີ 2010-2011 ມາເປັນ 387.734 ໂຕນໃນສົກປີ 2014-2015 ທຽບໃສ່ແຜນການ 5 ປີ (379.100 ໂຕນ) ບັນລຸຕາມແຜນການ. ອັດຕາການບໍລິໂພກຊີ້ນ, ປາ ແລະ ໄຂ່ໂດຍສະເລ່ຍບັນລຸໄດ້ 48 ກິໂລ/ຄົນ/ປີ ໃນປີ 2012 (ເຂດຊົນນະບົດ 42 ກິໂລ/ຄົນ/ປີ, ເຂດຕົວເມືອງ 56 ກິໂລ/ຄົນ/ປີ) ແລະໃນສົກປີ 2014-2015 ປະຕິບັດໄດ້ 53 ກິໂລ/ຄົນ/ປີ.

## ຂ. ດ້ານຜະລິດເປັນສິນຄ້າ:

» **ການປູກພືດເປັນສິນຄ້າ**: ໄດ້ຂະຫຍາຍຕົວດີສົມຄວນ ພົ້ນເດັ່ນກວ່າໝູ່ແມ່ນ 10 ພືດບູລິມະສິດທີ່ເປັນປາຍແຫຼມ ເຊິ່ງປະຕິບັດໄດ້ລື່ນແຜນການ 5 ປີ ຍ້ອນພືດດັ່ງກ່າວມີທ່າແຮງທາງດ້ານການຕະຫຼາດ, ມີຕະຫຼາດຮອງຮັບ, ລາຄາກໍ່ເປັນທີ່ພໍໃຈຂອງຊາວກະສິກອນ ແລະ ໄດ້ຮັບການຊຸກຍູ້ສົ່ງເສີມຈາກພາກລັດ ແລະ ຜູ້ປະກອບການ ລວມທັງບັນດາບໍລິສັດຜູ້ລົງທຶນຕ່າງໆ ໃນຂົງເຂດກະສິກຳ ແລະ ອຸດສາຫະກຳປຸງແຕ່ງຜົນຜະລິດກະສິກຳ. ລາຍລະອຽດມີດັ່ງລຸ່ມນີ້:

– ກາເຟ: ການຜະລິດໄດ້ເພີ່ມຂຶ້ນ ຈາກ 52.010 ໂຕນ ສົກປີ 2010-2011 ມາເປັນ 99.780 ໂຕນ ໃນສົກປີ 2014-2015 ທຽບໃສ່ແຜນການ 5 ປີ (55.300 ໂຕນ) ບັນລຸລື່ນແຜນການ 80%. ປູກຫຼາຍກວ່າໝູ່ແມ່ນແຂວງຈຳປາສັກ, ສາລະວັນ ແລະ ເຊກອງ ຍ້ອນວ່າມີຕະຫຼາດທັງພາຍໃນ ແລະ ຕ່າງປະເທດຮອງຮັບໂດຍສະເພາະໂຮງງານກະເຟຂອງບໍລິສັດດາວເຮືອງ.

– ສາລີອາຫານສັດ: ເພີ່ມຂຶ້ນຈາກ 917.715 ໂຕນ ໃນສົກປີ 2010-2011 ມາເປັນ 1,11 ລ້ານໂຕນ ໃນສົກປີ 2014-2015 ທຽບໃສ່ແຜນການ 5 ປີ (1,17 ລ້ານໂຕນ) ບັນລຸ 94% ຂອງແຜນການ. ປູກຫຼາຍກວ່າໝູ່ແມ່ນແຂວງໄຊຍະບູລີ, ອຸດົມໄຊ, ຫົວພັນ, ຊຽງຂວາງ ແລະ ບໍ່ແກ້ວ.

– ມັນຕົ້ນ: ການຜະລິດມີທ່າອ່ຽງເພີ່ມຂຶ້ນທຸກປີ ແລະ ເປັນທີ່ຕ້ອງການຂອງຕະຫຼາດ ໃນສົກປີ 2010-2011 ຜະ ລິດໄດ້ 743.170 ໂຕນ ແລະ ໃນສົກປີ 2014-2015 ຜະລິດໄດ້ 1.513.920 ໂຕນ ທຽບໃສ່ແຜນການ 5 ປີ (640.000ໂຕນ) ປະຕິບັດໄດ້ລື່ນແຜນການເກີນເທົ່າໂຕ. ປູກຫຼາຍກວ່າໝູ່ແມ່ນນະຄອນຫຼວງວຽງ ຈັນ, ວຽງຈັນ ແລະ ບໍລິຄຳໄຊ ຍ້ອນເປັນພືດເສດຖະກິດ ແລະ ເປັນທີ່ຕ້ອງການຂອງຕະຫຼາດ ເຊິ່ງມີໂຮງງານປຸງແຕ່ງຂະໜາດໃຫຍ່ຮັບຮອງ.

– ອ້ອຍ: ຜະລິດໄດ້ 1,22 ລ້ານໂຕນ ສົກປີ 2010-2011 ແລະ ໃນສົກປີ 2014-2015 ຜະລິດໄດ້ 1,75 ລ້ານໂຕນ ທຽບໃສ່ແຜນການ 5 ປີ (2,15 ລ້ານໂຕນ) ບັນລຸ 81% ຂອງແຜນການ. ປູກຫຼາຍກວ່າໝູ່ແມ່ນ ແຂວງສະຫວັນນະເຂດ ແລະ ບໍລິຄຳໄຊ.

– ຢາສູບ: ໃນສົກປີ 2010-2011 ປະຕິບັດໄດ້ 81.175 ໂຕນ ມາເປັນ 64.600 ໂຕນ ໃນສົກປີ 2014-2015 ທຽບໃສ່ແຜນການ 5 ປີ (90.000 ໂຕນ) ບັນລຸ 71% ຂອງແຜນການ, ປູກຫຼາຍແມ່ນ ແຂວງຈຳປາສັກ, ສະຫວັນນະເຂດ, ບໍລິຄຳໄຊ, ຄຳມ່ວນ, ຫຼວງພະບາງ ແລະ ແຂວງວຽງຈັນ ເພື່ອປ້ອນໂຮງງານຢາສູບຢູ່ນະຄອນຫຼວງວຽງຈັນ, ສະຫວັນນະເຂດ ແລະ ສົ່ງອອກ.

– ຝ້າຍ: ໃນສົກປີ 2010-2011 ປະຕິບັດໄດ້ 1.840 ໂຕນມາເປັນ 2.200 ໂຕນ ໃນສົກປີ 2014-2015 ທຽບໃສ່ແຜນການ 5 ປີ (4.370ໂຕນ) ບັນລຸ 50% ຂອງແຜນການ.

– ໝາກເດືອຍ: ໃນສົກປີ 2010-2011 ປະຕິບັດໄດ້ 103.485 ໂຕນ ມາເປັນ 186.620 ໂຕນ ໃນສົກປີ 2014-2015 ທຽບໃສ່ແຜນການ 5ປີ (96.000 ໂຕນ) ບັນລຸໄດ້ລື່ນແຜນການ 94%.

– ຖົ່ວເຫຼືອງ: ໃນສົກປີ 2010-2011 ປະຕິບັດໄດ້ 13.820 ໂຕນ ມາເປັນ 13.905 ໃນສົກປີ 2012-2013, ສົກປີ 2013-2014 ປະຕິບັດໄດ້ 16.645 ເຮັກຕາ ແລະໃນສົກປີ 2014-2015 ປະຕິບັດໄດ້ 17.630 ໂຕນ ຖ້າທຽບໃສ່ແຜນການ 5ປີ (29.750 ໂຕນ) ບັນລຸໄດ້ 60% ຂອງແຜນການ.

– ຖົ່ວດິນ: ປະຕິບັດໄດ້ 70.195 ໂຕນ ໃນສົກປີ 2010-2011 ມາເປັນ 66.500 ໂຕນ ໃນສົກປີ 2014-2015 ທຽບໃສ່ແຜນການ 5 ປີ (70.000 ໂຕນ) ບັນລຸ 95% ຂອງແຜນການ.

– ຖົ່ວຂຽວ: ປະຕິບັດໄດ້ 4.790 ໂຕນ ໃນສົກປີ 2010-2011 ແລະ 3.870 ໂຕນ ໃນສົກປີ 2014-2015 ທຽບໃສ່ແຜນການ 5ປີ (7.222 ໂຕນ) ບັນລຸ 53% ຂອງແຜນການ.

» **ຢາງພາລາ**: ຂະຫຍາຍຕົວຫຼາຍສົມຄວນ ໂດຍສະເພາະແມ່ນບັນດາແຂວງພາກເໜືອ ຍ້ອນມີການສົ່ງເສີມການລົງທຶນຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດ ມາຮອດປະຈຸບັນ ມີເນື້ອທີ່ປູກຢາງພາລາທັງໝົດ 248.864 ເຮັກ ຕາ, ໃນນັ້ນປະຊາຊົນປູກເອງ 66.833 ເຮັກຕາ, ບໍລິສັດປູກຮ່ວມສັນຍາກັບປະຊາຊົນ 58.647 ເຮັກຕາ ແລະ ບໍລິສັດປູກເອງ 121.873 ເຮັກຕາ ສາມາດກີດຢາງໄດ້ແລ້ວ 35.959 ເຮັກຕາ.

» **ເຄື່ອງປ່າຂອງດົງ:** ໄມ້ປ່ອງ ໃນສົກປີ 2012-2013 ປະຕິບັດໄດ້ 2,16 ລ້ານລຳ, ເຊິ່ງລື່ນແຜນການ 5 ປີວາງໄວ້ (ແຜນການ 0,9-1 ລ້ານລຳ); ຟືນ ສົກປີ 2010-2011 ປະຕິບັດໄດ້ 29.557 ຫຼາ ແລະ ສົກປີ 2012-2013 ໄດ້ 40.900 ຫຼາ ເຊິ່ງລື່ນແຜນການ 5 ປີ  28.900 ຫຼາ (ແຜນການ 10-12 ພັນຫຼາ).

» **ການລ້ຽງສັດເປັນສິນຄ້າ:** ແມ່ນໄດ້ຫັນໄປສູ່ການລ້ຽງແບບອຸດສະຫະກຳ ໂດຍນຳໃຊ້ແນວພັນປັບປຸງ ເຊັ່ນ: ໝູ ພັນ (ໝູພັນປັບປຸງ), ໄກ່ພັນໄຂ່, ໄກ່ພັນຊີ້ນ, ເປັດພັນໄຂ່, ນົກກະທາ ໃນຂອບເຂດທົ່ວປະເທດ. ການລ້ຽງຂອງເອກະຊົນມີການຂະຫຍາຍຫຼາຍໃນຕົວເມືອງໃຫຍ່ຄື: ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ຫຼວງພະບາງ, ຄຳມ່ວນ, ສະຫວັນນະເຂດ ແລະຈຳປາສັກ. ການລ້ຽງສັດແຕ່ລະປະເພດມີຫຼາຍຮູບແບບເຊັ່ນ: ການລ້ຽງສັດໃຫຍ່ ງົວ-ຄວາຍຢູ່ເຂດພູພຽງ ແລະ ພູດອຍ ດ້ວຍຮູບແບບການລ້ຽງເປັນຟາມ, ລ້ຽງຕາມຄົງລວມຂອງບ້ານ, ລ້ຽງຂຸນໃນຄອກ ເພື່ອສະໜອງໃຫ້ແກ່ຕະຫຼາດພາຍໃນ ແລະ ສົ່ງອອກໄປປະເທດໃກ້ຄຽງຕາມຊາຍແດນ. ນອກຈາກນັ້ນ, ການລ້ຽງປາແມ່ນລ້ຽງໃສ່ໜອງ, ລ້ຽງໃສ່ກະຊັງໃນອ່າງນ້ຳຊົນລະປະທານ, ແມ່ນ້ຳຂອງ ແລະ ສາຂາ ເຫັນວ່າມີການຂະຫຍາຍຕົວສົມຄວນ ເຊິ່ງຈຳນວນກະຊັງລ້ຽງປາ ໄດ້ເພີ່ມຂຶ້ນຈາກ 4.500 ກະຊັງ ໃນປີ 2010 ມາເປັນ 6.800 ກະຊັງ ໃນປີ 2014, ຜົນຜະລິດ 50.884 ໂຕນ. ໂດຍລວມແລ້ວສະພາບການລ້ຽງສັດເປັນສິນຄ້າມີທ່າອ່ຽງທີ່ດີຂຶ້ນ ແຕ່ຖ້າທຽບໃສ່ຄວາມຕ້ອງການຕົວຈິງໃນການບໍລິໂພກທັງຕະຫຼາດພາຍໃນ ແລະ ຕ່າງປະເທດ ແມ່ນຍັງບໍ່ພຽງພໍໂດຍສະເພາະສັດໃຫຍ່ (ງົວ) ຍ້ອນວ່າຊາວກະສິກອນສ່ວນຫຼາຍຍັງຂາດຄວາມຮູ້ດ້ານເຕັກນິກວິຊາການການລ້ຽງແບບເປັນຟາມ, ການຄວບຄຸມການລະບາດຂອງພະຍາດສັດ, ແນວພັນງົວເປັນແນວພັນພື້ນເມືອງທີ່ໃຫ້ຜົນຜະລິດຕ່ຳ, ການບັງຄັບໃຊ້ລະບຽບການໃນການຂ້າແມ່ພັນງົວທີ່ຖືພາຍັງບໍ່ທັນເຂັ້ມງວດ, ຍັງຂາດນະໂຍບາຍ ແລະ ມາດຕະການພັດທະນາການລ້ຽງສັດທີ່ຊັດເຈນ, ຂາດການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງຈາກພາກລັດ ແລະ ເອກະຊົນ, ການສົ່ງອອກສັດໃຫຍ່ຍັງເປັນການຄ້າຂາຍຕາມຊາຍແດນ.

ໂດຍລວມແລ້ວ, ສິນຄ້າກະສິກຳທີ່ຜະລິດໄດ້ມີບໍລິມາດເພີ່ມຂຶ້ນ ແຕ່ສ່ວນໃຫຍ່ຍັງເປັນວັດຖຸດິບບໍ່ທັນມີການປຸງແຕ່ງເພື່ອສ້າງມູນຄ່າເພີ່ມ, ໃນຕໍ່ໜ້າຕ້ອງໄດ້ອອກແຮງຊຸກຍູ້ໃຫ້ນັກທຸລະກິດມາລົງທຶນ ເພື່ອປຸງແຕ່ງຜະລິດຕະພັນກະສິ ກຳຫຼາຍຂຶ້ນ.

### ຄ. ດ້ານປ່າໄມ້:

» **ການຄຸ້ມຄອງປ່າຜະລິດ ແລະ ປ່າປູກ**: ມາຮອດປະຈຸບັນປ່າຜະລິດແຫ່ງຊາດມີທັງໝົດ 51 ເຂດ ກວມເນື້ອທີ່ 3,1 ລ້ານເຮັກຕາ ໄດ້ແບ່ງອອກເປັນ 324 ເຂດຄຸ້ມຄອງຍ່ອຍ ເຊິ່ງປະຈຸບັນໄດ້ສຳເລັດການສຳຫຼວດເກັບກຳຂໍ້ມູນ ແລະ ສ້າງແຜນຈັດສັນແລ້ວ 276 ເຂດຄຸ້ມຄອງຍ່ອຍກວມເນື້ອທີ່ 2,2 ລ້ານເຮັກຕາ. ສຳເລັດການຂຶ້ນທະບຽນສວນປູກໄມ້ຢູ່ໃນ 9 ແຂວງ: ຫຼວງພະບາງ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ, ສາລະວັນ, ເຊກອງ ແລະ ອັດຕະປື ມີທັງໝົດ 530 ຕອນ, ກວມເນື້ອທີ່ 1.026,85 ເຮັກຕາ.

» **ການຟື້ນຟູປ່າໄມ້**: ສະເພາະປ່າຜະລິດສາມາດປະຕິບັດໄດ້ 164.096 ເຮັກຕາ ເທົ່າກັບ 20% ຂອງແຜນການ 5 ປີ (817.400 ເຮັກຕາ).

» **ການປູກໄມ້:** ການເກັບແກ່ນໄມ້ ເພີ່ມຂຶ້ນຈາກ 56.261 ກິໂລໃນປີ 2010 ມາເປັນ 102.937 ກິໂລໃນປີ 2012 ແລະ ກ້າເບ້ຍໄມ້ໄດ້ 94,81 ລ້ານເບ້ຍ ສະເລ່ຍ 45,40 ລ້ານເບ້ຍຕໍ່ປີ; ສາມາດປູກໄດ້ທັງໝົດ 113.776 ເຮັກຕາ ທຽບໃສ່ແຜນການ 5 ປີ (150.000 ຮຕ) ປະຕິບັດໄດ້ພຽງແຕ່ 76%. ມາຮອດປະຈຸບັນປູກໄມ້ທົ່ວປະເທດ ໄດ້ທັງໝົດ 437.705 ເຮັກຕາ ຫຼື ບັນລຸໄດ້ 87,5% ຂອງແຜນການປູກໄມ້ທັງໝົດຮອດປີ 2020 (500.000 ເຮັກຕາ).

**ງ. ດ້ານຊົນລະປະທານ:** ໃນສົກປີ 2010-2011 ສາມາດສະໜອງນ້ຳຊົນລະປະທານໃນເນື້ອທີ່ທັງໝົດ 409.276 ເຮັກຕາ ແລະ ໃນສົກປີ 2014-2015 ໄດ້ 419.267 ເຮັກຕາ ທຽບໃສ່ແຜນການ 5 ປີ (800.000 ເຮັກຕາ) ປະຕິບັດໄດ້ 52% ຂອງແຜນການ; ໃນນັ້ນ, ການສະໜອງນ້ຳຊົນລະປະທານໃຫ້ແກ່ການຜະລິດລະດູແລ້ງມີທ່າອ່ຽງຫຼຸດລົງ ຈາກ 148.456 ເຮັກ ຕາ ໃນປີ 2010-2011 ມາເປັນ 145.753 ເຮັກຕາ ໃນປີ 2011-2012, 129.911 ເຮັກຕາ ໃນປີ 2013-2014 ແລະ ໃນສົກປີ 2014-2015 ໄດ້ 159.267 ເຮັກຕາ ທຽບໃສ່ແຜນການ 5 ປີ (300.000 ເຮັກຕາ) ໄດ້ພຽງ 53% ຂອງແຜນການ ສາເຫດແມ່ນເນື່ອງຈາກລະບົບຊົນລະປະທານໄດ້ຖືກຜົນກະທົບຢ່າງໜັກໜ່ວງໃນລະດູຝົນ ໃນປີ 2011 ແລະ ການສ້ອມແປງຟື້ນຟູບໍ່ທ່ວງທັນຕາມໄລຍະເວລາ, ສຳລັບການສະໜອງນ້ຳໃຫ້ແກ່ການຜະລິດລະດູຝົນເຫັນວ່າຢູ່ໃນລະດັບເກົ່າຄື: 260.820 ເຮັກຕາ ໃນປີ 2010 ແລະ 260.000 ເຮັກຕາ ສົກປີ 2014-2015, ທຽບໃສ່ແຜນການ 5 ປີ (500.000 ເຮັກຕາ) ສາມາດບັນລຸໄດ້ 52% ຂອງແຜນການ. ອັນພົ້ນເດັ່ນ ແມ່ນການນຳໃຊ້ໂຄງການຊົນລະປະທານຝົນຝອຍ 11 ໂຄງການລວມທັງຢູ່ສູນບໍລິການເຕັກນິກທ່າກົກຄູນ ແຂວງບໍລິຄຳໄຊ ແລະ ສູນຄົ້ນຄວ້າເຂົ້ານາພອກ ເຊິ່ງສ່ວນໃຫຍ່ແມ່ນນຳໃຊ້ໃນການທົດພືດ ເປັນຕົ້ນ ສາລີ ແລະຖົ່ວເຫຼືອງ. ຈາກການທົດລອງນຳໃຊ້ເຫັນວ່າ ແບບຝົນຝອຍສາມາດຍົກຜະລິດຕະພາບຂອງຜົນຜະລິດຂຶ້ນ.

**ຈ. ດ້ານການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ:** ສຳເລັດການສຳຫຼວດຈັດສັນທີ່ດິນກະສິກຳໃນລະ ດັບເມືອງທັງໝົດ 137 ເມືອງ, ໃນນີ້ ໄດ້ມອບໃຫ້ເມືອງໄປນຳໃຊ້ແລ້ວ 118 ເມືອງ ແລະ ກະກຽມມອບອີກ 19 ເມືອງ. ກະກຽມວາງແຜນຈັດສັນ ແລະ ແບ່ງເຂດກະສິກຳ ໂດຍສະເພາະ ທີ່ດິນສຳລັບເພື່ອຄໍ້າປະກັນສະບຽງອາຫານ ທີ່ດິນສຳລັບປູກເຂົ້າ ແລະ ພືດສິນຄ້າ, ທີ່ດິນສຳລັບປູກໄມ້ ແລະ ທີ່ດິນສຳລັບລ້ຽງສັດ (ລວມທັງເຂດປູກຫຍ້າລ້ຽງສັດ) ໃຫ້ລະອຽດຈະແຈ້ງໂດຍເລັ່ງໃສ່ 7 ທົ່ງພຽງໃຫຍ່, 16 ທົ່ງພຽງກາງ ແລະ 12 ທົ່ງພຽງນ້ອຍ ແລະ 2 ທົ່ງພຽງຈຸດສຸມຕົວແບບ: ແຂວງຄຳມ່ວນ ແລະ ສະຫວັນນະເຂດ. ທົ່ງພຽງນ້ອຍພາກເໜືອ ເພື່ອຮອງຮັບການຜະລິດເຂົ້າເປັນສິນຄ້າ ສົ່ງອອກ ສປ ຈີນ ແລະ ປະເທດອື່ນໆ.

**ສ. ດ້ານຄົ້ນຄວ້າທົດລອງ ແລະ ນຳໃຊ້ເຕັກນິກ:** ມາຮອດປະຈຸບັນມີສູນບໍລິການເຕັກນິກກະສິກຳ ແລະ ປ່າໄມ້ ໃນທົ່ວປະເທດ 264 ແຫ່ງ, ໃນນັ້ນ ສູນທີ່ຂຶ້ນກັບກົມສົ່ງເສີມກະສິກຳ ແລະ ສະຫະກອນ ແມ່ນ ສູນຮ່ວມມືລາວ-ຈີນ ແຂວງອຸດົມໄຊ, ສູນບໍລິການຂັ້ນແຂວງມີ 80 ແຫ່ງ, ສູນບໍລິການຂັ້ນເມືອງມີ 145 ແຫ່ງ ແລະສູນບໍລິການຂັ້ນກຸ່ມບ້ານມີ 38 ແຫ່ງ, ໃນນີ້ ມີ 97 ແຫ່ງ ແມ່ນສູນ/ສະຖານີບໍລິການເຕັກນິກຢູ່ໃນເມືອງ ແລະ ບ້ານ 3 ສ້າງ. ໄດ້ປັບປຸງ, ສະໜອງອຸປະກອນ, ເຄື່ອງອົບ-ຄັດ ແລະ ລານຕາກເມັດພັນເຂົ້າຕ່າງໆໃຫ້ສູນບໍລິການເຕັກນິກລວມທັງໝົດ 13 ສູນ ໃນ 12 ແຂວງ. ຊຸກຍູ້ຕິດຕາມ ແລະ ສ້າງຄວາມເຂັ້ມແຂງໃຫ້ສູນບໍລິການເຕັກນິກໃນທົ່ວປະເທດ ໂດຍຈັດເຝິກອົບຮົມສ້າງວິຊາຊີບກັບທີ່, ການຫັນພະນັກງານເຝິກອົບຮົມໄປຊ່ວຍກຸ່ມບ້ານເພື່ອຕິດຕາມຊຸກຍູ້ ແລະ ສົ່ງເສີມການຜະລິດກະສິກຳຢ່າງເປັນປະຈຳໃຫ້ປະຊາຊົນກ່ຽວກັບເຕັກນິກການປູກ ແລະ ການລ້ຽງແບບໃໝ່ທີ່ໄດ້ປະສິດທິຜົນດີຂຶ້ນກວ່າເກົ່າ ສາມາດສະໜອງເຄື່ອງປອດເມັດ ໃຫ້ຂະແໜງສົ່ງເສີມກະສິກຳ ແລະ ສະຫະກອນ 18 ແຂວງ ໃນຂອບເຂດທົ່ວປະເທດ ຈຳນວນ 100 ເຄື່ອງ ແລະ ເຄື່ອງທຽບສີໃບເຂົ້າ ຈຳນວນ 1.000 ອັນ ພ້ອມກັນນັ້ນກໍ່ໄດ້ສົ່ງເສີມການນຳໃຊ້ກົນຈັກທີ່ທັນສະໄໝເຂົ້າໃນການຜະລິດເພື່ອຫຼຸດຜ່ອນແຮງງານຍົກສູງສະມັດຕະພາບການຜະລິດ ແລະ ຫຼຸດຜ່ອນຕົ້ນທຶນການຜະລິດ.

– ການຜະລິດແນວພັນເຂົ້າ: ມີທ່າອ່ຽງຂະຫຍາຍຕົວປະຈຸບັນສາມາດຜະລິດແນວພັນເຂົ້າໄດ້ທັງໝົດ 59.500 ໂຕນ; ໃນນັ້ນ ພາກກາງ ແລະ ພາກໃຕ້ ໄດ້ນຳໃຊ້ແນວພັນປັບປຸງກວມເນື້ອທີ່ຫຼາຍກວ່າ 80% ໃນເຂດນານໍ້າຝົນ ແລະ 100% ໃນເຂດນາແຊງ ເຊິ່ງແນວພັນເຂົ້າຈ້າວ ກວມເອົາ 12% ສ່ວນທີ່ເຫຼືອແມ່ນເຂົ້າໜຽວ.

– ການຜະລິດແນວພັນພືດຕ່າງໆ: ໄດ້ສຸມໃສ່ການຄົ້ນຄວ້າຜະລິດແນວພັນພືດເສດຖະກິດ, ພືດຜັກ ແລະ ຕົ້ນໄມ້ໃຫ້ໝາກເຊັ່ນ: ແນວພັນສາລີລູກປະສົມ 450 ປີ, ແນວພັນຖົ່ວເຫຼືອງ, ແນວພັນກ້ວຍຫອມ ແລະ ອື່ນໆ. ພ້ອມທັງໄດ້ຂະ ຫຍາຍເນື້ອທີ່ການປູກເຟ, ປູກໝາກແໜ່ງ ແລະ ແນວພັນໄມ້ໃຫ້ໝາກຈຳນວນໜຶ່ງ.

– ການຜະລິດແນວພັນສັດ: ໄດ້ຜະລິດແນວພັນປາ 196 ລ້ານໂຕ ບັນລຸ 95% ຂອງແຜນການ (206 ລ້ານໂຕ) ໃນນັ້ນສະຖານີຂອງລັດຜະລິດກວມເອົາ 30% ແລະ ອີກ 70% ແມ່ນພາກສ່ວນຟາມ ແລະ ຜູ້ປະກອບການ. ໄດ້ທົດສອບແນວພັນປາພື້ນເມືອງ 8 ຊະນິດຄື: ປາຕອງ, ປາດຸກນາ, ປາກົດ, ປາເຂັງ, ປາແຝກ, ປາແກ, ປາສ້ອຍ ແລະ ປາເສືອ ຢູ່ສະຖານີໜອງແຕ່ງ ແລະ ບ້ານຫາດ ຈຳນວນ 1.200 ໂຕ ເທົ່າກັບ 60% ຂອງແຜນການ.

– ການຜະລິດແນວພັນສັດໃຫຍ່ ແລະ ພືດອາຫານສັດ: ສາມາດຜະລິດແນວພັນງົວຊີ້ນລູກປະສົມທີ່ມີສາຍເລືອດງົວພື້ນເມືອງ ແລະ ງົວພັນເຣດຊິນດີ ໄດ້ຈຳນວນ 8 ໂຕ (1 ໂຕ ສາມາດຄຸມຝູງໄດ້ 25 ແມ່ ສະນັ້ນ 8 ໂຕ ສາມາດຄຸມຝູງໄດ້ 200ແມ່/ປີ ແລະ ຜະລິດລູກໄດ້ 130ໂຕ) ປະຈຸບັນສາມາດຈຳໜ່າຍເປັນແນວພັນມາດຕະຖານງົວພໍ່ພັນ ໄດ້ 1 ໂຕ. ປັບປຸງ ແລະ ຂະຫຍາຍພັນງົວລູກປະສົມ ໂດຍການປະສົມພັນທຽມ ໄດ້ 25 ໂຕ. ຜະລິດແນວພັນສາຍເລືອດສົດ ແລະ ສາຍເລືອດລູກປະສົມໄດ້ 799 ໂຕ, ຜະລິດແນວພັນລູກໄກ່ຕ່ອກ, ໄກ່ງວງ, ໄກ່ສອງສາຍເລືອດ ແລະ ສາມສາຍເລືອດ ໄດ້ຈຳນວນ 51.859 ໂຕ. ພ້ອມກັນນັ້ນ, ກໍ່ໄດ້ຜະລິດແນວພັນພືດອາຫານສັດ ໄດ້ 2.500 ກິໂລ, ຄຽງຄູ່ກັບການບົວລະບັດຮັກສາທົ່ງຫຍ້າເພື່ອລ້ຽງງົວ, ແບ້ ຈຳນວນ 4 ແນວພັນເຊັ່ນ: ຖົ່ວສະໄຕໂລ, ຫຍ້າກິນີ ແລະ ຫຍ້າກົວເຕມາລາ ໃນເນື້ອທີ່ 12 ເຮັກຕາ ສາມາດສະໜອງຫຍ້າສົດໄດ້ 93,2 ໂຕນ.

– ການສົ່ງເສີມກຸ່ມ ແລະ ສະຫະກອນ: ໄດ້ສຳເລັດການກວດກາຄືນ ບັນດາກຸ່ມ ແລະ ປະເພດກຸ່ມການຜະລິດປະຈຸບັນມີທັງໝົດ 3.640 ກຸ່ມ, ໃນນັ້ນ ກຸ່ມປູກພືດ 1.864 ກຸ່ມ ແລະ ກຸ່ມລ້ຽງສັດ 1.776 ກຸ່ມ ນອກຈາກນັ້ນ ມີ 9 ສະ ຫະກອນເພື່ອສ້າງພື້ນຖານທີ່ເອື້ອອຳນວຍໃຫ້ກຸ່ມ ແລະ ສະຫະກອນເຫຼົ່ານັ້ນ ສາມາດເຊື່ອມໂຍງເຂົ້າໃນເຄືອຂ່າຍຂອງປະ ເທດອາຊຽນ ແລະ ພາກີຕະຫຼາດໂລກໃນອານາຄົດ.

## 2. ອຸດສາຫະກຳ ແລະ ການຄ້າ:

**ກ. ອຸດສາຫະກຳປຸງແຕ່ງ:** ໂດຍລວມແມ່ນມີຜົນສຳເລັດສູງ ໂດຍສະເພາະການສ້າງມູນຄ່າເພີ່ມ ແລະ ການສ້າງວຽກເຮັດງານທຳທີ່ມີການຂະຫຍາຍຕົວໄວ. ໄລຍະ 2011-2015 ລວມຍອດມູນຄ່າການຜະລິດ ປະຕິບັດໄດ້ 25.159 ຕື້ກີບ, ອັດຕາການຂະຫຍາຍຕົວສະເລ່ຍ 13% ຕໍ່ປີ; ໃນນັ້ນ, ອຸດສະຫະກຳປຸງແຕ່ງທີ່ເດັ່ນກວ່າໝູ່ ແມ່ນອຸດສະຫະກຳຜະລິດສະບຽງອາຫານກວມ 21%, ຊິ້ນສ່ວນອາໄຫຼ່ກວມ 18%, ການຜະລິດຕະພັນແຮ່ທາດອື່ນໆທີ່ບໍ່ແມ່ນໂລຫະກວມ 16% ແລະ ການຜະລິດເຄື່ອງດື່ມກວມ 15,5% ຂອງມູນຄ່າອຸດສະຫະກຳປຸງແຕ່ງ ແລະ ສາມາດສະໜອງຄວາມຕ້ອງການພາຍໃນໄດ້ເຖິງ 90%.

– ການພັດທະນາດ້ານພື້ນຖານໂຄງລ່າງອຸດສາຫະກຳປຸງແຕ່ງ: ຮອດປະຈຸບັນສາມາດຈັດສັນ ແລະ ກຳນົດເຂດອຸດສະຫະກຳແລ້ວທັງໝົດ 18.927 ເຮັກຕາ; ໃນນັ້ນ, ດິນລັດ 13.790 ເຮັກຕາ ແລະ ດິນເອກະຊົນ 5.137 ເຮັກຕາ ເພື່ອຮອງຮັບ ແລະ ຈັດສັນໂຮງຈັກໂຮງງານທີ່ມີຢູ່ແລ້ວ ແລະ ສ້າງຂຶ້ນໃໝ່, ເຊິ່ງໃນສົກປີ 2012-2013 ໄດ້ມີໂຮງງານ 206 ແຫ່ງ ທີ່ ດຳເນີນການຜະລິດພາຍໃນເຂດຈັດສັນດັ່ງກ່າວ. ໄດ້ກໍ່ສ້າງເຂດນິຄົມອຸດສາຫະກຳຂຶ້ນຢູ່ 2 ບ່ອນ ຄື: 1) ເຂດນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນໂນນທອງ (VITA PARK): ມີເນື້ອທີ່ 110 ເຮັກຕາ, ເຊິ່ງປະຈຸບັນການພັດທະນາເນື້ອທີ່ດິນ ສຳເລັດຫຼາຍກວ່າ 60% ແລະ ມີ 38 ບໍລິສັດເຂົ້າມາຈົດທະບຽນ, ລວມມູນຄ່າການລົງທຶນ 47,26 ລ້ານໂດລາສະຫະລັດ. 2) ເຂດອຸດສາຫະກຳນະຄອນຫຼວງວຽງຈັນຫລັກ 21: ໄດ້ກຳນົດຂອບເຂດ ເນື້ອທີ່ 2.000 ເຮັກຕາ (ໃນນີ້, ເປັນດິນລັດ 54 ເຮັກຕາ), ເຊິ່ງປະຈຸບັນກຳລັງດຳເນີນການພັດທະນາເຂດ ໃນໄລຍະທີ່ I: ມີເນື້ອທີ່ 140 ເຮັກຕາ ແລະ ສົກປີ 2011-2012 ໄດ້ມີໂຮງງານເຂົ້າໄປສ້າງຕັ້ງແລ້ວ 31 ໂຮງງານ.

– ການຂະຫຍາຍຕົວດ້ານການຜະລິດອຸດສະຫະກຳປຸງແຕ່ງ: ເດັ່ນກວ່າໝູ່ແມ່ນຂະແໜງປຸງແຕ່ງອາຫານ ແລະ ເຄື່ອງດື່ມ, ວັດສະດຸກໍ່ສ້າງ (ຊີມັງ, ກະເບື້ອງ, ເຫລັກເສັ້ນ, ແຜ່ນມຸງຫລັງຄາ, ນ້ຳສີ... ), ຕັດຫຍິບ, ຢາ ສູບ, ເກີ ບ... ປະຈຸບັນ, ການຜະລິດເຄື່ອງດື່ມປະເພດເຫລົ້າ ແລະ ເບຍ ສະໜອງໄດ້ 100%; ນ້ຳດື່ມ, ນ້ຳຫວານ ກວມ 89%; ຊີມັງ 65%, ເຫລັກເສັ້ນ 25% ຂອງຄວາມຕ້ອງການທັງໝົດ. ອຸດສາ ຫະກຳປຸງແຕ່ງທີ່ເກີດຂຶ້ນໃໝ່ມີ: ໂຮງງານຜະລິດ ເສັ້ນໄໝ ແລະ ແຜ່ນແພ, ໂຮງງານທົ່ວອາຫານສັດ, ໂຮງງານປຸງແຕ່ງຊີ້ນ, ໂຮງງານນ້ຳຕານ 3 ແຫ່ງ (ໂຮງງານນ້ຳຕານ ມິດຕະພາບຢູ່ແຂວງສະຫວັນນະເຂດ, ໂຮງງານນ້ຳຕານສະຫວັນນະເຂດ ແລະ ໂຮງງານນ້ຳຕານຮ່ອງແອງຢາລາຍ ຢູ່ແຂວງອັດຕະປື), ໂຮງງານປຸງແຕ່ງຢາງພາລາທັງໝົດ 26 ແຫ່ງ (ຂະໜາດກາງ 11 ແຫ່ງ ແລະ ຂະໜາດນ້ອຍ 15 ແຫ່ງ), ໂຮງງານປຸງແຕ່ງກາເຟດາວເຮືອງ, ໂຮງງານປຸງແຕ່ງກາເຟສຳເລັດຮູບສີໜຸກ, ໂຮງງານແປຮູບຄັ່ງ, ຢາງແປກ ແລະ ໂຮງງານປຸງແຕ່ງເກືອກາລີ.

– ປະຈຸບັນໂຮງງານອຸດສາຫະກຳປຸງແຕ່ງ ຢູ່ ສປປ ລາວ ທີ່ມີມູນຄ່າການລົງທຶນຫຼາຍກວ່າ 50 ຕື້ກີບ ຂຶ້ນໄປ ມີຫລາຍແຫ່ງເຊັ່ນ: ໂຮງງານອົບສາລີ ແລະ ບີບນ້ຳມັນໝາກເຢົາ, ໂຮງງານເບຍລາວຈຳກັດ, ໂຮງງານລາວ-ເອເຊຍປາຊີຟິກ ບີເວີລີ, ໂຮງງານຜະລິດແປ້ງມັນຕົ້ນລາວ-ອິນໂດໄຊນາ, ໂຮງງານຜະລິດມັນຕົ້ນສຳເລັດຮູບແຂວງໄຊຍະບູລີ, ໂຮງງານຜະລິດມັນຕົ້ນ ລາວ TTL ແຂວງບໍລິຄຳໄຊ, ໂຮງງານຢາງພາລາ DakTak ແລະໂຮງງານຜະລິດຢາງພາລາລາວ-ທວຽດ, ໂຮງງານປຸງແຕ່ງ ກາເຟດາວເຮືອງ, ໂຮງງານນ້ຳຕານ ແລະ ຊີມັງ.

**ຂ. ດ້ານຫັດຖະກຳ:** ໄລຍະ 2011-2015 ລວມຍອດມູນຄ່າການຜະລິດ ປະມານ 2.850 ຕື້ກີບ, ເຊິ່ງອັດຕາການຂະຫຍາຍຕົວສະເລ່ຍ 15% ຕໍ່ປີ. ສິນຄ້າຫັດຖະກຳຂອງປະຊາຊົນບັນດາເຜົ່າທີ່ເປັນເອກະລັກຂອງທ້ອງຖິ່ນໄດ້ຮັບການພັດທະນາທາງດ້ານລວດລາຍ ແລະ ສີໄມ້ລາຍມີດີຂຶ້ນເປັນກ້າວໆ, ຜະລິດຕະພັນຫັດຖະກຳລາວໄດ້ຮັບລາງວັນຈາກການເຂົ້າປະກວດຜະລິດຕະພັນຫັດຖະກຳໃນລະດັບພາກພື້ນໄດ້ຫຼາຍລາຍການ, ສາມາດຈັດຈຳໜ່າຍຢູ່ຕະຫຼາດພາຍໃນ ແລະ ຕ່າງ ປະເທດ. ການລົງທຶນຂອງເອກະຊົນລາວ ແລະ ຕ່າງປະເທດໃນຂະແໜງຫັດຖະກຳ: ປະຈຸບັນມີຈຳນວນໂຮງງານຫັດຖະກຳທັງໝົດ 4.237 ແຫ່ງ ມີຕະຫຼາດສົ່ງອອກຕົ້ນຕໍ ຄື: ຕະຫຼາດຍີ່ປຸ່ນ, ເອີຣົບ ແລະ ອາເມລິກາ ໃນນີ້ ຜ້າຝ້າຍ, ຜ້າໄໝມ້ອນຍ້ອມດ້ວຍສີທຳມະຊາດໄດ້ເປັນສິນຄ້າທີ່ນິຍົມຢ່າງກວ້າງຂວາງທັງຕະຫຼາດພາຍໃນ ແລະ ຕ່າງປະເທດ.

**ຄ. ດ້ານການຄ້າ ແລະ ການເຊື່ອມໂຍງ:**

» ການຄ້າພາຍໃນ: ລວມຍອດມູນຄ່າການຈໍລະຈອນສິນຄ້າຄາດວ່າຈະບັນລຸໄດ້ປະມານ 146.148 ຕື້ກີບ, ດ້ວຍອັດຕາການຂະຫຍາຍຕົວສະເລ່ຍເພີ່ມຂຶ້ນ 13% ຕໍ່ປີ (ແຜນການວາງໄວ້ 12% ຕໍ່ປີ), ຕະຫຼາດພາຍໃນໄດ້ຮັບການເປີດກວ້າງ ແລະ ພັດທະນາດີຂຶ້ນເປັນກ້າວໆ; ມາຮອດ ສົກປີ 2014-2015 ທົ່ວປະເທດ ມີຕະຫຼາດຂາຍຍົກ ແລະ ຂາຍຍ່ອຍ ທັງໝົດ 733 ແຫ່ງ ທຽບໃສ່ສົກປີ 2010-2011 ເພີ່ມຂຶ້ນ 200 ແຫ່ງ, ໃນນີ້ ມີຕະຫຼາດຂະໜາດໃຫຍ່ 53 ແຫ່ງ, ຕະຫຼາດຂະໜາດກາງ 115 ແຫ່ງ ແລະ

ຕະຫຼາດຂະໜາດນ້ອຍ 378 ແຫ່ງ ແລະ ຕະຫຼາດນັດ 187 ແຫ່ງ; ເວົ້າລວມຕະຫຼາດຢູ່ບັນດາຕົວເມືອງໃຫຍ່ຕ່າງໆໃນທົ່ວປະເທດ ໄດ້ຮັບການຂະຫຍາຍເຮັດໃຫ້ການແລກປ່ຽນຊື້-ຂາຍ ແລະ ຈໍລະຈອນສິນຄ້າມີຄວາມສະດວກ ແລະ ສາມາດກະຈາຍສິນຄ້າລົງສູ່ຊົນນະບົດ ແລະ ບ່ອນຫ່າງໄກສອກຫຼີກ. ດ້ານການຄຸ້ມຄອງລາຄາສິນຄ້າຍຸດທະສາດ ແລະ ສິນຄ້າກະທົບໄວຕໍ່ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນແມ່ນໄດ້ມີການຕິດຕາມ ແລະ ດໍາເນີນງານຢ່າງໃກ້ຊິດ ດ້ວຍວິທີການດັດສົມການສະໜອງ ແລະ ຄວາມຕ້ອງການ ແລະ ການຄຸ້ມຄອງ ດ້ວຍໂຄງປະກອບລາຄາ.

» **ການຄ້າຕ່າງປະເທດ:** ດ້ານການສົ່ງອອກ: ຄາດຄະເນລວມຍອດມູນຄ່າການສົ່ງອອກສິນຄ້າ ໄລຍະ 2011-2015 ບັນລຸໄດ້ 14.229,23 ລ້ານໂດລາສະຫາລັດ, ດ້ວຍອັດຕາການຂະຫຍາຍຕົວສະເລ່ຍເພີ່ມຂຶ້ນ 12,56% ຕໍ່ປີ (ແຜນການ 18% ຕໍ່ປີ); ສິນຄ້າສົ່ງອອກຕົ້ນຕໍຄື: ແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ກວມ 47,4%, ອຸດສາຫະກໍາຕັດຫຍິບ ແລະ ອຸດສາຫະກໍາປຸງແຕ່ງ (ຢາສູບ, ນໍ້າຕານ, ແປ້ງມັນຕົ້ນ, ກາເຟສໍາເລັດຮູບ...) ກວມ 24,2%, ພະລັງງານໄຟຟ້າ 14,8%, ສິນຄ້າກະສິກໍາ (ສາລີ, ກາເຟ, ໝາກກ້ວຍ, ມັນຕົ້ນ, ເຂົ້າ...) ກວມ 8,2%, ໄມ້ ແລະ ຜະລິດຕະພັນໄມ້ ກວມ 3,8% ແລະ ອື່ນໆ ກວມປະມານ 1,6%. ໂຄງປະກອບຕະຫຼາດສົ່ງອອກສິນຄ້າຂອງ ສປປ ລາວ ໄດ້ແກ່ຕະຫຼາດ ໄທ ກວມ 46,1%, ຈີນ ກວມ 13,8%, ອິດສະຕາລີ ກວມ 13,3%, ຫວຽດນາມ ກວມ 12,0%, ໂຮນລັງ ກວມ 2,2%, ເຢຍລະມັນ ກວມ 2%, ຍີ່ປຸ່ນ ກວມ 1,7% ແລະ ອື່ນໆ ກວມ 8,9%. **ການນໍາເຂົ້າ:** ຄາດວ່າຈະບັນລຸໄດ້ປະມານ 17.629,67 ລ້ານໂດລາສະຫະລັດ, ອັດຕາການຂະຫຍາຍຕົວສະເລ່ຍເພີ່ມຂຶ້ນ 18,01% ຕໍ່ປີ (ແຜນການ 12% ຕໍ່ປີ); ສິນຄ້ານໍາເຂົ້າຕົ້ນຕໍແມ່ນ ອຸປະກອນເຄື່ອງກໍ່ສ້າງ 19,7%, ພາຫະນະ ແລະ ຊິ້ນສ່ວນອາໄຫຼ່ ກວມ 17,5%, ນໍ້າມັນເຊື້ອໄຟ ແລະ ອາຍແກັດ 16,6%, ສິນຄ້າຮັບໃຊ້ການຜະລິດອຸດສາຫະກໍາ 12,4%, ອຸປະກອນເຄື່ອງຮັບໃຊ້ໄຟຟ້າ 11,2%, ເຄື່ອງໃຊ້ສອຍປະຈໍາວັນ ກວມ 5,8% ແລະ ອື່ນໆ ກວມ 22,6% ຂອງສິນຄ້ານໍາເຂົ້າທັງໝົດ. ໂຄງປະກອບຕະຫລາດນໍາເຂົ້າສິນຄ້າຕົ້ນຕໍ ປະກອບມີ: ໄທ ກວມ 60,2%, ຈີນ ກວມ 16,8%, ຫວຽດນາມ 10,8%, ຍີ່ປຸ່ນ 2,6%, ສ.ເກົາຫຼີ 1,9% ແລະ ອື່ນໆ ກວມ 7,7%. **ດຸນການຄ້າ:** ຂາດດຸນປະມານ 3.400,45 ລ້ານໂດລາສະຫະລັດ ເທົ່າກັບ 23,89% ຂອງມູນຄ່າການສົ່ງອອກທັງໝົດ. ການຂາດດຸນດັ່ງກ່າວນີ້ ແມ່ນການນໍາເຂົ້າເພື່ອຮັບໃຊ້ແກ່ການລົງທຶນພາຍໃນ ແລະ ຕ່າງປະເທດທີ່ກວມອັດຕາສູງ ແລະ ນໍາເຂົ້ານໍາມັນເຊື້ອໄຟ, ພາຫະນະຮັບໃຊ້, ອຸປະກອນຮັບໃຊ້ການຜະລິດກະສິກໍາ ແລະ ອື່ນໆ; ພ້ອມດຽວກັນນັ້ນ, ຄວາມຕ້ອງການສິນຄ້າສໍາລັບຊົມໃຊ້ ແລະ ບໍລິໂພກພາຍໃນ ກໍ່ເພີ່ມຂຶ້ນຕາມຈັງຫວະການຂະຫຍາຍຕົວຂອງເສດຖະກິດໃນເງື່ອນໄຂເສດຖະກິດຕະຫຼາດ ແລະ ການເຊື່ອມໂຍງເສດຖະກິດການຄ້າລະດັບພາກພື້ນ ແລະ ສາກົນ.

## 3. ພະລັງງານ ແລະ ບໍ່ແຮ່:

ໃນໄລຍະ 5 ປີ ຜ່ານມາ ເຫັນວ່າການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ດໍາເນີນໃນທ່າມກາງວິກິດການດ້ານເສດຖະກິດທົ່ວໂລກ ທີ່ໄດ້ສ້າງຜົນສະທ້ອນຕໍ່ການພັດທະນາດ້ານໄຟຟ້າ ແລະ ບໍ່ແຮ່ ເຮັດໃຫ້ຫຼາຍໂຄງການໄຟຟ້າຂະໜາດໃຫຍ່ໄດ້ເລື່ອນການລົງມືຈັດຕັ້ງປະຕິບັດ, ລາຄາແຮ່ທາດຕົກຕໍ່າໃນບາງປີ ແຕ່ດ້ວຍຄວາມເອົາໃຈໃສ່ ບວກກັບການຊຸກຍູ້ສົ່ງເສີມຂອງທຸກພາກສ່ວນເຮັດໃຫ້ສາມາດບັນລຸຕາມຄາດໝາຍໄດ້ໃນຫຼາຍດ້ານຄືດັ່ງນີ້:

**ກ. ດ້ານໄຟຟ້າ:** ຜະລິດກະແສໄຟຟ້າທັງໝົດ 67.270,25 ລ້ານກິໂລວັດໂມງ, ລວມມູນຄ່າ 27.298,28 ຕື້ກີບ, ສະເລ່ຍເພີ່ມຂຶ້ນ 14,09%/ຕໍ່ປີ. ປະຈຸບັນທົ່ວປະເທດ ມີໂຄງການຜະລິດໄຟຟ້າ ທີ່ກໍາລັງດໍາເນີນການຜະລິດພະລັງງານໄຟຟ້າທີ່ມີກໍາລັງຕິດຕັ້ງ 1 MW ຂຶ້ນໄປ ມີ 38 ແຫ່ງ ລວມກໍາລັງຕິດຕັ້ງທັງໝົດ 6.258,95 MW ສາມາດຜະລິດພະລັງງານໄຟຟ້າໄດ້ 33.324,6 ລ້ານກິໂລວັດໂມງຕໍ່ປີ. ໃນນັ້ນ ລັດວິສາຫະກິດໄຟຟ້າລາວຄຸ້ມຄອງ ມີ 13 ແຫ່ງ ລວມກໍາລັງຕິດຕັ້ງ 681,5 MW ແລະ ບໍລິສັດເອກະຊົນຄຸ້ມຄອງ (IPP) 25 ແຫ່ງ ລວມກໍາລັງຕິດຕັ້ງ 5.577,45 MW. ສໍາລັບໂຄງການໄຟຟ້າທີ່ກໍ່ສ້າງສໍາເລັດໃນແຜນ 5 ປີຄັ້ງທີ VII (2011-2015) ລວມມີ 26 ແຫ່ງ (4.328,45 MW) ກໍາລັງການຜະລິດ 23.341,70 ລ້ານກິໂລວັດໂມງ ຄື: ເຂື່ອນໄຟຟ້ານໍ້າຍອນ (3 MW) ສໍາເລັດປີ 2011 (IPP), ເຂື່ອນໄຟຟ້ານໍ້າທາ 3 (1.25 MW) ສໍາເລັດປີ 2011 (EDL), ເຂື່ອນໄຟຟ້ານໍ້າພາວ (1.7 MW) ສໍາເລັດປີ 2011 (IPP), ເຂື່ອນໄຟຟ້ານໍ້າຊອງພາກຂະຫຍາຍ (6 MW) ສໍາເລັດ ປີ 2012 (EDL), ເຂື່ອນໄຟຟ້ານໍ້າງື່ມ 2 (615 MW) ສໍາເລັດປີ 2012 (IPP), ເຂື່ອນໄຟຟ້ານໍ້າງື່ມ 5 (120 MW) ສໍາເລັດ ປີ 2012 (IPP), ເທີນຫີນບູນພາກຂະຫຍາຍ (220 MW) ສໍາເລັດປີ 2012 (IPP), ເຂື່ອນໄຟຟ້ານໍ້າຍອງ 8 (60 MW) ສໍາເລັດປີ 2012 (IPP), ເຂື່ອນໄຟຟ້າຕາດສະແລັນ (3,2 MW) ສໍາເລັດໃນປີ 2012 (IPP), ເຂື່ອນໄຟຟ້າເຊຂະໜານ 3 (250 MW) ສໍາເລັດປີ 2013 (IPP) ແຕ່ຍັງປັບປຸງເຕັກນິກ, ເຂື່ອນໄຟຟ້ານໍ້າລອງ (5,5 MW) ສໍາເລັດປີ 2013 (IPP), ໂຮງງານໄຟຟ້າຈາກກາກອ້ອຍຢູ່ແຂວງອັດຕະປື (30 MW) ສໍາເລັດ ປີ 2013 (IPP), ໂຮງງານໄຟຟ້າຈາກກາກອ້ອຍ ຢູ່ແຂວງສະຫັວນນະເຂດ (5 MW) ສໍາເລັດ ປີ 2013 (IPP), ເຂື່ອນໄຟຟ້າເຊນໍ້ານ້ອຍ 1 (14.8 MW) ສໍາເລັດ ປີ 2014 (IPP), ເຂື່ອນໄຟຟ້ານໍ້າແສນ (5 MW) ສໍາ

ເລັດ ປີ 2014 (IPP), ເຂື່ອນໄຟຟ້ານໍ້າສະນາ (14 MW) ສໍາເລັດປີ 2015 (EDL), ເຂື່ອນໄຟຟ້ານໍ້າງຽບ 3A (44 MW) ສໍາເລັດ 2015 (IPP), ເຂື່ອນໄຟຟ້າຫ້ວຍລໍາພັນໃຫຍ່ (88 MW) ສໍາເລັດ 2015 (EDL), ໂຮງງານໄຟຟ້າຄວາມຮ້ອນຫົງສາລິດໄນ (1.878 MW) ສໍາເລັດ ປີ 2015, ເຂື່ອນໄຟຟ້ານໍ້າງຽບ 2 (180 MW) ສໍາເລັດປີ 2015 (IPP), ເຂື່ອນໄຟຟ້ານໍ້າຊຸ່ນ 3B (45 MW) ສໍາເລັດປີ 2015 (IPP), ເຂື່ອນໄຟຟ້ານໍ້າຊຸ່ນ 3A (69 MW) ສໍາເລັດປີ 2015 (IPP), ເຂື່ອນໄຟຟ້ານໍ້າອູ 2 (120 MW) ສໍາເລັດປີ 2015 (IPP), ເຂື່ອນໄຟຟ້ານໍ້າອູ 5 (240 MW) ສໍາເລັດປີ 2015 (IPP), ເຂື່ອນໄຟຟ້ານໍ້າອູ 6 (180 MW) ສໍາເລັດປີ 2015 (IPP), ເຂື່ອນໄຟຟ້ານໍ້າຄານ 2 (130 MW) ສໍາເລັດປີ 2015 (EDL).

ປະຈຸບັນທົ່ວປະເທດ ມີບັນດາໂຄງການໄຟຟ້າ ທີ່ກໍາລັງກໍ່ສ້າງ ແລະ ໄດ້ເຊັນສັນຍາປະເພດຕ່າງໆແລ້ວ ມີຈໍານວນ 369 ໂຄງການ (ບໍ່ນັບໂຄງການທີ່ດໍາເນີນການຜະລິດແລ້ວ) ໃນນັ້ນ, ໂຄງການທີ່ເຊັນສັນຍາສໍາປະທານໂຄງການ (CA) ທີ່ ກໍາລັງກໍ່ສ້າງ ມີ 31 ໂຄງການ ລວມກໍາລັງຕິດຕັ້ງ 3.972,6 ເມກາວັດ ຫຼື MW, ໂຄງການໄຟຟ້າ ທີ່ກໍາລັງກະກຽມກໍ່ສ້າງ (ກໍາລັງເຈລະຈາ CA, ເລີ່ມວຽກກະກຽມພາກສະໜາມ) ມີ 22 ໂຄງການ ລວມກໍາລັງຕິດຕັ້ງ 1.757 ເມກາວັດ, ໂຄງການໄຟຟ້າ ທີ່ຄາດວ່າຈະໄດ້ລົງມືກໍ່ສ້າງກ່ອນປີ 2020 ມີ 55 ໂຄງການ ລວມກໍາລັງຕິດຕັ້ງ 4.130 ເມກາວັດ, ໂຄງການໄຟຟ້າທີ່ຮັບຮອງບົດວິພາກເສດຖະກິດ-ເຕັກນິກ (FS) ແລ້ວ 27 ໂຄງການ ລວມກໍາລັງຕິດຕັ້ງ 3.351 ເມກາວັດ, ໂຄງການໄຟຟ້າ ທີ່ກໍາລັງສຶກສາ FS ມີ 234 ໂຄງການ 9.085 ເມກາວັດ.

ສໍາລັບຄວາມຄືບໜ້າ ຂອງ ໂຄງການໄຟຟ້າ ທີ່ກໍາລັງກໍ່ສ້າງ ມີ: ນໍ້າກົງ 2 (66 MW) ຄືບໜ້າ 98%, ເຊເຊັດ 3 (23 MW) ຄືບໜ້າ 83,59%, ນໍ້າຄານ 3 (60 MW) ຄືບໜ້າ 94,38%, ນໍ້າແບ່ງ (34 MW) ປະຕິບັດໄດ້ 98%, ນໍ້າສີມ (8 MW) ປະຕິບັດໄດ້ 60%, ຫີນບູນ (30 MW) ປະຕິບັດໄດ້ 67%, ເຊຂະໜານ 1 (290 MW) ປະຕິບັດໄດ້ 97%, ນໍ້າແຈ (104 MW) ປະຕິບັດໄດ້ 70,69%, ນໍ້າມັງ (64 MW) ປະຕິບັດໄດ້ 81%, ນໍ້າລຶກ 1 (64 MW) ປະຕິບັດໄດ້ 34%, ນໍ້າງື່ມ 1 ພາກຂະຫຍາຍ (80 MW) ປະຕິບັດໄດ້ 31,79%, ນໍ້າໄຜ່ (86 MW) ປະຕິບັດໄດ້ 72%, ນໍ້າກົງ 3 (45 MW) ປະຕິບັດໄດ້ 64%, ນໍ້າຂອງໄຊຍະບູລີ (1.285 MW) ປະຕິບັດໄດ້ 60%, ເຊຂະໜານ-ຊານໄຊ (32 MW) ປະຕິບັດໄດ້ 30%, ນໍ້າທາ 1 (168 MW) ປະຕິບັດໄດ້ 21%, ເຊປຽນ-ເຊນໍ້ານ້ອຍ (410 MW) ປະຕິບັດໄດ້ 36%, ນໍ້າງຽບ 1 (272 MW) ປະຕິບັດໄດ້ 28%, ນໍ້າເປີນ (32 MW) ປະຕິບັດໄດ້ 70%, ນໍ້າງຽບ 1 (ຝາຍທົດນໍ້າລຸ່ມ) (18 MW) ປະຕິບັດໄດ້ 32%, ນໍ້າງື່ມ 3 (480 MW) ປະຕິບັດໄດ້ 12,93%, ເຊກະຕໍາ-ເຊນໍ້ານ້ອຍ 2 (13,4 MW) ປະຕິບັດໄດ້ 60%, ເຊນໍ້ານ້ອຍ 6 (5 MW) ປະຕິບັດໄດ້ 98%, ນໍ້າເປີນ 2 (12 MW) ປະຕິບັດໄດ້ 50% ແລະ ນໍ້າຮາວ (15 MW) ປະຕິບັດໄດ້ 14%.

- **ການພັດທະນາໄຟຟ້ານອກລະບົບ ແລະພະລັງງານທົດແທນ:**

– ໄຟຟ້າແສງຕາເວັນ: ສປປ ລາວ ມີທ່າແຮງໃນການພັດທະນາພະລັງງານ ຈາກແສງຕາເວັນ ໂດຍສະເລ່ຍປະລິມານແສງແດດໄດ້ຮັບຕໍ່ວັນ ຢູ່ໃນລະດັບ 5.0 kwh/m2. ໄດ້ຂະຫຍາຍ ແລະ ຕິດຕັ້ງໃຫ້ເຂດຊົນນະບົດຫ່າງໄກສອກຫຼີກໄດ້ 18.657 ຄົວເຮືອນ ເທົ່າກັບ 1,64% ຂອງຄົວເຮືອນທັງໝົດ ໃນ 430 ບ້ານ. ໄດ້ສໍາເລັດການຕິດຕັ້ງໄຟຟ້າແສງຕາເວັນຂອງໂຄງການໄຟຟ້າແສງຕາເວັນແບບເຊື່ອມຕໍ່ລະບົບຕະຂ່າຍໄຟຟ້າ ຢູ່ທີ່ສະຖານທີ່ຈອດລົດຂອງສະໜາມບິນສາກົນວັດໄຕ ມີກໍາລັງຕິດຕັ້ງ 236 ກິໂລວັດ. ໄດ້ສໍາເລັດການສຶກສາ ແລະ ອອກແບບໂຄງການໄຟຟ້າແສງຕາເວັນຢູ່ສະຖານທີ່ຈອດລົດຂອງສໍານັກງານໃຫຍ່ລັດວິສາຫະກິດໄຟຟ້າລາວ ມີກໍາລັງຕິດຕັ້ງ 150 ກິໂລວັດ ແລະ ຈະໄດ້ເລີ່ມການກໍ່ສ້າງໃນຕົ້ນປີ 2015.

– ໄຟຟ້າຊີວະມວນ: ສໍາເລັດການກໍ່ສ້າງໂຮງໄຟຟ້າຊີວະມວນການອ້ອຍ ແຂວງສະຫວັນນະເຂດ ມີກໍາລັງຕິດຕັ້ງ 39,7 MW, ໂຄງການພະລັງງານແກັສຊີວະພາບ ຈາກນໍ້າເສຍຂອງບໍລິສັດເບຍລາວ ຂະໜາດ 1.500 ແມັດກ້ອນ/ມື້, ໂຮງງານໄຟຟ້າຊີວະມວນ ແລະ ໂຮງງານຜະລິດອີຕານອນ ແຂວງອັດຕະປື (ໃນຕົ້ນປີ 2013) ກໍາລັງຕິດຕັ້ງ 30 ເມກາວັດ, ກໍາລັງກໍ່ສ້າງໂຮງງານຜະລິດໄຟຟ້າຈາກເສດຂີ້ເຫຍື້ອຂະໜາດ 5 ເມກາວັດ ຢູ່ນະຄອນຫຼວງ ແລະ ໂຮງງານຜະລິດໄຟຟ້າຈາກເສດພືດກະສິກໍາ ຂະໜາດ 50 ເມກາວັດ ແຂວງໄຊຍະບູລີ (ທຶນຊ່ວຍເຫຼືອຈາກລັດຖະບານແຟງລັງ).

– ແກັສຊີວະພາບ: ໂຄງການສາທິດການນໍາໃຊ້ນໍ້າມັນກາຊວນຊີວະພາບຈາກນໍ້າມັນປາມ, ຮ່ວມກັບ ບໍລິສັດອາໂກເທັກ ປະຈຸບັນສໍາເລັດການກໍ່ສ້າງໂຮງງານ ມີຄວາມສາມາດຜະລິດໄດ້ 20.000 ລິດ/ມື້, ໂຄງການສາທິດນໍ້າມັນກະຊວນ ຊີວະພາບ ຈາກໝາກເກົາ ຮ່ວມກັບບໍລິສັດ ເຊື້ອໄຟຊີວະພາບໝາກເກົາລາວ ຂາອອກ-ຂາເຂົ້າ ປະຈຸບັນສໍາເລັດການກໍ່ສ້າງໂຮງບີບຂະໜາດ 6.000 ກິໂລ/ວັນ ແລະ ສໍາເລັດການກໍ່ສ້າງໂຮງງານປຸງແຕ່ງ ຂະໜາດ 1.000 ລິດ/ວັນ, ນອກຈາກນີ້ຍັງຮ່ວມມືກັບອົງການສະຫະປະຊາຊາດ ເພື່ອສຶກສາຄວາມເປັນໄປໄດ້ກ່ຽວກັບການພັດທະນານໍ້າມັນແອັດຊັງ ຈາກມັນຕົ້ນ ທີ່ວຽງຈັນ ແລະ ແຂວງສາລະວັນ.

- **ດ້ານສາຍສົ່ງ ແລະ ສະຖານີ:**

– ສາຍສົ່ງໄຟຟ້າ: ປະຈຸບັນທົ່ວປະເທດ ມີລະບົບສາຍສົ່ງໄຟຟ້າຍາວທັງໝົດຫຼາຍກ່ວາ 52.377,56 km ປະ ກອບມີ 3 ລະດັບແຮງດັນ: ສາຍສົ່ງແຮງດັນສູງ ຍາວທັງໝົດຫຼາຍກວ່າ 6.855,32 ກິໂລແມດ, ໃນນັ້ນ; ສາຍສົ່ງລະບົບແຮງດັນສູງ 500 kv (227 km) ເພື່ອເຊື່ອມໂຍງກັບຕະລາດໄຟຟ້າຂອງປະເທດໃກ້ຄຽງ, ສາຍສົ່ງລະບົບແຮງດັນສູງ 230 kv (1.371,14 km) ເພື່ອເຊື່ອມໂຍງກັບຕ່າງປະເທດແລະເຊື່ອມຈອດພາຍໃນ, ລະບົບແຮງດັນສູງ 115 kv (5.257,18 km) ໃຊ້ເພື່ອເຊື່ອມຕໍ່ພາຍໃນ ແລະ ສາຍສົ່ງລະບົບແຮງດັນກາງ (35 kv, 34 kv ແລະ 22 kv) ຍາວຫຼາຍກວ່າ 27.397,25 km ແລະ ສາຍສົ່ງແຮງດັນຕໍ່າ 0,4 kv ຍາວຫຼາຍກວ່າ 18.124,99 kv ເພື່ອສະໜອງແກ່ການຊົມໃຊ້ ແລະ ຂະຫຍາຍໄປສູ່ຊົນນະບົດຫ່າງໄກສອກຫຼີກ ເຊິ່ງມີດ ອາມສຳຄັນໃນການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ, ເພື່ອແກ້ໄຂຄວາມທຸກຍາກ ແລະ ຊຸກຍູ້ການຜະລິດເປັນສິ ນຄ້າຂອງປະຊາຊົນ. ມາຮອດປະຈຸບັນ ຄອບຄົວທີ່ມີໄຟຟ້າຊົມໃຊ້ກວມເອົາ 90,51% ຂອງຄອບຄົວທັງໝົດໃນທົ່ວປະເທດ ປະຕິບັດໄດ້ລື່ນແຜນການ 5 ປີ ຄັ້ງທີ VII ທີ່ວາງໄວ້ (80%); ແຕ່ເຖິງຢ່າງໃດກໍ່ຕາມການພັດ ທະນາໄຟຟ້າສະໜອງພາຍໃນຍັງບໍ່ພຽງພໍ, ລະບົບສາຍສົ່ງແຮງສູງ ແລະ ແຮງກາງ ຍັງບໍ່ທັນເຊື່ອມຕໍ່ໄດ້ທົ່ວທຸກຂົງເຂດ, ບາງເຂດຍັງນຳເຂົ້າໄຟຟ້າຈາກຕ່າງປະເທດ ຄື: ໄທ, ຫວຽດນາມ ແລະ ຈີນ. ການເຊື່ອມໂຍງລະບົບສາຍສົ່ງ ແມ່ນຍັງສືບຕໍ່ກັບຕະຫຼາດໄຟຟ້າ ຂອງ ບັນດາປະເທດໃກ້ຄຽງເປັນຕົ້ນ ໄທ, ຫວຽດນາມ, ຈີນ, ພະມ້າ ແລະ ກຳປູເຈຍ.

– ສະຖານີໄຟຟ້າ: ໂຄງສ້າງສະຖານີໄຟຟ້າ ແບ່ງອອກເປັນ 4 ພາກ ລວມທັງໝົດມີ 53 ແຫ່ງ, ກຳລັງຕິດຕັ້ງປະມານ 2.295,5 MVA (ສະຖານີ 230/115/22 Kv: 3 ແຫ່ງ, ສະຖານີ 115/22 Kv: 47 ແຫ່ງ, ສະຖານີ 35/22 Kv: 2 ແຫ່ງ ແລະ ສະຖານີ 22/0.4 Kv: 1 ແຫ່ງ).

1) ພາກເໜືອ: ມີ 9 ສະຖານີ ມີແຫຼ່ງສະໜອງ ໄຟຟ້າເຊື່ອມຕໍ່ ລະບົບແຮງດັນ ລະຫວ່າງ ສະຖານີນາໝໍ້ ກັບສະຖານີເມືອງຫຼາ (ຂ.ອຸດົມໄຊ) ກັບ ສປ ຈີນ ແລະ ສ່ວນໜຶ່ງນຳເຂົ້າຈາກການໄຟຟ້າສ່ວນພູມມີພາກ ຂອງໄທ ກຳລັງຕິດຕັ້ງ 401 MVA.
2) ພາກກາງ: ແບ່ງອອກເປັນ ພາກກາງ 1 ແຈກຢາຍໄຟຟ້າໃຫ້ ນະຄອນຫຼວງວຽງຈັນ ແລະ ສ່ວນໜຶ່ງ ຂອງພາກເໜືອ ມີແຫຼ່ງສະໜອງໄຟຟ້າຄື: ນ້ຳງື່ມ 1, ນ້ຳງື່ມ 5, ນ້ຳລີກ 1/2, ນ້ຳເລີກ ແລະ ນ້ຳມັງ 3 ມີສະຖານີ 24 ແຫ່ງ ກຳລັງຕິດຕັ້ງ 1.239,5 ແລະ ພາກກາງ 2 ແຈກຢາຍໄຟໃຫ້ບັນດາແຂວງບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ, ມີແຫຼ່ງ ສະໜອງໄຟຟ້າຄື: ເຂື່ອນນ້ຳຍວງ ແລະ ນ້ຳເທີນ 2 ນອກນັ້ນ ເຊື່ອມຕໍ່ລະບົບຕາຂ່າຍ ພາກກາງ 1 ແລະ ເຊື່ອມຕໍ່ ລະຫວ່າງສະຖານີປາກຊັນ ກັບສະຖານີບຶງການ (ປະເທດໄທ) 1 ວົງຈອນ ແລະ ສະຖານີທ່າແຂກ ກັບ ສະຖານີນະຄອນພະນົມ (ປະເທດໄທ) 2 ວົງຈອນ ມີສະຖານີທັງໝົດ 9 ແຫ່ງ ລວມກຳລັງຕິດຕັ້ງ 282 MVA.
3) ພາກໃຕ້: ແຈກຈ່າຍໄຟຟ້າໃຫ້ແຂວງ ສາລະວັນ, ຈຳປາສັກ, ເຊກອງ ແລະ ອັດຕະປື ມີແຫຼ່ງສະໜອງໄຟ ຟ້າຈາກ ເຂື່ອນເຊເສັດ 1, ເຊເສັດ 2 ແລະ ເຊລະບຳ ນອກນັ້ນເຊື່ອມຕໍ່ກັບລະບົບລະຫວ່າງສະຖານີບັງເຢາະ (ຈຳປາສັກ) ກັບເຂື່ອນສີລິທອນ (ປະເທດໄທ) ລະບົບຕາຂ່າຍເຂດນີ້ຍັງເຊື່ອມຕໍ່ກັບ ພາກກາງ 2, ລວມມີສະຖານີທັງໝົດ 9 ແຫ່ງ ລວມກຳລັງຕິດຕັງ 373 MVA.

**ຂ. ດ້ານບໍ່ແຮ່:** ລວມຍອດມູນຄ່າການຜະລິດ 66.746,83 ຕື້ກີບ ຂະຫຍາຍຕົວສະເລ່ຍ 6,97%/ປີ; ທຽບແຜນ 5 ປີຄັ້ງທີ VI (2006-2010) ເພີ່ມຂຶ້ນ 184,18%, ໃນນີ້ ສາມາດຜະລິດທອງແຜ່ນໄດ້ 427.329 ໂຕນ, ແຮ່ຄຳປະສົມເງິນ 85,94 ໂຕນ, ຖ່ານຫີນລີກໄນ 1,60 ລ້ານໂຕນ, ຖ່ານຫີນແອນຖາໄຊ 876.704 ໂຕນ, ຝຸ່ນທອງ 1,53 ລ້ານໂຕນ, ຫີນກາວ 3,93 ລ້ານໂຕນ ແລະ ແຮ່ທາດອື່ນໆ ກໍ່ມີຈັງຫວະການຂະຫຍາຍຕົວທີ່ເພີ່ມຂຶ້ນ. ລວມມູນຄ່າການສົ່ງອອກຜະລິດຕະພັນແຮ່ທາດໄດ້ຫຼາຍກວ່າ 8 ຕື້ໂດລາສະຫາລັດ ກວມເອົາປະມານ 60% ຂອງມູນຄ່າການສົ່ງອອກລວມຂອງປະເທດ. ມີບັນດາບໍລິສັດລົງທຶນຈາກພາຍໃນ ແລະ ຕ່າງປະເທດທີ່ໄດ້ຮັບອະນຸມັດສັນຍາຂຸດຄົ້ນ ມີຈຳນວນ 74 ບໍລິສັດ, ໃນນັ້ນ: 25 ບໍລິສັດ ທີ່ຢູ່ໃນໄລຍະການກະກຽມຂຸດຄົ້ນ ແລະ ກໍ່ສ້າງໂຮງງານປຸງແຕ່ງ ແລະ ມີ 49 ບໍລິສັດ ກຳລັງຂຸດຄົ້ນປຸງແຕ່ງ ແລະ ສົ່ງອອກ, ສ່ວນຫຼາຍເປັນບໍລິສັດຂະໜາດກາງ ແລະ ນ້ອຍ, ສ່ວນບໍລິສັດຂະໜາດໃຫຍ່ ທີ່ມີມູນຄ່າຜະລິດຕະພັນຫຼາຍກວ່າ 500 ລ້ານໂດລາສະຫະລັດຕໍ່ປີ ຄື: ບໍລິສັດລ້ານຊ້າງມີເນໂຣນສ໌ຈຳກັດ ແລະ ບໍລິສັດພູເບ້ຍມາຍນິງຈຳກັດ. ບໍ່ແຮ່ສຳຄັນທີ່ເປີດການຂຸດຄົ້ນໃໝ່ເປັນຕົ້ນ: ແຮ່ເກືອກາລີຢູ່ທົ່ງມັ່ງແຂວງວຽງຈັນ, ແຮ່ເກືອໂປຕັດແຂວງຄຳມ່ວນ ແລະ ອື່ນໆ.

## 4. ໂຍທາທິການ ແລະ ຂົນສົ່ງ

ຜ່ານການຈັດຕັ້ງປະຕິບັດໃນໄລຍະ 5 ປີຜ່ານມາ ຂະແໜງ ຍທຂ ໄດ້ສຸມທຸກກຳລັງແຮງໃນການສ້າງພື້ນຖານໂຄງລ່າງ ເພື່ອອຳນວຍຄວາມສະດວກໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ການເຊື່ອມໂຍງກັບພາກພື້ນ ແລະ ສາ ກົນ, ເຊິ່ງລາຍລະອຽດຂອງແຕ່ລະຄາດໝາຍມີດັ່ງນີ້:

### ກ. ການພັດທະນາເສັ້ນທາງ ແລະການຂົນສົ່ງທາງບົກ:

» ການພັດທະນາເສັ້ນທາງ: ໄດ້ມີຜົນສຳເລັດຫຼາຍກວ່າດ້ານອື່ນໆສະແດງອອກຄື: ຕາໜ່າງເສັ້ນທາງໄດ້ເພີ່ມຂຶ້ນຈາກ 39.584.50 ກມ ໃນປີ 2010 ເປັນ 51.597,03 ກມ ໃນປີ 2014, ໃນນັ້ນ ປູຢາງແລ້ວໄດ້ເພີ່ມຂຶ້ນຈາກ 5.426,67 ກມ ໃນປີ 2010 ເປັນ 8.272 ກມ ໃນປີ 2014. ການພັດທະນາຕາໜ່າງເສັ້ນທາງຫຼວງແຫ່ງຊາດ ໃຫ້ເປັນທາງຫຼວງອາຊຽນ ເພື່ອເຊື່ອມໂຍງເສັ້ນທາງພາຍໃນປະເທດ ກັບບັນດາປະເທດໃກ້ຄຽງຕາມແລວເສດຖະກິດໃນລະດັບພາກພື້ນ, ແລວເສດຖະກິດເໜືອ-ໃຕ້, ຕາເວັນອອກ-ຕາເວັນຕົກ ໄດ້ເຖິງ 2.200 ກມ ໃນປີ 2015 (ແຜນການ 5 ປີ ວາງໄວ້ 920 ກມ) ປະຕິບັດລື່ນແຜນການ 1.280 ກມ. ສູ້ຊົນກໍ່ສ້າງເສັ້ນທາງຫຼວງຂອງເມືອງ, ທາງຊົນນະບົດທີ່ເຊື່ອມເຂົ້າໃສ່ເຂດຈຸດສຸມ ແລະ ກຸ່ມບ້ານພັດທະນາ (ຢ່າງໜ້ອຍທ່ຽວໄດ້ໜຶ່ງລະດູ) ທຽບໃສ່ແຜນການ 5 ປີ ປະຕິບັດໄດ້ 81% (ແຜນການ 100%).

ໄດ້ສຳເລັດໂຄງການກໍ່ສ້າງທາງຕ່າງໆ ຄື: ໂຄງການກໍ່ສ້າງທາງ 2W ເມືອງເງິນ-ປາກແບ່ງ, ໂຄງການກໍ່ສ້າງຂົວຂ້າມນ້ຳຂອງແຫ່ງທີ 3 ຄຳມ່ວນ-ນະຄອນພະນົມ, ໂຄງການກໍ່ສ້າງຂົວຂ້າມນ້ຳຂອງແຫ່ງທີ 4 ຫວ້ຍຊາຍ-ຊຽງຂອງ, ຂົວມິດຕະພາບລາວ-ມຽນມ້າ ແຂວງຫລວງນ້ຳທາ, ໂຄງການທາງ ADB 10, ທາງ 6A ສົບເບົາ-ບ້ານດ່ານ, ໂຄງການສ້ອມແປງທາງ R3, ກໍ່ສ້າງຂົວເຊຂະໜານທາງ 16B (ເມືອງດາກຈຶງ), ທາງເລກ 2E (ເມືອງຂົວ-ໄຕຈາງ), ໂຄງການກໍ່ສ້າງທາງບ້ານນ້ຳເກິ່ງ-ບ້ານມອມ (ແຂວງບໍ່ແກ້ວ), ໂຄງການກໍ່ສ້າງ ທາງ 1D ຊ່ວງເມືອງຄູນ-ປ່າຄ່າ (ກະຊວງປ້ອງກັນປະເທດ), ທາງ 1B (ປາກນ້ຳນ້ອຍ-ບ້ານຍໍ້), ໂຄງການຍົກລະດັບເສັ້ນທາງເລກ 9 ສະຫວັນນະເຂດ-ແດນສະຫວັນ, ໂຄງການກໍ່ສ້າງເສັ້ນທາງເລກ 15 ແລະ 15B (ນາປົ່ງ-ສາລະວັນ-ຊາຍແດນລາວ/ຫວຽດນາມ), ໂຄງການກໍ່ສ້າງທາງເລກ 4 ຊຽງເງິນ-ໄຊຍະບູລີ-ແກ່ນທ້າວ-ນາຂ່າ ພ້ອມຂົວຂ້າມນ້ຳຂອງທ່າເດື່ອ-ປາກຄອນ. ບັນດາໂຄງການທີ່ກຳລັງຈັດຕັ້ງປະຕິບັດ ແລະ ຈະສຳເລັດໃນປີ 2015 ເຊັ່ນ: ໂຄງການກໍ່ສ້າງທາງ 13 ເໜືອ ຊ່ວງນາເຕີຍ-ອຸດົມໄຊ ແລະ ປາກມອງ-ອຸດົມໄຊ ປະຕິບັດໄດ້ 99,6%, ຂົວຂ້າມນ້ຳຂອງນາສັກ-ໂຄກເຂົ້າດໍ ປະຕິບັດໄດ້ 85%, ໂຄງການກໍ່ສ້າງຂົວເຊຂະໜານ 2 ປະຕິບັດໄດ້ 80,81%, ທາງເລກ 16B (ແຂວງເຊກອງ-ເມືອງດັກຈຶງ) ປະຕິບັດໄດ້ 75,60%, ເສັ້ນທາງເລກ 16A ປາກຊ່ອງ-ຫຼັກ 52 ອັດຕະປື ປະຕິບັດໄດ້ 58%.

ການບູລະນະ ແລະ ສ້ອມແປງເສັ້ນທາງ ຖືເປັນວຽກງານບູລິມະສິດ, ໃນໄລຍະຜ່ານມາ ໄດ້ນຳໃຊ້ກອງທຶນບູລະນະຮັກສາເສັ້ນທາງຫລວງ ໄດ້ຢ່າງມີປະສິດທິຜົນ ເຊິ່ງສາມາດຮັບປະກັນການຄົມມະນາຄົມຂົນສົ່ງຕາມເສັ້ນທາງຫຼວງແຫ່ງຊາດໄດ້ເປັນຢ່າງດີ, ໃນນີ້ ໄດ້ເພີ່ມຄວາມຮັບຜິດຊອບໃຫ້ທ້ອງຖິ່ນຕາມທິດສາມສ້າງ ຮັບຜິດຊອບສ້ອມແປງທາງຫລວງແຫ່ງຊາດເປັນປະຈຳໄດ້ດີພໍສົມຄວນ, ໄດ້ສົມທົບກັບທ້ອງຖິ່ນໃນການແກ້ໄຂຜົນກະທົບຈາກໄພພິບັດທາງທຳມະຊາດຕ່າງໆທີ່ເກີດຂຶ້ນຢ່າງທັນເວລາ, ໄດ້ກຳນົດມາດຕະການເພື່ອຮັບມືກັບໄພພິບັດທີ່ອາດຈະເກີດຂຶ້ນໃນຕໍ່ໜ້າ ແລະ ອື່ນໆ.

» **ການບໍລິການການຂົນສົ່ງສິນຄ້າ** ແລະ ໂດຍສານ: ເຫັນວ່າມີທ່າຂະຫຍາຍຕົວ, ບໍລິມາດການຂົນສົ່ງສິນຄ້າໄດ້ເພີ່ມຂຶ້ນ 8,4% ຕໍ່ປີ ຈາກ 3,82 ລ້ານໂຕນ ປີ 2011 ມາເປັນ 4,78 ລ້ານໂຕນ ໃນປີ 2014 ທຽບໃສ່ແຜນການປະຕິບັດໄດ້ລື່ນແຜນການທີ່ວາງໄວ້. ບໍລິມາດການຂົນສົ່ງໂດຍສານ ເພີ່ມຂຶ້ນ ຈາກ 37,61 ລ້ານຄົນໃນປີ 2011 ມາເປັນ 48,96 ລ້ານຄົນ ໃນປີ 2014, ເພີ່ມຂຶ້ນປະມານ 10% ຕໍ່ປີ ທຽບໃສ່ແຜນການ 5 ປີ ແມ່ນສາມາດປະຕິບັດໄດ້ຕາມແຜນ. ການຂົນສົ່ງສິນຄ້າສາມາດປະຕິບັດໄດ້ 22.588 ພັນໂຕນ, ບໍລິມາດການຈໍລະຈອນສິນຄ້າ ປະຕິບັດໄດ້ 1.847.923 ພັນໂຕນ.ກມ ເທົ່າກັບ 82% ຂອງຄາດໝາຍ 5 ປີ; ການຂົນສົ່ງໂດຍສານປະຕິບັດໄດ້ 117 ລ້ານຄົນ ເທົ່າກັບ 55% ແລະ ບໍລິມາດການຈໍລະຈອນໂດຍສານປະຕິບັດໄດ້ 13.094.964 ພັນຄົນ.ກມ ເທົ່າກັບ 72% ຂອງຄາດໝາຍ.

**ຂ. ການພັດທະນາການກໍ່ສ້າງ** ແລະ ການຂົນສົ່ງທາງນ້ຳ: ຜ່ານການຈັດຕັ້ງປະຕິບັດ ໃນ 5 ປີ ຜ່ານມາ ສຳເລັດການປ້ອງກັນຕະຝັ່ງເຈື່ອນ ມີລວງຍາວທັງໝົດ 85,42 ກມ, ໃນນັ້ນ ການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນຕາມລຳແມ່ນ້ຳຂອງ ແລະ ນ້ຳເຫືອງປະຕິບັດໄດ້ 26,73 ກມ ແລະ ຄາດວ່າຫລາຍໂຄງການຈະສຳເລັດໃນປີ 2015 ເຊັ່ນ: ໂຄງການຕາຝັ່ງເຈື່ອນ ນະຄອນຫລວງວຽງຈັນ, ໂຄງການປ້ອງກັນຕາຝັ່ງເຈື່ອນເມືອງຕົ້ນເຜິ້ງ ປະຕິບັດໄດ້ 97,4%, ໂຄງການປ້ອງກັນຕາຝັ່ງເຈື່ອນ ບ້ານດົງໂພສີ-ທ່ານາແລ້ງ ເມືອງຫາດຊາຍຟອງ ນະຄອນຫລວງ ປະຕິບັດໄດ້ 59%, ໂຄງການປ້ອງກັນຕາຝັ່ງເຈື່ອນ ບ້ານຖິ່ນຊ້ອຍ-ສີຊົມຊື່ນ ນະຄອນຫລວງ ປະຕິບັດ

ໄດ້ 84%, ໂຄງການປ້ອງກັນຕາຝັ່ງເຈື່ອນ ບ.ປາກຊັນໃຕ້-ປາກຊັນເໜືອ ເມືອງປາກຊັນ ປະຕິບັດໄດ້ 50%, ໂຄງການປ້ອງກັນຕາຝັ່ງເຈື່ອນ ບ້ານດອນ-ນາຫລວງທ່າສະອາດ-ຊອກ ເມືອງປາກກະດິງ ປະຕິບັດໄດ້ 80%, ໂຄງການປ້ອງກັນຕາຝັ່ງເຈື່ອນ ບ້ານທ່າກັນຖິນ ເມືອງທ່າພະບາດ ປະຕິບັດໄດ້ 60.45%, ໂຄງການຕາ ຝັ່ງເຈື່ອນບ້ານວັງໂພ, ໂຄງການຕາຝັ່ງເຈື່ອນເມືອງປາກງື່ມ.

ການບໍລິການຂົນສົ່ງທາງນໍ້າ: ບໍລິມາດການຂົນສົ່ງສິນຄ້າທາງນໍ້າ ໄດ້ເພີ່ມຂຶ້ນ ຈາກ 1.088 ພັນໂຕນ ໃນປີ 2010 ມາເປັນ 1.668 ພັນໂຕນ ໃນປີ 2014 ສະເລ່ຍເພີ່ມຂຶ້ນ 24% ຕໍ່ປີ ແລະ ການຂົນສົ່ງໂດຍສານ ເພີ່ມຂຶ້ນຈາກ 2.053 ພັນຄົນ ມາເປັນ 2.868 ພັນຄົນ ໃນປີ 2014 ສະເລ່ຍເພີ່ມຂຶ້ນ 13% ຕໍ່ປີ. ສໍາເລັດການສ້າງຕັ້ງບໍລິສັດຮ່ວມທຸລະກິດລາວ-ຫວຽດ ນາມ ເພື່ອຄຸ້ມຄອງການນໍາໃຊ້ທ່າເຮືອຫວຸງອ່າງ ດໍາເນີນທຸລະກິດທໍາອິດ ໃນປີ 2012 ມີສິນຄ້າຜ່ານແດນລາວ ຈໍານວນ 126.000 ໂຕນ ມາເປັນ 2.447.962 ໃນປີ 2014.

**ຄ. ການພັດທະນາການກໍ່ສ້າງ ແລະ ການຂົນສົ່ງທາງອາກາດ:** ການພັດທະນາກໍ່ສ້າງສະໜາມບິນ: ແມ່ນມີການພັດທະນາຫຼາຍທາງການບໍລິຫານ ເຊິ່ງໄດ້ຍົກລະດັບຈາກສູນການບໍລິການຂ່າວການບິນ ມາເປັນສູນບັນຊາການຈາລະຈອນທາງອາກາດ, ເຄື່ອງມືການບິນທີ່ມີຄວາມທັນສະໄໝ ແລະ ຮັບປະກັນຄວາມປອດໄພ. ການບິນ ແມ່ນມີທ່າຂະຫຍາຍຕົວສູງ ເປັນຕົ້ນໄດ້ຍົກລະດັບສະໜາມບິນສາກົນວັດໄຕ ນະຄອນຫຼວງ ເພື່ອສາມາດຮອງຮັບເຄື່ອງບິນປະເພດໂບອິ້ງ 747 ແລະ ອາຄານຮັບຜູ້ໂດຍສານໄດ້ 400 ຄົນ/ຊົ່ວໂມງ, ກໍ່ສ້າງສະໜາມບິນຫຼວງພະບາງ ເພື່ອຮອງຮັບເຮືອບິນໂບອິ້ງ 737, ສະໜາມບິນອັດຕະປື ແລະ ຫລວງນໍ້າທາ, ປັບປຸງສະໜາມບິນປາກເຊ, ຊຽງຂວາງ, ຊໍາເໜືອ, ອຸດົມໄຊ, ຫວ້ຍຊາຍ ແລະ ໄຊຍະບູລີ. ໄດ້ລົງມືກໍ່ສ້າງສະໜາມບິນໜອງຄ້າງແຂວງຫົວພັນ, ສໍາຫຼວດອອກແບບສະໜາມບິນເຊໂນສະ ຫວັນນະເຂດ, ສະໜາມບິນຕົ້ນເຜີ້ງ ແຂວງບໍ່ແກ້ວ ແລະ ສະໜາມບິນທົ່ງໄຫຫີນ ແຂວງຊຽງຂວາງ.

ການບໍລິການຂົນສົ່ງທາງອາກາດ: ປະຕິບັດໄດ້ດີສົມຄວນ ເຊິ່ງຈໍານວນຖ້ຽວບິນພາຍໃນ ໃນປີ 2014 ປະຕິບັດໄດ້ 11.559 ຖ້ຽວ ຫຼຸດລົງ 0,89% ທຽບໃສ່ປີ 2010 ແລະ ຖ້ຽວບິນຕ່າງປະເທດ ໃນປີ 2014 ປະຕິບັດໄດ້ 15.620 ຖ້ຽວ ເພີ່ມຂຶ້ນ 21,47% ທຽບໃສ່ປີ 2010 ແລະ ມີຖ້ຽວບິນຜ່ານນ່ານຟ້າ ໃນປີ 2014 186.100 ຖ້ຽວ ທຽບໃສ່ປີ 2010 ເພີ່ມຂຶ້ນ 94,91%; ບໍລິສັດການບິນລາວ ໄດ້ຈັດຊື້ເຮືອບິນໃໝ່ ຈໍານວນ 6 ລໍາ (Airbus 320 ຈໍານວນ 4 ລໍາ ແລະ ATR ຈໍານວນ 2 ລໍາ); ໄດ້ເປີດສາຍການບິນເອກະຊົນໃໝ່ ເປັນຕົ້ນແມ່ນສາຍການບິນພົງສະຫວັນແອລາຍ ຮອດປະຈຸບັນມີ 8 ສາຍການບິນ ທີ່ດໍາເນີນການຂົນສົ່ງທາງອາກາດລະຫວ່າງປະເທດ. ສໍາລັບຜູ້ໂດຍສານທັງພາຍໃນ ແລະ ຕ່າງປະເທດ ໃນປີ 2014 ມີຜູ້ໂດຍສານທັງໝົດ 1.367.238 ເທື່ອຄົນທຽບໃສ່ປີ 2010 ເພີ່ມຂຶ້ນ 42,13% ແລະ ວັດຖຸພັນກໍ່ເຊັ່ນດຽວກັນໃນປີ 2014ປະຕິບັດໄດ້ 1.908 ໂຕນທຽບໃສ່ປີ 2010 ເພີ່ມຂຶ້ນ 32,78%.

**ງ. ການພັດທະນາການກໍ່ສ້າງ ແລະ ຂົນສົ່ງທາງລົດໄຟ:** ຄວາມຄືບໜ້າໂຄງການທາງລົດໄຟລາວ-ໄທ ໄລຍະ 2 ທ່ານາແລ້ງ-ບ້ານຄໍາສະຫວາດ ແມ່ນລົງມືກໍ່ສ້າງລານເກັບມ້ຽນຕູ້ຄອນເທນເນີ້, ໂຄງການທາງລົດໄຟລາວ-ຈີນ (ວຽງຈັນ-ບໍ່ເຕນ) ສໍາເລັດການສຶກສາຄວາມເປັນໄປໄດ້ ແລະ ສໍາຫລວດອອກແບບລະອຽດ, ກໍານົດເຂດແລວທາງ, ທີ່ຕັ້ງສະຖານີລົດໄຟ ແລະ ໄດ້ເລີ່ມລົງມືຈັດຕັ້ງປະຕິບັດແລ້ວ; ໃນການກໍ່ສ້າງທາງລົດໄຟສະຫວັນນະເຂດ-ລາວບາວ (ຊາຍແດນລາວ-ຫວຽດນາມ) ຍາວ 217 ກມ ໄດ້ເຊັນສັນຍາກັບບໍລິສັດຂອງມາເລເຊຍ ເພື່ອສໍາຫຼວດອອກແບບລະອຽດແລ້ວ, ສໍາເລັດການລົງຕິດຕາມ ແລະ ສໍາຫຼວດຄືນການຄຸ້ມຄອງ ແລະ ຮັກສາຫຼັກໝາຍເຂດສະຫງວນແລວທາງ ແລະ ເຂດສະຖານີລົດໄຟແຕ່ນະຄອນຫຼວງວຽງຈັນ-ບໍລິຄໍາໄຊ-ຄໍາມ່ວນ ແລະ ສະຫວັນນະເຂດຍາວ 440 ກມ. ບໍລິມາດການຂົນສົ່ງໂດຍສານທັງພາຍໃນ ແລະ ຕ່າງປະເທດ ໃນປີ 2014 ປະຕິບັດໄດ້ 30.860 ຄົນ ທຽບໃສ່ປີ 2010 ເພີ້ມຂຶ້ນ 1,85% ແລະ ວັດຖຸພັນໃນປີ 2014 ປະຕິບັດໄດ້ 108.010 ພັນໂຕນ.ກມ ທຽບໃສ່ປີ 2010 ເພີ້ມຂຶ້ນ 1,80%.

**ຈ. ການພັດທະນາດ້ານເຄຫາ-ຜັງເມືອງ ແລະ ນໍ້າປະປາ:**

» **ດ້ານເຄຫາ-ຜັງເມືອງ:** ວຽກເຄຫາສະຖານ: ໄດ້ຕິດຕາມການກໍ່ສ້າງໂຄງການລະດັບຊາດ ເປັນຕົ້ນໂຄງການກໍ່ສ້າງດ່ານແກ່ນທ້າວແຂວງໄຊຍະບູລີ, ໂຄງການກໍ່ສ້າງດ່ານພູເກືອແຂວງອັດຕະປື, ໂຄງການກໍ່ສ້າງດ່ານໜອງນົກຂຽນແຂວງຈໍາປາສັກ, ໂຄງການກໍ່ສ້າງ ແລະຕໍ່ເຕີມສໍານັກງານປະທານປະເທດ (ຫໍຄໍາ), ສໍານັກງານອົງການກວດສອບແຫ່ງລັດ ແລະ ອື່ນໆ. ວຽກຜັງເມືອງ: ມາຮອດປະຈຸບັນ ເມືອງທີ່ມີຜັງເມືອງແລ້ວ 146 ຕົວເມືອງໃນທັງໝົດ 148 ເມືອງໃນທົ່ວປະເທດ, ເພີ່ມຂຶ້ນ 21 ຕົວເມືອງຈາກ 125 ຕົວເມືອງໃນປີ 2010 ແລະ ສອງເມືອງທີ່ເຫຼືອ (ເມືອງຮົ່ມ ແລະ ເມືອງລອງແຈ້ງ ກໍາລັງສະເໜີການຮັບຮອງ; ຄຽງຄູ່ກັນນັ້ນ, ກໍ່ໄດ້ເອົາໃຈໃສ່ຊຸກຍູ້ ແລະສົ່ງເສີມການອານຸລັກ ແລະ ພັດທະນາສະຖາປັດຕະຍາກໍາຕົວເມືອງທີ່ເປັນເອກະລັກຂອງຊາດ, ນອກນັ້ນສິ່ງທີ່ພົ້ນເດັ່ນອີກອັນໜຶ່ງແມ່ນການຮື້ຖອນເທີບ ແລະ ຮ້ານຕາມແຄມທາງທີ່ກໍ່ສ້າງບໍ່ໄດ້ມາດຖານ ແລະ ບໍ່ໄດ້ຮັບອະນຸຍາດຢູ່

ນະຄອນຫຼວງວຽງຈັນ. ວຽກພັດທະນາຕົວເມືອງ: ສຳເລັດການສ້າງແຜນຍຸດທະສາດການພັດທະນາຕົວເມືອງ ຮອດປີ 2030 ແລະ ສຳເລັດໂຄງການພັດທະນາຕົວເມືອງນ້ອຍ (ໄດ້ຮັບທຶນຈາກທະນາຄານພັດທະນາອາຊີ (ADB) ມູນຄ່າ 18,5 ລ້ານໂດລາສະຫະລັດ) ຈຳນວນ 12 ຕົວເມືອງ ຄື: ຕົວເມືອງຊຳເໜືອ, ເມືອງແປກ, ເມືອງປາກຊັນ, ເມືອງວັງວຽງ, ເມືອງຜົ້ງສາລີ, ເມືອງນ້ຳທາ, ເມືອງໄຊ, ເມືອງຫ້ວຍຊາຍ, ເມືອງໄຊຍະບູລີ, ເມືອງສາລະວັນ, ເມືອງລະມາມ ແລະ ເມືອງສາມັກຄີໄຊ.

» **ດ້ານນ້ຳປະປາ:** ໄດ້ສຳເລັດການເຈລະຈາເງິນກູ້ ແລະ ເງິນຊ່ວຍເຫຼືອລ້າໂຄງການພັດທະນາຕົວເມືອງຕາມແລວທາງອະນຸພາກພື້ນແມ່ນ້ຳຂອງ, ສຳເລັດການເຊັນສັນຍາທາງການເງິນສຳລັບໂຄງການປັບປຸງສິ່ງແວດລ້ອມຕົວເມືອງປາກເຊ, ສຳເລັດໂຄງການນ້ຳປະປາ ແລະ ສຸຂາພິບານ ພາກເໜືອ-ພາກກາງ, ສຳເລັດໂຄງການນ້ຳປະປາ ແລະ ສຸຂາພິບານຊຸມຊົນມີສ່ວນຮ່ວມ (UN-HABITAT) ໄລຍະ 1 ແລະ ໄລຍະ 2, ໂຄງການນ້ຳປະປາ ແລະ ສຸຂາພິບານຕົວເມືອງນ້ອຍ ກຸ່ມຕົວເມືອງທີ 1 ມີຄວາມຄືບໜ້າຫຼາຍເກືອບ 56,20%, ເລີ່ມຈັດຕັ້ງປະຕິບັດໂຄງການນ້ຳປະປາດົງໝາກຄາຍ ໄລຍະ 2 ແລະ ອື່ນໆ, ຮອດປີ 2015 ສາມາດສະໜອງນ້ຳໃນເຂດຕົວເມືອງໄດ້ 68% ຂອງຈຳນວນປະຊາກອນຜູ້ອາໃສໃນເມືອງໃນຂອບເຂດທົ່ວປະເທດ.

## 5. ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ:

ໄລຍະຜ່ານມາ ວຽກງານໄປສະນີ, ໂທລະຄົມ ແລະ ການສື່ສານ ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວ, ສາມາດຂະຫຍາຍຕາໜ່າງໄປສະນີໄດ້ 128 ເມືອງ ກວມ 88% ຂອງເມືອງທົ່ວປະເທດ, ການບໍລິການໄປສະນີພັນປະຕິບັດໄດ້ 2,26 ລ້ານກິໂລ, ພັດສະດຸໄປສະນີ ປະຕິບັດໄດ້ 2,18 ລ້ານກິໂລ, ນຳໃຊ້ລະຫັດໄປສະນີ 5 ຕົວເລກໃນການກຳນົດເຂດແຈກຢາຍ, ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການບໍລິການໄປສະນີ ເປັນຕົ້ນ ໄດ້ສ້າງລະບົບປ່ອງບໍລິການໄປສະນີແບບອັດຕະໂນມັດ ແລະ ໄດ້ທົດລອງຢູ່ບັນດາຫ້ອງການໄປສະນີພາຍໃນນະຄອນຫຼວງວຽງຈັນ. ສຳເລັດການເພີ່ມເລກໝາຍໂທ ລະສັບມືຖື ຈາກ 7 ຕົວເລກ ເປັນ 8 ຕົວເລກ; ຂະຫຍາຍເຄືອຂ່າຍສາຍສົ່ງດ້ວຍລະບົບສາຍກາບໄຍແສງ ໄດ້ 20.391 ກິ ໂລແມັດ ເທົ່າກັບ 118% ຂອງແຜນການ (ແຜນ 17.192 ກິໂລແມັດ), ລວມທັງໝົດ 60.813 ກິໂລແມັດ ກວມ 18 ແຂວງ 148 ເມືອງ; ມີໂທລະສັບຕັ້ງໂຕະ ແລະ ໂທລະສັບມືຖືທີ່ນຳໃຊ້ຕົວຈິງທັງໝົດ 5,2 ລ້ານເລກໝາຍກວມ 80,8% ຂອງຈຳນວນປະຊາກອນ ລື່ນແຜນການ 0,8% (ແຜນການ: 80%); ໃນນີ້, ໂທລະສັບຕັ້ງໂຕະມີ 920.000 ເລກໝາຍ ແລະ ໂທລະສັບມືຖື ມີ 4,3 ລ້ານເລກໝາຍ. ສັນຍານໂທລະສັບມືຖືຄອບຄຸມໄດ້ 18 ແຂວງ, 148 ເມືອງ ແລະ ໄດ້ຂະຫຍາຍອອກສູ່ຊົນນະບົດ ກວມ 90% ຂອງຈຳນວນບ້ານທົ່ວປະເທດ. ໄດ້ປັບປຸງສູນອິນເຕີເນັດແຫ່ງຊາດ ໃຫ້ສາມາດເປັນບ່ອນເກັບກຳຂໍ້ມູນ ແລະ ທາງຜ່ານຂອງການໃຊ້ໂທລະສັບ ແລະ ອິນເຕີເນັດພາຍໃນ ແລະ ຕ່າງປະເທດ ໂດຍລວມສູນຜ່ານປະຕູດຽວ. ໄດ້ມີການເຊື່ອມຕໍ່ຕ່າງປະເທດຂອງລະບົບເຄືອຂ່າຍອິນເຕີເນັດ ໂດຍໄດ້ເຊົ່າໃຊ້ສັນຍານອິນເຕີເນັດກັບບໍລິສັດ NTT ຂອງຍີ່ປຸ່ນ ເພື່ອເຊື່ອມຕໍ່ສາຍສົ່ງສັນຍານໃຕ້ທະເລອອກສູ່ສາກົນໂດຍກົງ, ນອກຈາກນີ້, ຍັງໄດ້ມີການເຊື່ອມຕໍ່ກັບບໍລິສັດ VDC, ບໍລິສັດ Viettel ສສ ຫວຽດນາມ ແລະ ບໍລິສັດ CAT ປະເທດໄທ.

ສຳເລັດການກໍ່ສ້າງສູນຄຸ້ມຄອງຄື້ນຄວາມຖີ່ວິທະຍຸແຫ່ງຊາດ 1 ແຫ່ງ ຢູ່ນະຄອນຫລວງວຽງຈັນ, ໄດ້ເຊັນສັນຍາສ້າງຕັ້ງບໍລິສັດຮ່ວມທຶນລະຫວ່າງ ກະຊວງໄປສະນີ-ໂທລະຄົມມະນາຄົມ ແລະ ການສື່ສານ ກັບບໍລິສັດອິເລັກໂທນິກລົນໄຮເຊິນຕູ ໃນຕຳແໜ່ງວົງໂຄຈອນ 126 ອົງສາຕາເວັນອອກ. ໄດ້ສຳເລັດການກໍ່ສ້າງດາວທຽມລາວ ຕຳແໜ່ງວົງໂຄຈອນ 128.5 ອົງສາຕາເວັນອອກເປັນໂຄງການເງິນກູ້ 100% ເພື່ອກໍ່ສ້າງດາວທຽມລະບົບວິທະຍຸໂທລະພາບ ແລະ ໂທລະຄົມ ເຊິ່ງເປັນໂຄງການຍຸດທະສາດການຮ່ວມມືລາວ-ຈີນ, ປະຈຸບັນພວມດຳເນີນການກໍ່ສ້າງສະຖານີຮັບສົ່ງສັນຍານພາກພື້ນດິນ ແລະ ກະກຽມສ້າງບຸກຄະລາກອນ ເພື່ອຄຸ້ມຄອງ ແລະ ໃຫ້ບໍລິການດາວທຽມລາວ.

ສຳເລັດການຈັດຕັ້ງປະຕິບັດ ການແປອັງກິດເປັນພາສາລາວໃນລະບົບ CLDR Survey Tool (Common Locate Data Repository) ຈຳນວນ 6.000 ຄຳ ຫຼື ປະໂຫຍກຂອງອົງການ Unicode ເພື່ອນຳໃນເຂົ້າໃນລະບົບຕ່າງໆທັງຄອມພິວເຕີ ແລະ ລະບົບມືຖື, ການລວບລວມຂໍ້ມູນປະມວນຄຳສັບທັງໝົດ 3.814 ປະໂຫຍກ ແລະ ຄຳສັບວັດຈະນາ ນຸກົມອັງກິດ-ລາວ-ອັງກິດ ຈຳນວນ 60.000 ກວ່າຄຳ ແລ້ວສົ່ງໃຫ້ບໍລິສັດ Google ຕາມແຜນການພັດທະນາ ແລະ ສົ່ງເສີມການນຳໃຊ້ພາສາລາວ.

ສຳເລັດການອອກແບບແປ້ນພິມພາສາລາວ ໃນລະບົບມືຖືລຸ້ນຕ່າງ ທັງແບບ ສະມາດໂພນ (Smart phone) ແລະ ປະເພດປຸ່ມກົດ ເຊັ່ນ: ແບກເບີລີ (Black Berry) ແລະ ໂນເກຍ (Nokia) ລຸ້ນຕ່າງໆລວມທັງໝົດໄດ້ 19 ຮູບແບບ. ສຳເລັດການພັດທະນາໂປຼແກຼມວັດຈະນານຸກົມອັງກິດ-ລາວ ແລະ ໂປຼແກຼມປ່ຽນຟ້ອນເປັນເພັດສະລາດແບບອອນລາຍ ເພື່ອໃຫ້ສາມາດແລ່ນໄດ້ໃນລະບົບປະຕິບັດການ Windows Server 2008 64 Bits ແລະ ແບບ 32 bits ຈຳນວນ 60,000 ຄຳ.

## 6. ການເງິນ, ການທະນາຄານ ແລະ ຕະຫຼາດທຶນ

**ກ. ການເງິນ:** ໃນເງື່ອນໄຂສະພາບແວດລ້ອມເສດຖະກິດຂອງໂລກ ແລະ ພາກພື້ນ ມີສິ່ງທ້າທາຍມີຫລາຍດ້ານບໍ່ເອື້ອອຳນວຍຕໍ່ການຈັດຕັ້ງປະຕິບັດນະໂຍບາຍການເງິນ ເປັນຕົ້ນ: ການຂຸດຄົ້ນເກັບລາຍຮັບໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ ແລະ ເກີນຄາດໝາຍທີ່ກຳນົດໄວ້. ສາມາດຕອບສະໜອງຄວາມຕ້ອງການໃຊ້ຈ່າຍຕາມຄວາມຕ້ອງການຂອງລັດຖະບານໄດ້ໃນລະ ດັບທີ່ດີ, ລາຍຈ່າຍງົບປະມານສາມາດຄຸ້ມຄອງໄດ້ຕາມແຜນການທີ່ສະພາແຫ່ງຊາດໄດ້ຮັບຮອງ. ການຂາດດຸນງົບປະມານຍັງຢູ່ໃນລະດັບບໍ່ເກີນ 5% ຢູ່ໃນຂອບເຂດທີ່ກຳນົດໄວ້ (3-5% ຂອງ GDP). ການຊຳລະຫນີ້ຂອງລັດຖະບານໂດຍສະເພາະຫນີ້ຕ່າງປະເທດແມ່ນປະຕິບັດໄດ້ຢ່າງຖືກຕ້ອງຕາມກຳນົດເວລາ ແລະ ສາມາດສ້າງຄວາມເຊື່ອຫມັ້ນໃຫ້ກັບຜູ້ໃຫ້ທຶນຕໍ່ຖານະການເງິນຂອງລັດຖະບານຫຼາຍຂຶ້ນ; ສຳລັບການຊຳລະຫນີ້ສິນພາຍໃນກໍ່ມີຄວາມພະຍາຍາມສູງໃນການປະຕິບັດການຊຳລະດ້ວຍຮູບແບບມີສ່ວນຫຼຸດ ແລະ ການອອກພັນທະບັດ, ໃນນັ້ນຊຳລະແບບມີສ່ວນຫລຸດບັນລຸເຖິງ 5.379 ຕື້ກີບ ເຊິ່ງລັດຖະບານໄດ້ຮັບສ່ວນຫລຸດຈຳນວນ 1.471 ຕື້ກີບ; ຊຳລະດ້ວຍການອອກພັນທະບັດອາຍຸ 2 ປີ ແລະ 3 ປີ ຈຳນວນ 3.872 ຕື້ກີບ, ເປັນການປະກອບສ່ວນອັນສຳຄັນເຂົ້າໃນການຫຼຸດຜ່ອນໜີ້ສິນຂອງລັດຖະບານ ແລະ ເປັນການສ້າງສະພາບຄ່ອງໃຫ້ບັນດາຫົວໜ່ວຍວິສາຫະກິດໄດ້ດີສົມຄວນ.

**ຂ. ການທະນາຄານ:** ທະນາຄານແຫ່ງ ສປປ ລາວ ໄດ້ນຳໃຊ້ນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ເພື່ອເປັນເຄື່ອງມືຕົ້ນຕໍໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດດ້ວຍການກຳນົດອັດຕາແລກປ່ຽນປະຈຳວັນ ເງິນກີບທຽບກັບໂດລາເພື່ອໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເປັນບ່ອນອີງໃນການກຳນົດອັດຕາແລກປ່ຽນຂອງຕົນໃນຂອບເຂດ ບວກ/ລົບ () 0,25%, ດັດສົມຕະຫຼາດເງິນຕາຕ່າງປະເທດ ເພື່ອຮັບປະກັນການ ສະໜອງເງິນຕາຕ່າງປະເທດໃຫ້ພຽງພໍກັບຄວາມຕ້ອງການຂອງສັງຄົມ. ພ້ອມດຽວກັນນັ້ນ, ກໍໄດ້ປັບຫຼຸດອັດຕາດອກເບ້ຍ ພື້ນຖານຂອງທະນາຄານແຫ່ງ ສປປ ລາວ ຈາກ 5% ເປັນ 4,5% ຕໍ່ປີ; ຄຸ້ມຄອງການກຳນົດອັດຕາດອກເບ້ຍເງິນຝາກເງິນກູ້ ຂອງທະນາຄານທຸລະກິດ; ຄວບຄຸມຄຸນນະພາບສິນເຊື່ອ ເພື່ອຮັບປະກັນໜີ້ທີ່ບໍ່ເກີດດອກອອກຜົນ (NPL) ບໍ່ໃຫ້ເກີນ 3% ຂອງການປ່ອຍສິນເຊື່ອທັງໝົດ. ຫຼຸດຜ່ອນ ແລະ ໂຈະການປ່ອຍສິນເຊື່ອ ຂອງທະນາຄານແຫ່ງ ສປປ ລາວ ໃຫ້ແກ່ບັນດາໂຄງການກໍ່ສ້າງພື້ນຖານໂຄງລ່າງ, ໂຄງການໄລຍະຍາວທີ່ມີຜົນຕອບແທນຊ້າ. ໄດ້ປັບປຸງ ກົນໄກ ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ສົ່ງເສີມການນຳໃຊ້ເງິນກີບດ້ວຍຫຼາຍຮູບແບບ ເປັນຕົ້ນ: ຍົກລັດຖະບັນຍັດວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະ ເທດເປັນກົດໝາຍ, ປັບປຸງນິຕິກຳລຸ່ມກົດໝາຍທີ່ຕິດພັນ; ປັບປຸງຄຸນນະພາບ ແລະ ໂຄງປະກອບຂອງໃບເງິນ, ໄດ້ນຳເອົາທະ ນະບັດໃບ 2.000 ກີບໃໝ່ ແລະ 100.000 ກີບໃໝ່ ອອກສູ່ຂອດຈໍລະຈອນ ໃນປີ 2012. ເປີດກວ້າງ ແລະ ຊຸກຍູ້ສົ່ງເສີມການຊຳລະຜ່ານລະບົບທະນາຄານໃຫ້ຫຼາຍຂຶ້ນ.

## 7. ການພັດທະນາເຂດເສດຖະກິດພິເສດ-ເຂດເສດຖະກິດສະເພາະ (ຂພສ)

ລັດຖະບານໄດ້ເອົາໃຈໃສ່ສ້າງນິຕິກຳທີ່ມີລັກສະນະພິເສດ ແລະ ເຂດເສດຖະກິດສະເພາະ ເພື່ອສ້າງພື້ນຖານໃຫ້ແກ່ວຽກງານການພັດທະນາ ຂພສ, ສ້າງພື້ນຖານເຊື່ອມຕໍ່ນອກ ແລະ ໃນເຂດ ເພື່ອອຳນວຍຄວາມສະດວກໃຫ້ແກ່ການລົງທຶນ, ພັດທະນາ ແລະ ສ້າງສິ່ງອຳນວຍຄວາມສະດວກບັນດາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ເພື່ອດຶງດູດການລົງທຶນຂອງຕ່າງປະເທດ. ມາຮອດປະຈຸບັນ ມີເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ທັງໝົດ 13 ເຂດ; ໃນນັ້ນ: ມີເຂດເສດຖະກິດພິເສດ 4 ແຫ່ງ ແລະ ເຂດເສດຖະກິດສະເພາະ 9 ແຫ່ງ. ມີ ຂພສ 7 ແຫ່ງ ແມ່ນໄດ້ຍົກລະດັບຈາກການລົງທຶນສຳປະທານທົ່ວໄປທີ່ລັດຖະບານໄດ້ອະນຸມັດແລ້ວຂຶ້ນເປັນ ຂພສ, ໄດ້ຮັບການສ້າງຕັ້ງພຽງແຕ່ 6 ແຫ່ງ ແມ່ນອະນຸ ມັດສ້າງຕັ້ງໃໝ່ ຄື: ຂພສ ພູຂຽວ, ຂພສ ທ່າແຂກ, ຂພສ ບຶງທາດຫຼວງ, ຂພສ ຈຳປາສັກ, ຂພສ ຫລວງພະບາງ ແລະ ຂພສ ດົງໂພສີ 2.

ຜ່ານການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ໂດຍລວມແລ້ວເຫັນວ່າການພັດທະນາ ແລະ ຄຸ້ມຄອງ ຂພສ ມີຄວາມຄືບໜ້າດີພໍສົມຄວນ ສະແດງອອກມູນຄ່າການລົງທຶນເຂົ້າໃສ່ການພັດທະນາ ຂພສ ໄດ້ເພີ່ມຂຶ້ນ, ໂດຍມີມູນຄ່າລົງທຶນຕາມ ສັນຍາ 5 ຕື້ໂດລາສະຫະລັດ ແລະ ໄດລົງທຶນຕົວຈິງໄປແລ້ວ ຈຳນວນ 1,27 ຕື້ໂດລາສະຫະລັດ ໃນນັ້ນລັດ ຖະບານລົງທຶນ 16.318.350 ໂດລາສະຫະລັດ, ເປັນການລົງທຶນຂອງຜູ້ພັດທະນາ 1.005.210.813 ໂດລາສະຫະລັດ ແລະ ຜູ້ລົງທຶນລາຍຍ່ອຍຈຳນວນ 250.564.515 ໂດລາສະຫະລັດ ມາຮອດປະຈຸບັນມີບໍລິສັດມາລົງທຶນ 249 ບໍລິສັດ,ໃນນັ້ນ: ບໍລິສັດຕ່າງ ປະເທດມີ 180 ບໍລິສັດ, ບໍລິສັດພາຍໃນ 48 ບໍລິສັດ ແລະ ເປັນການລົງທຶນຮ່ວມລະຫວ່າງພາຍໃນກັບຕ່າງປະເທດ 21 ບໍລິ ສັດ. ບໍລິສັດດັ່ງກ່າວໄດ້ລົງທຶນໃນຂະແໜງບໍລິການ 49,37%, ຂະແໜງການຄ້າ 34,60% ແລະ ຂະແໜງອຸດສາຫະກຳ 16,03%; ສາມາດສ້າງວຽກເຮັດງານທຳໄດ້ 15.289 ຄົນ; ໃນນັ້ນແຮງງານລາວ 6.769 ຄົນ. ສົ່ງອອກສິນຄ້າມູນຄ່າ 42.855.955 ໂດລາສະຫະລັດ, ນຳເຂົ້າສິນຄ້າ 196.495.557 ໂດລາສະຫະລັດ ສາມາດປະຕິບັດພັນທະຕາມສັນຍາສຳປະ ທານໄດ້ຈຳນວນ 12.237.296 ໂດລາສະຫະລັດ ໃນນັ້ນ: ຄ່າສຳປະທານທີ່ດິນ 3,32 ລ້ານ

ໂດລາສະຫະລັດ, ອາກອນເງິນ ເດືອນ 1,13 ລ້ານໂດລາສະຫະລັດ, ອາກອນກຳໄລ 48.006 ໂດລາສະຫະລັດ, ອາກອນມູນຄ່າເພີ່ມ 898.659 ໂດລາສະຫະ ລັດ, ຄ່າທຳນຽມ ແລະ ຄ່າບໍລິການ 7.677 ໂດລາສະຫະລັດ ແລະ ມອບເງິນປັນຜົນຈາກການຖືຮຸ້ນໃຫ້ແກ່ລັດຖະບານຈຳນວນ 6.300.000 ໂດລາສະຫະລັດ. ລາຍລະອຽດຂອງແຕ່ລະເຂດມີດັ່ງນີ້:

1) **ເຂດເສດຖະກິດພິເສດສະຫວັນ-ເຊໂນ (ຂສສຊ):** ໄດ້ລົງທຶນພັດທະນາພື້ນຖານໂຄງລ່າງພາຍໃນເຂດ ທັງໝົດ 68,13 ລ້ານໂດລາສະຫະລັດ; ໃນນັ້ນ: ການລົງທຶນຂອງລັດຖະບານ 4,15 ລ້ານໂດລາສະຫະລັດ, ການລົງທຶນຂອງຜູ້ພັດທະນາ 11,17 ລ້ານໂດລາສະຫະລັດ ແລະ ການລົງທຶນຂອງຜູ້ລົງທຶນລາຍຍ່ອຍ 52,81 ລ້ານໂດລາສະຫະລັດ. ດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 66 ບໍລິສັດ, ທຽບໃສ່ 5 ປີ ຜ່ານມາເພີ່ມຂຶ້ນ 58 ບໍລິສັດ (ເປັນການລົງທຶນພາຍໃນ 21 ບໍລິສັດ, ຕ່າງປະເທດ 36 ບໍລິສັດ ແລະ ພາຍໃນຮ່ວມກັບຕ່າງປະເທດ 9 ບໍລິສັດ), ໃນນັ້ນ ສາມາດຂົນຂວາຍເອົາບໍລິສັດຊັ້ນນຳຈາກຕ່າງປະເທດເຂົ້າມາລົງທຶນໄດ້ຫຼາຍສົມຄວນເປັນຕົ້ນ: ບໍລິສັດ ນິຄອນ, ບໍລິສັດໂຕໂຢຕາ, ບໍລິສັດ URAI PAINT LAO ຜະລິດນໍ້າສີເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກ, ບໍລິສັດແອໂຣເວີກ ຜະລິດຊິ້ນສ່ວນປະກອບເຄື່ອງບິນ. ການລົງທຶນໄດ້ສຸມໃສ່ຂະແໜງອຸດສາຫະກຳກວມ 29%, ການຄ້າກວມ 11%, ການບໍລິການກວມ 60% ຂອງການລົງທຶນທັງໝົດ; ສ້າງວຽກໄດ້ທັງໝົດ 3.215 ຄົນ, ໃນນັ້ນ: ແຮງງານລາວ 3.110 ຄົນ ແລະ ຕ່າງປະເທດ 105 ຄົນ; ປະຕິບັດພັນທະອາກອນເງິນເດືອນຈາກແຮງງານພາຍໃນ ແລະ ຕ່າງປະເທດໄດ້ 952.111 ໂດລາສະຫະລັດ, ອາກອນມູນຄ່າເພີ່ມໄດ້ 253.634 ໂດລາສະຫະລັດ, ອາກອນກຳໄລ 47.162 ໂດລາສະຫະລັດ, ຈັດເກັບຄ່າທຳນຽມຕ່າງໆໄດ້ 35.148 ໂດລາສະຫະລັດ. ສາມາດສົ່ງອອກສິນຄ້າ ມູນຄ່າ 14,55 ລ້ານໂດລາສະຫະລັດ ແລະ ນຳເຂົ້າສິນຄ້າ ມູນຄ່າ 45,05 ລ້ານໂດລາສະຫະລັດ.

2) **ເຂດເສດຖະກິດພິເສດສາມຫຼ່ຽມຄຳ (ຂສພຄ):**

ຂສພຄ ໄດ້ສ້າງຕັ້ງຂຶ້ນໃນປີ 2007 ຢູ່ແຂວງບໍ່ແກ້ວ ເຊິ່ງເປັນໂຄງການໄດ້ພັດທະນາຈາກແຫຼ່ງທ່ອງທ່ຽວຄົບວົງຈອນອາຊຽນດ້ວຍມູນຄ່າການລົງທຶນທັງໝົດ 1 ຕື້ໂດລາສະຫະລັດ, ມີເນື້ອທີ່ 3.000 ເຮັກຕາ ເປົ້າໝາຍເລັ່ງໃສ່ການທ່ອງທ່ຽວ, ການຄ້າ ແລະ ການບໍລິການ.

ໃນໄລຍະ 5 ປີຜ່ານມາ ໄດ້ສຸມໃສ່ການພັດທະນາເຂດດ້ວຍການລົງທຶນຕົວຈິງທັງໝົດ 658,29 ລ້ານໂດລາສະຫະ ລັດ (ເປັນການລົງທຶນຂອງລັດຖະບານ 1,06 ລ້ານໂດລາສະຫະລັດ ແລະ ຜູ້ພັດທະນາ 657,23 ລ້ານໂດລາສະຫະລັດ), ດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 59 ບໍລິສັດ ທຽບໃສ່ 5 ປີ ຜ່ານມາເພີ່ມຂຶ້ນ 52 ບໍລິສັດ; ໃນນັ້ນ, ຂະແໜງອຸດສາຫະກຳກວມ 3,57%, ການຄ້າກວມ 46,43%,ການບໍລິການກວມ 50% ຂອງການລົງທຶນທັງໝົດ, ມີຜູ້ປະກອບການລາຍຍ່ອຍ ເຂົ້າມາດຳເນີນທຸລະກິດໃນຂະແໜງການຄ້າ ແລະ ການບໍລິການຈຳນວນ 235 ຫົວໜ່ວຍທຸລະກິດ, ສາມາດສ້າງວຽກເຮັດງານທຳໄດ້ທັງໝົດ 7.674 ຄົນ; ໃນນັ້ນ, ແຮງງານລາວ 338 ຄົນ ແລະ ຕ່າງປະເທດ 7.336 ຄົນ (ການ ນຳໃຊ້ແຮງງານຕ່າງດ້າວກໍ່ຍ້ອນວ່າຍັງຢູ່ໃນໄລຍະການສ້າງພື້ນຖານໂຄ່ງລ່າງ ແລະ ບາງຂະແໜງການ ກໍ່ມີຄວາມຈຳເປັນນຳໃຊ້ແຮງງານທີ່ມີສີມື); ໄດ້ມອບພັນທະເຂົ້າງົບປະມານລັດ ຈຳນວນ 6.941.614 ໂດລາສະຫະລັດ; ໃນນັ້ນ ມີອາກອນມອບ ເໝົາຈາກກິດຈະການຄາຊີໂນ ແລະ ການສະແດງອື່ນໆ ຈຳນວນ 6.300.000 ໂດລາສະຫະລັດ, ອາກອນເງິນເດືອນແຮງ ງານພາຍໃນ ແລະ ຕ່າງປະເທດ ຈຳນວນ 53.311 ໂດລາສະຫະລັດ, ອາກອນມູນຄ່າເພີ່ມຈຳນວນ 588.303 ໂດລາສະຫະ ລັດ. ນຳເຂົ້າສິນຄ້າມູນຄ່າ 3,03 ລ້ານໂດລາສະຫະລັດ. ໄດ້ສຳເລັດການກໍ່ສ້າງເສັ້ນທາງເບຕົງນໍ້າເກິ່ງ-ບ້ານມອມຄວາມຍາວ 46 ກມ; ການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນຍາວ 6,4 ກມ; ການຈັດສັນ ແລະ ກໍ່ສ້າງບ້ານຄວ້ານໃໝ່; ການກໍ່ສ້າງຄຸ້ມວັດທະ ນະທຳຈີນ; ຂະຫຍາຍທ່າເຮືອຂົນສົ່ງຂອງເຂດເພື່ອຮອງຮັບບ່ອນຈອດເຮືອຂອງກຸ່ມບໍລິສັດເຮືອຂ້າມ ແລະ ເຮືອສິນຄ້າ; ໄດ້ສຳເລັດການຊົດເຊີຍເນື້ອທີ່ດິນໃຫ້ແກ່ປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງສະໜາມບິນສາກົນສາມ ຫຼ່ຽມຄຳ; ໄດ້ສ້າງໂຄງການທີ່ມີສ່ວນຮ່ວມກັບປະຊາຊົນໂດຍໄດ້ຈັດຕັ້ງກຸ່ມບໍລິການລົດສາມລໍ້ຕຸກໆ, ກຸ່ມບໍລິການເຮືອ, ກຸ່ມປູກຜັກປອດສານພິດເຊິ່ງມີປະຊາຊົນເຂົ້າຮ່ວມ 114 ຄອບຄົວ.

3) **ເຂດເສດຖະກິດສະເພາະບໍ່ເຕັນແດນງາມ (ຂສບ):** ໄດ້ມີການຫັນທິດການພັດທະນາໃໝ່ໂດຍສຸມໃສ່ຂະແໜງການທ່ອງທ່ຽວເປັນຫຼັກ, ເຂດການຄ້າປອດພາສີ, ສາງພັກສິນຄ້າ ແລະ ອື່ນໆ ເຊິ່ງຜ່ານມາໄດ້ລົງທຶນຕົວຈິງເຂົ້າໃສ່ການພັດທະນພື້ນຖານໂຄງລ່າງທັງໝົດ 47,18 ລ້ານໂດລາສະຫະລັດ, ເປັນການລົງທຶນຂອງຜູ້ພັດທະນາ ໂດຍການກໍ່ສ້າງອາ ຄານຫ້ອງການ ແລະ ທີ່ຢູ່ຂອງເຈົ້າໜ້າທີ່; ສ້າງຮ້ານຄ້າປອດພາສີ ໃນເນື້ອທີ່ 13.000 ຕາແມັດ ສຳເລັດແລ້ວ 60%, ໄດ້ສຳເລັດການກໍ່ສ້າງປໍ້ານໍ້າມັນ ແລະ ເປີດໃຫ້ບໍລິການແລ້ວ; ໄດ້ສຳເລັດການກໍ່ສ້າງອ່າງເກັບນໍ້າ (ຢູ່ຈຸດ 3) ມີເນື້ອທີ່ 23,5 ເຮັກຕາ; ນອກຈາກນີ້, ຂສບ ກໍ່ຍັງໄດ້ຄົ້ນຄວ້າສ້າງເປັນເຂດຮ່ວມມືເສດຖະກິດຊາຍແດນບໍ່ເຕັນ ສປປ ລາວ-ບໍ່ຫານ ສປ ຈີນ ເພື່ອສົ່ງເສີມທ່າແຮງບົ່ມຊ້ອນຂອງແຂວງຫຼວງນໍ້າທາ ແລະ ແຂວງຢູນນານ ເຂົ້າໃນການພັດທະນາເສດຖະກິດ. ດຶງດູດການລົງ ທຶນຈາກຕ່າງປະເທດ ໄດ້ທັງໝົດ 22 ບໍລິສັດ; ໃນນັ້ນ,

ຂະແໜງອຸດສາຫະກຳ ກວມ 6,66%, ການຄ້າ ກວມ 66,67%, ການບໍລິການ ກວມ 26,67%. ສາມາດສ້າງວຽກເຮັດງານທຳໄດ້ທັງໝົດ 475 ຄົນ; ສາມາດປະຕິບັດພັນທະອາກອນເງິນເດືອນໄດ້ 12.346 ໂດລາສະຫະລັດ.

4) **ນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນ-ໂນນທອງ (ນອຄວ)**: ໄດ້ເລີ່ມສ້າງຕັ້ງໃນປີ 2009 ເຊິ່ງເປັນການຮ່ວມມືລະຫວ່າງລັດຖະບານ ສປປ ລາວ ຕາງໜ້າໂດຍ ກະຊວງ ອຸດສາຫະກຳ ແລະ ການຄ້າ ຖືຮຸ້ນ 30% (ເອົາດິນເປັນຮຸ້ນ) ແລະ ບໍລິສັດໜຳເອພັດທະນາຈຳກັດ (ຈີນໄຕ້ຫວັນ) ຖືຮຸ້ນ 70%, ເຊິ່ງມີມູນຄ່າການລົງທຶນໝົດ 43 ລ້ານໂດລາສະຫະລັດ, ມີເນື້ອທີ່ທັງໝົດ 110 ເຮັກຕາ, ເປົ້າໝາຍຕົ້ນຕໍໃນການພັດທະນາເປັນເຂດອຸດສາຫະກຳ ແລະ ການຄ້າ. ການພັດທະນາພື້ນຖານໂຄງລ່າງ ສຳເລັດປະມານ 60% ຂອງເນື້ອທີ່ທັງໝົດ, ສຳເລັດວຽກງານການຈັດສັນເວນຄືນທີ່ດິນໃຫ້ປະ ຊາຊົນ, ກໍ່ສ້າງຄອງລະບາຍນ້ຳທຳມະຊາດ ແລະ ລ້ອມຮົ້ວອ້ອມຂອບເຂດຂອງນິຄົມ. ການລົງທຶນຕົວຈິງທັງໝົດ 91,62 ລ້ານໂດລາສະຫະລັດ ໃນນັ້ນ, ເປັນການລົງທຶນຂອງຜູ້ພັດທະນາ 13,26 ລ້ານໂດລາສະຫະລັດ; ເປັນການລົງທຶນຂອງຜູ້ລົງທຶນລາຍຍ່ອຍ 78,36 ລ້ານໂດລາ ສະຫະລັດ; ດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ໄດ້ 33 ບໍລິສັດ, ໃນນັ້ນ ການລົງທຶນພາຍໃນ 3 ບໍລິສັດ, ຕ່າງປະເທດ 29 ບໍລິສັດ ແລະ ພາຍໃນຮ່ວມກັບຕ່າງປະເທດ 1 ບໍລິສັດ. ການລົງທຶນໃນຂະແໜງອຸດສາຫະກຳກວມ 46,43%, ການຄ້າກວມ 28,57% ແລະ ການບໍລິການກວມ 25% ຂອງການລົງທຶນທັງໝົດ. ສາມາດສ້າງວຽກເຮັດງານທຳໄດ້ທັງໝົດ 1.173 ຄົນ, ໃນນັ້ນ ແຮງງານລາວ 1.116 ຄົນ; ມອບພັນທະເຂົ້າງົບປະມານ ທັງໝົດ 561.690 ໂດລາສະຫະລັດ, ສາມາດປະຕິບັດພັນທະອາກອນເງິນເດືອນຈາກແຮງງານພາຍໃນ ແລະ ຕ່າງປະເທດ ໄດ້ຈຳນວນ 191.367 ໂດລາສະຫະລັດ; ສາມາດສົ່ງອອກສິນຄ້າມູນຄ່າ 25,98 ລ້ານໂດລາສະຫະລັດ ແລະ ນຳເຂົ້າສິນຄ້າມູນຄ່າ 47,26 ລ້ານໂດລາສະຫະລັດ; ມອບເງິນປັນຜົນຈາກການຮ່ວມຮຸ້ນໃຫ້ລັດຖະບານ 542.774 ໂດລາສະຫະລັດ.

5) **ເຂດເສດຖະກິດສະເພາະພູຂຽວ (ຂພຂ)**: ໄດ້ຕັ້ງໜ້າການພັດທະນາເຂດ ເຊິ່ງມີມູນຄ່າການລົງທຶນຕົວຈິງ ທັງໝົດ 16,0 2 ລ້ານໂດລ າສະ ຫະລັດ; ໃນນັ້ນ, ການລົງທຶນຂອງຜູ້ພັດທະນາ 11,02 ລ້ານໂດລາສະຫະລັດ ແລະ ການລົງທຶນຂອງຜູ້ລົງທຶນລາຍຍ່ອຍ 5 ລ້ານໂດລາສະຫະລັດ; ສາມາດດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 16 ບໍລິສັດ (ພາຍໃນ 4 ບໍລິສັດ, ຕ່າງປະເທດ 7 ບໍລິສັດ ແລະ ພາຍໃນຮ່ວມກັບຕ່າງປະເທດ 5 ບໍລິສັດ). ສາມາດສ້າງແຮງງານໄດ້ທັງໝົດ 72 ຄົນ, ໃນນັ້ນແມ່ນແຮງງານລາວ 60 ຄົນ; ໄດ້ສືບຕໍ່ປະສານກັບສະຖາບັນອອກແບບຕົວເມືອງເສດຖະ ກິດ ສປ ຈີນ ເພື່ອຊ່ວຍດັດແກ້ແບບແຜນຜັງເມືອງ ແລະ ໄດ້ຊົດເຊີຍເວນຄືນທີ່ດິນ ຊຶ່ງມີມູນຄ່າ 3,6 ຕື້ກີບ, ກໍ່ສ້າງເສັ້ນທາງມູນຄ່າ 2,4 ຕື້ກີບ ແລະໄດ້ບຸກເບີກເສັ້ນທາງຮອບນອກ.

6) **ເຂດພັດທະນາກອມລອມໄຊເຊດຖາ (ຂພຊ)**: ໄດ້ສຸມໃສ່ພັດທະນາພື້ນຖານໂຄງລ່າງ ເຊິ່ງປະຈຸບັນໄດ້ສຳເລັດການກໍ່ສ້າງເສັ້ນທາງເຂົ້າຫາເຂດ ແລະ ກໍ່ສ້າງຫ້ອງການ, ໄດ້ຊົດເຊີຍເວນຄືນທີ່ດິນໃຫ້ແກ່ປະຊາຊົນ ເຊິ່ງປະຕິບັດໄດ້ ລວມເປັນເງິນ 34 ຕື້ກີບ. ສາມາດດຶງດູດການລົງທຶນໄດ້ທັງໝົດ 83,25 ລ້ານໂດລາສະຫະລັດ; ໃນນັ້ນ, ການລົງທຶນຂອງລັດຖະບານ 9,94 ລ້ານ ໂດລາສະຫະລັດ, ຜູ້ພັດທະນາ 36,94 ລ້ານໂດລາສະຫະລັດ ແລະ ຜູ້ລົງທຶນລາຍຍ່ອຍ 36,37 ລ້ານໂດລາສະຫະ ລັດ; ສາມາດດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 9 ບໍລິສັດ (ພາຍໃນ 2 ບໍລິສັດ, ຕ່າງປະເທດ 5 ບໍ ລິສັດ ແລະ ພາຍໃນຮ່ວມກັບຕ່າງປະເທດ 2 ບໍລິສັດ); ພ້ອມດຽວກັນນັ້ນ, ກໍ່ສາມາດສ້າງແຮງງານໄດ້ທັງໝົດ 214 ຄົນ; ໃນນັ້ນແຮງງານລາວ 82 ຄົນ. ມອບພັນທະອາກອນເຂົ້າງົບປະມານລັດທັງໝົດ 85.970 ໂດລາສະຫະລັດປະຕິບັດພັນທະອາກອນເງິນເດືອນໄດ້ 26.897 ໂດລາສະຫະລັດ, ມອບອາກອນມູນຄ່າເພີ່ມ 56.092 ໂດລາສະຫະລັດ, ຈັດເກັບຄ່າທຳນຽມ ແລະ ຄ່າອາກອນຕ່າງໆໄດ້ 2.981 ໂດລາສະຫະລັດ; ນຳເຂົ້າສິນຄ້າ ມູນຄ່າ 65,80 ລ້ານໂດລາສະຫະລັດ.

7) **ເຂດເສດຖະກິດສະເພາະບຶງທາດຫຼວງ (ຂສທ)**: ເລີ່ມພັດທະນາໃນປີ 2011 ຢູ່ນະຄອນຫຼວງວຽງຈັນ, ເນື້ອທີ່ 365 ເຮັກຕາ, ໂດຍມີຈຸດປະສົງເລັ່ງໃສ່ອຸດສາຫະກຳ, ການຄ້າ ແລະ ການບໍລິການ ໃນໄລຍະ 5 ປີຜ່ານມາ ໄດ້ສຸມທຶນໃນການພັດທະນາທັງໝົດ 134,27 ລ້ານໂດລາສະຫະລັດ; ໃນນັ້ນ, ທຶນຂອງຜູ້ພັດທະນາ 76,85 ລ້ານໂດລາ; ທຶນຂອງຜູ້ລົງທຶນລາຍຍ່ອຍປະມານ 57,42 ລ້ານໂດລາ; ສາມາດດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດໄດ້ທັງໝົດ 11 ບໍລິສັດ, ເປັນການລົງທຶນພາຍໃນ 2 ບໍລິສັດ, ຕ່າງປະເທດ 9 ບໍລິສັດ. ເພື່ອສຸມໃສ່ວຽກງານຊົດເຊີຍເວນຄືນທີ່ດິນໂດຍສາມາດຊົດເຊີຍໄດ້ 375 ຕອນ ໃນຈຳນວນທັງໝົດ 485 ຕອນ ມີມູນຄ່າ 74,66 ຕື້ກີບ ຫຼື ປະມານ 9,33 ລ້ານໂດລາ, ໄດ້ສຳເລັດການກໍ່ສ້າງເສັ້ນທາງເຊື່ອມຕໍ່ຈາກເສັ້ນທາງ T4 ແຕ່ສາມແຍກໄຟແດງໂພນທັນເຂົ້າຫາເຂດ; ໄດ້ສຳຫຼວດ-ອອກແບບ ແລະ ກໍ່ສ້າງເສັ້ນທາງຮອດຂອບເຂດບ້ານໂນນຫວາຍ; ໄດ້ສຳເລັດການຂຸດໜອງນ້ຳໃຫຍ່; ສຳເລັດການກໍ່ສ້າງຫ້ອງການ, ຫໍພັກພະນັກງານ; ໄດ້ສຳເລັດການກໍ່ສ້າງຄອງນ້ຳອ້ອມເຂດແທນຮົ້ວ ມີຄວາມຍາວ ປະມານ 8.000 ແມັດ; ໄດ້ສຳເລັດການກໍ່ສ້າງເສັ້ນທາງເລກ 2 ອ້ອມແຄມໜອງໃຫຍ່ ມີຄວາມຍາວ 2.400 ແມັດ; ໄດ້ສຳເລັດການກໍ່ສ້າງເສັ້ນທາງເລກ 5, ເລກ 8 ແລະ ເລກ 9. ໄດ້ເລີ່ມດຳເນີນໂຄງການກໍ່ສ້າງຕຶກຄອນໂດມິນຽມສູງ 18 ຊັ້ນ ຈຳນວນ 12 ຫຼັງ ມູນຄ່າລວມທັງໝົດ 174 ລ້ານໂດລາສະຫະລັດ ນັບຕັ້ງແຕ່ຕົ້ນເດືອນເມສາ ປະຕິບັດໄດ້ 57,42 ລ້ານໂດລາສະຫະລັດ

ທຽບໃສ່ແຜນການລວມສຳເລັດແລ້ວປະມານ 33%; ສາມາດສ້າງແຮງງານໄດ້ທັງໝົດ 639 ຄົນ, ຊຶ່ງແມ່ນແຮງງານລາວ 215 ຄົນ ແລະ ຕ່າງປະເທດ 424 ຄົນ, ໄດ້ມອບອາກອນເງິນເດືອນມູນຄ່າ 54.868 ໂດລາສະຫະລັດ, ຄ່າທຳນຽມ 6.313 ໂດລາສະຫະລັດ ແລະ ໄດ້ນຳເຂົ້າສິນຄ້າ ມູນຄ່າປະມານ 7,83 ໂດລາສະຫະລັດ.

8) **ເຂດເສດຖະກິດສະເພາະດົງໂພສີ (ຂສສດ)**: ໄດ້ສຸມທຶນໃສ່ການພັດທະນາເຂດມີມູນຄ່າການລົງທຶນທັງໝົດ 10 ລ້ານໂດລາສະຫະລັດ ເປັນການລົງທຶນຂອງຜູ້ພັດທະນາ 8,11 ລ້ານໂດລາສະຫະລັດ ແລະ ຜູ້ລົງທຶນລາຍຍ່ອຍ 1,89 ລ້ານໂດລາສະຫາລັດ ເປັນຕົ້ນ ໄດ້ຊົດເຊີຍໃຫ້ແກ່ປະຊາຊົນໃນພື້ນທີ່ໂຄງການ 73 ຄອບຄົວ ຈຳນວນ 7.525ລ້ານກີບ; ຊຳລະຄ່າສຳປະທານທີ່ດິນໄດ້ 152.977 ໂດລາສະຫະລັດ, ໄດ້ແກ້ໄຂບັນຫາເນື້ອທີ່ດິນຂອງປະຊາຊົນບໍລິເວນທາງເຂົ້າ ໝາຍເລກ 1, ເລກ 2 ແລະ ເລກ 3 ຂອງ ຂສສດ ໄດ້ 2 ກໍລະນີ ຈາກທັງໝົດ 4 ກໍລະນີ ຈຳນວນ 27,63 ລ້ານກີບ; ໄດ້ສຳເລັດການປັກຫຼັກໝາຍເຂດແດນ ແລະ ການກວດຄືນເຂດແດນຂອງດິນລັດທີ່ໄດ້ອະນຸຍາດໃຫ້ບໍລິສັດ UPL ລາວ ຈຳ ນວນ 513.583 ຕາແມັດ. ພ້ອມດຽວກັນ, ການຖົມດິນພາຍໃນເຂດສຳເລັດແລ້ວ 95% ແລະ ຄາດວ່າຈະສຳເລັດ 100% ໃນໄວໆນີ້; ສຳເລັດການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ໄດ້ຮັບໃບຢັ້ງຢືນຈາກກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ສຳເລັດການດັດແກ້ແຜນແມ່ບົດຂອງໂຄງການ ແລະ ກຳລັງລໍຖ້າທິດຊີ້ນຳຈາກຂັ້ນເທິງ; ໄດ້ ໂຄສະນາ ແລະ ດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ ລວມເປັນມູນຄ່າ 571.570 ໂດລາສະຫະລັດ; ສາມາດສ້າງແຮງງານໄດ້ທັງໝົດ 46 ຄົນ, ໃນນັ້ນ ແຮງງານລາວ 30 ຄົນ, ມອບພັນທະອາກອນເຂົ້າງົບປະມານລັດທັງໝົດ 219.823 ໂດລາສະຫະລັດ. ໃນນັ້ນ, ຄ່າສຳປະທານທີ່ດິນ 205.416 ໂດລາສະຫະລັດ, ອາກອນເງິນເດືອນຈາກແຮງງານພາຍໃນ ແລະ ຕ່າງປະເທດໄດ້ຈຳນວນ 14.407 ໂດລາສະຫະລັດ; ນຳເຂົ້າສິນຄ້າ ມູນຄ່າ 92.955 ໂດລາສະຫະລັດ; ໄດ້ມອບເງິນຊຸກຍູ້ຊ່ວຍເຫຼືອສັງຄົມ ມູນຄ່າ 1,05 ລ້ານໂດລາສະຫະລັດ.

9) **ເຂດເສດຖະກິດສະເພາະລອງແທງ-ວຽງຈັນ**: ໄດ້ລົງທຶນໃນການພັດທະນາ ມີມູນຄ່າການລົງທຶນທັງໝົດ 125,05 ລ້ານໂດລາສະຫະລັດ; ໃນນັ້ນ, ທຶນຂອງຜູ້ພັດທະນາ 123,90 ລ້ານໂດລາສະຫະລັດ ແລະ ທຶນຂອງບໍລິສັດລາຍຍ່ອຍ 1,15 ລ້ານໂດລາສະຫາລັດ; ສາມາດດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 4 ບໍລິສັດ, ໃນນັ້ນ ເປັນການລົງທຶນພາຍໃນ 1 ບໍລິສັດ ແລະ ຕ່າງປະເທດ 3 ບໍລິສັດ. ສາມາດສ້າງແຮງງານໄດ້ທັງໝົດ 588 ຄົນ, ໃນນັ້ນ ແຮງງານລາວ 545 ຄົນ; ມອບພັນທະອາກອນເຂົ້າງົບປະມານລັດທັງໝົດ 1.444.948 ໂດລາສະຫະລັດ ໃນນັ້ນ, ຄ່າສຳປະທານທີ່ດິນໄດ້ 1,11 ລ້ານໂດລາສະຫະລັດ, ອາກອນຊົມໃຊ້ 155.383 ໂດລາສະຫະລັດ ແລະ ອາກອນເງິນເດືອນຈາກແຮງງານພາຍໃນ ແລະ ຕ່າງປະເທດ ໄດ້ຈຳນວນ 175.564 ໂດລາສະຫະລັດ, ໄດ້ສຳເລັດ ແລະ ເປີດການນຳໃຊ້ສະໜາມກ໊ອບ ແລະ ກຳລັງຂະຫຍາຍຕື່ມ, ກໍ່ສ້າງເດີ່ນເທັນນິດຈຳນວນ 4 ແຫ່ງ, ເດີ່ນດອກປີກໄກ່ 4 ແຫ່ງ, ສະລອຍນໍ້າ ແລະ ກໍ່ສ້າງເຮືອນວິນລາ ຈຳນວນ 3 ຫຼັງ; ໄດ້ສຳເລັດການກໍ່ສ້າງສະຖານທີ່ຈອດລົດ, ກໍ່ສ້າງເຮືອນພັກ, ສະໂມສອນ, ສູນບໍລິການ, ກໍ່ ສ້າງຖະໜົນຫົນທາງ, ລະບົບໄຟຟ້ານໍ້າປະປາ; ໄດ້ຊົດເຊີຍທີ່ດິນໃຫ້ປະຊາຊົນໄດ້ 468 ເຮັກຕາ, ມູນຄ່າ 1,40 ລ້ານໂດລາ, ໄດ້ຈັດສັນເວນຄືນທີ່ດິນໃຫ້ແກ່ປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການແລ້ວ 275 ຄອບຄົວ.

10) **ເຂດເສດຖະກິດສະເພາະທ່າແຂກ (ຂທຂ)**: ໄດ້ສຳເລັດຮ່າງລະບຽບການຄຸ້ມຄອງ ແລະ ນະໂຍບາຍສົ່ງເສີມການລົງທຶນຂອງ ຂທຂ ແລະ ໄດ້ສ້າງຮ່າງລະບຽບການຄຸ້ມຄອງຄົນເຂົ້າ-ອອກເມືອງ ແລະ ລະບຽບການອື່ນໆ; ໄດ້ຊົດເຊີຍເວນຄືນທີ່ດິນໄດ້ 215 ຕອນ ມູນຄ່າປະມານ 8,14 ຕື້ກວ່າກີບ ເທົ່າກັບ 32% ຂອງແຜນການ; ສຳເລັດການສ້າງອາຄານຫ້ອງການສະພາບໍລິຫານເຂດ. ມີມູນຄ່າການລົງທຶນຕົວຈິງທັງໝົດ 35,26 ລ້ານໂດລາສະຫາລັດ; ໃນນັ້ນ, ທຶນຂອງລັດຖະບານ 1,17 ໂດລາສະຫະລັດ, ທຶນຂອງຜູ້ພັດທະນາ 18,74 ລ້ານໂດລາສະຫາລັດ ແລະທຶນຂອງຜູ້ພັດທະນາຍ່ອຍ 15.35 ໂດລາ. ສາມາດດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 19 ບໍລິສັດ, ໃນນັ້ນ ຂະແໜງອຸດສາຫະກຳ 23,53%, ການຄ້າ 23,53% ແລະ ການບໍລິການ 52,94%. ສາມາດສ້າງແຮງງານໄດ້ທັງໝົດ 64 ຄົນ, ໃນນັ້ນ ແຮງງານລາວ 35 ຄົນ; ໄດ້ນຳເຂົ້າສິນຄ້າມູນຄ່າ 2,34 ລ້ານໂດລາສະຫະລັດ.

11) **ເຂດເສດຖະກິດພິເສດຈຳປາສັກ:** ເປັນເຂດເສດຖະກິດພິເສດໃໝ່ທີ່ໄດ້ຮັບການອະນຸມັດສ້າງຕັ້ງຂຶ້ນ ໃນເດືອນສິງຫາ ປີ 2015 ໂດຍມີເນື້ອທີ່ທັງໝົດ 995 ເຮັກຕາ, ອາຍຸສຳປະທານ 50 ປີ ແລະ ທຶນທັງໝົດ 162,50 ລ້ານໂດລາສະຫະລັດ ເຊິ່ງມີເປົ້າໝາຍສ້າງເປັນເຂດອຸດສາຫະກຳ ແລະ ການບໍລິການ ໂດຍໃນໄລຍະເບື້ອງຕົ້ນ ແບ່ງອອກເປັນ 2 ຈຸດ ຄື: ເຂດນິຄົມອຸດສາຫະກຳ ປາກເຊ-ຍີ່ປຸ່ນ SME (11A) ແລະ ເຂດນິຄົມອຸດສາຫະກຳຈຳປາສັກ ລາວ-ບໍລິການ (11B). ຜ່ານການຈັດຕັ້ງປະຕິບັດໃນໄລຍະຜ່ານມາ ໄດ້ສຸມໃສ່ຊັບຊ້ອນ ແລະ ປັບປຸງໂຄງຮ່າງການຈັດຕັ້ງຂອງສະພາບໍລິຫານເຂດໃຫ້ສອດຄ່ອງຕາມລະບົບກົນໄກຫົວໜ່ວຍບໍລິຫານນ້ອຍສັງຄົມກວ້າງ ແລະ ອອກໃບທະບຽນວິສາຫະກິດ ໃຫ້ຈຳນວນ 6 ບໍລິສັດ ມາຂຶ້ນກັບສະພາບໍລິຫານເຂດ ເຊິ່ງໃນເມື່ອກ່ອນເປັນບໍລິສັດທີ່ລົງທຶນໃນຮູບແບບທົ່ວໄປ; ໄດ້ສຸມໃສ່ຊຸກຍູ້ໃຫ້ຜູ້ພັດທະນາ ແຕ່ລະຈຸດເອົາໃຈໃສ່ຕັ້ງໜ້າປະຕິບັດສັນຍາສຳປະທານ ແລະ ແຜນແມ່ບົດທີ່ກຳນົດໄວ້.

12) **ເຂດເສດຖະກິດພິເສດຫລວງພະບາງ**: ໄດ້ຮັບການສ້າງຕັ້ງຂຶ້ນ ໃນເດືອນ ມັງກອນ ປີ 2016 ມີເນື້ອທີ່ ທັງໝົດ 4.850 ເຮັກຕາ, ໄລຍະສຳປະທານ 99 ປີ ຕັ້ງຢູ່ເມືອງຈອມເພັດ ແລະ ເມືອງຫລວງພະບາງ, ປະຈຸບັນສຳເລັດ ການເຊັນສັນຍາສ້າງຕັ້ງເຂດຢ່າງເປັນທາງການ ແລະ ໄດ້ສ້າງຕັ້ງ ບໍລິສັດຮ່ວມທຶນໂດຍມີຊື່ວ່າ ບໍລິສັດ ຈອມເພັດ ຮ່ວມມືພັດທະນາ ຈຳກັດ ມີທຶນທັງໝົດ 1.200 ລ້ານໂດລາສະຫະລັດ ແລະ ທຶນຈົດທະບຽນ 400 ລ້ານໂດລາສະຫະລັດ, ລັດ ຖະບານຖືຮຸ້ນ 30% ແລະ ຜູ້ພັດທະນາ 70%. ພ້ອມດຽວກັນ, ໄດ້ສຸມໃສ່ການສຳຫລວດ ແລະ ອອກແບບພື້ນທີ່ ໂຄງການ, ຄົ້ນຄວ້າລະບົບການບໍລິຫານ-ຄຸ້ມຄອງ ໃຫ້ໄປຕາມ ກົນໄກການບໍ ລິຫ ານບນອັຍສັງຄົມກວ້າງ ແລະ ຄົ້ນຄວ້າແຕ່ງ ຕັ້ງບຸກຄະລາກອນ ຊຶ່ງມາຈາກພາກລັດ ແລະ ຜູ້ພັດທະນາ ເພື່ອປະກອບເປັນສະພາບໍລິຫານເຂດ.

13) **ເຂດ ເສດຖະກິດສະເພາະດົງໂພສີ 2**: ຕັ້ງຢູ່ບໍລິເວນຂົວມິດຕະພາບລາວ-ໄທ ແຫ່ງທີ່ 1 ເມືອງຫາດຊາຍຟອງ, ນະຄອນຫລວງວຽງຈັນ, ມີເນື້ອທີ່ທັງໝົດ 28 ເຮັກຕາ ມີມູນຄ່າການລົງທຶນທັງໝົດ 100 ລ້ານໂດລາສະຫາລັດ, ລັດຖະ ບານຖືຮຸ້ນ 15%, ບໍລິສັດ ບີເອັມ ກຣຸບ ຖືຮຸ້ນ 80% ແລະ ບໍລິສັດ ພັດທະນາລົງທຶນຂຳກັນ ຖືຮຸ້ນ 5%. ເປົ້າໝາຍການພັດທະນາເຂດ ເພື່ອສ້າງເປັນເຂດສູນການຄ້າ ແລະ ການບໍລິການທີ່ທັນສະໄໝ. ປະຈຸບັນໄດ້ສຸມໃສ່ການແກ້ໄຂຊົດ ເຊີຍທີ່ ດິນ ໂດຍແຕ່ງຕັ້ງຄະນະຮັບຜິດຊອບສຳຫລວດເກັບຂໍ້ມູນສິດນຳໃຊ້, ສິ່ງປຸກສ້າງ ແລະ ພືນລະປູກຂອງປະຊາຊົນຜູ້ທີ່ຖືກ ຜົນກະທົບຈາກການພັດທະນາໂຄງການ ແລະ ການຄົ້ນຄວ້າແຕ່ງຕັ້ງສະພາບໍລິຫານເຂດ.

## 3.4.2. ການພັດທະນາຂົງເຂດສັງຄົມ

ການ ພັ ດທະນາ ຂົງ ເຂດ ສັງຄົ ມໄດ້ຮັບການປັບປຸງແກ້ໄຂໃຫ້ດີຂຶ້ນເປັນກ້າວໆໂດຍສະເພາະແມ່ນການເຂົ້າເຖິງ ແລະ ໄດ້ຮັບການບໍລິການຕ່າງໆເຊັ່ນ: ການສຶກສາ, ສາທາລະນະສຸກ, ການສະໜອງຂໍ້ມູນຂ່າວສານແລະໂຄສະນາແນວທາງນະໂຍບາຍຂອງພັກ-ລັດຖະບານໄດ້ຢ່າງກວ້າງຂວາງແລະທ່ວງທັນກັບສະພາບການຫລາຍຂຶ້ນ, ສັງຄົມມີຄວາມສະຫງົບ, ປອດໄພ, ປະຊາຊົນໄດ້ຮັບການຄຸ້ມຄອງ-ປົກປ້ອງ ແລະ ໄດ້ນຳໃຊ້ສິດຂອງເຂົາເຈົ້າເຂົ້າໃນການສ້າງສາແລະພັດທະນາປະເທດຊາດຢ່າງເຕັມສ່ວນ.

### 1. ການສຶກສາ-ກິລາ ແລະ ພັດທະນາຊັບພະຍາກອນມະນຸດ:

**ກ. ການສຶກສາ ແລະ ພັດທະນາຊັບພະຍາກອນມະນຸດ:** ລັດຖະບານໄດ້ໃຫ້ຄວາມສຳຄັນຫຼາຍຕໍ່ວຽກງານການພັດທະນາມະນຸດ ໂດຍໄດ້ສຸມງົບປະມານໃຫ້ຂະແໜງສຶກສາ ແລະ ກິລາຫຼາຍຂຶ້ນ ເຊິ່ງກວມເອົາ 17% ຂອງລາຍຈ່າຍລັດຖະບານ ເພື່ອພັດທະນາພື້ນຖານໂຄ່ງລ່າງດ້ານການສຶກສາ ແລະ ປັບປຸງລະບົບການສອນ-ການຮຽນທຸກຂັ້ນ. ສຸມໃສ່ຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ, ໄດ້ພັດທະນາຫຼັກສູດໃນສາຍອາຊີວະສຶກສາ ເພື່ອໃຫ້ສອດ ຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ. ໄດ້ຫັນເອົາໂຄງການລົງໄປຈັດຕັ້ງປະຕິບັດຢູ່ທ້ອງຖິ່ນຫຼາຍຂຶ້ນ ເຊັ່ນ: ໂຄງ ການພັດທະນາຄຸນນະພາບການສຶກສາ, ໂຄງການເລັ່ງລັດການສຶກສາເພື່ອທຸກຄົນ, ໂຄງການພັດທະນາການສຶກສາຂັ້ນພື້ນ ຖານ, ໂຄງການສະໜອງອາຫານເສີມ ແລະ ອາຫານທ່ຽງໃນໂຮງຮຽນໃນ 30 ເມືອງຢູ່ 6 ແຂວງເປົ້າໝາຍ, ໂຄງການປັບປຸງ ແລະ ຂະຫຍາຍໂຮງຮຽນເຕັກນິກວິຊາຊີບຢູ່ 3 ແຂວງພາກໃຕ້, ໂຄງການເຕັກໂນໂລຊີ, ຂ່າວສານ ແລະ ການສື່ສານ (ICT) ເພື່ອປັບປຸງການສຶກສາໃນຊັ້ນມັດທະຍົມໃຫ້ດີຂຶ້ນ ໂດຍໄດ້ມີການກໍ່ສ້າງໂຮງຮຽນມັດທະຍົມຕົວແບບຂຶ້ນໃນແຕ່ລະແຂວງ ແລະ ໄດ້ມີການເຊື່ອມໂຍງເຂົ້າກັບສູນ ICT ຂອງກະຊວງສຶກສາທິການ ແລະ ກິລາ ແລະ ອື່ນໆ; ນອກນັ້ນ, ຍັງໄດ້ຈັດສັນເງິນບໍລິຫານໂຮງຮຽນໃຫ້ໂຮງຮຽນປະຖົມໃນທົ່ວປະເທດເພີ່ມຂຶ້ນຈາກຈຳນວນ 20.000 ກີບ ຕໍ່ນັກຮຽນ 1 ຄົນຕໍ່ປີໃນສົກປີ 2011-2012 ເປັນ 50.000 ກີບໃນສົກປີ 2012-2013, ຂັ້ນອະນຸບານ, ຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍແມ່ນ 20.000 ກີບຕໍ່ຄົນຕໍ່ປີ, ອັນໄດ້ເຮັດໃຫ້ການສຶກສາ ຂອງສປປ ລາວມີບມື້ນັບດີຂຶ້ນທາງດ້ານປະລິມານ ແລະ ຄຸນນະພາບ, ສະແດງອອກມີຫຼາຍຄາດໝາຍບັນລຸແລ້ວ ເຊັ່ນ: ອັດຕາເຂົ້າຮຽນຂອງເດັກອາຍຸ 3-5 ປີ ເພີ່ມຂຶ້ນຈາກ 22,1% ໃນສົກປີ 2009-2010 ມາເປັນ ເປັນ 43,20% ສົກປີ 2014-2015 (ຄາດໝາຍ: 39%); ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີກຽມເຂົ້າຮຽນຊັ້ນປະຖົມໄດ້ 52,9% ໃນສົກປີ 2012-2013 ແລະ ເພີ່ມເປັນ 66% ໃນສົກປີ 2014-2015, ເຫັນວ່າປະຕິບັດໄດ້ລື່ນຄາດໝາຍ (ຄາດໝາຍ: 55%); ອັດຕາເຂົ້າຮຽນສຸດທິຊັ້ນປະຖົມເພີ່ມຂຶ້ນຈາກ 92,7% ໃນສົກປີ 2009-2010 ມາເປັນ 98,6% ໃນສົກປີ 2014-2015 ບັນລຸລື່ນຄາດໝາຍທີ່ວາງໄວ້ແລ້ວ (ຄາດໝາຍ: 98%). ອັດຕາການຮູ້ໜັງສືຂອງປະຊາ ກອນອາຍຸ 15 ປີຂຶ້ນໄປເພີ່ມຈາກ 81,7% ເປັນ 93,6% (ຄາດໝາຍ: 87%), ສ່ວນອັດຕາເຂົ້າຮຽນໃນຊັ້ນມັດທະຍົມຕອນຕົ້ນ ແລະ ຕອນປາຍແມ່ນບັນລຸໄດ້ລື່ນຄາດໝາຍທີ່ວາງໄວ້ ອັດຕາເຂົ້າຮຽນຊັ້ນມັດທະຍົມຕົ້ນ ບັນລຸໄດ້ 78% ໃນ ສົກປີ 2014-2015, (ຄາດໝາຍ:75%) ແລະ ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນປາຍ ບັນລຸໄດ້ 45,7% ໃນສົກປີ 2014-2015 (ຄາດໝາຍ: 43%).

ແຕ່ເຖິງຢ່າງໃດກໍຕາມ, ຍັງມີຄາດໝາຍຈຳນວນໜຶ່ງທີ່ຕ້ອງໄດ້ສືບຕໍ່ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍຕື່ມອີກ ເປັນຕົ້ນ: ອັດຕາການລອດເຫຼືອຂອງນັກຮຽນຊັ້ນປະຖົມ ສົກປີ 2012-2013 ບັນລຸແຕ່ 71,4%, ສຳລັບສົກປີ 2014-2015 ເພີ່ມຂຶ້ນເປັນ 78,3% (ຄາດໝາຍປີ 2015: 95%), ອັດຕາການຄ້າງຫ້ອງຂອງນັກຮຽນຊັ້ນປະຖົມແມ່ນຫຼຸດລົງຈາກ 15,2% ໃນສົກປີ 2009-2010 ເປັນ 6,9% ໃນສົກປີ 2013-2014. ເຖິງວ່າໄລຍະຜ່ານມາໄດ້ມີການສຸມທຶນຮອນໃສ່ການກໍ່ສ້າງພື້ນຖານໂຄງລ່າງດ້ານການສຶກສາຫຼາຍຂຶ້ນ ແຕ່ອັດຕາຄ້າງຫ້ອງ ແລະ ອັດຕາການປະລະການຮຽນຍັງສູງຢູ່, ໂດຍສະເພາະໃນຊັ້ນປະຖົມປີທີ 1 ແລະ ປີທີ 2; ສັດສ່ວນນັກຮຽນຍິງຕໍ່ນັກຮຽນຊາຍຊັ້ນປະຖົມແມ່ນ 0,95, ຊັ້ນມັດທະຍົມຕອນຕົ້ນແມ່ນ 0,91, ຊັ້ນມັດທະ ຍົມຕອນປາຍ ແມ່ນ 0,84 ແລະ ອາຊີວະສຶກສາແມ່ນ 0,6 ແລະ ສາມາດສະຫລຸບໄດ້ວ່າຖ້າລະດັບການສຶກສາສູງຂຶ້ນໄປເທົ່າໃດຍິ່ງເຮັດໃຫ້ຄວາມແຕກໂຕນຍິ່ງຫຼາຍຂຶ້ນເທົ່ານັ້ນ.

ວຽກງານລຶບລ້າງຄວາມບໍ່ຮູ້ໜັງສື: ແມ່ນໄດ້ທົດລອງນຳໃຊ້ຄູສອນແບບເຄື່ອນທີ່ ໃນການສິດສອນເດັກນ້ອຍທີ່ມີອາຍຸ 6-14 ປີ ທີ່ບໍ່ໄດ້ເຂົ້າໂຮງຮຽນໃນເຂດຫ່າງໄກສອກຫຼີກຢູ່ 3 ແຂວງ: ແຂວງສະຫວັນນະເຂດ, ຄຳມ່ວນ ແລະ ແຂວງເຊກອງ ພາຍໃຕ້ແຜນງານການສຶກສາເພື່ອທຸກຄົນເພື່ອອຳນວຍຄວາມສະດວກໃຫ້ແກ່ເດັກນ້ອຍທີ່ບໍ່ໄດ້ເຂົ້າໂຮງຮຽນ. ມາຮອດປະຈຸບັນມີ 10 ແຂວງປະກາດຈົບຊັ້ນປະຖົມແລ້ວ ແລະ ມີ 148 ເມືອງໄດ້ປະກາດຈົບຊັ້ນປະຖົມບຳລຸງແລ້ວ ແຕ່ສິ່ງທ້າທາຍຕົ້ນຕໍໃນການປະຕິບັດວຽກງານດັ່ງກ່າວນີ້ ແມ່ນການຂາດແຄນຄູ່ມືການສິດສອນ ແລະ ຄູອາຈານລວມທັງງົບປະມານຍັງມີຈຳກັດ.

ວຽກງານອາຊີວະສຶກສາ: ໄດ້ມີການປັບປຸງພື້ນຖານໂຄງລ່າງໃນແຂວງສະຫວັນນະເຂດ, ເຊກອງ ແລະ ອັດຕະປື. ພ້ອມນີ້, ໄດ້ມີນະໂຍບາຍສະໜອງອັດຕາກິນໃຫ້ແກ່ນັກຮຽນທີ່ມາຈາກຄອບຄົວທີ່ທຸກຍາກ ແລະ ຢູ່ເຂດຫ່າງໄກສອກຫຼີກ ເຊິ່ງໄດ້ປະກອບສ່ວນເຮັດໃຫ້ອັດຕາເຂົ້າຮຽນລວມເພີ່ມຂຶ້ນເຖິງ 42%. ນັກຮຽນສ່ວນໃຫຍ່ທີ່ຮຽນຢູ່ລະດັບວິຊາຊີບ ແລະຊັ້ນສູງຕ່ຳກວ່າ 7% ແມ່ນເລືອກຮຽນໃນຂະແໜງວິຊາຊີບ. ມີພຽງ 12% ທີ່ເຂົ້າຮຽນໃນຂະແໜງກະສິກຳ, ນອກນັ້ນແມ່ນຮຽນຢູ່ໃນຂະແໜງອຸດສາຫະກຳ ແລະ ບໍລິການ. ສະນັ້ນ, ຈຶ່ງເຮັດໃຫ້ວິຊາສະເພາະທີ່ຮຽນມາບໍ່ຕອບສະໜອງໃຫ້ແກ່ຄວາມຕ້ອງການຂອງຕະຫຼາດແຮງງານ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VII (2011-2015).

**ຂ. ດ້ານກິລາ:** ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ແລະມີບາດກ້າວຂະຫຍາຍຕົວ. ນັກກິລາ, ຄູຝຶກ ແລະຄະນະກຳມະການຕັດສິນປະເພດກິລາຕ່າງໆໄດ້ຮັບການພັດທະນາຢ່າງກວ້າງຂວາງ ເປັນແຕ່ລະລຸ້ນອາຍຸ ຢູ່ທັງພາຍໃນ ແລະ ຕ່າງປະ ເທດ. ໄດ້ຈັດການແຂ່ງຂັນກິລາມະຫາກຳຫ່ງຊາດ ຄັ້ງທີ 9 ໃນປີ 2012 ທີ່ແຂວງຫລວງພະບາງ, ຄັ້ງທີ 10 ທີ່ແຂວງອຸດົມໄຊ ໃນປີ 2014 ຢ່າງເປັນຂະບວນຟົດຟື້ນ ແລະ ກວ້າງຂວາງ; ເຂົ້າຮ່ວມແຂ່ງຂັນກິລາຊີເກມຄັ້ງທີ 26 ທີ່ປະເທດອິນໂດເນເຊຍໃນປີ 2011 ຍາດໄດ້ຫລຽນທັງໝົດ 58 ຫລຽນ, ເຂົ້າຮ່ວມແຂ່ງຂັນກິລາຊີກຽມຄັ້ງທີ 27 ທີ່ປະເທດມຽນມ້າ ໃນປີ 2013 ສາມາດຍາດໄດ້ 13 ຫຼຽນຄຳ, 17 ຫຼຽນເງິນ ແລະ 49 ຫຼຽນທອງ. ພິເສດໄດ້ເປັນເຈົ້າພາບຈັດການແຂ່ງຂັນກິລາມະຫາວິທະ ຍາໄລອາຊຽນຄັ້ງທີ 16 ໃນປີ 2012. ເຖິງແມ່ນວຽກງານກິລາຈະມີຜົນສຳເລັດຫລາຍດ້ານກໍ່ຕາມ ແຕ່ຍັງມີຄວາມສ່ຽງຕໍ່ການບັນລຸຄາດໝາຍໃນການສ້າງນັກກິລາປະເພດຕ່າງໆໃຫ້ໄດ້ 15% ຂອງຜູ້ມີອາຍຸ 3-35 ປີ.

## 2. ສາທາລະນະສຸກ ແລະ ໂພຊະນາການ:

**ກ. ການພັດທະນາສາລະນະສຸກ:** ເຫັນວ່າມີຜົນສຳເລັດພໍສົມຄວນ, ຕາໜ່າງສາທາລະນະສຸກໄດ້ຂະຫຍາຍຕົວຢ່າງກວ້າງຂວາງແລະໄປຮອດເຂດຫ່າງໄກສອກຫຼີກຫຼາຍຂຶ້ນ. ມາຮອດປະຈຸບັນມີສຸກສາລາທັງໝົດ 985 ແຫ່ງ; ໃນນັ້ນ ສາມາດໃຫ້ບໍລິການຊ່ວຍເກີດລູກໄດ້ 859 ແຫ່ງ; ໂຮງໝໍເມືອງມີທັງໝົດ 135 ແຫ່ງ; ໃນນັ້ນ, ມີ 19 ແຫ່ງ ທີ່ສາມາດເຮັດຜ່າຕັດໄດ້. ສຳລັບໂຮງໝໍແຂວງມີທັງໝົດ 17 ແຫ່ງສາມາດເຄື່ອນໄຫວບໍລິການປິ່ນປົວທົ່ວໄປໂດຍພື້ນຖານ, ສາມາດແກ້ໄຂຜ່າຕັດທົ່ວໄປ ແລະ ສຸກເສີນໄດ້, ສາມາດຮັບການສົ່ງຕໍ່ການຜ່າຕັດເອົາລູກອອກຈາກໂຮງໝໍເມືອງ ແລະ ໂຮງໝໍແຂວງຈຳ ນວນໜຶ່ງໄດ້ປັບປຸງການບໍລິການລະດັບຊ່ຽວຊານເຂົ້າໃນບາງວິຊາ ສາມາດບໍລິການໄດ້ຄຸນນະພາບເທົ່າທຽມກັບໂຮງໝໍສູນກາງ ແລະ ຈະພັດທະນາຕື່ມຂຶ້ນໃຫ້ກາຍເປັນໂຮງໝໍພາກໃນອະນາຄົດ. ໂຮງໝໍສູນກາງມີ 5 ແຫ່ງແລະ ສູນປິ່ນປົວສະເພາະ 3 ແຫ່ງ. ບັນດາໂຮງໝໍເອກະຊົນ ແລະ ສູນປິ່ນປົວທີ່ໄດ້ດຳເນີນການບໍລິການເປັນທາງການທີ່ຖືກຕ້ອງຕາມລະບຽບການມີ 13 ແຫ່ງ; ໃນນັ້ນ ຢູ່ນະຄອນຫຼວງ 8 ແຫ່ງ ແລະ ຕ່າງແຂວງ 5 ແຫ່ງ. ສຳລັບຫ້ອງກວດພະຍາດເອກະຊົນທີ່ໄດ້ຮັບອະນຸຍາດໃຫ້ເປີດເປັນທາງການຈາກກະຊວງສາທາລະນະສຸກມີ 1.054 ແຫ່ງ (ນະຄອນຫຼວງ: 360 ແຫ່ງ, ທ້ອງຖິ່ນ: 694 ແຫ່ງ).[6]

6 ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານສາທາລະນະສຸກປະຈຳສົກປີ 2014-15, ກະຊວງສາທາລະນະສຸກ 12 ກັນຍາ 2015.

ການສົ່ງເສີມສຸຂະພາບ ແລະ ກັນພະຍາດໃຫ້ປະຊາຊົນ: ໄດ້ສຸມໃສ່ການສ້າງບ້ານສາທາລະນະສຸກແບບຢ່າງຕາມ 8 ເນື້ອໃນຂອງວຽກງານຮັກສາສຸຂະພາບຂັ້ນຕົ້ນ. ມາຮອດປະຈຸບັນ ມີບ້ານສາທາລະນະສຸກແບບຢ່າງທັງໝົດ 4.553 ບ້ານກວມເອົາ 53% ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ, ໃນນັ້ນ ມີ 290 ບ້ານ ໃນ 64 ກຸ່ມຈຸດສຸມຂອງລັດຖະບານ ກວມເອົາ 59,18% ຂອງບ້ານທັງໝົດໃຈກຸ່ມຈຸດສຸມລັດຖະບານ (ມີ 490 ບ້ານ) ແລະ ບ້ານ 3 ສ້າງ ໄດ້ 107 ບ້ານ ໃນ 109 ບ້ານ ໃນ 52 ເມືອງທົດລອງ[7]. ຊຸກຍູ້ ແລະ ສົ່ງເສີມຂະບວນການສັກຢາກັນພະຍາດຢູ່ຕາມບ້ານ, ໂຮງຮຽນ, ໂຮງໝໍຂັ້ນຕ່າງໆ. ອົງການອະນາໄມໂລກໄດ້ປະເມີນຄືນໃໝ່ກ່ຽວກັບບັນຫາພະຍາດວັນນະໂລກຢູ່ ສປປ ລາວ ເຫັນວ່າອັດຕາເປັນວັນນະ ໂລກທຸກຮູບແບບ (Prevalence) ແມ່ນ 514 ຕໍ່ປະຊາກອນ 100.000 ຄົນ, ວັນນະໂລກກໍລະນີໃໝ່ (Incidence) ແມ່ນ 204 ຄົນ ຕໍ່ປະຊາກອນ 100.000 ຄົນ, ອັດຕາການຕາຍຍ້ອນວັນນະໂລກ ແມ່ນ 11 ຄົນ ຕໍ່ປະຊາກອນ 100.000 ຄົນ, ອັດຕາການຄົ້ນພົບຕົວຈິງແມ່ນ 62 ຄົນ ຕໍ່ປະຊາກອນ 100.000 ຄົນ (30%).[8] ວຽກງານການປ້ອງກັນເຊື້ອເຮສໄອວີ/ພະຍາດເອດ ແລະ ພຕພ: ໄດ້ຂະຫຍາຍສະຖານທີ່ໃຫ້ຄຳປຶກສາທັງໝົດ 165 ແຫ່ງໃນທົ່ວປະເທດ (ຂັ້ນແຂວງ 55 ແຫ່ງ, ເມືອງ 89 ແຫ່ງ ແລະ ສຸກສາລາ 21 ແຫ່ງ). ມາຮອດປະຈຸບັນອັດຕາການຕິດເຊື້ອເຮສໄອວີໃນກຸ່ມປະຊາກອນທົ່ວໄປແມ່ນ 0,28% (ຄາດໝາຍປີ 2015<1%), ອັດຕາການຕິດເຊື້ອເຮສໄອວີໃນກຸ່ມສາວບໍລິການທາງເພດອາຍຸ 15 ຫາ 49 ປີ ປະຕິ ບັດໄດ້ 1,20% (ຄາດໝາຍປີ 2015<5%), ອັດຕາການຕິດເຊື້ອເຮສໄອວີໃນກຸ່ມຊາຍທີ່ມີເພດສຳພັນກັບຊາຍອາຍຸ 15 ຫາ 49 ປີ 2,44% (ຄາດໝາຍປີ 2015<5%), ອັດຕາການຊົມໃຊ້ຖົງຢາງອະນາໄມໃນກຸ່ມສາວບໍລິການທາງເພດກັບລູກຄ້າຜູ້ສຸດທ້າຍ 92,5% (ຄາດໝາຍປີ 2015 ແມ່ນ 95%) ແລະ ອັດຕາຜູ້ໃຫຍ່ ແລະ ເດັກນ້ອຍທີ່ຕິດເຊື້ອເຮສໄອວີໄດ້ຮັບການປິ່ນປົວດ້ວຍຢາ ARV 53,2% (ຄາດໝາຍປີ2015>90%).[9] ສຳລັບວຽກງານໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້: ແມ່ນໄດ້ແຈກຢາຍມຸ້ງຍ້ອມຢາໃຫ້ຄອບຄົວບ້ານເປົ້າໝາຍທີ່ຢູ່ໃນເຂດໄຂ້ຍຸງ 2 ແລະ 3 ຈຳນວນ 256.200 ດາງ (ມຸ້ງແມ່ມານ 8.500 ດາງ ແລະ ມຸ້ງທົ່ວໄປ 247.700 ດາງ). ພົບກໍລະນີໄຂ້ຍຸງທັງໝົດໃນທົ່ວປະເທດ 12.850 ກໍລະນີ, ໃນນັ້ນ ພົບກໍລະນີໃໝ່ກວມອັດຕາ 7,97/1.000 ແລະ ອັດຕາການເສຍຊີວິດຍ້ອນໄຂ້ຍຸງ 0,29/100,000.[10]

ອັດຕາການຕາຍຂອງແມ່ປະຈຸບັນຍັງເຫຼືອ 220 ຄົນ ຕໍ່ການເກີດມີຊີວິດ 100.000 ຄົນ (ການປະເມີນຂອງອົງການອະນາໄມໂລກສົມທົບກັບອົງການຢູນິເຊບ, ອົງການກອງທຶນສຳລັບປະຊາກອນ ຂອງອົງການສະຫະປະຊາຊາດເພື່ອການພັດທະນາ ແລະ ທະນາຄານໂລກ) ອີງຕາມຕົວເລກດັ່ງກ່າວສະແດງວ່າ ສປປ ລາວ ບັນລຸຄາດໝາຍນີ້ແລ້ວ (ຄາດໝາຍ 2015: 260 ຄົນຕໍ່ການເກີດມີຊີວິດ 100.000 ຄົນ)[11]. ອັດຕາສ່ວນຂອງການເກີດລູກ ໂດຍມີແພດຊ່ວຍແມ່ນຢູ່ລະດັບ 58% ຄາດໝາຍ ປີ 2015 ແມ່ນ 50% ເຫັນວ່າບັນລຸເກີນຄາດໝາຍແລ້ວ. ສຳລັບອັດຕາການຕາຍຂອງເດັກລຸ່ມ 1 ປີ ໄດ້ຫຼຸດລົງ ຈາກ 68 ຄົນ ຕໍ່ການເກີດມີຊີວິດ 1.000 ຄົນ ປີ 2011 ຈະຍັງເຫຼືອປະມານ 32 ຄົນຕໍ່ການເກີດມີຊີວິດ 1.000 ຄົນ ໃນປີ 2015 (ຄາດໝາຍປີ 2015: 45 ຄົນຕໍ່ການເກີດມີຊີວິດ 1.000 ຄົນ) ແລະ ອັດຕາການຕາຍຂອງເດັກລຸ່ມ 5 ປີ ໄດ້ຫຼຸດລົງຈາກ 79 ຄົນ ຕໍ່ການເກີດມີຊີວິດ 1.000 ຄົນ ໃນປີ 2011 ຈະຍັງເຫຼືອປະມານ 72 ຄົນ ຕໍ່ການເກີດມີຊີວິດ 1.000 ຄົນ ໃນປີ 2012 (ຄາດໝາຍປີ 2015: 70 ຄົນ). ອັດຕາການຊົມໃຊ້ນ້ຳສະອາດບັນລຸໄດ້  84,71% ໃນປີ 2014 (ຄາດໝາຍ 80%) ລື່ນຄາດໝາຍທີ່ວາງໄວ້, ອັດຕາການຊົມໃຊ້ວິດຖ່າຍຄອບຄົວບັນລຸໄດ້ 67,92% ໃນປີ 2014 (ຄາດໝາຍ 60%) ລື່ນຄາດໝາຍທີ່ວາງໄວ້.

ຄຽງຄູ່ກັບຜົນສຳເລັດຍັງມີບາງວຽກງານ ແລະ ຄາດໝາຍຈຳນວນໜຶ່ງທີ່ມີຄວາມສ່ຽງຈະບັນລຸຕາມແຜນທີ່ກຳນົດໄວ້ ໂດຍສະເພາະແມ່ນອັດຕາການສັກຢາກັນໝາກແດງໃນເດັກນ້ອຍລຸ່ມ 1 ປີ ໄດ້ພຽງ 85% ໃນປີ 2013 (ຄາດໝາຍ 90%); ສຳລັບອັດຕາຄຸມກຳເນີດ ບັນລຸໄດ້ 49% ປີ 2014, (ຄາດໝາຍປີ 2015: 55%) ແລະ ອັດຕາການກວດທ້ອງກ່ອນເກີດ ຄົບ 4 ຄັ້ງ ບັນລຸໄດ້ 46% ປີ 2014 (ຄາດໝາຍປີ 2015: 69%).

**ຂ. ການພັດທະນາວຽກງານໂພຊະນາການ:** ໄດ້ມີການສ້າງຕັ້ງຄະນະກຳມະການແຫ່ງຊາດດ້ານໂພຊະນາການ ເຊິ່ງປະກອບດ້ວຍທຸກຂະແໜງການທີ່ມີຄວາມຮັບຜິດຊອບລົງເລິກສະເພາະ ເພື່ອແກ້ໄຂວຽກງານໂພຊະນາການ ໂດຍມີການສົມທົບກັບທຸກພາກສ່ວນ. ໃນນັ້ນ, ຂະແໜງສາທາລະນະສຸກ ໄດ້ເອົາໃຈໃສ່ການປຸກລະດົມສົ່ງເສີມຂະບວນການອະນາໄມ-ກັນພະບາດ ເພື່ອປ່ຽນແປງພຶດຕິກຳການດຳລົງຊີວິດຂອງປະຊາຊົນໃຫ້ຖືກຕາມຫຼັກອະນາໄມ 3 ສະອາດ ເປັນຕົ້ນແມ່ນດື່ມນ້ຳຕົ້ມ, ກິນອາຫານສຸກ, ນຳໃຊ້ວິດຖ່າຍ ທີ່ສຳຄັນແມ່ນພຶດຕິກຳການກິນອາຫານຂອງເດັກນ້ອຍໃຫ້ຄົບໝວດອາຫານໂດຍການສະໜອງນົມ ແລະ ອາຫານເສີມໃຫ້ເດັກໃນໂຮງຮຽນ, ແຈກຢາຍວິຕາມິນອາ, ຢາຂ້າແມ່ທ້ອງ, ເກືອແຮ່, ທາດເຫຼັກ ແລະ ທາດສັງກະສີໃຫ້ເດັກນ້ອຍ ແລະ ກຸ່ມ

---

7 ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານສາທາລະນະສຸກປະຈຳສົກປີ 2014-15, ກະຊວງສາທາລະນະສຸກ 12 ກັນຍາ 2015.

8 ບົດສະຫຼຸບການເຄື່ອນໄຫວວຽກງານວັນນະໂລກສົກປີ 2013-14, ສູນວັນນະໂລກ.

9 ບົດສະຫຼຸບປະຈຳສົກປີ 2013-14 ວຽກງານສະກັດກັ້ນ ແລະ ຕ້ານເຊື້ອເຮສໄອວີ/ພະຍາດເອດ ແລະ ພຕພ

10 ບົດສະຫຼຸບການປະຕິບັດວຽກງານສົກປີ 2013-14, ສູນໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້.

11 ແຕ່ການສຳຫຼວດດັດສະນີໝາຍສັງຄົມລາວ ສະແດງໃຫ້ເຫັນວ່າ ອັດຕາການຕາຍຂອງແມ່ນຍັງເຫຼືອ 357 ຄົນຕໍ່ການເກີດມີຊີວິດ 100.000 ຄົນ

ແມ່ຍິງໃນໄວຈະເລີນພັນ; ແຕ່ເຖິງຢ່າງໃດກໍ່ຕາມ, ບັນດາຄາດໝາຍທີ່ກຳນົດໄວ້ໃນແຜນ 5 ປີ ແມ່ນມີຄວາມສ່ຽງທີ່ຈະບັນລຸ ເຊັ່ນ: ອັດຕາສ່ວນເດັກນ້ອຍລຸ່ມ 5 ປີທີ່ມີນ້ຳໜັກຕ່ຳກວ່າມາດຕະຖານເຫັນວ່າມີຄວາມຄືບໜ້າຊ້າຈາກການສຳຫຼວດດັດສະນີໝາຍສັງຄົມລາວປີ 2011 ບັນລຸພຽງແຕ່ 27% (ຄາດໝາຍ ປີ 2015: 22%); ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີຄວາມສູງຕ່ຳກວ່າມາດຕະຖານ (ຂາດອາຫານຊຳເຮື້ອ) ມີຄວາມຄືບໜ້າຊ້າ ເຊິ່ງບັນລຸໄດ້ 38% (ຄາດໝາຍປີ 2015: 34%). ຈາກຕົວເລກດັ່ງກ່າວເຫັນວ່າບໍ່ສາມາດບັນລຸຕາມຄາດໝາຍທີ່ວາງໄວ້, ເຊິ່ງຕ້ອງໄດ້ສຸມທຸກກຳລັງເຂົ້າໃນວຽກງານໂພສະນາການໃຫ້ຫຼາຍຂຶ້ນ ແລະ ສືບຕໍ່ຈັດຕັ້ງປະຕິບັດໃນແຜນຄັ້ງຕໍ່ໄປ.

## 3. ແຮງງານ ແລະ ສະຫວັດດີການສັງຄົມ

1) **ດ້ານນິຕິກຳ**: ໄດ້ປັບປຸງ ແລະ ສ້າງນິຕິກຳ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານແຮງງານ ແລະ ສະຫວັດດີການສັງຄົມ ເຊັ່ນ: ປັບປຸງກົດໝາຍແຮງງານ, ໄດ້ສ້າງກົດໝາຍວ່າດ້ວຍການປະກັນສັງຄົມ, ປັບປຸງດຳລັດວ່າດ້ວຍຄ່າແຮງງານຕ່ຳສຸດສຳລັບຜູ້ອອກແຮງງານທີ່ເຮັດວຽກໃນຫົວໜ່ວຍທຸລະກິດ, ການຜະລິດ ແລະ ການບໍລິການຈາກ 626.000 ກີບ ມາເປັນ 900.000 ກີບ; ສ້າງດຳລັດວ່າດ້ວຍສັງຄົມສົງເຄາະ, ດຳລັດວ່າດ້ວຍຄົນພິການ ແລະ ປັບປຸງດຳລັດ 343/ນຍ ມາເປັນດຳລັດ 272/ລບ ວ່າດ້ວຍການປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີ ແລະ ພາລະກິດຮັບໃຊ້ການປະຕິວັດຊາດ ປະຊາທິປະໄຕ.

2) **ດ້ານແຮງງານ**: ໄດ້ມີການປັບປຸງ ແລະ ຂະຫຍາຍພື້ນຖານໂຄງລ່າງໃຫ້ແກ່ການຝຶກ ແລະ ພັດທະນາສີມືແຮງງານຫຼາຍຂຶ້ນ ເຊັ່ນ: ສຳເລັດການກໍ່ສ້າງສູນພັດທະນາສີມືແຮງງານຢູ່ແຂວງຈຳປາສັກ ແລະ ແຂວງສະຫວັນນະເຂດ; ປັບປຸງສູນພັດທະນາສີມືແຮງງານຢູ່ແຂວງອຸດົມໄຊ ແລະ ບໍ່ແກ້ວ. ຍົກລະດັບສູນຝຶກວິຊາຊີບລາວ-ເກົາຫຼີ ເປັນສະຖາບັນການພັດທະນາສີມືແຮງງານລາວ-ເກົາຫຼີ. ປະຈຸບັນມີສູນຝຶກວິຊາຊີບ ແລະ ສູນພັດທະນາສີມືແຮງງານໃນຂອບເຂດທົ່ວປະເທດ 165 ແຫ່ງ; ໃນນີ້, ຂຶ້ນກັບຂະແໜງແຮງງານສະຫວັດດີການສັງຄົມ 10 ແຫ່ງ, ຂຶ້ນກັບຂະແໜງການອື່ນ 52 ແຫ່ງ, ຂຶ້ນກັບອົງການຈັດຕັ້ງມະຫາຊົນຄຸ້ມຄອງ 13 ແຫ່ງ ແລະ ພາກສ່ວນເອກະຊົນ-ຫົວໜ່ວຍທຸລະກິດການຜະລິດຄຸ້ມຄອງ 90 ແຫ່ງ. ໄດ້ພັດທະນາຫຼັກສູດການຮຽນການສອນວິຊາຊ່າງລົດຍົນ, ໄຟຟ້າ ແລະ ໄອທີ ຈາກລະດັບຊຳນານງານ ມາເປັນລະດັບນາຍຊ່າງ ແລະ ຜູ້ຄຸມງານ; ສ້າງປຶ້ມຕຳລາການຮຽນ-ການສອນ ໄດ້ຕື່ມ 3 ສາຂາວິຊາຊ່າງ ຄື: ວິຊາກໍ່ສ້າງ, ເອເລັກໂຕຣນິກ ແລະ ຈອດທໍ່ນ້ຳປະປາ. ໄດ້ສ້າງມາດຕະຖານສີມືແຮງງານຂະແໜງກໍ່ສ້າງເຄຫະສະຖານ ແລະ ຂະແໜງລົດຍົນໄດ້ 27 ສາຂາອາ ຊີບ ລື່ນຄາດໝາຍ 35% ຂອງແຜນການ 5 ປີ. ຈັດຕັ້ງການແຂ່ງຂັນສີມືແຮງງານແຫ່ງຊາດ ແລະ ເຂົ້າຮ່ວມການແຂ່ງຂັນຊ່າງສີມືແຮງງານລະດັບອາຊຽນຢ່າງຕໍ່ເນື່ອງ. ໄດ້ເຝິກສີມືແຮງງານໃຫ້ແກ່ກຳລັງແຮງງານໄດ້ 248.765 ຄົນ ເປັນຍິງ 114.300 ຄົນ, ລື່ນຄາດໝາຍທີ່ວາງໄວ້ 12,26% (ຄາດໝາຍປີ 2015: 221.583 ຄົນ) ໃນນີ້: ຂະແໜງກະສິກຳ-ປ່າໄມ້ 97.953 ຄົນ, ຍິງ 42.515 ຄົນ, ຂະແໜງອຸດສາຫະກຳ 61.405 ຄົນ, ຍິງ 29.113 ຄົນ ແລະ ຂະແໜງບໍລິການ 89.407 ຄົນ, ຍິງ 42.672 ຄົນ.

ໄດ້ຂະຫຍາຍສູນບໍລິການຈັດຫາງານຢູ່ນະຄອນຫຼວງວຽງຈັນ, ແຂວງບໍລິຄຳໄຊ, ຄຳມ່ວນ, ໄຊຍະບູລີ, ອຸດົມໄຊ, ສະຫວັນນະເຂດ, ຈຳປາສັກ, ວຽງຈັນ ແລະ ຫຼວງພະບາງ, ພ້ອມທັງຈັດຕະຫຼາດນັດແຮງງານຂຶ້ນທີ່ແຂວງຈຳປາສັກ ແລະ ນະຄອນຫຼວງວຽງຈັນ ມີ 217 ຫົວໜ່ວຍທຸລະກິດເຂົ້າຮ່ວມ, 13.208 ຄົນ ເຊິ່ງໄດ້ສ້າງໂອກາດໃຫ້ຜູ້ໃຊ້ແຮງງານ ແລະ ຜູ້ອອກແຮງງານໄດ້ພົບປະແລກປ່ຽນຂໍ້ມູນຂ່າວສານກ່ຽວກັບຄວາມຕ້ອງການ ແລະ ການສະໜອງຂອງຕະຫຼາດແຮງງານ. ສາ ມາດສະໜອງກຳລັງແຮງງານໄດ້ທັງໝົດ 277.439 ຄົນ, ຍິງ 136.773 ຄົນ; ໃນນີ້, ຂະແໜງກະສິກຳ-ປ່າໄມ້ 67.677 ຄົນ ຍິງ 30.422 ຄົນ, ຂະແໜງອຸດສະຫະກຳ 123.051 ຄົນ, ຍິງ 59.437 ຄົນ ແລະ ຂະແໜງບໍລິການ 86.711 ຄົນ, ຍິງ 47.004 ຄົນ ເຊິ່ງສະໜອງໃຫ້ໜ່ວຍການຜະລິດພາຍໃນໄດ້ 167.665 ຄົນ ຍິງ 81.581 ຄົນ ແລະ ຈັດຫາໄປຕ່າງປະເທດ 109.774 ຄົນ ຍິງ 55.192 ຄົນ ແລະ ນຳເຂົ້າແຮງງານຈາກຕ່າງປະເທດໃຫ້ຫົວໜ່ວຍແຮງງານຕ່າງໆຕາມລະບຽບກຳນົດໄວ້ໄດ້ຈຳນວນ 173.093 ຄົນ; ພ້ອມກັນນັ້ນ, ການຈັດຫາວຽກເຮັດງານທຳຂົງເຂດພາກລັດບໍລິຫານບັນລຸໄດ້ 66.340 ຄົນ. ສັງລວມແລ້ວໃນໄລຍະ 5 ປີ ສາມາດຈັດຫາວຽກເຮັດງານທຳໄດ້ 343.779 ຄົນ ລື່ນຄາດໝາຍທີ່ວາງໄວ້ 24,18% (ຄາດໝາຍປີ 2015: 276.828 ຄົນ) ແລະ ອັດຕາຫວ່າງງານຢູ່ໃນລະດັບປະມານ 2%. ຈາກຄວາມພະຍາຍາມດັ່ງກ່າວໄດ້ເຮັດໃຫ້ໂຄງປະກອບຂອງກຳລັງແຮງງານໄດ້ຫັນໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ ເຊິ່ງອັດຕາສ່ວນການມີວຽກເຮັດງານທຳຂົງເຂດກະສິກຳ ໄດ້ຫຼຸດລົງຈາກ 71,3% ໃນປີ 2010 ມາເປັນ 65,3% ໃນປີ 2015, ຂົງເຂດອຸດສາຫະກຳເພີ່ມຂຶ້ນຈາກ 8,3% ໃນປີ 2010 ມາ ເປັນ 11,4% ໃນປີ 2015 ແລະ ຂົງເຂດການບໍລິການ ເພີ່ມຂຶ້ນຈາກ 20,4% ໃນປີ 2010 ມາເປັນ 23,3% ໃນປີ 2015[12]. ຜູ້ອອກແຮງງານທີ່ມີວຽກເຮັດງານທຳໃນປີ 2010 ມີ 3,02 ລ້ານຄົນ, ກວມເອົາ 51,92% ຂອງພົນລະເມືອງທັງໝົດ (5,81 ລ້ານຄົນ) ແລະ ໃນປີ 2015 ມີປະມານ 3,75 ລ້ານຄົນ, ກວມເອົາ 55,67% ຂອງພົນລະເມືອງ (6,49 ລ້ານຄົນ) ສົມທຽບຜູ້ອອກແຮງງານທີ່ມີວຽກເຮັດງານທຳ ເພີ່ມ 24,26%.

---

12 ກະຊວງແຮງງານແລະ ສະຫວັດດີການສັງຄົມ (ປີ 2014:3): ບົດສະຫລຸບ ການຈັດຕັ້ງປະຕິບັດແຜນພັດທະນາວຽກງານແຮງງານ ແລະ ສະຫວັດດີການສັງຄົມ ສົກປີ 2013 - 2014 ແລະ ທິດທາງແຜນການ ສົກປີ 2014-2015

ວຽກຄຸ້ມຄອງແຮງງານ: ໄດ້ລົງຕິດຕາມ ຊຸກຍູ້ການປະຕິບັດລະບຽບການຄຸ້ມຄອງແຮງງານຢູ່ຫົວໜ່ວຍທຸລະກິດ, ການຜະລິດ, ການບໍລິການ ແລະ ໂຄງການລົງທຶນຕ່າງໆ ໄດ້ 6.582 ແຫ່ງ, ລື່ນຄາດໝາຍ 88,05% ຂອງແຜນການ 5 ປີ (3.500 ແຫ່ງ); ລົງເຜີຍແຜ່ກົດໝາຍ ແລະ ນິຕິກຳດ້ານແຮງງານຕາມຫົວໜ່ວຍແຮງງານຕ່າງໆ ໄດ້ 998 ແຫ່ງ, ລື່ນຄາດ ໝາຍ 66,33% ຂອງແຜນການ 5 ປີ (600 ແຫ່ງ), ສຳເລັດການສຳຫຼວດສະພາບກຳລັງແຮງງານ ແລະ ແຮງງານເດັກ ຢູ່ ສປປ ລາວ ຄັ້ງທຳອິດ ເຊິ່ງເປັນບ່ອນອີງທາງດ້ານຂໍ້ມູນໃຫ້ແກ່ການວາງແຜນພັດທະນາວຽກງານແຮງງານ, ສ້າງ ແລະ ປະ ກາດໃຊ້ແຜນງານແຫ່ງຊາດ ເພື່ອປ້ອງກັນ ແລະ ລຶບລ້າງການນຳໃຊ້ແຮງງານເດັກ ຢູ່ ສປປ ລາວ ປີ 2014-2020. ເອົາໃຈໃສ່ປົກປ້ອງສິດຜົນປະໂຫຍດຂອງຜູ້ອອກແຮງງານລາວຢູ່ຕ່າງປະເທດ ໂດຍສະເພາະແມ່ນການປະຕິບັດຕາມແຜນການທີ່ລັດ ຖະບານອະນຸມັດປັບປ່ຽນສະຖານະພາບໃຫ້ແຮງງານທີ່ເຮັດວຽກແບບບໍ່ຖືກຕ້ອງ ຢູ່ປະເທດໃກ້ຄຽງໃຫ້ເຂົ້າສູ່ລະບົບການຄຸ້ມຄອງຕາມກົດໝາຍ ໄດ້ 3 ຄັ້ງ, ມີຈຳນວນແຮງງານ 90.601 ຄົນ, ຍິງ 48.683 ຄົນ; ພ້ອມກັນນັ້ນ, ຍັງໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດມະຕິຕົກລົງ ສະບັບເລກທີ 03/ລບ ກ່ຽວກັບການແກ້ໄຂຊາວຕ່າງປະເທດທີ່ທຳມາຫາກິນດ້ວຍການຄ້າຂາຍ ແລະ ອອກແຮງງານຮັບຈ້າງ ຢູ່ ສປປ ລາວ ໂດຍໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງຂອງສູນກາງ ແລະ ທ້ອງຖິ່ນຂຶ້ນບັນຊີ ໄດ້ທັງໝົດຈຳນວນ 61.093 ຄົນ.

3) **ດ້ານສະຫວັດດີການສັງຄົມ ແລະ ວຽກງານສັງຄົມສົງເຄາະ**: ວຽກງານປະກັນສັງຄົມໄດ້ຮັບການປັບປຸງນັບມື້ດີຂຶ້ນ ສາມາດໃຫ້ການບໍລິການ ໃນການອຸດໜູນປະກັນສັງຄົມປະເພດຕ່າງໆ ໃຫ້ຜູ້ປະກັນຕົນ ແລະ ສະມາຊິກຄອບ ຄົວເພີ່ມຂຶ້ນ, ມາຮອດປະຈຸໄດ້ຂະຫຍາຍຂອບເຂດປົກຄຸມປະກັນສັງຄົມ ແລະ ປະກັນສຸຂະພາບ ຈຳນວນ 2.067.766 ຄົນ ເທົ່າກັບ 30,36% ຂອງພົນລະເມືອງທັງໝົດ ໃນປີ 2014. ວຽກງານສັງຄົມສົງເຄາະ, ວຽກງານບຳນານ, ເສຍອົງຄະ ແລະ ພິ ການ: ເອົາໃຈໃສ່ປຸກລະດົມການບໍລິຈາກຈາກພາກສ່ວນຕ່າງໆທັງພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍເຫຼືອບັນເທົາທຸກແກ່ຜູ້ປະສົບໄພພິບັດຕ່າງໆເປັນເງິນ 2,39 ຕື້ກີບ, ເປັນເງິນໂດລາ 641.999 ໂດລາສະຫະລັດ, ເປັນເງິນບາດ 5,77 ລ້ານບາດ ແລະ ວັດຖຸຕ່າງໆມູນຄ່າ 2,91 ຕື້ກີບ. ໄດ້ໃຫ້ການຊ່ວຍເຫລືອສົງເຄາະປະຊາຊົນຜູ້ປະສົບໄພທຳມະຊາດ, ຜູ້ຍົກຍ້າຍຖິ່ນຖານ ແລະ ຜູ້ດ້ອຍໂອກາດໃນຂອບເຂດທົ່ວປະເທດເປັນເຄື່ອງອຸປະໂພກ-ບໍລິໂພກຈຳນວນ 205.054 ຄອບຄົວ, ມູນຄ່າ 49,84 ຕື້ກີບ. ໄດ້ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດ ຕາມດຳລັດ 343/ນຍ ໃຫ້ເປົ້າໝາຍບູລິມະສິດໄດ້ 11.279 ທ່ານ ເທົ່າກັບ 26,04% ຂອງແຜນ 5 ປີ (43.314 ທ່ານ) ເປັນເງິນ 269,95 ຕື້ກີບ ແລະ ເປົ້າໝາຍທົ່ວໄປ 3.888 ທ່ານ ເປັນເງິນ 32,04 ຕື້ກີບ; ໄດ້ລະດົມສັງຄົມປະກອບສ່ວນປຸກສ້າງເຮືອນໃຫ້ພະນັກງານປະຕິບັດອາວຸໂສ ຈຳນວນ 29 ຫຼັງ ມູນຄ່າ 1.846 ລ້ານກີບ, ປຸກເຮືອນໃຫ້ພະນັກງານເສຍອົງຄະໄດ້ 5 ຫຼັງ ມູນຄ່າ 195 ລ້ານກີບ ແລະ ແກ້ໄຂບຳນານຄືນຕາມດຳລັດ 241/ນຍ ໄດ້ຈຳນວນ 846 ທ່ານ.

ວຽກງານຜູ້ສູງອາຍຸ ກໍໄດ້ສືບຕໍ່ປັບປຸງບູລະນະການຈັດຕັ້ງຂອງຄະນະກຳມະການແຫ່ງຊາດ ເພື່ອຜູ້ອາຍຸສູງ ແລະ ພິ ການ ນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນເປັນລະບົບດີກວ່າເກົ່າ, ສ້າງເງື່ອນໄຂໃຫ້ອົງການພາກລັດ, ເອກະຊົນ, ຄອບຄົວ ແລະ ສັງຄົມ ມີສ່ວນຮ່ວມໃນການເບິ່ງແຍງດູແລຊ່ວຍເຫລືອ ຜູ້ສູງອາຍຸທາງດ້ານວັດຖຸ ແລະ ຈິດໃຈ ນັບມື້ຫຼາຍຂຶ້ນດ້ວຍການຈັດງານສະເຫຼີມສະຫຼອງວັນສາກົນຜູ້ສູງອາຍຸ ຍ່າງເພື່ອສຸຂະພາບ, ຈັດການພົບປະແລກປ່ຽນຄວາມຄິດເຫັນເຊິ່ງກັນ ແລະ ກັນ ລວມທັງການກວດສຸຂະພາບໂດຍບໍ່ເສຍຄ່າໃນແຕ່ລະປີ. ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ບັນດາສະມາຄົມຄົນພິການໄດ້ເຄື່ອນໄຫວວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງຄົນພິການນັບມື້ກວ້າງອອກ, ເຊິ່ງປັດຈຸບັນມີ 7 ສະມາຄົມຄົນພິການ, ມີສະມາຊິກທັງໝົດ 69.161 ຄົນ, ຍິງ 22.051 ຄົນ ເທົ່າກັບ 8 % ຂອງຄົນພິການທັງໝົດໃນຂອບເຂດທົ່ວປະເທດ.

## 4. ດ້ານຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

1) **ດ້ານຖະແຫຼງຂ່າວ**: ໄດ້ປັບປຸງລະບົບສື່ສານມວນຊົນໃຫ້ທັນສະໄໝ ແລະ ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ຕອບສະໜອງຂໍ້ມູນຂ່າວສານໃຫ້ແກ່ສັງຄົມໄດ້ເລິກເຊິ່ງ ແລະ ກວ້າງຂວາງຂຶ້ນ, ໄດ້ຫັນປ່ຽນລະບົບ Analog ໄປສູ່ລະບົບ Digital ທີ່ທັນສະໄໝເທື່ອລະກ້າວ, ໄດ້ປັບປຸງ ແລະ ພັດທະນາສະຖານີວິທະຍຸກະຈາຍສຽງທັງຢູ່ສູນກາງ ແລະ ທ້ອງຖິ່ນໃຫ້ດີຂຶ້ນ, ໄດ້ໂຄສະນາເຜີຍແຜ່ມະຕິຕ່າງໆຂອງພັກ, ແນວທາງນະໂຍບາຍຂອງລັດໄດ້ປະມານ 700 ຊົ່ວ ໂມງຕໍ່ວັນ ຂອງບັນດາສະຖານີໃນທົ່ວປະເທດ, ອອກອາກາດເປັນພາສາລາວ, ມົ້ງ, ກຶມມຸ, ຝຣັ່ງ, ອັງກິດ, ຂະແມ, ໄທ, ຫວຽດ ນາມ ແລະ ຈີນ. ປະຈຸບັນມີສະຖານີວິທະຍຸທັງໝົດ 63 ສະຖານີ, ໃນນັ້ນ ຢູ່ສູນກາງ 11 ສະຖານີ, ແຂວງ ມີ 19 ສະຖານີ ແລະ ເມືອງ 33 ສະຖານີ. ສະຖານີກະຈາຍສຽງພາກພື້ນດິນກວມໄດ້ 95% ຂອງພື້ນທີ່ທົ່ວປະເທດ (ແຜນການ: 95%), ສື່ໂທລະພາບກໍໄດ້ຮັບການພັດທະນາດ້ານເຕັກນິກ ແລະ ເນື້ອໃນລາຍການ. ປະຈຸບັນທົ່ວປະເທດມີສະຖານີໂທລະພາບທັງໝົດ 37 ສະຖານີ (ເອກະຊົນ 3 ສະຖານີ ແລະຖ່າຍທອດຕໍ່ຕ່າງປະເທດ 5 ສະຖານີ) ໃນນັ້ນ ຢູ່ສູນກາງ 9 ສະຖານີ, ແຂວງ 17 ສະຖານີ ແລະ ເມືອງ 11 ສະຖານີ, ໄດ້ອອກ

ອາກາດພາບ ແລະ ສຽງທາງພາກພື້ນດິນ ກວມ 80% ແລະ ຜ່ານດາວທຽມກວມເອົາ 100% ຂອງພື້ນທີ່ທົ່ວປະເທດ ແລະ ຫຼາຍປະເທດໃນພາກພື້ນ ແລະໃນໂລກທາງອິນເຕີເນັດ. ສະຖານີທ້ອງຖິ່ນ ຍັງສາມາດອອກອາກາດເພີ້ມຢ່າງໜ້ອຍ 2-3 ຊົ່ວໂມງຕໍ່ວັນ (ສໍາລັບລາຍການທີ່ຜະລິດເອງ). ສື່ສິ່ງພິມກໍ່ເພີ່ມຂຶ້ນທັງທາງດ້ານປະ ລິມານ ແລະ ຄຸນນະພາບ, ປະຈຸບັນ ມີຈໍານວນ 127 ສະບັບ, ມີໜັງສືພິມ 27 ສະບັບ, ໃນນັ້ນ ເປັນໜັງສືພິມລາຍວັນ 11 ສະ ບັບ, ໄດ້ຂະຫຍາຍເຄື່ອຂ່າຍໂຮງພິມໜັງສືພິມປະຊາຊົນຢູ່ແຂວງຈໍາປາສັກ 1 ແຫ່ງ, ໄດ້ສໍາເລັດການຕິດຕັ້ງໂທລະໂຄ່ງໃຫ້ແກ່ບ້ານຕ່າງໆໃນທົ່ວປະເທດ ຈໍານວນ 4.635 ບ້ານ (ໃນຈໍານວນ 8.662 ບ້ານ), ໃນນັ້ນ ບ້ານ 3 ສ້າງ ຈໍານວນ 148 ບ້ານ, ເມືອງສາມສ້າງທີ່ໄດ້ຕິດຕັ້ງໂທລະໂຄ່ງ ຈໍານວນ 63 ເມືອງ.

2) **ດ້ານວັດທະນາທໍາ**: ໄດ້ຮັບການສືບທອດປົກປັກຮັກສາພັດທະນາມໍລະດົກວັດທະນະທໍາອັນດີງາມທີ່ເປັນເອ ກະລັກຂອງປະຊາຊົນລາວບັນດາເຜົ່າ, ຊຸກຍູ້ສົ່ງເສີມການປະດິດຄິດແຕ່ງສິລະປະ-ວັນນະຄະດີ, ລາຍການສະແດງຕ່າງໆໃຫ້ອຸດົມຮັ່ງມີ ແລະ ມີຫຼາຍສີສັນ. ວຽກງານພິມໄດ້ມີການຂະຫຍາຍຕົວຢ່າງກວ້າງຂວາງທັງທາງດ້ານປະລິມານ ແລະ ຄຸນນະ ພາບ, ໄດ້ເອົາໃຈໃສ່ກວດກາຄຸ້ມຄອງການພິມ, ສິ່ງພິມພາຍໃນ ແລະນໍາເຂົ້າຈາກຕ່າງປະເທດ, ຊຸກຍູ້ບັນດາການຈັດຕັ້ງ, ບຸກ ຄົນ ແລະ ນິຕິບຸກຄົນຂຽນ, ແປ ແລະ ພິມປຶ້ມປະເພດຕ່າງໆ, ຈັດຕັ້ງບັ້ນແຂ່ງຂັນກວດບົດປະພັນວັນນະຄະດີ ເນື່ອງໃນບັ້ນປຸກລະດົມການຈັດຕັ້ງປະຕິບັດວຽກງານ 3 ສ້າງ ແລະ ໃນໂອກາດວັນສໍາຄັນຂອງພັກ ແລະ ຂອງຊາດ, ຄັດເລືອກບົດປະພັນສົ່ງໄປແຂ່ງຂັນຊີງລາງວັນລະດັບອາຊຽນ ແລະ ອະນຸພາກພື້ນຈໍານວນຫຼາຍເລື່ອງ. ໃນທົ່ວປະເທດຫໍສະໝຸດທັງໝົດທີ່ເປັນຂອງລັດ ແລະ ອົງການຈັດຕັ້ງສາກົນ ຈໍານວນ 1.134 ແຫ່ງເຊິ່ງໄດ້ໃຫ້ບໍລິການຄວາມຮູ້ຂໍ້ມູນຂ່າວສານ; ໄດ້ນໍາປຶ້ມ ແລະ ສິ່ງພິມ ໄປບໍລິການຮັບໃຊ້ປະຊາຊົນ, ໂຮງຮຽນ ແລະ ສະຖາບັນການສຶກສາຕ່າງໆ. ຊຸກຍູ້ຂະບວນການສ້າງຄອບຄົວ, ບ້ານ ແລະ ກຸ່ມບ້ານວັດທະນະທໍາໄດ້ຢ່າງກວ້າງຂວາງ. ນັບແຕ່ປີ 1997 ເຖິງ ປີ 2015 ທົ່ວປະເທດມີຄອບຄົວວັດທະນະທໍາທັງໝົດ 784.411 ຄອບຄົວ ເທົ່າກັບ 66,14% ຂອງຄອບຄົວໃນທົ່ວປະເທດ, ສ້າງບ້ານວັດທະນະທໍາໄດ້ 4.821 ບ້ານ ເທົ່າກັບ 57,03% ຂອງຈໍານວນບ້ານໃນທົ່ວປະເທດ ແລະ ກຸ່ມບ້ານວັດທະນະທໍາ ມີ 105 ກຸ່ມບ້ານ ເທົ່າກັບ 9,95%.

ໄດ້ສົມທົບກັບທ້ອງຖິ່ນໃນການຄຸ້ມຄອງສະຖານບູຮານທີ່ພົບໃໝ່ ແລະ ປັບປຸງສະຖານທີ່ເກົ່າແກ່ຊຸດໂຊມຈໍານວນໜຶ່ງ ເຊັ່ນ: ສໍາເລັດການກໍ່ສ້າງຫໍຫຼັກເມືອງວຽງຈັນ ນະຄອນຫຼວງວຽງຈັນ, ການກໍ່ສ້າງຫໍພະບາງ. ສໍາຫຼວດຄົ້ນຄ້ວາ ແລະ ກອບກູ້ເອົາວັດຖຸບູຮານທີ່ຢູ່ພື້ນດິນມາປົກປັກຮັກສາໄວ້ ແລະ ສໍາຫຼວດແຫຼ່ງວັດທະນາທໍາຮ່ອງຮ່ອຍປະຫວັດສາດ, ບູຮານສະຖານ ແລະ ສະຖານທີ່ທາງປະຫວັດສາດ ເພື່ອສະເໜີຂໍຮັບຮອງເຂົ້າເປັນມໍລະດົກແຫ່ງຊາດໄດ້ 1 ແຫ່ງ ຄື: ເມືອງເກົ່າສຸວັນນະໂຄມຄໍາ ແຂວງບໍ່ແກ້ວ. ໄດ້ເປັນເຈົ້າການໃນການພັດທະນາ ແລະ ສົ່ງເສີມວຽກງານສະຖາປັດຕະຍະກໍາ ແລະ ປະຕິມະກໍາທີ່ມີຄຸນຄ່າ ເຊັ່ນ: ການປັ້ນຫຼໍ່ຕ່າງໆ, ໄດ້ສໍາເລັດການປັ້ນຫຼໍ່ຮູບຜູ້ນໍາລຸ້ນທໍາອິດຂອງການປະຕິວັດລາວ ເຊິ່ງໄລຍະທີ 1 ສໍາເລັດການປັ້ນຮູບຫຼໍ່ປະທານ ໄກສອນ ພົມວິຫານ ແລະ ຕິດຕັ້ງຢູ່ເມືອງວຽງໄຊ ແຂວງຫົວພັນ ແລະ ແຂວງສະຫວັນນະເຂດ, ໄລຍະທີ 2 ສໍາເລັດການປັ້ນຮູບຫຼໍ່ທ່ານຜູ້ນໍາລຸ້ນທໍາອິດ ຄື: ທ່ານ ພູມີ ວົງວິຈິດ, ທ່ານ ສີສົມພອນ ລໍວັນໄຊ, ທ່ານ ພູນ ສີປະເສີດ, ທ່ານ ສີທົນ ກົມມະດໍາ, ທ່ານ ໄຟດ່າງ ລໍເບຼຍຢາວ ແລະ ທ່ານ ຕູຢາ ໄຊຈູ ພ້ອມທັງນໍາໄປຕິດຕັ້ງຢູ່ບ້ານເກີດເມືອງນອນຂອງເພິ່ນ ຕາມການຕົກລົງຂອງຂັ້ນເທິງ.

3) **ວຽກງານທ່ອງທ່ຽວ**: ມີການຂະຫຍາຍຕົວຢ່າງຕັ້ງຫນ້າ ໃນໄລຍະປີ 2011-2014 ມີນັກທ່ອງທ່ຽວເຂົ້າມາ ສປປ ລາວ ແລະ ລາຍໄດ້ຈາກການທ່ອງທ່ຽວໄດ້ເພີ່ມຂຶ້ນໃນແຕ່ລະປີ ດັ່ງຕົວເລກສະຖິຕິທີ່ສະແດງໃນຕາຕະລາງລຸ່ມນີ້:

**ຕາຕະລາງ 10: ຕາຕະລາງຈໍານວນນັກທ່ອງທ່ຽວ ແລະ ລາຍຮັບຈາກການທ່ອງທ່ຽວ**

| ລາຍການ | ຫົວໜ່ວຍ | ປີ 2011 | ປີ 2012 | ປີ 2013 | ປີ 2014 | ຄາດຄະເນ ປີ 2015 |
|---|---|---|---|---|---|---|
| ຈໍານວນ ນັກທ່ອງທ່ຽວ | ເທື່ອຄົນ | 2.723.564 | 3.330.072 | 3.779.490 | 4.158.719 | 4.684.429 |
| ອັດຕາເພີ້ມໃນ ແຕ່ລະປີ | % | 7 | 7,2 | 8,4 | 7,9 | 13 |
| ລາຍຮັບ | ໂດລາ | 406.184.338 | 506.022.586 | 595.909.127 | 641.636.543 | 725.365.681 |

ໃນປີ 2014 ທົ່ວປະເທດມີແຫຼ່ງທ່ອງທ່ຽວ 1.916 ແຫ່ງ; ໃນນັ້ນ,ເປັນແຫຼ່ງທ່ອງທ່ຽວທໍາມະຊາດ 1.093 ແຫ່ງ, ແຫຼ່ງທ່ອງທ່ຽວວັດທະນະທໍາ 541 ແຫ່ງ ແລະ ແຫຼ່ງທ່ອງທ່ຽວປະຫວັດສາດ 282 ແຫ່ງ; ໃນນັ້ນ, ໄດ້ສໍາຫຼວດແລ້ວ 145 ແຫ່ງ;

ໄດ້ສຳຫຼວດ, ຈັດສັນພ້ອມທັງກຳນົດແນວຄວາມຄິດໃນການພັດທະນາ ຈຳນວນ 24 ແຫ່ງ, ມີແຫຼ່ງທ່ອງທ່ຽວມໍ ລະດົກໂລກ 2 ແຫ່ງ, ມີແຫຼ່ງທ່ອງທ່ຽວມໍລະດົກແຫ່ງຊາດ 20 ແຫ່ງ. ໃນປີ 2015 ທົ່ວປະເທດມີບໍລິສັດທ່ອງທ່ຽວ 368 ບໍລິສັດ ແລະ 54 ສາຂາ, ມີໂຮງແຮມ ທັງໝົດ 542 ແຫ່ງ ມີຫ້ອງ 21.597 ຫ້ອງ, ເຮືອນພັກ 1.907 ແຫ່ງ ມີ 26.791 ຫ້ອງ, ຮ້ານອາຫານ, ພັດຕະຄານ ທັງໝົດ 1.744 ແຫ່ງ, ຈຳນວນສະຖານບັນເທີງ 168 ແຫ່ງ.

## 5. ດ້ານຍຸຕິທຳ:

ໄດ້ປະຕິບັດຍຸດທະສາດລັດແຫ່ງກົດໝາຍຕາມທິດສ້າງລັດທີ່ມາຈາກປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາ ຊົນຢ່າງແທ້ຈິງ. ໄດ້ເປັນໃຈກາງໃນການປະສານສົມທົບກັບພາກສ່ວນຕ່າງໆໃນການຄົ້ນຄວ້າປະກອບຄຳເຫັນຕໍ່ການສ້າງຮ່າງກົດໝາຍໃໝ່ ແລະ ປັບປຸງ ກົດໝາຍເກົ່າ ໄດ້ 73 ເທື່ອສະບັບ, ລັດຖະບັນຍັດ 43 ເທື່ອສະບັບ ແລະ ດຳລັດ 134 ເທື່ອສະບັບ; ໃຫ້ຄຳເຫັນທາງດ້ານກົດໝາຍ 75 ແລະ ເຊັນສັນຍາຕ່າງໆ 66 ເທື່ອສະບັບ. ໂຄສະນາກົດໝາຍໃຫ້ປະຊາຊົນບັນດາເຜົ່າຢູ່ບ້ານ ແລະ ກຸ່ມບ້ານໄດ້ 14.708 ເທື່ອ, ມີຜູ້ຟັງຫຼາຍກວ່າ 2 ລ້ານຄົນ ເປັນຍິງຫຼາຍກວ່າ 6 ແສນຄົນ; ນອກຈາກນີ້, ຍັງໄດ້ໂຄສະນາເຜີຍແຜ່ກົດໝາຍປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກອາຍຸຕໍ່າກວ່າ 18 ປີ ໄດ້ 990 ບ້ານ ແລະ 105 ໂຮງຮຽນ ມີຜູ້ເຂົ້າຟັງທັງໝົດ 201.464 ຄົນ. ພິມປຶ້ມ ລວມກົດໝາຍ (90 ກວ່າກົດໝາຍ) ໄດ້ 122.412 ຫົວ, ແຈກຢາຍປຶ້ມລວມກົດໝາຍໃຫ້ທຸກໆບ້ານ ແລະ ກຸ່ມບ້ານ ບ່ອນລະ 1 ຊຸດ; ສ້າງຄອບຄົວປອດຄະດີໄດ້ 697.176 ຄອບຄົວ ທຽບໃສ່ແຜນການປະຕິບັດໄດ້ລື່ນຄາດໝາຍ 74,29%, ສ້າງບ້ານປອດຄະດີໄດ້ 6.160 ບ້ານ; ສ້າງຄວາມເຂັ້ມແຂງໃຫ້ແກ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານໄດ້ 5.534 ໜ່ວຍ, ສາມາດແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານໄດ້ 16.160 ຂໍ້ຂັດແຍ່ງ ໃນຈຳນວນ 17.000 ກວ່າຂໍ້ຂັດແຍ່ງ; ສ້າງບຸກຄະລາກອນກົດໝາຍຂັ້ນຕົ້ນເລັ່ງລັດໃຫ້ບ້ານ ແລະ ກຸ່ມບ້ານໄດ້ 28.057 ຄົນ ເປັນຍິງ 5.813 ຄົນ; ໃນນີ້, ພະນັກງານຫຼັກແຫຼ່ງຂອງບ້ານ ແລະ ກຸ່ມບ້ານມີ 22.266 ຄົນ. ຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ 5.953 ເລື່ອງ ເທົ່າກັບ 53,1% ຂອງຈຳນວນຄຳຕັດສິນຂອງສານທີ່ມີຢູ່ ທຽບໃສ່ຄາດໝາຍທີ່ວາງໄວ້ແມ່ນຕໍ່າຫຼາຍ (70%), ເກັບກູ້ໜີ້ສິນ ແລະ ຄ່າປັບໄໝໃຫ້ລັດ ແລະ ຜູ້ຖືກເສຍຫາຍໄດ້ 63,28 ລ້ານກວ່າກີບ, 43 ລ້ານກວ່າບາດ ແລະ 8,1 ລ້ານໂດລາສະຫະລັດ. ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດໄດ້ 85 ເລື່ອງ. ໃຫ້ການຢັ້ງຢືນຄວາມຖືກຕ້ອງຂອງເອກະສານໄດ້ 73.898 ສະບັບ, ເກັບຄ່າບໍລິການ ແລະ ຄ່າທຳນຽມໄດ້ 9.350 ລ້ານກີບ.

ສຳລັບວຽກງານຍຸຕິທຳຮາກຖານ ແລະ ວຽກງານ 3 ສ້າງ ຢູ່ໃນ 52 ເມືອງເປົ້າໝາຍ ແມ່ນສຸມໃສ່ສ້າງ ແລະ ປັບປຸງກົດໝາຍເປັນຕົ້ນ ສ້າງ ແລະ ປະມວນກົດໝາຍແພ່ງ ແລະ ກົດໝາຍອາຍາ; ວຽກງານທະບຽນສານ, ວຽກງານທະບຽນຄອບຄົວ, ສັນຊາດ, ການເອົາເດັກໄປລ້ຽງເປັນລູກ ແລະ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

## 6. ການພັດທະນາປະຊາກອນ, ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມກ້າວໜ້າຂອງ ແມ່ຍິງ ແລະ ວຽກງານແມ່ ແລະ ເດັກ

1) **ການພັດທະນາປະຊາກອນ**: ປະຈຸບັນ, ປະຊາກອນຂອງ ສປປ ລາວ ມີຈຳນວນທັງໝົດ 6,49 ລ້ານຄົນ (ປີ 2015) ເຫັນວ່າມີໜ້ອຍຖ້າທຽບໃສ່ບັນດາປະເທດເພື່ອນບ້ານ ແລະ ປະຊາກອນສ່ວນໃຫຍ່ເປັນຄົນໜຸ່ມ (ອາຍຸຕໍ່າກວ່າ 25 ປີ) ກວມເຖິງ 60% ຂອງປະຊາກອນທັງໝົດ ຊຶ່ງເປັນກຳລັງແຮງຫຼັກຂອງປະເທດ ແຕ່ການປະກອບສ່ວນຂອງແຮງງານເຫຼົ່ານີ້ຍັງຕໍ່າ ເນື່ອງຈາກປະຊາກອນໜຸ່ມເຫຼົ່ານັ້ນມີລະດັບສີມືຕໍ່າ ບໍ່ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນໄລຍະປະຈຸບັນ, ເຮັດໃຫ້ເສຍໂອກາດທີ່ຈະໄດ້ຮັບປະໂຫຍດຈາກການປັນຜົນຂອງປະຊາກອນ (demographic dividen). ສະນັ້ນ, ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກການມີປະຊາກອນໜຸ່ມ ພັກ ແລະ ລັດຖະບານໄດ້ເອົາໃຈໃສ່ປັບປຸງ ແລະ ພັດທະນາຊັບພະຍາກອນມະນຸດ ເປັນຕົ້ນແມ່ນ ເພີ່ມທຶນຮອນໃສ່ຂະແໜງສຶກສາ ແລະ ສາທາລະນະສຸກເພື່ອໃຫ້ຄົນໄດ້ຮັບການສຶກສາ, ມີຄວາມຮູ້ເພີ່ມຂຶ້ນ, ມີສຸຂະພາບແຂງແຮງ; ພ້ອມກັນນັ້ນ, ກໍໄດ້ເອົາໃຈໃສ່ພັດທະນາສີມືໃຫ້ກຳລັງແຮງງານໃຫ້ມີສີມືສູງຂຶ້ນ.

2) **ການພັດທະນາ ແລະ ສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ**: ສະຫະພັນແມ່ຍິງລາວ ໄດ້ເອົາໃຈໃສ່ ໂຄສະນາເຜີຍແຜ່ແນວທາງນະໂຍບາຍຂອງ ພັກ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ມູນເຊື້ອປະຫວັດສາດຂອງຊາດ, ຂອງພັກ ແລະ ຂອງອົງການຈັດຕັ້ງມະຫາຊົນ, ສົນທິສັນຍາຊີດໍ, ບົດບາດຍິງ-ຊາຍ, ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ດ້ວຍຫຼາຍຮູບການ ເຊິ່ງໃນ 5 ປີຜ່ານມາ ສາມາດຈັດຕັ້ງການເຊື່ອມຊຶມໄດ້ 39.691 ຄັ້ງ, ມີຜູ້ເຂົ້າຮ່ວມ 3,61 ລ້ານຄົນ. ຈັດພິມໜັງສືພິມແມ່ຍິງລາວ, ວາລະສານສາວລາວ 469.200 ຫົວ, ຈັດລາຍການຮອບຮູ້ຄູ່ແມ່ຍິງລາວ ໄດ້ 560 ລາຍການ ແລະ ໂທລະພາບໄດ້ 280 ລາຍການ. ສື່ຂອງ ສສຍລ

ໄດ້ຮັບການປັບປຸງ, ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ເຂົ້າເຖິງແຫຼ່ງຂໍ້ມູນ ຂ່າວສານທີ່ເປັນປະໂຫຍດຕໍ່ການພັດທະນາຕົນເອງ, ພັດທະນາການຈັດຕັ້ງ; ໄດ້ປັບປຸງຫ້ອງມູນເຊື້ອສະຫະພັນແມ່ຍິງລາວທັງດ້ານເນື້ອໃນ ແລະ ສະຖານທີ່, ໄດ້ນໍາພາຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 3 ດີ: ພົນລະເມືອງດີ, ພັດທະນາດີ, ສ້າງຄອບຄົວດີມີຄວາມຜາສຸກ ຕິດພັນກັບການປະຕິບັດໜ້າທີ່ວິຊາສະເພາະ, ວຽກງານສາມສ້າງ ແລະ ຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ; ແມ່ຍິງລາວສ່ວນຫຼາຍ ມີຄວາມຮັບຮູ້ເຂົ້າໃຈຕໍ່ການຮັກສາສຸຂະພາບ ແລະ ເຂົ້າເຖິງການບໍລິການດ້ານສາທາລະນະສຸກ. ແມ່ຍິງ ແລະ ເດັກຍິງ ໄດ້ຍົກລະດັບການສຶກສາ ມີຈໍານວນເພີ່ມຂຶ້ນ ເຊິ່ງເປັນການປະກອບສ່ວນສ້າງຄອບຄົວ ແລະ ບ້ານວັດທະນະທໍາ, ຄອບຄົວ ແລະ ບ້ານພັດທະນາ ເຮັດໃຫ້ປະກົດການຫຍໍ້ທໍ້ໃນຖັນແຖວແມ່ຍິງ, ໃນຄອບຄົວ ແລະ ສັງຄົມ ໄດ້ຮັບການແກ້ໄຂດີຂຶ້ນ.

ສະຫະພັນແມ່ຍິງແຕ່ລະຂັ້ນໄດ້ຮັບການປັບປຸງໃຫ້ມີຄວາມໜັກແໜ້ນເຂັ້ມແຂງໃນດ້ານການເມືອງ-ແນວຄິດ, ການຈັດ ຕັ້ງ ແລະ ແບບແຜນວິທີການນໍາພາ-ແບບແຜນວິທີເຮັດວຽກ. ປະຈຸບັນມີສະມາຊິກສະຫະພັນແມ່ຍິງ ຈໍານວນ 930.963 ຄົນ, ໜ່ວຍສະຫະພັນແມ່ຍິງ 10.636 ໜ່ວຍ, ຮາກຖານສະຫະພັນແມ່ຍິງ 1.550 ຮາກຖານ, ສະມາຊິກສະຫະພັນແມ່ຍິງ, ພະນັກງານເພດຍິງ ໄດ້ຮັບການບໍາລຸງສ້າງດ້ານທິດສະດີການເມືອງ ແລະ ວິຊາສະເພາະມີຈໍານວນເພີ່ມຂຶ້ນ; ພະນັກງານຄຸ້ມຄອງ-ນໍາພາເພດຍິງແຕ່ຂັ້ນຮາກຖານບ້ານຈົນຮອດຂັ້ນສູນກາງ ມີຈໍານວນເພີ່ມຂຶ້ນເປັນຕົ້ນ: ສະມາຊິກສະພາເພດຍິງ ກວມ 25%, ສະມາຊິກສະຫະ ພັນແມ່ຍິງປະກອບໃນຄະນະບໍລິຫານງານພັກເມືອງ 404 ສະຫາຍ, ກວມ 12,34%, ຄະນະບໍລິ ຫານງານພັກແຂວງ 56 ສະຫາຍ ກວມ 10%, ຄະນະປະຈໍາພັກແຂວງ 8 ສະຫາຍ ກວມ 4,62%, ຄະນະພັກກະຊວງ-ອົງການ 54 ສະຫາຍ ກວມ 15%, ຄະນະປະຈໍາພັກກະຊວງອົງການ 13 ສະຫາຍ ກວມ 16,84%. ສະຫະພັນແມ່ຍິງແຕ່ລະຂັ້ນໄດ້ເຂົ້າຮ່ວມຄົ້ນຄວ້າ, ປຶກສາຫາລືແກ້ໄຂບັນຫາທີ່ພົວພັນເຖິງສິດຜົນປະໂຫຍດອັນຊອບທໍາຂອງແມ່ຍິງ ແລະ ເດັກນ້ອຍ; ເປັນເຈົ້າການປະກອບຄໍາເຫັນຕໍ່ການສ້າງ ແລະ ປັບປຸງນະໂຍບາຍ, ກົດໝາຍ ແລະ ນິຕິກໍາຕ່າງໆ, ໄດ້ສໍາເລັດການສ້າງກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ, ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ໄດ້ຂະຫຍາຍຕາໜ່າງໃຫ້ຄໍາປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ໄດ້ 11 ແຂວງ ເພື່ອເຮັດໜ້າທີ່ໃຫ້ຄໍາປຶກສາ ແລະ ຊ່ວຍເຫຼືອແມ່ຍິງ ແລະ ເດັກນ້ອຍທີ່ມີບັນຫາໃນຄອບຄົວ ແລະ ສັງຄົມ ລວມທັງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຄວາມຮຸນແຮງໃນຄອບຄົວ  ແລະ ການຂູດຮີດທາງເພດ ຊຶ່ງໃນ 5 ປີຜ່ານມາສາມາດໃຫ້ຄໍາປຶກສາແກ່ແມ່ຍິງ ແລະ ເດັກນ້ອຍທີ່ມີບັນຫາໄດ້ ຈໍານວນ 100.579 ຄັ້ງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍໄດ້ຈໍານວນ 366 ຄົນ.

ພ້ອມກັນນັ້ນ, ສະຫະພັນແມ່ຍິງລາວ ໄດ້ຈັດຕັ້ງການຝຶກອົບຮົມວິຊາຊີບໃຫ້ແມ່ຍິງຜູ້ດ້ອຍໂອກາດ, ຜູ້ທຸກຍາກໄດ້ ຈໍານວນ 8.791 ຄົນ, ຜູ້ດ້ອຍໂອກາດໄດ້ 1.009 ຄົນ, ເປັນຍິງ 1.003 ຄົນ ເຊິ່ງເປັນການປະກອບສ່ວນສ້າງວຽກເຮັດງານ ທໍາ, ສ້າງລາຍຮັບໃຫ້ແກ່ແມ່ຍິງ ແລະ ຄອບຄົວ; ໄດ້ນໍາພາຈັດຕັ້ງວຽກງານກອງທຶນຢູ່ຂັ້ນບ້ານ ແລະ ຂັ້ນຮາກຖານຂອງສະ ຫະພັນແມ່ຍິງລາວ ເພື່ອສ້າງເງື່ອນໄຂໃຫ້ແມ່ຍິງໄດ້ເຂົ້າເຖິງແຫຼ່ງທຶນ ເພື່ອສ້າງເສດຖະກິດຄອບຄົວ, ສົ່ງເສີມການຜະລິດເປັນສິນຄ້າ, ການບໍລິການ ແລະ ອື່ນໆ ເຮັດໃຫ້ຊີວິດການເປັນຢູ່ຂອງແມ່ຍິງ ແລະ ຄອບຄົວດີຂຶ້ນ.

ໄດ້ສືບຕໍ່ພົວພັນຮ່ວມມືກັບອົງການຈັດຕັ້ງແມ່ຍິງປະເທດເພື່ອນມິດຍຸດທະສາດ, ບັນດາປະເທດອາຊຽນ ແລະ ປະ ເທດອື່ນໆ, ສໍາເລັດການເປັນເຈົ້າພາບກອງປະຊຸມລັດຖະມົນຕີອາຊຽນທີ່ຮັບຜິດຊອບວຽກງານແມ່ຍິງຄັ້ງທີ I ຊຶ່ງໄດ້ຮັບຮອງເອົາຖະແຫຼງການວຽງຈັນວ່າດ້ວຍ ການສົ່ງເສີມບົດບາດຍິງ-ຊາຍ ແລະ ການເປັນຄູ່ຮ່ວມຂອງແມ່ຍິງອາຊຽນ ເພື່ອສິ່ງແວດລ້ອມແບບຍືນຍົງ ເຮັດໃຫ້ບົດບາດຂອງແມ່ຍິງລາວນັບມື້ນັບສູງຂຶ້ນໃນເວທີສາກົນ.

3) **ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ**: ໄດ້ມີຄວາມຄືບໜ້າຫຼາຍດ້ານເປັນຕົ້ນ: ສໍາເລັດການສ້າງແຜນຍຸດທະສາດແຫ່ງຊາດ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ 5 ປີ ຄັ້ງທີ VII (2011-2015) ແລະ ໄດ້ຜັນຂະຫຍາຍເຂົ້າໃນແຜນຍຸດທະສາດຂອງຂະແໜງການ ແລະ ທ້ອງຖິ່ນ, ໄດ້ໂຄສະນາເຜີຍແຜ່ ແລະ ປູກຈິດສໍານຶກໃຫ້ພະນັກງານ-ລັດຖະກອນ ແລະ ປວງຊົນເພີ່ມຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ກັບບົດບາດຍິງ-ຊາຍ, ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ສິນທິສັນຍາຊີດໍ, ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ໄດ້ສ້າງເວບໄຊຂອງ ຄກມຊ (www.laoncaw.gov.la), ສ້າງ ແລະ ຈັດພິມເຄື່ອງມືໂຄສະນາເປັນຕົ້ນ: ບົດລາຍງານແຫ່ງຊາດປະຈໍາໄລຍະທີ 6 ແລະ 7 ກ່ຽວກັບການຈັດຕັ້ງປະຕິບັດສົນ ທິສັນຍາວ່າດ້ວຍການລົບລ້າງທຸກຮູບການຈໍາແນກຕໍ່ແມ່ຍິງ (ຊີດໍ) ໃນ ສປປ ລາວ, ສົນທິສັນຍາຊີດໍ, ຖະແຫຼງການໂດຮາ, ຈົດໝາຍຂ່າວ, ເຂັມຂັດເສື້ອກາໝາຍຄກມຊ ແລະ ອື່ນໆ. ໄດ້ປັບປຸງກົງຈັກການຈັດຕັ້ງຂອງຄະນະກໍາມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (ຄກມຊ), ຄະນະກໍາມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ (ຄກມ) ຂັ້ນກະຊວງ, ອົງ ການ, ແຂວງ, ນະຄອນຫຼວງ, ເມືອງ ແລະ ບ້ານຄຽງຄູ່ໄປກັບການສ້າງຕັ້ງກົງຈັກຊ່ວຍວຽກຂອງຄກມ ແຕ່ລະຂັ້ນເພື່ອໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດວຽກງານຕົວຈິງ; ຈັດສໍາມະນາ ແລະ ຝຶກອົບຮົມ

ກ່ຽວກັບການເຊື່ອມປົດບາດຍິງ-ຊາຍເຂົ້າໃນຂະແໜງການ ແລະ ທ້ອງຖິ່ນ, ໄດ້ນໍາເອົາວຽກງານສິດສະເໝີພາບຍິງ-ຊາຍ ແລະ ການຕ້ານການໃຊ້ຄວາມຮຸນແຮງໃນຄອບຄົວໂດຍສະເພາະຕໍ່ແມ່ຍິງ ແລະ ເດັກນ້ອຍເຂົ້າໃນມາດຕະຖານຄວາມທຸກຍາກ ແລະ ມາດຕະຖານການພັດທະນາ ເຊິ່ງໄດ້ດໍາເນີນການໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດໃນເຂດຈຸດສຸມລັດຖະບານ.

4) **ວຽກງານແມ່ ແລະເດັກ**: ໄດ້ສໍາເລັດໂດຍພື້ນຖານການປັບປຸງການຈັດຕັ້ງຂອງ ຄມດຊ ຢູ່ສູນກາງ 17 ຂະແໜງການ, ຢູ່ຂັ້ນແຂວງມີ 14 ແຂວງຕິດພັນກັບການເອົາໃຈໃສ່ປັບປຸງກອງເລຂາຂອງ ຄມດ ທຸກຂັ້ນ, ໄດ້ໂຄສະນາເຜີຍແຜ່ສິດທິເດັກ; ພິມ ແລະ ແຈກຢາຍປຶ້ມສົນທິສັນຍາສິດທິເດັກ ແລະ ອານຸສັນຍາ 2, ປຶ້ມການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄມດຊ, ປຶ້ມຍຸດທະສາດວຽກງານແມ່ ແລະ ເດັກ 2011-2015 ແລະ ປຶ້ມແຜນດໍາເນີນງານແຫ່ງຊາດວຽກແມ່ ແລະ ເດັກ 2011-2015 ແລະ ອື່ນໆ. ປະສານສົມທົບກັບກະຊວງສາທາລະນະສຸກ ແລະ ທ້ອງຖິ່ນສ້າງຂະບວນການສັກຢາກັນພະຍາດສາມາດບັນລຸໄດ້ 97% ລື່ນແຜນການທີ່ວາງໄວ້ (ຄາດໝາຍ: 95%). ໄດ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງເປີດຂະບວນການໄວໜຸ່ມລາວຫ່າງໄກຢາເສບຕິດ, ໄດ້ເລີ່ມປະຕິບັດໂຄງການທົດລອງຢູ່ໂຮງຮຽນປະຖົມ, ມັດທະຍົມທາດຂາວ ນະຄອນຫຼວງວຽງຈັນ. ໄດ້ສົມທົບກັບຄະນະກໍາມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງຈັດປະຖະກາຖາ, ກອງປະຊຸມວິທະຍາສາດ ແລະ ສໍາມະນາກ່ຽວກັບການຕ້ານ ແລະ ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ການປົກປ້ອງ ແລະ ລົບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ, ສໍາມະນາກ່ຽວກັບຂະບວນການສ້າງຄອບຄົວ, ບ້ານ, ເມືອງພັດທະນາໃຫ້ແກ່ພະນັກ ງານບັນດາກະຊວງ-ຂະແໜງການ, ຄູ-ອາຈານນັກຮຽນຈາກມຊໃນວັນເດັກສາກົນ ແລະ ວັນສໍາຄັນຕ່າງໆ. ໄດ້ລົງຊຸກຍູ້ວຽກແມ່ ແລະ ເດັກຢູ່ 4 ແຂວງພາກໃຕ້ ແລະ 6 ແຂວງພາກເຫນືອກ່ຽວກັບການປັບປຸງການຈັດຕັ້ງ ແລະ ຜັນຂະຫຍາຍແຜນຍຸດທະສາດ ແລະ ແຜນດໍາເນີນງານແຫ່ງຊາດ 2011-2015.

## 7. ການພັດທະນາເຍົາວະຊົນ ແລະ ຊາວໜຸ່ມ:

ໄດ້ສຶກສາອົບຮົມການເມືອງແນວຄິດໃຫ້ສະມາຊິກຊາວໜຸ່ມ, ເຍົາວະຊົນ ແລະ ອານຸຊົນທັນວາ 97% ຂອງຈໍານວນ ຊາວໜຸ່ມ ແລະ ເຍົາວະຊົນ (ລື່ນແຜນການ 37%), ໄດ້ຍົກລະດັບ ແລະ ຂະຫຍາຍພາຫະນະສື່ມວນຊົນຂອງຊາວໜຸ່ມ ໂດຍ ສະເພາະ ການສ້າງສະຖານີວິທະຍຸກະຈາຍສຽງຊາວໜຸ່ມສົນໄຊຍຸກໃໝ່ FM 90,0 MHZ. ໄດ້ເອົາໃຈໃສ່ພັດທະ ນາຊາວໜຸ່ມ ແລະ ເຍົາວະຊົນໃຫ້ມີຄວາມຮູ້ຄວາມສາມາດ, ມີວິຊາຊີບ, ມີຄວາມຊໍານານງານ ເພື່ອສາມາດຮອງຮັບຄວາມຕ້ອງການຂອງຕະຫຼາດ, ສ້າງແລະສົ່ງເສີມຜູ້ປະກອບການໜຸ່ມໃຫ້ນັບມື້ນັບຫຼາຍຂຶ້ນ.ໂຄງການກໍ່ສ້າງວັງເຍົາວະຊົນ ແລະ ຫໍມູນເຊື້ອຊາວໜຸ່ມ ແລະ ສູນພັດທະນາຊາວໜຸ່ມ-ເຍົາວະຊົນ ກໍ່ໄດ້ສຸມໃສ່ເຄື່ອນໄຫວວຽກງານເຝິກອົບຮົມຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ແກ່ຜູ້ນໍາພາຊາວໜຸ່ມ, ເຍົາວະຊົນ-ອານຸຊົນກ່ຽວກັບທິດສະດີ-ທັດສະນະດ້ານການນໍາພາກອງເຍົາວະຊົນ, ການຕັ້ງຄ້າຍເຍົາວະຊົນ ແລະ ໄດ້ມີການຈັດຕັ້ງຄ້າຍຕົວຈິງຂຶ້ນ ໂດຍມີເຍົາວະຊົນເຂົ້າຮ່ວມ 2.000 ຄົນ; ຈັດຝຶກອົບຮົມວິຊາຊີບ ໃຫ້ແກ່ຊາວໜຸ່ມໃນດ້ານຕ່າງໆ ເຊັ່ນ: ເສີມສວຍ ແລະ ຕັດຫຍິບ ຢູ່ແຂວງອຸດົມໄຊ, ໄຊຍະບູລີ, ແລະ ຢູ່ນະຄອນຫຼວງວຽງຈັນມີເມືອງໄຊເສດຖາ, ເມືອງຈັນທະບູລີ, ເມືອງສີໂຄດຕະບອງ ແລະ ເມືອງຊາຍຟອງ; ໄດ້ຊ່ວຍເຫຼືອຊາວໜຸ່ມທີ່ດ້ອຍໂອກາດຈໍານວນ 6 ສະຫາຍ ທີ່ຮຽນຈົບຫຼັກສູດເສີມສວຍ ແລະ ໄດ້ປະກອບທຶນຮອນໃຫ້ຈໍານວນໜຶ່ງ ເພື່ອໄປເປັນທຶນສົມທົບໃນການສ້າງອາຊີບ ແນ່ໃສ່ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ. ໄດ້ຈັດຝຶກອົບຮົມວຽກງານນັກຂ່າວ, ສື່ມວນຊົນໃນຂອບເຂດທົ່ວປະເທດ ທີ່ແຂວງບໍລິຄໍາໄຊ ໂດຍມີຊາວໜຸ່ມເຂົ້າຮ່ວມ 50 ກ່ວາສະຫາຍ.

## 8. ວິທະຍາສາດ ແລະ ເຕັກໂນໂລຊີ:

ລັດຖະບານໄດ້ປັບປຸງ ແລະ ພັດທະນາວຽກງານວິທະຍາສາດ-ເຕັກໂນໂລຊີ ໂດຍການຈັດສັນງົບປະມານພາຍໃນໃຫ້ວຽກງານຄົ້ນຄວ້າວິທະຍາສາດ ໃນແຕ່ລະປີ ເພື່ອຄົ້ນຄວ້າວິທະຍາສາດຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ ເປັນ ຕົ້ນ: ໂຄງການຄົ້ນຄວ້າສະກັດສ່ວນປະກອບທາງເຄມີສາດ ແລະ ທົດສອບຄວາມເປັນພິດຕໍ່ຈຸລັງມະເຮັງບາງຊະນິດ ສະກັດຈາກຕົ້ນມີນາງທີ່ທົ່ງພຽງສະຫວັນນະເຂດ, ໂຄງການຄົ້ນຄວ້າການສະກັດ ແລະ ນໍາໃຊ້ສານຊີວະພາບໃນການຈໍາກັດສັດຕູພືດຂອງເຂົ້າຢູ່ແຂວງອັດຕະປື, ໂຄງການຄົ້ນຄວ້າສຶກສາຊະນິດພັນພືດຜັກທີ່ໃຊ້ເປັນອາຫານ 4 ແຂວງພາກໃຕ້ (ສາລະວັນ, ເຊກອງ, ອັດຕະປື ແລະ ຈໍາປາສັກ), ໂຄງການຄົ້ນຄວ້າທ່າແຮງວິທະຍາສາດເຂດຈຸດສຸມພັດທະນາຂອງລັດຖະບານ, ໂຄງ ການຄົ້ນຄວ້າການອະນຸລັກຊະນິດພັນກ້ວຍ, ດອກເຜີ້ງທີ່ເປັນຢາ ແລະ ເຫັດແປກ ໃນບັນດາແຂວງພາກເໜືອ ໂດຍການນໍາໃຊ້ເຕັກໂນໂລຊີຊີວະພາບ, ໂຄງການຄົ້ນຄວ້າ-ຜະລິດທົດລອງນໍາໃຊ້ນໍ້າມັນເຊື້ອໄຟຊີວະພາບຈາກນໍ້າມັນພືດທີ່ໃຊ້ແລ້ວ, ຈາກໝາກເຍົາ ແລະ ໝາກເກົາ; ໂຄງການສ້າງຕົວແບບເຄື່ອງອົບແຫ້ງຜະລິດຕະພັນກະສິກໍາດ້ວຍຄວາມຮ້ອນແສງຕາເວັນ ແລະ ພະລັງງານຊີວະມວນ; ໂຄງການຄົ້ນຄວ້າສ້າງຫຸ່ນຍົນເກັບກູ້ ແລະ ທໍາລາຍລະເບີດ; ໂຄງການຄົ້ນຄວ້າການສ້າງສູນຂໍ້ມູນຂ່າວສານ ແລະ ໃຫ້ຄໍາປຶກສາດ້ານເຕັກໂນໂລຊີຂໍ້ມູນຂ່າວສານແກ່

ຊາວໜຸ່ມ; ໂຄງການຄົ້ນຄວ້າການພັດທະນາແບບຍືນຍົງຢູ່ສປປ ລາວ. ຮ່ວມມືດ້ານວິທະຍາສາດ ແລະ ເຕັກໂນໂລຊີກັບ ສສ.ຫວຽດນາມ ຄົ້ນຄວ້າ ແລະ ຜະລິດຝຸ່ນຊີວະພາບຢູ່ແຂວງໄຊຍະບູລີ ເຊິ່ງສາມາດຜະລິດໄດ້ 2.400 ໂຕນ/ປີ, ຄົ້ນຄວ້າການປູກ ແລະ ຜະລິດໝາກນ້ຳມັນ ແລະ ຕົ້ນໄມ້ເປັນຢາ; ໄດ້ປັບປຸງການຄົ້ນຄວ້າ ແລະ ບໍລິການໃຫ້ແກ່ສັງຄົມໃນວຽກງານຊັບສິນທາງປັນຍາ ເຊັ່ນ: ອອກໃບຢັ້ງຢືນການຈົດທະບຽນແບບອຸດສາຫະກຳ, ຢັ້ງຢືນການຈົດທະບຽນເຄື່ອງໝາຍການຄ້າ, ຢັ້ງຢືນການແຈ້ງຂໍ້ມູນລິຂະສິດ, ພິຈາລະນາແກ້ໄຂຂໍ້ຂັດແຍ່ງຊັບສິນທາງປັນຍາ, ໄດ້ກວດກາຄຸນນະພາບຜະລິດຕະພັນສິນຄ້ານຳເຂົ້າ, ຜະລິດແມ່ແບບຖັງຜອງຂະໜາດ 5 ລິດ.

ນອກນັ້ນ, ໄດ້ສ້າງ ແລະ ປັບປຸງນິຕິກຳທີ່ເປັນພື້ນຖານໃນຂົງເຂດວຽກງານວິທະຍາສາດ ແລະ ເຕັກໂນໂລຊີ ເປັນຕົ້ນແມ່ນສຳເລັດການສ້າງກົດໝາຍ 6 ສະບັບ ຄື: ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ, ກົດໝາຍວ່າດ້ວຍຄວາມປອດໄພດ້ານເຕັກໂນໂລຊີດ້ານຊີວະພາບ, ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕນິກ, ກົດໝາຍວ່າດ້ວຍການວັດ ແທກສະບັບປັບປຸງ, ກົດໝາຍວ່າດ້ວຍຊັບສິນທາງປັນຍາສະບັບປັບປຸງ, ກົດໝາຍວ່າດ້ວຍມາດຕະຖານ ແລະ ສ້າງດຳລັດ 2 ສະບັບຄື: ດຳລັດວ່າດ້ວຍກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ແລະ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍມາດຕະຖານ; ພ້ອມດຽວກັນນັ້ນ, ກໍໄດ້ສ້າງແຜນຮ່ວມມືກັບກະຊວງວິທະຍາສາດ-ເຕັກໂນໂລຊີຫວຽດນາມ ເພື່ອນຳເອົາວິທະຍາສາດທີ່ທັນສະໄໝຈາກພາຍນອກມາປັບປຸງ ແລະ ພັດທະນາໃຫ້ສອດຄ່ອງກັບສະພາບຂອງປະເທດເຮົາ; ສ້າງຮ່າງແຜນຍຸດທະສາດການພັດທະນາວິທະຍາສາດ ແລະ ເຕັກໂນໂລຊີຂອງ ສປປ ລາວ ໄລຍະ 2013-2020 ແລະ ວິໄສທັດຮອດປີ 2030.

## 9. ການເສີມສ້າງຄວາມສາມັກຄີທົ່ວປວງຊົນ:

ໄດ້ເອົາໃຈໃສ່ວຽກງານສຶກສາອົບຮົມການເມືອງ-ແນວຄິດໃຫ້ພະນັກງານ ດ້ວຍການເຜີຍແຜ່ແນວທາງນະໂຍບາຍຂອງພັກ, ໂຄສະນາຂະບວນການຈິດໃຈຮັກຊາດ ແລະ ນ້ຳໃຈປະຕິບັດຕິດພັນກັບນະໂຍບາຍສາມັກຄີ ແລະ ສິດສະເໝີພາບລະຫວ່າງປະຊາຊົນບັນດາເຜົ່າ, ສົ່ງເສີມສະຕິຊາດເປັນອັນໜຶ່ງອັນດຽວກັນຂອງຊົນເຜົ່າຕ່າງໆໃຫ້ກາຍເປັນກ້ອນກຳລັງແຫ່ງມະ ຫາສາມັກຄີຂອງການປົກປັກຮັກສາ ແລະ ສ້າງສາປະເທດຊາດ. ຮັກສາໄດ້ມູນເຊື້ອສາມັກຄີ, ເສີມຂະຫຍາຍຄວາມດຸໝັ່ນຂະ ຫຍັນພຽນຂອງຊົນເຜົ່າຕ່າງໆ, ໄດ້ປຸກລະດົມປະຊາຊົນທຸກຊົນເຜົ່າໃຫ້ມີຈິດໃຈເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໂດຍສະເພາະ ຊ່ວຍເຫຼືອພະນັກງານ, ເຈົ້າໜ້າທີ່ລົງເຄື່ອນໄຫວວຽກງານໃນທ້ອງຖິ່ນຂອງຕົນໃນການນຳພາການຜະລິດ, ປົວ ແປງຊີວິດການເປັນຢູ່ ແນໃສ່ຄຸ້ມຄອງສັງຄົມເພື່ອຕ້ານສົງຄາມຫັນປ່ຽນໂດຍສັນຕິຂອງພວກອິດທິກຳລັງປໍລະປັກ ກໍ່ຄືກຸ່ມຄົນ ທີ່ບໍ່ຫວັງດີ, ປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບຂອງຮາກຖານບ້ານ.

ການປະຕິບັດຄວາມສະເໝີພາບລະຫວ່າງປະຊາຊົນບັນດາເຜົ່ານັບມື້ມີການຮັບປະກັນເຮັດໃຫ້ເຂົາເຈົ້າໄດ້ເພີ່ມພູນຄູນສ້າງຄວາມສາມັກຄີປອງດອງປຶກແຜ່ນແໜ້ນໜາ, ເສີມຂະຫຍາຍສິດທິຄວາມເປັນເຈົ້າປະເທດຊາດ, ຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມເປັນເອກະລັກດ້ານຕ່າງໆຂອງແຕ່ລະຊົນເຜົ່າ. ບັນດາເຈົ້າກົກເຈົ້າເລົ່າ, ຫົວຫນ້າສີ້ງຊາວ, ຜູ້ສົ່ງຄຸນວຸດທິຂອງຊົນເຜົ່າຕ່າງໆໄດ້ຮັບການຝຶກອົບຮົມພ້ອມທັງສຶກສາອົບຮົມ, ຊຸກຍູ້ປຸກລະດົມລູກຫລານຂອງຕົນໃຫ້ມີຄວາມສາ ມັກຄີ, ປະກອບສ່ວນປົກປັກຮັກສາສ້າງສາພັດທະນາປະເທດຊາດບ້ານເມືອງຢ່າງຕັ້ງຫນ້າ.

ໄດ້ເອົາໃຈໃສ່ພັດທະນາ ແລະ ຂະຫຍາຍເສດຖະກິດຢູ່ທຸກບໍລິເວນຂອງປະຊາຊົນເຜົ່າຕ່າງໆອາໄສຢູ່, ໄດ້ສ້າງເງື່ອນໄຂ ແລະ ກາລະໂອກາດຂຸດຄົ້ນກຳລັງແຮງຂອງທຸກຊົນເຜົ່າພາຍໃນຊາດ, ສົມທົບກຳລັງແຮງສາກົນ ເຂົ້າໃນການພັດທະນາເຂດຊົນ ເຜົ່າທີ່ຫ່າງໄກສອກຫຼີກໄດ້ຫຼາຍຂຶ້ນ, ປະຊາຊົນໃນເຂດພູດອຍສາມາດປ່ຽນຈາກອາຊີບເຮັດໄຮ່ມາເຮັດອາຊີບອື່ນມີການຜະລິສິນ ຄ້າ, ມີເຮືອນຢູ່ຖາວອນ, ມີເນື້ອທີ່ທຳການຜະລິດ, ມີອາຊີບໝັ້ນທ່ຽງ ແລະ ສາມາດແກ້ໄຂຄວາມທຸກຍາກ, ມີຄວາມສະຫງົບ, ປະຊາຊົນໄປມາຫາສູ່ກັນສະດວກສະບາຍດີຂຶ້ນ ແລະ ມີສ່ວນຮ່ວມໃນຂະບວນການພັດທະນາ, ປະກອບສ່ວນທຶນຮອນ, ແຮງງານ ແລະ ຊັບພະຍາກອນອັນເປັນທ່າແຮງກັບທີ່ຫຼາຍຂຶ້ນອັນເນື່ອງມາຈາກພື້ນຖານໂຄງລ່າງ ແລະ ການເຂົ້າເຖິງການບໍລິການລັດໄດ້ຮັບການປັບປຸງດີຂຶ້ນ.

## 10. ການແກ້ໄຂປະກົດການຫຍໍ້ທໍ້ທາງສັງຄົມ:

ໄດ້ປະສານສົມທົບກັບຄະນະພັກ-ອຳນາດການປົກຄອງແຕ່ລະຂັ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຄົ້ນຄ້ວາແກ້ໄຂບັນຫາປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຄອບຄົວ ແລະສັງຄົມໂດຍການເຜີຍແຜ່, ປຸກລະດົມ, ໂຄສະນາ ແລະ ຂົນຂວາຍໃຫ້ປະຊາຊົນໃຫ້ຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບກົດໝາຍບ້ານເມືອງຢ່າງເຂັ້ມງວດ. ເລັ່ງໃສ່ຈັດຕັ້ງປະຕິບັດຫົວໜ່ວຍພື້ນ ຖານຄອບຄົວ, ບ້ານ ແລະ ເມືອງ ເພື່ອຕ້ານ ແລະ ສະກັດກັ້ນປະກົດການທີ່ບໍ່ດີ ແລະ ສິ່ງທີ່ກີດຂວາງການພັດທະນາ ເປັນຕົ້ນ: ການນຳໃຊ້ ແລະ ຄ້າຢາເສບຕິດ, ການຄ້າຂາຍເຖື່ອນ, ການງັດແງະປຸ້ນຈີ້ ແລະ ການກໍອາດສະຍາກຳອື່ນໆ.

ຈັດຕັ້ງປະຕິບັດໂຄງການເພື່ອນຊ່ວຍເພື່ອນເພື່ອຫຼຸດຜ່ອນການປະລະການຮຽນຂອງຊາວໜຸ່ມ-ໄວໜຸ່ມ, ຫຼຸດຜ່ອນການອຸປະຕິເຫດຕາມທ້ອງຖະໜົນ, ການລະເມີດກົດໝາຍຕ່າງໆ, ຊຸກຍູ້ໃຫ້ຊາວໜຸ່ມຫັນມາຫຼິ້ນກິລາຫຼາຍຂຶ້ນ; ໄດ້ຊຸກຍູ້ ປະຊາຊົນບັນດາເຜົ່າ, ບັນດາຊັ້ນຄົນໃຫ້ມີຄວາມສາມັກຄີ ແລະ ເປັນເຈົ້າການໃນການແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນຄອບຄົວ, ສັງຄົມ ໂດຍສະເພາະທີ່ເກີດຂຶ້ນກັບແມ່ຍິງ. ສົ່ງເສີມສຸກຂະພາບທາງດ້ານຈິດໃຈຂອງຊາວໜຸ່ມ ແລະ ເຍົາວະຊົນໃຫ້ດີຂຶ້ນໂດຍສ້າງພື້ນຖານໂຄງລ່າງເຕັກນິກ, ເພື່ອຮັບໃຊ້ໃນການພັດທະນາຊາວໜຸ່ມເຍົາວະຊົນ ເປັນຕົ້ນສ້າງສະໂມສອນຊາວໜຸ່ມ, ວັງເຍົາວະຊົນ, ສ້າງສູນພັດທະນາຊາວໜຸ່ມ ແລະ ເຍົາວະຊົນທັງປະກອບວັດຖຸ ແລະ ອຸປະກອນທີ່ຈຳເປັນ.

## 3.4.3. ການປົກປັກຮັກສາສິ່ງແວດລ້ອມ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດແບບຍືນຍົງ

ໄດ້ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະສິ່ງແວດລ້ອມ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍນໍ້າ ແລະ ຊັບພະຍາກອນແຫຼ່ງນໍ້າ, ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ ແລະ ປັບປຸງດຳລັດວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ດຳລັດວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ຍົກຍ້າຍຈັດສັນປະຊາກອນ; ໄດ້ຮ່າງດຳລັດວ່າດ້ວຍການຍົກລະດັບປ່າສະຫງວນແຂວງ (ພູຫີຜີ ແລະ ລະວີງລະເວີນ) ເປັນປ່າສະຫງວນແຫ່ງຊາດ, ຮ່າງດຳລັດວ່າດ້ວຍການກຳນົດ 12 ເຂດປ່າສະຫງວນຊັບພະຍາກອນແຮ່ທາດ, ຮ່າງດຳລັດວ່າດ້ວຍການຄວບຄຸມມົນລະພິດ; ປັບປຸງຍົກລະດັບຂໍ້ຕົກລົງວ່າດ້ວຍມາດຕະຖານສິ່ງແວດລ້ອມແຫ່ງຊາດມາເປັນດຳລັດວ່າດ້ວຍມາດຕະຖານສິ່ງແວດລ້ອມແຫ່ງຊາດ. ໄດ້ຮັບຮອງແຜນດຳເນີນງານສິ່ງແວດລ້ອມສົກປີ 2011-2015 ແລະ ຍຸດທະສາດວ່າດ້ວຍວຽກງານເຕືອນໄພລ່ວງໜ້າ ແລະ ລະບຽບການກ່ຽວກັບການເຕືອນໄພທຳມະຊາດ; ນອກຈາກນັ້ນ, ຍັງມີບາງໜ້າວຽກທີ່ພົ້ນເດັ່ນທີ່ສາມາດຈັດຕັ້ງປະຕິບັດໄດ້ເຊິ່ງລາຍລະອຽດມີດັ່ງລຸ່ມນີ້:

1) **ການຄຸ້ມຄອງ ແລະ ພັດທະນາທີ່ດິນ**: ສຳເລັດການຈັດສັນທີ່ດິນຂັ້ນບ້ານ/ກຸ່ມບ້ານ ຈຳນວນ 3.779 ບ້ານ ເທົ່າກັບ 43,2% ຂອງຈຳນວນ 8.654 ບ້ານ ໃນທົ່ວປະເທດ. ການຈັດສັນທີ່ດິນຂັ້ນເມືອງຈຳນວນ 55 ເມືອງ ກວມເອົາ 37,1 % ຂອງຈຳນວນ 148 ເມືອງ ໃນທົ່ວປະເທດ. ໃນໄລຍະ 2011-2015 ສາມາດຂຶ້ນທະບຽນ ແລະ ອອກໃບຕາດິນຖາ ວອນໃນຂອບເຂດທົ່ວປະເທດໄດ້ 254.399 ຕອນ ເທົ່າກັບ 25,33% (ແຜນການ 1 ລ້ານຕອນ); ເລີ່ມແຕ່ມີໂຄງການອອກໃບຕາດິນ ແຕ່ປີ 1994-1995 ມາຮອດປະຈຸບັນ ສາມາດຂຶ້ນທະບຽນ ແລະ ອອກໃບຕາດິນໄດ້ທັງໝົດ 871.317 ຕອນ, ສຳເລັດການສ້າງຖານສຳມະໂນທີ່ດິນ ໃນຂອບເຂດທົ່ວປະເທດ 2,6 ລ້ານຕອນ ລວມເນື້ອທີ່ດິນ 4,5 ລ້ານກວ່າເຮັກຕາ, ໃນນັ້ນ ໄດ້ບັນທຶກເຂົ້າລະບົບຄອມພິວເຕີ ສຳເລັດແລ້ວ 1,28 ລ້ານຕອນ ເທົ່າກັບ 49,2%. ສຳເລັດການສ້າງແຜນທີ່ເຂດປະເມີນລາຄາທີ່ດິນ ແລະ ສິ່ງປຸກສ້າງ ຈຳນວນ 26 ເມືອງ ໃນ 9 ແຂວງ. ສ້າງລະບົບຖານຂໍ້ມູນ-ຂ່າວສານທີ່ທັນສະໄໝ ໂດຍນຳໃຊ້ໂປຼແກມ LLMS ຄຸ້ມຄອງບໍລິຫານທີ່ດິນເຊິ່ງໄດ້ດຳເນີນການທົດລອງ ນະຄອນຫຼວງວຽງຈັນ ໄລຍະ I.

2) **ການຄຸ້ມຄອງຊັບພະຍາກອນປ່າໄມ້**: ສຳເລັດການຈັດສັນປ່າປ້ອງກັນທັງໝົດ 139 ແຫ່ງ ກວມເນື້ອທີ່ 7,99 ລ້ານເຮັກຕາ, ໃນນັ້ນ: ມີປ່າປ້ອງກັນແຫ່ງຊາດທັງໝົດ 49 ແຫ່ງ ເນື້ອທີ່ 7,48 ລ້ານເຮັກຕາ, ປ່າປ້ອງກັນຂອງແຂວງ 5 ແຫ່ງ ເນື້ອທີ່ 141.633 ເຮັກຕາ ແລະ ປ່າປ້ອງກັນຂອງເມືອງ 85 ແຫ່ງ ເນື້ອທີ່ 366.838 ເຮັກຕາ, ນອກຈາກນີ້ແລ້ວຍັງມີປ່າສະຫງວນທັງໝົດ 1 76 ແຫ່ງ ກວມເນື້ອທີ່ 4,89 ລ້ານເຮັກຕາ, ໃນນັ້ນ: ມີປ່າສະຫງວນແຫ່ງຊາດທັງໝົດ 24 ເນື້ອທີ່ 3,77 ລ້ານເຮັກຕາ (ລວມທັງເນື້ອທີ່ເຂດເຊື່ອມຕໍ່), ປ່າສະຫງວນຂອງແຂວງ 59 ແຫ່ງ ເນື້ອທີ່ 626.499 ເຮັກຕາ ແລະ ປ່າສະຫງວນຂອງເມືອງ 93 ແຫ່ງ ເນື້ອທີ່ 420.678 ເຮັກຕາ ແລະ ເຂດເຊື່ອມຕໍ່ 2 ແຫ່ງຄື: ເຂດເຊື່ອມຕໍ່ລະຫວ່າງປ່າສະຫງວນແຫ່ງຊາດ ນາກາຍ-ນໍ້າເທີນ ກັບ ພູຫີນປູນ ແລະ ເຂດເຊື່ອມຕໍ່ລະຫວ່າງປ່າສະຫງວນແຫ່ງຊາດ ນາກາຍ-ນໍ້າເທີນ ກັບ ຫີນໜາມໜໍ່ ມີເນື້ອທີ່ທັງໝົດ 77.170 ເຮັກຕາ. ສຳເລັດການສ້າງແຜນຈັດສັນປ່າສະຫງວນແຫ່ງຊາດ 5 ແຫ່ງ ແລະ ປ່າສະ ຫງວນຂອງແຂວງ 5 ແຫ່ງ ເດັ່ນກວ່າໝູ່ແມ່ນປ່າສະຫງວນແຫ່ງຊາດ ນໍ້າຫ້າ ແຂວງຫຼວງນໍ້າທາ ເປັນສະຖານທີ່ທ່ອງທ່ຽວທາງ ທຳມະຊາດ ແລະ ມໍລະດົກອາຊຽນ, ສ່ວນປ່າສະຫງວນແຫ່ງຊາດຫີນໜາມໜໍ່ ກຳລັງສະເໜີເຂົ້າເປັນມໍລະດົກໂລກທາງທຳມະຊາດ. ສຳເລັດການກຳນົດເຂດຄຸ້ມຄອງສັດນໍ້າ-ສັດປ່າ 5 ເຂດ ຄື: 1) ເຂດອະນຸລັກພັນເສືອໂຄ່ງຢູ່ປ່າສະ ຫງວນ ນໍ້າແອດ-ພູເລີຍ, 2) ເຂດອະນຸລັກເສົາຫຼາ ແຂວງອຸດົມໄຊ, 3) ເຂດອະນຸລັກແຂ້ນໍ້າຈືດ, 4) ເຂດອະນຸລັກໂອ່ງ-ມັ່ງ ແຂວງສະຫວັນນະເຂດ ແລະ 5) ເຂດອະນຸລັກທະນີແກ້ມຂາວ ແຂວງບໍ່ແກ້ວ.

3) **ການຄຸ້ມຄອງ ທໍລະນີສາດ ແລະ ແຮ່ທາດ**: ສຳເລັດການສຳຫຼວດ ສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:200.000 ໃນເນື້ອທີ່ປະມານ 129.925 ກມ$^2$ ເທົ່າກັບ 54,86% ຂອງເນື້ອທີ່ທົ່ວປະເທດ, ດຳເນີນກາຄຸ້ມຄອງ, ສົ່ງເສີມ ແລະ

ຕິດຕາມກວດກາ ການອະນຸຍາດສຳປະທານລົງທຶນຂຸດຄົ້ນ, ສຳຫຼວດແຮ່ທາດ ແລະ ສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກເບື້ອງຕົ້ນ ໃຫ້ດຳເນີນໄປຕາມຂອບສັນຍາ, ຂັ້ນຕອນ ແລະ ລະບຽບກົດໝາຍ ຂອງ ສປປ ລາວ ປະຈຸບັນ ມີທັງໝົດ 168 ບໍລິສັດ 293 ກິດຈະການ, ກວມເນື້ອທີ່ປະມານ 87.941,17 ກມ2 ເທົ່າກັບ 37,4% ຂອງເນື້ອທີ່ທົ່ວປະເທດ ປະເພດແຮ່ທາດທີ່ອະນຸຍາດສຶກສາຄວາມເປັນໄປໄດ້ເບື້ອງຕົ້ນ ຕົ້ນຕໍແມ່ນ: ແຮ່ຄຳ, ແຮ່ທອງ, ຖ່ານຫີນ, ແຮ່ໂປຕາສ, ຫີນກາວ ແລະ ອື່ນໆ.

4) **ດ້ານຊັບພະຍາກອນນ້ຳ, ອຸຕຸນິຍົມ ແລະ ອຸທົກກະສາດ**: ຈັດຕັ້ງປະຕິບັດແຜນງານແຫ່ງຊາດການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ໂດຍໄດ້ປັບປຸງຫ້ອງທົດລອງຄຸນນະພາບນ້ຳ, ສ້າງຍຸດທະສາດ ແລະ ນະໂຍບາຍນ້ຳແຫ່ງຊາດ, ປັບປຸງລະບົບເກັບກຳຂໍ້ມູນອຸຕຸນິຍົມ, ອຸທົກກະສາດ ແລະສຳເລັດການສຳຫຼວດພື້ນທີ່ ແລະ ກຳນົດເຂດເພື່ອກະກຽມສ້າງສວນສາທິດໃນການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ເພື່ອຮັບໃຊ້ໃຫ້ແກ່ການຝຶກອົບຮົມ, ການສຶກສາຄົ້ນຄວ້າ, ທັດສະນະສຶກສາ ແລະ ສ້າງຈິດສຳນຶກ; ສຳເລັດສ້າງແຜນທີ່ອ່າງຮັບນ້ຳໄດ້ທັງໝົດ 62 ອ່າງ ແລະ ສຳເລັດການສ້າງຕັ້ງຄະນະກຳມະການອ່າງແມ່ນ້ຳ 6 ອ່າງ, ໄດ້ຄົ້ນຄວ້າ ແລະ ລິເລີ່ມຄຸ້ມຄອງອ່າງແມ່ນ້ຳບູລິມະສິດອື່ນໆ ເປັນຕົ້ນ: ອ່າງແມ່ນ້ຳເຊບັ້ງໄຟ-ເຊບັ້ງຫຽງ ແລະແມ່ນ້ຳເຊກອງ ແລະ ອ່າງແມ່ນ້ຳຍ່ອຍ ເຊັ່ນ: ນ້ຳຕອນ, ນ້ຳຊອງ, ນ້ຳລຶກ, ນ້ຳເປາະ, ນ້ຳແຈ້ງ-ນ້ຳຊວງ, ຫວ້ຍຈຳປີ, ຫວ້ຍນ້ຳໄສ; ດຳເນີນການຄຸ້ມຄອງດິນທາມ (ດິນບໍລິເວນນ້ຳ) ບຶງຂຽດໂງ້ງ ແລະ ເຊຈຳພອນ; ສຳເລັດການກຳນົດຈຸດ ແລະ ດຳເນີນການຄຸ້ມຄອງ, ຕິດຕາມກວດກາຄຸນນະພາບນ້ຳ ໄດ້ຫຼາຍກວ່າ 144 ຈຸດທົ່ວປະເທດ.

ປັບປຸງຕາໜ່າງສະຖານີອຸຕຸນິຍົມ-ອຸທົກກະສາດ, ສະຖານີອຸຕຸນິຍົມຜິວພື້ນ, ສະຖານີພູມອາກາດ, ສະຖານີອາກາດຍານສູງ, ອຸຕຸການບິນ ຣາດາອຸຕຸນິຍົມ, ດາວທຽມອຸຕຸນິຍົມ, ຈຸດວັດແທກນ້ຳຝົນ ແລະ ສະຖານີແຜ່ນດິນໄຫວເພື່ອເຮັດໃຫ້ບັນດາສະຖານີດັ່ງກ່າວເປັນແຫຼ່ງເຕືອນໄພລ່ວງໜ້າການປ່ຽນແປງສະພາບອາກາດ ທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ: ສ້າງ ແລະ ປັບປຸງສະຖານີອຸຕຸນິຍົມ ຈຳນວນ 51 ສະຖານີ ແລະ ສະຖານີອຸທົກກະສາດ ຈຳນວນ 26 ສະຖານີຈາກລະບົບທຳມະດາໃຫ້ເປັນລະບົບອັດຕະໂນມັດ, ສືບຕໍ່ສ້າງສູນເຕືອນໄພແຫ່ງຊາດ ທີ່ກົມອຸຕຸນິຍົມ ແລະ ອຸທົກກະສາດ, ແລກປ່ຽນຂໍ້ມູນຂ່າວສານດ້ານອຸຕຸນິຍົມຈາກສາກົນ ພ້ອມທັງສະໜອງຂໍ້ມູນພະຍາກອນອາກາດ ແລະ ແຈ້ງເຕືອນ ຢ່າງເປັນປົກກະຕິ.

5) **ດ້ານສິ່ງແວດລ້ອມ**: ສຳເລັດການສ້າງແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານ ແລະ ສືບຕໍ່ສ້າງໃຫ້ສຳເລັດ 8 ແຂວງຈຸດສຸມ ໃນທ້າຍປີ 2015 ໂດຍຄັດເລືອກເອົາແຂວງຫຼວງພະບາງ, ຫຼວງນ້ຳທາ, ໄຊຍະບູລີ ແລະ ອຸດົມໄຊ ເປັນຕົວແບບໃນການສ້າງແຜນແມ່ບົດດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ສ້າງກົນໄກການປະເມີນສິ່ງ ແວດລ້ອມໃນລະດັບນະໂຍບາຍ, ຍຸດທະສາດ, ແຜນງານ ແລະ ແຜນການ ເພື່ອພິຈາລະນາທາງເລືອກທີ່ດີເລີດໃນການພັດ ທະນາ; ສຶກສາຄົ້ນຄວ້າກ່ຽວກັບອາກອນສິ່ງແວດລ້ອມ ແລະ ນຳໃຊ້ລາຍຮັບຈາກໂຄງການພັດທະນາເຂົ້າໃນການຄຸ້ມຄອງຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມແບບຍືນຍົງ; ສຳເລັດການສ້າງແຜນການຄຸ້ມຄອງການນຳໃຊ້ສານທຳຄວາມເຢັນ HCFCs; ປະຕິບັດແຜນງານຕົວແບບຮ່ວມມືສາມຝ່າຍ (ຫຼັກການ 3R) ໃນການຄຸ້ມຄອງຂີ້ເຫຍື້ອຢູ່ 6 ເມືອງຕົວແບບໃນນະຄອນຫຼວງວຽງຈັນ, ເມືອງຫຼວງພະບາງ, ໄຊຍະບູລີ, ວັງວຽງ, ປາກຊັນ ແລະ ໄກສອນພົມວິຫານ; ສົ່ງເສີມໃຫ້ບັນດາໂຄງການລົງທຶນຈັດຕັ້ງປະຕິບັດຂະບວນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ໃຫ້ຖືກຕ້ອງຕາມລະບຽບຫຼັກການ ແລະ ມີຄວາມໂປ່ງໃສ ເຊິ່ງໄດ້ດຳເນີນການທົບທວນບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ແລະ ອອກໃບຢັ້ງຢືນສິ່ງແວດລ້ອມທັງໝົດ ຈຳນວນ 288 ໂຄງການ, ໃນນັ້ນບົດລາຍງານການສຶກສາສິ່ງແວດລ້ອມເບື້ອງຕົ້ນ (IEE) 145 ໂຄງການ, ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ (EIA) 143 ໂຄງການ; ສຳເລັດການສ້າງຕັ້ງໜ່ວຍງານຄຸ້ມຄອງສິ່ງແວດລ້ອມພາກສະໜາມໄດ້ 27 ຕົວເມືອງ, 13 ແຂວງ ທີ່ມີໂຄງການລົງທຶນພັດທະນາຂະໜາດກາງ ແລະ ໃຫຍ່ ສາມາດຄຸ້ມຄອງສິ່ງແວດລ້ອມໄດ້ 18 ໂຄງການຫຼັກ; ສ້າງລະບົບຕິດຕາມກວດກາຄຸນນະພາບສິ່ງແວດລ້ອມ ແລະ ມົນລະພິດໃນໂຄງການລົງທຶນ, ກິດຈະການພັດທະນາ ແລະ ທຸລະກິດຄອບຄົວ ໂດຍສ້າງຫ້ອງວິໄຈສິ່ງແວດລ້ອມ (ລະດັບແຂວງ)ປະຈຳຢູ່ ແຂວງຫຼວງພະບາງ, ຊຽງຂວາງ, ແຂວງຈຳປາສັກ, ນະຄອນຫຼວງວຽງຈັນ ແລະ ຫ້ອງວິໄຈແຫ່ງຊາດນະຄອນຫຼວງວຽງຈັນ ເພື່ອເຮັດໜ້າທີ່ຢັ້ງຢືນການວິໄຈຕ່າງໆ ສູ່ມາດຕະຖານສາກົນ ISO/IEC 17025.

6) **ດ້ານການຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ:** ໄດ້ຈັດຕັ້ງຜັນຂະຫຍາຍຍຸດທະສາດແຫ່ງຊາດດ້ານການປ່ຽນແປງດິນຟ້າອາກາດ ແລະ ແຜນການແຫ່ງຊາດ ກ່ຽວກັບການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໂດຍການປັບປຸງນິຕິກຳ ແລະ ບັນດາເຄື່ອງມືໃຫ້ສອດຄ່ອງກັບສະພາບຕົວຈິງຂອງ ສປປ ລາວ; ສຳເລັດການສ້າງຍຸດທະສາດ, ແຜນດຳເນີນງານໃນການປັບຕົວກັບການປ່ຽນແປງດິນຟ້າອາກາດ ແລະ ສ້າງແຜນຫຼຸດຜ່ອນຄວາມສ່ຽງໄພພິ ບັດຂັ້ນແຂວງ ໄດ້ 6 ແຂວງ, ສຳເລັດຮ່າງສະບັບສຸດທ້າຍຜົນຂອງການສຳຫຼວດການປ່ອຍອາຍພິດເຮືອນແກ້ວ ສຳລັບລະ ດັບຜູ້ຕັດສິນຢູ່ໃນຂະແໜງກະສິກຳ ແລະ ປ່າໄມ້; ສຳເລັດການສະເໜີລັດຖະບານພິຈາລະນາຮັບເອົາໂຄງການການຫຼຸດຜ່ອນທາດອາຍພິດເຮືອນແກ້ວ ຈາກການຫຼີກລ້ຽງການທຳລາຍປ່າ

ແລະ ສະພາບປ່າຊຸດໂຊມ ໃນລະດັບທ້ອງຖິ່ນຂອງກຸ່ມບໍລິສັດ ນິວຈິບເຊັງ (SN-REDD+Project) ເປັນໂຄງການທົດລອງຊື້-ຂາຍກາກບອນ ທີ່ແຂວງສາລະວັນ ແລະ ສະຫວັນນະເຂດ; ລິເລີ່ມການສຶກສາກ່ຽວກັບທ່າແຮງ ແລະ ດ້ານຫຍໍ້ທໍ້ ຂອງກອງທຶນວ່າດ້ວຍການປ່ຽນແປງດິນຟ້າອາກາດໂລກ ເພື່ອຮັບປະ ກັນໃຫ້ການຍາດແຍ່ງການຊ່ວຍເຫຼືອກອງທຶນດັ່ງກ່າວ; ລິເລີ່ມການສ້າງແຜນຄຸ້ມຄອງນໍ້າຖ້ວມ ແລະ ແຜນຄຸ້ມຄອງເຂດທີ່ດິນບໍລິເວນນໍ້າ ໃນອ່າງແມ່ນໍ້າເຊບັ້ງໄຟ ແລະ ເຊບັ້ງຫຽງ; ສຳເລັດການສ້າງພື້ນທີ່ສາທິດໃນການລິເລີ່ມການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດຢູ່ເຂດແກ້ງກອກ ແລະ ບ້ານນາກະທ້າງ, ເມືອງຈຳພອນ ແຂວງສະຫວັນນະເຂດ; ປະຈຸບັນສຳເລັດການສ້າງບົດແນະນຳກ່ຽວກັບການພັດທະນາ ແລະ ພິຈາລະນາໂຄງການກົນໄກການພັດທະນາສະອາດ (CDM) ໃນປີ 2013 ແລະ ສາມາດອອກໃບຢັ້ງຢືນທັງໝົດ 22 ໂຄງການ.

## 3.4.4. ການພັດທະນາວິສາຫະກິດ

ໄດ້ປັບປຸງ, ຊຸກຍູ້ສົ່ງເສີມ, ພັດທະນາວິສາຫະກິດ ແລະ ຍົກສະມັດຕະພາບຂອງວິສາຫະກິດໃຫ້ສູງຂຶ້ນ ເຊິ່ງໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ເຮັດໃຫ້ພື້ນຖານເສດຖະກິດມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງດ້ວຍຈັງຫວະໄວສົມຄວນ, ຊີວິດການເປັນຢູ່ຂອງປະຊາຊົນທາງດ້ານວັດຖຸ ແລະ ວັດທະນະທຳໄດ້ຮັບການແກ້ໄຂ; ພື້ນ ຖານໂຄງລ່າງດ້ານເສດຖະກິດ-ສັງຄົມນັບທັງໃນຕົວເມືອງ ແລະ ຊົນນະບົດ ໄດ້ຮັບການພັດທະນາດີຂຶ້ນເທື່ອລະກ້າວ.

ປະຈຸບັນ ວິສາຫະກິດ ມີການຈົດທະບຽນແລ້ວ 100.653 ຫົວໜ່ວຍ ໃນຂອບເຂດທົ່ວປະເທດ, ລວມທຶນທັງໝົດ 1,68 ລ້ານຕື້ກີບ (200 ຕື້ໂດລາສະຫະລັດ); ໃນນັ້ນ, ຂະແໜງອຸດສາຫະກຳມີທຶນຈົດທະບຽນ ກວມເຖິງ 86,52%, ຂະແໜງກະສິກຳ 1,62%, ຂະແໜງກໍ່ສ້າງ 3,14% ແລະ ຂະແໜງບໍລິການອື່ນໆ 8,72%; ໄດ້ປັບປຸງລະບົບການຂຶ້ນ ທະບຽນວິສາຫະກິດໃຫ້ມີຂັ້ນຕອນກະທັດຮັດສະດວກ-ງ່າຍດາຍ ແລະ ວ່ອງໄວ, ແບ່ງຕາມຮູບແບບກຳມະສິດປະຈຸບັນມີວິສາຫະກິດຂອງລັດ 131 ຫົວໜ່ວຍ ກວມ 0.13%, ວິສາຫະກິດເອກະຊົນ ຈຳນວນ 100.473 ຫົວໜ່ວຍ ກວມສູງເຖິງ 99,79%, ໃນນັ້ນ ເອກະຊົນພາຍໃນ 96.531 ຫົວໜ່ວຍ ກວມ 95,90%; ເອກະຊົນຕ່າງປະເທດ 2.758 ຫົວໜ່ວຍ ກວມ 2,74% ແລະ ປະສົມພາຍໃນ-ຕ່າງປະເທດ 1.184 ຫົວໜ່ວຍ ກວມ 1,17% ແລະ ວິສາຫະກິດ ລວມໝູ່ 29 ຫົວໜ່ວຍ 0.03% ແລະ ວິສາຫະກິດປະສົມ 53 ຫົວໜ່ວຍ ກວມ 0,05%. ຄົ້ນຄວ້າ ແລະ ສົ່ງເສີມຂະບວນການສ້າງ ໜຶ່ງ ເມືອງໜຶ່ງຜະລິດຕະພັນ ພ້ອມກັບການຄົ້ນຄວ້າກຳນົດກົນໄກການຮ່ວມມື ລະຫວ່າງວິສາຫະກິດຂະໜາດໃຫຍ່ ແລະ ຂະ ໜາດນ້ອຍ ເພື່ອສ້າງສິ່ງຈູງໃຈໃຫ້ເຂົາເຈົ້າຫັນມາຊົມໃຊ້ຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍ ພາຍໃນປະເທດ.

### 1. ລັດວິສາຫະກິດ:

ທົ່ວປະເທດມີລັດວິສາຫະກິດ (ລັດລົງທຶນ 100%) 131 ຫົວໜ່ວຍ, ໃນນັ້ນ ຂຶ້ນກັບສູນກາງ 55 ຫົວໜ່ວຍ; ຊັບສິນລວມຂອງລັດວິສາຫະກິດ ກວມປະມານ 33% ຂອງ GDP; ລັດຖະບານໄດ້ປັບປຸງການຄຸ້ມຄອງບໍລິຫານ ແລະ ການ ເງິນຄືນໃໝ່ ແລະ ໄດ້ອະນຸຍາດໃຫ້ຫົວໜ່ວຍວິສາຫະກິດຂອງລັດຈຳນວນໜຶ່ງ ສາມາດດັດສົມລາຄາຕາມກົນ ໄກຕະຫລາດ ທີ່ມີການຄຸ້ມຄອງຂອງລັດ ເຊັ່ນ: ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດນໍ້າມັນເຊື້ອໄຟລາວ, ລັດວິສາຫະກິດການບິນລາວ, ລັດວິສາຫະກິດໂຮງງານຢາເລກ 3; ຕິດຕາມວຽກງານປັບປຸງໂຄງສ້າງ ຮອບທີ 2 ແລະ ຮອບທີ 3 ຂອງລັດວິສາຫະກິດພັດທະນາກະສິກຳ-ອຸດສາຫະກຳ ແລະ ບໍລິການຂາອອກ-ຂາເຂົ້າ, ລັດວິສາຫະກິດການຄ້າລາວຂາອອກ-ຂາເຂົ້າ, ລັດວິສາຫະກິດກໍ່ສ້າງຂົວທາງເລກທີ 13 ໃຕ້, ລັດວິສາຫະກິດລ້ານຊ້າງພັດທະນາຂາອອກ-ຂາເຂົ້າ, ລັດວິສາຫະກິດກົນຈັກກະສິ ກຳທ່າງ່ອນ ແລະ ລັດວິສາຫະກິດສະໜອງວັດຖຸເຕັກນິກ. ຍ້ອນແນວນັ້ນຈຶ່ງເຮັດໃຫ້ລັດວິສາຫະກິດດັ່ງກ່າວ ມີທ່າອ່ຽງ ດີຂຶ້ນ, ທັງດຳເນີນທຸລະກິດໄດ້ຢ່າງຄ່ອງຕົວ ແລະ ມີຜົນກຳໄລ, ທັງປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບຂອງ ເສດຖະກິດແຫ່ງຊາດໂດຍລວມ; ພ້ອມດຽວກັນນັ້ນ, ກໍໄດ້ຈັດແບ່ງປະເພດລັດວິສາຫະກິດຕາມຕົວເລກຊີ້ວັດ ຈຳນວນ 131 ຫົວໜ່ວຍ ຄື: ປະເພດ A: ມີປະສິດຕິຜົນ 6 ຫົວໜ່ວຍ, ປະເພດ B: ມີປະສິດຕິຜົນແຕ່ຕ້ອງໄດ້ປັບປຸງໂຄງສ້າງບາງສ່ວນ ຈຳນວນ 27 ຫົວໜ່ວຍ, ປະເພດ C: ບໍ່ມີປະສິດຕິຜົນຕ້ອງໄດ້ປັບປຸງ ຫຼື ປ່ຽນຮູບແບບວິສາຫະກິດ ຈຳນວນ 98 ຫົວໜ່ວຍ, ໃນນີ້ ມີ 23 ຫົວໜ່ວຍ ຂາດທຶນຕໍ່ເນື່ອງ, ມີ 54 ຫົວໜ່ວຍມີກຳໄລ ແລະ ມີ 10 ຫົວໜ່ວຍຫັນໄປສູ່ຮູບການອື່ນ. ສຳເລັດວິສາຫະກິດຮ່ວມທຶນລະຫວ່າງລັດກັບພາກສ່ວນອື່ນ ມີ 48 ຫົວໜ່ວຍ, ມີຊັບສິນ ກວມປະມານ 7,3% ຂອງ GDP ແລະ ມີອັດຕາສ່ວນຜົນກຳໄລຕໍ່ລາຍຮັບຂອງວິສາຫະກິດ ສູງກວ່າວິສາຫະກິດລັດ 100%. ໄດ້ສຳເລັດການຫັນລັດວິສາຫະກິດໄຟຟ້າລາວ, ທະນາຄານການຄ້າຕ່າງປະເທດລາວ ເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ຄົ້ນຄວ້າເພື່ອຄັດເລືອກລັດວິສາຫະກິດຈຳນວນໜຶ່ງທີ່ມີເງື່ອນໄຂເຂົ້າຈົດທະບຽນໃນຊຸມປີຕໍ່ໄປ ລວມທັງການປັບປຸງບັນດາເງື່ອນໄຂຕ່າງໆຂອງບັນ ດາຫົວໜ່ວຍລັດວິສາຫະກິດ ແລະ ວິສາຫະກິດຂອງຂະແໜງການ ແລະ ທ້ອງຖິ່ນ ເພື່ອກຽມຫັນເຂົ້າເປັນບໍລິສັດມະຫາຊົນໃນຕໍ່ໜ້າເຊັ່ນ: ໂຮງງານຊີມັງ, ທະນາຄານສົ່ງເສີມກະສິກຳ ແລະ ຫົວໜ່ວຍວິສາຫະກິດຈຳນວນໜຶ່ງ.

### 2. ວິສາຫະກິດຂະໜາດນ້ອຍ ແລະ ກາງ:

ວຽກງານວິສາຫະກິດຂະໜາດນ້ອຍ ແລະ ກາງ ໄດ້ຮັບຜົນສຳເລັດຫຼາຍດ້ານ ເຊັ່ນ: ໄດ້ສຳເລັດການຍົກດຳລັດ 42/ນຍ ຂຶ້ນເປັນກົດໝາຍໃນປີ 2011; ສຳເລັດການສ້າງຕັ້ງເຄືອຄ່າຍຜູ້ສະໜອງບໍລິການໃຫ້ຄຳປຶກສາພັດທະນາທຸລະກິດຈຳນວນ 21 ຫົວໜ່ວຍ; ໄດ້ດຳເນີນການສ້າງຫົວໜ່ວຍວິສາຫະກິດໃຫ້ເປັນຕົວແບບໃນການດຳເນີນວຽກງານຜະລິດຕະພາບ ແລະ ຄຸນນະພາບຈຳນວນໜຶ່ງ ເປັນຕົ້ນ: ໂຮງງານເຂົ້າໜົມ C&A, ໂຮງງານເກືອເວີນຄຳ ແລະ ໂຮງງານນ້ຳດື່ມມາວິຕາ. ນອກນັ້ນ, ຍັງໄດ້ສຸມໃສ່ບັນດາໜ້າວຽກບູລິມະສິດ ເພື່ອພັດທະນາວຽກງານວິສາຫະກິດຂະໜາດກາງ-ນ້ອຍ ເຊັ່ນ: ການສ້າງສະພາບແວດລ້ອມທາງດ້ານລະບຽບການ ແລະ ການຄຸ້ມຄອງທີ່ເອື້ອອຳນວຍ: ໄດ້ສຸມໃສ່ປັບປຸງລະບົບການຂຶ້ນທະບຽນວິສາຫະກິດ, ລະບົບການອອກໃບອະນຸຍາດ, ໄດ້ສ້າງ ແລະ ພັດທະນາເວທີປຶກສາຫາລື ລະຫວ່າງພາກລັດ ແລະ ພາກທຸລະກິດ ໃນລະດັບແຂວງພາຍໃຕ້ຂອບຂອງກອງປະຊຸມທຸລະກິດລາວ; ໄດ້ປັບປຸງລະບົບການຂຶ້ນທະບຽນວິສາຫະກິດໃຫ້ມີຂັ້ນຕອນກະທັດຮັດສະດວກ-ງ່າຍ ດາຍ ແລະ ວ່ອງໄວ ເປັນຕົ້ນ: ຫຼຸດມູນຄ່າລົງທະບຽນຈາກ 100.000 ກີບ ຫາ 200.000 ກີບ ປັດຈຸບັນເຫຼືອພຽງ 40.000 ກີບ ຫາ 90.000 ກີບ, ໄລຍະເວລາການຂຶ້ນທະບຽນໄວກວ່າເກົ່າ ຈາກແຕ່ກ່ອນ 60 ຫາ 90 ວັນ ຫຼຸດລົງມາເປັນ 3 ວັນ ແລະ ຊ້າສຸດບໍ່ເກີນ 10 ວັນລັດຖະການ; ໄດ້ທົບທວນຄືນຂະບວນການອອກໃບອະນຸຍາດຈາກແຕ່ກ່ອນຕ້ອງປະກອບເອກະສານ 18 ສະ ບັບ ປະຈຸບັນເຫຼືອພຽງ 4-6 ສະບັບ ແລະ ການອອກໃບທະບຽນວິສາຫະກິດໃນຮູບແບບຖາວອນ (ບໍ່ມີການຕໍ່ອາຍຸການນຳໃຊ້).

ໄດ້ປະສານສົມທົບກັບກະຊວງສຶກສາທິການ ແລະ ກິລາ ແລະ ຂະແໜງການທີ່ກ່ຽວຂ້ອງຄົ້ນຄວ້າຕຳລາການຮຽນການສອນ ແລະ ສ້າງປຶ້ມຄູ່ມືການດຳເນີນທຸລະກິດເຂົ້າໃນຫຼັກສູດການສຶກສາ ເຊິ່ງປັດຈຸບັນໄດ້ທົດລອງນຳເອົາຫຼັກສູດດັ່ງ ກ່າວເຂົ້າໄປສິດສອນໃນໂຮງຮຽນສາມັນຈຳນວນໜຶ່ງ ແລະ ກຳລັງກະກຽມບັນຈຸເຂົ້າໃນລະບົບອາຊີວະສຶກສາ ແລະ ມະຫາ ວິທະຍາໄລຕື່ມອີກ.

ຄົ້ນຄ້ວາ ແລະ ສົ່ງເສີມຂະບວນການສ້າງ "ໜຶ່ງເມືອງໜຶ່ງຜະລິດຕະພັນ" ພ້ອມກັບການຄວ້າກຳນົດກົນໄກການຮ່ວມມືລະຫວ່າງວິສາຫະກິດຂະໜາດໃຫຍ່ ແລະ ຂະໜາດນ້ອຍ ເພື່ອສ້າງສິ່ງຈູງໃຈໃຫ້ເຂົາເຈົ້າຫັນມາຊົມໃຊ້ຜະລິດຕະພັນ ແລະ ການບໍລິການຂອງວິສາຫະກິດຂະໜາດນ້ອຍພາຍໃນປະເທດ.

ສົ່ງເສີມການເພີ່ມຜະລິດຕະພາບ ເພື່ອຍົກລະດັບຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ແລະການບໍລິການ ໂດຍການຈັດຕັ້ງປະຕິບັດໂຄງການສ້າງໂຮງງານຕົວແບບດ້ານຜະລິດຕະພາບ ແລະ ຄຸນນະພາບ ໃນການສົ່ງເສີມກິດຈະກຳ 5 ສໍ ແລະ ການຜະລິດທີ່ດີໃຫ້ແກ່ໂຮງງານຕົວແບບຈຳນວນໜຶ່ງ. ປະຈຸບັນກຳລັງດຳເນີນການຄົ້ນຄວ້າກັບຂະແໜງການກ່ຽວຂ້ອງເພື່ອສ້າງລະບົບ ແລະ ອົງກອນການຢັ້ງຢືນຄຸນນະພາບ ແລະມາດຕະຖານ.

## 3.4.5. ການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະວັດດ້ານການພັດທະນາ:

ໃນໄລຍະຜ່ານມາ ບັນດາຂະແໜງການຕ່າງໆທີ່ກ່ຽວຂ້ອງ ໄດ້ສຸມກຳລັງແຮງຈັດຕັ້ງຜັນຂະຫຍາຍເພື່ອບັນລຸບັນດາ ຄາດໝາຍຂອງເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ໃຫ້ສຳເລັດ ໃນປີ 2015 ໂດຍໄດ້ສຳເລັດຂອບທີ່ເລັ່ງໃສ່ການບັນລຸເປົ້າໝາຍ MDGs ແລະການວາງແຜນທາງດ້ານການເງິນ ໃນປີ 2010 ເພື່ອກຳນົດບາງຈຸດສະເພາະເພື່ອຊ່ວຍໃຫ້ປະເທດສາມາດບັນລຸເປົ້າຫມາຍ MDGs ໄດ້. ກອບດັ່ງກ່າວກຳນົດ 6 ຂົງເຂດຕົ້ນຕໍ: (1) ການເຂົ້າເຖິງໂຄງລ່າງພື້ນ ຖານສຳລັບການບັນລຸໄດ້ MDGs; (2) ການປະຕິບັດແບບຍືນຍົງເພື່ອມີການປັບປຸງຄວາມປອດໄພດ້ານອາຫານ ແລະຄວາມຍືນຍົງຂອງສິ່ງແວດລ້ອມ; (3) ການເຂົ້າເຖິງການສຶກສາຂັ້ນພື້ນຖານສຳລັບທຸກຄົນ ແລະບົດບາດຍິງ-ຊາຍ; (4) ການມີສ່ວນຮ່ວມຢ່າງສະເຫມີພາບ ແລະສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ; (5) ປັບປຸງສຸຂະພາບຂອງແມ່ ແລະເດັກ; (6) ການສະຫນອງນ້ຳສະອາດ ແລະ ປັບປຸງສຸຂະອານາໄມສຳລັບທຸກເຂດຊົນນະບົດ ແລະ ບັນດາຕົວເມືອງນ້ອຍຕ່າງໆ. ຜ່ານການຈັດຕັ້ງປະຕິບັດສາມາດສະຫລຸບຕີລາຄາໄດ້ດັ່ງນີ້:

### ເປົ້າໝາຍ 1: ລົບລ້າງຄວາມທຸກຍາກ ແລະ ໄພອຶດຫິວ

ການລຶບລ້າງຄວາມທຸກຍາກ: ແມ່ນມີຄວາມຄືບໜ້າຫລາຍ ໂດຍອີງໃສ່ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຄົວເຮືອນຄັ້ງທີ 5 (LECS5) ເຫັນໄດ້ວ່າອັດຕາສ່ວນຄວາມທຸກຍາກໄດ້ຫຼຸດລົງຈາກ 27,6% ໃນສົກປີ 2007-2008 (LECS4) ມາເປັນ 23,2% ໃນສົກປີ 2012-2013 (LECS5) ທຽບໃສ່ຄາດຫມາຍທີ່ວາງໄວ້ໃນປີ 2015 ໃຫ້ຫຼຸດລົງເຫລືອ 24% ເຫັນວ່າພວກເຮົາສາມາດບັນລຸ ແລະ ລື່ນຄາດໝາຍທີ່ວາງໄວ້.

ໂພຊະນາການ: ເປັນວຽກງານທີ່ຕິດພັນກັບຫລາຍປັດໄຈ ເປັນຕົ້ນແມ່ນການມີອາຫານທີ່ພຽງພໍ, ການເຂົ້າເຖິງສະ ບຽງອາຫານ ແລະ ການກິນອາຫານທີ່ຖືກຫລັກອານາໄມ ແລະ ຄຸນຄ່າທາງອາຫານ. ຜ່ານການຈັດຕັ້ງປະຕິບັດຄາດໝາຍໃນການຫລຸດອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານເຫັນວ່າມີຄວາມຄືບໜ້າຊ້າ ຕົວເລກປີ 2006 ແມ່ນ 37%, ຕົວເລກຜົນສຳຫຼວດດັດສະນີໝາຍສັງຄົມລາວປີ 2011 ແມ່ນ 27% ຄາດໝາຍປີ 2015 ໃຫ້ໄດ້ 22% ບັນລຸໄດ້ 24,51%. ອັດຕາສ່ວນເດັກນ້ອຍລຸ່ມ 5 ປີ ທີ່ມີຄວາມສູງຕ່ຳກວ່າມາດຕະຖານກໍ່ມີຄວາມຄືບໜ້າຊ້າ ເຊັ່ນ: ປີ 2006 ໄດ້ 40%, ປີ 2011 ແມ່ນ 38% ຄາດໝາຍ ໃນປີ 2015 ໃຫ້ໄດ້ 34%, ສະເລ່ຍແລ້ວຫຼຸດລົງຕ່ຳກວ່າ 1% ຕໍ່ປີ. ອັດຕາສ່ວນເດັກນ້ອຍທີ່ມີຄວາມສູງຕ່ຳກວ່າມາດຕະຖານ ແລະ ມີນ້ຳໜັກຕ່ຳກວ່າມາດຕະຖານແມ່ນມີຄວາມແຕກຕ່າງກັນລະຫວ່າງໃນກຸ່ມຄົນທີ່ທຸກທີ່ສຸດ ແລະ ກຸ່ມຄົນທີ່ຮັ່ງທີ່ສຸດ. ເດັກນ້ອຍໃນເຂດຊົນນະບົດໂດຍສະເພາະແມ່ນເດັກຊົນເຜົ່າທີ່ອາໄສຢູ່ເຂດພູດອຍຫ່າງໄກສອກຫລີກແມ່ນມີອັດຕາສ່ວນເດັກນ້ອຍທີ່ມີຄວາມສູງຕ່ຳກວ່າມາດຕະຖານແມ່ນສູງເຊິ່ງເກີດມາຈາກການກິນອາຫານບໍ່ພຽງພໍ. ສປປ ລາວ ມີທ່າແຮງຫຼາຍດ້ານໃນການເລັ່ງຫຼຸດຜ່ອນສະພາບການຂາດສານອາຫານລົງໃຫ້ໄວຂຶ້ນ. ເງື່ອນ ໄຂທີ 1 ແມ່ນເສດຖະກິດມີການຂະຫຍາຍໂຕສູງເປັນເງື່ອນໄຂທີ່ເຮົາຈະສາມາດຈັດສັນງົບປະມານໃຫ້ຂະແໜງສັງຄົມເພີ່ມຂຶ້ນ; ເງື່ອນໄຂທີ 2 ຍຸດທະສາດການປະຕິຮູບຂະແໜງສາທາລະນະສຸກແມ່ນໄດ້ກຳນົດບູລິມະສິດແລ້ວຈະສະດວກໃນການ ຈັດຕັ້ງປະຕິບັດ; ເງື່ອນໄຂທີ 3 ເຫັນວ່າພາກສ່ວນເອກະຊົນໂດຍສະເພາະແມ່ນການຊ່ວຍເຫລືອຈາກສາກົນແມ່ນໃຫ້ການສະໜັບສະໜູນການຊ່ວຍເຫຼືອດ້ານໂພຊະນາການຫລາຍພໍສົມຄວນ ເຊັ່ນ: ການເສີມຈຸລາພາກສຳລັບເດັກອ່ອນໃນປະມານທະວີຄູນແມ່ນເປັນສິ່ງທີ່ໃຫ້ຄວາມຫວັງສູງ.

## ເປົ້າໝາຍ 2: ໃຫ້ທຸກຄົນໄດ້ຮັບການສຶກສາຂັ້ນປະຖົມຢ່າງທົ່ວເຖິງ

ການສຶກສາມີຄວາມສຳຄັນຫລາຍຕໍ່ການພັດທະນາປະເທດ. ສະນັ້ນ, ການສະໜອງການສຶກສາຂັ້ນພື້ນຖານໃຫ້ເຂດຫ່າງໄກສອກຫລີກ, ດ້ອຍໂອກາດແມ່ນມີຄວາມສຳຄັນ ເຊິ່ງໄລຍະຜ່ານມາ ຂະແໜງການສຶກສາໄດ້ປະສານສົມທົບກັບບັນດາຄູ່ຮ່ວມພັດທະນາທັງພາຍໃນ ແລະ ຕ່າງປະເທດ ພັດທະນາຄູ່ມື ແລະ ຂະຫຍາຍພື້ນຖານໂຄງລ່າງການສຶກສາເພື່ອສ້າງ ແລະ ຂະຫຍາຍໂອກາດທາງການສຶກສາໃຫ້ກັບເດັກໃນເກນອາຍຸໄດ້ເຂົ້າຮຽນຫລາຍຂຶ້ນ ເຮັດໃຫ້ອັດຕາເຂົ້າຮຽນສຸດທິຂອງເດັກໃນຊັ້ນປະຖົມເພີ່ມຂຶ້ນຈາກ 92,7% ໃນສົກປີ 2009-2010 ມາເປັນ 96,8% ໃນສົກປີ 2012-2013 ແລະ ສົກປີ 2013-2014 ບັນລຸໄດ້ 98% ແລະ ສົກປີ 2014-2015 ບັນລຸໄດ້ 98,6% ລື່ນຄາດໝາຍທີ່ວາງໄວ້. ເຖິງຢ່າງໃດກໍ່ຕາມ, ຄຸນນະພາບຂອງການສຶກສາຍັງຕ່ຳຫຼາຍເນື່ອງຈາກວ່ານັກຮຽນທີ່ເຂົ້າຮຽນຊັ້ນປະຖົມແມ່ນຍັງມີເດັກທີ່ອາຍຸເກີນ ແລະອາຍຸບໍ່ເຖິງເກນເຂົ້າຮຽນມີຈຳນວນບໍ່ໜ້ອຍເຊິ່ງອາດສົ່ງຜົນໃຫ້ອັດຕາຄ້າງຫ້ອງສູງ. ອັດຕາການຫລອດເຫລືອຂອງນັກຮຽນຊັ້ນປະຖົມບັນລຸ 68% ໃນສົກປີ 2011-2012, ໃນສົກປີ 2012-2013 ບັນລຸ 71,4%, ໃນສົກປີ 2013-2014 ບັນລຸ 77,5% ແລະ ເພີ່ມເປັນ 78,3% ໃນສົກປີ 2014-2015 ບໍ່ສາມາດບັນລຸໄດ້ຕາມຄາດໝາຍທີ່ວາງໄວ້(ຄາດໝາຍ: 95%); ອັດຕາເຂົ້າຮຽນ ແລະ ອັດຕາລອດເຫລືອຂອງເດັກມີຄວາມແຕກໂຕນກັນຫຼາຍສົມຄວນລະຫວ່າງເຂດຊົນນະບົດທີ່ບໍ່ມີຖະໜົນຫົນທາງ ແລະ ໃນກຸ່ມນັກຮຽນທີ່ທຸກທີ່ສຸດ; ອັດຕາການຮູ້ໜັງສືໃນກຸ່ມອາຍຸ 15-24 ປີ ສະເລ່ຍເພີ່ມຂຶ້ນ 2% ຕໍ່ປີມາຮອດສົກປີ 2014-2015 ບັນລຸໄດ້ 98,6% (ຄາດໝາຍ ປີ2015: 99%). ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນບັນລຸ 62,9% ໃນສົກປີ 2010-2011, 64,7% ໃນສົກປີ 2011-2012, 69% ໃນສົກປີ 2012-2013, 74,4% ໃນສົກປີ 2013-2014 ແລະ 78,1% ໃນສົກປີ 2014-2015 ສາມາດເວົ້າໄດ້ວ່າບັນລຸຄາດໝາຍທີ່ວາງໄວ້ ດັ່ງສະແດງໃຫ້ເຫັນໃນຕາຕະລາງລຸ່ມນີ້:

### ຕາຕະລາງ 11: ຕົວຊີ້ບອກການເຂົ້າເຖິງການສຶກສາຂັ້ນປະຖົມຢ່າງທົ່ວເຖິງ

| ຕົວຊີ້ບອກ | 2010-11 | 2011-12 | 2012-13 | 2013-14 | 2014-15 | ຄາດໝາຍ ປີ 2015 |
|---|---|---|---|---|---|---|
| ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ (%) | 94,1 | 95,2 | 96,8 | 98 | 98,6 | 98 |
| ອັດຕາການຫລອດເຫລືອຊັ້ນປະຖົມ (%) | 68 | 70 | 71,4 | 77,5 | 78,3 | 95 |
| ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນ (%) | 62,9 | 64,7 | 69 | 74,4 | 78,1 | 75 |
| ອັດຕາການຮູ້ໜັງສືຂອງປະຊາຊົນໃນກຸ່ມອາຍຸ15-24 ປີ (%) | 87 | 92 | 94,8 | | 98,6 | 99 |

ແຫຼ່ງຂໍ້ມູນ: ອັດຕາການຮູ້ໜັງສືອາຍຸ 15-24 ປີສົກປີ 2012-2013 ແມ່ນໄດ້ຈາກ LSIS ແລະ ບົດສະຫຼຸບປີ 2011-2015

## ເປົ້າໝາຍ 3: ສົ່ງເສີມບົດບາດຍິງ-ຊາຍ ແລະເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ

ຄວາມສະເໝີພາບຍິງ-ຊາຍ ແລະ ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງແມ່ນເປົ້າໝາຍໜຶ່ງຂອງລັດຖະບານ ເພື່ອໃຫ້ເຂົາເຈົ້າສາມາດປະກອບສ່ວນເຂົ້າໃນຂະບວນການພັດທະນາ ແລະ ສ້າງເສດຖະກິດຄອບຄົວໃຫ້ຫລາຍຂຶ້ນ; ແມ່ຍິງຖືວ່າມີບົດບາດສຳຄັນຕໍ່ຄອບຄົວໃນການບໍລິຫານຈັດການຊັບພະຍາກອນ ແລະ ຍັງເປັນປັດໃຈສຳຄັນໃນການຊ່ວຍບັນ ລຸເປົ້າໝາຍ MDGs ອື່ນ. ສະນັ້ນ, ໃນການວາງແຜນພັດທະນາໃນຂະແໜງການໃດແມ່ນໄດ້ຄຳນຶງເຖິງບົດບາດຍິງ-ຊາຍ ໂດຍສະເພາະແມ່ນ ໃນວຽກງານການສຶກສາແມ່ນໄດ້ເອົາໃຈໃສ່ເດັກຍິງ ໂດຍມີການສ້າງຫໍພັກສຳລັບເດັກຍິງ, ສະໜອງ ອາຫານໃນໂຮງຮຽນ ແລະ ອື່ນໆ. ແຕ່ເຖິງຢ່າງໃດກໍ່ຕາມ, ສັດສ່ວນການເຂົ້າຮຽນຂອງເດັກຍິງທຽບກັບເດັກຊາຍແມ່ນຍັງມີຄວາມແຕກໂຕນກັນ ແລະ ຈະມີຄວາມແຕກໂຕນກັນຫລາຍຂຶ້ນໃນລະດັບການສຶກສາທີ່ສູງຂຶ້ນດັ່ງສະແດງໃຫ້ເຫັນຢູ່ຕາຕະລາງຂ້າງລຸ່ມ.

**ຕາຕະລາງ 12: ຕົວຊີ້ບອກການສົ່ງເສີມບົດບາດຍິງ-ຊາຍ ແລະ ສົ່ງເສີມຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ**

| ຕົວຊີ້ບອກ | 2009-10 | 2010-11 | 2011-12 | 2012-13 | ຄາດໝາຍ ປີ 2015 |
|---|---|---|---|---|---|
| ອັດຕາສ່ວນນັກຮຽນຍິງຕໍ່ນັກຮຽນຊາຍ ໃນຊັ້ນປະຖົມ | 0,94 | 0,94 | 0,95 | 0,95 | 1 |
| ອັດຕາສ່ວນນັກຮຽນຍິງຕໍ່ນັກຮຽນຊາຍ ໃນຊັ້ນມັດທະຍົມຕົ້ນ | 0,86 | 0,87 | 0,89 | 0,91 | 1 |
| ອັດຕາສ່ວນນັກຮຽນຍິງຕໍ່ນັກຮຽນຊາຍ ໃນຊັ້ນມັດທະຍົມປາຍ | 0,82 | 0,81 | 0,83 | 0,84 | 1 |
| ອັດຕາສ່ວນນັກຮຽນຍິງຕໍ່ນັກຮຽນຊາຍ ໃນການສຶກສາຊັ້ນສູງ | | | | 0,60 (ລະດັບອະຊີວະສຶກສາ) | |
| ອັດຕາການຂ້າງງານຂອງແມ່ຍິງທີ່ເຮັດວຽກໃນຂະແໜງທີ່ບໍ່ແມ່ນກະສິກຳ (%) | | | 34 | | |
| ອັດຕາສ່ວນແມ່ຍິງທີ່ເປັນສະມາຊິກສະພາ (%) | | | | 25 | |

ແຫລ່ງຂໍ້ມູນ: ຂໍ້ມູນນັກຮຽນຍິງຕໍ່ນັກຮຽນຊາຍແມ່ນໄດ້ຈາກຂະແໜງການແລະ LSIS.

ອັດຕາການຮູ້ໜັງສືລະຫວ່າງເພດຍິງ-ຊາຍ ໂດຍທົ່ວໄປແລ້ວແມ່ນຕິດພັນກັບຄວາມທຸກຍາກ. ການຮູ້ໜັງສືຂອງແມ່ຍິງແມ່ນໜ້ອຍກວ່າຜູ້ຊາຍຢູ່ໃນເຂດຊົນນະບົດທີ່ບໍ່ມີທົ່ນທາງ, ໃນກຸ່ມຄົນທີ່ທຸກຍາກທີ່ສຸດ ແລະໃນກຸ່ມຊົນເຜົ່າທີ່ດຳລົງຊີວິດຢູ່ໃນເຂດຫ່າງໄກສອກຫຼີກ. ອັດຕາການຮູ້ໜັງສືຂອງປະຊາຊົນທີ່ໜຸ່ມລະຫວ່າງ 15-19 ປີ ລະຫວ່າງເພດຍິງ-ຊາຍແມ່ນດີກວ່າປະຊາຊົນໃນກຸ່ມອາຍຸລະຫວ່າງ 20-24 ປີ ອັນນີ້ ຍ້ອນອັດຕາການລົງທະບຽນເຂົ້າຮຽນຂອງເດັກນ້ອຍແມ່ຍິງທີ່ສູງກວ່າໃນຊຸມປີຜ່ານມາ.

ສັດສ່ວນການຈ້າງງານຂອງແມ່ຍິງໃນຂະແໜງການຕ່າງໆທີ່ບໍ່ແມ່ນກະສິກຳໄດ້ເພີ່ມຂຶ້ນຈາກປະມານ 20% ໃນປີ 1990 ມາເປັນ 34% ກ່ອນປີ 2010 ເຫັນວ່າຍັງຕ່ຳເນື່ອງຈາກວ່າແມ່ຍິງສ່ວນໃຫຍ່ແມ່ນຍັງເຮັດວຽກສຳລັບຄອບຄົວໂດຍບໍ່ມີການຈ່າຍເງິນ. ກຳລັງແຮງງານເພດຊາຍມີການສຶກສາດີກວ່າກຳລັງແຮງງານເພດຍິງ ແລະ ສັງເກດເຫັນໄດ້ວ່າແມ່ຍິງສ່ວນໃຫຍ່ແມ່ນເຮັດວຽກທີ່ບໍ່ໝັ້ນຄົງ, ເຮັດວຽກດ້ວຍຕົນເອງ ແລະຄອບຄົວທີ່ບໍ່ໄດ້ຮັບຄ່າຈ້າງກວມ 65% ທຽບກັບຜູ້ຊາຍມີພຽງ 35%, ສະມາຊິກສະພາເພດຍິງ ກວມ 25%.

## ເປົ້າໝາຍ 4: ຫລຸດຜ່ອນການເສຍຊີວິດຂອງເດັກນ້ອຍ

ອັດຕາການຕາຍຂອງເດັກອາຍຸລຸ່ມ 1 ປີ ໄດ້ຫຼຸດລົງຈາກ 75 ຄົນໃນປີ 2008 ມາເປັນ 68 ຄົນ ໃນປີ 2011 ແລະຄາດວ່າຈະຍັງເຫລືອ 32 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນໃນປີ 2015, ຄາດໝາຍ (45 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນເຊິ່ງເຫັນວ່າບັນລຸແລ້ວ); ອັດຕາການຕາຍຂອງເດັກອາຍຸລຸ່ມ 5 ປີ ໄດ້ຫຼຸດລົງຈາກ 89 ຄົນໃນປີ 2008 ມາເປັນ 72 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນ ໃນປີ 2011 ເຊິ່ງຄາດໝາຍໃນປີ 2015 ແມ່ນ 70 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນເຫັນວ່າມີທ່າອ່ຽງທີ່ຈະບັນລຸ. ແຕ່ເຖິງຢ່າງໃດກໍ່ຕາມຖ້າທຽບໃສ່ບັນດາປະເທດໃນພາກພື້ນຖືວ່າປະເທດເຮົາຍັງມີການຕາຍຂອງເດັກສູງ;

ອັດຕາການສັກຢາກັນໝາກແດງແມ່ນຍັງມີຄວາມສ່ຽງທີ່ຈະບັນລຸຕາມຄາດໝາຍທີ່ກຳນົດໄວ້ໃນແຜນການເນື່ອງຈາກວ່າ ປີ 2014 ບັນລຸໄດ້ພຽງ 85% ແຕ່ຄາດໝາຍວາງໄວ້ແມ່ນ 90%. ດັ່ງສະແດງໃຫ້ເຫັນຢູ່ຕະຕະລາງຂ້າງລຸ່ມ:

**ຕາຕະລາງ 13: ຕົວຊີ້ບອກການຫຼຸດຜ່ອນການເສຍຊີວິດຂອງເດັກນ້ອຍ**

| ຕົວຊີ້ບອກ | 2005 | 2008 | 2011(LSIS) | ຄາດໝາຍ2015 |
|---|---|---|---|---|
| ຫລຸດອັດຕາການຕາຍຂອງເດັກລຸ່ມ 5 ປີຕໍ່ເດັກເກີດມີຊີວິດ 1.000 ຄົນ | 98 | 89 | 79 | 80 |
| ຫລຸດອັດຕາການຕາຍຂອງເດັກລຸ່ມ 1 ປີຕໍ່ເດັກເກີດມີຊີວິດ 1.000 ຄົນ | 70 | 75 | 68 | 49 |
| ອັດຕາການສັກຢາກັນໝາກແດງໃນເດັກນ້ອຍ 1 ປີ | 96 | | 55 | 90 |

ຂໍ້ມູນການສຳຫຼວດດັດສະນີໝາຍທາງດ້ານສັງຄົມ ປີ 2006 ໄດ້ສະແດງໃຫ້ເຫັນວ່າຊ່ອງວ່າງຂອງຄວາມ ເທົ່າທຽມກັນແມ່ນເພີ່ມຂຶ້ນ ຫຼືຍັງຢູ່ໃນລະດັບເກົ່າ, ໃນຂະນະທີ່ບັນດາຄອບຄົວໃນຕົວເມືອງມີສະພາບຊີວິດທີ່ດີ ຂຶ້ນ ແລະມີການພັດທະນາທີ່ໄວກ່ວາເປັນປະຫວັດການ. ສະນັ້ນ, ການທີ່ຈະບັນລຸຄາດໝາຍຫລຸດອັດຕາການຕາຍຂອງເດັກເກີດໃໝ່ ແລະ ເດັກນ້ອຍນັ້ນມັນຮຽກຮ້ອງໃຫ້ສະໜອງການບໍລິການແກ່ປະຊາຊົນກຸ່ມນີ້ ແລະ ຮຽກຮ້ອງໃຫ້ມີການລົງທຶນເຂົ້າໃນຂະແໜງສາທາລະນະສຸກທີ່ລົງໄປເຖິງປະຊາກອນທີ່ທຸກຍາກ ແລະ ຜູ້ທີ່ດຳລົງຊີວິດຢູ່ໃນເຂດຫ່າງໄກສອກຫຼີກຫຼາຍຂຶ້ນ.

ສິ່ງທ້າທາຍໃນການບັນລຸຄາດໝາຍທີ່ກຳນົດໄວ້ ແມ່ນການຮັບປະກັນກ່ຽວກັບການສະໜອງທຶນ ເພື່ອການບໍລິການດ້ານສາທາລະນະສຸກໃຫ້ແກ່ແມ່, ເດັກເກີດໃໝ່ ແລະ ເດັກນ້ອຍ ທີ່ມີລັກສະນະຍືນຍົງ. ນອກນັ້ນ, ການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານແພດປິ່ນປົວ ແລະ ການບໍລິການພ້ອມທັງພັດທະນາລະບົບການສະໜອງ ແລະ ການຄຸ້ມຄອງບໍລິການ ກໍມີຄວາມສຳຄັນ.

## ເປົ້າໝາຍ 5: ປັບປຸງສຸຂະພາບຂອງແມ່

ອີງຕາມການປະເມີນຂອງອົງການຈັດຕັ້ງສາກົນ ໃນປີ 2013 ເຫັນວ່າ ສຳລັບສປປລາວແມ່ນໄດ້ບັນລຸເປົ້າໝາຍແລ້ວເພາະວ່າອັດຕາການຕາຍຂອງແມ່ ໃນປີ 2013 ແມ່ນ 220/100,000 ເດັກເກີດມີຊີວິດ, ແຕ່ອີງການສຳຫຼວດດັດສະນີໝາຍສັງຄົມລາວ ໃນປີ 2011 ອັດຕາການຕາຍຂອງແມ່ ແມ່ນ 357 ຄົນຕໍ່ການເກີດມີຊີວິດ 100.000 ຄົນ, ຄາດໝາຍປີ 2015 ແມ່ນ 260 ຄົນ; ອັດຕາການເກີດໂດຍມີແພດຊ່ວຍເຫັນວ່າຍັງຕໍ່າມີພຽງ 42% ທຽບໃສ່ຄາດໝາຍປີ 2015 ໃຫ້ໄດ້ 50%, ອັດຕາຄຸມກຳເນີດ ແລະ ອັດຕາການກວດທ້ອງຂອງແມ່ຍິງຖືພາກ່ອນເກີດແມ່ນມີຄວາມຄືບໜ້າຊ້າ, ອັດຕາການເກີດໂດຍການຜ່າອອກ ແມ່ນ 4% ຂອງຈຳນວນເດັກເກີດໃໝ່ທັງໝົດ ເຊິ່ງຖືວ່າຍັງຕໍ່າ. ສະນັ້ນ, ຕ້ອງໄດ້ສຸມທຶນຮອນປະຕິບັດກິດຈະກຳຕ່າງໆ ເຊັ່ນ: ໂຄງການປິ່ນປົວເດັກນ້ອຍ ແລະ ແມ່ເກີດລູກບໍ່ເສຍຄ່າ, ໂຄງການສຸຂະພາບຈະເລີນພັນ, ໂຄງການວາງແຜນຄອບຄົວ, ໂຄງການສັກຢາກັນພະຍາດສຳລັບແມ່ຍິງໃນໄວຈະເລີນພັນ, ໂຄງການສ້າງແພດຜູ້ຊຳນານໃນການຊ່ວຍເກີດລູກ ແລະອື່ນໆ.

**ຕາຕະລາງ 14: ຕົວຊີ້ບອກການປັບປຸງສຸຂະພາບຂອງແມ່**

| ຕົວຊີ້ບອກ | 2005 | 2008 | 2011 | 2013 | ຄາດໝາຍ 2015 |
|---|---|---|---|---|---|
| ຫລຸດອັດຕາການຕາຍຂອງແມ່ຕໍ່ເດັກເກີດມີຊີວິດ 100.000 ຄົນ | 405 | | 357 | 220 | 260 |
| ອັດຕາການເກີດໂດຍມີແພດຊ່ວຍ (%) | 23 | | 42 | 58 (2014) | 50 |
| ອັດຕາຄຸມກຳເນີດ (%) | 38,4 | | | 49 (2014) | 55 |
| ອັດຕາການກວດທ້ອງກ່ອນເກີດ (%) | 28,5 | | | 46 (2014) | 69 |

ການຊ່ວຍເຫລືອໃນເວລາເກີດ ແລະບັນດາຕົວຊີ້ວັດທີ່ກ່ຽວຂ້ອງກັບການຕາຍຂອງແມ່ແມ່ນມີຄວາມແຕກຕ່າງກັນໃນປະຊາກອນແຕ່ລະກຸ່ມ. ຢູ່ເຂດຕົວເມືອງອັດຕາການເກີດທີ່ປອດໄພມີສູງກວ່າຄາດໝາຍລະດັບປະເທດ 2 ເທົ່າ ແລະ ສູງກວ່າເຂດຊົນນະບົດເຖິງ 6 ເທົ່າ. ສຳລັບຊົນເຜົ່າທີ່ອາໄສຢູ່ໃນເຂດທີ່ມີເສັ້ນທາງເຂົ້າເຖິງແມ່ນສູງກວ່າເຂດທີ່ບໍ່ມີເສັ້ນທາງເຂົ້າເຖິງ 3 ເທົ່າ. ອີງຕາມລະດັບຄວາມຮັ່ງມີ, ອັດຕາການເກີດທີ່ມີຄວາມປອດໄພຂອງຄົນຮັ່ງແມ່ນສູງກວ່າຄົນທຸກຍາກ 8 ເທົ່າແລະ ອັດຕາດັ່ງກ່າວສຳລັບແມ່ຍິງທີ່ຈົບການສຶກສາຊັ້ນມັດທະຍົມແມ່ນສູງກວ່າແມ່ຍິງທີ່ບໍ່ມີການສຶກສາ 6 ເທົ່າ. ອັດຕາການເກີດໂດຍການຜ່າອອກແມ່ນ 4% ຂອງຈຳນວນເດັກເກີດໃໝ່ທັງໝົດເຊິ່ງຖືວ່າຍັງຕ່ຳ. ສິ່ງເຫຼົ່ານີ້ສະແດງໃຫ້ເຫັນວ່າການຮັກ ສາຊີວິດຂອງແມ່ໂດຍການເກີດລູກດ້ວຍວິທີຜ່າຕັດອອກນັ້ນຍັງບໍ່ທັນໄດ້ດີເທື່ອ.

ເຖິງວ່າຈະມີຄວາມຄືບໜ້າໃນການຈັດຕັ້ງປະຕິບັດບັນດາຕົວຊີ້ວັດທາງດ້ານການບໍລິການສຸຂະພາບແມ່ ແລະ ສຸຂະ ພາບຈະເລີນພັນ, ແຕ່ການບັນລຸເປົ້າໝາຍດັ່ງກ່າວຍັງມີຄວາມຫຍຸ້ງຍາກເນື່ອງຈາກບາງບັນຫາຄື: ອັດຕາການເກີດໃນສະຖານທີ່ໃຫ້ການບໍລິການສາທາລະນະສຸກຍັງຕ່ຳ; ຄຸນນະພາບຂອງການໃຫ້ບໍລິການທາງດ້ານສາທາລະນະສຸກຍັງຕ່ຳ. ສະນັ້ນ, ຈຶ່ງຕ້ອງມີການຊ່ວຍເຫລືອໃນການເພີ່ມອັດຕາປົກຄຸມຂອງການບໍລິການທີ່ມີຄຸນນະພາບ ແລະ ສົ່ງເສີມການເກີດລູກໃນສະຖານທີ່ບໍລິການສາທາລະນະສຸກ. ອອກແຮງໂຄສະນາເຜີຍແຜ່, ລະດົມທຶນຮອນ ແລະ ຈັດຕັ້ງປະຕິບັດກິດຈະກຳສ້າງຄວາມຮູ້ທາງດ້ານຮັກສາສຸຂະພາບໃຫ້ແກ່ບັນດາແມ່ຍິງ ແລະ ຜູ້ຊາຍໃນກຸ່ມເປົ້າໝາຍທີ່ອາໄສຢູ່ໃນເຂດຊົນນະບົດຫ່າງໄກສອກຫລີກ, ສ່ວນໃຫຍ່ແມ່ນເປັນກຸ່ມຄົນທຸກຍາກ ແລະມີລະດັບການສຶກສາຕ່ຳ.

### ເປົ້າໝາຍ 6: ສະກັດກັ້ນການແຜ່ລະບາດຂອງພະຍາດ HIV, ໄຂ້ຍຸງແລະພະຍາດຕິດຕໍ່ອື່ນໆ ເຮັດໄອວີ/ເອດສ (HIV and AIDS):

ອັດຕາການຕິດເຊື້ອເຮັດໄອວີ/ເອດສໃນປະຊາກອນທົ່ວໄປ ແມ່ນຢູ່ໃນລະດັບຕ່ຳ ເຊິ່ງມີຄວາມອາດສາມາດບັນລຸໄດ້ຄື: 0,28% ໃນປີ 2012, ຄາດໝາຍໃຫ້ບັນລຸໃນປີ 2015 ແມ່ນໃຫ້ໄດ້ຕ່ຳກວ່າ 1% ຂອງປະຊາກອນ; ຫຼຸດອັດຕາການຕິດເຊື້ອ HIV ໃນກຸ່ມສ່ຽງອາຍຸ 15-24 ປີ ໄດ້ 1,2% ຄາດໝາຍແມ່ນຕ່ຳກວ່າ 5%, ຫຼຸດອັດຕາການຕິດເຊື້ອ HIV ໃນກຸ່ມສາວບໍລິການອາຍຸ 15-49 ປີ ໄດ້ 2,44% ຄາດໝາຍແມ່ນຕ່ຳກວ່າ 5%; ການຕິດຕໍ່ພະຍາດຈາກເພດກົງກັນຂ້າມແມ່ນສາເຫດຫຼັກໃນການແຜ່ລະບາດຂອງ HIV/AIDS ຢູ່ ສປປລາວ. ກຸ່ມທີ່ມີພຶດຕິກຳສ່ຽງສູງມີອິດທິພົນຕໍ່ການແຜ່ຂະຫຍາຍເຊື້ອ HIV ໃນເຂດຕ່າງໆຂອງປະເທດ, ກຸ່ມດັ່ງກ່າວປະກອບມີເພດຊາຍຜູ້ທີ່ເຄື່ອນຍ້າຍໄປເຮັດວຽກໂດຍບໍ່ມີຄອບຄົວ ແລະ ກຸ່ມແຮງງານເຄື່ອນຍ້າຍໂດຍສະເພາະແມ່ນແມ່ຍິງທີ່ກັບຄືນມາຖິ່ນເດີມ. ກຸ່ມທີ່ມີຄວາມສ່ຽງສູງທີ່ສຸດແມ່ນແມ່ຍິງບໍລິການ ໂດຍສະເພາະຜູ້ທີ່ບໍ່ໄດ້ເຮັດວຽກຢູ່ໃນສະຖານບັນເທີງ ເຊິ່ງລູກຄ້າຄິດວ່າມີຄວາມປອດໄພໃນເວລາມີເພດສຳພັນກັບພວກເຂົາ.

ອັດຕາການປົກຄຸມຂອງຢາ ART ແມ່ນເພີ່ມຂຶ້ນແຕ່ກໍ່ຍັງຮຽກຮ້ອງໃຫ້ມີການປັບປຸງ, ຍັງມີບັນຫາທີ່ຕິດພັນກັບການລາຍງານ, ການກຳນົດ/ບົ່ງພະຍາດລວມທັງຄວາມຕ້ອງການທີ່ເພີ່ມຂຶ້ນຂອງປະຊາຊົນມາຮັບການປິ່ນປົວ. ເພື່ອບັນລຸຄາດໝາຍໃນປີ 2015 ກ່ຽວກັບການສະກັດກັ້ນການແຜ່ລະບາດຂອງພະຍາດ HIV/AIDS, ມີຫຼາຍຢ່າງຕ້ອງໄດ້ຮັບການຈັດຕັ້ງປະຕິບັດ ເປັນຕົ້ນ ການປະຕິຮູບດ້ານສາທາລະນະສຸກ, ສ້າງຄວາມຮ່ວມມືກັບຜູ້ທີ່ຖືກກະທົບກໍ່ຄືບັນດາກຸ່ມເຄືອຂ່າຍ, ຮັບປະກັນຄວາມປອດໄພການເຂົ້າເຖິງການປິ່ນປົວສຳລັບທຸກຄົນ ແລະ ເພີ່ມການປະກອບສ່ວນທາງດ້ານການເງິນ.

**ໄຂ້ມາລາເລຍ** (Malaria): ອັດຕາການຕາຍຍ້ອນໄຂ້ມາລາເລຍແມ່ນຫລຸດລົງຈາກ 7,1 ໃນປີ 2000 ມາເປັນ 0,29 ຕໍ່ປະຊາກອນ 100.000 ຄົນ ໃນປີ 2011 ເຊິ່ງຄາດວ່າຈະບັນລຸໄດ້ຕາມຄາດໝາຍທີ່ວາງໄວ້ (ຄາດໝາຍ ປີ 2015: ຕ່ຳກວ່າ 0,2 ຄົນ ຕໍ່ປະຊາກອນ 100.000 ຄົນ). ຍຸດທະສາດການປ້ອງກັນໄຂ້ມາລາເລຍແມ່ນປະຕິບັດສຳເລັດຜົນພໍສົມຄວນ ເຊິ່ງມີການນຳໃຊ້ມຸ້ງຢ່າງແຜ່ຫຼາຍໃນຜູ້ໃຫຍ່ ແລະ ເດັກນ້ອຍ. ການສຳຫຼວດແຫ່ງຊາດໃນການນຳໃຊ້ມຸ້ງກວມ 81% ຂອງເດັກນ້ອຍຕ່ຳກວ່າຫ້າປີນອນໃນມຸ້ງຍ້ອມຢາ ແລະ 98% ຂອງເດັກນ້ອຍນອນໃນມຸ້ງທັງຍ້ອມ ແລະ ບໍ່ຍ້ອມຢາ. ເຖິງຢ່າງໃດກໍ່ຕາມ, ການລະບາດຂອງໄຂ້ມາລາເລຍໃນ 5 ແຂວງພາກໃຕ້ໄດ້ໃນເດືອນທັນວາ 2011 ແມ່ນບັນຫາທີ່ຕ້ອງໄດ້ເອົາໃຈໃສ່ເພື່ອບໍ່ໃຫ້ພະຍາດດັ່ງກ່າວແຜ່ລາມ ແລະ ເປັນໄພຂົ່ມຂູ່ຕໍ່ການດຳລົງຊີວິດຂອງປະຊາຊົນ, ການລະບາດແມ່ນກ່ຽວຂ້ອງກັບໂຄງການການພັດທະນາຂະໜາດໃຫຍ່ທີ່ອາດເປັນພາຫະນະນຳເຊື້ອໄຂ້ມາລາເລຍໃຫມ່ທີ່ຮຸນແຮງ ແລະ ມີອາການດື້ຢາ.

**ວັນນະໂລກ:** ອັດຕາຄົນເປັນວັນນະໂລກຊອກຄົ້ນໃໝ່ທີ່ພົບເຊື້ອ 72% ຄາດໝາຍປີ 2015 ວາງໄວ້ 70% ເຫັນວ່າບັນລຸເກີນແຜນທີ່ວາງໄວ້ 2%, ອັດຕາຄົນເປັນວັນນະໂລກ ແລະ ໄດ້ຮັບການປິ່ນປົວໂດຍມີແພດຕິດຕາມໂດຍກົງ (DOTS) ບັນລຸໄດ້ 91% ທຽບໃສ່ຄາດໝາຍປີ 2015 ລື່ນຄາດໝາຍ 6%; ອັດຕາການຕິດເຊື້ອວັນນະໂລກໃນປີ 2012 ແມ່ນຢູ່ໃນລະດັບ 204 ຄົນ ຕໍ່ປະຊາກອນ100,000 ຄົນ ຂອງປະຊາກອນ (ຄາດໝາຍ ປີ 2015: ຕ່ຳກວ່າ 240 ຄົນ ຕໍ່ປະຊາກອນ 100.000 ຄົນຂອງປະຊາກອນ) ເຊິ່ງສາມາດຄວບຄຸມອັດຕາການເປັນວັນນະໂລກໄດ້. ເຖິງວ່າອັດຕາຄົນເປັນວັນນະໂລກ ແລະ ຕາຍຈາກການ

ເປັນວັນນະໂລກຢູ່ໃນ ສປປ ລາວ ມີການຫຼຸດລົງຢ່າງສະໝໍ່າສະເໝີໃນໄລຍະຜ່ານມາ, ແຕ່ໃນຜົນການສໍາຫລວດກ່ຽວກັບການລະບາດຂອງວັນນະໂລກຄັ້ງທໍາອິດໃນ 2010-2011 ເຫັນວ່າອັດຕາການລະບາດທີ່ພົບແມ່ນເກືອບສອງເທົ່າຂອງການຄາດຄະເນໄວ້ກ່ອນໜ້ານີ້. ພ້ອມນີ້ການສໍາຫຼວດຍັງຊີ້ໃຫ້ເຫັນວ່າຫຼາຍກໍລະນີຍັງບໍ່ທັນກວດພົບ ແລະ ຍັງບໍ່ທັນໄດ້ຮັບການປັບປຸງ.

## ເປົ້າໝາຍ 7: ຮັບປະກັນຄວາມຍືນຍົງດ້ານສິ່ງແວດລ້ອມ

ການຮັບປະກັນຄວາມຍືນຍົງທາງດ້ານສິ່ງແວດລ້ອມຕິດພັນກັບຄວາມທຸກຍາກ ແລະຊີວິດການເປັນຢູ່ຂອງປະຊາ ຊົນ ໂດຍສະເພາະໃນເຂດຊົນນະບົດທີ່ຕິດພັນກັບທໍາມະຊາດເປັນສ່ວນໃຫຍ່ ເຊັ່ນ: ການເກັບກູ້ເຄື່ອງປ່າຂອງດົງ ເພື່ອດໍາລົງຊີວິດ ແລະ ທັງເປັນແຫຼ່ງລາຍຮັບຂອງປະຊາຊົນ ແລະການເຮັດກະສິກໍາແບບທໍາມະຊາດ. ສະນັ້ນ, ການບັນລຸໄດ້ບັນດາຄາດໝາຍຕ່າງໆໃນເປົ້າໝາຍທີ 7 ນີ້ຈຶ່ງມີຄວາມສໍາຄັນໃນການຮັບປະກັນຄວາມຍືນຍົງຂອງການພັດທະນາ; ຜ່ານການຈັດຕັ້ງປະ ຕິບັດໄລຍະຜ່ານມາສາມາດຕີລາຄາໄດ້ດັ່ງລຸ່ມນີ້:

» ຄາດໝາຍ 7A: ຜັນຂະຫຍາຍບັນດາຫຼັກການພັດທະນາແບບຍືນຍົງເຂົ້າໃນນະໂຍບາຍ, ແຜນງານຂອງປະເທດ ແລະ ປັບປຸງສະພາບແວດລ້ອມທີ່ສູນເສຍ: ອັດຕາການປົກຫຸ້ມປ່າໄມ້ກວມປະມານ 47% (ຂໍ້ມູນການສໍາຫລວດປີ 2010) (ຄາດໝາຍ ປີ 2015: 65% ). ເຊິ່ງໄດ້ມີການກໍານົດ 3 ປະເພດປ່າ ຄື: ເຂດປ່າສະຫງວນແຫ່ງຊາດ 24 ແຫ່ງ ຈໍານວນ 3,77 ລ້ານເຮັກຕາ, ປ່າປ້ອງກັນ 139 ແຫ່ງ ຈໍານວນ 8,05 ລ້ານເຮັກຕາ, ປ່າຜະລິດຈໍານວນ 3,10 ລ້ານເຮັກຕາ ແລະ ປ່າສະ ຫງວນຂັ້ນແຂວງ, ຂັ້ນເມືອງອີກຈໍານວນໜຶ່ງສໍາເລັດໂດຍພື້ນຖານ. ສໍາລັບການປ່ອຍທາດອາຍກາກໂບນິກຕໍ່ຫົວຄົນຕໍ່ 1 ໂດລາຕໍ່ GDP ແມ່ນມີການລິເລີ່ມເກັບກໍາຂໍ້ມູນໂດຍກໍານົດເຂົ້າໃນບົດສື່ສານແຫ່ງຊາດດ້ານການປ່ຽນແປງດິນຟ້າອາກາດສະ ບັບທີ 1 ປີ 1997 ແລະທີ 2 ປີ 2000 ແລ້ວ, ເຊິ່ງຂັ້ນຕໍ່ໄປແມ່ນຈະມີການປຶກສາຫາລືກັບໜ່ວຍງານທີ່ຮັບຜິດຊອບເພື່ອສຶກສາ ແລະ ກໍານົດຄາດໝາຍລະອຽດຕື່ມ. ການປ່ອຍສານທໍາລາຍຊັ້ນໂອໂຊນແມ່ນຄາດໝາຍໜຶ່ງທີ່ ສປປ ລາວ ໄດ້ວາງຄາດໝາຍຈະຫຼຸດຜ່ອນການປ່ອຍສານທີ່ທໍາລາຍຊັ້ນໂອໂຊນປະເພດ HCFC ໃຫ້ໄດ້ 10% ໃນປີ 2015.

» ຄາດໝາຍ 7B: ຫຼຸດຜ່ອນການສູນເສຍຊີວະນານາພັນ: ເປັນຄາດໝາຍໜຶ່ງທີ່ມີຄວາມສ່ຽງຈະບໍ່ບັນລຸເນື່ອງຈາກວ່າອັດຕາສ່ວນສາຍພັນທີ່ກໍາລັງຈະສູນພັນ ແລະກໍາລັງໄດ້ຮັບໄພຂົ່ມຂູ່ມີທ່າອ່ຽງເພີ່ມຂຶ້ນຈາກ 115 ຊະນິດໃນປີ 2010 ມາເປັນ 167 ຊະນິດໃນປີ 2011.

» ຄາດໝາຍ 7C: ຫຼຸດຜ່ອນອັດຕາສ່ວນປະຊາກອນທີ່ບໍ່ໄດ້ຊົມໃຊ້ນໍ້າສະອາດໃຫ້ເຫຼືອເຄິ່ງໜຶ່ງໃນປີ 2015: ອັດຕາສ່ວນການຊົມໃຊ້ນໍ້າສະອາດສາມາດບັນລຸໄດ້ຕາມແຜນ, ໃນປີ 2014 ອັດຕາການຊົມໃຊ້ນໍ້າສະອາດບັນລຸ 84,71% (ຄາດໝາຍ ປີ 2015: 80%), ອັດຕາຊົມໃຊ້ວິດຖ່າຍຄອບຄົວ ໃນປີ 2014 ບັນລຸໄດ້ 67,92% (ຄາດໝາຍ ປີ 2015: 60%) ຖືວ່າປະຕິບັດໄດ້ລື່ນຄາດໝາຍທີ່ວາງໄວ້.

## ເປົ້າໝາຍ 8: ສ້າງຄູ່ຮ່ວມງານດ້ານການພັດທະນາໃນຂອບເຂດທົ່ວໂລກ

ເປົ້າໝາຍທີ 8 ແມ່ນມີຄວາມຄືບໜ້າຫຼາຍສົມຄວນ ເຊັ່ນ: ປະເທດພັດທະນາແລ້ວ ໄດ້ມີມາດຕະການໃນການຍົກ ເລີກສິ່ງກີດຂວາງທາງດ້ານການຄ້າໃຫ້ແກ່ ສປປ ລາວ ຕົວຊີ້ວັດກ່ຽວກັບອັດຕາພາສີສິນຄ້າສົ່ງອອກຂອງ ສປປ ລາວ ໂດຍສະເພາະແມ່ນສິນຄ້າກະສິກໍາ, ເສື້ອຜ້າ ແລະ ເຄື່ອງຕັດຫຍິບ ທີ່ສົ່ງໄປປະເທດພັດທະນາແລ້ວ ແມ່ນມີທ່າອ່ຽງຫຼຸດລົງ. ປະເທດທີ່ໃຫ້ສະຖານະສິດທິພິເສດ (MFN) ກັບ ສປປ ລາວ ໄດ້ຫຼຸດອັດຕາພາສີລົງຫຼາຍກວ່າເຄິ່ງຂອງອັດຕາໃນປີ 1990. ນອກຈາກນີ້, ປະເທດທີ່ໃຫ້ສິດທິພິເສດທາງດ້ານການຄ້າ (Prefere ntial Trade Agreement s) ຕໍ່ສປປ ລາວ ໄດ້ຫຼຸດອັດຕາພາສີລົງຫຼາຍກວ່າເຄິ່ງເຊັ່ນດຽວກັນ. ຕະຫຼາດຂອງປະເທດທີ່ພັດທະນາແລ້ວ ຍັງໃຫ້ປອດພາສີ 99% ສໍາລັບສິນຄ້າກະສິກໍາ, ເສື້ອຜ້າ ແລະ ເຄື່ອງຕັດຫຍິບ ຈາກ ສປປ ລາວ. ທະນາຄານໂລກ ແລະກອງທຶນການເງິນລະຫວ່າງປະເທດ ໃຫ້ທັດສະນະວ່າ ສປປ ລາວ ຍັງເປັນປະເທດທີ່ມີຄວາມສ່ຽງດ້ານໜີ້ສິນໃນລະດັບສູງ ເຖິງແມ່ນວ່າຕົວຊີ້ວັດດ້ານໜີ້ສິນຈະດີຂຶ້ນ ພ້ອມທັງເສດຖະກິດມີການຂະຫຍາຍຕົວຢ່າງເນື່ອງ ແລະ ໝັ້ນຄົງ. ຕົວຊີ້ວັດດ້ານໜີ້ສິນພາຍນອກ ແລະໜີ້ ສິນທີ່ລັດຄໍ້າປະກັນຂອງ ສປປ ລາວ ແມ່ນດີຂຶ້ນເນື່ອງມາຈາກເສດຖະກິດມີການເຕີບໂຕທີ່ແຂງແຮງ, ເງິນກີບທີ່ແຂງຄ່າຂຶ້ນ ແລະສະພາບແວດລ້ອມພາຍນອກທີ່ເອື້ອອໍານວຍ.

### ເປົ້າໝາຍ 9: ຫຼຸດຜ່ອນຜົນກະທົບຈາກລູກລະເບີດບໍ່ທັນແຕກໃນ ສປປ ລາວ

ຈາກປີ 1964 ຮອດ ປີ 1973 ແມ່ນໄລຍະທີ່ປະຊາຊົນລາວ ໄດ້ຮັບຜົນກະທົບຈາກລູກລະເບີດ ຂອງສົງຄາມອິນໂດຈີນຄັ້ງທີ 2, ຊຶ່ງໃນໄລຍະ 9 ປີ ໄດ້ມີລະເບີດບໍ່ທັນແຕກປະມານ 2,08 ລ້ານໂຕນໃນຈຳນວນລະເບີດທັງຫມົດ 2,4 ລ້ານໂຕນ ຫຼື ປະມານ 30% ທີ່ຕົກໃສ່ ສປປ ລາວ, ສະເລ່ຽແລ້ວປະມານ 0,9 ໂຕນຕໍ່ປະຊາຊົນລາວຄົນຫນຶ່ງ.

ຜົນຂອງການສຳຫລວດລູກລະເບີດບໍ່ທັນແຕກປີ 2010 ໄດ້ພົບເຫັນຈຳນວນຜູ້ຖືກເຄາະຮ້າຍຈາກລູກລະເບີດບໍ່ທັນແຕກ 48.375 ກໍລະນີ ໃນໄລຍະ 1964-2008. ສ່ວນໃຫຍ່ຜູ້ຖືກຜົນກະທົບຈາກລູກລະເບີດບໍ່ທັນແຕກແມ່ນມີອາຍຸແຕ່ 15 ຫາ 35 ປີ, ໃນນີ້ 60% ຂອງຈຳນວນຜູ້ຖືກເຄາະຮ້າຍແມ່ນເສຍຊີວິດ ແລະ 40% ແມ່ນໄດ້ຮັບຜົນກະທົບ. ຄາດໝາຍຮອດປີ 2015 ໃຫ້ສາມາດກວດກູ້ລະເບີດບໍ່ທັນແຕກໃຫ້ໄດ້ 100.000 ເຮັກຕາ. ມາຮອດປະຈຸບັນສາມາດເກັບກູ້ໄດ້ 14.144 ເຮັກຕາ, ໃນນັ້ນ, ປີ 2011 ກວດກູ້ໄດ້ 4.050 ເຮັກຕາ, ປີ 2012 ໄດ້ 10.094 ເຮັກຕາ ແລະ ຄາດວ່າໃນປີ 2013 ຈະໄດ້ກວດກູ້ໄດ້ຕື່ມ 18.000 ເຮັກຕາ. ມີຫລາຍກ່ວາ 6.034 ເຮັກຕາ ແມ່ນເກັບກູ້ສຳເລັດໃນເນື້ອທີ່ດິນທຳການຜະລິດ: ດິນກະສິກຳ 3.666 ເຮັກຕາແມັດ ແລະ ເນື້ອທີ່ດິນໃນເຂດໂຄງການພັດທະນາຕ່າງໆ 2.368 ເຮັກຕາແມັດ. ທຳລາຍລູກລະເບີດບໍ່ທັນແຕກໄດ້ 186.984 ໜ່ວຍ, ໃນນີ້ 288 ຫນ່ວຍ ແມ່ນລູກລະເບີດໃຫຍ່, 33,195 ໜ່ວຍ ແມ່ນລະເບີດຫວ່ານ, 191 ຫນ່ວຍແມ່ນຫມາກມີນ ແລະ 153.313 ຫນ່ວຍ ແມ່ນລະເບີດບໍ່ທັນແຕກຊະນິດອື່ນໆ. ໂດຍລວມແລ້ວຄາດໝາຍການກວດກູ້ລະເບີດບໍ່ບັນລຸໄດ້ໃນປີ 2015.

ຄະນະກຳມະການແຫ່ງຊາດເພື່ອແກ້ໄຂລະເບີດບໍ່ທັນແຕກ ໄດ້ກຳນົດ 46 ເມືອງບູລິມະສິດໃນ 9 ແຂວງທີ່ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກຫລາຍກ່ວາຫມູ່ ຄື: ແຂວງຫົວພັນ, ຊຽງຂວາງ, ຫລວງພະບາງ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນ, ເຊກອງ, ຈຳປາສັກ ແລະ ອັດຕະປື. ຈາກຜົນຂອງການສຳຫລວດລູກລະເບີດບໍ່ທັນແຕກປີ 2010 ພົບເຫັນປະຊາຊົນທີ່ຖືກບາດເຈັບຍ້ອນລະເບີດບໍ່ທັນແຕກທັງຫມົດ 20.493 ຄົນ ແຕ່ມີພຽງ 583 ຄົນ ໄດ້ຮັບການບຳບັດ ແລະ ຊ່ວຍເຫລືອ.

## 3.4.6. ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ

ໃນແຜນການ 5 ປີຄັ້ງທີ VII (2011-2015) ໄດ້ກຳນົດອັດຕາການຂະຫຍາຍທາງເສດຖະກິດຂອງພາກເຫນືອບໍ່ຫຼຸດ 9,72%; ພາກກາງ 11,50% ແລະ ພາກໃຕ້ 12,65%; ລາຍໄດ້ສະເລ່ຍຕໍ່ຫົວຄົນພາກເຫນືອ 1.700 ໂດລາສະຫະລັດ, ພາກກາງ 2.200 ໂດລາສະຫະລັດ ແລະ ພາກໃຕ້ 1.300 ໂດລາສະຫະລັດ. ສູ້ຊົນຫຼຸດຜ່ອນອັດຕາຄວາມທຸກຍາກໃນເຂດພາກເຫນືອໃຫ້ຕ່ຳກວ່າ 8%, ພາກກາງ 3,5% ແລະ ພາກໃຕ້ 10%. ຫັນປ່ຽນໂຄງປະກອບເສດຖະກິດໃຫ້ໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

ການພັດທະນາເສດຖະກິດ-ສັງຄົມຢູ່ເຂດແຄ້ວນໃນໄລຍະຜ່ານມາໄດ້ປະເສີນກັບອຸປະສັກຫລາຍຢ່າງ ເປັນຕົ້ນ: ພະຍຸໄຮມາ, ນົກເຕັນ ແລະ ໄພພິບັດທຳມະຊາດອື່ນໆ ເຊິ່ງໄດ້ສ້າງຄວາມເສຍຫາຍໃຫ້ແກ່ບັນດາພື້ນຖານໂຄງລ່າງເສດຖະກິດ-ສັງ ຄົມ ແລະ ການຂະຫຍາຍຕົວທາງເສດຖະກິດຂອງເຂດແຄ້ວນ; ແຕ່ພັກ ແລະ ລັດຖະບານ ກໍໄດ້ສຸມທຸກກຳລັງເຂົ້າໃນການຟື້ນຟູຜົນເສຍຫາຍດັ່ງກ່າວ ເຊິ່ງໄດ້ເຮັດໃຫ້ເສດຖະກິດຂອງເຂດແຄ້ວນສືບຕໍ່ຂະຫຍາຍຕົວ ແລະ ມີຜົນສຳເລັດຫລາຍດ້ານ ເຊິ່ງສາມາດສະຫຼູບສັງລວມ ແລະ ຕີລາຄາ ດັ່ງນີ້:

### 1. ພາກເໜືອ

**ດ້ານເສດຖະກິດ**: ອັດຕາການຂະຫຍາຍຕົວຂອງຜະລິດຕະພັນພາຍໃນ (GDP) ສະເລ່ຍເພີ່ມຂຶ້ນ 9,74% ຕໍ່ປີ. ໃນນັ້ນ: ຂະແໜງກະສິກຳ-ປ່າໄມ້ ເພີ່ມຂຶ້ນຈາກ 6,16% ໃນສົກປີ 2010-2011 ມາເປັນ 6,45% ໃນສົກປີ 2014-2015; ຂະແໜງອຸດສາຫະກຳຈາກ 11,90% ໃນສົກປີ 2010-2011 ມາເປັນ 11,65% ໃນສົກປີ 2014-2015; ຂະແໜງບໍລິ ການເພີ່ມຂຶ້ນຈາກ 13,80% ໃນສົກປີ 2010-2011 ມາເປັນ 11,84% ໃນສົກປີ 2014-2015; ລາຍໄດ້ສະເລ່ຍຕໍ່ຫົວຄົນມີທ່າອ່ຽງເພີ່ມຂຶ້ນຈາກ 859,85 ໂດລາສະຫະລັດ ໃນສົກປີ 2010-2011 ມາເປັນ 1.402,82 ໂດລາສະຫະລັດ ສົກປີ 2014-2015 ເຫັນວ່າບໍ່ສາມາດບັນລຸຕາມຄາດໝາຍແຜນການ 5 ປີ 2011-2015 ທີ່ວາງໄວ້ ເນື່ອງຈາກໄດ້ຮັບຜົນກະທົບຈາກໄພທຳມະຊາດຫຼາຍຄັ້ງ, ການເກັບລາຍຮັບກໍ່ບໍ່ໄດ້ຕາມແຜນການ; ອັດຕາຄົວເຮືອນທຸກຍາກແມ່ນໄດ້ຫຼຸດລົງຈາກ 28,6% ໃນສົກປີ 2010-2011 ມາເປັນ 22,35% ໃນສົກປີ 2011-2012, ມາເປັນ 19,32% ໃນສົກປີ 2012-2013, ມາເປັນ 13,73% ໃນສົກປີ 2013-2014 ແລະ ຍັງເຫຼືອ 9,59% ໃນສົກປີ 2014-2015. ໂຄງປະກອບເສດຖະກິດ ເຫັນວ່າ ມີການຫັນປ່ຽນຈາກພາກກະສິກຳຫຼັກໄປສູ່ອຸດສາຫະກຳປຸງແຕ່ງທີ່ເພີ່ມມູນຄ່າຂອງສິນຄ້າຫຼາຍຂຶ້ນ ແລະ ຮູບແບບການບໍລິ ການທີ່ທັນສະໄໝກວ່າເກົ່າ ຄື: ຂະແຫນງກະສິກຳ-ປ່າໄມ້ ໄດ້ຄ່ອຍໆຫລຸດລົງຈາກ 51,66% ໃນສົກປີ 2010-2011 ມາເປັນ 43,15% ໃນສົກປີ 2014-2015; ຂະແຫນງການ

ອຸດສາຫະກຳ ເພີ່ມຂຶ້ນຈາກ 23,64% ໃນສົກປີ 2010-2011 ມາເປັນ 27,14% ໃນສົກປີ 2014-2015 ແລະ ການບໍລິການ ເພີ່ມຂຶ້ນ ຈາກ 24,68% ໃນສົກປີ 2010-2011 ມາເປັນ 29,71% ໃນສົກປີ 2014-2015. ເຂດພາກເໜືອມີທ່າແຮງ ແຕ່ການຜະລິດຍັງມີລັກສະນະຂະໜາດນ້ອຍ ແລະ ກະແຈກກະຈາຍ ໂດຍສະເພາະການພັດທະນາດ້ານອຸດສາຫະກຳແມ່ນຍັງບໍ່ທັນພັດທະນາຫຼາຍ, ປະຈຸບັນມີພຽງແຕ່ເຂື່ອນໄຟຟ້າຈຳນວນໜຶ່ງ, ການຂຸດຄົ້ນບໍ່ແຮ່ຂະໜາດນ້ອຍ ແລະ ບາງອາຊີບຫັດຖະກຳ ແລະ ການປຸງແຕ່ງອາຫານແບບຄອບຄົວຍັງມີບໍ່ຫຼາຍ.

***ການຈັດຕັ້ງປະຕິບັດບັນດາໂຄງການ ແລະ ວຽກງານທີ່ພົ້ນເດັ່ນ***: ການປະຕິບັດໂຄງການແມ່ນແນ່ໃສ່ ເພື່ອການພັດທະນາກະສິກຳ, ພັດທະນາຊົນນະບົດ, ການພັດທະນາຕົວເມືອງໂດຍຕິດພັນກັບການກໍ່ສ້າງພື້ນຖານອຸດສາຫະກຳ, ການບໍລິການ ແລະ ພັດທະນາທາງດ້ານສັງຄົມເພື່ອແນໃສ່ການຫລຸດຜ່ອນຄວາມທຸກຍາກ ແລະ ຄວາມແຕກໂຕນລະ ຫວ່າງແຂວງ ແລະ ພາກ; ຖືເອົາການຜະລິດເປັນສິນຄ້າຕິດພັນກັບວຽກຈັດສັນພູມລຳເນົາຖາວອນ, ຈັດສັນອາຊີບຄົງທີ່ໃຫ້ປະຊາ ຊົນດ້ວຍການຈັດຕັ້ງກຸ່ມສົ່ງເສີມການຜະລິດເພື່ອຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ. ສະນັ້ນ, ການພັດທະນາໂຄງລ່າງພື້ນຖານ ໄດ້ສຸມໃສ່ກໍ່ສ້າງ ແລະສ້ອມແປງລະບົບຊົນລະປະທານ, ເສັ້ນທາງ, ຂະຫຍາຍຕາຂ່າຍໄຟ ຟ້າ, ໂຮງຮຽນ, ໂຮງໝໍ ແລະ ອື່ນໆ ເປັນຕົ້ນແມ່ນ:

- ສຳເລັດການກໍ່ສ້າງຊົນລະປະທານນໍ້າມ້າວ-ນໍ້າແຫມັນ, ຊົນລະປະທານອ່າງນໍ້າຫີນ, ຊົນລະປະທານນໍ້າແສງ, ນໍ້າແທ້, ສືບຕໍ່ກໍ່ສ້າງຊົນລະປະທານນໍ້າມະອຸ່ນ ແລະນໍ້າຫຍ້າ ຢູ່ເມືອງສິງ ແລະສືບຕໍ່ກໍ່ສ້າງຊົນລະປະທານຫ້ວຍໂຊ້, ເລີ່ມລົງມືຈັດຕັ້ງປະຕິບັດຊົນລະປະທານຢູ່ເຂດໜອງສານເພື່ອຮັບໃຊ້ການຜະລິດກະສິກຳ.
- ສຳເລັດກໍ່ສ້າງເສັ້ນທາງເທດສະບານຫຼວງນໍ້າທາ-ສະໜາມບິນ ແຂວງຫຼວງນໍ້າທາ, ສຳເລັດການປັບປຸງ ແລະ ຍົກລະດັບສະໜາມບິນຫຼວງພະບາງ, ສຳເລັດໂຄງການກໍ່ສ້າງສະໜາມກິລາເມືອງໄຊ ແຂວງອຸດົມໄຊ.
- ສຳເລັດການກໍ່ສ້າງເສັ້ນທາງ 2W ຊ່ວງທາງເມືອງເງິນ-ປາກແບ່ງ ແລະ ຊ່ວງທາງເມືອງນາໝໍ້-ເມືອງໄຊ-ປາກແບງ-ເມືອງຮຸນ-ປາກແບງ ລວງຍາວ 180 ກິໂລແມັດ, ທາງເລກ 2E (ເມືອງຂວາ-ໄຕຈາງ), ເສັ້ນທາງເທດສະບານຫຼວງນໍ້າທາ-ສະໜາມບິນ ແຂວງຫຼວງນໍ້າທາ, ທາງ 1D (ທາງຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບຊຽງຂວາງ-ບໍລິຄຳໄຊ), ຂົວຂ້າມນໍ້າຂອງແຫ່ງທີ 4 ຫ້ວຍຊາຍ-ຊຽງຂອງ, ຂົວຂ້າມນໍ້າຂອງທ່າເດື່ອ-ປາກຄອນ, ການກໍ່ສ້າງຂົວຂ້າມນໍ້າຂອງມິດຕະພາບລາວ-ມຽນມ້າຢູ່ເຂດຊຽງກົກ (ເມືອງລອງ)-ເຂດຊຽງລາບ (ແຂວງທ່າຂີ້ເຫຼັກ), ສືບຕໍ່ກໍ່ສ້າງທາງເວັ້ນຕົວເມືອງ ເມືອງໄຊ ແລະ ຂົວ 3 ແຫ່ງ; ກໍ່ສ້າງຂົວຂ້າມນໍ້າຂອງຈຸດບ້ານນາສັກ-ຄົກເຂົ້າດໍ ເມືອງໄຊຍະບູລີ, ສືບຕໍ່ໂຄງການທະລຸ ແລະ ຍົກລະດັບທາງຂະໜານເສັ້ນທາງເລກ 13 ເໜືອ ແລະ ສືບຕໍ່ໂຄງການຍົກລະດັບເສັ້ນທາງປູຢາງ 2 ຊັ້ນ ກິໂລ 59 ທາງ 13 ເໜືອ ຫາ ດ່ານພູຫຼັກຄຳ ເມືອງນາໝໍ້ (ຊາຍແດນ ສປ ຈີນ), ສືບຕໍ່ກໍ່ສ້າງເສັ້ນທາງ ແລະ ຂົວແຕ່ນານົກຊຸ້ມເມືອງທຸລະຄົມ ແຂວງວຽງຈັນ-ບ້ານນາໄຊ ເມືອງທ່າພະບາດ ແຂວງບໍລິຄຳໄຊ, ສືບຕໍ່ໂຄງການກໍ່ສ້າງເສັ້ນທາງປູຢາງ 2 ຊັ້ນ ແຕ່ເມືອງອານຸວົງ-ບ້ານວຽງທອງ (ຕິດກັບທາງ 1D) 50,012 ກມ ແລະ ຂົວເບຕົງເສີມເຫຼັກ 4 ແຫ່ງ ຍາວ 267 ມ, ສືບຕໍ່ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ແຕ່ຂົວນໍ້າຍອນ ຫາ ລ່ອງແຈ້ງ ແລະ ມີຂົວເສີມເຫຼັກ 3 ແຫ່ງ ຍາວ 100 ມ.
- ສຳເລັດການສ້າງສາຍສົ່ງ 115 kV ເຊື່ອມຕໍ່ລະຫວ່າງສະຖານີ ຊຽງຂວາງ-ຊຳເໜືອ, ຫຼວງພະບາງ-ອຸດົມໄຊ-ຫຼວງນໍ້າທາ; ສືບຕໍ່ກໍ່ສ້າງສາຍສົ່ງ 230 kV ເພື່ອເຊື່ອມຕໍ່ສະຖານີ ນາຊາຍທອງ-ຫີນເຫີບ-ຫຼວງພະບາງ; ສືບຕໍ່ຂະຫຍາຍສາຍສົ່ງໄຟຟ້າເຂດພາກເໜືອ ໄປສູ່ເຂດຊົນນະບົດ ແລະເຂດຈຸດສຸມພັດທະນາ ເປັນຕົ້ນແມ່ນ: ໂຄງການຂະຫຍາຍຕາຂ່າຍໄຟຟ້າແຮງກາງ-ແຮງຕໍ່າ ແລະ ຕິດຕັ້ງໝໍ້ແປງໄຟຟ້າ ເຂົ້າເຂດຈຸດສຸມບ້ານເມືອງຈີມ, ສືບຕໍ່ຂະຫຍາຍຕາຂ່າຍໄຟຟ້າແຮງກາງ ແລະ ແຮງຕໍ່າເຂົ້າເຂດເມືອງວຽງທອງ ແລະ ເຂດຜາຖີ່ ເມືອງຊຳເໜືອແລະເຂດ 3 ເມືອງລຽບນ່າ, ສຳເລັດການກໍ່ສ້າງລະບົບໄຟຟ້າເຊື່ອມຕໍ່ເມືອງໄຊຍະບູລີ-ຫົງສາ-ເມືອງເງິນ-ຊຽງຮອນ-ເມືອງຄອບ, ສືບຕໍ່ກໍ່ສ້າງເຂື່ອນໄຟຟ້ານໍ້າຂອງຈຸດເມືອງໄຊຍະບູລີ ແລະ ໄຟຟ້າພະລັງງານຄວາມຮ້ອນຫົງສາ ພ້ອມກັນນັ້ນ, ກໍ່ມີການຟື້ນຟູ ແລະ ສ້ອມແປງພື້ນຖານໂຄງລ່າງທີ່ໄດ້ຮັບຜົນກະທົບຈາກໄພນໍ້າຖ້ວມ ໃນປີ 2011 ສຳເລັດເປັນຢ່າງດີ.

**ການຜະລິດເພື່ອຄໍ້າສະບຽງອາຫານ ແລະເປັນສິນຄ້າທີ່ເປັນທ່າແຮງ ເຮັດໃຫ້ຫຼາຍກິດຈະກໍາມີອັນພົ້ນເດັ່ນດັ່ງນີ້:**

- ໄດ້ສົ່ງເສີມການຜະລິດສະບຽງອາຫານ ເປັນຕົ້ນແມ່ນການຜະລິດເຂົ້າຢູ່ແຂວງວຽງຈັນ ໃນເນື້ອທີ່ການຜະລິດທັງໝົດ 65.500 ເຮັກຕາ ຜົນຜະລິດ 290.000 ໂຕນ ເທົ່າກັບ 90% ຂອງແຜນ 5 ປີ, ແຂວງໄຊຍະບູລີ ມີເນື້ອທີ່ 48.358 ເຮັກຕາ ຜົນຜະລິດ 192.980 ໂຕນ ເທົ່າກັບ 95% ຂອງແຜນການ 5 ປີ, ແຂວງຊຽງຂວາງ ມີເນື້ອທີ່ 58.904 ເຮັກຕາ ຜົນຜະລິດ 517.029,46 ໂຕນ ເທົ່າກັບ 93,05% ຂອງແຜນການ 5 ປີ. ສາເຫດທີ່ພາໃຫ້ບໍ່ສາມາດຕາມແຜນການ ເນື່ອງຈາກສະ ພາບດິນຊຸດໂຊມ, ແນວພັນບໍ່ໄດ້ຮັບການປັບປຸງ, ນໍ້າຖ້ວມບາງປີ ແລະສັດຕູພືດທໍາລາຍ.
- ໄດ້ສົ່ງເສີມໃຫ້ປະຊາຊົນປູກພືດເປັນສິນຄ້າ ຕິດພັນກັບອຸດສາຫະກໍາປຸງແຕ່ງທີ່ນໍາໃຊ້ເຕັກນິກ ແລະ ກົນຈັກເຂົ້າໃນການຜະລິດເຮັດໃຫ້ປະສິດທິພາບການຜະລິດ ແລະ ມູນຄ່າເພີ່ມເພີ່ມຂຶ້ນ ເດັ່ນກວ່າໝູ່ ແມ່ນຂະບວນການປູກສາລີອາຫານສັດ ຢູ່ແຂວງໄຊຍະບູລີມີເນື້ອທີ 62.394 ເຮັກຕາ ຜົນຜະລິດ 337.775 ໂຕນ, ຢູ່ແຂວງຫົວພັນເນື້ອທີ່ 19.698 ເຮັກຕາ ໃຫ້ຜົນຜະລິດ 540.718,03 ໂຕນ, ນອກຈາກນັ້ນ, ກໍ່ມີຢູ່ແຂວງວຽງຈັນ, ອຸດົມໄຊ, ບໍ່ແກ້ວ ແລະ ຊຽງຂວາງ ເພື່ອຕອບສະໜອງໃຫ້ຕະຫລາດ ເຊັ່ນ: ໄທ, ສປ.ຈີນ ແລະ ສສ.ຫວຽດນາມ.
- ໄດ້ຊຸກຍູ້ການລ້ຽງສັດແບບເປັນຟາມຫລາຍຂຶ້ນເປັນຕົ້ນແມ່ນ ງົວ, ຄວາຍ, ໝູ ເດັ່ນກວ່າໝູ່ແມ່ນຢູ່ ແຂວງໄຊຍະບູລີ, ຊຽງຂວາງ, ຫົວພັນ; ຄຽງຄູ່ກັນນັ້ນ, ກໍ່ໄດ້ມີການສົ່ງເສີມພາກເອກະຊົນພາຍໃນ ແລະຕ່າງປະເທດລົງທຶນປູກພືດອຸດສາຫະກໍາເປັນຕົ້ນແມ່ນ ຢາງພາລາ, ຊາ, ອ້ອຍຢູ່ ແຂວງຜົ້ງສາລີ, ຫຼວງນໍ້າທາ, ອຸດົມໄຊ; ມີການພັດທະນາການຄ້າຊາຍແດນລາວ-ຈີນຢູ່ແຂວງຫລວງນໍ້າທາ ແລະ ລາວ-ໄທຢູ່ແຂວງບໍ່ແກ້ວ ແລະ ໄຊຍະບູລີ, ລາວ-ຫວຽດ ນາມຢູ່ແຂວງຫົວພັນ; ການພັດທະນາການທ່ອງທ່ຽວໃນຫລາຍຮູບແບບຢູ່ແຂວງຫລວງພະບາງ; ການພັດທະນາຫັດຖະກໍາ, ຕໍ່າຫູກ, ທໍໄຫມ, ຈັກສານຢູ່ບັນດາແຂວງພາກເໜືອ; ການຜະລິດຊີມັງຢູ່ແຂວງວຽງຈັນ, ການຂຸດຄົ້ນໄຟຟ້າ ຢູ່ແຂວງວຽງຈັນ, ການຂຸດຄົ້ນຄໍາ ແລະ ແຮ່ທາດເພື່ອການສົ່ງອອກຢູ່ເມືອງລອງແຂວງຫລວງນໍ້າທາ ແລະ ແຂວງຊຽງຂວາງ.

ການພັດທະນາດ້ານສັງຄົມ ໄດ້ເອົາໃຈໃສ່ປະຕິບັດຢ່າງຕັ້ງໜ້າເພື່ອປັບປຸງຄຸນນະພາບ ແລະ ຍົກລະດັບດ້ານການສຶກສາ, ສາທາລະນະສຸກ ເພື່ອເປົ້າໝາຍການບັນລຸ MDGs ລວມເຖິງການພັດທະນາການທ່ອງທ່ຽວໃນຮູບແບບຕ່າງໆ ເປັນຕົ້ນແມ່ນ: ວຽກງານການສຶກສາໄດ້ມີການສືບຕໍ່ປັບປຸງ ແລະສະໜອງອຸປະກອນການສຶກສາຕາມເຂດກຸ່ມບ້ານພັດທະນາ ແລະການສຶກສາຊັ້ນສູງ. ສາທາລະນະສຸກກໍ່ມີການສ້າງຕັ້ງກອງທຶນປະກັນສຸຂະພາບຂອງຊຸມຊົນ ເພື່ອສ້າງເງື່ອນໄຂສະດວກໃນການເປິ່ນປົວ. ສົ່ງເສີມ ແລະ ພັດທະນາແຫລ່ງທ່ອງທ່ຽວແບບທໍາມະຊາດ, ວັດທະນະທໍາ ເຊັ່ນ: ໂຄງການທ່ອງທ່ຽວຊຸມຊົນ, ໂຄງການຈັດສັນເທດສະການເພື່ອດຶງດູດນັກທ່ອງທ່ຽວ ຢູ່ສະຖານທີ່ທີ່ມີຊື່ສຽງເຊັ່ນ: ຫລວງພະບາງ, ວັງວຽງ, ເມືອງສິງ, ຊຽງຂວາງ; ປັບປຸງພື້ນຖານບໍລິການການທ່ອງທ່ຽວ, ຍົກລະດັບການບໍລິການ, ການທ່ອງທ່ຽວ, ການຄ້າຂາຍຕາມຊາຍແດນ ກໍ່ໄດ້ຮັບການຈັດຕັ້ງປະຕິບັດເປັນຢ່າງດີ.

ເຖິງແມ່ນວ່າ, ເສດຖະກິດຂອງເຂດພາກເໜືອຈະຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີການພັດທະນາເຂດຈຸດສຸມ ແລະ ຕົວເມືອງ ເພື່ອຫລຸດຜ່ອນຄວາມແຕກໂຕນກັນ ແຕ່ຍ້ອນເຂດພາກເໜືອເປັນເຂດທີ່ມີຄວາມຫຍຸ້ງຍາກ ມີພູມສັນຖານເປັນເຂດພູສູງ ແລະ ຫີນຜາ, ໂຄງລ່າງພື້ນຖານຍັງບໍ່ທັນພັດທະນາຢ່າງພຽງພໍເຮັດການຈໍລະຈອນຂອງສິນຄ້າ ຈາກເຂດຊົນນະບົດມາສູ່ຕົວເມືອງຍັງມີໜ້ອຍ, ການຜະລິດກະສິກໍາຕົ້ນຕໍແມ່ນອີງໃສ່ນໍາລະດູຝົນ ຈຶ່ງເຮັດໃຫ້ລາຍໄດ້ສະເລ່ຍຕໍ່ຫົວຄົນທີ່ປະຕິບັດໃນຊ່ວງ 5 ປີຍັງບໍ່ສາມາດບັນລຸໄດ້ຕາມຄາດໝາຍສູ່ຊົນ 1.700 ໂດລາສະຫະລັດໃນປີ 2015 ແລະ ເຫັນວ່າອັດຕາຄົວເຮືອນທຸກຍາກສະເລ່ຍໃນພາກເໜືອໄດ້ຫຼຸດລົງ ແຕ່ຢູ່ແຂວງຫົວພັນກໍ່ຍັງເປັນແຂວງທີ່ມີອັດຕາສ່ວນຄົວເຮືອນທຸກຍາກສູງທີ່ສຸດຖ້າທຽບ ໃສ່ບັນດາແຂວງພາກເໜືອ, ໃນຂະນະທີ່ແຂວງຫຼວງພະບາງ, ໄຊຍະບູລີ, ຊຽງຂວາງ ແລະ ແຂວງວຽງຈັນ ເປັນແຂວງທີ່ມີອັດຕາສ່ວນຄົວເຮືອນທຸກຍາກຕໍ່າທີ່ສຸດເມື່ອທຽບໃສ່ລະດັບຄາດໝາຍ.

ຕາຕະລາງ 15: ສັງລວມການຈັດຕັ້ງປະຕິບັດຕົວເລກຄາດໝາຍແຜນການ 5 ປີ (2011-2015) ຂອງພາກເໜືອ

| ລ/ດ | ລາຍການ | ຫົວໜ່ວຍ | ແຜນການ 5 ປີ (2011-15) | ປະຕິບັດ ສົກປີ 2010-11 | ປະຕິບັດ ສົກປີ 2011-12 | ປະຕິບັດ ສົກປີ 2012-13 | ປະຕິບັດ ສົກປີ 2013-14 | ແຜນການ ສົກປີ 2014-15 |
|---|---|---|---|---|---|---|---|---|
| 1 | ຈໍານວນປະຊາກອນ | ຄົນ | 2,680,000 | 2,622,925 | 2,644,715 | 2,674,146 | 2,638,665 | 2,679,499 |
| 2 | ອັດຕາການເຕີບໂຕ ຂອງປະຊາກອນ | % | 2.00 | 2.30 | 2.17 | 2.53 | 2.30 | 2.38 |
| 3 | GDP ຕາມລາຄາໃນປີ | ຕື້ກີບ | | 18,909.73 | 21,413.35 | 25,747.81 | 28,281.77 | 31,539.52 |
| 4 | GDP ສະເລ່ຍຕໍ່ຫົວ | ໂດລາ/ຄົນ | 1,700.00 | 859.85 | 957.17 | 1,148.18 | 1,273.11 | 1,402.82 |
| 5 | ອັດຕາຄົວເຮືອນທຸກຍາກ | % | 8.00 | 28.60 | 22.35 | 19.32 | 13.73 | 9.59 |
| 6 | ອັດຕາການຂະຫຍາຍ ຕົວທາງເສດຖະກິດ(GDP) | % | | 9.61 | 9.48 | 10.18 | 9.42 | 9.74 |
| | ກະສິກໍາ | % | | 6.16 | 6.72 | 6.11 | 7.10 | 6.45 |
| | ອຸດສາຫະກໍາ | % | | 11.90 | 12.68 | 13.41 | 12.43 | 11.65 |
| | ບໍລິການ | % | | 13.80 | 12.89 | 14.03 | 10.86 | 11.84 |
| 7 | ໂຄງປະກອບ ເສດຖະກິດ | % | 100.00 | 99.94 | 99.94 | 100.00 | 100.00 | 100.00 |
| | ກະສິກໍາ | % | 42.00 | 51.67 | 50.39 | 45.10 | 44.31 | 43.15 |
| | ອຸດສາຫະກໍາ | % | 34.00 | 23.64 | 23.94 | 27.09 | 26.31 | 27.14 |
| | ບໍລິການ | % | 24.00 | 24.63 | 25.61 | 27.81 | 29.38 | 29.71 |
| 8 | ໂຄງປະກອບແຮງງານ | % | 100.00 | 100.00 | 100.00 | 100.00 | 100.00 | 100.00 |
| | ກະສິກໍາ | % | | 56.20 | 55.87 | 51.74 | 55.40 | 56.26 |
| | ອຸດສາຫະກໍາ | % | | 22.09 | 21.68 | 21.75 | 19.79 | 21.02 |
| | ບໍລິການ | % | | 21.71 | 22.45 | 26.51 | 24.81 | 22.71 |
| 9 | ຈໍານວນແຮງງານ | ຄົນ | | 70,303.00 | 82,555.00 | 77,929.00 | 79,103.00 | 87,306.00 |
| | ກະສິກໍາ | ຄົນ | | 55,700. | 65,141.00 | 59,167.00 | 53,842.00 | 56,658.00 |
| | ອຸດສາຫະກໍາ | ຄົນ | | 5,017.00 | 6,279.00 | 7,460.00 | 9,193.00 | 11,554.00 |
| | ບໍລິການ | ຄົນ | | 9,587.00 | 11,136.00 | 11,303.00 | 16,067.00 | 19,094.00 |

ແຫຼ່ງຂໍ້ມູນ: ພະແນກແຜນການ ແລະ ການລົງທຶນປະຈໍາແຕ່ລະແຂວງ

## 2. ພາກກາງ

**ດ້ານເສດຖະກິດ:** ອັດຕາການຂະຫຍາຍຕົວຂອງຜະລິດຕະພັນພາຍໃນ(GDP) ສະເລ່ຍເພີ່ມຂຶ້ນ 11,53% ຕໍ່ປີ (ຄາດໝາຍ 5 ປີ 11,50%). ໃນນັ້ນ: ຂະແໜງກະສິກໍາ-ປ່າໄມ້ ເພີ່ມຂຶ້ນ 6,79% ໃນສົກປີ 2010-2011 ແລະ 7,71% ໃນສົກປີ 2014-2015; ຂະແໜງອຸດສາຫະກໍາ ເພີ່ມຂຶ້ນ 18,00% ໃນສົກປີ 2010-2011 ແລະ 16,29% ໃນສົກປີ 2014-2015; ຂະແໜງບໍລິການເພີ່ມຂຶ້ນ 11,08% ໃນສົກປີ 2010-2011 ແລະ 13,35% ໃນສົກປີ 2014-2015; ລາຍໄດ້ສະເລ່ຍຕໍ່ຫົວຄົນມີທ່າອ່ຽງເພີ່ມຂຶ້ນ ຈາກ 1.415,76 ໂດລາສະຫະລັດ ໃນສົກປີ 2010-2011 ມາເປັນ 2.380,24 ໂດລາສະຫະລັດ ສົກປີ 2014-2015 ສາມາດບັນລຸຕາມຄາດໝາຍແຜນການ5 ປີຄັ້ງທີ VII (2011-2015) ທີ່ວາງໄວ້ ເນື່ອງຈາກຄວາມໄດ້ປຽບທາງດ້ານທີ່ຕັ້ງ,

ພື້ນຖານໂຄງລ່າງທີ່ດີ, ການຜະລິດ, ການຄ້າ, ການລົງທຶນ, ການຕິດຕໍ່ພາຍໃນ ແລະສາກົນ. ອັດຕາຄົວເຮືອນທຸກຍາກ ກໍ່ມີທ່າອ່ຽງຫຼຸດລົງ ຈາກ 10,10% ໃນສົກປີ 2010-2011 ແລະ ຍັງເຫຼືອ 4,01% ໃນສົກປີ 2014-2015 ເທົ່າກັບຄາດໝາຍແຜນການ 5 ປີທີ່ວາງໄວ້.

ການຫັນປ່ຽນໂຄງປະກອບເສດຖະກິດຂອງພາກກາງ ເຫັນວ່າມີທ່າອ່ຽງໄປໃນທິດທາງດຽວກັນກັບພາກເໜືອ ຄື:ຂະແໜງກະສິກຳ-ປ່າໄມ້ຫລຸດລົງຈາກ 34,86 % ໃນສົກປີ 2010-2011 ມາເປັນ 26,91% ໃນສົກປີ 2014-2015; ຂະແໜງການອຸດສາຫະກຳເພີ່ມຂຶ້ນຈາກ 34,58 % ໃນສົກປີ 2010-2011 ມາເປັນ 38,05 % ໃນສົກປີ 2014-2015; ບໍລິການເພີ່ມຂຶ້ນ ຈາກ 29,94% ໃນສົກປີ 2010-2011 ມາເປັນ 35,04 % ໃນສົກປີ 2014-2015. ການຜະລິດຢູ່ພາກກາງ ຍັງສຸມຢູ່ເຂດທົ່ງພຽງລຽບຕາມແມ່ນ້ຳຂອງ ແລະ ຂະແໜງການບໍລິການຍັງແມ່ນການຄ້າລວມທັງການຄ້າຊາຍແດນ, ການທ່ອງທ່ຽວ ແລະການຂົນສົ່ງ.

**ການຈັດຕັ້ງປະຕິບັດບັນດາໂຄງການ ແລະ ວຽກງານທີ່ພົ້ນເດັ່ນ:** ເຂດພາກກາງເປັນເຂດທີ່ມີທ່າແຮງທາງດ້ານທີ່ຕັ້ງ, ການຜະລິດ, ພື້ນຖານໂຄງລ່າງ, ການຕິດຕໍ່ພາຍໃນແລະສາກົນ. ບັນດາທົ່ງພຽງໄດ້ຖືກນຳໃຊ້ເຂົ້າໃນການຜະລິດເປັນສິນຄ້າແລະສາມາດສົ່ງອອກໄປຕ່າງປະເທດ. ແຂວງທີ່ມີການຜະລິດເຂົ້າ ແລະ ພືດສູງກວ່າໝູ່ແມ່ນແຂວງສະ ຫວັນນະເຂດ, ນະຄອນຫລວງວຽງຈັນ, ຄຳມ່ວນ; ການລ້ຽງສັດໃຫຍ່ຢູ່ແຂວງຄຳມ່ວນ, ສະຫວັນນະເຂດ, ການລ້ຽງໝູແມ່ນຢູ່ແຂວງສະຫວັນນະເຂດ, ບໍລິຄຳໄຊ ແລະ ຄຳມ່ວນ; ການລ້ຽງປາກະຊັງ ພົ້ນເດັ່ນທີ່ສຸດແມ່ນນະຄອນຫລວງວຽງຈັນ; ການຂຸດຄົ້ນໄຟຟ້າຢູ່ແຂວງຄຳມ່ວນ ແລະ ແຮ່ທາດເພື່ອການສົ່ງອອກຢູ່ແຂວງສະຫວັນນະເຂດ; ການຜະລິດຊີມັງຢູ່ແຂວງຄຳມ່ວນ, ສະຫວັນນະເຂດ; ສ້າງນິຄົມອຸດສາຫະກຳຢູ່ນະຄອນຫລວງວຽງຈັນ 2 ບ່ອນຄື: ນິຄົມອຸດສາຫະກຳ ແລະການຄ້າຫລັກ 21 ແລະ ນິຄົມອຸດສາຫະກຳນະຄອນຫລວງ (VIP); ສ້າງເຂດເສດຖະກິດສະເພາະທ່າແຂກຢູ່ຫົວຂົວຂ້າມນ້ຳຂອງ ແລະ ເຂດເສດຖະກິດພິເສດສະເພາະພູຂຽວເມືອງທ່າແຂກແຂວງຄຳມ່ວນ; ການພັດທະນາເຂດອຸດສາຫະກຳຢູ່ແຂວງສະ ຫວັນນະເຂດ.

ອັນທີ່ພົ້ນເດັ່ນທີ່ສຸດ ແມ່ນໄດ້ສຸມໃສ່ການສ້າງນະຄອນຫລວງວຽງຈັນ ເຊິ່ງໄດ້ດຳເນີນກິດຈະກຳການກໍ່ສ້າງຕົ້ນຕໍ:

- ສຳເລັດການກໍ່ສ້າງທາງຖະໜົນວຽງຈັນ 450 ປີ (ດົງໂດກ-ດົງໂພສີ), ໂຄງການຂະຫຍາຍພື້ນທີ່ກົມມະລຽນພະທາດຫລວງ, ການກໍ່ສ້າງທາງຖະໜົນເຈົ້າໂພທິສາລາດ, ສຳເລັດການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ວັງໂພ ຊ່ວງທີ 1, ຊ່ວງທີ 2 ແລະ ຊ່ວງທີ 3 ເມືອງປາກງື່ມ, ການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານໝາກນາວນາລ້ອງ ໄລຍະ 2, ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນ ແລະ ພັດທະນາແຄມຂອງ ໄລຍະ ທີ 1, ການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານໂນນຊາຍ, ບ້ານໜອງແຫ້ວ, ບ້ານຫ້ອມໃຕ້, ຄ້ອຍແລນມານ-ສຳພັນນາ, ສຳເລັດໂຄງການສຳຫລວດ-ອອກແຜນຜັງລະອຽດເຂດຕົວເມືອງໃໝ່ ເຂດໜອງປີງ, ເຂດຖະໜົນ 450 ປີ ແລະ ເຂດພື້ນທີ່ບຶງທາດຫລວງ, ກໍ່ສ້າງທາງເລກ 10 ຊ່ວງ 1 (ດອນໜູນ - ທ່າງ່ອນ), ສືບຕໍ່ໂຄງການ ກໍ່ສ້າງທາງດອນນົກຂຸ້ມ T4 ຫາ ບ້ານນາຄວາຍ ຫາ ທາງ 450 ປີ, ໂຄງການສຳຫຼວດ-ອອກແບບ ແລະ ກໍ່ສ້າງທາງເຂດອຸດສາຫະກຳໂນນທອງ ຫາ ຫົວຊຽງບ້ານດຸ່ງ ຫາ ບ້ານໂຊກນ້ອຍອອກໃສ່ທາງ 450 ປີ, ສືບຕໍ່ໂຄງການກໍ່ສ້າງທາງ 1E ( ຊ່ວງແຕ່ເທດສະບານເມືອງໄກສອນ-ເຮືອນຫີນ ) ພ້ອມດ້ວຍຂົວ 9 ແຫ່ງ, ສືບຕໍ່ໂຄງການກໍ່ສ້າງທາງແຕ່ເມືອງໄຊຈຳພອນ-ຊາຍແດນແຫ່ງທຸ່ຍ ສສ ຫວຽດນາມ, ສືບຕໍ່ໂຄງການກໍ່ສ້າງທາງປູຢາງ 2 ຊັ້ນ ເສັ້ນ ທາງຫຼວງແຫ່ງຊາດ 1G ພ້ອມຂົວແຍກເລກ 9 ຫາ ຊາຍແດນສາລະວັນ.
- ສຳເລັດພື້ນຖານໂຄງລ່າງ ແລະປັດໃຈຕ່າງໆ ເພື່ອຈັດກອງປະຊຸມລັດຖະສະພາອາຊີ-ເອີຣົບ, ກອງປະຊຸມສຸດຍອດປະມຸກລັດອາຊີ-ເອີຣົບ (ອາເຊັມ) ຄັ້ງທີ IX ທີ່ ສປປ ລາວ, ກອງປະຊຸມຫ້ອງການສະມາຄົມນະຄອນຫຼວງວຽງຈັນທີ່ໃຊ້ພາສາຝະລັ່ງ, ຈັດງານມະຫາກຳກິລາມະຫາວິທະຍາໄລອາຊຽນ.
- ໄດ້ສຳເລັດການປັບປຸງສະໜາມບິນສາກົນວັດໄຕ, ການກໍ່ສ້າງຫໍປະຊຸມແຫ່ງຊາດ
- ສຳເລັດການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນບ້ານດອນຊຽວໄລຍະ 2 ເມືອງໜອງບົກ ແລະ ໂຄງການກໍ່ສ້າງທາງເບຕົງໃນເທດສະບານເມືອງທ່າແຂກໄລຍະ 2; ການກໍ່ສ້າງເຂື່ອນໄຟຟ້າເທີນຫີນບູນພາກຂະຫຍາຍມີກຳລັງການຜະລິດ 280 M.

ນອກນັ້ນ, ກໍ່ໄດ້ສຳເລັດໂຄງການກໍ່ສ້າງຂົວຂ້າມນ້ຳຂອງແຫ່ງທີ່ 3 ແຂວງຄຳມ່ວນ-ນະຄອນພະນົມ, ການສ້າງສາຍສົ່ງ 115 kV ເຊື່ອມຕໍ່ລະຫວ່າງສະຖານີ ປາກຊັນ-ທ່າແຂກ-ປາກບໍ່; ໄດ້ພັດທະນາເຂດທົ່ງຮາບເຊບັ້ງໄຟ, ບູລະນະ ແລະ ສ້ອມ ແປງທາງເລກ 9 ແລະ 13 ເພື່ອໃຫ້ເປັນສູນກາງການບໍລິການ, ການທ່ອງທ່ຽວຕາມແລວຕາເວັນອອກ-ຕາເວັນຕົກ ແລະ ເປັນເສັ້ນທາງເຊື່ອມລະຫວ່າງພາກກາງ ແລະພາກໃຕ້. ໄດ້ເອົາໃຈໃສ່ບູລະນະສ້ອມແປງ ແລະ ຟື້ນຟູບັນດາໂຄງການທີ່ເສຍຫາຍຈາກໄພພິບັດທຳມະຊາດໃນປີ 2011. ຄຽງຄູ່ກັນນັ້ນ ກໍ່ໄດ້ຊຸກຍູ້ສົ່ງເສີມການຜະລິດສະບຽງອາຫານ ເຊັ່ນ: ຂະບວນການປູກເຂົ້າ, ສາລີ, ກ້ວຍ, ຢາສູບ ແລະ ອື່ນໆ ທີ່ເດັ່ນກວ່າໝູ່ແມ່ນຢູ່ນະຄອນຫຼວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ ແລະ ສະຫວັນນະເຂດ. ນອກຈາກນັ້ນ ຍັງໄດ້ສົ່ງເສີມປະຊາຊົນປູກພືດປ້ອນໂຮງງານ

ເປັນຕົ້ນແມ່ນ: ເດັ່ນກວ່າໝູ່ ອ້ອຍແມ່ນຢູ່ແຂວງສະຫວັນນະເຂດ, ມັນຕົ້ນຢູ່ນະຄອນຫຼວງວຽງຈັນ, ບໍລິຄໍາໄຊ ແລະ ແຂວງຄໍາມ່ວນ; ການປູກພືດຜັກປອດສານພິດ, ພືດອຸດສາຫະກໍາ, ຕົ້ນໄມ້ອຸດສາຫະກໍາຈໍານວນໜຶ່ງ. ການລ້ຽງງົວ, ຄວາຍ, ຫມູ (ແບບເປັນຟາມ), ໄກ່ (ແບບເປັນຟາມ), ລ້ຽງແບ້, ລ້ຽງປາກະ ຊັງ ແລະ ປາຫນອງທໍາມະຊາດມີການຂະຫຍາຍຕົວ; ພ້ອມດຽວກັນນັ້ນ, ກໍ່ໄດ້ປະຕິບັດນະໂຍບາຍສົ່ງເສີມການຜະລິດທຸລະກິດຂອງພາກສ່ວນເສດຖະກິດຕ່າງໆນັບທັງປະຊາຊົນ ໂດຍເອົາວຽກງານການຜະລິດກະສິກໍາເປັນສິນຄ້າ ຕິດພັນກັບການສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ເຂົ້າໃນຂົງເຂດອຸດສາຫະກໍາປຸງແຕ່ງຢ່າງແຂງແຮງ; ການພັດທະນາວຽກການບໍລິການ ວຽກການທ່ອງທ່ຽວ, ສຶກສາ, ສາທາລະນະສຸກ, ການພັດທະນາສີມືແຮງງານ ແລະ ວຽກຮ່ວມມືກັບຕ່າງປະເທດ ກໍ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດດີຂຶ້ນກວ່າເກົ່າ; ແຂວງທີ່ມີອັດຕາຄົວເຮືອນທຸກຍາກຕໍ່າກວ່າຫມູ່ຢູ່ເຂດພາກກາງແມ່ນນະຄອນ ຫລວງວຽງຈັນ. ເຖິງຢ່າງໃດກໍ່ຕາມ, ໃນພາກກາງອັດຕາຄົວເຮືອນທຸກຍາກ ແມ່ນຫລຸດລົງທຽບເທົ່າກັບຕົວເລກຄາດໝາຍໃນລະດັບຊາດ.

### ຕາຕະລາງ 16: ສັງລວມການຈັດຕັ້ງປະຕິບັດຕົວເລກຄາດຫມາຍແຜນການ 5 ປີ ຄັ້ງທີ VII ຂອງພາກກາງ

| ລ/ດ | ລາຍການ | ຫົວໜ່ວຍ | ແຜນການ 5 ປີ (2011-15) | ປະຕິບັດ ສົກປີ 2010-11 | ປະຕິບັດ ສົກປີ 2011-12 | ປະຕິບັດ ສົກປີ 2012-13 | ປະຕິບັດ ສົກປີ 2013-14 | ແຜນການ ສົກປີ 2014-15 |
|---|---|---|---|---|---|---|---|---|
| 1 | ຈໍານວນປະຊາກອນ | ຄົນ | 3,000,000 | 2,354,548 | 2,410,955 | 2,448,199 | 2,557,580 | 2,622,595 |
| 2 | ອັດຕາການເຕີບໂຕຂອງປະຊາກອນ | % | 2.00 | 2.09 | 2.43 | 2.18 | 1.92 | 2.38 |
| 3 | GDP ຕາມລາຄາໃນປີ | ຕື້ກີບ | | 29,694.32 | 35,973.43 | 43,826.13 | 49,862.32 | 57,253.37 |
| 4 | GDP ສະເລ່ຍຕໍ່ຫົວ | ໂດລາ/ຄົນ | 2,200.00 | 1,415.76 | 1,684.86 | 1,869.23 | 2,055.65 | 2,380.24 |
| 5 | ອັດຕາຄົວເຮືອນທຸກຍາກ | % | | 10.10 | 6.81 | 5.13 | 4.51 | 4.01 |
| 6 | ອັດຕາການຂະຫຍາຍຕົວທາງເສດຖະກິດ (GDP) | % | | 12.69 | 12.19 | 11.98 | 11.69 | 11.83 |
| | ກະສິກໍາ | % | | 6.79 | 4.22 | 6.66 | 8.63 | 7.71 |
| | ອຸດສາຫະກໍາ | % | | 18.00 | 13.90 | 15.28 | 15.97 | 16.29 |
| | ບໍລິການ | % | | 11.08 | 20.96 | 23.49 | 12.63 | 13.35 |
| 7 | ໂຄງປະກອບເສດຖະກິດ | % | 100.00 | 99.38 | 99.18 | 100.00 | 100.00 | 100.00 |
| | ກະສິກໍາ | % | 23.00 | 34.86 | 31.65 | 29.12 | 28.12 | 26.91 |
| | ອຸດສາຫະກໍາ | % | 42.00 | 34.58 | 36.91 | 38.50 | 37.42 | 38.05 |
| | ບໍລິການ | % | 35.00 | 29.94 | 30.63 | 32.38 | 34.46 | 35.04 |
| 8 | ໂຄງປະກອບແຮງງານ | % | | 100.00 | 100.00 | 100.00 | 100.00 | 100.00 |
| | ກະສິກໍາ | % | | 55.83 | 55.33 | 56.25 | 55.63 | 61.82 |
| | ອຸດສາຫະກໍາ | % | | 31.12 | 31.60 | 35.17 | 32.30 | 22.99 |
| | ບໍລິການ | % | | 13.06 | 13.06 | 8.57 | 12.07 | 15.19 |
| 9 | ຈໍານວນແຮງງານ | ຄົນ | | 162,525.00 | 165,576.00 | 165,493.00 | 169,064.00 | 174,073.00 |
| | ກະສິກໍາ | ຄົນ | | 134,687.00 | 136,629.00 | 137,093.00 | 138,336.00 | 141,319.00 |
| | ອຸດສາຫະກໍາ | ຄົນ | | 17,109.00 | 17,871.00 | 17,765.00 | 19,211.00 | 18,543.00 |
| | ບໍລິການ | ຄົນ | | 10,729.00 | 11,076.00 | 10,634.00 | 11,517.00 | 14,212.00 |

ແຫຼ່ງຂໍ້ມູນ: ພະແນກແຜນການ ແລະ ການລົງທຶນປະຈໍາແຕ່ລະແຂວງ

## 3. ພາກໃຕ້

**ດ້ານເສດຖະກິດ:** ອັດຕາການຂະຫຍາຍຕົວຂອງຜະລິດຕະພັນພາຍໃນ (GDP) ສະເລ່ຍເພີ່ມຂຶ້ນ 12,65% ຕໍ່ປີ. ໃນນັ້ນ: ຂະແໜງກະສິກຳ-ປ່າໄມ້ ເພີ່ມຂຶ້ນຈາກ 7,08% ໃນສົກປີ 2010-2011 ແລະ 7,68% ໃນສົກປີ 2014-2015; ຂະແໜງອຸດສາຫະກຳ ເພີ່ມຂຶ້ນ 16,65% ໃນສົກປີ 2010-2011 ແລະ 16,38% ໃນສົກປີ 2014-2015; ຂະແໜງ ບໍລິການເພີ່ມຂຶ້ນ 16,18% ໃນສົກປີ 2010-2011 ແລະ 16,68% ໃນສົກປີ 2014-2015; ລາຍໄດ້ສະເລ່ຍຕໍ່ຫົວຄົນມີທ່າອ່ຽງເພີ່ມຂຶ້ນ ຈາກ 851,50 ໂດລາສະຫະລັດ ໃນສົກປີ 2010-2011 ມາເປັນ 1.630,04 ໂດລາສະຫະລັດ ໃນສົກປີ 2014-2015 ເຊິ່ງສາມາດບັນລຸຕາມຄາດໝາຍແຜນການ5 ປີ ຄັ້ງທີ VII (2011-2015) ທີ່ວາງໄວ້  ເນື່ອງຈາກເປັນທີ່ຕັ້ງຂອງເຂດສາມຫຼ່ຽມເສດຖະກິດສາກົນ, ມີການພື້ນຖານໂຄງລ່າງຮັບຮອງ, ການຜະລິດ, ການຄ້າຕາມເຂດຊາຍແດນ. ອັດຕາຄົວເຮືອນທຸກຍາກ ກໍ່ມີທ່າອ່ຽງຫຼຸດລົງ ຈາກ 27,03%  ໃນສົກປີ 2010-2011 ແລະ ຄາດວ່າຍັງເຫຼືອ 10,51% ໃນທ້າຍສົກປີ 2014-2015 ເກືອບເທົ່າກັບຄາດໝາຍແຜນການ 5 ປີທີ່ວາງໄວ້.

ການຫັນປ່ຽນໂຄງປະກອບເສດຖະກິດຂອງພາກໃຕ້ ຄື: ຂະແໜງກະສິກຳ-ປ່າໄມ້ຫລຸດລົງຈາກ 40,81% ໃນສົກປີ 2010-2011 ມາເປັນ 32.96% ໃນສົກປີ 2014-2015; ຂະແຫນງການອຸດສາຫະກຳເພີ່ມຂຶ້ນຈາກ 26.52% ໃນສົກປີ 2010-2011 ມາເປັນ 32.48 % ໃນສົກປີ 2014-2015; ບໍລິການເພີ່ມຂຶ້ນ ຈາກ 32,67% ໃນສົກປີ 2010-2011 ມາເປັນ 34,56% ໃນສົກປີ 2014-2015. ການຜະລິດຢູ່ພາກໃຕ້ ຍັງສຸມໃສ່ການຜະລິດກະສິກຳເປັນຫຼັກຢູ່ຕາມເຂດທົ່ງພຽງລຽບຕາມແມ່ນ້ຳຂອງ ແລະ ເຂດພູພຽງບໍລິເວນ.

ການຈັດຕັ້ງປະຕິບັດບັນດາໂຄງການ ແລະ ວຽກງານທີ່ພົ້ນເດັ່ນ:

- ໄດ້ເອົາໃຈໃສ່ກໍ່ສ້າງ ແລະ ສ້ອມແປງລະບົບຊົນລະປະທານ, ຊຸກຍູ້ ແລະ ສົ່ງເສີມປະຊາຊົນປູກເຂົ້ານາແຊງ ແລະ ການປູກພືດຕ່າງໆເຊັ່ນ: ປູກກະລຳປີ, ຜັກກາດ, ຫມາກແຫນ່ງ; ມີການລ້ຽງສັດເຊັ່ນ: ງົວ, ຄວາຍ, ໝູ, ໄກ່ ແລະ ອື່ນໆ.
- ພັດທະນາຕາມແຜນແມ່ບົດການເຊື່ອມໂຍງເຂດ 3 ຫລ່ຽມເສດຖະກິດ ເຊັ່ນ: ສຳເລັດໂຄງການກໍ່ສ້າງທາງແຕ່ເມືອງທ່າແຕງ-ບ້ານແບ່ງ, ການກໍ່ສ້າງທາງ 15A, ການກໍ່ສ້າງຂົວຂ້າມນ້ຳເຊໂດນ ແລະ ຂົວຂ້າມນ້ຳເຊຂະ    ໜາມ 3, ກໍ່ສ້າງທາງເລກ 14A (ຂົວຂ້າມປາກເຊ-ຊາຍແດນລາວ-ກຳປູເຈຍ); ສືບຕໍ່ກໍ່ສ້າງເສັ້ນທາງເຊກອງ-ດັກຈຶງ(16B), ກໍ່ສ້າງເສັ້ນທາງເຊກອງ-ດັກຈຶງ-ຊາຍແດນຫວຽດນາມ ແລະ ເສັ້ນທາງແຕ່ທ່າບັກທາເມືອງກະລຶມໃໝ່; ສຳເລັດການຍົກລະດັບ ແລະ ສ້ອມແປງສະຫນາມບິນປາກເຊ. ສືບຕໍ່ໂຄງການກໍ່ສ້າງທາງປູຢາງ ແຕ່ບ້ານຂາ-ບ້ານຫຽງ-ຊ່ອງຈະອູ ເມືອງສຸຂຸມາ ແຂວງຈຳປາສັກ, ສືບຕໍ່ໂຄງການກໍ່ສ້າງເສັ້ນທາງລຽບຊາຍແດນເບື້ອງຕາເວັນອອກ ແຕ່ຊາຍແດນ ສະຫວັນນະເຂດ/ສາລະວັນ/ເຊກອງ ລວງຍາວ 48.95 ກມ, ສືບຕໍ່ໂຄງ ການກໍ່ສ້າງທາງປູຢາງ 2 ຊັ້ນເສັ້ນທາງເລກທີ 26905 (S3 ຫຼັກໝາຍ) ແຕ່ແຍກທາງ 15 (ດ່ານລະໄລ) ຫາຊາຍແດນລາວ-ຫວຽດນາມ ແຂວງເທື່ອທຽນ ຍາວ 22.5 ກມ, ສືບຕໍ່ໂຄງການກໍ່ສ້າງທາງແຕ່ບ້ານມັນ-ດາກປຣາ-ດາກປະຈຳ-ດາກປະເນີ ເມືອງດາກຈຶງ ແຂວງເຊກອງ ຊາຍແດນເມືອງຊານໄຊ ແຂວງອັດຕະປື, ຍາວ 93 ກມ, ສືບຕໍ່ໂຄງການກໍ່ສ້າງທາງລຽບຊາຍແດນລາວ-ຫວຽດນາມ ແຕ່ບ້ານປະນອນ ເມືອງກະລຶມ ແຂວງເຊກອງ ຫາເມືອງຕະໂອ້ຍ ແຂວງສາລະວັນ ເຊື່ອມຕໍ່ໃສ່ເຂື່ອນເຊກອງ 5 ຄວາມຍາວ 101 ກມ, ສືບຕໍ່ໂຄງການກໍ່ສ້າງໂຄງການທາງ 18A ( ປາກຊ່ອງ-ບ້ານຫຼັກ 52 ) ຂອງແຂວງອັດຕະປື.
- ເອົາໃຈໃສ່ກໍ່ສ້າງ ແລະ ສ້ອມແປງລະບົບຊົນລະປະທານ ເຊັ່ນ: ຍົກລະດັບຊົນລະປະທານແກ້ງຄອງຫຼວງ ໄລຍະ II, ກໍ່ສ້າງຊົນລະປະທານເຊນ້ຳນ້ອຍໄລຍະ I,  ສຳເລັດ ແລະ ນຳໃຊ້ໂຄງການຊົນລະປະທານເຊປຽນເຂົ້າໃນການຜະລິດຄ້ຳສະບຽງອາຫານຢ່າງມີປະສິດທິຜົນສູງ.
- ກໍ່ສ້າງສາຍສົ່ງໄຟຟ້າແຮງກາງ-ຕ່ຳ ໄປສູ່ 6 ບ້ານເຂດຊາຍແດນລາວ-ໄທ ເມືອງສຸຂຸມມາ (ສຳເລັດແລ້ວ 4 ບ້ານ)ແລະ ສືບຕໍ່ກໍ່ສ້າງສາຍສົ່ງ ໄປ 26 ບ້ານຊາຍແດນລາວ-ກຳປູເຈຍ ເມືອງມຸນລະປະໂມກ ແຂວງຈຳປາສັກ; ສຳເລັດການກໍ່ສ້າງເຂື່ອນໄຟຟ້າເຊກະໝານ 3, ໄດ້ສືບຕໍ່ກໍ່ສ້າງເຂື່ອນໄຟຟ້ານ້ຳກົງ ແລະ ເຂື່ອນໄຟຟ້າເຊນ້ຳນ້ອຍ.
- ສົມທົບກັບຂະແຫນງການສືບຕໍ່ປັບປຸງຂອດການບໍລິການການຄ້າຜ່ານແດນຕາມເຂດດ່ານ ເປັນຕົ້ນ ດ່ານວັງເຕົ່າ, ດ່ານລະໄລໃຫ້ເປັນດ່ານສາກົນ; ມີການພັດທະນາສະຖານທີ່ທ່ອງທ່ຽວ ເພື່ອດຶງດູດນັກທ່ອງທ່ຽວ, ສືບຕໍ່ເອົາໃຈໃສ່ພັດທະນາວຽກງານການສຶກສາ ແລະ ສະຫນອງອຸປະກອນການສຶກສາ.

ບັນດາແຂວງທີ່ຢູ່ເຂດພາກໃຕ້ ໄດ້ຮັບການພັດທະນາ ບໍ່ວ່າຈະເປັນການຜະລິດກະສິກຳ, ອຸດສາຫະກຳກໍ່ຄືການບໍລິ ການ ໂດຍສະເພາະ ແຂວງຈຳປາສັກຈຶ່ງເປັນແຂວງທີ່ມີການພັດທະນາໄວກວ່າໝູ່ໃນບັນດາແຂວງພາກໃຕ້ ແລະ ເປັນແຂວງທີ່ມີອັດຕາຄົວເຮືອນທຸກຍາກຕ່ຳກວ່າຫມູ່ໃນເຂດພາກໃຕ້ ແລະ ຂອບເຂດທົ່ວປະເທດ, ສ່ວນແຂວງອັດຕະປື ແມ່ນມີອັດຕາຄົວເຮືອນທຸກຍາກເທົ່າກັບອັດຕາຄົວເຮືອນທຸກຍາກສະເລ່ຍລະດັບຊາດ.

ຜົນຜະລິດທີ່ພົ້ນເດັ່ນທີ່ສຸດໃນຂົງເຂດກະສິກຳແມ່ນກາເຟ, ໝາກຖົ່ວ, ມັນຝຣັ່ງ, ຢາສູບ ແລະ ຜັກ ເຊິ່ງແຂວງຈຳ ປາສັກ ເປັນແຂວງທີ່ມີການຜະລິດສູງທີ່ສຸດ. ສ່ວນການປູກຢາງພາລາແມ່ນໄດ້ປູກຢູ່ທຸກໆແຂວງຂອງພາກໃຕ້. ນອກຈາກນັ້ນ, ໄດ້ມີການພັດທະນາຕົວເມືອງທີ່ສຳຄັນຂອງພາກ ເຊັ່ນ: ເມືອງປາກເຊ, ເມືອງໄຊເສດຖາ, ເມືອງລະມາມ ແລະ ເມືອງສາລະວັນ. ບັນດາຕົວເມືອງທີ່ມີບົດບາດເປັນເສັ້ນທາງເຊື່ອມຕໍ່ລະຫວ່າງສູນກາງກັບເຂດຜະລິດສິນຄ້າ ແລະ ບັນດາຕະຫລາດບໍລິ ໂພກພາຍໃນຂົງເຂດ ເຊັ່ນ: ສາມັກຄີໄຊ, ທ່າໂທມ (ອັດຕະປື), ຄົງເຊໂດນ (ສາລະວັນ), ທ່າແຕງ (ເຊກອງ), ປາກຊ່ອງ, ປະ ທຸມພອນ (ຈຳປາສັກ) ກໍ່ໄດ້ຮັບການເອົາໃຈໃສ່ກໍ່ສ້າງ, ປັບປຸງ ແລະ ຈະສືບຕໍ່ບູລະນະຮັກສາ. ຂະແໜງອຸດສາຫະກຳປຸງແຕ່ງອາຫານ ເຊັ່ນ: ການປຸງແຕ່ງກາເຟ, ຊາ, ປຸງແຕ່ງໄມ້ໄດ້ມີການຂະຫຍາຍຕົວດີ; ຕະຫລາດຊາຍແດນໄດ້ຮັບການພັດທະນາຢ່າງຈະແຈ້ງ ແລະຕິດພັນກັບການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ.

**ຕາຕະລາງ 17: ສັງລວມການຈັດຕັ້ງປະຕິບັດຕົວເລກຄາດໝາຍແຜນການ 5 ປີ ຄັ້ງທີ VII ຂອງພາກໃຕ້**

| ລ/ດ | ລາຍການ | ຫົວໜ່ວຍ | ແຜນການ 5 ປີ (2011-15) | ປະຕິບັດ ສົກປີ 2010-11 | ປະຕິບັດ ສົກປີ 2011-12 | ປະຕິບັດ ສົກປີ 2012-13 | ປະຕິບັດ ສົກປີ 2013-14 | ແຜນການ ສົກປີ 2014-15 |
|---|---|---|---|---|---|---|---|---|
| 1 | ຈຳນວນປະຊາກອນ | ຄົນ | 1,400,000 | 1,238,525 | 1,306,635 | 1,334,889 | 1,362,586 | 1,379,427 |
| 2 | ອັດຕາການເຕີບໂຕຂອງປະຊາກອນ | % | 2.00 | 1.98 | 2.12 | 2.25 | 2.21 | 2.28 |
| 3 | GDP ຕາມລາຄາໃນປີ | ຕື້ກີບ | | 10,150.79 | 11,908.88 | 22,267.22 | 24,592.59 | 29,822.59 |
| 4 | GDP ສະເລ່ຍຕໍ່ຫົວ | ໂດລາ/ຄົນ | 1,300.00 | 851.50 | 1,059.50 | 1,257.75 | 1,455.40 | 1,630.04 |
| 5 | ອັດຕາຄົວເຮືອນທຸກຍາກ | % | | 27.03 | 19.20 | 14.56 | 13.38 | 10.51 |
| 6 | ອັດຕາການຂະຫຍາຍຕົວທາງເສດຖະກິດ (GDP) | % | | 11.90 | 12.38 | 12.54 | 12.64 | 13.03 |
| | ກະສິກຳ | % | | 7.08 | 8.18 | 8.75 | 6.70 | 7.68 |
| | ອຸດສາຫະກຳ | % | | 16.65 | 14.10 | 16.37 | 15.65 | 16.38 |
| | ບໍລິການ | % | | 16.18 | 13.04 | 14.71 | 16.97 | 16.68 |
| 7 | ໂຄງປະກອບເສດຖະກິດ | % | 100.00 | 100.00 | 100.00 | 100.00 | 100.00 | 100.00 |
| | ກະສິກຳ | % | 30.00 | 40.81 | 37.97 | 37.70 | 38.16 | 32.96 |
| | ອຸດສາຫະກຳ | % | 36.00 | 26.52 | 29.90 | 29.80 | 29.98 | 32.48 |
| | ບໍລິການ | % | 34.00 | 32.67 | 32.13 | 32.50 | 31.87 | 34.56 |
| 8 | ໂຄງປະກອບແຮງງານ | % | | 100.00 | 100.00 | 100.00 | 100.00 | 100.00 |
| | ກະສິກຳ | % | | 55.94 | 51.24 | 71.80 | 43.56 | 40.57 |
| | ອຸດສາຫະກຳ | % | | 31.73 | 38.61 | 20.17 | 37.91 | 37.75 |
| | ບໍລິການ | % | | 12.33 | 10.15 | 8.03 | 18.53 | 21.68 |
| 9 | ຈຳນວນແຮງງານ | ຄົນ | | 138,486.00 | 142,049.00 | 143,396.00 | 146,715.00 | 155,181.00 |
| | ກະສິກຳ | ຄົນ | | 98,886.00 | 97,491.00 | 97,439.00 | 97,326.00 | 100,012.00 |
| | ອຸດສາຫະກຳ | ຄົນ | | 10,974.00 | 14,379.00 | 14,401.00 | 16,070.00 | 20,210.00 |
| | ບໍລິການ | ຄົນ | | 28,626.00 | 30,178.00 | 31,556.00 | 33,319.00 | 34,959.00 |

ແຫຼ່ງຂໍ້ມູນ: ພະແນກແຜນການ ແລະ ການລົງທຶນປະຈຳແຕ່ລະແຂວງ

ສະຫຼຸບລວມແລ້ວເຫັນວ່າ ເສດຖະກິດຂອງບັນດາເຂດແຄວ້ນມີການເຕີບໂຕທີ່ບໍ່ສະເຫມີກັນ, ເຊິ່ງພາກກາງເປັນພາກທີ່ມີການພັດທະນາສູງກວ່າ ພາກເຫນືອ ແລະ ພາກໃຕ້ ເນື່ອງຈາກວ່າມີທ່າແຮງທາງດ້ານຊັບພະຍາກອນທໍາມະຊາດ ແລະ ຊັບພະຍາກອນມະນຸດ, ເປັນສູນລວມຂອງປະຊາກອນ, ມີໂຄງລ່າງພື້ນຖານທີ່ດີກວ່າ. ຄວາມແຕກຕ່າງດັ່ງກ່າວ ແມ່ນເນື່ອງມາຈາກເຂດພາກເຫນືອຂອງລາວ ເປັນເຂດທີ່ມີເງື່ອນໄຂຫຍຸ້ງຍາກເຊັ່ນ: ພູມສັນຖານເປັນເຂດພູສູງ ແລະ ຜາຫີນ, ໂຄງລ່າງພື້ນຖານຍັງບໍ່ທັນໄດ້ຮັບພັດທະນາເທົ່າທີ່ຄວນ, ການຜະລິດກະສິກໍາຕົ້ນຕໍ ແມ່ນອີງໃສ່ນໍ້າຝົນ. ເຖິງຢ່າງໃດກໍ່ຕາມ ພາກເຫນືອ ແມ່ນມີທ່າແຮງທາງດ້ານພະລັງງານໄຟຟ້າ, ບໍ່ແຮ່ ແລະ ການທ່ອງທ່ຽວ ກໍ່ຄືການພັດທະນາເຂດຊາຍແດນ.

## 3.4.7. ການພັດທະນາຂົງເຂດລັດ

### 1. ອົງການນິຕິບັນຍັດ

ສະພາແຫ່ງຊາດ ແມ່ນອົງການຕົວແທນແຫ່ງລັດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ເປັນອົງການສູງສຸດແຫ່ງອໍານາດລັດ ທັງເປັນອົງການນິຕິບັນຍັດມີພາລະບົດບາດຮັບຮອງເອົາລັດຖະທໍາມະນູນ, ກົດໝາຍ ແລະ ຕົກລົງບັນຫາພື້ນຖານສໍາຄັນຂອງຊາດ, ຕິດຕາມອົງການກວດກາລັດໃນການເຄົາລົບ ແລະ ປະຕິບັດກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ມະຕິຂອງກອງປະຊຸມສະພາແຫ່ງຊາດ. ໄລຍະຜ່ານມາ, ສະພາແຫ່ງຊາດ, ບັນດາຄະນະກໍາມະທິການ ແລະ ຄະນະສະມາຊິກສະພາແຫ່ງຊາດ ໄດ້ຈັດຕັ້ງຜັນຂະຫຍາຍຜົນສໍາເລັດຂອງກອງປະ ຊຸມສະໄຫມສາມັນແຕ່ລະເທື່ອຂອງສະພາແຫ່ງຊາດຊຸດທີ VII ດ້ວຍການລົງພົບປະກັບຜູ້ມີສິດເລືອກຕັ້ງ, ອໍານາດການປົກ ຄອງທ້ອງຖິ່ນ, ທະຫານ, ຕໍາຫລວດ ແລະ ປະຊາຊົນບັນດາເຜົ່າຢູ່ເຂດເລືອກຕັ້ງຕ່າງໆ ເພື່ອໂຄສະນາເຜີຍແຜ່ຜົນສໍາເລັດຂອງກອງປະຊຸມດັ່ງກ່າວ ຕິດພັນກັບການໂຄສະນາແນວທາງນະໂຍບາຍຂອງພັກ, ກົດລະບຽບຂອງລັດ ແລະ ແຜນພັດທະ ນາເສດຖະກິດ-ສັງຄົມແຫ່ງຊາດ, ສາມາດພົບປະກັບຜູ້ມີສິດເລືອກຕັ້ງໃນຂອບເຂດທົ່ວປະເທດໄດ້ 8.974 ຈຸດ, ມີຜູ້ເຂົ້າຮ່ວມ 1.924.485 ຄົນ,  ເປັນຍິງ 739.123 ຄົນ. ພ້ອມກັນນັ້ນ, ກໍໄດ້ເກັບກໍາ ແລະ ຮັບຟັງຄໍາຄິດຄໍາເຫັນຂອງປະຊາຊົນ ເພື່ອນໍາເອົາຂໍ້ສະເຫນີຕ່າງໆລາຍງານຕໍ່ອົງການຈັດຕັ້ງພັກ-ລັດ ແລະ ພາກສ່ວນກ່ຽວຂ້ອງເພື່ອປັບປຸງ ແລະ ແກ້ໄຂໃຫ້ສອດ ຄ່ອງຕາມນະໂຍບາຍ ແລະ ລະບຽບກົດຫມາຍຂອງລັດ.

ເອົາໃຈໃສ່ຄົ້ນຄ້ວາປັບປຸງ ແລະ ແກ້ໄຂບັນດາຄໍາຮ້ອງຂໍຄວາມເປັນທໍາ ໃຫ້ມີຄວາມວ່ອງໄວ, ຖືກກັບສິດ, ພາລະບົດບາດ ແລະ ຫນ້າທີ່ຂອງສະພາແຫ່ງຊາດ, ຊຶ່ງໃນໄລຍະຜ່ານມາສະພາແຫ່ງຊາດ ໄດ້ຮັບຄໍາຮ້ອງຂໍຄວາມເປັນທໍາທັງຫມົດ 5.818 ເລື່ອງ (ບໍ່ນັບຄໍາຮ້ອງຂໍທີ່ຄ້າງມາຕັ້ງແຕ່ສະພາແຫ່ງຊາດຊຸດທີ VI) ແກ້ໄຂໄດ້ທັງຫມົດ 3.817 ເລື່ອງ ເທົ່າກັບ 92,11%, ຄໍາຮ້ອງຂໍຄວາມເປັນທໍາສ່ວນຫລາຍແມ່ນຂໍ້ຂັດແຍ່ງທີ່ດິນ ແລະ ຂໍ້ຂັດແຍ່ງກ່ຽວກັບມູນມໍລະດົກ.

ກອງປະຊຸມສະໄຫມສະມັນເທື່ອທີ 3 ຂອງສະມາຊິກສະພາແຫ່ງຊາດຊຸດທີ VII ໃນເດືອນ ມິຖຸນາ 2012 ໄດ້ຮັບ ຮອງເອົາກົດຫມາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ, ໄດ້ຮັບຮອງເອົາກົດຫມາຍ 75 ສະບັບ ເປັນກົດໝາຍໃໝ່ 30 ສະບັບ ເຊັ່ນ: ກົດຫມາຍວ່າດ້ວຍພົນລະເມືອງ, ກົດຫມາຍວ່າດ້ວຍການສະກັດກັ້ນການກໍ່ການຮ້າຍ, ກົດໝາຍວ່າດ້ວຍຊັບສິນຂອງລັດ, ກົດຫມາຍວ່າດ້ວຍກິລາ-ກາຍຍະກໍາ, ກົດຫມາຍວ່າດ້ວຍການກວດສອບຂອງລັດ, ກົດຫມາຍວ່າດ້ວຍການຄ້າຂ້າມແດນ ແລະ ກົດຫມາຍວ່າດ້ວຍກະສິກໍາ. ສະມາຊິກສະພາແຫ່ງຊາດຍັງໄດ້ຮັບຮອງເອົາການແຕ່ງຕັ້ງປະທານກວດສອບແຫ່ງລັດ. ກອງປະຊຸມສະໄຫມສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ VII ໃນເດືອນທັນວາ 2012 ໄດ້ພິຈາລະນາຮັບຮອງເອົາໂຄງການກໍ່ສ້າງ ແລະ ຍົກຍ້າຍເທດສະບານເມືອງກະລຶມໃຫມ່ຂອງແຂວງເຊກອງ, ຊຶ່ງກົດຫມາຍດັ່ງກ່າວເປັນເຄື່ອງ ມືສໍາຄັນໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມໃນໄລຍະໃຫມ່ ແລະ ດ້ານອື່ນໆອີກ.

ຄະນະປະຈໍາສະພາແຫ່ງຊາດ ກໍໄດ້ຕົກລົງຮັບຮອງເອົາວຽກງານຈໍານວນຫນຶ່ງເປັນຕົ້ນ: ການເລືອກຕັ້ງແທນສະມາ ຊິກສະພາແຫ່ງຊາດຢູ່ເຂດເລືອກຕັ້ງທີ 12 ແຂວງຄໍາມ່ວນ, ຕົກລົງໃຫ້ສັດຕະຍາບັນແກ່ສົນທິສັນຍາ ແລະ ສັນຍາທີ່ ສປປ ລາວ ເປັນພາຄີຕາມການສະເຫນີຂອງລັດຖະບານເຊັ່ນ: ສັດຕະຍາບັນແກ່ສົນທິສັນຍາຂໍ້ຕົກລົງ ກ່ຽວກັບການປະສານງານດ້ານປ່າໄມ້ ລະຫວ່າງບັນດາລັດຖະບານຂອງບັນດາປະເທດສະມາຊິກສະມາຄົມອາຊີຕາເວັນອອກສ່ຽງໃຕ້ ແລະ ສາທາລະ ນະລັດເກົາຫລີ, ສັດຕະຍາບັນແກ່ສົນທິສັນຍາວ່າດ້ວຍຄັງແຮສຸກເສີນອາຊຽນບວກສາມ, ຂໍ້ຕົກລົງຫລາຍຝ່າຍສໍາລັບການສ້າງຕັ້ງສົນທິສັນຍາສາກົນສໍາລັບປະເທດກໍາລັງພັດທະນາທີ່ບໍ່ມີຊາຍແດນຕິດກັບທະເລ, ສົນທິສັນຍາຕ້ານການທໍລະມານ ແລະ ການກະທໍາ ຫຼື ການລົງໂທດອື່ນໆທີ່ໂຫດຮ້າຍປ່າເຖື່ອນໄຮ້ມະນຸດສະທໍາ, ສົນທິສັນຍາວ່າດ້ວຍການເຂົ້າເປັນສະມາຊິກອົງການການຄ້າໂລກ (WTO) ແລະ ສົນທິສັນຍາອື່ນໆອີກ.

ນອກຈາກນັ້ນ, ໄດ້ພິຈາລະນາ ແລະ ຕົກລົງບັນຫາສຳຄັນຈຳນວນໜຶ່ງ ເຊັ່ນ: ການຍົກເວັ້ນບາງບັນຫາໃຫ້ແກ່ທະ ນາຄານການຄ້າຕ່າງ-ປະເທດມະຫາຊົນ, ໂຄງການກໍ່ສ້າງທາງລົດໄຟຟ້າແຕ່ຊາຍແດນຈີນ-ລາວ (ບໍ່ເຕັນ ແຂວງຫຼວງນ້ຳທາ-ນະຄອນຫລວງວຽງຈັນ), ໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຂອງ ແຂວງໄຊຍະບູລີ. ພິຈາລະນາຕົກລົງໃຫ້ສັນຊາດລາວແກ່ຊາວຕ່າງດ້າວ ຈຳນວນ 189 ຄົນ, ຍິງ 89 ຄົນ ໃຫ້ສັນຊາດລາວ 9 ຄົນ ຍິງ 8 ຄົນ, ອະໄພຍະໂທດໃຫ້ແກ່ນັກໂທດທີ່ກ້າວໜ້າຈຳນວນ 2.278 ຄົນ, ຍິງ 450 ຄົນ (2012).

## 2. ອົງການບໍລິຫານ

ວຽກງານບໍລິຫານລັດໄດ້ມີການປັບປຸງໃໝ່ຫລາຍດ້ານລວມທັງການປັບປຸງດ້ານກົງຈັກການຈັດຕັ້ງ ແລະ ດ້ານນິຕິກຳເພື່ອໃຫ້ວຽກງານບໍລິຫານລັດ, ວຽກງານຄຸ້ມຄອງອົງການຈັດຕັ້ງທາງສັງຄົມ ແລະຄຸ້ມຄອງພົນລະເມືອງໄດ້ຮັບການພັດທະນາ ແລະ ສາມາດຜັນຂະຫຍາຍແນວທາງນະໂຍບາຍຂອງພັກ-ລັດຖະບານໃຫ້ມີຜົນສຳເລັດອັນສູງສຸດ.

ໄດ້ປັບປຸງກົງຈັກການຈັດຕັ້ງຈຳນວນໜຶ່ງ ເຊັ່ນ: ຫ້ອງວ່າການລັດຖະບານ, ກະຊວງພາຍໃນ, ກະຊວງວິທະຍາສາດ-ເຕັກໂນໂລຊີ, ກະຊວງໄປສະນີ-ໂທລະຄົມມະນາຄົມແລະການສື່ສານ, ກະຊວງສຶກສາ ແລະ ກິລາ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສ້າງຕັ້ງແຂວງໄຊສົມບູນ ຂຶ້ນຕື່ມ, ໄດ້ສ້າງຕັ້ງເມືອງໃໝ່ຈຳນວນ 4 ເມືອງ ມາຮອດປະຈຸບັນ ມີຈຳນວນເມືອງທັງໝົດ 148 ເມືອງ; ໄດ້ມີການຄົ້ນຄວ້າປັບປຸງລະບຽບການບໍລິຫານລັດຢູ່ຂັ້ນທ້ອງຖິ່ນ, ໄດ້ສະເໜີໃຫ້ລັດຖະບານຮັບຮອງເອົາການຈັດລະດັບເຂດຫ່າງໄກສອກ ຫຼີກທຸລະການດານໃນຂອບເຂດທົ່ວປະເທດ. ໄດ້ອະນຸມັດການສ້າງຕັ້ງ 140 ສະມາຄົມ ໃນທົ່ວປະເທດ ແລະ ໄດ້ອະນຸມັດສ້າງຕັ້ງ 9 ມູນນິທິ.

ໄດ້ຜັນຂະຫຍາຍກົດໝາຍວ່າດ້ວຍທະບຽນຄອບຄົວ ແລະ ກົດໝາຍຄອບຄົວ ໂດຍໄດ້ອອກຂໍ້ຕົກລົງນຳໃຊ້ການຈົດທະບຽນການເກີດ, ການເສຍຊີວິດ, ການແຕ່ງດອງ ແລະ ການຢ່າຮ້າງຂອງພົນລະເມືອງ ເພື່ອຄຸ້ມຄອງພົນລະເມືອງໃຫ້ເປັນລະບົບໃນຂອບເຂດທົ່ວປະເທດ. ນອກນັ້ນ ຍັງໄດ້ສ້າງແຜນທີ່ພູມສັນຖານແຂວງໄຊສົມບູນ, ສ້າງແຜນທີ່ພູມສັນຖານເຂດພາກໃຕ້ ແລະ ເທດສະບານເມືອງຊຳເໜືອ ແລະ ເມືອງວຽງໄຊ; ສຳເລັດການສ້າງແຜນທີ່ຂໍ້ມູນຂ່າວສານພູມສາດເທດ ສະບານເມືອງລະມາມ ແຂວງເຊກອງ, ເທດສະບານເມືອງໄຊເສດຖາ ແລະ ເມືອງສະໜາມໄຊ ແຂວງອັດຕະປື.

ເຖິງວ່າຈະມີຜົນສຳເລັດດັ່ງທີ່ກ່າວມາຂ້າງເທິງວຽກງານບໍລິຫານລັດຍັງມີຂໍ້ຄົງຄ້າງບາງດ້ານ ເຊັ່ນ: ການຄົ້ນຄວ້າເຊື່ອມຊຶມຜັນຂະຫຍາຍບັນດານິຕິກຳທີ່ອອກໄປແລ້ວແມ່ນຍັງບໍ່ທັນກວ້າງຂວາງ, ບາງນິຕິກຳຍັງມີຊ່ອງຫວ່າງແລະບໍ່ທັນຮັດກຸມເຊັ່ນ: ການບັນຈຸລັດຖະກອນໃໝ່ຍັງບໍ່ຖືກຕາມລະບຽບການເຮັດໃຫ້ການບັນຈຸບໍ່ຖືກຕາມຕຳແໜ່ງງານ; ການສ້າງແຜນພັດທະນາລັດຖະກອນ ຍັງບໍ່ທັນເປັນລະບົບເທົ່າທີ່ຄວນ ເຮັດໃຫ້ບໍ່ສາມາດຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

## 3. ອົງການຕຸລາການ

**ສານປະຊາຊົນ**: ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດໃຫ້ແກ່ຜູ້ພິພາກສາ ແລະ ພະນັກງານຂອງສານປະຊາຊົນໃຫ້ມີທັດສະນະທາງດ້ານກົດໝາຍຢ່າງຖືກຕ້ອງ, ມີຄວາມໂປ່ງໃສ, ມີຄວາມຮັບຜິດຊອບ, ມີຄວາມບໍລິສຸດຊື່ສັດຕໍ່ໜ້າທີ່ວຽກງານ. ໂຄສະນາ, ເຜີຍແຜ່ ແລະ ຝຶກອົບຮົມກ່ຽວກັບກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍການດຳເນີນຄະດີ, ການດຳເນີນຄະດີຊັບສິນທາງປັນຍາ ແລະການຄ້າລະຫວ່າງປະເທດ ເພື່ອໃຫ້ສອດຄ່ອງກັບລະບຽບການຂອງອົງການການຄ້າໂລກ, ການກຽມຄວາມພ້ອມເຂົ້າສູ່ປະຊາຄົມເສດຖະກິດອາຊຽນ. ສຳເລັດການປັບປຸງເນື້ອໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ຮ່າງກົດໝາຍວ່າດ້ວຍການດຳເນີນຄະດີເດັກ. ໄດ້ສະເໜີລາຍງານສະພາແຫ່ງຊາດພິຈາລະນາສ້າງຕັ້ງຄະນະສານແຮງງານ ແລະ ກະກຽມສ້າງເງື່ອນໄຂສ້າງຕັ້ງຄະນະສານປົກຄອງ.

ໄດ້ປະຕິບັດທິດໃນການປະຕິບັດໜ້າທີ່ປົກປ້ອງກົດໝາຍໃຫ້ມີຄວາມສັກສິດ, ເຂັ້ມງວດ ແລະມີຄວາມຍຸຕິທຳປະຊາຊົນໄດ້ຮັບການປົກປ້ອງ ແລະ ໃຊ້ສິດພື້ນຖານ ຂອງຕົນບົນພື້ນຖານກົດໝາຍ; ໃນໄລຍະ 5 ປີຜ່ານມາ ມີຄະດີເກີດຂຶ້ນທັງໝົດ 36.492 ເລື່ອງ, ຄ້າງມາ ມີ ຈຳນວນ 1.354 ເລື່ອງ ລວມທັງໝົດ 37.846 ເລື່ອງ, ແກ້ໄຂໄດ້ແລ້ວ 36.076 ເລື່ອງ ເທົ່າກັບ 95,32%, ຄາດໝາຍບໍ່ໃຫ້ຫລຸດ 85%; ໃນນີ້ ຄະດີທີ່ເກີດຂຶ້ນຫລາຍກວ່າໝູ່ແມ່ນ ຄະດີອາຍາມີເຖິງ 19.151 ເລື່ອງ ກວມ 50,6% ໂດຍສະເພາະແມ່ນຂໍ້ກ່າວຫາກ່ຽວກັບການຄອບຄອງ ແລະ ຄ້າຂາຍຢາເສບຕິດ; ຄະດີແພ່ງ ມີທັງໝົດ 11.583 ເລື່ອງ ກວມ 30,6% ທີ່ພົ້ນເດັ່ນແມ່ນສັນຍາກູ້ຢືມ ແລະ ທີ່ດິນ, ຄະດີການຄ້າ ມີທັງໝົດ 1.907 ເລື່ອງ, ອັນທີ່ເດັ່ນກວ່າໝູ່ແມ່ນຂໍ້ຂັດແຍ່ງກ່ຽວກັບສັນຍາກູ້ຢືມ. ນອກນັ້ນ, ຍັງເຫັນວ່າຄະດີຄອບຄົວແມ່ນບັນຫາໜຶ່ງທີ່ເກີດຂຶ້ນຫລາຍໃນສັງຄົມ ແລະ ມີທ່າອ່ຽງເພີ່ມຂຶ້ນ ອັນໄດ້ເຮັດໃຫ້ກະທົບເຖິງການດຳລົງຊີວິດ, ຮີດຄອງປະເພນີ ແລະ ວັດທະນະທຳ ຄະດີນີ້ມີເຖິງ 4.296 ເລື່ອງ, ຄະດີເດັກ ມີຈຳນວນ 881 ເລື່ອງ

ເດັ່ນກວ່າໝູ່ແມ່ນກ່ຽວພັນກັບການລັກຊັບຂອງພົນລະເມືອງ ແລະ ຢາເສບຕິດ, ຄະດີແຮງງານ ມີຈຳນວນ 28 ເລື່ອງ ເດັ່ນກວ່າແມ່ນການທ່ວງຄ່າແຮງງານ ແລະ ສັນຍາແຮງງານ. ສະນັ້ນ, ການສ້າງຂີດຄວາມສາມາດໃຫ້ອຳນາດການປົກຄອງ ແລະ ເຈົ້າໜ້າທີ່ພະນັກງານສານ ແມ່ນສຳຄັນຫຼາຍເພື່ອເຮັດໃຫ້ການດຳເນີນຄະດີ ແລະ ສະກັດກັ້ນໃຫ້ບັນຫາໃນສັງຄົມຫລຸດລົງເທື່ອລະກ້າວໂດຍໄດ້ຈັດຝຶກອົບຮົມຍົກລະດັບວຽກງານຈ່າສານໃຫ້ສານປະຊາຊົນຢູ່ຂັ້ນທ້ອງຖິ່ນ, ຍົກລະດັບຜູ້ພິພາກສາທົ່ວປະເທດເພື່ອໃຫ້ເຂົ້າໃຈແຈ້ງກ່ຽວກັບຂັ້ນຕອນຂອງການດຳເນີນຄະດີ.

ຄຽງຄູ່ກັບຜົນສຳເລັດຂ້າງເທິງ ຍັງມີສິ່ງທ້າທາຍຫລາຍດ້ານເປັນຕົ້ນແມ່ນການແກ້ໄຂຄະດີບາງຄັ້ງຍັງມີສຽງຈົ່ມວ່າ ຂອງສັງຄົມ ແລະ ຄະດີທີ່ໄດ້ຕັດສິນໄປແລ້ວຍັງມີການຮື້ຟື້ອງຄະດີຄືນໃໝ່ ເຊິ່ງສະແດງໃຫ້ເຫັນວ່າຄຸນນະພາບຂອງການຕັດສິນຄະດີແມ່ນຍັງບໍ່ທັນເຂັ້ມແຂງ. ການພັດທະນາພື້ນຖານໂຄງລ່າງ ໂດຍສະເພາະແມ່ນ ຫ້ອງການສານປະຊາຊົນເຂດຍັງບໍ່ທັນຕອບສະໜອງໄດ້ເທື່ອມີພຽງ 17 ເຂດທີ່ມີຫ້ອງການຖາວອນແລ້ວແຕ່ຄວາມຕ້ອງການຫ້ອງການສານປະຊາຊົນເຂດມີເຖິງ 39 ເຂດ.

**ໄອຍະການ**: ຜ່ານການຈັດຕັ້ງປະຕິບັດທິດທາງການພັດທະນາ ຕາມ 4 ແຜນງານ ແລະ 19 ໂຄງການເຫັນວ່າມີຄວາມຄືບໜ້າຫລາຍດ້ານ ເປັນຕົ້ນ ການເສີມສ້າງຄວາມສາມາດໃຫ້ກັບພະນັກງານທາງດ້ານການເມືອງແນວຄິດ ແລະ ດ້ານວິຊາສະເພາະເຊັ່ນ: ໄດ້ຈັດຝຶກອົບຮົມໃຫ້ຫົວໜ້າ, ຮອງຫົວໜ້າອົງການໄອຍະການເຂດ 39 ເຂດໃນທົ່ວປະເທດ, ຈັດສຳມະນາກ່ຽວກັບການຕິດຕາມ, ກວດກາຄະດີອາຍາ, ຄະດີແພ່ງຢູ່ອົງການໄອຍາການປະຊາຊົນ 3 ພາກ ແລະ ອົງການໄອຍະການປະຊາຊົນແຂວງອັນໄດ້ເຮັດໃຫ້ເຂົາເຈົ້າປະຕິບັດໜ້າທີ່ດ້ວຍຄວາມຄ່ອງຕົວ ແລະ ໂປ່ງໃສຫລາຍຂຶ້ນ; ໄດ້ຄົ້ນຄວ້າຫລັກສູດການຮຽນ-ການສອນວຽກງານໄອຍະການສຳເລັດແລ້ວຈຳນວນ 3 ຫຼັກສູດ ຄື: ຫຼັກສູດຝຶກອົບຮົມວຽກງານໄອຍະການໃຫ້ແກ່ພະນັກງານໄດ້ 95%; ຫລັກສູດກ່ຽວກັບເຕັກນິກການຂຽນຄຳຖະແຫລງ, ການເອົາຄຳໃຫ້ການ, ການຕິດຕາມກວດກາການປະຕິບັດກົດໝາຍ ແລະ ຫຼັກສູດຄຸ້ມຄອງບໍລິຫານກ່ຽວກັບໄອທີ ເພື່ອປ້ອນຂໍ້ມູນສະຖິຕິຄະດີເຂົ້າໃນລະບົບຄອມພິວເຕີ. ໄດ້ກວດກາການລະເມີດກົດໝາຍຢູ່ໃນສະຖານທີ່ກັກຕົວ, ໄດ້ເອົາໃຈໃສ່ຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານແຕ່ລະຂັ້ນ; ສາມາດແກ້ໄຂຄະດີອາຍາຂັ້ນຕົ້ນໄດ້ 28.403 ເລື່ອງເທົ່າກັບ 98,78% ຂອງຈຳນວນຄະດີທັງໝົດ; ແກ້ໄຂຄະດີແພ່ງຂັ້ນຕົ້ນໄດ້ 1.304 ເລື່ອງເທົ່າກັບ 99,24% ຂອງຄະດີທັງໝົດ; ໄດ້ແກ້ໄຂຄະດີອາຍາຂັ້ນອຸທອນ 1.646 ເລື່ອງເທົ່າກັບ 99,58%; ແກ້ໄຂຄະດີແພ່ງຂັ້ນອຸທອນ 2.980 ເລື່ອງເທົ່າກັບ 98,64%, ແກ້ໄຂຄະດີອາຍາ ແລະ ຄະດີແພ່ງຂັ້ນລົບລ້າງໄດ້ 619 ເລື່ອງ ເທົ່າກັບ 100% ແລະ 1.644 ເລື່ອງເທົ່າກັບ 96,31% ຕາມລຳດັບ. ສິ່ງນີ້ສະແດງໃຫ້ເຫັນເຖິງຄຸນນະພາບຂອງການແກ້ໄຂຄະດີໄດ້ຮັບການປັບປຸງ, ທາງສຽງອັນບໍ່ດີຂອງສັງຄົມກໍ່ຫລຸດລົງເທື່ອລະກ້າວ.

ນອກຈາກນັ້ນ, ສຳເລັດການກໍ່ສ້າງຫ້ອງການເຂດ 1 ເມືອງໄຊແຂວງອຸດົມໄຊ; ຫ້ອງການເຂດ 2 ເມືອງຜາອຸດົມແຂວງບໍ່ແກ້ວ; ຫ້ອງການເຂດ 1 ເມືອງສີໂຄດຕະບອງນະຄອນຫລວງວຽງຈັນ ແລະ 25 ເຂດແມ່ນກຳລັງດຳເນີນການກໍ່ສ້າງ. ສຳລັບການກໍ່ສ້າງຫ້ອງການເຂດ, ແຂວງແລະພາກອື່ນໆແມ່ນຈະສືບຕໍ່ສ້າງໃນຊຸມປີຕໍ່ໄປ.

### 3.4.8. ການຈັດຕັ້ງປະຕິບັດວຽກງານການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍ ເຂັ້ມແຂງຮອບດ້ານ ແລະ ບ້ານເປັນຫົວໜ່ວຍພັດທະນາ

ເພື່ອເປັນການຜັນຂະຫຍາຍມະຕິຂອງກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກເຂົ້າສູ່ຕົວຈິງ ໂດຍສະເພາະແມ່ນເພື່ອສ້າງຄວາມຫມັ້ນຄົງໃຫ້ແກ່ລັດປະຊາທິປະໄຕປະຊາຊົນ, ເສີມຂະຫຍາຍສິດເປັນເຈົ້າ ໃຫ້ແກ່ທ້ອງຖິ່ນຮາກຖານ. ດັ່ງນັ້ນ, ກົມການເມືອງສູນກາງພັກຈຶ່ງໄດ້ອອກມະຕິສະບັບເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012 ວ່າດ້ວຍການສ້າງແຂວງເປັນຫົວຫນ່ວຍຍຸດທະສາດ, ສ້າງເມືອງໃຫ້ເປັນຫົວຫນ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານໃຫ້ເປັນຫົວຫນ່ວຍພັດທະ ນາ ແລະ ລັດຖະບານກໍໄດ້ອອກຄຳສັ່ງຂອງນາຍົກລັດຖະມົນຕີສະບັບເລກທີ 16/ນຍ, ລົງວັນທີ 15 ມິຖຸນາ 2012 ໂດຍກຳນົດເອົາ 15 ກະຊວງ, 52 ເມືອງ ແລະ 109 ບ້ານໃນການເຮັດທົດລອງໃນສົກປີ 2012-2013; ຜ່ານການຈັດຕັ້ງປະຕິບັດໃນໄລຍະ 3 ປີຜ່ານມາ, ບັນດາຂະແໜງການຢູ່ສູນກາງແລະທ້ອງຖິ່ນ ລວມທັງປະຊີຊົນ ໄດ້ມີຄວາມເອົາໃຈໃສ່ຈັດຕັ້ງປະຕິ ບັດວຽກງານ 3 ສ້າງ ຢ່າງເປັນຂະບວນ ເຊິ່ງໄດ້ເປັນປັດໄຈຊຸກຍູ້ໃຫ້ທ້ອງຖິ່ນຮາກຖານມີການພັດທະນາ ແລະ ມີການປ່ຽນ ແປງຮອບດ້ານ ເຊິ່ງມີຜົນສຳເລັດອັນພົ້ນເດັ່ນດັ່ງນີ້:

- ບັນດາກະຊວງ ແລະ ບັນດາແຂວງ ທີ່ນອນໃນເປົ້າຫມາຍ ໄດ້ສ້າງນິຕິກຳໃນການແບ່ງຄວາມຮັບຜິດຊອບ ລະຫວ່າງສູນກາງ ແລະ ທ້ອງຖິ່ນ; ລະຫວ່າງແຂວງ, ເມືອງ ແລະ ບ້ານ; ເປັນຕົ້ນແມ່ນການແບ່ງປັນຜົນປະໂຫຍດກ່ຽວກັບວຽກງານການຄຸ້ມຄອງລາຍຮັບ-ລາຍຈ່າຍຢູ່ຂັ້ນທ້ອງຖິ່ນ ໂດຍສະເພາະ ການເບີກຈ່າຍງົບປະມານຢູ່ຂັ້ນເມືອງ; ໄດ້ມີຄະນະຮັບຜິດຊອ

ບຊີ້ນຳວຽກງານການເຮັດທົດລອງຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ເພື່ອເຮັດໜ້າທີ່ປະສານສົມທົບ, ຊຸກຍູ້ ແລະຕິດຕາມການຈັດຕັ້ງປະຕິບັດຕົວຈິງຢູ່ໃນບັນດາເມືອງ ແລະ ບ້ານເປົ້າໝາຍ ເຮັດໃຫ້ຄວາມເປັນເຈົ້າການຂອງທ້ອງຖິ່ນນັບມື້ນັບໄດ້ຖືກເສີມຂະ ຫຍາຍ;

- 15 ກະຊວງເປົ້າໝາຍກໍໄດ້ຈັດສົ່ງພະນັກງານຂອງຕົນລົງທ້ອງຖິ່ນທັງໃນໄລຍະສັ້ນ ແລະ ໄລຍະຍາວ ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ທ້ອງຖິ່ນ ເປັນຕົ້ນແມ່ນວຽກງານການປົກຄອງ, ຍຸຕິທຳ, ການຄຸ້ມຄອງການເງິນຂັ້ນເມືອງ ແລະ ຂັ້ນບ້ານ; ວຽກງານການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄຸ້ມຄອງໂຄງການລົງທຶນຂອງລັດຢູ່ຂັ້ນເມືອງ.
- ໄດ້ປຸກລະດົມຂະບວນການແຂ່ງຂັນຮັກຊາດ ແລະ ສ້າງບ້ານພັດທະນາ ຊຸກຍູ້ວຽກງານ 3 ສ້າງ ຢ່າງຟົດຟື້ນ ໃນທົ່ວປະເທດ.
- ການຈັດຕັ້ງພັກ-ອົງການປົກຄອງບ້ານ ແລະ ໜ່ວຍງານຕ່າງໆ ພາຍໃນບ້ານເປົ້າໝາຍເຮັດທົດລອງ 3 ສ້າງ ໄດ້ຮັບການປັບປຸງໃຫ້ມີຄວາມເຂັ້ມແຂງທາງດ້ານການເມືອງແນວຄິດ, ແບບແຜນນຳພາຄຸ້ມຄອງ ແລະບໍລິຫານ; ການປະຕິບັດລະບອບອຸດໜູນໃຫ້ພະນັກງານຂັ້ນບ້ານທີ່ບໍ່ມີເງິນເດືອນ ໄດ້ກະຕຸກຊຸກຍູ້ຄວາມເປັນເຈົ້າການ-ຄວາມຮັບຜິດຊອບ, ຄວາມຫ້າວຫັນຂອງພະນັກງານຂັ້ນບ້ານໃຫ້ສູງຂຶ້ນກວ່າເກົ່າ.
- ຄວາມອາດສາມາດບົ່ມຊ້ອນ ແລະ ທ່າແຮງຂອງທ້ອງຖິ່ນ ໄດ້ຮັບການຂຸດຄົ້ນ ແລະ ເສີມຂະຫຍາຍ ເປັນຕົ້ນແມ່ນ: ດ້ານການຜະລິດເປັນສິນຄ້າໄດ້ເກີດຂຶ້ນຫລາຍ; ມີການຈັດຕັ້ງເປັນກຸ່ມການຜະລິດຕິດພັນກັບການຊ່ວຍໜູນຂອງນັກວິຊາການ, ການສະໜອງສິນເຊື່ອ ແລະ ການຊອກຫາຕະຫລາດ ໄດ້ຫລາຍຂຶ້ນ; ການມອບສິດ, ມອບຄວາມຮັບຜິດຊອບ ແລະ ການຈັດສັນແບ່ງປັນຜົນປະໂຫຍດໃຫ້ແກ່ເມືອງ ແລະ ບ້ານເປົ້າໝາຍ ໄດ້ເລີ່ມມີ ລັກສະນະຕັ້ງໜ້າ ໂດຍສະເພາະ ການເກັບລາຍຮັບເຂົ້າງົບປະມານໄດ້ເພີ່ມຂຶ້ນໝົດທຸກເມືອງ ແລະ ບ້ານເປົ້າໝາຍ 3 ສ້າງ.
- ໄດ້ຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ຢູ່ເມືອງ ແລະ ບ້ານທົດລອງ 3 ສ້າງ ທັງໝົດ 943 ໂຄງການ ເປັນທຶນ 248 ຕື້ກີບ ເພື່ອເປັນການຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ແກ່ການພັດທະນາດ້ານຕ່າງໆ.
- ທະນາຄານນະໂຍບາຍ ໄດ້ສະໜອງສິນເຊື່ອໃຫ້ປະຊາຊົນ ຈຳນວນ 261,65 ຕື້ກີບ ເພື່ອຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ.
- ການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ການສ້າງບ້ານພັດທະນາມີຜົນຄືບໜ້າ ໂດຍອີງໃສ່ຜົນການກວດກາປະເມີນຄວາມທຸກຍາກ ແລະ ການພັດທະນາ ຕາມດຳລັດ 309/ນຍ ປີ 2014 ບ້ານທຸກຍາກເຫລືອພຽງແຕ່ 4 ບ້ານ (ບ້ານໄຊພັດທະນາ ເມືອງສິງ ແຂວງບໍ່ແກ້ວ, ບ້ານພຽງທົ່ງ ເມືອງໜອງແຮດ ແຂວງຊຽງຂວາງ, ບ້ານປະຈຸດອນ ເມືອງຕະໂອ້ຍ ແຂວງສາລະວັນ ແລະ ບ້ານຊຽງຫຼວງ ເມືອງດັກຈຶງ ແຂວງເຊກອງ), ຄອບຄົວທຸກຍາກມີ 1.322 ຄອບຄົວ, ບ້ານພັດທະນາມີ 82 ບ້ານ, ບ້ານປອດຄະດີ ມີ 109 ບ້ານ ແລະ ບ້ານວັດທະນະທຳ ມີ 98 ບ້ານ.

ເຖິງຢ່າງໃດກໍ່ຕາມ ໃນການຈັດຕັ້ງປະຕິບັດຕົວຈິງຍັງຊັກຊ້າ ແລະບໍ່ທັນໄດ້ດີເທົ່າທີ່ຄວນ ເນື່ອງຈາກນິຕິກຳໃນການມອບສິດ, ມອບຄວາມຮັບຜິດຊອບຂອງບາງຂະແໜງການຂັ້ນສູນກາງຍັງເປັນລັກສະນະແບບລວມໆ; ບາງທ້ອງຖິ່ນຍັງບໍ່ທັນເປັນເຈົ້າການໃນຂັ້ນທ້ອງຖິ່ນຂອງຕົນ, ຍັງມີລັກສະນະຄອງຄອຍຄຳສັ່ງຈາກສູນກາງ; ຄວາມອາດສາມາດໃນການສ້າງແຜນ ແລະ ຄຸ້ມຄອງວຽກງານການເງິນ ແລະ ແຜນການຂອງພະນັກງານຂັ້ນເມືອງຍັງມີຂີດຈຳກັດ; ການກຳນົດເມືອງ ແລະ ບ້ານເປົ້າໝາຍໃນການເຮັດທົດລອງຈຳນວນໜຶ່ງຍັງບໍ່ທັນໄປຕາມເງື່ອນໄຂຂອງມະຕິ ແລະ ຄຳສັ່ງຂອງຂັ້ນເທິງ ພ້ອມດຽວກັນນັ້ນ ການເຜີຍແຜ່ມະຕິ, ຄຳສັ່ງໃນຂັ້ນຮາກຖານຍັງຊັກຊ້າເຮັດໃຫ້ການຜັນຂະຫຍາຍເຂົ້າສູ່ຕົວຈິງຂອງຫມູ່ປະຊາຊົນຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

## 3.4.9. ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ

### 1. ການປ້ອງກັນຊາດ

ໄດ້ຫັນເອົາພະນັກງານລົງກໍ່ສ້າງຮາກຖານການເມືອງຕິດພັນກັບການພັດທະນາຊົນນະບົດ ແລະ ສືບຕໍ່ປັບປຸງກຳລັງປ້ອງກັນຊາດໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ, ມີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ວິຊາສະເພາະ ເພື່ອ ກຽມພ້ອມຕ້ານກົນອຸບາຍມ້າງເພທຳລາຍຂອງຄົນບໍ່ດີ. ດຳເນີນການປັບປຸງກຳລັງປະກອບອາວຸດໃຫ້ນັບມື້ນັບເຕີບໃຫຍ່ເຂັ້ມແຂງສາມາດປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ແລະ ປະກອບພາຫະນະ ແລະ ອຸປະກອນເຕັກນິກຕ່າງໆໃຫ້ກຳລັງປ້ອງກັນຊາດ ເພື່ອໃຫ້ມີຄວາມທັນສະໄໝ ແລະ ພຽງພໍຕໍ່ຄວາມຕ້ອງການ. ເອົາ ໃຈໃສ່ເຮັດວຽກງານກວດກາ-ຄຸ້ມຄອງຊາຍແດນ,

ປົກປັກໝາຍຊາຍແດນ, ອຳນວຍຊ່ວຍເຫຼືອກອງທະຫານຢູ່ເຂດຊາຍແດນເປັນຢ່າງດີ. ໄດ້ປະກອບສ່ວນໃນການປ້ອງກັນຄວາມສະຫງົບໃນກອງປະຊຸມ ແລະ ງານມະຫະກຳກິລາທີ່ສຳຄັນຕ່າງໆເປັນຕົ້ນ: ກອງປະຊຸມສຸດຍອດອາຊີ-ເອີຣົບຄັ້ງທີ 9 ໃນປີ 2012, ການແຂ່ງຂັນກິລາມະຫາວິທະຍາໄລອາຊຽນຄັ້ງທີ 16 ໃນປີ 2012, ກອງປະຊຸມສຸດຍອດການຮ່ວມມືກຳປູເຈຍ-ລາວ-ມຽນມ້າ-ຫວຽດນາມຄັ້ງທີ 7 ໃນປີ 2013 ແລະ ກອງປະຊຸມທີ່ສຳຄັນອື່ນໆ.

### 2. ປ້ອງກັນຄວາມສະຫງົບ

ເພື່ອຮັບປະກັນໃຫ້ທົ່ວສັງຄົມ ແລະ ປະເທດຊາດມີຄວາມສະຫງົບ ແລະ ຄວາມປອດໄພສ້າງເປັນເງື່ອນໄຂໃນການພັດທະນາເສດຖະກິດ-ສັງຄົມ, ການປ້ອງກັນຄວາມສະຫງົບຈຶ່ງໄດ້ສືບຕໍ່ຈັດຕັ້ງປະຕິບັດຕາມຄຳສັ່ງແນະນຳ ແລະ ມະຕິຕ່າງໆໂດຍໄດ້ສຸມໃສ່ຈັດຕັ້ງປະຕິບັດການແກ້ໄຂປະກົດການຫຍໍ້ທໍ້ຂອງສັງຄົມ, ການຕ້ານອາດສະຍາກຳຢ່າງຕັ້ງໜ້າ ເຊິ່ງສາມາດເລີກຮື້ແກ້ໄຂກຸ່ມແກ້ງກໍ່ການກະທຳຜິດ ແລະ ໄດ້ລົງໂທດຕາມກົດໝາຍໄດ້ຫຼາຍກຸ່ມເຮັດໃຫ້ການກະທຳຜິດຢູ່ບັນດາຕົວເມືອງໃຫຍ່ຫຼຸດລົງຢ່າງຈະແຈ້ງ; ໄດ້ປັບປຸງບັນດາວຽກງານພື້ນຖານໂຄງລ່າງທີ່ເປັນບູລິມະສິດໂດຍສຸມໃສ່ການປັບປຸງບັນດາລະບົບຄ້າຍກອງບັນຊາການ ປກສ ເມືອງ, ປກສ ແຂວງ, ລະບົບຄ້າຍກອງພັນເຄື່ອນທີ່, ລະບົບຄ້າຍຄຸມຂັງ, ລະບົບວິທະຍາຄານ, ໂຮງຮຽນ, ໂຮງໝໍ ແລະ ອື່ນໆ; ໄດ້ສຶກສາອົບຮົມໃຫ້ພໍ່ແມ່ປະຊາຊົນ ແລະ ໄວໜຸ່ມບໍ່ໃຫ້ກະທຳຜິດ ແລະ ມີສະຕິລະວັງຕົວໃນການປົກຮັກສາຊັບສົມບັດຂອງຕົນ; ໄດ້ສືບຕໍ່ຈັດຕັ້ງປະຕິບັດການສະກັດກັ້ນແກ້ໄຂຢາເສບຕິດຢ່າງເປັນປົກກະຕິ; ໄດ້ສືບຕໍ່ຫັນກຳລັງປ້ອງກັນຄວາມສະຫງົບລົງໄປປະຈຳກຸ່ມບ້ານໃນທົ່ວປະເທດ ແລະ ກໍ່ສ້າງການປ້ອງກັນຄວາມສະຫງົບໃຫ້ກວ້າງຂວາງມີຄວາມໜັກແໜ້ນການເມືອງຢ່າງຮອບດ້ານ; ໄດ້ສືບຕໍ່ສົ່ງພະນັກງານລົງກໍ່ສ້າງຮາກຖານພັດທະນາບ້ານຢ່າງຕໍ່ເນື່ອງ, ພ້ອມທັງປັບປຸງກຳລັງກອງຫຼອນ ປກສ ຂັ້ນບ້ານ ແລະ ກຸ່ມບ້ານໃຫ້ເປັນລະບົບຄົບຊຸດ ແລະ ມີຄວາມເຂັ້ມແຂງທາງດ້ານວິຊາສະເພາະ. ນອກຈາກນັ້ນ, ໃນປີ 2012 ຍັງສາມາດສ້າງບ້ານປອດຄະດີໄດ້ 5.000 ກວ່າບ້ານ ແລະ ບ້ານປອດຢາເສບຕິດໄດ້ 5.200 ກວ່າບ້ານ. ໄດ້ສະເໜີລັດຖະບານຮັບຮອງເອົາໂຄງການຄຸ້ມຄອງພົນລະເມືອງດ້ວຍລະບົບທັນສະໄໝ ເພື່ອເຮັດບັດປະຈຳຕົວດ້ວຍລະບົບອີເລັກໂທນິກ (Smart Card), ໄດ້ສູ້ຊົນປະຕິບັດການຫຼຸດຜ່ອນອຸປະຕິເຫດຕາມທ້ອງຖະໜົນຢ່າງຕັ້ງໜ້າເຮັດໃຫ້ການແກ້ໄຂຄະດີອຸປະຕິເຫດຖືກຕາມລະບຽບກົດໝາຍ ແລະ ວ່ອງໄວກວ່າເກົ່າ. ນອກຈາກນີ້, ກໍໄດ້ປະກອບສ່ວນເຂົ້າໃນການປ້ອງກັນຄວາມສະຫງົບໃນກອງປະຊຸມແລະງານມະຫະກຳກິລາທີ່ສຳຄັນຕ່າງໆເປັນຕົ້ນ: ກອງປະ ຊຸມສຸດຍອດອາຊີ-ເອີຣົບ ຄັ້ງທີ 9 ໃນປີ 2012, ການແຂ່ງຂັນກິລາມະຫາວິທະຍາໄລອາຊຽນຄັ້ງທີ 16 ໃນປີ 2012, ກອງປະຊຸມສຸດຍອດຮ່ວມມືກຳປູເຈຍ-ລາວ-ມຽນມ້າ-ຫວຽດນາມ ຄັ້ງທີ 7 ໃນປີ 2013 ແລະ ກອງປະຊຸມທີ່ສຳຄັນອື່ນໆ.

## 3.4.10.ການຮ່ວມມືສາກົນແລະພາກພື້ນ

### 1. ການຮ່ວມມືກັບບັນດາຄູ່ຮ່ວມພັດທະນາ

ລັດຖະບານ ສປປ ລາວ ປະສົບຜົນສຳເລັດຢ່າງໜ້າພໍໃຈໃນການຮ່ວມມືກັບພາກພື້ນ ແລະ ສາກົນ ໂດຍສືບຕໍ່ປະຕິບັດແນວທາງການຕ່າງປະເທດ, ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື, ການເປີດກວ້າງການຮ່ວມມືເພື່ອການພັດທະນາ ແລະ ການຮ່ວມມືທາງດ້ານເສດຖະກິດກັບຕ່າງປະເທດໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງຈາກບັນດາປະເທດເພື່ອນມິດ ແລະ ເພື່ອນມິດຍຸດທະສາດ ເພື່ອປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

- ກ ານຮ່ວມມືທັງສອງຝ່າຍ ລະຫວ່າງ ສປປ ລາວ ກັບບັນດາປະເທດເພື່ອນມິດ ໄດ້ມີບາດກ້າວທີ່ດີພໍສົມຄວນ ເຖິງແມ່ນວ່າໃນໄລຍະທີ່ຜ່ານມາ ໄດ້ເກີດວິກິດການທາງດ້ານເສດຖະກິດ ແລະ ການເມືອງໂດຍສະເພາະແມ່ນຂົງເຂດເອີລົບ ເຮັດໃຫ້ບັນດາປະເທດສະມາຊິກໄດ້ສຸມທຸກກຳລັງເພື່ອແກ້ໄຂບັນຫາໃຫ້ແກ່ປະເທດສະມາຊິກຂອງເຂົາເຈົ້າກໍ່ຕາມ, ບັນດາປະເທດສະມາຊິກສະຫະພາບເອີຣົບທີ່ເຄີຍເປັນຜູ້ໃຫ້ທຶນລາຍໃຫຍ່ ສືບຕໍ່ໃຫ້ຄຳໝັ້ນສັນຍາ ແລະ ສືບຕໍ່ຊ່ວຍເຫຼືອໃຫ້ແກ່ ສປປ ລາວ. ສຳລັບການຮ່ວມມືໃນກອບສອງຝ່າຍສ່ວນຫຼາຍແມ່ນໄດ້ສຸມໃສ່ການພັດທະ ນາໃນຂົງເຂດພື້ນຖານໂຄງລ່າງ: ເສັ້ນທາງ, ໂທລະຄົມມະນາຄົມ, ນ້ຳສະອາດ, ໂຮງຮຽນ, ໂຮງໝໍ, ທຶນການສຶກສາໄລຍະສັ້ນຢູ່ພາຍໃນ ແລະ ຕ່າງປະເທດ. ສປປ ລາວ ໄດ້ສ້າງຍຸດທະສາດ ແລະ ປັບປຸງກົນໄກການປະສານງານຮ່ວມມືຕາມຍຸດທະສາດທີ່ໄດ້ກຳນົດໄວ້ ໂດຍອີງໃສ່ແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ.
- ກ ານຮ່ວມມືກັບອົງການຈັດຕັ້ງສາກົນໃນລະບົບເຄືອຄ່າຍສະຫະປະຊາຊາດ ໄດ້ຂະຫຍາຍຕົວເປັນປົກກະຕິ ແລະ ມີສິ່ງພົ້ນເດັ່ນໃນຫຼາຍດ້ານ ຕາມກອບການຮ່ວມມືລະຫວ່າງອົງການ ສປຊ ແລະ ລັດຖະບານແຫ່ງ ສປປ ລາວ (UNDAF

2011-2016). ເຊັ່ນ: ສຸມໃສ່ໃນການສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການປົກຄອງ, ວຽກງານນິຕິກຳ, ວຽກງານສາທາລະນະສຸກ, ວຽກງານສຶກສາ, ເກັບກູ້ລະເບີດ, ວຽກງານກະສິກຳ ແລະ ໂພສະນາການ, ການຮັກສາສິ່ງແວດລ້ອມ, ການຄ້າ ແລະ ການຊ່ວຍເຫຼືອມະນຸດສະທຳ.

- ການຮ່ວມມືກັບບັນດາສະຖາບັນຮ່ວມມືສາກົນ ແມ່ນໄດ້ມີບາດກ້າວທີ່ດີ ເຊິ່ງ ລັດຖະບານ ໄດ້ເປັນເຈົ້າການໃນການປຶກສາຫາລື ແລະ ການກຳນົດຍຸດທະສາດການຮ່ວມມືຮ່ວມກັບສະຖາບັນການຮ່ວມມືສາກົນ ເປັນຕົ້ນ ການຮ່ວມມືກັບທະນາຄານພັດທະນາອາຊີ (ADB), ທະນາຄານໂລກ (WB) ແລະ ກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD) ເພື່ອກຳນົດແຜນງານ/ໂຄງການ ທີ່ມີຄວາມຕ້ອງການແຫຼ່ງທຶນຊ່ວຍເຫລືອທາງການເພື່ອການພັດທະນາ (ຊ.ກ.ພ) ໃຫ້ຖືກກັບຄວາມຮຽກຮ້ອງຕ້ອງການພັດທະນາຕົວຈິງຕາມແຕ່ລະຂະແໜງການ.ຄຽງຄູ່ກັບການພັດທະນາ ແລະ ເປັນການຄູ່ຮ່ວມງານທີ່ດີ ອີງໃສ່ທ່າອ່ຽງລວມຂອງລັດຖະບານໃນການຄຸ້ມຄອງໜີ້ສິນທີ່ດີຂຶ້ນ, ບັນດາສະຖາບັນການເງິນສາກົນ ໄດ້ຫັນປ່ຽນນະໂຍບາຍການສະໜັບສະໜູນ ແລະ ການພິຈາ ລະນາໃຫ້ການຊ່ວຍເຫຼືອ ສປປ ລາວ ຈາກຮູບແບບການຊ່ວຍເຫຼືອລ້າ 50% ແລະ ກູ້ຢືມ 50% ມາເປັນກູ້ຢືມ 100% ເຊິ່ງທະນາຄານພັດທະນາອາຊີ ເລີ່ມກາງປີ 2013, ທະນາຄານໂລກເລີ່ມປະຕິບັດມາແຕ່ກາງປີ 2015 ແລະ ສຳລັບ ກອງທຶນສາກົນເພື່ອການພັດທະນາກະສິກຳ ແມ່ນຈະເລີ່ມແຕ່ກາງປີ 2016 ເປັນຕົ້ນໄປ.

## 2. ການຮ່ວມມືໃນຂອບອາຊຽນ

ເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ (AEC) ໃນປີ 2015 ແລະ ໄດ້ດຳເນີນມາດຕະການຕ່າງໆ ປະກອບມີ: ການຫຼຸດຜ່ອນອັດຕາພາສີໃນແຕ່ລະໄລຍະຕາມທີ່ກຳນົດໃນສັນຍາວ່າດ້ວຍອັດຕາພາສີທີ່ມີຜົນບັງຄັບໃຊ້ຮ່ວມກັນ ເພື່ອສ້າງເຂດການຄ້າເສລີອາຊຽນຊຶ່ງບັນຊີລາຍການອັດຕາພາສີທັງໝົດຂອງ ສປປລາວ ມີ 9.558 ລາຍການ ຕາມລະຫັດພາສີເອກະພາບອາຊຽນ 2007. ໃນປີ 2012, ອັດຕາພາສີສິນຄ້າໃນຂອບອາຊຽນ ຂອງ ສປປ ລາວ ທີ່ມີອັດຕາພາສີຕ່ຳກວ່າ 5% ມີ 9110 ລາຍການເທົ່າກັບ 95,31% ຂອງລາຍການສິນຄ້າທັງໝົດ ແລະ ໃນນັ້ນ ອັດຕາພາສີ 0% ມີ 7.525 ລາຍການເທົ່າກັບ 78,73%. ສຳລັບສິນຄ້າທີ່ປະເທດອາຊຽນໃໝ່ (CLMV) ລວມທັງ ສປປ ລາວໄດ້ຮັບການຜ່ອນຜັນເວລາໃນການຫຼຸດອັດ ຕາພາສີຮອດປີ 2018 ນັ້ນ, ໄດ້ສຳເລັດການສ້າງບັນຊີເບື້ອງຕົ້ນແລະພວມຢູ່ໃນຂັ້ນຕອນຂໍອະນຸມັດຈາກລັດຖະບານ. ນອກ ຈາກນັ້ນ, ສປປ ລາວ ກໍໄດ້ສຳເລັດການໂອນລະບົບລະຫັດອັດຕາພາສີເອກະພາບອາຊຽນຈາກລະຫັດປີ 2002 ມາເປັນລະຫັດປີ 2007 ແລະໃນປະຈຸບັນໄດ້ປ່ຽນຈາກລະຫັດ 2007 ມາເປັນລະຫັດ 2012.

ສຳລັບວຽກອຳນວຍຄວາມສະດວກດ້ານການຄ້າ, ສປປ ລາວ ໄດ້ເຂົ້າຮ່ວມໂຄງການທົດລອງຂອງອາຊຽນ (Pilot Project) 2 ຮ່ວມກັບອິນໂດເນເຊຍ ແລະ ຟີລິບປິນ ເພື່ອອະນຸຍາດໃຫ້ທຸລະກິດອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ຊຶ່ງໄດ້ຈັດຕັ້ງປະຕິບັດໃຫ້ສຳເລັດໃນປີ 2013. ອີກວຽກໜຶ່ງທີ່ສຳຄັນແມ່ນວຽກການລຶບລ້າງສິ່ງກີດຂວາງການຄ້າທີ່ບໍ່ແມ່ນພາສີ ຊຶ່ງໃນປັດຈຸບັນກຳລັງສ້າງເປັນແຜນວຽກລະອຽດເພື່ອຈະດຳເນີນການຈັດຕັ້ງປະຕິບັດຊຶ່ງຈະເລີ່ມປະຕິບັດປີໃນ 2013-2015. ປັດຈຸບັນ, ມີຫຼາຍກໍລະນີທີ່ກ່ຽວຂ້ອງກັບສິ່ງກີດຂວາງການຄ້າທີ່ບໍ່ແມ່ນພາສີຍັງບໍ່ສາມາດແກ້ໄຂໄດ້ ເປັນຕົ້ນ: ການສົ່ງອອກສາລີຂອງລາວ ແລະ ກຳປູເຈຍໄປໄທ. ນອກຈາກນັ້ນ, ສປປ ລາວ ກໍໄດ້ເຂົ້າຮ່ວມເຂດການຄ້າເສລີ ອາຊຽນ-ຈີນ, ອາຊຽນ-ຍີ່ປຸ່ນ, ອາຊຽນ-ເກົາຫຼີ, ອາຊຽນ-ອິນເດຍ ແລະ ອາຊຽນ-ອົດສະຕາລີ-ນິວຊີແລນ.

ສປປລາວໄດ້ເຂົ້າຮ່ວມ ແລະ ເລີ່ມຈັດຕັ້ງປະຕິບັດສັນຍາເຂດການລົງທຶນອາຊຽນ (ASEAN Investment Area: AIA) ມາຕັ້ງແຕ່ປີ 1998. ປະຈຸບັນນີ້ອາຊຽນໄດ້ຮັບຮອງເອົາສັນຍາການລົງທຶນອາຊຽນ ACIA (ASEAN Comprehensive Investment Agreement) ແລະ ສັນຍາດັ່ງກ່າວມີຜົນບັງຄັບໃຊ້ເລີ່ມແຕ່ວັນທີ 29/3/2012. ສັນຍາດັ່ງກ່າວນີ້ເປັນສັນຍາທີ່ຄົບຖ້ວນ, ກວມລວມກ່ວາສັນຍາເກົ່າແລະເປັນສັນຍາເປີດ, ໂປ່ງໃສ ແລະ ເປັນມິດຕໍ່ສິ່ງແວດລ້ອມເຊິ່ງການເຂົ້າຮ່ວມເປັນພາຄີຂອງສັນຍາດັ່ງກ່າວນີ້ ເຫັນວ່າໄດ້ຮັບຜົນປະໂຫຍດຫຼາຍໃນດ້ານການດຶງດູດການລົງທຶນຈາກຕ່າງປະເທດເຂົ້າມາ ສປປ ລາວ.

ສປປ ລາວ ໄດ້ເຂົ້າຮ່ວມການເຈລະຈາເປີດເສລີດ້ານການບໍລິການກັບອາຊຽນ. ການກຳນົດຂະແໜງການບໍລິການແມ່ນປະຕິບັດຕາມການກຳນົດຂອງອົງການການຄ້າໂລກຊຶ່ງມີທັງໝົດ 11 ຂະແໜງການຫຼັກ ທີ່ແບ່ງອອກເປັນ 160 ຂະແໜງ ການຍ່ອຍ. ສຳລັບການຮ່ວມມືດ້ານການບໍລິການໃນອາຊຽນແມ່ນເຫັນດີເປີດໃນ 10 ຂະແໜງການຫຼັກ ແລະ 128 ຂະແໜງ ການຍ່ອຍ. ສຳລັບ ສປປລາວ ໄດ້ເປີດ 89 ໃນຈຳນວນທັງໝົດ 128 ຂະແໜງການຍ່ອຍຂອງ 10 ຂະແໜງການຫຼັກ (Main Sectors). ສຳລັບການເຈລະຈາຂໍ້ຜູກພັນພູດທີ 9 ແລະ 10 ຊຶ່ງກຳລັງດຳເນີນຢູ່ນັ້ນແມ່ນຈະຕ້ອງເປີດຕື່ມ ພູດລະ 24 ຂະແໜງ ການຍ່ອຍແມ່ນໃຫ້ສຳເລັດໃນປີ 2015 (ລວມທັງທີ່ໄດ້ເປີດມາແລ້ວ 89 ຂະແໜງການຍ່ອຍຂ້າງເທິງ) ເພື່ອໃຫ້ໄດ້ 128 ຂະ ແໜງການຍ່ອຍຕາມເປົ້າໝາຍຂອງການສ້າງປະຊາຄົມອາຊຽນ.

## 3. ການຮ່ວມມືໃນຂອບຂອງການພັດທະນາອະນຸພາກພື້ນແມ່ນ້ຳຂອງ (GMS)

ຜ່ານການຈັດຕັ້ງປະຕິບັດໃນໄລຍະສອງປີເຄິ່ງຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VII ໜ້າວຽກສຳຄັນຕ່າງໆ ໃນຂອບການຮ່ວມມືຂອງການພັດທະນາອະນຸພາກພື້ນແມ່ນ້ຳຂອງທີ່ຖືກຈັດຕັ້ງປະຕິບັດໄດ້ມີຫຼາຍໜ້າວຽກທີ່ພົ້ນເດັ່ນ ເປັນຕົ້ນ: ໄດ້ສຳເລັດການສ້າງແຜນຈັດຕັ້ງປະຕິບັດໂຄງການຄຸ້ມຄອງແລະຫຼຸດຜ່ອນໄພນ້ຳຖ້ວມ, ໄພແຫ້ງແລ້ງເພື່ອສ້າງຕັ້ງສູນເຕືອນໄພລ່ວງໜ້າແຫ່ງຊາດພາຍໃຕ້ຂອບແຜນງານ (ADB-GMS); ໄດ້ເຊັນ MOU (TA7582) ກ່ຽວກັບການສ້າງຂີດຄວາມສາມາດດ້ານ HIV/ AIDS ໃຫ້ແກ່ບັນດາແຂວງເປົ້າໝາຍເຊື່ອມຕໍ່ຕາມຊາຍແດນທີ່ແຂວງຜົ້ງສາລີ, ຫົວ ພັນ, ບໍ່ແກ້ວ, ຫລວງນ້ຳທາ, ອຸດົມໄຊ, ຈຳປາສັກ, ສາລະວັນ ແລະ ອັດຕະປື ໂດຍກະຊວງສາທາລະນະສຸກເປັນເຈົ້າການ;ໄດ້ກຳນົດຂອບເຂດບູລິມະສິດດ້ານເສດຖະກິດ, ສັງຄົມ, ສາທາລະນະສຸກ, ການບໍລິການ, ລະບົບນິເວດວິທະຍາ, ວັດທະນະ ທຳຊົນເຜົ່າຕິດພັນກັບການທ່ອງທ່ຽວ ເພື່ອສ້າງເປັນບົດລາຍງານ ແລະ ບົດແນະນຳດ້ານການປະເມີນສິ່ງແວດລ້ອມແບບຍຸດທະສາດ (SEA) ໃນຂະແໜງການທ່ອງທ່ຽວເຂດສີ່ຫຼ່ຽມຄຳ; ໄດ້ກຳນົດເຂດ 3S (ແມ່ນ້ຳເຊກອງ, ເຊຊານ ແລະ ເຊປຣອກ) ເພື່ອສ້າງເປັນໂຄງການທົດລອງນຳໃຊ້ການປະເມີນດ້ານສິ່ງແວດລ້ອມແບບຍຸດທະສາດ (SEA) ເຂົ້າໃນເຂດພື້ນທີ່ຂອງໂຄງການອານຸລັກປ່າສະຫງວນທີ່ກວມເອົາ 3 ປະເທດຄື: ລາວ, ຫວຽດນາມ ແລະ ກຳປູເຈຍ; ໄດ້ເຄື່ອນໄຫວຈັດຕັ້ງປະຕິບັດກິດຈະກຳຂອງແຜນງານອານຸກຳມະການອາຊຽນດ້ານອຸຕຸນິຍົມ ແລະ ທໍລະນີຟີຊິກ (SCMG) ເຊັ່ນ: ວຽກງານລະບົບເຕືອນໄພທຳມະຊາດ ແລະ ວຽກງານຫຼຸດຜ່ອນຄວາມສ່ຽງໄພພິບັດ; ໄດ້ປັບປຸງຄວາມສາມາດດ້ານການກວດກາສຸຂະອະນາໄມສັດ ແລະ ພືດໃນອະນຸພາກພື້ນແມ່ນ້ຳຂອງ ເພື່ອອຳນວຍຄວາມສະດວກທາງດ້ານການຄ້າຈັດຕັ້ງປະຕິບັດໂດຍກະຊວງກະສິກຳແລະປ່າໄມ້; ໂຄງການຄຸ້ມຄອງ ແລະ ຫຼຸດຜ່ອນຄວາມສ່ຽງຈາກໄພນ້ຳຖ້ວມ ແລະ ແຫ້ງແລ້ງ ຊຶ່ງໃນຂັ້ນຕອນທົບທວນເອກະສານຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດໂດຍກະຊວງກະສິກຳ ແລະ ປ່າໄມ້ຮ່ວມກັບກະຊວງໂຍທາທິການ ແລະ ຂົນສົ່ງ; ຈັດຕັ້ງປະຕິບັດໂຄງການອະນຸພາກພື້ນແມ່ນ້ຳຂອງກ່ຽວກັບແນວຄິດລິເລີ່ມໃນການຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ເພື່ອຜົນປະໂຫຍດຂອງແມ່ຍິງ. ສຳເລັດການສ້າງແຜນ ການລົງທຶນພາກພື້ນຂອງກອບການຮ່ວມມືອະນຸພາກພື້ນແມ່ນ້ຳຂອງ (GMS) ໄລຍະ 2012-2022.

## 4. ການຮ່ວມມືໃນຂອບສັນຍາແມ່ນ້ຳຂອງວ່າດ້ວຍການພັດທະນາແບບຍືນຍົງໃນອ່າງແມ່ນ້ຳຂອງ

ໃນການຈັດຕັ້ງປະຕິບັດຂອບສັນຍາແມ່ນ້ຳຂອງວ່າດ້ວຍການພັດທະນາແບບຍືນຍົງໃນອ່າງແມ່ນ້ຳຂອງແມ່ນການຈັດຕັ້ງປະຕິບັດສັນຍາແມ່ນ້ຳຂອງປີ 1995 ວ່າດ້ວຍການພັດທະນາແມ່ນ້ຳຂອງແບບຍືນຍົງຊຶ່ງລາຍລະອຽດມີດັ່ງນີ້:

- ສຳເລັດການຮ່າງແຜນປະຕິບັດງານແຫ່ງຊາດຄັ້ງທຳອິດວ່າດ້ວຍການພັດທະນາອ່າງແມ່ນ້ຳຂອງ ສົກປີ 2011-2015 ໂດຍຜັນຂະຫຍາຍຍຸດທະສາດພັດທະນາອ່າງແມ່ນ້ຳຂອງ (IWRM-based Basin Development Strategy) ແລະ ນຳໃຊ້ການຄຸ້ມຄອງຊັບພະຍາກອນທຳມະຊາດແບບປະສົມປະສານ ຊຶ່ງແຜນການດັ່ງກ່າວຈະເປັນບ່ອນອີງຂັ້ນພື້ນຖານໃຫ້ແກ່ບັນດາຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງປະຕິບັດການຄຸ້ມຄອງອ່າງແມ່ນ້ຳຂອງທີ່ນອນຢູ່ໃນຂອບເຂດດິນແດນ ຂອງ ສປປ ລາວ ຢ່າງເປັນລະບົບເອກະພາບ;
- ຜັນຂະຫຍາຍຍຸດທະສາດການພັດທະນາອ່າງທີ່ເນັ້ນໃສ່ຫຼັກການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ (IWRM-based Basin Development Strategy) ອອກເປັນວຽກລະອຽດຂອງແຜນງານລິເລີ່ມໄຟຟ້າພະລັງນ້ຳ;
- ປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງໃນການກະກຽມຂະບວນການກະຈາຍໜ້າວຽກຂອງຄະນະກຳມາທິການແມ່ນ້ຳຂອງສາກົນໃຫ້ແກ່ບັນດາກະຊວງແລະຂະແໜງການທີ່ກ່ຽວຂ້ອງຂອງ ສປປ ລາວ.
- ສຳເລັດການກະກຽມກິດຈະກຳຂ້າມຜ່ານຊາຍແດນຮ່ວມກັບໄທແລະກຳປູເຈຍພາຍໃຕ້ໂຄງການການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານໃນອ່າງແມ່ນ້ຳຂອງ (Mekong IWRN Project);
- ສຳເລັດການດຳເນີນການຈັດຕັ້ງປະຕິບັດລະບຽບການຂອງຄະນະກຳມະທິການແມ່ນ້ຳຂອງສາກົນໃນການອະນຸມັດສ້າງເຂື່ອນໄຟຟ້າ ໄຊຍະບູລີ ແລະ ດອນສະໂຮງ.
- ສຳເລັດການສຶກສາສະພາບອຸທົກກະສາດຂອງອ່າງແມ່ນ້ຳເຊບັ້ງໄຟ ພາຍໃຕ້ແຜນງານການຄຸ້ມຄອງຂໍ້ມູນຂ່າວສານໂດຍການຜັນຂະຫຍາຍຖະແຫຼງການຫົວຫີນ ໂດຍມີບາງວຽກຈຸດສຸມ ຄື: ໄດ້ຫັນຍຸດທະສາດການພັດທະນາອ່າງແມ່ນ້ຳຂອງ 2011-2015 ມາເປັນແຜນປະຕິບັດງານອ່າງແມ່ນ້ຳຂອງ ຂອງແຕ່ລະປະເທດສະມາຊິກ; ໄດ້ເອົາໃຈໃສ່ຊຸກຍູ້ ແລະ ປັບປຸງລະບົບພະຍາກອນ

ແລະ ເຕືອນໄພນ້ຳຖ້ວມຢູ່ໃນອ່າງແມ່ນ້ຳຂອງ; ສືບຕໍ່ທົບທວນການຈັດຕັ້ງປະຕິບັດບັນດາລະບຽບການທີ່ໄດ້ຮັບຮອງເອົາ ເປັນຕົ້ນລະບຽບການວ່າດ້ວຍການແລກປ່ຽນຂໍ້ມູນຂ່າວສານ; ລະ ບຽບການວ່າດ້ວຍການແຈ້ງໃຫ້ກັນຊາບ, ການປຶກສາຫາລື ແລະ ການເຮັດຂໍ້ຕົກລົງ; ລະບຽບວ່າດ້ວຍການຕິດຕາມກວດກາການນຳໃຊ້ນ້ຳ, ລະບຽບການວ່າດ້ວຍການຄຸ້ມຄອງການໄຫລຂອງນ້ຳໃນແມ່ນ້ຳຂອງ ແລະ ລະບຽບວ່າດ້ວຍການຄຸ້ມຄອງຄຸນນະພາບນ້ຳ; ໄດ້ກຳນົດ ແລະ ພັດທະນາກາລະໂອກາດເພື່ອເສີມຂະຫຍາຍການຮ່ວມມືກັບບັນດາປະເທດຄູ່ເຈລະຈາ, ຄູ່ຮ່ວມພັດທະນາ ແລະ ຜູ້ມີສ່ວນຮ່ວມອື່ນໆ ໃນດ້ານການຄຸ້ມຄອງຊັບພະຍາກອນແຫຼ່ງນ້ຳ ແລະ ການປ່ຽນແປງດິນຟ້າອາກາດ; ດຳເນີນການຈັດຕັ້ງປະຕິບັດບັນດາແຜນງານຂອງຂະແໜງການນັບທັງພາກພື້ນ ແລະ ລະດັບຊາດ ເປັນຕົ້ນ: ແຜນພັດທະນາອ່າງ, ແຜນງານສິ່ງແວດລ້ອມ, ແຜນງານການປ່ຽນແປງດິນຟ້າອາກາດ, ແຜນງານຄຸ້ມຄອງຂໍ້ມູນຂ່າວສານແລະຄວາມຮູ້, ແຜນງານຂໍ້ລິເລີ່ມການພັດທະນາໄຟຟ້າພະລັງງານນ້ຳແບບຍືນຍົງ, ແຜນງານຄຸ້ມຄອງການປະມົງ, ແຜນງານກະສິກຳ ແລະຊົນລະປະທານ, ແຜນງານການເດີນເຮືອ, ແຜນງານການສ້າງຄວາມສາມາດແບບປະສົມປະສານ ແລະແຜນງານການຄຸ້ມຄອງ ແລະ ຫຼຸດຜ່ອນໄພນ້ຳຖ້ວມ.

### 5. ການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (ອຄລ)

ສຳລັບວຽກງານການເຂົ້າເປັນສະມາຊິກອົງການຄ້າໂລກໃນໄລຍະຜ່ານມາໄດ້ມີການຈັດກອງປະຊຸມໜ່ວຍປະຕິບັດງານທັງໝົດຈຳນວນ 10 ຄັ້ງ ແລະ ສປປລາວ ໄດ້ຕອບຄຳຖາມທີ່ສະມາຊິກຍົກຂຶ້ນ ລວມຫຼາຍກວ່າ 1,300 ຂໍ້. ຄຽງຄູ່ກັນນັ້ນກໍສາມາດສະຫຼຸບການເຈລະຈາສອງຝ່າຍກັບສະມາຊິກ ອຄລ ກັບ 9 ສະມາຊິກ ຄື: ອິດສະຕາລີ, ການາດາ, ສປ ຈີນ, ຈີນໄຕ້ຫວັນ, ສະຫະພາບເອີຣົບ, ຍີ່ປຸ່ນ, ສ. ເກົາຫຼີ, ຢູເຄຣນ ແລະ ສະຫະລັດອາເມລິກາ.ໃນດ້ານຜົນສຳເລັດ ແມ່ນ ສປປ ລາວ ໄດ້ເຂົ້າເປັນສະມາຊິກອົງການການຄ້າໂລກ (WTO) ຢ່າງສົມບູນໃນວັນທີ 2 ກຸມພາ 2013, ຊຶ່ງຜ່ານການກະກຽມ, ການເຈລະຈາດ້ານການຄ້າຂອງໜ່ວຍງານກ່ຽວຂ້ອງມາເປັນເວລາ 15 ປີ. ຜົນສຳເລັດການເຂົ້າເປັນສະມາຊິກອົງການໆຄ້າໂລກຂອງສປປລາວມັນໄດ້ສະແດງເຖິງຜົນງານທີ່ໂດດເດັ່ນ ແລະ ແນວທາງນະໂຍບາຍທີ່ຖ່ອງແຄ້ວຂອງພັກ, ລັດເວົ້າລວມ, ເວົ້າສະເພາະຂອງຂະແໜງອຸດສາຫະກຳແລະການຄ້າ. ການເຂົ້າເປັນສະມາຊິກ ອຄລ ຂອງ ສປປ ລາວ ການເຊື່ອມໂຍງເສດຖະ ກິດກັບສາກົນໃຫ້ກວ້າງຂວາງ, ຊຶ່ງເປັນກາລະໂອກາດໃນການໝູນໃຊ້ພື້ນຖານປັດໃຈພາຍໃນຂອງປະເທດເຮົາເຊັ່ນ: ທີ່ດິນ, ແຫຼ່ງນ້ຳ ແລະ ຊັບພະຍາກອນທຳມະຊາດອື່ນໆເຂົ້າໃນການດຳເນີນການຜະລິດ ແລະ ລວມທັງສິ່ງທ້າທາຍທີ່ຈະຕ້ອງປະເຊີນໜ້າ ເປັນຕົ້ນ: ການແຂ່ງຂັນທາງດ້ານການຄ້າ, ການພັດທະນາທຸລະກິດ, ດ້ານເຕັກໂນໂລຊີ ແລະ ບັນຫາອື່ນໆ, ຊຶ່ງມັນຮຽກຮ້ອງໃຫ້ທຸກຂະແໜງການຕ້ອງປັບປຸງພາຍໃນໃຫ້ເຂັ້ມແຂງເພື່ອຮັບມືກັບສິ່ງທ້າທາຍໃນຕໍ່ໜ້າ.

## 3.5. ຕີລາຄາຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບົດຮຽນທີ່ຖອດຖອນໄດ້ຂອງຂະແໜງການ ແລະ ສິ່ງທ້າທາຍ

ອີງໃສ່ການຄົ້ນຄວ້າຈາກຜົນສຳເລັດດັ່ງກ່າວ, ສາມາດສະຫຼຸບລວມຜົນສຳເລັດ, ຂໍ້ຄົງຄ້າງທີ່ພົ້ນເດັ່ນ ແລະ ບົດຮຽນທີ່ຖອດຖອນໄດ້ ເພື່ອສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020).

### 3.5.1. ສັງລວມຜົນສຳເລັດ

1) ປະເທດເຮົາມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍທາງສັງຄົມຢ່າງໜັກແໜ້ນ, ເສດຖະກິດມະຫາພາກມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນທ່ຽງ ໂດຍຮັກສາໄດ້ຈັງຫວະການຂະຫຍາຍຕົວຢ່າງໜ້ອຍ ສະເລ່ຍ 7,9% ຕໍ່ປີ, ເຊິ່ງໄດ້ກາຍເປັນປັດໄຈພື້ນຖານທີ່ເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນແມ່ນການດຳເນີນທຸລະກິດ, ການຜະລິດ, ການບໍລິການ ແລະ ການລົງທຶນ. ສປປ ລາວ ມີຄວາມຄືບໜ້າໃນການກະກຽມຄວາມພ້ອມເພື່ອນຳປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ (LDCs). ພິເສດໃນປີ 2011 ທະນາຄານໂລກໄດ້ເລື່ອນ ສປປ ລາວ ຈາກກຸ່ມປະເທດທີ່ມີລາຍໄດ້ຕ່ຳ (Low Income Countries) ຂຶ້ນມາສູ່ກຸ່ມປະເທດທີ່ມີລາຍໄດ້ປານກາງໃນລະດັບຕ່ຳ (Lower-Middle Income Countries). ສະພາບໜີ້ສິນກໍ່ໄດ້ຮັບການແກ້ໄຂຢ່າງຕັ້ງໜ້າ ແລະ ມີທ່າອ່ຽງຫຼຸດລົງໃນລະດັບທີ່ສາມາດຄວບຄຸມໄດ້. ສະພາບໜີ້ສິນໄດ້ຮັບການແກ້ໄຂຢ່າງຕັ້ງໜ້າ ແລະ ມີທ່າອ່ຽງຫຼຸດລົງໃນລະດັບທີ່ສາມາດຄວບຄຸມໄດ້.

2) ໂຄງປະກອບເສດຖະກິດໄດ້ຫັນປ່ຽນຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ຊຶ່ງອັດຕາສ່ວນຂອງຂະແໜງກະສິກຳ-ປ່າໄມ້ໄດ້ຫຼຸດລົງ ສ່ວນອັດຕາສ່ວນຂອງຂະແໜງອຸດສາຫະກຳ ແລະ ບໍລິການໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ.

3) ການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາມີຄວາມຄືບໜ້າຫຼາຍດ້ານ ເປັນຕົ້ນແມ່ນ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ການປັບປຸງພື້ນຖານໂຄງລ່າງທີ່ຈຳເປັນ ແລະ ຕາໜ່າງການບໍລິການດ້ານສັງຄົມ ເຮັດໃຫ້ອັດຕາຄວາມທຸກຍາກຫຼຸດລົງຍັງເຫຼືອ 23,2% ໃນສົກປີ 2012-2013 ອີງຕາມຜົນການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ຄົວເຮືອນຄັ້ງທີ 5 (LECS5).

4) ການຂະຫຍາຍຕາໜ່າງໄຟຟ້າ ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າໃນຂອບເຂດທົ່ວປະເທດ ໂດຍສະເພາະ ໄດ້ຂະຫຍາຍໄປສູ່ເຂດຊົນນະບົດ ແລະ ເຂດຫ່າງໄກສອກຫຼີກ ເຮັດໃຫ້ອັດຕາຄອບຄົວທີ່ມີໄຟຟ້າຊົມໃຊ້ໃນທົ່ວປະເທດບັນລຸປະມານ 89,6% ຂອງຄອບຄົວທັງໝົດ, ສາມາດບັນລຸໄດ້ລື່ນຄາດໝາຍຂອງແຜນການ 5 ປີ (80%)

5) ສະພາບແວດລ້ອມທຸລະກິດໄດ້ມີການປັບປຸງໃຫ້ດີຂຶ້ນ ລວມທັງການອຳນວຍຄວາມສະດວກໃຫ້ແກ່ຜູ້ປະກອບການໃນການສ້າງຕັ້ງທຸລະກິດ ໂດຍສາມາດຂຶ້ນທະບຽນອາກອນ ແລະ ທະບຽນທຸລະກິດໄດ້ໃນເວລາດຽວກັນ; ຫຼຸດຜ່ອນອັດຕາອາກອນທຸລະກິດ, ສາມາດຫຼຸດຜ່ອນເວລາໃນການນຳເຂົ້າ ແລະ ສົ່ງອອກ ໂດຍນຳໃຊ້ລະບົບພາສີ (ASYCUDA) ຢູ່ດ່ານພາສີສາກົນ.

6) ຂະແໜງອະຊີວະສຶກສາ ເປັນຕົ້ນ: ລະດັບວິຊາຊີບດ້ານຕ່າງໆໄດ້ຮັບການເອົາໃຈໃສ່ ແລະ ພັດທະນາໃຫ້ດີຂຶ້ນທັງໃນພາກລັດ ແລະ ເອກະຊົນ ຊຶ່ງສາມາດສະໜອງແຮງງານທີ່ມີຄຸນນະພາບໃຫ້ແກ່ຕະຫຼາດແຮງງານໄດ້ໃນລະດັບໃດໜຶ່ງ, ສາມາດຫຼຸດຜ່ອນອັດຕາການຫວ່າງງານ ແລະ ສາມາດດຸ່ນດ່ຽງແຮງງານໃນຂະແໜງການຕ່າງໆໄດ້ດີສົມຄວນ.

7) ການປະກອບສ່ວນຂອງເພດຍິງໃນການພັດທະນາເສດຖະກິດ-ສັງຄົມ ນັບມື້ນັບຫຼາຍຂຶ້ນ ແລະ ມີບົດບາດສຳຄັນ ເຫັນໄດ້ຈາກອັດຕາການເຕີບໂຕຂອງເສດຖະກິດ ແມ່ນຕິດພັນສະໜິດແໜ້ນກັບອັດຕາສ່ວນຂອງແຮງງານເພດຍິງ ເຊິ່ງກວມອັດຕາສ່ວນສູງໃນກຳລັງແຮງງານໃນທົ່ວປະເທດ ແລະ ສອດຄ່ອງກັບຜົນການວິໄຈຂອງສາກົນທີ່ສະແດງໃຫ້ເຫັນວ່າກຳລັງແຮງງານຂອງເພດຍິງກວມເຄິ່ງໜຶ່ງຂອງແຮງງານທັງໝົດ. ພ້ອມດຽວກັນນັ້ນ, ຄ່າຈ້າງແຮງງານ ແລະ ສີມືແຮງງານກໍເປັນປັດໄຈຕົ້ນຕໍ ໃນການດຶງດູດການລົງທຶນພາຍໃນ ແລະ ການລົງທຶນໂດຍກົງຈາກຕ່າງປະເທດ.

8) ການປົກປັກຮັກສາ, ນຳໃຊ້ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນັບມື້ນັບດີຂຶ້ນເທື່ອລະກ້າວ ໂດຍສະເພາະແມ່ນໄດ້ພັດທະນາຫຼາຍນິຕິກຳທີ່ກ່ຽວຂ້ອງກັບການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ; ສ້າງຄວາມເຂັ້ມແຂງທາງດ້ານບຸກຄະລາກອນ, ອົງກອນ ແລະ ສະຖາບັນການສຶກສາ ແລະ ວິໄຈດ້ານສິ່ງແວດລ້ອມ ແລະ ປົກປັກຮັກສາ ແລະ ຄຸ້ມຄອງປ່າສະຫງວນ, ເຂດດິນຊຸ່ມນ້ຳ ແລະ ເຂດຊີວະນາໆພັນ.

9) ສປປ ລາວ ປະສົບຜົນສຳເລັດຢ່າງໜ້າພໍໃຈໃນການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ. ສິ່ງທີ່ພົ້ນເດັ່ນແມ່ນການເຂົ້າເປັນສະມາຊິກອົງການການຄ້າໂລກ ໃນຕົ້ນປີ 2013. ນອກນັ້ນ, ສປປລາວ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມກ່ຽວກັບແຜນປະຕິບັດງານອານມາຕີສຳລັບປະເທດທີ່ບໍ່ມີທາງອອກສູ່ທະເລ; ກອງປະຊຸມລັດຖະສະພາຂອງອາຊີ-ເອີຣົບຄັ້ງທີ VII ແລະ ກອງປະຊຸມສຸດຍອດອາຊີ-ເອີຣົບ ຄັ້ງທີ IX ໃນເດືອນຕຸລາ ແລະ ພະຈິກ ປີ 2012; ກອງປະຊຸມສຸດຍອດລະຫວ່າງ ກຳປູເຈຍ-ລາວ-ມຽນມ້າ-ຫວຽດນາມ (CLMV) ຄັ້ງທີ VI ແລະ ກອງປະຊຸມສຸດຍອດກ່ຽວກັບການຮ່ວມມືດ້ານເສດຖະກິດລະຫວ່າງແມ່ນ້ຳອີຣາວາດີ-ເຈົ້າພະ ຍາ-ແມ່ນ້ຳຂອງຄັ້ງທີ IV ໃນລະຫວ່າງວັນທີ 12-13 ມີນາ 2013.

**ສາເຫດທີ່ພາໃຫ້ມີຜົນສຳເລັດ**:

1) ແນວທາງການເມືອງທີ່ກຳນົດໄວ້ໃນມະຕິຕ່າງໆຂອງພັກເປັນຕົ້ນມະຕິກອງປະຊຸມໃຫຍ່ ຄັ້ງທີ IX ແມ່ນຖືກຕ້ອງ ແລະ ການຊີ້ນຳ-ນຳພາຂອງສູນກາງພັກສອດຄ່ອງກັບສະພາບພາຍໃນ ແລະ ສະພາບແວດລ້ອມສາກົນ.

2) ສະພາແຫ່ງຊາດ, ລັດຖະບານພິຈາລະນາຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ ເປັນໄປຕາມລະບຽບການ, ກົດໝາຍ, ບັນດາຂະແໜງການ ແລະ ທ້ອງຖິ່ນ ໄດ້ຜັນຂະຫຍາຍເປັນແຜນງານ, ເປັນໂຄງການຂອງຕົນແລະ ມີແຫຼ່ງທຶນຈັດຕັ້ງປະຕິບັດໂດຍທົ່ວໄປ.

3) ລັ ດຖະບານໄດ້ສຸມທຶນຮອນເຂົ້າໃນການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການຕ່າງໆ ເປັນຕົ້ນການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ; ການພັດທະນາຕາໜ່າງຄົມມະນາຄົມ, ການຂະຫຍາຍໄຟຟ້າໄປສູ່ຊົນນະບົດ, ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າຕິດພັນກັບການສ້າງວຽກເຮັດງານທຳ; ພັດທະນາ ແລະ ຂະ ຫຍາຍການສຶກສາ ແລະ ສາທາລະນະສຸກໃຫ້ທົ່ວເຖິງ

ໂດຍສຸມໃສ່ການປະຕິຮູບການສຶກສາ, ການພັດທະນາຊັບພະຍາກອນມະນຸດ ແລະ ການສົ່ງເສີມການດຳລົງຊີວິດ ໂດຍເນັ້ນໃສ່ການຂະຫຍາຍໂອກາດດ້ານການສຶກສາ, ການປັບປຸງສຸຂະພາບ ແລະ ສຸຂານາໄມ ແລະ ການຝຶກອົບຮົມເພື່ອສ້າງແຮງງານທີ່ມີສີມື ໂດຍສະເພາະການຈັດສັນງົບປະມານໃຫ້ຂະແໜງສຶກສາ 17% ແລະ ຂະແໜງສາທາລະນະສຸກ 9%.

4) ປະຊາຊົນ, ຊັ້ນຄົນຕ່າງໆ, ນັກທຸລະກິດໄດ້ມີສ່ວນຮ່ວມໃນການສະໜັບສະໜູນ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດແຜນງານ, ໂຄງການ ຢ່າງຕັ້ງໜ້າ.

5) ເພື່ອນມິດ ແລະ ສາກົນໄດ້ໃຫ້ການສະໜັບສະໜູນຊ່ວຍເຫລືອ ຢ່າງຕໍ່ເນື່ອງ.

6) ບັນດາສາເຫດດັ່ງກ່າວໄດ້ສົ່ງຜົນໃຫ້ການຈັດຕັ້ງປະຕິບັດໃນໄລຍະເຄິ່ງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-15) ໄດ້ຮັບຜົນສຳເລັດ ແລະ ເປັນພື້ນຖານທີ່ແຂງແກ່ນໃຫ້ແກ່ການກ້າວໄປສູ່ການບັນລຸເປົ້າໝາຍສະຫັດສະຫວັດ ໃນປີ 2015 ແລະ ນຳພາປະເທດຊາດອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020.

### 3.5.2. ຂໍ້ຄົງຄ້າງ

ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ ພວກເຮົາກໍ່ປາສະຈາກບໍ່ໄດ້ບັນດາຂໍ້ຄົງຄ້າງຈຳນວນໜຶ່ງເຊັ່ນ:

1) ວຽກງານສຶກສາອົບຮົມການເມືອງ-ແນວຄິດ, ພວກເຮົາໄດ້ດຳເນີນຢ່າງລຽນຕິດ, ດ້ວຍຫລາຍລະດັບ, ແຕ່ການປະຕິບັດ 4 ບຸກທະລຸ ທີ່ກອງປະຊຸມໃຫຍ່ຂອງພັກວາງອອກ ຍັງບໍ່ທັນຮອບດ້ານ ແລະ ເລິກເຊິ່ງ, ຄວາມຮັບຮູ້ ແລະ ເຂົ້າໃຈຕໍ່ແນວທາງປ່ຽນແ ປ ງໃຫມ່ຂອງພັກຍັງບໍ່ທັນເລິກເຊິ່ງ, ຍັງບໍ່ທັ ນສາມາດສ້ າງກາ ນຫັນ ປ່ຽນທີ່ແທ້ຈິງໃ ນການບຸກທະລຸທາງ ດ້ານຈິ ນຕະນາ ການ. ການຫັນມະຕິຕ່າງໆເປັນແຜນງານ, ໂຄງການລະອຽດ ແລະ ບາດ ກ້າວເດີນລະອຽດທີ່ມີຈຸດສຸມ, ແທດເຫມາະກັບສະພາບຕົວຈິງຂອງຂະແໜງການ ແລະ ທ້ອງຖິ່ນ ຍັງມີຄວາມຊັກຊ້າຫລາຍ.

2) ການພັດທະນາເສດຖະກິດຍັງບໍ່ທັນສົມຄູ່ກັບການພັດທະນາວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ; ລະດັບການພັ ດທະນາຍັງມີຄວາມແຕກໂຕນກັນລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ. ສະພາບ ເສດຖະກິດ ມະຫາ ພາກຍັງມີລັກສະນະບອບບາງ, ການສະສົມຈາກພາຍໃນຍັງຈຳກັດ; ຫຼາຍຄາດຫມາຍໃນແຜນ 5 ປີ ກໍ່ຄືເປົ້າຫມາຍສະຫັດສະຫວັດດ້ານການພັດທະນາຍັງບໍ່ສາມາດບັນລຸໄດ້; ການຈັດຕັ້ງປະຕິບັດນະໂຍບາຍການພັດທະນາຊົນນະ ບົດ ແລະ ການພັດທະນາຂະແໜງການທີ່ບໍ່ນຳໃຊ້ຊັບພະຍາກອນທຳມະຊາດ ຍັງບໍ່ທັນຂະຫຍາຍຕົວເທົ່າທີ່ຄວນ, ລາຍຮັບຕົວຈິງ ຍັງບໍ່ທັນສາມາດກະຈາຍເຂົ້າເຖິງປະຊາຊົນຜູ້ທຸກຍາກຢູ່ເຂດຊົນນະບົດຫ່າງໄກສອກຫລີກຢ່າງທົ່ວເຖິງ, ປະຊາຊົນຈຳນວນໜຶ່ງຍັງບໍ່ມີວຽກເຮັດງານທຳທີ່ຫມັ້ນຄົງ ຈຶ່ງເຮັດໃຫ້ມີສະພາບຫຼັ່ງໄຫຼເຂົ້າຊອກວຽກເຮັດງານທຳຢູ່ຕົວເມືອງໃຫຍ່ ຫຼື ຢູ່ຕ່າງປະເທດເປັນຈຳນວນບໍ່ໜ້ອຍ.

3) ການເຕີບໂຕຂອງເສດຖະກິດສ່ວນໃຫຍ່ຍັງໜັກໄປດ້ານປະລິມານ, ບໍ່ຮັບປະກັນຄຸນນະພາບເທົ່າທີ່ຄວນ, ຍັງອີງ ໃສ່ການຂຸດຄົ້ນແຫຼ່ງຊັບພະຍາກອນທຳມະຊາດ, ແຕ່ການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃນຫຼາຍກໍລະນີຍັງມີລັກສະນະບໍ່ຍືນຍົງ, ມີການນຳໃຊ້ແບບຟຸມເຟືອຍ ແລະ ບໍ່ເປັນມິດຕໍ່ສິ່ງແວດລ້ອມ ເຊິ່ງບັນຫາດັ່ງກ່າວໄດ້ສ້າງຜົນຮ້າຍໃຫ້ແກ່ປະຊາຊົນເຮົາໃນຫລາຍທ້ອງຖິ່ນມາແລ້ວ, ທັງຈະສົ່ງຜົນສະທ້ອນຢ່າງຮ້າຍແຮງຕໍ່ສິ່ງແວດລ້ອມຂອງປະເທດເຮົາ.

4) ການຜະລິດກະສິກຳເປັນສິນຄ້າຍັງເຮັດແບບກະແຈກກະຈາຍ, ບໍ່ຕິດພັນສະໜິດແໜ້ນກັບອຸດສາຫະກຳປຸງແຕ່ງ ແລະ ການຕະຫຼາດ. ນະໂຍບາຍ ແລະ ມາດຕະການໃນການຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າຍັງບໍ່ທັນລະອຽດ, ຍັງບໍ່ທັນສາມາດກຳນົດສິນຄ້າປາຍແຫຼມທີ່ມີທ່າແຮງໄດ້ຢ່າງຈະແຈ້ງ; ພະນັກງານຜູ້ທີ່ມີຄວາມສາມາດ ແລະ ມີຄວາມຊຳນານໃນດ້ານວິຊາການຕ່າງໆທີ່ປະຈຳຢູ່ຮາກຖານບ້ານຍັງຈຳກັດ ແລະ ຂາດຜູ້ນຳພາເຮັດຕົວຈິງ. ແຮງງານສ່ວນໃຫຍ່ແມ່ນຢູ່ໃນຂະແໜງກະສິກຳ, ແຕ່ສະມັດຕະພາບຂອງແຮງງານຍັງຕ່ຳ ຍ້ອນບໍ່ທັນຫັນການຜະລິດກະສິກຳໄປສູ່ກົນຈັກ ແລະ ບໍ່ຕິດພັນກັບການບໍລິການໄດ້ດີເທົ່າທີ່ຄວນ, ເຮັດໃຫ້ການສ້າງປະຖົມປັດໄຈ ເພື່ອຫັນປະເທດໄປສູ່ອຸດສາຫະກຳ ແລະ ທັນສະໄໝຍັງຊັກຊ້າ. ການບໍລິການດ້ານກະສິກຳຍັງຈຳກັດ, ຍັງຂາດແຄນສັດຕະວະ ແພດ ຫຼື ການບໍລິການດ້ານສຸຂານາໄມພືດ (Phyto-sanitation).

5) ກ າ ນລົງທຶນຈາກງົບປະມານຂອງລັດຍັງບໍ່ມີຈຸດສຸມ, ປະສິດທິ ຜົນຕ່ຳ, ການປະຕິບັດວິໄນແຜນການ-ການເງິນຍັງເຮັດບໍ່ທັນເຂັ້ມງວດ, ຍັງບໍ່ມີການປະເມີນໂຄງການກ່ອນເຂົ້າແຜນ, ບາງໂຄງການກໍບໍ່ໄດ້ຮັບການປະມູນ, ໂຄງການນອກແຜນຍັງບໍ່ສາມາດຈຳກັດໄດ້ ພາໃຫ້ເກີດມີໜີ້ສິນຊຸມເຄືອແກ່ຍາວ, ຖ້າບໍ່ມີວິທີແກ້ໄຂທີ່ເໝາະສົມ ແລະ ທັນສະ ພາບການ ຈະຕົກສູ່ວິກິດການດ້ານການເງິນ. ຫຼາຍໂຄງການທີ່ນຳໃຊ້ທຶນຊ່ວຍເຫຼືອ-ກູ້ຢືມຈາກພາຍນອກຍັງເຮັດບໍ່ທັນໄດ້ດີ, ປະສິດທິຜົນຂອງໂຄງການບໍ່ທັນສູງ,

ຍັງມີລັກສະນະບໍ່ຍືນຍົງ ແລະ ບໍ່ໄປເຖິງປະຊາຊົນຢ່າງແທ້ຈິງ ເນື່ອງຈາກຂອດປະສານງານລະຫວ່າງຂະແໜງການດ້ວຍກັນ ແລະ ຂະແໜງການກັບທ້ອງຖິ່ນຍັງບໍ່ທັນເຮັດໄດ້ດີເທົ່າທີ່ຄວນ.

6) ການຕິດຕາມກວດກາ ແລະ ປະເມີນຜົນໂຄງການລົງທຶນຂອງເອກະຊົນພາຍໃນ-ຕ່າງປະເທດ ຍັງບໍ່ໄດ້ດຳເນີນເປັນປົກກະຕິ ແລະ ແທດເຖິງ, ສ່ວນໃຫຍ່ສຸມໃສ່ແຕ່ການພິຈາລະນາເພື່ອອອກອະນຸມັດໂຄງການ ເຮັດໃຫ້ລັດເສຍຜົນປະໂຫຍດເປັນຈຳນວນມະຫາສານ. ການຈັດຕັ້ງປະຕິບັດວຽກງານບໍລິການການລົງທຶນປະຕູດຽວ ເພື່ອດຶງດູດການລົງທຶນເອກະຊົນພາຍໃນຕ່າງປະເທດຢູ່ບາງຂະແໜງການ ແລະ ທ້ອງຖິ່ນບໍ່ທັນໄດ້ດີ. ນິຕິກຳຈຳນວນໜຶ່ງຍັງບໍ່ສອດຄ່ອງ ແລະ ບໍ່ສົ່ງເສີມການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເຊັ່ນ: ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ວ່າດ້ວຍອາກອນມູນຄ່າເພີ່ມ; ນອກນັ້ນ, ຍັງຂາດນິຕິກຳອັນຈຳເປັນໃນການນຳໃຊ້ນະໂຍບາຍພິເສດຕໍ່ການສົ່ງເສີມການລົງທຶນຢູ່ເຂດທີ່ໝັ້ນການປະຕິວັດ ຫຼື ເຂດທີ່ຍັງທຸກຍາກ, ເຂດເສດຖະກິດພິເສດ ແລະ ເຂດເສດຖະ ກິດສະເພາະ.

7) ການພັດທະນາວິສາຫາກິດຍັງບໍ່ທັນໄດ້ດີ, ວິສາຫະກິດຂອງລັດຍັງບໍ່ທັນເຂັ້ມແຂງ ແລະ ຍັງບໍ່ທັນສາມາດເປັນເຈົ້າພາທາງໄດ້; ວິສາຫະກິດເອກະຊົນ ໂດຍສະເພາະວິສາຫະກິດຂະໜາດກາງ ແລະ ນ້ອຍ ຍັງບໍ່ທັນເຂັ້ມແຂງ ແລະ ຄວາມສາມາດໃນການແຂ່ງຂັນຂອງວິສາຫະກິດລັດ ແລະ ເອກະຊົນຍັງບໍ່ທັນສູງ, ການສ້າງສະພາບແວດລ້ອມດ້ານການລົງທຶນ ຍັງບໍ່ສາມາດຕອບສະໜອງຄວາມຕ້ອງການຂອງການລົງທຶນເທົ່າທີ່ຄວນ ເນື່ອງຈາກຂາດນິຕິກຳໃນການຊ່ວຍເຫຼືອ, ປົກປ້ອງນັກລົງທຶນ ແລະ ການເຂົ້າຫາສິນເຊື່ອ.

8) ການໂຄສະນາເຜີຍແຜ່ນະໂຍບາຍການເຊື່ອມໂຍງດ້ານການຄ້າຍັງບໍ່ທັນກວ້າງຂວາງ ເຮັດໃຫ້ຜູ້ປະກອບການຍັງບໍ່ທັນເຂົ້າໃຈຢ່າງເລິກເຊິ່ງ ຕໍ່ກັບການເຊື່ອມໂຍງ ແລະ ກົນໄກໃນການຮັບມືທີ່ເໝາະສົມ.

9) ການພັດທະນາຊັບພະຍາກອນມະນຸດຍັງມີຄຸນນະພາບຕໍ່າ, ຄວາມສາມາດຂອງບຸກຄະລາກອນຂອງລັດຈຳນວນໜຶ່ງຍັງຕໍ່າ, ແຮງງານຍັງຂາດຄວາມຊຳນານງານ, ຂາດລະບຽບວິໄນ ແລະ ຍັງບໍ່ທັນສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາ ໂດຍສະເພາະແມ່ນຢູ່ໃນຂະແໜງ SMEs ໃນເງື່ອນໄຂແຫ່ງການເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ ແລະ ເຂົ້າເປັນສະມາຊິກອົງການການຄ້າໂລກ.

10) ປະກົດການຫຍໍ້ທໍ້ໃນສັງຄົມນັບມື້ນັບເພີ່ມຂຶ້ນ ເປັນຕົ້ນ ບັນຫາການສໍ້ລາດບັງຫຼວງ, ຢາເສບຕິດ, ການປຸ້ນຈີ້, ຂີ້ລັກ, ຂໍ້ຂັດແຍ່ງໃນຄອບຄົວ ໂດຍສະເພາະການປະຮ້າງກັນ ແລະ ໄພສັງຄົມອື່ນໆ.

11) ການປົກຄອງ-ຄຸ້ມຄອງລັດດ້ວຍກົດໝາຍຍັງບໍ່ທັນເຂັ້ມງວດ ແລະ ສັກສິດ, ສະຕິເຄົາລົບກົດໝາຍໃນສັງຄົມລວມທັງເຈົ້າໜ້າທີ່ລັດຍັງຕໍ່າ, ການຕັດສິນ, ການປະຕິບັດຄຳຕັດສິນຂອງສານຍັງບໍ່ທັນສັກສິດ ແລະ ບໍ່ຮັບປະກັນຄວາມຍຸຕິທຳຕາມກົດໝາຍ. ຍັງມີການຈົ່ມວ່າກ່ຽວກັບບັນຫາຕ່າງໆ ໂດຍສະເພາະ ການນຳໃຊ້ທີ່ດິນ ແລະ ການອອກໃບຕາດິນ.

12) ຂົງເຂດເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ກໍ່ເກີດມີປະກົດການຫຍໍ້ທໍ້ ໂດຍສະເພາະແມ່ນການເຜີຍແຜ່ຂໍ້ມູນທີ່ມີລັກສະນະບິດເບືອນ ແລະ ນຳໃຊ້ສື່ຮູບການຕ່າງໆອອກສູ່ສັງຄົມທາງສືອອນລາຍ ແລະ ອື່ນໆ ເຮັດໃຫ້ອິດທິກຳລັງປໍລະປັກສວຍໃຊ້ເພື່ອສ້າງຄວາມປັ່ນປ່ວນ ແລະ ດຳເນີນສົງຄາມຈິດຕະສາດ ເປັນເຄື່ອງມືໃຫ້ກຸ່ມຄົນບໍ່ດີ.

13) ການບຸກທະລຸດ້ານລະບອບລະບຽບການ ແລະ ກົນໄກ ຍັງມີຄວາມຊັກຊ້າ, ການຕັດສິນໃຈຍັງບໍ່ເດັດຂາດ, ການຫັນກົງຈັກຂັ້ນສູນກາງເຮັດພາລະບົດບາດຄຸ້ມຄອງດ້ານມະຫາພາກ ຍັງບໍ່ທັນຕັ້ງໜ້າ. ການປະສານສົມທົບລະຫວ່າງຂະແຫນງການສູນກາງດ້ວຍກັນ, ຂະແຫນງການສູນກາງກັບທ້ອງຖິ່ນຍັງບໍ່ທັນແຫນ້ນແຟ້ນ, ບໍ່ທັນກົມກຽວ, ມີຫລາຍກໍລະນີກໍ່ກົດຫນ່ວງກັນ. ກົງຈັກການຈັດຕັ້ງນັບມື້ນັບໃຫຍ່ໂຕ, ປະສິດທິພາບ ແລະ ຄວາມສັກສິດໃນການຄຸ້ມຄອງລັດຍັງຕໍ່າ.

14) ຂົງເຂດສະຫວັດດີການສັງຄົມ: ການແກ້ໄຂບັນຫາຕໍ່ພະນັກງານບຳນານຍັງບໍ່ທັນສຳເລັດຢ່າງຂາດຕົວ, ຍັງບໍ່ທັນມີວິທີການປຸກລະດົມຂົນຂວາຍປະຊາຊົນຊັ້ນຄົນຕ່າງໆໃຫ້ເຂົ້າຮ່ວມໃນຂະບວນການ ກະຕັນຍູຮູ້ບຸນຄຸນ ຕໍ່ພະນັກງານ, ທະຫານ, ຕຳຫຼວດທີ່ມີຄຸນງາມຄວາມດີຕໍ່ການປະຕິວັດ, ປະຊາຊົນຍັງມີການຈົ່ມວ່າຫລາຍກ່ຽວກັບການປິ່ນປົວສຸຂະພາບ ກໍ່ຄືການເບິ່ງແຍງດູແລຊ່ວຍເຫລືອຜູ້ເຖົ້າຜູ້ແກ່ ແລະ ຜູ້ດ້ອຍໂອກາດທີ່ຍັງຂາດທີ່ຢູ່ອາໃສ.

15) ການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ຍັງມີບາງຄາດໝາຍບໍ່ສາມາດບັນລຸໄດ້ ເຊັ່ນ: ການຂາດສານອາຫານ, ອັດຕາການລອດເຫຼືອຂອງນັກຮຽນຊັ້ນປະຖົມ, ອັດຕາການເຂົ້າຮຽນຊັ້ນມັດທະຍົມ ຕົ້ນ, ສັດສ່ວນນັກຮຽນຍິງຕໍ່ນັກຮຽນຊາຍໃນການສຶກສາທຸກລະດັບ, ອັດຕາການຕາຍຂອງເດັກນ້ອຍອາຍຸຕໍ່າກວ່າ 1 ປີ ແລະ ຕໍ່າກວ່າ 5 ປີ, ອັດຕາການປົກຫຸ້ມຂອງປ່າໄມ້ ແລະ ການເກັບກູ້ລະເບີດບໍ່ທັນແຕກ.

- **ສາເຫດພາໃຫ້ມີ ຂໍ້ຄົງຄ້າງ**:

1) ການເຊື່ອມຊຶມກໍາແໜ້ນແນວທາງຂອງພັກ, ນະໂຍບາຍ ແລະ ແຜນການຂອງລັດບໍ່ທັນເລິກເຊິ່ງເຖິງຖອງ, ຄວາມ-ຮັບຜິດຊອບ ແລະ ຄວາມເປັນເຈົ້າໃນການຈັດຕັ້ງປະຕິບັດຂອງບາງຂະແໜງການສູນກາງ ແລະ ບາງທ້ອງຖິ່ນບໍ່ທັນເສີມຂະຫຍາຍສິດເປັນເຈົ້າຄວາມຮັບຜິດຊອບຂອງທຸກພາກສ່ວນໃນສັງຄົມ. ການປະສານງານລະຫວ່າງຂະ ແໜງການດ້ວຍກັນ, ລະຫວ່າງຂະແໜງການກັບທ້ອງຖິ່ນບໍ່ທັນຄ່ອງຕົວເທົ່າທີ່ຄວນ ແລະ ຫຼາຍບັນຫາຍັງເປັນຮູບການຫຼາຍກວ່າ.

2) ຄ ວາມຮຽກຮ້ອງຕ້ອງການໃນການພັດທະນາຂະແໜງການ ແລະ ທ້ອງຖິ່ນຮາກຖານມີສູງແຕ່ຄວາມສາມາດສະໜອງງົບປະມານຍັງບໍ່ພຽງພໍພາໃຫ້ເກີດມີຄວາມຄິດ ແລະ ການກະທໍານອກກົດໝາຍ ແລະ ລະບຽບການເພື່ອໃຫ້ບັນລຸເປົ້າໝາຍການພັດທະນາຂອງຕົນ.

3) ຄວາມສັກສິດໃນການຄຸ້ມຄອງລັດຕໍ່ການພັດທະນາເສດຖະກິດ-ສັງຄົມ ຍັງບໍ່ທັນສູງ, ການປະຕິບັດວິໄນຕ່າງໆກ່ຽວກັບການຄຸ້ມຄອງເສດຖະກິດໂດຍສະເພາະວິໄນແຜນການ-ການເງິນຍັງບໍ່ທັນຖືກຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

4) ສະພາບພາຍນອກໂດຍສະເພາະແມ່ນສະພາບເສດຖະກິດຂອງໂລກ, ການຂຶ້ນ-ລົງຂອງລາຄານໍ້າມັນໂລກແບບຄາດໄດ້ຍາກ, ບັນຫາໄພພິບັດທາງທໍາມະຊາດຍັງເປັນສິ່ງກີດຂວາງຕໍ່ການພັດທະນາເສດຖະກິດ-ສັງຄົມຂອງປະ ເທດເຮົາ.

5) ຕົວແບບໃນການພັດທະນາຢູ່ທ້ອງຖິ່ນຕ່າງໆຍັງມີໜ້ອຍ, ຫຼາຍບ່ອນກໍ່ບໍ່ທັນພົ້ນເດັ່ນເທົ່າທີ່ຄວນ, ການເຮັດການຜະລິດກະສິກໍາຢູ່ບາງທ້ອງຖິ່ນກໍພົບບັນຫາຕະຫຼາດຮອງຮັບ ຈຶ່ງບໍ່ທັນສ້າງແຮງຈູງໃຈ ແລະ ກະຕຸກຊຸກຍູ້ໃຫ້ຄອບຄົວປະຊາຊົນຫັນມາຫາການຜະລິດເປັນສິນຄ້າ.

## 3.5.3. ບາງບົດຮຽນທີ່ຖອດຖອນໄດ້ຈາກແຜນ 5 ປີ ຄັ້ງທີ VII ເພື່ອນໍາໃຊ້ເຂົ້າໃນການສ້າງແຜນຄັ້ງທີ VIII

1) ສືບຕໍ່ຍຶດໝັ້ນ ແລະ ເສີມຂະຫຍາຍແນວທາງການປ່ຽນແປງໃໝ່ຢ່າງຮອບດ້ານທີ່ມີຫຼັກການຂອງພັກ, ໄປຄຽງຄູ່ກັບການສືບຕໍ່ປະຕິບັດ 4 ບຸກທະລຸ ຢ່າງຕັ້ງໜ້າ ຄື: ບຸກທະລຸທາງດ້ານຈິນຕະນາການ, ບຸກທະລຸດ້ານການພັດ ທະນາຊັບພະຍາກອນມະນຸດ, ບຸກທະລຸລະບົບກົນໄກ, ລະບອບ, ລະບຽບການບໍລິຫານ ແລະ ບຸກທະລຸລະບົບດ້ານແກ້ໄຂຄວາມທຸກຍາກຂອງປະຊາຊົນດ້ວຍການຂຸດຄົ້ນແຫລ່ງທຶນຕ່າງໆ ແລະ ດ້ວຍນະໂຍບາຍສົ່ງເສີມພິເສດ, ສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມຢ່າງມີຈຸດສຸມ; ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຄວາມສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າພາຍໃນຊາດເປັນປັດໃຈທີ່ຈໍາເປັນພື້ນຖານ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ການຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນໃຫ້ສູງຂຶ້ນ.

2) ບົດຮຽນກ່ຽວກັບການພັດທະນາແບບຍືນຍົງ:

- ກ ານພັດທະນາແບບຍືນຍົງ ແມ່ນຂະບວນວິວັດທະນາການຂອງການພັດທະນາແບບຮອບດ້ານ ຖືເປັນເປົ້າໝາຍ ແລະ ບາດລ້ຽວໃໝ່ຂອງການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການເຕີບໂຕທີ່ສົມສ່ວນ ລະຫວ່າງການພັດທະ ນາດ້ານເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ການຮັກສາສິ່ງແວດລ້ອມ. ສະນັ້ນ, ໃນການພັດທະນາເສດຖະ ກິດ-ສັງຄົມ ໃນຕໍ່ໜ້າຕ້ອງຍຶດຖືຕ າມທິດການພັດທະນາແບບຍືນຍົງ ໂດຍຖືເອົາການພັດທະນາເສດຖະກິດເປັນ ໃຈກາງ, ການພັດທະນາວັດທະນທໍາ-ສັງຄົມເປັນເປົ້າໝາຍ ແລະ ການປົກປັກຮັກສາສະພາບແວດລ້ອມເປັນສິ່ງຈໍາເປັນ. ພ້ອມດຽວກັນນັ້ນ, ຕ້ອງສົມທົບຢ່າງກົມກຽວລະຫວ່າງການພັດທະນາເສດຖະກິດກັບການປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ.
- ລະດົມທຸກກໍາລັງແຮງຈາກພາກສ່ວນເສດຖະກິດເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຕາມກົນໄກເສດຖະ ກິດຕະຫຼາດ ແລະ ມີການຄຸ້ມຄ້ອງດັດສົມຂອງລັດ, ການຍູ້ການຈະເລີນເຕີບໂຕທາງດ້ານເສດຖະກິດຕ້ອງຕິດພັນກັບການສ້າງວຽກເຮັດງ ານທໍາ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໂດຍເລັ່ງການພັດທະນາທຸລະກິດຂະໜາດນ້ອຍ ແລະ ກາງໃຫ້ຂະຫຍາຍຕົວທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອກາຍເປັນຖານເສດຖະກິດທີ່ໝັ້ນຄົງ ແລະ ສ້າງວຽກເຮັດງານທໍາ, ສ້າງເງື່ອນໄຂການເຂົ້າເຖິງແຫລ່ງທຶນ, ສືບຕໍ່ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງຊົນນະບົດເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະ ເພື່ອສ້າງຄວາມເທົ່າທຽມກັນການເຂົ້າເຖິງການບໍ ລິການຂອງພາກລັດ ແລະ ເອກະຊົນ.

- ຄວາມສາມາດສະໜອງແຮງງານ ແລະ ຄວາມຕ້ອງການຂອງຕະຫລາດຕ້ອງສອດຄ່ອງກັບການວາງນະໂຍບາຍ ແລະ ແຜນພັດທະນາຂອງປະເທດ; ຍົກລະດັບປັບປຸງພື້ນຖານໂຄງລ່າງຕ້ອງໃຫ້ສອດຄ່ອງກັບສະພາບການພັດ ທະນາຕົວຈິງ, ຄວາມຕ້ອງການຂອງປະຊາຊົນ ແລະ ຄວາມສາມາດຂອງທຶນຮອນ.
- ການພັດທະນາປະເທດຕ້ອງຍຶດໝັ້ນການສ້າງລະບົບຕ່ອງໂສ້ ແລະ ເຄືອຂ່າຍການຜະລິດ, ການປະສານສົມທົບລະຫວ່າງພາກສ່ວນຕ່າງໆໃນສັງຄົມແມ່ນສິ່ງຕ້ອງໄດ້ເອົາໃຈໃສ່ ແລະ ສ້າງໃຫ້ໄດ້ສຳພັນເສດຖະກິດລະຫວ່າງບ້ານ, ເມືອງ ແລະ ແຂວງ ເພື່ອຂະຫຍາຍ ແລະ ສົ່ງເສີມການເຊື່ອມຕິດ ແລະ ເຊື່ອມໂຍງໃຫ້ດີຂຶ້ນກວ່າເກົ່າ; ການປະສານສົມທົບ ແລະ ຄວາມສອດຄ່ອງຂອງການພັດທະນາແຕ່ລະຂະແໜງການຕ້ອງມີຄວາມກົມກຽວ ແລະ ສະໜັບສະໜູນຊຶ່ງກັນ ແລະ ກັນ.

3) ບົດຮຽນໃນການຄຸ້ມຄອງເສດຖະກິດມະຫາພາກ:

- ການຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກໃຫ້ໝັ້ນທ່ຽງ (ເຊັ່ນ: ອັດຕາເງິນເຟີ້ຕ່ຳກວ່າອັດຕາການຂະຫຍາຍຕົວຂອງເສດຖະກິດ, ອັດຕາແລກປ່ຽນທີ່ສາມາດຄວບຄຸມໄດ້, ຖານລາຍຮັບທີ່ເຂັ້ມແຂງແລະການນຳໃຊ້ຢ່າງມີປະສິດທິຜົນສູງ, ດຸນການຄ້າທີ່ດີ, ແຮງງານມີວຽກເຮັດງານທຳແລະອື່ນໆ) ເປັນປັດໄຈທີ່ຈຳເປັນພື້ນຖານໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມກໍ່ຄືການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.
- ກ ານກຳແໜ້ນຈຸດພິເສດ, ທ່າແຮງ ແລະ ຄວາມສາມາດບົ່ມຊ້ອນຂອງແຕ່ລະຂະແໜງການ, ທ້ອງຖິ່ນສົມທົບກັບການຄຸ້ມຄອງ, ວາງແຜນພັດທະນາເສດຖະກິດຢ່າງສົມສ່ວນ ແລະ ດຸ່ນດ່ຽງລະຫວ່າງດ້ານຕ່າງໆ ແມ່ນປັດໃຈພື້ນຖານຂອງການເຕີບໂຕຢ່າງຕໍ່ເນື່ອງ ແລະ ມີສະຖຽນລະພາບ.
- ເພື່ອເຮັດໃຫ້ການເຕີບໂຕຂອງເສດຖະກິດມີຄວາມໝັ້ນທ່ຽງ ແລະ ຍືນຍົງ ຕ້ອງຊຸກຍູ້ ແລະສົ່ງເສີມການຜະລິດສິນຄ້າພາຍໃນປະເທດໃຫ້ມີຄວາມຫລາກຫລາຍ ແລະ ສຸມໃສ່ການປຸງແຕ່ງທີ່ນຳໃຊ້ເຕັກນິກທີ່ທັນສະໄໝ, ເໝາະສົມ ແລະ ສອດຄອງກັບຕະຫລາດ ເປັນຕົ້ນ ການພັດທະນາທຸລະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ມີລັກສະນະພົ້ນເດັ່ນ.
- ການພັດທະນາເສດຖະກິດ-ສັງຄົມໂດຍອີງຕາມກົນໄກເສດຖະກິດຕະຫຼາດທີ່ມີການຄຸ້ມຄອງ ແລະ ດັດສົມຈາກພາກລັດຢ່າງເປັນລະບົບຄົບຊຸດ ແມ່ນເປັນປັດໄຈສຳຄັນໃຫ້ແກ່ການພັດທະນາຕາມທິດສັງຄົມນິຍົມ.
- ກ ານລົງທຶນຂອງລັດຄວນສຸມໃສ່ເຂົ້າໃສ່ໃນການກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນໃຫ້ແກ່ການພັດທະນາ ແລະ ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນ; ເອົາໃຈໃສ່ໃນການລະດົມທຶນຈາກການຊ່ວຍເຫຼືອ ແລະ ກູ້ຢືມຈາກຕ່າງປະເທດ (ODA) ແລະ ນຳໃຊ້ທຶນຢ່າງເປັນເຈົ້າການທີ່ມີຄວາມຮັບຜິດຊອບສູງ, ມີຄວາມໂປ່ງໃສ, ມີປະສິດທິພາບ ແລະ ມີປະສິດທິຜົນສູງ. ສຳລັບວຽກງານສົ່ງເສີມການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດຕ້ອງໄດ້ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃນການເປັນເຈົ້າການ ແລະ ມີຄວາມຮັບຜິດຊອບສູງ, ມີການກະກຽມນິຕິກຳຢ່າງລະອຽດຮອບຄອບ ແລະ ຄົບຊຸດ, ມີການຕິດຕາມກວດກາການຈັດຕັ້ງປະຕິບັດຕົວຈິງ ແລະ ມີການສະຫຼຸບ, ລາຍງານການຖອດຖອນບົດຮຽນຢ່າງເປັນປົກກະຕິ.

4) ບົດຮຽນກ່ຽວກັບຂະບວນການພັດທະນາຊົນນະບົດ ແລະລຶບລ້າງຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ:

- ການກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຕ້ອງເຮັດຢ່າງຮອບດ້ານຕາມ 4 ເນື້ອໃນ ແລະ 4 ຄາດໝາຍ, ເປັນລະບົບຕໍ່ເນື່ອງ ແລະ ເຮັດຢ່າງມີຈຸດສຸມໂດຍຊຸກຍູ້ພາກສ່ວນເສດຖະກິດທັງພາຍໃນ ແລະຕ່າງປະເທດຂຸດຄົ້ນແ ລະ ນຳໃຊ້ທ່າແຮ່ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນຮາກຖານເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ດ້ວຍການຊຸກຍູ້ການຜະລິດເປັນສິນຄ້າ; ຂະແໜງການ, ທ້ອງຖິ່ນທຸກຂັ້ນ ແລະ ຕະຫຼອດຮອດປະຊາຊົນທຸກຂັ້ນຄົນຕ້ອງເຂົ້າຮ່ວມ, ເພີ່ມທະວີຄວາມຮັບຜິດຊອບ ແລະ ຖືເອົາວຽກງານກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດກາຍເປັນສະໜາມຮົບອັນດັບໜຶ່ງຂອງການພັດທະນາປະ ເທດ ແລະ ເປັນປັດໄຈພື້ນຖານໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.
- ກ ານປຸກລະດົມຂະບວນການແຂ່ງຂັນຮັກຊາດ ແລະ ສ້າງບ້ານພັດທະນາ ຊຸກຍູ້ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແລະ ການປະຕິບັດວຽກງານ 3 ສ້າງ ແມ່ນມີຄວາມຈຳເປັນພາວະວິໄສ ແລະ ຕ້ອງສືບຕໍ່ເຮັດເປັນປົກກະຕິ ແລະ ຍາວນານ.

5) ບົດຮຽນກ່ຽວກັບຄວາມອາດສາມາດນຳພາຂອງຄະນະພັກແຕ່ລະຂັ້ນ, ສະມາຊິກພັກ-ພະນັກງານທົ່ວໄປ, ການຜັນຂະຫຍາຍແນວທາງນະໂຍບາຍ ແລະມະຕິຂອງພັກ-ລັດອອກເປັນແຜນພັດທະນາເສດຖະກິດ-ສັງຄົມ, ແຜນງານ ແລະ ໂຄງການ:

- ການພັດທະນາຊັບພະຍາກອນມະນຸດ ແມ່ນປັດໄຈຕັດສິນການພັດທະນາປະເທດຊາດ, ສະນັ້ນ ຕ້ອງໄດ້ສຸມໃສ່ການພັດທະນາຊັບພະຍາກອນມະນຸດທັງທາງດ້ານປະລິມານ ແລະ ຄຸນນະພາບຢ່າງຈິງຈັງ ແລະເປັນປົກ ກະຕິຕໍ່ເນື່ອງ.
- ການພັດທະນາບຸກຄະລາກອນ ໃຫ້ມີຄວາມຮູ້ຄວາມສາມາດທັງໃນດ້ານການຊີ້ນໍາ ແລະ ການນໍາພາໃນການປະ ຕິບັດວຽກງານຕົວຈິ່ງ ແມ່ນມີຄວາມຈໍາເປັນ ໂດຍສະເພາະ ເພີ່ມທະວີຄວາມສາມາດນໍາພາຂອງຄະນະພັກແຕ່ລະຂັ້ນເພື່ອຊີ້ນໍາ-ນໍາພາໃນການຈັດຕັ້ງຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ ອອກເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ໃຫ້ສອດຄ່ອງກັບຈຸດພິເສດ ແລະ ທ່າແຮງຂອງແຕ່ລະບ່ອນ ເພື່ອປະກອບ ສ່ວນເຂົ້າໃນການປະຕິບັດເປົ້າໝາຍການພັດທະນາຂອງປະເທດຊາດ.
- ຂະແໜງການ ແລະ ທ້ອງຖິ່ນໃດມີການເຜີຍແຜ່ແນະນໍາກ່ຽວກັບການຈັດຕັ້ງຜັນຂະຫຍາຍນະໂຍບາຍ, ມະຕິ, ຄໍາສັ່ງຕ່າງໆຂອງພັກ ແລະ ລັດຖະບານແລະແຜນພັດທະນາເສດຖະກິດ-ສັງຄົມຢ່າງລະອຽດ, ເປັນປົກກະຕິແລະທົ່ວເຖິງຈະເຮັດໃຫ້ພະນັກງານ, ປະຊາຊົນເຊື່ອມຊຶ່ມ, ມີຄວາມເຂົ້າໃຈຢ່າງເປັນເອກະພາບ ແລະ ສາມາດນໍາໄປຈັດຕັ້ງປະຕິບັດໄດ້ດີກວ່າ.
- ຄ ວາມກົມກຽວລະຫວ່າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນພັດທະນາຂອງຂະແໜງການແລະທ້ອງຖິ່ນແມ່ນເປັນກຸນແຈສໍາຄັນ ໃນການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາໃຫ້ສໍາເລັດ ໂດຍອີງໃສ່ລັກສະ ນະ, ຈຸດພິເສດ ແລະ ທ່າແຮງຂອງຂະແໜງການ ແລະ ທ້ອງຖິ່ນຕົນ, ແຕ່ກົງກັນຂ້າມຖ້າການຈັດຕັ້ງປະຕິບັດໂຄງການພັດທະນາຂອງບັນດາຂະແໜງການ ແລະ ທ້ອງຖິ່ນບໍ່ສອດຄ່ອງ ແລະ ກົມກ່ຽວກັບເປົ້າໝາຍ ແລະ ທິດທາງຂ ອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ບໍ່ມີຈຸດສຸມຈະເຮັດໃຫ້ການປະຕິບັດບາງຄາດໝາຍຂອງການພັດທະນາບໍ່ສໍາເລັດ. ສະນັ້ນ, ການກໍານົດສ້າງ ແລະ ພິຈາລະນາໂຄງການລົງທຶນພັດທະນາຕ້ອງສອດຄ່ອງກັບເປົ້າໝາຍ ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມ.

6) ບົດຮຽນໃນການຄຸ້ມຄອງລັດແຫ່ງກົດໝາຍ:

- ກ ານປັບປຸງ ແລະ ສ້າງນິຕິກໍາໃຫ້ມີຄວາມສອດຄ່ອງກັບສະພາບການຕົວ ຈິງ, ການເຜີຍແຜ່ກົດໝາຍ ແລະ ລະບຽບການໃຫ້ແກ່ສັງຄົມຮັບຮູ້ ແລະ ເຂົ້າໃຈຢ່າງທົ່ວເຖິງ, ຍົກສູງສະຕິຄວາມຮູ້ ແລະ ເຄົາລົບກົດໝາຍ ແລະ ລະບຽບການຕ່າງໆຢ່າງເຂັ້ມງວດ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດເປັນສິ່ງທີ່ຈໍາເປັນ ແລະ ຕ້ອງເອົາໃຈໃສ່ຢ່າງເປັນລະບົບ.
- ການປັບປຸງກົງຈັກການຈັດຕັ້ງໃຫ້ກະທັດລັດ ແລະ ສ່ອດຄ່ອງກັບເງື່ອນໄຂຕົວຈິງເປັນສິ່ງທີ່ຈໍາເປັນຢ່າງຍິ່ງ.
- ການກໍານົດພາລະບົດບາດ ແລະ ໜ້າທີ່ຂອງແຕ່ລະຂັ້ນຢ່າງຈະແຈ້ງ ໂດຍມີການເຜີຍແຜ່ແນະນໍາໃຫ້ພາກສ່ວນກ່ຽວຂ້ອງເຂົ້າໃຈຢ່າງເປັນເອກະພາບແມ່ນປັດໄຈທີ່ສໍາຄັນໃນການຈັດຕັ້ງປະຕິບັດຕົວຈິງຢ່າງມີໝາກຜົນສູງ.
- ການປະສານງານທີ່ສອດຄ່ອງ, ກົມກຽວ ແລະ ເປັນລະບົບລະຫວ່າງຂະແໜງການຂັ້ນສູນກາງ, ລະຫວ່າງຂະ ແໜງການ ແລະ ທ້ອງຖິ່ນ ແລະ ແຂວງກັບແຂວງ, ຂະແໜງການຕາມສາຍຕັ້ງແມ່ນມີຄວາມຈໍາເປັນຕໍ່ການບັນລຸເປົ້າໝາຍລວມຂອງປະເທດ.

7) ບົດຮຽນໃນການຮ່ວມມື ແລະ ເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ:

- ສືບຕໍ່ປະຕິບັດແນວທາງການຕ່າງປະເທດຂອງພັກ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ຮ່ວມມືຢ່າງສະເໝີຕົ້ນສະເໝີປາຍ ກັບບັນດາປະເທດປະຊາຄົມອາຊຽນ, ປະເທດເພື່ອນມິດໃນໂລກ ແລະ ອົງການຈັດຕັ້ງສາກົນ, ພິເສດຕ້ອງເສີມຂະຫຍາຍສາຍພົວພັນອັນເປັນມູນເຊື້ອ, ຄວາມສາມັກຄີກັບບັນດາປະເທດເພື່ອນມິດຍຸດທະສາດ, ແ ມ່ນມີຄວາມຈໍາເປັນຕ້ອງສືບຕໍ່ປະຕິບັດ ເພື່ອສ້າງເປັນກໍາລັງແຮງສັງລວມເຂົ້າໃນພາລະກິດປົກປັກຮັກສາ ແລະ ພັດທະນາສ້າງສາປະເທດ.
- ການຮ່ວມມືເສດຖະກິດ: ຕ້ອງເພີ່ມຄວາມອາດສາມາດແຂ່ງຂັນທັງທາງພາກລັດ ແລະ ເອກະຊົນພາຍໃນເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ, ອົງການການຄ້າໂລກ ເພື່ອຍາດແຍ່ງເອົາກາລະໂອກາດ ແລະ ຜົນປະໂຫຍດຕໍ່ປະ ເທດຊາດ, ສືບຕໍ່ພັດທະນາພື້ນຖານໂຄງລ່າງເພື່ອເອື້ອອໍານວຍການຂະຫຍາຍຕົວຂອງທຸລະກິດ ແລະ ການພັດທະນາຊັບພະຍາກອນມະນຸດ ໂດຍສະເພາະຄອບຄົວ, ນັກທຸລະກິດສາມາດເຂົ້າເຖິງໂອກາດທາງທຸລະກິດ, ເສດ ຖະກິດ, ສັງຄົມ ແລະ ວັດທະນະທໍາ.

8) ການປັບປຸງລະບົບການຕິດຕາມ, ປະເມີນຜົນ ແລະ ສະຫລູບລາຍງານຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ສອດຄ່ອງກັບສະພາບການຕົວຈິງແມ່ນເປັນເຄື່ອງມືທີ່ຈໍາເປັນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ມີປະສິດທິຜົນສູງ ແລະ ສາມາດກວດສອບໄດ້.

# ພາກທີສອງ

## ແຜນພັດທະນາເສດຖະກິດ-ສັງຄົມ
## ແຫ່ງຊາດ 5 ປີຄັ້ງທີ VIII
## (2016-2020)

# ພາກທີສອງ: ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

## 1. ສະພາບແວດລ້ອມທີ່ອຳນວຍ ແລະ ສິ່ງທ້າທາຍ

### 1.1. ສະພາບແວດລ້ອມທີ່ເອື້ອອຳນວຍ

- **ສະພາບພາກພື້ນ ແລະ ສາກົນ**:

ການເຊື່ອມໂຍງເສດຖະກິດ ແລະ ການຮ່ວມມືຂອງໂລກ ແລະ ພາກພື້ນ ໄດ້ມີການເພີ່ມຂຶ້ນ ແລະ ຂະຫຍາຍກວ້າງອອກດ້ວຍຫຼາຍຮູບແບບຫຼາຍລະດັບ ແລະ ມີການແຂ່ງຂັນສູງຂຶ້ນ, ມີຫຼາຍປະເທດໄດ້ກາຍເປັນສະມາຊິກຂອງອົງການສາກົນຕ່າງໆ ເປັນຕົ້ນ: ອົງການການຄ້າໂລກ (WTO), ປະຊາຄົມເສດຖະກິດອາຊຽນ (AEC) ແລະ ອື່ນໆ ຊຶ່ງຈະເຮັດໃຫ້ການຄ້າ, ການລົງທຶນ ແລະ ການບໍລິການເພີ່ມຂຶ້ນ. ບັນດາຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆ ຈະສືບຕໍ່ໃຫ້ການຊ່ວຍເຫລືອປະເທດດ້ອຍພັດທະນາ; ການຄົ້ນຄວ້າ ແລະ ການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີຂອງໂລກຈະຊ່ວຍເຮັດໃຫ້ສະ ມັດຕະພາບການຜະລິດ ແລະ ການບໍລິການສູງຂຶ້ນ; ການລົງທຶນຂອງພາກລັດ ແລະ ພາກເອກກະຊົນຢູ່ບັນດາປະເທດກຳລັງພັດທະນາຈະເພີ່ມຂຶ້ນຢ່າງຫລວງຫລາຍຊຶ່ງຈະເຮັດໃຫ້ເສດຖະກິດຂອງໂລກມີການເຕີບໂຕສູງຂຶ້ນໃນໄລຍະກາງ. ຄາດຄະເນສະເລ່ຍໃນໄລຍະ 2014-2019 ເສດຖະກິດຂອງໂລກຈະຂະຫຍາຍຕົວໃນລະດັບ 3,1%; ໃນນັ້ນ: ປະເທດທີ່ມີການຂະ ຫຍາຍຕົວສູງກວ່າໝູ່ແມ່ນ ສປ ຈີນ 5,9%, ອິນເດຍ ແລະ ເສດຖະກິດຂອງປະເທດອາຊຽນອື່ນໆ 4,8%.

- **ສະພາບພາຍໃນ**:

ປະເທດເຮົາມີຄວາມສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ; ປະຊາຊົນ ແລະ ສັງຄົມ ມີຄວາມສາມັກຄີປອງດອງ. ການຫັນປ່ຽນເສດຖະກິດຕາມກົນໄກຕະຫລາດຈະເຮັດໃຫ້ເສດຖະກິດ-ສັງຄົມມີການພັດທະນາ ແລະ ມີການຂະຫຍາຍຕົວສູງຂຶ້ນ.

ປະເທດເຮົາມີທ່າແຮງບົ່ມຊ້ອນທາງດ້ານຊັບພະຍາກອນທຳມະຊາດ ເຊັ່ນ: ທີ່ດິນ, ແຮ່ທາດ, ແຫລ່ງນ້ຳ ແລະ ປ່າໄມ້ ເພື່ອນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນ: ການພັດທະນາພະລັງງານໄຟຟ້າ, ການສ້າງຊົນລະກະເສດ, ການຜະລິດກະສິກຳສະອາດ ແລະ ກະສິກຳປອດສານພິດ, ການປຸງແຕ່ງແຮ່ທາດ ແລະ ການພັດທະນາແຫລ່ງທ່ອງທ່ຽວຕ່າງໆ; ເສດຖະກິດພູມປັນຍາຍັງສາມາດເສີມຂະຫຍາຍ, ມີຄວາມໄດ້ປຽບທາງດ້ານທີ່ຕັ້ງໃນການສ້າງເປັນທາງຜ່ານຂົນສົ່ງສິນຄ້າ ແລະ ການບໍລິການໃນຂົງເຂດລຸ່ມແມ່ນ້ຳຂອງ ເຊັ່ນ: ກຳປູເຈຍ, ສ.ປຈີນ, ມຽນມາ, ໄທ, ຫວຽດນາມ. ນອກ ຈາກນັ້ນ, ບັນດານິຕິກຳກໍໄດ້ມີການປັບປຸງ ແລະ ສ້າງຂຶ້ນໃໝ່ເປັນຈຳນວນຫລາຍ ຊຶ່ງສ້າງເງື່ອນໄຂອຳນວຍຕໍ່ການພັດທະນາເສດຖະກິດ-ສັງຄົມ.

ການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ (WTO) ແລະ ປະຊາຄົມເສດຖະກິດອາຊຽນ (AEC) ຈະສ້າງກາລະໂອກາດໃຫ້ ສປປລາວ ຍາດແຍ່ງເອົາການລົງທຶນ, ການຄ້າ ແລະ ການບໍລິການຫລາຍຂຶ້ນ, ນອກຈາກນັ້ນ ຍັງເປີດໂອ ກາດໃຫ້ມີການແລກປ່ຽນບົດຮຽນ, ເຕັກໂນໂລຊີ ແລະ ວັດທະນະທຳ ເຊິ່ງຈະເປັນຜົນດີຕໍ່ການພັດທະນາເສດຖະກິດ-ສັງຄົມ ໃນໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ.

### 1.2. ສິ່ງທ້າທາຍ

- **ສະພາບພາກພື້ນ ແລະ ສາກົນ**:

ມາເຖິງປະຈຸບັນ ເຖິງແມ່ນວ່າເສດຖະກິດຂອງໂລກໄດ້ມີສັນຍານການຟື້ນຕົວຈາກວິການດ້ານເສດຖະກິດ ແລະ ການເງິນໃນລະດັບໜຶ່ງແລ້ວກໍ່ຕາມ ແຕ່ໃນຊຸມປີຕໍ່ໜ້າ ຄາດວ່າສະພາບເສດຖະກິດຂອງພາກພື້ນ ແລະ ຂອງໂລກ ອາດຈະມີການປ່ຽນແປງຢູ່

ຕະຫຼອດເວລາ, ຫຼາຍຂົງເຂດອາດຈະມີບັນຫາ ແລະ ຂໍ້ຂັດແຍ່ງດ້ານການເມືອງອາດຈະຍັງບໍ່ສາມາດແກ້ໄຂໄດ້ ຊຶ່ງຈະເປັນອຸປະສັກຕໍ່ສະຖຽນລະພາບທາງດ້ານເສດຖະກິດ-ສັງຄົມໃນພາກພື້ນ ແລະ ໃນໂລກ.

ການເຊື່ອມໂຍງ ແລະ ການຮ່ວມມືເສດຖະກິດ ໄດ້ເຮັດໃຫ້ມີການແຂ່ງຂັນຫລາຍຂຶ້ນ ເປັນຕົ້ນ ການເຂົ້າຮ່ວມການຄ້າເສລີອາຊຽນ ແລະ ປະຊາຄົມເສດຖະກິດອາຊຽນ. ການປ່ຽນແປງດິນຟ້າອາກາດຂອງໂລກ ອາດຈະເຮັດໃຫ້ເກີດມີໄພພິບັດທາງທຳມະຊາດຫຼາຍຂຶ້ນ ເປັນຕົ້ນ ພະຍຸ, ແຜ່ນດິນໄຫວ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະໄພໜາວ ແລະ ຊຶ່ງຈະເປັນອຸ ປະສັກໃນການພັດທະນາເສດຖະກິດ-ສັງຄົມ ໃນທົ່ວໂລກ.

- **ສະພາບພາຍໃນ**:

ພື້ນຖານເສດຖະກິດຂອງປະເທດຍັງມີລັກສະນະບອບບາງເຊິ່ງສ່ວນໃຫ່ຍແມ່ນເສດຖະກິດທຳມະຊາດ ແລະ ເຄິ່ງທຳມະຊາດ, ການຜະລິດເປັນສິນຄ້າຍັງບໍ່ທັນຂະຫຍາຍຕົວ ແລະ ບໍ່ມີຄວາມຫຼາກຫຼາຍ, ການສ້າງຕັ້ງກຸ່ມຜູ້ຜະລິດຍັງຈຳກັດ ເຮັດໃຫ້ມີຄວາມອ່ອນໄຫວຕໍ່ປັດໄຈພາຍນອກ ເປັນຕົ້ນ ການປ່ຽນແປງຂອງລາຄາສິນຄ້າ, ການແຂ່ງຂັນກັບຕະຫລາດຕ່າງປະເທດ. ເຖິງວ່າສປປລາວຈະມີຄວາມພະຍາຍາມໃນການປັບປຸງ ແລະ ຍົກລະດັບສະພາບແວດລ້ອມຂອງການລົງທຶນ ແລະ ສົ່ງເສີມພາກເອກະຊົນໃຫ້ເຂົ້າມາລົງທຶນໃນອຸດສະຫະກຳທີ່ບໍ່ແມ່ນຊັບພະຍາກອນທຳມະຊາດກໍ່ຕາມ ແຕ່ ສປປລາວ ຍັງຖືກຈັດໃນອັນດັບທີ່ຕ່ຳຫລາຍໃນການດຳເນີນທຸລະກິດ ໃນ 189 ປະເທດ, ສປປລາວຖືກຈັດຢູ່ອັນດັບທີ 149 (ອີງໃສ່ຜົນສຳຫລວດການດຳເນີນທຸລະກິດ ປີ 2015). ສິ່ງທ້າທາຍທີ່ສຸດແມ່ນສະພາບ ແລະ ບັນຍາກາດໃນການລົງທຶນ ແລະ ຄຸນນະພາບຂອງນັກລົງທຶນຍັງຕ່ຳ ເປັນຕົ້ນ ແມ່ນການໂອນຖ່າຍເທັກໂນໂລຍີຕ່າງໆ ແລະ ການສ້າງວຽກເຮັດງານທຳໃຫ້ປະຊາ ຊົນລາວຍັງໜ້ອຍ.

ການພັດທະນາຍັງມີຄວາມແຕກໂຕນກັນຫລາຍລະຫວ່າງເມືອງກັບເມືອງ, ແຂວງກັບແຂວງ, ພາກກັບພາກ ແລະ ລະຫວ່າງຄົນທຸກ ແລະ ຄົນຮັ່ງ ເຫັນໄດ້ຈາກການພັດທະນາທີ່ຍັງບໍ່ທັນກະຈາຍຢ່າງທົ່ວເຖິງ ໂດຍສະເພາະ ຜູ້ທີ່ດ້ອຍໂອ ກາດ ແລະ ຜູ້ທີ່ຢູ່ເຂດຫ່າງໄກສອກຫລີກ, ການພັດທະນາຕົວເມືອງເຫັນວ່າຂະຫຍາຍຕົວຢ່າງໄວ ແຕ່ການຄຸ້ມຄອງບໍລິ ຫານຍັງບໍ່ທັນສອດຄ່ອງກັບການຂະຫຍາຍຕົວ ເຊັ່ນ: ການຄຸ້ມຄອງຂີ້ເຫຍື້ອ, ການສັນຈອນ ແລະ ຈໍລະຈອນທີ່ປອດໄພ, ການເຄື່ອນຍ້າຍພົນລະເມືອງຈາກຊົນນະບົດສູ່ຕົວເມືອງ ແລະ ອື່ນໆ.

ມີຄວາມຈຳກັດທາງດ້ານຊັບພະຍາກອນມະນຸດ ແລະ ການພັດທະນາສີມືແຮງງານ ໂດຍສະເພາະແມ່ນ ຄວາມຮູ້ຄວາມສາມາດຂອງພະນັກງານລັດ ແລະ ເອກະຊົນ ຍັງບໍ່ທັນຕອບສະໜອງໃນເງື່ອນໄຂທີ່ປະເທດກຳລັງເຊື່ອມໂຍງເສດ ຖະກິດກັບພາກພື້ນ ແລະ ສາກົນ. ຄວາມສາມາດໃນການແຂ່ງຂັນຂອງພາກເອກະຊົນ ຍັງບໍ່ທັນສູງ. ຄຸນນະພາບຂອງການລົງທຶນໃສ່ການບໍລິການຂັ້ນພື້ນຖານທາງສັງຄົມ ເປັນຕົ້ນ ການຮັກສາສຸຂະພາບ, ສຸຂະອະນາໄມ, ໂພຊະນາການ, ນ້ຳສະ ອາດ, ການສຶກສາ ແລະ ການປະກັນສັງຄົມຍັງບໍ່ທັນສູງ.

ທຶນຮອນໃນການພັດທະນາມີຈຳກັດ ແລະ ໜີ້ສິນຂອງພາກລັດຍັງກວມອັດຕາສ່ວນສູງ ຊຶ່ງເປັນສິ່ງທ້າທາຍໜຶ່ງຂອງການຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກຕາມກົນໄກເສດຖະກິດຕະຫຼາດ. ນອກຈາກນັ້ນ, ຍັງເຫັນວ່າກົງ ຈັກການຈັດຕັ້ງຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ, ການຈັດຕັ້ງປະຕິບັດບັນດານິຕິກຳຕ່າງໆຍັງບໍ່ທັນເຂັ້ມງວດ. ປະກົດການຫຍໍ້ທໍ້ໃນສັງຄົມຍັງມີຢູ່, ການປ່ຽນແປງດິນຟ້າອາກາດ ຍັງຖືເປັນສິ່ງທ້າຍທາຍຫລັກຂອງການພັດທະນາ ເປັນຕົ້ນ ໄພແຫ້ງແລ້ງ, ນ້ຳຖ້ວມ, ການປ່ຽນແປງອຸນນະພູມ ແລະ ອື່ນໆ.

ສປປລາວ ຕ້ອງໄດ້ເອົາໃຈໃສ່ເຊື່ອມສານເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ທີ່ບໍ່ບັນລຸເຂົ້າໃນຂະບວນການພັດທະນາແບບຍືນຍົງ (SDGs) ຕາມວາລະການພັດທະນາຂອງສາກົນເພື່ອຈັດຕັ້ງປະຕິບັດໃນຕໍ່ໜ້າ.

## 1.3. ສະພາບດ້ານປະຊາກອນ

1) ປະຊາກອນຂອງ ສປປລາວ ແມ່ນຢູ່ໃນໄລຍະການຂະຫຍາຍຕົວທີ່ສູງ ຈຳນວນປະຊາກອນເພີ່ມຂຶ້ນຈາກ 5,6 ລ້ານຄົນໃນປີ 2005 ມາເປັນ 6,49 ລ້ານຄົນ ໃນປີ 2015. ອັດຕາການຂະຫຍາຍຕົວຂອງປະຊາກອນແບ່ງຕາມກຸ່ມອາຍຸ ມີຄວາມແຕກໂຕນກັນ ໂດຍສະເພາະປະຊາກອນໃນກຸ່ມອາຍຸ 5-14 ປີ ຄາດວ່າຈະຫລຸດລົງ 3,7% ແຕ່ຈຳນວນປະຊາກອນໃນໄວເຮັດວຽກ ຄາດວ່າຈະເພີ່ມຂຶ້ນ 10,6% ແລະ ຜູ້ສູງອາຍຸ ຈະເພີ່ມຂຶ້ນ 10,1%. ການປ່ຽນແປງໂຄງສ້າງອາຍຸຂອງປະຊາກອນ ເປັນ ຕົ້ນການເພີ່ມຂຶ້ນຂອງປະຊາກອນໜຸ່ມຈະຊ່ວຍໃຫ້ປະເທດເຮົາໄດ້ຮັບຜົນປະໂຫຍດທາງດ້ານປະຊາກອນຫລາຍຂຶ້ນ.

2) ສປປລາວ ຍັງຈະສືບຕໍ່ໄດ້ຮັບຜົນປະໂຫຍດຈາກການມີປະຊາກອນໜຸ່ມ ຊຶ່ງຖືເປັນກຳລັງແຮງຂອງການພັດທະນາ; ຕາມທ່າອ່ຽງເຫັນວ່າອັດຕາການຕາຍຂອງເດັກລຸ່ມ 5 ປີ ແມ່ນມີທ່າອ່ຽງຫຼຸດລົງ ຈາກ 79 ຄົນຕໍ່ ເດັກນ້ອຍເກີດມີຊີວິດ 1.000 ຄົນ (ໃນປີ 2010-2011) ແລະ ຄາດວ່າຈະສາມາດບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ທີ່ກຳນົດໄວ້ໄດ້ໃນລະ ດັບ 70 ຄົນຕໍ່ເດັກເກີດມີຊີວິດ 1.000 ຄົນ ໃນປີ 2015, ສ່ວນອັດຕາການເກີດກໍ່ມີທ່າອ່ຽງຫລຸດລົງເຊັ່ນກັນ ແຕ່ອັດຕາສ່ວນທີ່ລຸດລົງກໍ່ຍັງຕ້ອງ ໄດ້ເອົາ ໃຈໃສ່ຕື່ມ ແຕ່ກໍ່ມີຄວາມຄືບໜ້າພໍສົມຄວນ. ອັດຕາການເກີດລວມໃນລະຫວ່າງປີ 2008 ຫາ 2011 ແມ່ນ 3,2 ຊຶ່ງຍັງສູງກວ່າລະດັບທົດແທນ 50%.

3) ອີງຕາມໂຄງສ້າງທາງດ້ານອາຍຸປະຊາກອນ ໃນໄລຍະຜ່ານມາ ສະແດງໃຫ້ເຫັນວ່າອັດຕາການເກີດຍັງສູງຫຼາຍ ແລະ ຈະເຮັດໃຫ້ແຕ່ລະກຸ່ມອາຍຸມີຈຳນວນເພີ່ມຂຶ້ນ; ສິ່ງດັ່ງກ່າວຈະສົ່ງຜົນໃຫ້ຈຳນວນປະຊາກອນລວມຂະຫຍາຍຕົວສູງຂຶ້ນ. ໂຄງສ້າງອາຍຸຂອງປະຊາກອນທີ່ພວມປ່ຽນແປງນັ້ນ ຈະຊ່ວຍໃຫ້ໄດ້ຮັບ ຜົນປະໂຫຍດດ້ານປະຊາກອນ ຫຼາຍຂຶ້ນ, ຊຶ່ງສັດສ່ວນຂອງປະຊາກອນໃນໄວເຮັດວຽກຈະເພີ່ມຂຶ້ນ, ໃນຂະນະທີ່ ສັດສ່ວນຂອງຜູ້ທີ່ເອື່ອຍອີງຈະຫຼຸດລົງ. ໃນປີ 2015 ອັດຕາການເອື່ອຍອີງ ຈະຫຼຸດລົງມາເປັນ 0,62, ຊຶ່ງຈະຫຼຸດລົງມາເປັນ 0,51 ຮອດປີ 2030 ແລະ ຈະສືບຕໍ່ຫຼຸດລົງຕື່ມອີກ 0,43 ຈົນຮອດປີ 2045, ອັດຕາດັ່ງກ່າວຈະເລີ່ມເພີ່ມຂຶ້ນອີກຫຼັງປີ 2050. ແຕ່ເຖິງຢ່າງໃດກໍ່ຕາມ, ປະຊາກອນໃນກຸ່ມອາຍຸສູງຍັງບໍ່ທັນເປັນບັນ ຫາສຳລັບ ສປປ ລາວ ເນື່ອງຈາກສັດສ່ວນຂອງຜູ້ສູງອາຍຸມີພຽງ 3,8% ທຽບໃສ່ບັນດາປະເທດໃກ້ຄຽງແມ່ນຍັງຕໍ່າ ແຕ່ສັດສ່ວນດັ່ງກ່າວຈະເພີ່ມຂຶ້ນຢ່າງໄວວາພາຍຫຼັງປີ 2020. ຮອດປີ 2050 ອັດຕາສ່ວນປະຊາກອນຜູ້ສູງອາຍຸໃນ ສປປລາວ ຍັງຕໍ່າກວ່າຈຳນວນປະຊາກອນຜູ້ສູງອາຍຸຂອງປະເທດໄທໃນປະຈຸບັນ.

4) ຄວາມໜາແໜ້ນຂອງປະຊາກອນຢູ່ ສປປ ລາວ ຍັງຕໍ່າຫຼາຍ (ຕໍ່າທີ່ສຸດໃນອາຊຽນ), ຖືເປັນສິ່ງທີ່ດີຖ້າເບິ່ງໃນແງ່ຂອງພູມສັນຖານ ແຕ່ເນື້ອທີ່ສ່ວນໃຫຍ່ເປັນເຂດພູດອຍ ແລະ ບໍ່ສາມາດເຮັດການປູກຝັງໄດ້. ສະເລ່ຍແລ້ວປະເທດເຮົາມີດິນປູກຝັງເກືອບ 1,1 ຮຕ ຕໍ່ຄົວເຮືອນ ຫຼື ປະມານ 1,7 ຮຕ ຕໍ່ ຄົວເຮືອນທີ່ຢູ່ໃນເຂດຊົນນະບົດ ຊຶ່ງຈຳນວນປະຊາກອນທີ່ອາໄສໃນເຂດດັ່ງກ່າວຈະບໍ່ມີການປ່ຽນແປງຫຼາຍ ໂດຍສະເພາະ ປະຊາກອນທີ່ຢູ່ໃນຂະແໜງກະສິກຳຈະມີປະມານເທົ່າເດີມ ຍ້ອນມີແຮງງານທີ່ເຄື່ອນຍ້າຍເຂົ້າສູ່ຕົວເມືອງ.

## 1.4. ການພັດທະນາແບບຍືນຍົງ

ເ ປົ້າໝາຍການພັດທະນາແບບຍືນຍົງ (SDGs): ປະຈຸບັນ, ອົງການສະຫະປະຊາດໄດ້ກຳນົດນິຍາມກ່ຽວກັບແຜນກ ານພັດທະນາພາຍຫຼັງປີ 2015 ແລະ ໄດ້ຮັບຮອງຢ່າງເປັນທາງການໃນກອງປະຊຸມສະມັດຊາໃຫຍ່ອົງການສະຫະປະຊາຊາດໃ ນເດືອນ ກັນຍາ 2015 ທີ່ຜ່ານມາ, ທັງເປັນມື້ທີ່ເປັນຂີດໝາຍຂອງການສຳເລັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs). ຂັ້ນຕອນກ່ອນການຮັບຮອງແຜນການພັດທະນາພາຍຫຼັງປີ 2015 ແມ່ນໄດ້ດຳເນີນໂດຍມີປະເທດສະຊິກເປັນເຈົ້າການລະດົມການມີສ່ວນຮ່ວມຈາກກຸ່ມ ແລະ ອົງການຈັດຕັ້ງຂອງສັງຄົມຢ່າງກວ້າງຂວາງ. ຜ່ານມາກໍ່ໄດ້ເກັບກຳຂໍ້ມູນຢ່າງຫຼວງ ຫຼາຍເພື່ອເອົາເຂົ້າໃນແຜນພັດທະນານີ້ ຈຶ່ງກາຍເປັນເປົ້າໝາຍການພັດທະນາແບບຍືນຍົງ (SDGs) ນີ້ຂຶ້ນ. ໃນເປົ້າໝາຍ SDGs ປະກອບມີທັງໝົດ 17 ເປົ້າໝາຍ (ຂອງສາກົນ) ແຕ່ສຳລັບ ສປປລາວ ເປົ້າໝາຍ SDGs ແມ່ນເພີ່ມອີກຫນຶ່ງເປົ້າໝາຍເປັນເປົ້າໝາຍທີ 18 ຖືເປັນເປົ້າໝາຍການພັດທະນາທີ່ຍືນຍົງແຫ່ງຊາດ.

ລ າຍລະອຽດແຕ່ລະເປົ້າໝາຍຄື: (i) ຢຸດຕິຄວາມທຸກຍາກໃນທຸກຮູບແບບໃນທົ່ວທຸກເຂດ; (ii) ຢຸດຕິຄວາມອຶດ ຫິວ, ຮັບປະກັນສະບຽງອາຫານໃຫ້ພຽງພໍ, ປັບປຸງດ້ານໂພຊະນາການ ແລະ ສົ່ງເສີມກະສິກຳແບບຍືນຍົງ; (iii) ຮັບປະກັນໃຫ້ທຸກຄົນໃນທຸກເພດໄວມີສຸຂະພາບທີ່ເຂັ້ມແຂງ ແລະ ມີຊີວິດການເປັນຢູ່ທີ່ດີ; (iv) ຮັບປະກັນໃຫ້ທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບບົນພື້ນຖານຂອງຄວາມສົມດູນ ແລະ ເທົ່າທຽມກັນ ພ້ອມທັງສົ່ງເສີມໃຫ້ຕະຫຼອດຊີວິດອັນຍາວນານຂອງທຸກຄົນໄດ້ຮັບໂອກາດໃນກ ານສຶກສາ; (v) ສ້າງໃຫ້ມີຄວາມສະເໝີພາບຍິງ-ຊາຍ ແລະ ສົ່ງເສີມບົດບາດຂອງແມ່ຍິງ ແລະ ເດັກຍິງທຸກຄົນ; (vi) ຮັບປະກັນໃຫ້ທຸກຄົນມີນໍ້າໃຊ້ ແລະ ມີການຄຸ້ມຄອງນໍ້າ ແລະ ສຸຂະອະນາໄມແບບຍືນຍົງ; (vii) ຮັບປະກັນໃຫ້ມີການສະໜອງພະລັງງານຢ່າງສົມເຫດສົມຜົນ, ມີຄວາມແນ່ນອນ, ຍືນຍົງ ແລະ ທັນສະໄໝ ໃຫ້ແກ່ທຸກຄົນ; (viii) ສົ່ງເສີມການເຕີບໂຕຂອງເສດຖະກິດທີ່ຕໍ່ເນື່ອງ, ສົມດູນ ແລະ ຍືນຍົງ; ສົ່ງເສີມການຈ້າງງານເຕັມເວລາ, ມີຜະລິດຕະຜົນ ແລະ ເປັນອາຊີບທີ່ດີໃຫ້ແກ່ທຸກຄົນ; (ix) ກໍ່ສ້າງໂຄງລ່າງທີ່ທົນທານ, ສົ່ງເສີມການຫັນໄປສູ່ອຸດສາຫະກຳທີ່ສົມດູນ ແລະ ຍືນຍົງ ພ້ອມທັງປຸກລະດົມໃຫ້ມີວິວັດທະນາການອັນໃໝ່; (x) ຫຼຸດຜ່ອນຄວາມບໍ່ສະເໝີພາບພາຍໃນ ແລະ ລະຫວ່າງປະເທດ; (xi) ສ້າງຕົວເມືອງ ແລະ ທີ່ພັກອາໄສທີ່ສົມດູນ, ປອດໄພ, ທົນທານ ແລະ ຍືນຍົງ; (xii) ຮັບປະກັນໃຫ້ມີການຊົມໃຊ້ ແລະ ຮູບແບບຂອງການຜະລິດທີ່ຍືນຍົງ; (xiii) ຮີບຮ້ອນ

ປະຕິບັດການຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ຜົນກະທົບຂອງມັນ; (xiv) ສະຫງວນ ແລະ ນໍາໃຊ້ມະຫາສະໝຸດ, ທະເລ ແລະ ຊັບພະຍາກອນນໍ້າເຂົ້າໃນການພັດທະນາຢ່າງຍືນຍົງ; (xv) ປົກປ້ອງ, ເກັບຮັກສາ ແລະ ສົ່ງເສີມການນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງຍືນຍົງ, ມີການຄຸ້ມຄອງປ່າແບບຍືນຍົງ, ຕ້ານທຸກກິດຈະການທີ່ກໍ່ໃຫ້ເກີດໄພແຫ້ງແລ້ງ, ຢຸດຕິ ແລະ ແກ້ໄຂບັນຫາການເສື່ອມໂຊມຂອງດິນ ແລະ ການສູນເສຍຊີວະນາໆພັນ; (xvi) ສົ່ງເສີມສັງຄົມທີ່ມີຄວາມສະຫງົບ ແລະ ສົມດູນ ເພື່ອເອື້ອອໍານວຍໃຫ້ແກ່ການພັດທະນາແບບຍືນຍົງ, ທຸກຄົນມີສິດໄດ້ຮັບຄວາມຍຸຕິທໍາ ແລະ ສ້າງຄວາມເຂັ້ມ ແຂງໃຫ້ແກ່ສະຖາບັນກ່ຽວຂ້ອງໃຫ້ມີປະສິດຕະພາບ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ ແລະ ມີຮັບຜິດຊອບຮ່ວມກັນໃນທຸກລະດັບ; (xvii) ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດ ແລະ ຮັດແໜ້ນສາຍພົວພັນລະຫວ່າງປະເທດໃນທົ່ວໂລກເພື່ອບັນລຸໄດ້ການພັດທະນາແບບຍືນຍົງ ແລະ (xviii) ຫລຸດຜ່ອນຜົນກະທົບຂອງລະເບີດບໍ່ທັນແຕກໃນ ສປປລາວ.

## 1.5. ການຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ (LDCs)

ການຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ ແມ່ນຈຸດໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020). ເພື່ອບັນລຸໄດ້ບັນດາເງື່ອນໄຂໃນການຫຼຸດພົ້ນ, ມັນຮຽກຮ້ອງໃຫ້ຕ້ອງບັນລຸ 2 ໃນ 3 ເງື່ອນໄຂທີ່ອົງກ ານສະຫະປະຊາຊາດກໍານົດຂຶ້ນ: (i) ເງື່ອນໄຂທາງດ້ານລາຍຮັບ, ທີ່ອີງໃສ່ຄ່າສະເລ່ຍໃນໄລຍະສາມປີຂອງລວມຍອດລາຍໄດ້ແ ຫ່ງຊາດ (GNI) ຕໍ່ຫົວຄົນ. ໃນປີ 2015, ສປປ ລາວ ປະຕິບັດໄດ້ 99% ຂອງເງື່ອນໄຂຫລຸດພົ້ນ (ມາດຖານ 1,242 ໂດລາ, ສປປລາວ 1,232 ໂດລາ); (ii) ເງື່ອນທາງດ້ານຊັບພະຍາກອນມະນຸດ, ໂດຍອີງໃສ່ຕົວຊີ້ວັດທາງດ້ານໂພຊະນາການ, ສາທາລະນະສຸກ (ອັດຕາການຕາຍຂອງເດັກ), ອັດຕາການເຂົ້າຮຽນຊັ້ນມັດທະຍົມ ແລະ ອັດຕາການຮູ້ໜັງສືຂອງຜູ້ໃຫຍ່. ໃນປີ 2015, ສປປລາວບັນລຸໄດ້ 92% ຂອງຄາດໝາຍການຫຼຸດພົ້ນໃນດ້ານຊັບພະຍາກອນມະນຸດ (ສປປລາວ 60,8%, ມາດຖານສູງກວ່າ 66); (iii) ເງື່ອນ ໄຂທາງດ້ານຄວາມສ່ຽງທາງດ້ານເສດຖະກິດ, ຊຶ່ງອີງໃສ່ຕົວຊີ້ວັດກ່ຽວກັບຜົນກະທົບທາງດ້ານໄພພິບັດທາງທໍາມະຊາດ, ຄວາມສ່ຽງທາງດ້ານການຄ້າ, ຄວາມສ່ຽງຂອງປະຊາຊົນທີ່ອາໄສຢູ່ເຂດດິນຕໍ່າ, ຄວາມສ່ຽງທາງດ້ານເສດຖະກິດທີ່ອີງໃສ່ການຜະລິດທີ່ບໍ່ຫຼາກຫຼາຍ (ການຜະລິດ ແລະ ການສົ່ງອອກ), ຄວາມສ່ຽງທາງດ້ານໄລຍະທາງ ແລະ ປະເທດທີ່ມີເນື້ອທີ່ນ້ອຍ. ໃນປີ 2015, ສປປລາວປະຕິບັດໄດ້ 88% ຂອງຄາດໝາຍໃນເງື່ອນໄຂທາງດ້ານຄວາມສ່ຽງຂອງເສດຖະກິດ[13] (ສປປລາວ 36,2, ມາດຖານຕໍ່າກວ່າ 32).

ການສືບຕໍ່ໃຫ້ມີການພັດທະນາທີ່ຍືນຍົງ ໂດຍອີງໃສ່ໝາກຜົນທີ່ປະຕິບັດໄດ້ໃນໄລຍະຜ່ານມາ ຈະເປັນສິ່ງທີ່ຈໍາເປັນໃນການບັນລຸເງື່ອນໄຂທາງດ້ານລາຍໄດ້ແຫ່ງຊາດຕໍ່ຫົວຄົນ. ການຊຸກຍູ້ໃຫ້ມີການລົງທຶນໂດຍກົງຈາກຕ່າງປະເທດໃຫ້ຫຼາຍຂຶ້ນແລະມີຄຸນນະພາບສູງຂຶ້ນ ໂດຍສະເພາະໃນຂະແໜງຊັບພະຍາກອນທໍາມະຊາດນັ້ນ ຈະເປັນຕົວຂັບເຄື່ອນເສດຖະກິດໃຫ້ມີການເຕີບໂຕສູງຂຶ້ນໄດ້. ນ ະໂຍບາຍຊຸກຍູ້ຈາກລັດຖະບານເພື່ອສ້າງເສດຖະກິດໃຫ້ມີຄວາມຫຼາກຫຼາຍນອກຈາກການຜະລິດອຸດສາຫະກໍາທີ່ອີງ ໃສ່ ຫຼື ຂຸດຄົ້ນຊັບພະຍາກອນທໍາມະຊາດ ແມ່ນມີຄວາມສໍາຄັນຫຼາຍ. ດ້ວຍສາເຫດດັ່ງກ່າວ ຈຶ່ງມີຄວາມຈໍາເປັນທີ່ແຜນ 5 ປີ ຄັ້ງທີ VIII ຈະຕ້ອງເອົາໃຈໃສ່ເນັ້ນໜັກຕື່ມບັນດາຂະແໜງທີ່ບໍ່ແມ່ນຊັບພະຍາກອນທໍາມະຊາດ ແລະ ຊຸກຍູ້ສົ່ງເສີມພາກເອກະຊົນໃຫ້ມີການຂະຫຍາຍຕົວ ແລະ ເຂັ້ມແຂງຂຶ້ນຕື່ມ.

ກ ານສູ້ຊົນບັນລຸເປົ້າໝາຍ MDGs ພາຍໃນປີ 2015 ກໍ່ເປັນຄາດໝາຍໜຶ່ງຂອງລັດຖະບານ ແລະ ເປັນສ່ວນປະກອບອັນສໍາຄັນຂອງແຜນ 5 ປີ ຄັ້ງທີ VII ໃນການປະຕິບັດຕົວຈິງ, ເຖິງວ່າຈະມີການເພີ່ມງົບປະມານເຂົ້າໃນຂະແໜງ ສຶກສາທິການ ແລະ ກິລາ ແລະ ສາທາລະນະສຸກກໍ່ຕາມ ກໍ່ຍັງມີຄວາມຫຍຸ້ງຍາກຫຼາຍປະການໃນການບັນລຸເປົ້າໝາຍ 1 ໂດຍສະເພາະຄາດໝາຍກ່ຽວກັບໂພຊະນາການ, ເປົ້າໝາຍທີ 2 ແລະ 3 ກ່ຽວກັບອັດຕາການເຂົ້າຮຽນຊັ້ນມັດທະຍົມ ແລະ ຄວາມແຕກໂຕນທາງດ້ານເພດ ແລະ ອັດຕາການຮູ້ໜັງສືຂອງຜູ້ໃຫຍ່. ຢູ່ໃນການປະເມີນສະຖານະຂອງ ສປປ ລາວ ໃນການຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາໂດຍອົງການ UNCTAD ໄດ້ຊີ້ໃຫ້ເຫັນວ່າບັນຫາດ້ານໂພຊະນາການຂອງເດັກ ແລະ ເພດຍິງທີ່ຢູ່ໃນໄວຈະເລີນພັນນັ້ນແມ່ນມີຄວາມສໍາຄັນຫຼາຍເຊິ່ງຈະຕ້ອງໄດ້ເອົາໃຈໃສ່ເປັນພິເສດ.

ໃນເງື່ອນໄຂທີ່ສາມ, ຄວາມບອບບາງທາງດ້ານເສດຖະກິດຂອງ ສປປ ລາວ ຖືວ່າຢູ່ໃນລະດັບປານກາງ. ໃນໄລຍະຜ່ານມາໄດ້ສຸມໃສ່ສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດຢ່າງຫຼວງຫຼາຍ ລວມທັງການສ້າງສາຍພົວພັນທາງດ້ານການຄ້າກັບບັນດາປະເທດອ້ອມຂ້າງທີ່ເປັນຄູ່ການຄ້າ, ແຕ່ຍັງຂາດການເອົາໃຈໃສ່ພັດທະນາຂະແໜງທີ່ບໍ່ແມ່ນຊັບພະຍາກອນທໍາມະຊາດ ຊຶ່ງມັນເປັນສິ່ງທີ່ຈໍາເປັນ

13 UNCTAD 2012.

ແລະ ເປັນປັດໄຈໃນການຮັບປະກັນໃຫ້ເສດຖະກິດມີການພັດທະນາທີ່ສົມດູນ ແລະ ຫຼາກຫຼາຍ. ສະມັດຕະພາບຂອງການຜະລິດໃນຂະແໜງກະສິກຳຍັງຕ່ຳຊຶ່ງຮຽກຮ້ອງໃຫ້ມີການຍົກລະດັບໃຫ້ສູງຂຶ້ນເພື່ອປະ ກອບສ່ວນເຂົ້າໃນການຮັບປະກັນການເຕີບໂຕທີ່ສົມດູນ. ການພັດທະນາພາກເອກະຊົນ ແລະ ນະໂຍບາຍທາງດ້ານພື້ນຖານໂຄງລ່າງສຳລັບການພັດທະນາຂະແໜງທີ່ບໍ່ແມ່ນຊັບພະຍາກອນທຳມະຊາດເປັນສິ່ງທີ່ຈຳເປັນ ເພື່ອສ້າງວຽກເຮັດງານທຳ, ພັດທະນາເຂດຊົນນະບົດ ແລະ ຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ. ການຄຸ້ມຄອງສິ່ງແວດລ້ອມກໍ່ເປັນສິ່ງໜຶ່ງທີ່ສຳຄັນ ຊຶ່ງບໍ່ພຽງແຕ່ຈະຊ່ວຍແກ້ໄຂຜົນກະທົບຈາກການປ່ຽນແປງດິນຟ້າອາກາດ ແລະ ສ້າງຄວາມເຂັ້ມແຂງໃນການຮັບມືກັບຜົນກະ ທົບຈາກໄພພິບັດທຳມະຊາດເທົ່ານັ້ນ, ແຕ່ຍັງເປັນການຮັບປະກັນໃຫ້ສາມາດຮູ້ໄດ້ຜົນກະທົບທາງດ້ານສັງຄົມ ແລະ ສິ່ງແວດລ້ອມ (ເສດຖະກິດ) ຈາກການດຳເນີນກິດຈະກຳຕ່າງໆໃນຂະແໜງຊັບພະຍາກອນທຳມະຊາດອີກດ້ວຍ.

# 2. ວິໄສທັດຮອດປີ 2030, ຍຸດທະສາດຮອດປີ 2025 ແລະ ທິດທາງໜ້າທີ່ລວມ 2016-2020

## 2.1. ວິໄສທັດຮອດປີ 2030:

ໂດຍອີງໃສ່ສະພາບແວດລ້ອມສາກົນ, ຈຸດພິເສດ, ສະພາວະຄວາມເປັນຈິງ ແລະ ທິດທາງຍຸດທະສາດຂອງການພັດທະນາປະເທດ, ໄດ້ກຳນົດວິໄສທັດຂອງການພັດທະນາປະເທດຮອດປີ 2030 ໄວ້ດັ່ງນີ້:

ຮອດປີ 2030, ສປປ ລາວ ສ້າງໄດ້ບາດລ້ຽວໃໝ່ໃນການພັດທະນາໃຫ້ກາຍເປັນປະເທດກຳລັງພັດທະນາທີ່ມີລາຍຮັບປານກາງສູງຕາມທິດເສດຖະກິດ-ສັງຄົມພູມປັນຍາ, ສີຂຽວ ແລະ ຍືນຍົງ,[14] ລາຍໄດ້ແຫ່ງຊາດສະເລ່ຍຕໍ່ຫົວຄົນເພີ່ມຂຶ້ນຫຼາຍກວ່າ 4 ເທົ່າທຽບໃສ່ປີ 2015, ມີອຸດສາຫະກຳທີ່ເປັນເສົາຄ້ຳ ແລະ ມີໂຄງລ່າງພື້ນຖານເສດຖະກິດທີ່ເຂັ້ມແຂງ ສຳລັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນລະບົບຫຼາຍຂຶ້ນ; ສັງຄົມມີຄວາມສະຫງົບສຸກ, ສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ, ປະຊາຊົນບັນດາເຜົ່າຮັ່ງ ມີຜາສຸກ, ມີຄວາມສາມັກຄີເປັນປຶກແຜ່ນ, ຄວາມແຕກໂຕນກັນດ້ານການພັດທະນາລະຫວ່າງຕົວເມືອງ ແລະ ຊົນນະບົດ, ຊັ້ນຄົນຕ່າງໆໃນສັງຄົມຫຍັບໃກ້ເຂົ້າຫາກັນ, ຊັບພະຍາກອນມະນຸດ ໄດ້ຮັບການພັດທະນາມີຄຸນນະພາບດີຂຶ້ນ, ປະຊາຊົນສາມາດເຂົ້າເຖິງການບໍລິການສັງຄົມທີ່ມີຄຸນນະພາບຢ່າງທົ່ວເຖິງ, ສິດທິຂອງພົນລະເມືອງມີການຮັບປະກັນດ້ວຍການຄຸ້ມຄອງລັດຕາມກົດໝາຍທີ່ສັກສິດ, ລະບອບການປົກຄອງຕາມທິດ 3 ສ້າງມີຄວາມເຂັ້ມແຂງ; ສິ່ງແວດລ້ອມທຳມະຊາດ ໄດ້ຮັບການປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິພາບ ແລະ ຍືນຍົງ; ລະບົບການເມືອງການປົກຄອງມີສະຖຽນລະພາບ ແລະ ເຂັ້ມແຂງ; ເຊື່ອມໂຍງ ແລະ ເຊື່ອມຈອດຢ່າງກວ້າງຂວາງ ແລະ ເລິກເຊິ່ງກັບພາກພື້ນ ແລະ ສາກົນ.

## 2.2. ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025):

ຍຸດທະສາດພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ແມ່ນຍຸດທະສາດບຸກທະລຸ ເພື່ອພັດທະ ນາປະເທດໃຫ້ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2020 ແລະ ສືບຕໍ່ສູ້ຊົນຂ້າມຜ່ານຈາກສະຖານະພາບດັ່ງກ່າວ ໃຫ້ໄດ້ຢ່າງຂາດຕົວ ໃນປີ 2025. ຍຸດທະສາດການພັດທະນາເສດຖະກິດ-ສັງຄົມ ໄລຍະ 10 ປີ (2016-2025) ປະກອບມີ 7 ຍຸດທະສາດ ດັ່ງນີ້:

1. ຍຸດທະສາດການພັດທະນາເສດຖະກິດຕາມທິດທີ່ມີຄຸນນະພາບ, ສົມດຸນ, ຕໍ່ເນື່ອງ, ຍືນຍົງ ແລະ ເປັນສີຂຽວ.
2. ຍຸດທະສາດ ເພື່ອຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາ (LDC) ໃນປີ 2020 ແລະ ປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs).
3. ຍຸດທະສາດການພັດທະນາຊັບພະຍາກອນມະນຸດ.

14 ລວມຍອດລາຍຮັບປະຊາຊາດຕໍ່ຫົວຄົນ (GNI ຄິດໄລ່ແບບ Atlas) ຕ້ອງຢູ່ໃນລະຫວ່າງ 6.500-20.100 ໂດລາ ຕາມມາດຖານຂອງປະເທດລາຍຮັບປານກາງສູງ ຊຶ່ງຄາດຄະເນແລ້ວ ຮອດປີ 2030 GNI ຂອງປະເທດເຮົາສະເລ່ຍຕໍ່ຫົວຄົນຢ່າງໜ້ອຍຕ້ອງບັນລຸໄດ້8.230 ໂດລາສະຫະລັດ, ເພີ່ມຂຶ້ນປະມານ 4 ຫາ 5 ເທົ່າ GNI ໃນປີ 2015.

4. ຍຸດທະສາດການປົກປັກຮັກສາ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດແບບຍືນຍົງ, ໝັ້ນຄົງ, ມີປະສິດທິຜົນ ແລະ ໄປຕາມທິດຫັນເປັນສີຂຽວ.
5. ຍຸດທະສາດເພີ່ມທະວີຄວາມສັກສິດຂອງລັດ ໃນການປົກຄອງສັງຄົມດ້ວຍກົດໝາຍ.
6. ຍຸດທະສາດການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ.
7. ຍຸດທະສາດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ.

## 2.3. ທິດທາງ, ໜ້າທີ່ລວມຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020):

ລັດຖະບານ[15]ໄດ້ກໍານົດທິດທາງ ແລະ ໜ້າທີ່ລວມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງທີ VIII (2016-2020) ດັ່ງນີ້:

1. ເຮັດໃຫ້ເສດຖະກິດແຫ່ງຊາດຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງແລະມີຄຸນນະພາບ, ຮັບປະກັນສະຖຽນລະພາບດ້ານເສດຖະກິດມະຫາພາກ, ດຸ່ນດ່ຽງລະຫວ່າງການພັດທະນາ ແລະການສະໜອງທຶນ ໂດຍໃຫ້ສອດຄ່ອງກັບເງື່ອນໄຂໃໝ່ຕາມທິດຫັນເປັນອຸດສາຫະກໍາ ແລະທັນສະໄໝ.
2. ຮັບປະກັນການພັດທະນາສີຂຽວ ແລະ ຍືນຍົງ (SDGs) ໂດຍຖືການພັດທະນາເສດຖະກິດເປັນໃຈກາງ, ຮັບປະ ກັນໃຫ້ມີຄວາມສອດຄ່ອງກົມກຽວລະຫວ່າງການພັດທະນາເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມທັງເປັນເຈົ້າການຮັບມືກັບໄພພິບັດທໍາມະຊາດຢ່າງທັນການ ແລະ ຮັບປະກັນການພັດທະນາຊົນນະບົດຮອບດ້ານຕິດພັນສະໜິດແໜ້ນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນຕາມທິດ 3 ສ້າງ.
3. ພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບ ແລະ ກາຍເປັນປັດໄຈຕັດສິນການພັດທະນາປະເທດ: ສ້າງກໍາລັງແຮງງານໃຫ້ມີສີມື, ມີລະບຽບວິໄນ ແລະ ດຸໝັ່ນ, ອົດທົນ, ສ້າງໃຫ້ໄດ້ຊ່ຽວຊານສະເພາະດ້ານວິຊາການ ແລະ ເຕັກນິກ, ສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານລັດ, ວິສາຫະກິດ ແລະ ຜູ້ປະກອບການ ຍົກສູງຄວາມສາມາດໃນການແຂ່ງຂັນກັບພາກພື້ນ ແລະ ສາກົນ.
4. ຮັກສາສະຖຽນລະພາບທາງດ້ານການເມືອງ, ຮັບປະກັນຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ; ສ້າງສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທໍາ ແລະ ສີວິໄລ.
5. ສືບຕໍ່ເປີດກ້ວາງການຮ່ວມມືກັບສາກົນດ້ວຍຫຼາຍຮູບແບບຢ່າງເປັນເຈົ້າການຕາມທິດຕ່າງຝ່າຍຕ່າງມີຜົນປະ ໂຫຍດ; ສ້າງເງື່ອນໄຂທີ່ເອື້ອອໍານວຍໃຫ້ແກ່ການເຊື່ອມໂຍງ ແລະ ເຊື່ອມຈອດກັບພາກພື້ນ ແລະ ສາກົນ.

ບາງບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VII ແລະ ການປະເມີນປັດໄຈທີ່ກ່ຽວ ຂ້ອງຕ່າງໆທີ່ກ່າວມາຂ້າງເທິງ ລວມທັງຂໍ້ແນະນໍາທີ່ໄດ້ລະບຸຢູ່ໃນຄໍາສັ່ງຂອງ ນາຍົກລັດຖະມົນຕີເລກທີ 24/ນຍ ລົງວັນທີ 7/5/2014 ໄດ້ຊ່ວຍວິເຄາະບັນຫາ ແລະ ກາລະໂອກາດ ໃຫ້ ສປປ ລາວ ມີການພັດທະນາຢ່າງຕໍ່ເນື່ອງ. ອີງຕາມຂໍ້ມູນທີ່ມີໃນປະຈຸບັນຈາກແຫຼ່ງຕ່າງໆ, ສາມາດກໍານົດຈຸດໝາຍລວມ, ໝາກຜົນ (ຫຼື ເປົ້າໝາຍ) ທີ່ຄາດວ່າຈະໄດ້ຮັບໃນທ້າຍສະໄໝ ຂອງແຜນວຽກຈຸດສຸມ, ຄາດໝາຍ ແລະ ຕົວຊີ້ວັດ ດັ່ງຕໍ່ໄປນີ້:

15 ຄໍາສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 24/ນຍ ລົງວັນທີ 7/5/2014 ວ່າດ້ວຍການຄົ້ນຄວ້າວິໄສທັດຮອດປີ 2030, ຍຸດທະສາດພັດທະນາເສດຖະກິດ-ສັງຄົມໄລຍະ 10 ປີ (2016-2025) ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).

# 3. ຈຸດໝາຍລວມ, ໝາກຜົນ (ຫຼື ເປົ້າໝາຍ) ແລະ ແຜນວຽກຈຸດສຸມຂອງແຜນ 5 ປີ ຄັ້ງທີ VIII

## 3.1. ຈຸດໝາຍລວມ, ຕົວຊີ້ບອກ ແລະ ຄາດໝາຍຕົ້ນຕໍ

**ຈຸດໝາຍລວມ** ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແມ່ນ "ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໝັກແໜ້ນ; ສືບຕໍ່ແກ້ໄຂຄວາມ ທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໝັກແໜ້ນ ແລະ ທົ່ວເຖິງ, ພັດທະນາປະເທດໃຫ້ຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020 ໂດຍຊຸກຍູ້ການເຕີບໂຕຢ່າງຕໍ່ເນື່ອງ, ສົມດຸນ ແລະ ຍືນຍົງ; ມີການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາ ກອນທຳມະຊາດຢ່າງມີປະສິດທິຜົນສູງ; ສ້າງໃຫ້ໄດ້ການຫັນປ່ຽນຮູບແບບການພັດທະນາຕາມທິດເສີມຂະຫຍາຍທ່າແຮງທີ່ບົ່ມຊ້ອນ ແລະ ຂໍ້ໄດ້ປຽບຂອງປະເທດ, ເຂົ້າຮ່ວມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ"

**ຕາຕະລາງ 18: ຕົວຊີ້ບອກ ແລະ ຄາດໝາຍເພື່ອບັນລຸຈຸດໝາຍລວມ**

| ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 ໂດຍສັງເຂບ | ຂໍ້ມູນໃນປີຖານ | ບັນດາຕົວຊີ້ບອກ, ຄາດໝາຍ |
|---|---|---|
| **ຈຸດໝາຍລວມ**<br>ຮັບປະກັນສະຖຽນລະພາບທາງດ້ານການ-ເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໝັກແໜ້ນ; ສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໝັກແໜ້ນ ແລະ ທົ່ວເຖິງ, ພັດທະນາປະ-ເທດໃຫ້ຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020 ໂດຍຊຸກຍູ້ການເຕີບໂຕຢ່າງຕໍ່ເນື່ອງ, ສົມດຸນ ແລະ ຍືນຍົງ; ມີການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີປະສິດທິຜົນສູງ; ສ້າງໃຫ້ໄດ້ການຫັນປ່ຽນຮູບແບບການພັດທະນາຕາມທິດເສີມຂະຫຍາຍທ່າແຮງທີ່ບົ່ມຊ້ອນ ແລະ ຂໍ້ໄດ້ປຽບຂອງປະເທດ, ເຂົ້າຮ່ວມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນຢ່າງເປັນເຈົ້າການ. | • ຂໍ້ມູນພື້ນຖານ: ອັດຕາຄວາມທຸກຍາກຍັງເຫຼືອ 23.2% ໃນ 2012/13 (LECS V) | • ອັດຕາຄວາມທຸກຍາກ ໃຫ້ຫຼຸດລົງຕ່ຳກວ່າ 10% ໃນປີ 2020 |
| | • ຂໍ້ມູນພື້ນຖານ: ການປະເມີນຄວາມຄືບໜ້າຂອງອົງການ UNCTAD ໃນປີ 2015: ສປປ ລາວ ບັນລຸໄດ້ 99% ຂອງມາດຖານໃນການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ (ໃນສ່ວນຂອງລວມຍອດລາຍຮັບແຫ່ງຊາດຕໍ່ຫົວຄົນ (GNI)). | • ສູ້ຊົນໃຫ້ບັນລຸໄດ້ຕາມມາດຖານການຫຼຸດພົ້ນຈາກສະຖານະພາປະເທດດ້ອຍພັດທະນາ ດັ່ງທີ່ອົງການສະຫະປະຊາຊາດດ້ານການຄ້າ ແລະ ການພັດທະນາ (ອົງການ UNCTAD) ໄດ້ກຳນົດ.<br>• ສູ້ຊົນໃຫ້ລວມຍອດລາຍຮັບແຫ່ງຊາດຕໍ່ຫົວຄົນ (GNI) ສູງກວ່າ 1,574 ໂດລາສະຫະລັດ ໃນປີ 2018 ແລະ ເທົ່າກັບຫຼືສູງກວ່າ 1,810 ໂດລາສະຫະລັດໃນປີ 2021.<br>• ສຳລັບສປປລາວຮອດປີ 2020 ສູ້ຊົນໃຫ້ລວມຍອດຜະລິດຕະພັນພາຍໃນຕໍ່ຫົວຄົນ (GDP per capita) ໃຫ້ໄດ້ປະມານ 3.190 ໂດລາ ແລະ ລວມຍອດລາຍຮັບແຫ່ງຊາດຕໍ່ຫົວຄົນ (GNI) ຈະໄດ້ປະມານ 2.520 ໂດລາສະຫະລັດ. (ຖ້າຄິດໄລ່ຕາມວິທີ Atlast, ອັດຕາແລກປ່ຽນ 8.300 ກີບ/ໂດລາ) |

| ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 ໂດຍສັງເຂບ | ຂໍ້ມູນໃນປີຖານ | ບັນດາຕົວຊີ້ບອກ, ຄາດໝາຍ |
|---|---|---|
| | • ຂໍ້ມູນພື້ນຖານ: ອັດຕາການຂະຫຍາຍຕົວຂອງ GDP ສະເລ່ຍຕໍ່ປີໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VII ບັນລຸໃນລະດັບປະມານ 8% | • ການຂະຫຍາຍຕົວຂອງ GDP ສະເລ່ຍໃຫ້ໄດ້ຢ່າງໜ້ອຍ 7.5% ຕໍ່ປີຂຶ້ນໄປ,ໃນນັ້ນ:<br>– ກະສິກຳ ສະເລ່ຍ 3,2% ກວມເອົາ 19% ຂອງ GDP<br>– ອຸດສາຫະກຳ ສະເລ່ຍ 9,3% ກວມເອົາ 32% ຂອງ GDP<br>– ບໍລິການສະເລ່ຍ 8,9% ກວມເອົາ 41% ຂອງ GDP (ບໍ່ລວມພາສີຂາເຂົ້າ) |
| | • ຂໍ້ມູນພື້ນຖານ:<br>– ໃນໄລຍະ 5 ປີ ລາຍຮັບງົບປະ ມານທັງໝົດປະຕິບັດໄດ້ 99.549 ຕື້ກີບ ກວມ ເອົາ 24,51% ຂອງ GDP (ກຳນົດກອບລາຍຮັບທັງຫມົດໃນແຜນພັດທະນາເສດຖະກິດ-ສັງ ຄົມແຫ່ງຊາດຄັ້ງທີ VII: 19-21 % ຂອງ GDP)<br>– ໃນນັ້ນລາຍຮັບພາຍໃນ 76.648 ຕື້ກີບກວມເອົາ 18,87% ຂອງ GDP (ແຜນກຳນົດລະຫວ່າງ 16-18% ຂອງ GDP)<br>– ລາຍຈ່າຍງົບປະມານ ປະຕິບັດ 118.639 ຕື້ກີບ ກວມເອົາ 29,21% ຂອງ GDP (ແຜນກຳນົດ ລະຫວ່າງ 22-25% ຂອງ GDP)<br>– ອັດຕາການຂາດດຸນງົບປະມານ 19.090 ຕື້ກີບ ກວມເອົາ 4,7% ຂອງ GDP (ແຜນການ 5 ປີ ບໍ່ໃຫ້ກາຍ 5% ຂອງ GDP) | • ລາຍຮັບທັງໝົດ 19-20% ຂອງ GDP ໃນນັ້ນ: ລາຍຮັບພາຍໃນ 16-17% ຂອງ GDP<br>• ລາຍຈ່າຍ ບໍ່ເກີນ 25% ຂອງ GDP<br>• ຂາດດຸນ ບໍ່ເກີນ 5% ຂອງ GDP<br>• ການລົງທຶນລວມ 30% ຂອງ GDP (223 ພັນຕື້ກີບ) |
| | • ຂໍ້ມູນພື້ນຖານ: ຄ່າສຳປະສິດ Gini ທີ່ຄາດຄະເນ ສຳລັບ ສປປ ລາວ ຢູ່ໃນຕົວເມືອງ ແລະ ທ້ອງຖິ່ນ ໃນປີ 2013 (36.17, 37.51 ແລະ 32.52 ຕາມລຳດັບ) | • ປັບປຸງຄ່າສຳປະສິດ Gini ຂອງລາວ, ຢູ່ຕົວເມືອງ ແລະ ທ້ອງຖິ່ນ ໃນປີ 2020 ໃຫ້ສູງກວ່າຄ່າທີ່ຄາດຄະເນໃນປີ 2013 |
| | • ຂໍ້ມູນພື້ນຖານ: ອັດຕາການຂະຫຍາຍຕົວຂອງການສົ່ງອອກ ສະເລ່ຍ 11,91% ຕໍ່ປີ ໃນແຜນພັດທະນາເສດ ຖະກິດ-ສັງຄົມແຫ່ງຊາດຄັ້ງທີ VII | • ສູ້ຊົນໃຫ້ມູນຄ່າການສົ່ງອອກຂະຫຍາຍ ຕົວສະເລ່ຍ 15% ຕໍ່ປີ<br>• ເຮັດໃຫ້ການຂາດດຸນການຄ້າກັບຕ່າງປະເທດໃນແຕ່ລະປີຢູ່ໃນລະດັບທີ່ສາມາດຊຳລະສະສາງໄດ້. |

## 3.2. ໝາກຜົນ ຫຼື ເປົ້າໝາຍທີ່ຄາດວ່າຈະໄດ້ຮັບໃນທ້າຍໄລຍະແຜນການ 5 ປີ ຄັ້ງທີ VIII (2016-2020)

ເພື່ອບັນລຸຈຸດໝາຍລວມ, ຈະຕ້ອງສູ້ຊົນປະຕິບັດໝາກຜົນ ຫຼື ເປົ້າໝາຍໃຫຍ່ ທັງດ້ານເສດຖະກິດ, ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມໃຫ້ໄດ້. ສິ່ງທີ່ສຳຄັນທີ່ສຸດ ແມ່ນການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ເຊິ່ງຮຽກຮ້ອງໃຫ້ຕ້ອງສູ້ຊົນຍາດແຍ່ງຜົນສຳເລັດທາງດ້ານຄຸນນະພາບໃຫ້ໄດ້ທັງ ດ້ານລາຍໄດ້ ແລະ ດ້ານສິ່ງກີດຂວາງໃນການພັດທະນາແບບຍືນຍົງ.

ສູ້ຊົນບັນລຸເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ເຊັ່ນ: ລາຍໄດ້ແຫ່ງຊາດຕໍ່ຫົວຄົນ, ດັດສະນີດ້ານຊັບພະຍາກອນມະນຸດ (HAI) ແລະ ດັດສະນີຄວາມສ່ຽງດ້ານເສດຖະກິດ (EVI) ເຊິ່ງເປັນສິ່ງກີດ ຂວາງໃນການພັດທະນາແບບຍືນຍົງ. ສະນັ້ນ, ການບັນລຸໝາກຜົນ ຫຼື ເປົ້າໝາຍໃຫຍ່ ທີ່ກຳນົດຂຶ້ນບົນພື້ນຖານຂອງເງື່ອນໄຂການຫຼຸດພົ້ນດັ່ງກ່າວນີ້ ເປັນສິ່ງສຳຄັນໃນການຮັບປະກັນຜົນສຳເລັດຂອງແຜນພັດທະນາເສດຖະກິດ-ສັງຄົມ ກໍ່ຄືການບັນລຸຈຸດປະສົງໃນການຫຼຸດພົ້ນຈາກສະຖານະພາບຄວາມດ້ອຍພັດທະນາ.

ສະນັ້ນ, ຈຸດໝາຍລວມຂອງແຜນຈິ່ງກວມເອົາ ບັນດາບູລິມະສິດຕົ້ນຕໍຂອງການພັດທະນາ ລວມທັງຄາດໝາຍ ຂອງເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ທີ່ບໍ່ສາມາດບັນລຸໄດ້ ເຊິ່ງໄດ້ເຊື່ອມເຂົ້າໃນເປົ້າໝາຍການພັດທະນາແບບຍືນຍົງ (SDGs) ໃນນັ້ນ ລວມມີຄາດໝາຍທາງດ້ານການເຕີບໂຕທີ່ຍືນຍົງ, ສົມດູນ ແລະ ເພີ່ມທະວີການຄຸ້ມຄອງຊັບພະຍາກອນທຳມະຊາດ. ເຖິງວ່າຄາດໝາຍເຫຼົ່ານີ້ຈະນອນຢູ່ໃນເງື່ອນໄຂຂອງການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາຢ່າງຕາຍຕົວແລ້ວກໍຕາມ ແຕ່ຍັງຮຽກຮ້ອງໃຫ້ຂະຫຍາຍຄວາມຕື່ມຢູ່ໃນແຜນ 5 ປີ ຄັ້ງທີ VIII. ໂດຍຜ່ານການຈັດຕັ້ງປະຕິບັດ ບັນດາຈຸດໝາຍທິດທາງໜ້າທີ່ລວມ ແລະ ຄາດໝາຍສູ້ຊົນຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII, ຄາດຄະເນວ່າຈະສາມາດບັນລຸໄດ້ໝາກຜົນ ຫຼື ເປົ້າໝາຍໃຫຍ່ 3 ປະການດັ່ງລຸ່ມນີ້:

**ເປົ້າໝາຍ 1**: ເສດຖະກິດແຫ່ງຊາດມີການເຕີບໂຕຢ່າງຕໍ່ເນື່ອງ, ໝັ້ນທ່ຽງແລະສ້າງໄດ້ຄວາມສົມດຸນຂອງການເຕີບໂຕໂດຍຖືເອົາການພັດທະນາເສດຖະກິດເປັນໃຈກາງເພື່ອສຸມໃສ່ສ້າງພື້ນຖານເສດຖະກິດໃຫ້ເຂັ້ມແຂງ ແລະ ຫລຸດຜ່ອນຄວາມບອບບາງທາງດ້ານເສດຖະກິດ,

**ເປົ້າໝາຍ 2**: ພັດທະນາຊັບພະຍາກອນມະນຸດ ໃຫ້ກາຍເປັນປັດໄຈຕັດສິນການພັດທະນາ ໂດຍການຍົກລະດັບຄວາມສາມາດຂອງບຸກຄະລາກອນພາກລັດ ແລະ ກຳລັງແຮງງານເອກະຊົນໃຫ້ສູງຂຶ້ນ; ຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໄດ້ຮັບການແກ້ໄຂຢ່າງທົ່ວເຖິງ, ທຸກເຜົ່າຊົນ ແລະ ເພດໄວສາມາດເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ; ສົ່ງເສີມການປົກປັກຮັກສາ ແລະ ພັດທະນາເອກະລັກວັດທະນະທຳອັນດີງາມຂອງຊາດ. ຮັບປະກັນສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ມີຄວາມຍຸຕິທຳ ແລະ ໂປ່ງໃສ.

**ເປົ້າໝາຍ 3**: ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິຜົນຕາມທິດສີຂຽວ ແລະ ຍືນຍົງ; ກຽມພ້ອມຮັບມືກັບໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ຢ່າງມີປະສິດທິພາບພ້ອມທັງກໍ່ສ້າງຄືນສິ່ງທີ່ຖືກທຳລາຍ ແລະ ໄດ້ຮັບຜົນກະທົບຈາກໄພທຳມະຊາດໃຫ້ດີກວ່າເກົ່າ.

### ຕາຕະລາງ 19: ຕົວຊີ້ບອກ ແລະ ຄາດໝາຍສູ້ຊົນໃນລະດັບໝາກຜົນ

| ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 ໂດຍສັງເຂບ | ຂໍ້ມູນໃນປີຖານ | ບັນດາຕົວຊີ້ບອກ, ຄາດໝາຍ |
|---|---|---|
| **ໝາກຜົນ 1**: ເສດຖະກິດແຫ່ງຊາດມີການເຕີບໂຕຢ່າງຕໍ່ເນື່ອງ, ໝັ້ນທ່ຽງແລະສ້າງໄດ້ຄວາມສົມດຸນຂອງການເຕີບໂຕໂດຍຖືເອົາການພັດທະນາເສດຖະກິດເປັນໃຈກາງເພື່ອສຸມໃສ່ສ້າງພື້ນຖານເສດຖະກິດໃຫ້ເຂັ້ມແຂງ ແລະ ຫລຸດຜ່ອນຄວາມບອບບາງທາງດ້ານເສດຖະກິດ | • ຂໍ້ມູນໃນປີຖານ: ດັດຊະນີສຸດທ້າຍຂອງ EVI ໃນປີ 2015 = 36,2 (ສໍາລັບສປປ ລາວ). ຕາມຄາດໝາຍສາກົນແມ່ນ ຕໍ່າກວ່າ 32 | • ສູ້ຊົນຫຼຸດຜ່ອນດັດສະນີຄວາມບອບບາງທາງດ້ານເສດຖະກິດ (EVI) |

| ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 ໂດຍສັງເຂບ | ຂໍ້ມູນໃນປີຖານ | ບັນດາຕົວຊີ້ບອກ, ຄາດໝາຍ |
|---|---|---|
| | • ຂໍ້ມູນໃນປີຖານ: ດັດສະນີໝາຍຍ່ອຍຄວາມສ່ຽງດ້ານຂະໜາດຂອງປະຊາກອນ ໃນປີ 2015 = 41.4 | • ດັດຊະນີໝາຍຄວາມສ່ຽງດ້ານເສດຖະກິດປະຊາກອນ<br>• ດັດສະນີໝາຍຄວາມສ່ຽງດ້ານປະຊາກອນເພີ່ມຂຶ້ນສູງກວ່າ ປີ 2015 |
| | • ຂໍ້ມູນໃນປີຖານ: 2015 ດັດສະນີໝາຍຄວາມສ່ຽງດ້ານທີ່ຕັ້ງ= 58.8 | • ດັດຊະນີໝາຍຄວາມສ່ຽງດ້ານເສດຖະກິດດ້ານຄວາມຫ່າງໄກສອກຫຼີກ<br>• ດັດສະນີໝາຍຄວາມສ່ຽງດ້ານທີ່ຕັ້ງຫຼຸດລົງຕໍ່າກວ່າ ປີ 2015 |
| | • ຂໍ້ມູນໃນປີຖານ: 2015 ດັດສະນີໝາຍດ້ານການສົ່ງອອກທີ່ບໍ່ຫຼາກຫຼາຍ = 22.4 | • ດັດຊະນີໝາຍຄວາມສ່ຽງດ້ານເສດຖະກິດຄວາມສ່ຽງດ້ານການສົ່ງອອກທີ່ບໍ່ຫຼາກຫຼາຍ<br>• ດັດສະນີໝາຍຄວາມສ່ຽງດ້ານໂຄງສ້າງເສດຖະກິດ: ດັດຊະນີການສົ່ງອອກ<br>• ຄວາມບໍ່ຫຼາກຫຼາຍຂອງການສົ່ງອອກຫຼຸດລົງໃນປີ 2015 |
| | • ຂໍ້ມູນໃນປີຖານ: ດັດຊະນີໝາຍສ່ວນແບ່ງຂອງຂະແໜງກະສິກໍາ ແລະ ປ່າໄມ້ໃນປີ 2015= 41.9 | • ດັດຊະນີໝາຍຄວາມສ່ຽງດ້ານເສດ-ຖະກິດ ສ່ວນແບ່ງຂອງຂະແໜງກະສິກໍາ/ປ່າໄມ້<br>• ດັດສະນີໝາຍຄວາມສ່ຽງດ້ານໂຄງສ້າງເສດຖະກິດ: ອັດຕາສ່ວນຂອງຂະແໜງກະສິກໍາ ແລະ ປ່າໄມ້ຫຼຸດລົງຕໍ່າກວ່າ ປີ 2015 |
| | • ຂໍ້ມູນປີຖານ: ດັດສະນີໝາຍຄວາມສ່ຽງ - ຄວາມສ່ຽງດ້ານການຄ້າ ໃນປີ 2015= 24.2 | • ດັດຊະນີໝາຍຄວາມສ່ຽງດ້ານເສດຖະກິດຄວາມບໍ່ໝັ້ນຄົງດ້ານການສົ່ງອອກ (ດັດສະນີໝາຍຄວາມສ່ຽງ - ຄວາມສ່ຽງດ້ານການຄ້າ)<br>• ຄວາມບໍ່ໝັ້ນຄົງດ້ານການສົ່ງອອກ (ດັດສະນີໝາຍຄວາມສ່ຽງ - ຄວາມສ່ຽງດ້ານການຄ້າ) ໃຫ້ຫຼຸດລົງ ຕໍ່າກວ່າ ປີ 2015 |
| | • ຂໍ້ມູນໃນປີຖານ: ເງື່ອນໄຂດ້ານຄວາມສະດວກໃນການເຮັດທຸລະກິດໃນປີ 2015 (Ease of Doing Business by criteria) | • ຊັບພະຍາກອນດ້ານ ການລົງທຶນ ແລະ ການຄຸ້ມຄອງບໍລິຫານການເງິນ<br>• ດ້ານການລົງທຶນ ປະມານ 30% ຂອງ GDP (ປະມານ 223 ພັນຕື້ກີບ)<br>• ການລົງທຶນຈາກງົບປະມານຂອງລັດ 9-11% ຂອງການລົງທຶນລວມ.<br>• ການລົງທຶນຈາກເງິນກູ້ຢືມ ແລະ ເງິນຊ່ວຍເຫຼືອ 12-16% ຂອງການລົງທຶນລວມ.<br>• ການລົງທຶນພາກເອະຊົນພາຍໃນ ແລະຕ່າງປະເທດ 54-57% ຂອງການລົງທຶນລວມ.<br>• ແຫຼ່ງທຶນຈາກລະບົບການເງິນ-ເງິນຕາ 19-21% ຂອງການລົງທຶນ ລວມ.<br>• ແຜນການແລະແຜນງົບປະມານມີຄວາມສອດຄ່ອງກົມກຽວໂດຍການກໍານົດຂອບລາຍຈ່າຍໄລຍະກາງ (MTEF) |

| ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 ໂດຍສັງເຂບ | ຂໍ້ມູນໃນປີຖານ | ບັນດາຕົວຊີ້ບອກ, ຄາດໝາຍ |
|---|---|---|
| | | • ແຜນການແລະ ແຜນງົບປະມານການພັດທະນາມີຄວາມສອດຄ່ອງກົມກຽວໂດຍຈັດຕັ້ງປະຕິບັດແຜນງານການລົງທຶນຂອງລັດແບບຕໍ່ເນື່ອງ (PIP rolling program)<br>• ບັນດາກົດໝາຍ ແລະ ການວັດແທກການພັດທະນາຊັບພະຍາກອນມະນຸດ<br>• ຍົກລະດັບຄວາມສາມາດໃນການບໍລິຫານ/ຄວາມສາມາດໃນການແຂ່ງຂັນຂອງຜູ້ປະກອບການ<br>• ປັບປຸງການນຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ<br>• ຍົກລະດັບຄວາມສາມາດໃນການບໍລິຫານ/ຄວາມສາມາດໃນການແຂ່ງຂັນຂອງວິສາຫະກິດຂະໜາດນ້ອຍ/ວິສາຫະກິດຂະໜາດນ້ອຍ ແລະ ກາງ (SME) ຄວາມສະ ດວກໃນການດຳເນີນທຸລະກິດມີຫຼາຍຂຶ້ນ<br>• ຍົກສູງຜະລິດຕະພາບຂອງແຮງງານໂດຍຜ່ານການເຄື່ອນຍ້າຍແຮງງານຈາກຂະແໜງກະສິກຳໄປສູ່ຂະແໜງອຸດສາ-ຫະກຳທີ່ມີຜະລິດຕະພາບສູງກວ່າ ແລະ ຂະ ແໜງການບໍລິການ...<br>• ຍົກລະດັບການສຶກສາແລະ ການຝຶກອົບຮົມຂອງແຮງງານພາກລັດ/ເອກະຊົນ.<br>• ປັບປຸງການປົກຄອງຕົວເມືອງເພື່ອຍົກສູງບົດບາດດ້ານເສດຖະກິດຂອງຕົວເມືອງນ້ອຍ.<br>• ປັບປຸງການຮ່ວມມືລະດັບພາກພື້ນໃຫ້ດີຂຶ້ນ. |
| **ໝາກຜົນ 2**: ພັດທະນາຊັບພະຍາ ກອນມະນຸດ ໃຫ້ກາຍເປັນປັດໄຈຕັດ ສິນການພັດທະນາ ໂດຍການຍົກລະ ດັບຄວາມ-ສາມາດຂອງບຸກຄະລາກອນພາກລັດ ແລະ ກຳລັງແຮງງານເອກະຊົນໃຫ້ສູງຂຶ້ນ; ຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໄດ້ຮັບການແກ້ໄຂຢ່າງທົ່ວເຖິງ, ທຸກເຜົ່າຊົນ ແລະ ເພດໄວສາມາດເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ; ສົ່ງເສີມການປົກປັກຮັກສາ ແລະ ພັດທະນາເອກະລັກວັດທະນະທຳອັນດີງາມຂອງຊາດ. ຮັບປະກັນສະຖຽນລະພາບດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບ ຮຽບຮ້ອຍ, ມີຄວາມຍຸຕິທຳ ແລະ ໂປ່ງໃສ. | • ຂໍ້ມູນໃນປີຖານ: ດັດຊະນີຊັບສິນມະນຸດໃນປີ 2015 = 60.8 | • ດັດຊະນີຊັບສິນມະນຸດ (HAI) - ການຄິດໄລ່ດັດຊະນີສຸດທ້າຍ<br>ດັດຊະນີຊັບສິນມະນຸດບັນລຸໄດ້ 66 ຂຶ້ນໄປ ໃນປີ 2020. |
| | • ຂໍ້ມູນພື້ນຖານ: ດັດຊະນີໝາຍການຂາດສານອາຫານໃນປີ 2015 = 72<br>• ຂໍ້ມູນພື້ນຖານ: ອັດຕາສ່ວນຂອງເດັກນ້ອຍຕໍ່າກວ່າ 5 ປີ ທີ່ມີນ້ຳໜັກຕໍ່າກວ່າມາດຕະຖານໃນປີ 2011 : 38%<br>• ຂໍ້ມູນພື້ນຖານ: ອັດຕາສ່ວນຂອງເດັກນ້ອຍຕໍ່າກວ່າ 5 ປີ ທີ່ເຕ້ຍ ໃນປີ 2011= 27%<br>• ຂໍ້ມູນພື້ນຖານ: ອັດຕາສ່ວນຂອງເດັກນ້ອຍຕໍ່າກວ່າ 5 ປີ ທີ່ຂາດສານອາຫານຊໍາເຮື້ອ ໃນປີ 2011= 6% | • ອັດຕາສ່ວນຂອງປະຊາກອນທີ່ຂາດສານອາຫານ<br>• ການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ<br>• ເປົ້າໝາຍ MDG 1: ອັດຕາສ່ວນຂອງເດັກນ້ອຍ ຕໍ່າກວ່າ 5 ປີ ທີ່ມີ ນ້ຳໜັກຕໍ່າກວ່າມາດຕະຖານໃຫ້ໄດ້ຕໍ່າກວ່າ 20% ໃນປີ 2020<br>• ເປົ້າໝາຍ MDG 1: ອັດຕາສ່ວນຂອງເດັກນ້ອຍ ຕໍ່າກວ່າ 5 ປີ ທີ່ເຕ້ຍກວ່າມາດຕະຖານໃຫ້ໄດ້ 32% ໃນປີ 2020<br>• ອັດຕາສ່ວນຂອງເດັກນ້ອຍຕໍ່າກວ່າ 5 ປີ ທີ່ຂາດສານອາຫານຊໍາເຮື້ອ ໃນປີ 2020= 5% |

| ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 ໂດຍສັງເຂບ | ຂໍ້ມູນໃນປີຖານ | ບັນດາຕົວຊີ້ບອກ, ຄາດໝາຍ |
|---|---|---|
| | • ຂໍ້ມູນພື້ນຖານ: (ເປົ້າໝາຍ MDG5) ອັດຕາການຕາຍຂອງເດັກອ່ອນ (ຕໍ່ 1,000 ການເກີດ)ໃນປີ 2011 = 68<br>• ຂໍ້ມູນພື້ນຖານ: (ເປົ້າໝາຍ MDG 5ອັດຕາການຕາຍຂອງເດັກຕໍ່າກວ່າ 5 ປີ (ຕໍ່ 1,000 ການເກີດ) ໃນປີ 2011 =79<br>• ດັດຊະນີໝາຍອັດຕາການຕາຍຂອງເດັກຕໍ່າກວ່າ 5 ປີ ຈາກການປະເມີນ ໃນປີ 2015 = 62.8 | • ອັດຕາການຕາຍຂອງເດັກຕໍ່າກວ່າ 1 ປີ ໃຫ້ໄດ້ 30 ຄົນຕໍ່ການເກີດມີຊີວິດ 100 ຄົນ ໃນປີ 2020<br>• ອັດຕາການຕາຍຂອງເດັກຕໍ່າກວ່າ 5 ປີໃຫ້ຫຼຸດລົງເຫຼືອ 40 ຄົນ ຕໍ່ ການເກີດມີຊີວິດ 1,000 ໃນປີ 2020<br>ນິຍາມ: ອີງຕາມອົງການສະຫະປະຊາຊາດ- ໝາຍເຖິງໂອກາດທີ່ເດັກເກີດໃໝ່ 1 ຄົນ ຕໍ 1000 ຄົນ ຈະຕາຍກ່ອນມີອາຍຸຄົບ 5 ປີ.<br>ໝາຍເຫດ: ເຖິງວ່າ ສປປລາວ ຈະສາມາດບັນລຸຄາດໝາຍໄດ້ແຕ່ຍັງຖືວ່າຍັງລ່າຊ້າຫຼາຍເມື່ອທຽບກັບຕົວຊີ້ວັດໃນລະດັບພາກພື້ນ) |
| | • ຂໍ້ມູນປີຖານ: ດັດຊະນີໝາຍການເຂົ້າຮຽນລະດັບມັດທະຍົມ ໃນປີ 2015 = 45 | ອັດຕາການເຂົ້າຮຽນມັດທະຍົມ ລວມ:<br>• ນິຍາມ: (ອີງຕາມທະນາຄານໂລກ ແລະອົງການ UNESCO) ອັດຕາການເຂົ້າຮຽນມັດທະຍົມ ລວມແມ່ນຈຳນວນທັງໝົດນັກຮຽນທີ່ເຂົ້າຮຽນໃນລະດັບມັດ ທະຍົມ ໂດຍບໍ່ໄດ້ຄຳນຶງເຖິງເກນອາຍຸໃນການເຂົ້າຮຽນລະດັບນີ້ |
| | • ຂໍ້ມູນປີຖານ: ດັດຊະນີໝາຍການຮູ້ໜັງສື ໃນປີ 2015 = 63.6 | ອັດຕາການຮູ້ໜັງສື ຂອງຜູ້ໃຫຍ່:<br>• ນິຍາມ: (ອີງຕາມອົງການ UNESCO) ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ ໝາຍເຖິງເປີເຊັນຂອງປະຊາກອນທີ່ມີອາຍຸ 15 ປີຂຶ້ນໄປທີ່ຮູ້ໜັງສື ເຊິ່ງການຮູ້ໜັງສືໝາຍເຖິງການທີ່ສາມາດອ່ານ ແລະ ຂຽນສິ່ງໃດສິ່ງໜຶ່ງກ່ຽວກັບຊີວິດປະຈຳວັນຂອງເຂົາເຈົ້າດ້ວຍຄວາມເຂົ້າໃຈ. |
| | • ຂໍ້ມູນພື້ນຖານ: ເປົ້າໝາຍ MDG ອັດ ຕາການເຂົ້າຮຽນຊັ້ນປະຖົມສຸດທິໃນປີ 2014/15= 98,6%<br>• ຂໍ້ມູນພື້ນຖານ: ອັດຕາສ່ວນຂອງນັກຮຽນເຂົ້າຮຽນປໍ 1 ແລະ ຮຽນຈົບຮອດປໍ 5 ໃນປີ 2014/15= 78% | ໃຫ້ທຸກຄົນໄດ້ຮັບການສຶກສາຂັ້ນປະຖົມຢ່າງທົ່ວເຖິງ |
| | • ຂໍ້ມູນພື້ນຖານ: ເປົ້າໝາຍ MDG5 ອັດຕາການເກີດໂດຍຜູ້ຊ່ຽວຊານ ໃນປີ 2009=58% | ສຸຂະພາບຂອງແມ່<br>• ອັດຕາການຕາຍຂອງແມ່ (ຕໍ່ 1,000 ການເກີດ) ຫຼັງຈາກ ປີ 2015 ຄາດໝາຍໃຫ້ຫຼຸດລົງເຫຼືອ 160 ໃນປີ 2020<br>• ຂໍ້ມູນພື້ນຖານ: ເປົ້າໝາຍ MDG ອັດຕາການຕາຍຂອງແມ່ (ຕໍ່ 1,000 ການເກີດ): ໃນປີ 2011 =357<br>• ເປົ້າໝາຍ MDG 5 ອັດຕາການເກີດໂດຍຜູ້ຊ່ຽວຊານດ້ານການເກີດຄາດ-ໝາຍໃຫ້ມີໝໍຕຳແຍ 1 ຄົນ ຕໍ່ໜຶ່ງໝູ່ບ້ານ ໃນປີ 2020 |

| **ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 8 ໂດຍສັງເຂບ** | **ຂໍ້ມູນໃນປີຖານ** | **ບັນດາຕົວຊີ້ບອກ, ຄາດໝາຍ** |
|---|---|---|
| | • ຂໍ້ມູນພື້ນຖານ: ສໍາເລັດການສໍາຫລວດທີ່ບໍ່ແມ່ນດ້ານວິຊາການເພື່ອເກັບກໍາຂໍ້ມູນພື້ນຖານລູກລະເບີດບໍ່ທັນແຕກຕົກຄ້າງຢູ່ໃນ 9 ແຂວງທີ່ມີລູກລະເບີດບໍ່ທັນແຕກຕົກຄ້າງ ໃນປີ 2015 ມີທັງໝົດ 987 ບ້ານ<br>• ຂໍ້ມູນພື້ນຖານ: ຈໍານວນຜູ້ຖືກອຸບັດຕິເຫດຈາກລູກລະເບີດບໍ່ທັນແຕກ ໃນປີ 2014=45<br>• ຂໍ້ມູນພື້ນຖານ: ຊ່ວຍຜູ້ທີ່ຖືກເຄາະຮ້າຍຈາກລູກລະເບີບໍ່ທັນແຕກ ໃນປີ 2014 ໄດ້ 562 ຄົນ | • ການທໍາລາຍລະເບີດທີ່ບໍ່ທັນແຕກ ແລະການຊ່ວຍເຫຼືອຜູ້ເຄາະຮ້າຍ<br>• ສໍາເລັດການສໍາຫລວດທີ່ບໍ່ແມ່ນດ້ານວິຊາການເພື່ອເກັບກໍາຂໍ້ມູນພື້ນຖານລູກລະເບີດບໍ່ທັນແຕກຕົກຄ້າງຢູ່ໃນ 9 ແຂວງທີ່ມີລູກລະເບີດບໍ່ທັນແຕກຕົກຄ້າງໃນປີ 2020 ໃຫ້ໄດ້ 5.238 ບ້ານ<br>• ຈໍານວນຜູ້ຖືກອຸບັດຕິເຫດຈາກລູກລະເບີດບໍ່ທັນແຕກໃຫ້ຫລຸດລົງ<br>• ຊ່ວຍຜູ້ທີ່ຖືກເຄາະຮ້າຍຈາກລູກລະເບີດບໍ່ທັນແຕກໃຫ້ໄດ້ 1.500 ຄົນ ໃນປີ 2020 |
| | • ຂໍ້ມູນພື້ນຖານ: ອັດຕາຄວາມທຸກຍາກໃນ (i) ນະຄອນຫຼວງວຽງຈັນ, (ii) ຕົວເມືອງນະຄອນ ຫຼວງວຽງຈັນ ແລະ (iii) ຊົນນະບົດຂອງນະຄອນຫຼວງວຽງຈັນຄາດຄະເນໃນປີ 2013 (ໂດຍສູນສະຖິຕິແຫ່ງຊາດ)<br>• ຂໍ້ມູນພື້ນຖານ: ຊ່ອງວ່າງດ້ານຄວາມທຸກຍາກໃນ (i) ນະຄອນຫຼວງວຽງຈັນ, (ii) ຕົວເມືອງນະຄອນຫຼວງວຽງຈັນແລະ (iii) ຊົນນະບົດຂອງນະ-ຄອນ ຫຼວງວຽງຈັນຄາດຄະເນ ໃນປີ 2013 (ໂດຍສູນສະຖິຕິແຫ່ງຊາດ) | ຄວາມສະເໝີພາບ<br>• ອັດຕາຄວາມທຸກຍາກໃຫ້ຫຼຸດລົງໃນ (i) ນະຄອນຫຼວງວຽງຈັນ, (ii) ຕົວເມືອງນະຄອນຫຼວງວຽງຈັນ ແລະ (iii) ຊົນນະບົດຂອງນະຄອນຫຼວງວຽງຈັນ<br>• ຊ່ອງວ່າງຄວາມທຸກຍາກຫຼຸດລົງໃນ (i) ນະຄອນຫຼວງວຽງຈັນ, (ii) ຕົວເມືອງນະຄອນຫຼວງວຽງຈັນແລະ (iii) ຊົນນະບົດຂອງນະ ຄອນຫຼວງວຽງຈັນ.<br>• ຄວາມສະເໝີພາບໃນການພັດ ທະນາ.<br>• ຄວາມສົມດູນໃນການພັດທະນາລະຫວ່າງພາກພື້ນແລະທ້ອງຖິ່ນ.<br>• ຄວາມສະເໝີພາບຍິງຊາຍ. |
| **ໝາກຜົນ 3**: ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາ ແລະ ນໍາໃຊ້ຢ່າງມີປະສິດທິຜົນຕາມທິດສີຂຽວ ແລະ ຍືນຍົງ; ກຽມພ້ອມຮັບມືກັບໄພພິບັດທໍາມະຊາດ ແລະ ການປ່ຽນແປງດິນຟ້າອາກາດຢ່າງມີປະສິດທິພາບ ພ້ອມທັງກໍ່ສ້າງຄືນສິ່ງທີ່ຖືກທໍາລາຍ ແລະໄດ້ຮັບຜົນກະທົບຈາກໄພທໍາມະຊາດໃຫ້ດີກວ່າເກົ່າ | • ຂໍ້ມູນພື້ນຖານ: ດັດຊະນີຜູ້ເຄາະຮ້າຍຈາກໄພທໍາມະຊາດໃນປີ 2015= 88.9 | • ດັດຊະນີຄວາມອ່ອນໄຫວ (ຄວາມ-ບອບບາງ) ດ້ານເສດຖະກິດ-ຜູ້ເຄາະຮ້າຍຈາກໄພທໍາມະຊາດ (ໄພທໍາມະຊາດແບບກະທັນຫັນ-Shock Index)<br>• ຜູ້ເຄາະຮ້າຍຈາກໄພທໍາມະຊາດ (ໄພທໍາມະຊາດແບບກະທັນຫັນ-Shock Index)<br>• ດັດຊະນີຜູ້ເຄາະຮ້າຍຈາກໄພທໍາມະຊາດໃຫ້ຫຼຸດລົງຕໍ່າກວ່າດັດຊະນີໃນປີ 2015 |
| | • ຂໍ້ມູນພື້ນຖານ: ດັດຊະນີໝາຍຄວາມບໍ່ສະຖຽນລະພາບດ້ານການຜະລິດກະສິກໍາໃນປີ 2015 = 20.4 | • ດັດຊະນີຄວາມອ່ອນໄຫວ (ຄວາມ-ບອບບາງ) ດ້ານເສດຖະ ກິດຄວາມບໍ່ສະຖຽນລະພາບດ້ານການຜະລິດກະສິກໍາ (ໄພທໍາມະຊາດແບບກະທັນຫັນ-Shock Index)<br>• ຄວາມບໍ່ສະຖຽນລະພາບດ້ານການຜະລິດກະສິກໍາ (ໄພທໍາມະຊາດແບບກະທັນຫັນ-Shock Index)<br>- ດັດຊະນີໝາຍຄວາມບໍ່ສະຖຽນລະພາບດ້ານການຜະລິດກະສິກໍາຫຼຸດລົງຕໍ່າກວ່າ ປີ 2015 |

## 3.3. ແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ VIII (2016-2020

ເພື່ອບັນລຸໄດ້ຕາມຈຸດໝາຍ,ທິດທາງໜ້າທີ່ລວມ ແລະ ໝາກຜົນທີ່ຄາດວ່າຈະໄດ້ຮັບໃນທ້າຍໄລຍະຂອງແຜນການ 5 ປີ ຄັ້ງທີ VIII, ທຸກພາກສ່ວນໃນສັງຄົມຕ້ອງໄດ້ຮ່ວມກັນຈັດຕັ້ງປະຕິບັດບັນດາ ໜ້າວຽກຈຸດສຸມດັ່ງລຸ່ມນີ້:

**ເປົ້າໝາຍ 1**:

1) ຮັບປະກັນໃຫ້ເສດຖະກິດແຫ່ງຊາດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງໝັ້ນທ່ຽງ ແລະ ສົມດຸນ.
2) ຮັບປະກັນໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ.
3) ຮັບປະກັນຄວາມສອດຄ່ອງແລະກົມກຽວລະຫວ່າງຄວາມສາມາດສະໜອງແຫຼ່ງທຶນກັບການວາງແຜນພັດທະນາ.
4) ພັດທະນາເຂດແຄວ້ນແລະທ້ອງຖິ່ນຢ່າງມີຄວາມສອດຄ່ອງ ແລະ ສົມດູນ.
5) ພັດທະນາກຳລັງແຮງງານໃຫ້ມີຄຸນນະພາບ, ມີວິໄນ, ດຸໝັ່ນ ແລະ ອົດທົນ.
6) ພັດທະນາຜູ້ປະກອບການ, ສ້າງວິຊາການ ແລະ ຜູ້ຊຳນານງານ.
7) ເປີດກວ້າງການຮ່ວມມືແລະເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ເປົ້າໝາຍ 2**:

1) ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ໄດ້ຢ່າງໜັກແໜ້ນ ແລະ ກວ້າງ ຂວາງຕາມທິດ 3 ສ້າງ.
2) ການຄໍ້າປະກັນສະບຽງອາຫານແລະໂພຊະນາການ.
3) ທຸກຄົນເຂົ້າເຖິງການສຶກສາໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ.
4) ຮັບປະກັນການບໍລິການດ້ານສາທາລະນະສຸກໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ.
5) ການບໍລິການທາງດ້ານການປົກປ້ອງສັງຄົມໄດ້ຮັບການຍົກລະດັບ ແລະ ທຸກຄົນໄດ້ເຂົ້າເຖິງຢ່າງກວ້າງຂວາງ.
6) ພັດທະນາແລະປົກປັກຮັກສາຮີດຄອງປະເພນີແລະວັດທະນະທຳອັນດີງາມຂອງຊາດ.
7) ຮັບປະກັນສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ມີຄວາມຍຸຕິທຳ ແລະ ໂປ່ງໃສ.

**ເປົ້າໝາຍ 3**:

1) ການປົກປັກຮັກສາສະພາບແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ.
2) ກະກຽມຄວາມພ້ອມໃນການຮັບມືກັບຜົນກະທົບພ້ອມທັງຫລຸດຜ່ອນຄວາມສ່ຽງຈາກໄພພິບັດຕ່າງໆ ແລະ ການປ່ຽນແປງດິນຟ້າອາກາດ.
3) ຫຼຸດຜ່ອນຄວາມບໍ່ມີສະຖຽນລະພາບຂອງຜົນຜະລິດກະສິກຳທີ່ເກີດຈາກຜົນກະທົບຂອງໄພພິບັດ (ຮັບປະກັນໄດ້ທາງດ້ານຕະຫຼາດ ແລະ ລາຄາຜົນຜະລິດກະສິກຳ).

## 3.4. ເພື່ອບັນລຸເປົ້າໝາຍ 1 ຕ້ອງສຸມໃສ່ບັນດາແຜນວຽກຈຸດສຸມດັ່ງນີ້:

### 3.4.1. ແຜນວຽກຈຸດສຸມ 1: ຮັບປະກັນໃຫ້ເສດຖະກິດແຫ່ງຊາດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ,ໝັ້ນທ່ຽງ ແລະ ສົມດຸນ.

ຮັບປະກັນໃຫ້ເສດຖະກິດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສົມດູນ ໂດຍການຫັນປ່ຽນໂຄງປະກອບເສດຖະກິດຕາມທິດຫັນເປັນອຸດສາຫະກໍາ ແລະ ທັນສະໄໝ. ໃນປີ 2020 ສູ້ຊົນເຮັດໂຄງປະກອບເສດຖະກິດ ບັນລຸໄດ້ດັ່ງນີ້: ຂະແໜງກະສິກໍາ-ປ່າໄມ້ ກວມເອົາ 19%, ອຸດສາຫະກໍາ ກວມເອົາ 32% ແລະ ການບໍລິການ ກວມເອົາ 41% ຂອງລວມຍອດມູນຄ່າຜະລິດຕະພັນພາຍໃນ, ພາສີຂາເຂົ້າ ກວມເອົາ 8%, ໂດຍສຸມໃສ່ພັດທະນາຂະແໜງເສດຖະກິດທີ່ມີທ່າແຮງໄດ້ປຽບສູງ, ໃຫ້ຜົນຕອບແທນໄວ ແລະ ສ້າງມູນຄ່າເພີ່ມສູງໄປພ້ອມໆກັບການສົ່ງເສີມບັນດາຂະແໜງເສດຖະກິດທີ່ຂະຫຍາຍຕົວຊ້າ ແລະ ປານກາງແຕ່ມີລັກສະນະຍືນຍົງເປັນຕົ້ນ ການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ໃຫ້ມີຄວາມເຂັ້ມແຂງ ແລະ ຫຼາກຫຼາຍ, ສາມາດແຂ່ງຂັນ ແລະ ມີຄວາມຍືນຍົງ, ມີລະບົບການຜະລິດແບບເປັນຟາມຢ່າງຮອບດ້ານ ໂດຍຕິດພັນກັບການຕະຫຼາດ ແລະ ການປຸງແຕ່ງ. ສຸມໃສ່ການຈັດຕັ້ງປະຕິບັດບັນດານິຕິກໍາການລົງທຶນຢ່າງເຂັ້ມງວດ ແລະ ມີຄວາມໂປ່ງໃສ ແນໃສ່ດຶງດູດການລົງທຶນຈາກພາກເອກະຊົນໃຫ້ຫຼາຍຂຶ້ນ ແລະ ມີຄວາມຫຼາກຫຼາຍເພື່ອຮັບປະກັນໃຫ້ປະຊາຊົນບັນດາເຜົ່າໄດ້ຮັບຜົນປະໂຫຍດຈາກການລົງທຶນ, ການຫັນລັດວິສາຫະກິດ, ການຫັນຊັບສິນເປັນທຶນ, ການຄຸ້ມຄອງນໍາໃຊ້ທີ່ດິນ ແລະ ອື່ນໆຢ່າງທົ່ວເຖິງ.

#### ກ. ຂະແໜງອຸດສາຫະກໍາ:

» **ທິດທາງ**:

ພັດທະນາຂະແໜງອຸດສາຫະກໍາ ໃຫ້ມີການຂະຫຍາຍຕົວສູງທັງດ້ານປະລິມານ ແລະ ຄຸນນະພາບ, ມີຄວາມຫລາກຫລາຍໃນການຜະລິດເປັນສິນຄ້າ ແລະ ທັນສະໄໝຂຶ້ນ ເພື່ອສາມາດຕອບສະໜອງການບໍລິໂພກພາຍໃນ ແລະ ສົ່ງອອກ, ກາຍເປັນຂະແໜງການຫລັກໃນການຊຸກຍູ້ການເຕີບໂຕເສດຖະກິດທີ່ມີຄຸນນະພາບ ແລະ ຍືນຍົງ.

» **ຄາດໝາຍ**:

- ສູ້ຊົນໃຫ້ອັດຕາການຂະຫຍາຍຕົວຂອງຂະແໜງອຸດສາຫະກໍາປຸງແຕ່ງ ແລະ ຫັດຖະກໍາ, ການຄ້າ ແລະ ບໍລິການເພີ່ມຂຶ້ນສະເລ່ຍ 15% ຕໍ່ປີ.
- ສູ້ຊົນສ້າງໂຮງງານໄຟຟ້າພະລັງງານນໍ້າ ໃຫ້ສໍາເລັດຢ່າງໜ້ອຍ 15 ແຫ່ງ ເຊັ່ນ: ເຂື່ອນນໍ້າຂອງໄຊຍະບູລີ ມີກໍາລັງຕິດຕັ້ງ 1.285 ເມກາວັດ (2019), ເຊປຽນ-ເຊນໍ້ານ້ອຍ ມີກໍາລັງຕິດຕັ້ງ 410 ເມກາວັດ (2019), ເຊຂະໜານ 1 ມີກໍາລັງຕິດຕັ້ງ 322 ເມກາວັດ (2016), ນໍ້າອູ 5 ມີກໍາລັງຕິດຕັ້ງ 240 ເມກາວັດ (2017) ແລະ ອື່ນໆ.
- ອັດຕາມການຊົມໃຊ້ໄຟຟ້າ ໃຫ້ກວມເອົາ 95% ຂອງຄົວເຮືອນໃນທົ່ວປະເທດ.
- ສູ້ຊົນໃຫ້ມູນຄ່າການສົ່ງອອກຂະຫຍາຍຕົວສະເລ່ຍ 15% ຕໍ່ປີ ແລະ ເຮັດໃຫ້ການຂາດດຸນການຄ້າກັບຕ່າງປະເທດໃນແຕ່ລະປີຢູ່ໃນລະດັບທີ່ສາມາດຊໍາລະສະສາງໄດ້.
- ສູ້ຊົນໃຫ້ອັດຕາສ່ວນການຄ້າທັງໝົດຕໍ່ລວມຍອດຜະລິດຕະພັນພາຍໃນ (ອັດຕາການເປີດປະເທດ) ຢ່າງໜ້ອຍໃຫ້ໄດ້ຫຼາຍກວ່າ 70% ໃນປີ 2020.

» **ກິດຈະກໍາ ແລະ ໂຄງການ:**

- ຂະແໜງອຸດສາຫະກໍາປຸງແຕ່ງ:
  - ສຸມໃສ່ການຜະລິດສິນຄ້າໃຫ້ມີຄວາມຫຼາກຫຼາຍ, ມີການຂະຫຍາຍຕົວສູງທັງດ້ານປະລິມານ ແລະ ຄຸນນະ ພາບໃຫ້ເປັນຂະແໜງການທີ່ນໍາໃຊ້ຜົນຜະລິດກະສິກໍາ-ປ່າໄມ້ເຂົ້າໃນການຜະລິດ-ປຸງແຕ່ງຫລາຍຂຶ້ນ, ນໍາໃຊ້ການປຸງແຕ່ງທີ່ທັນສະໄໝ ແລະ ສ້າງສິນຄ້າທີ່ມີເອກະລັກ ທາງດ້ານພູມປັນຍາ ຂອງປະເທດ ຫຼື ມີລັກສະນະສະເພາະ, ປຸງແຕ່ງແຮ່ທາດຕ່າງໆໃຫ້ກາຍເປັນຜະລິດຕະພັນສໍາເລັດຮູບ ແລະ ເຄິ່ງສໍາເລັດຮູບ ເພື່ອໃຫ້ສາມາດສ້າງມູນຄ່າເພີ່ມໃຫ້ຜະລິດຕະພັນ ແລະ ກາຍເປັນຂະແໜງການພື້ນຖານຂອງເສດຖະກິດທີ່ໜັກແໜ້ນ ສາມາດສ້າງວຽກເຮັດງານທໍາໃຫ້ປະຊາຊົນ ແລະ ສາມາດແຂ່ງຂັນກັບຕ່າງປະເທດ. ຊຸກຍູ້ການລົງທຶນໃນອຸດສະຫະກໍາທີ່ມີທ່າແຮງ ເຊັ່ນ: ອຸດສະຫະກໍາຜະລິດ ຕະພັນ

ໄມ້ທີ່ມີຕະຫລາດຮອງຮັບ (ອາຊຽນ, ຈີນ, ເອີຣົບ, ອິດສະຕາລີ, ຍີ່ປຸ່ນ, ເກົາຫຼີ ແລະ ປະເທດອື່ນໆ), ຊຸກຍູ້ການລົງທຶນໃນອຸດສາຫະກຳຜະລິດ ແລະ ປະກອບຊິ້ນສ່ວນຕ່າງໆ ເປັນຕົ້ນ: ຍານພະຫະນະ, ເຄື່ອງໃຊ້ໄຟຟ້າ ແລະ ເອເລັກໂຕຣນິກ, ອຸປະກອນ ແລະ ເຄື່ອງຈັກ. ພ້ອມດຽວກັນນັ້ນ ຕ້ອງໄດ້ສຸມໃສ່ຈັດບູລິມະສິດອຸດສະຫະປຸງແຕ່ງທີ່ມີທ່າແຮງ ແລະ ມີເອກະລັກສະເພາະ ຂອງລາວ.

- ພັດທະນາເຂດນິຄົມອຸດສະຫະກຳເພື່ອດຶງດູດການລົງທຶນຕ່າງປະເທດເຂົ້າໃນອຸດສະຫະກຳປຸງແຕ່ງ ເປັນຕົ້ນ: ເຂດເສດຖະກິດພິເສດສະຫວັນ-ເຊໂນ, ນິຄົມອຸດສະຫະກຳ ແລະ ການຄ້າວຽງຈັນໂນນທອງ ຊຶ່ງເຂດເຫລົ່ານີ້ແມ່ນສຸມໃສ່ການລົງທຶນຂະໜາດກາງໃນການຜະລິດເຄື່ອງນຸ່ງຫົ່ມ, ຊິ້ນສ່ວນໄຟຟ້າ ແລະ ອຸປະກອນເອເລັກໂຕຣນິກ.

- ຂະແໜງຫັດຖະກຳ: ພັດທະນາ ແລະ ສົ່ງເສີມຜະລິດຕະພັນຫັດຖະກຳລາວທີ່ມີທ່າແຮງ, ທີ່ເປັນເອກະລັກສະເພາະ ແລະ ມີມູນເຊື້ອຂອງແຕ່ລະທ້ອງຖິ່ນຕາມຄວາມຕ້ອງການຂອງຕະຫລາດພາຍໃນ ແລະ ຕ່າງປະເທດ ໃຫ້ມີຄຸນນະພາບສູງ ເຊັ່ນ: ຕັດຫຍິບ, ການຍ້ອມສີທຳມະຊາດ ແລະ ການຕ່ຳຫູກ (ຝ້າຍ ແລະ ໄໝ), ການຈັກສານຫວາຍ ແລະ ໄມ້ປ່ອງ, ການແກະສະຫລັກໄມ້ ແລະ ເຄື່ອງປັ້ນດິນເຜົາ, ຜະລິດຕະພັນຫັດຖະກຳອື່ນໆ.

- ຂະແໜງພະລັງງານ: ສຸມໃສ່ພັດທະນາໄຟຟ້າພະລັງງານນ້ຳ, ໄຟຟ້າພະລັງງານຄວາມຮ້ອນ, ພະລັງງານຈາກແສງອາທິດ ແລະ ພະລັງງານຈາກພືດອຸດສາຫະກຳ (ໄບໂອດີເຊວ) ເພື່ອກາຍເປັນຂະແໜງການທີ່ສ້າງລາຍຮັບທີ່ມີຄວາມຍືນຍົງ, ຊຸກຍູ້ການຜະລິດ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ.

- ຂະແໜງບໍ່ແຮ່: ສຸມໃສ່ສົ່ງເສີມການປຸງແຕ່ງແຮ່ທາດໃຫ້ຫຼາຍຂຶ້ນ, ຫຼຸດຜ່ອນການສົ່ງອອກແຮ່ທາດ ທີ່ບໍ່ທັນໄດ້ປຸງແຕ່ງ ເພື່ອເພີ່ມມູນຄ່າໃຫ້ຜະລິດຕະພັນໃຫ້ສູງຂຶ້ນ ແລະ ນຳໃຊ້ຜົນປະໂຫຍດຈາກຂະແໜງດັ່ງກ່າວເຂົ້າໃນການພັດທະນາຂະແໜງສັງຄົມ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນກວ່າເກົ່າ.

- ການກໍ່ສ້າງ (ພື້ນຖານໂຄງລ່າງ): ສືບຕໍ່ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ເປັນຕົ້ນແມ່ນ:
  - ຍົກລະດັບບັນດາເສັ້ນທາງເຊື່ອມຕໍ່ກັບບັນດາປະເທດໃກ້ຄຽງ ເປັນຕົ້ນ ແລວທາງອະນຸພາກພື້ນແມ່ນ້ຳຂອງ (GMS), ເສັ້ນທາງດ່ວນອາຊຽນ (Asian Highway), ແລວເສດຖະກິດຕາເວັນອອກ-ຕົກ (East West Corridor), ແລວເສດຖະກິດເໜືອ-ໃຕ້ (North-South Economic Corridor).
  - ຍົກລະດັບບັນດາເສັ້ນທາງຕາມແຜນຍຸດທະສາດດ້ານໂລຈິດສະຕິກໃຫ້ສາມາດຮັບນ້ຳໜັກຂົນສົ່ງໄດ້ 11 ໂຕນຕໍ່ເພົາ ເພື່ອຮອງຮັບການຫັນເປັນອຸດສະຫະກຳ ແລະ ທັນສະໄໝ.
  - ກໍ້ສ້າງທາງລົດໄຟບໍ່ເຕັນ-ວຽງຈັນ ແລະ ສຳຫລວດອອກແບບທາງລົດໄຟສະຫວັນນະເຂດ-ລາວບາວ, ນະຄອນຫລວງວຽງຈັນທາທ່າແຂກ-ນາເພົ້າ ເພື່ອເຊື່ອມຕໍ່ກັບມູຢາ ແລະ ອື່ນໆ.
  - ສ້າງລະບົບບໍລິການ logistic ໃຫ້ຄົບວົງຈອນ ໂດຍສຸມໃສ່ 4 ແຫ່ງ: ນາເຕີຍ ແຂວງຫລວງນ້ຳທາ, ເຊໂນ ແຂວງສະຫວັນນະເຂດ, ທ່ານາແລ້ງ ນະຄອນຫຼວງວຽງຈັນ ແລະ ວັງເຕົ່າ, ເມືອງໂພນທອງ ແຂວງຈຳປາສັກ.
  - ສູ້ຊົນສຳຫລວດອອກແບບສະໜາມບິນສາກົນ ນະຄອນຫລວງ, ໄຊຍະບູລີ ແລະ ຈຳປາສັກແຫ່ງໃໝ່, ໃນນັ້ນ ສະໜາມບິນຢູ່ຈຳປາສັກໃຫ້ສາມາດນຳໃຊ້ຮ່ວມກັນ 3 ແຂວງຄື: ຈຳປາສັກ, ສາລະວັນ ແລະ ເຊກອງ ໃຫ້ສາ ມາດຮັບຮອງຜູ້ໂດຍສານໄດ້ 3 ລ້ານຄົນຕໍ່ປີ.

### » ນະໂຍບາຍ ແລະ ນິຕິກຳ:

- ສ້າງນະໂຍບາຍ, ນິຕິກຳ ແລະ ກົນໄກການບໍລິຫານຄຸ້ມຄອງ ແລະ ສິ່ງເອື້ອອຳນວຍໃຫ້ແກ່ການຂະຫຍາຍຕົວຂອງຂະແໜງອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳໃຫ້ຄົບຊຸດ ໂດຍລະດົມການມີສ່ວນຮ່ວມຈາກພາກສ່ວນເອກະຊົນ ເປັນຕົ້ນ ແມ່ນການສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານການລົງທຶນແບບມີສ່ວນຮ່ວມ ຂອງພາກລັດ ແລະ ເອກະຊົນ ເພື່ອສ້າງຄວາມໝັ້ນໃຈໃຫ້ແກ່ນັກລົງທຶນ.
- ກຳນົດນະໂຍບາຍສົ່ງເສີມອຸດສາຫະກຳທີ່ນຳໃຊ້ວັດຖຸດິບຈາກການຜົນຜະລິດກະສິກຳ-ປ່າໄມ້ ແລະ ຈາກແຮ່ທາດ ເພື່ອປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ, ນະໂຍບາຍດ້ານວິທະຍາສາດ ແລະ ເຕັກໂນໂລຍີອຸດສະຫະກຳ, ນະໂຍບາຍການພັດທະນາອຸດສະຫະກຳສີຂຽວ ແລະ ອື່ນໆ.

- ຊຸກຍູ້ການສ້າງສູນ/ສະຖາບັນຄົ້ນຄວ້າ ແລະ ພັດທະນາອຸດສາຫະກໍາ, ສູນສົ່ງເສີມວິຊາຊີບຫັດຖະກໍາ, ຫ້ອງທົດລອງ/ວິໄຈຜະລິດຕະພັນອຸດສະຫະກໍາ, ຫ້ອງທົດລອງ/ວິໄຈເຄມີ ແລະ ສິ່ງແວດລ້ອມອຸດສະຫະກໍາ ແລະ ອື່ນໆ. ສູນອອກແບບຜະລິດຕະພັນອຸດສາຫະກໍາ, ສົ່ງເສີມການຄົ້ນຄວ້າກໍານົດມາດຕະຖານຜະລິດຕະພັນອຸດສາຫະກໍາ, ການຖ່າຍທອດ ແລະ ນໍາໃຊ້ເຕັກໂນໂລຊີທັນສະໄໝເຂົ້າໃນອຸດສາຫະກໍາປຸງແຕ່ງ.
- ສົ່ງເສີມການບໍລິການໂລຈິສະຕິກ (logistic) ດ້ວຍການປັບປຸງລະບົບການເກັບພາສີ ແລະ ອາກອນໃຫ້ທັນສະໄໝ, ໂປ່ງໃສແລະສາມາດກວດສອບໄດ້ ຄຽງຄູ່ກັບການສ້າງສະພາບແວດລ້ອມທີ່ເອື້ອອໍານວຍເພື່ອດຶງດູດການລົງທຶນ.

## ຂ. ຂະແໜງການບໍລິການ:

### » ທິດທາງ:

ພັດທະນາຂະແໜງບໍລິການຕິດພັນສະໜິດແໜ້ນກັບການຜະລິດໃຫ້ສາມາດສ້າງລາຍຮັບສູງໃຫ້ແກ່ປະເທດ, ສ້າງວຽກເຮັດງານທໍາທີ່ຫຼາກຫຼາຍໃຫ້ປະຊາຊົນ ແລະ ກາຍເປັນຈຸດບໍລິການຂົນສົ່ງສິນຄ້າຜ່ານແດນໃນອະນຸພາກພື້ນ, ສະໜອງສິນຄ້າ ແລະ ການບໍລິການ ທີ່ຫລາກຫລາຍຕາມຄວາມຕ້ອງການຂອງຕະຫຼາດຢູ່ພາຍໃນ ແລະ ຕ່າງປະເທດ.

### » ຄາດໝາຍ:

- ສູ້ຊົນເຮັດໃຫ້ມູນຄ່າຈໍລະຈອນສິນຄ້າ ເພີ່ມຂຶ້ນສະເລ່ຍ 12% ຕໍ່ປີ, ທຸລະກິດຂາຍຍົກ-ຍ່ອຍ ເພີ່ມຂຶ້ນສະເລ່ຍ 9-10 % ຕໍ່ປີ.
- ຂະຫຍາຍ ຫຼື ສ້າງຕະຫລາດຊົນນະບົດເຂດຫ່າງໄກສອກຫຼີກໃຫ້ໄດ້ຫຼາຍ.
- ຮອດປີ 2020 ສູ້ຊົນໃຫ້ມີນັກທ່ອງທ່ຽວເຂົ້າມາຢ້ຽມຢາມ ສປປ ລາວ ປະມານ 6 ລ້ານເທື່ອຄົນ, ສະເລ່ຍໄລ ຍະການພັກເຊົາຂອງນັກທ່ອງທ່ຽວ 10 ວັນ/ຄົນ ແລະ ສ້າງລາຍຮັບຈາກການທ່ອງທ່ຽວ ໃຫ້ໄດ້ 953 ລ້ານໂດລາສະຫາລັດ.
- ສູ້ຊົນພັດທະນາຜະລິດຕະພັນການທ່ອງທ່ຽວ ໜຶ່ງເມືອງໜຶ່ງຜະລິດຕະພັນໃນທົ່ວປະເທດໃຫ້ສໍາເລັດໃນປີ 2020, ສ້າງແຜນພັດທະນາແຫລ່ງທ່ອງທ່ຽວໃຫ້ໄດ້ 25 ແຫ່ງ, ສໍາຫລວດ ແລະ ຈັດສັນແຫລ່ງທ່ອງທ່ຽວໃຫ້ໄດ້ 40 ແຫ່ງ, ປັບປຸງ ແລະ ພັດທະນາແຫລ່ງທ່ອງທ່ຽວທີ່ມີຈຸດເດັ່ນ ເພື່ອໃຫ້ຜົນຕອບແທນທາງດ້ານເສດຖະກິດໄວ ແລະ ມີຄຸນນະພາບໃຫ້ໄດ້ 10 ແຫ່ງ.
- ສູ້ຊົນສ້າງການເຊື່ອມໂຍງເວັບໄຊການທ່ອງທ່ຽວລາວເຂົ້າກັບເວັບໄຊ ASEAN, GMS, PATA, ຂະຫຍາຍຜູ້ຕ່າງໜ້າ/ຕົວແທນການທ່ອງທ່ຽວລາວຢູ່ຕ່າງປະເທດທີ່ເປັນຕະຫລາດຕົ້ນຕໍຂອງການທ່ອງທ່ຽວໃຫ້ໄດ້ 5 ແຫ່ງ.
- ສູ້ຊົນຈັດງານປີທ່ອງທ່ຽວລາວຄັ້ງທີ 3 ໃນປີ 2018 ເພື່ອໂຄສະນາການທ່ອງທ່ຽວລາວ ແລະ ສົ່ງເສີມການທ່ອງທ່ຽວພາຍໃນ ລາວທ່ຽວລາວ.
- ພັດທະນາລະບົບສະຖາບັນການເງິນໃຫ້ມີປະສິດທິຜົນສູງຂຶ້ນພ້ອມທັງຂະຫຍາຍການບໍລິການໃຫ້ທົ່ວເຖິງ

### » ກິດຈະກໍາ ແລະ ໂຄງການ:

- **ການທອ່ງທ່ຽວ:** ພັດທະນາການທ່ອງທ່ຽວບົນພື້ນຖານການນໍາໃຊ້ທ່າແຮງທາງດ້ານທໍາມະຊາດ, ວັດທະນະທໍາ ແລະ ມູນເຊື້ອປະຫວັດສາດ ໃຫ້ມີປະສິດທິຜົນສູງ ແລະ ມີຄວາມຍືນຍົງ ໂດຍການນໍາໃຊ້ກໍາລັງແຮງຂອງສັງຄົມ ແລະ ການມີສ່ວນຮ່ວມປະຊາຊົນ; ສ້າງໃຫ້ການທ່ອງທ່ຽວເປັນລະບົບຄົບວົງຈອນ ແລະ ມີການເຊື່ອມໂຍງກັນຢູ່ພາຍໃນປະເທດ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ; ສ້າງບຸກຄະລະກອນການນໍາທ່ຽວໃຫ້ພຽງພໍ ແລະ ມີຄຸນນະພາບສູງຂຶ້ນ; ຄຸ້ມຄອງລາຄາການບໍລິການອຸດສະຫະກໍາທ່ອງທ່ຽວໃຫ້ສົມເຫດສົມຜົນ; ພັດທະນາການທ່ອງທ່ຽວໃຫ້ກາຍເປັນຂະແໜງສ້າງລາຍຮັບນໍາໜ້າເຂົ້າສູ່ປະເທດ ໂດຍການສຸມໃສ່ດຶງດູດນັກທ່ອງທ່ຽວທີ່ມາພັກຢູ່ ສປປ ລາວ ຫຼາຍວັນ ແລະ ມີການໃຊ້ຈ່າຍຫຼາຍຂຶ້ນ ເພື່ອສ້າງວຽກເຮັດງານທໍາ ແລະ ລາຍໄດ້ໃຫ້ແກ່ປະຊາຊົນໃນທ້ອງຖິ່ນ.
- **ການຄ້າຂາຍຍົກ-ຂາຍຍ່ອຍ:** ສະໜອງສິນຄ້າໃຫ້ສັງຄົມຢ່າງເປັນປົກກະຕິ ແລະ ສອດຄ່ອງກັບຄວາມຕ້ອງ ການຂອງຕະຫຼາດ, ເຮັດໃຫ້ປະຊາຊົນສາມາດເຂົ້າເຖິງສິນຄ້າ ໄດ້ຢ່າງສະດວກ; ສ້າງ ແລະ ປັບປຸງຕາໜ່າງຈໍາໜ່າຍສິນຄ້າໃຫ້ເພີ່ມຂຶ້ນ ທັງມີຄວາມທັນສະໄໝ ແລະ ຄົບວົງຈອນ ເພື່ອດຶງດູດໃຫ້ຄົນມາຊື້ ແລະ ໃຊ້ຈ່າຍຢູ່ພາຍໃນປະເທດ.

- **ການບໍລິການໂລຈິສະຕິກ (Logistic):** ສືບຕໍ່ພັດທະນາລະບົບການຂົນສົ່ງສິນຄ້າໃຫ້ມີຄຸນນະພາບ, ມີຄວາມສະດວກ ແລະ ວ່ອງໄວ ເພື່ອກາຍເປັນສູນກາງໃນກິດຈະການບໍລິການຜ່ານແດນຂອງອະນຸພາກພື້ນ, ປັບປຸງ ແລະ ກໍ່ສ້າງເສັ້ນທາງໃຫ້ໄດ້ລະດັບມາດຕະຖານ ເພື່ອຮັບປະກັນໃນການບໍລິການຂົນສົ່ງສິນຄ້າ ແລະ ມີການເຊື່ອມຈອດກັບປະເທດໃກ້ຄຽງ; ສ້າງສິ່ງອຳນວຍຄວາມສະດວກຕາມເສັ້ນທາງ ເຊັ່ນ: ຈຸດພັກລົດ, ສາງສິນຄ້າ, ສະຖານີລົດ ແລະສ້າງສູນເຕົ້າໂຮມ ແລະ ແຈກຢາຍສິນຄ້າ (Logistics Park) 4 ແຫ່ງຄື: ນາເຕີຍ, ສະຫວັນນະເຂດ, ນະຄອນຫຼວງວຽງຈັນ ແລະ ຈຳປາສັກ; ປັບປຸງດ່ານເຂົ້າ-ອອກ ຕາມເສັ້ນທາງບໍລິການຜ່ານຊາຍແດນ ໃຫ້ໄດ້ມາດຕະຖານສາກົນທີ່ສາມາດຮອງຮັບການເຮັດບໍລິການຜ່ານໃຫ້ມີຄວາມສະດວກ ແລະ ວ່ອງໄວ.
- **ການເງິນ-ການທະນາຄານ:** ຍົກສູງປະສິດທິພາບຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນໃຫ້ສາມາດດຳເນີນທຸລະກຳທາງດ້ານການເງິນຢ່າງມີຄວາມສະດວກ, ວ່ອງໄວ ເພື່ອເປັນການຊຸກຍູ້ສົ່ງເສີມການພັດທະນາເສດຖະກິດ-ສັງຄົມໃຫ້ມີໝາກຜົນສູງຂຶ້ນ ແລະ ໃຫ້ໄດ້ຕາມມາດຕະຖານຂອງພາກພື້ນ ແລະ ສາກົນ

» **ນະໂຍບາຍ ແລະ ນິຕິກຳ**:

- ສົ່ງເສີມການລົງທຶນຂອງພາກລັດ ແລະ ພາກທຸລະກິດ ເຂົ້າໃນການພັດທະນາຜະລິດຕະພັນການທ່ອງທ່ຽວຢ່າງມີຈຸດສຸມ ແລະ ຄົບວົງຈອນ.
- ເອົາໃຈໃສ່ປັບປຸງແຫຼ່ງທ່ອງທ່ຽວທີ່ມີການບໍລິການແລ້ວໃຫ້ມີຄຸນນະພາບສູງຂຶ້ນ. ຊຸກຍູ້ໃຫ້ທຸກແຂວງໃນທົ່ວປະເທດດຳເນີນການສຳຫຼວດ-ຈັດສັນ ແລະ ວາງແຜນການໃນການພັດທະນາແຫຼ່ງທ່ອງທ່ຽວໃນແຂວງຂອງຕົນໃຫ້ສຳເລັດສອດຄ່ອງກັບທິດພັດທະນາແຫຼ່ງທ່ອງທ່ຽວແຫ່ງຊາດ ເພື່ອເປັນທາງເລືອກໃນການລົງທຶນຂອງລັດ ແລະ ເອກະຊົນ.
- ສຸມໃສ່ພັດທະນາ ແລະ ຟື້ນຟູ ສິ່ງອຳນວຍຄວາມສະດວກໃນແຫຼ່ງທ່ອງທ່ຽວໃຫ້ໄດ້ມາດຕະຖານສາກົນ ແລະ ມີຄວາມເປັນເອກະລັກທ້ອງຖິ່ນ.
- ເປີດກ້ວາງ ແລະ ສົ່ງເສີມການລົງທຶນຈາກນັກລົງທຶນພາຍໃນ ແລະ ຕ່າງປະເທດໃນຂະແໜງການທ່ອງທ່ຽວໃຫ້ຫຼາຍຂຶ້ນ.
- ຕິດຕາມຊຸກຍູ້ໃຫ້ບັນດາຫົວໜ່ວຍທຸລະກິດຕ່າງໆໃຫ້ປະກອບສ່ວນການເສຍພັນທະເຂົ້າກອງທຶນ ເພື່ອພັດ ທະນາ ແລະ ສົ່ງເສີມການທ່ອງທ່ຽວຢ່າງເປັນປົກກະຕິ.
- ຊຸກຍູ້ ແລະ ສົ່ງເສີມໃຫ້ຂະແໜງການປົ່ນອ້ອມການທ່ອງທ່ຽວໃຫ້ປະກອບສ່ວນ ແລະ ມີສ່ວນຮ່ວມ ຢ່າງຕັ້ງໜ້າ ໂດຍໃຫ້ເຫັນຄວາມສຳຄັນ ແລະ ໃຫ້ການຮ່ວມມືໃນການພັດທະນາ ແລະ ສົ່ງເສີມການທ່ອງທ່ຽວ.
- ສົ່ງເສີມໃຫ້ມີທູດການທ່ອງທ່ຽວ ແລະ ຜູ້ຕາງໜ້າການທ່ອງທ່ຽວລາວປະຈຳຢູ່ບັນດາປະເທດທີ່ເປັນເປົ້າໝາຍສຳລັບການທ່ອງທ່ຽວລາວ ເພື່ອເຮັດວຽກໂຄສະນາ ແລະ ສົ່ງເສີມການທ່ອງທ່ຽວລາວ.
- ສ້າງຈິດສຳນຶກໃຫ້ປະຊາຊົນລາວ ໃຫ້ມີການອະນຸລັກປົກປັກຮັກສາວັດທະນະທຳ ແລະ ຮີດຄອງປະເພນີທີ່ເອກອ້າງທະນົງໃຈຂອງຕົນ.
- ສົ່ງເສີມໃຫ້ອຳນາດການປົກຄອງທ້ອງຖິ່ນຈັດງານ ແລະ ມີກິດຈະກຳການທ່ອງທ່ຽວຂອງຕົນ ເປັນຕົ້ນ: ງານວັດທະນະທຳຊົນເຜົ່າ, ງານບຸນປະເພນີປະຈຳທ້ອງຖິ່ນ ແລະ ງານບຸນທີ່ສຳຄັນອື່ນໆທີ່ສື່ເຖິງເອກະລັກວັດທະ ນະທຳ, ວິຖີການດຳລົງຊີວິດຂອງທ້ອງຖິ່ນຕົນ ເພື່ອເຮັດໃຫ້ຄົນລາວ ແລະ ຄົນຕ່າງປະເທດ ໄດ້ຮູ້ຈັກ ແລະ ກໍ່ໃຫ້ເກີດແນວຄວາມຄິດຢາກເດີນທາງທ່ອງທ່ຽວຢ້ຽມຢາມພູມລຳເນົາຕ່າງໆໃນ ສປປ ລາວ.
- ປະຕິບັດການຄຸ້ມຄອງລາຄາສິນຄ້າ ແລະ ການບໍລິການໃນທ້ອງຕະຫລາດໃຫ້ມີສະຖຽນລະພາບ, ປົກປ້ອງຜູ້ຊົມໃຊ້ໂດຍການຕິດສະຫຼາກໃສ່ສິນຄ້າກ່ຽວກັບຄຸນລັກສະນະຂອງສິນຄ້າ, ລາຄາ ແລະ ລາຍລະອຽດກ່ຽວກັບການນຳໃຊ້; ສຸມໃສ່ປັບປຸງກົນໄກການຄຸ້ມຄອງຕະຫຼາດສິນຄ້າ ແລະ ລາຄາໃຫ້ຢູ່ໃນທ່ານຸກຢ່າງຈິງຈັງ ແລະ ສອດຄ່ອງກັບລະບົບເສດຖະກິດຕະຫຼາດ.
- ເພີ່ມທະວີການພັດທະນາເສດຖະກິດໃນເຂດຕົວເມືອງນ້ອຍ ແລະ ພັດທະນາການບໍລິການໃນເຂດເທດສະບານເພື່ອສ້າງໂອກາດໃນການຈ້າງງານໃນເວລາທີ່ບໍ່ໄດ້ທຳການຜະລິດກະສິກຳ.

### ຄ. ຂະແໜງການກະສິກຳ-ປ່າໄມ້

» **ທິດທາງ**:

ພັດທະນາກະສິກຳ-ປ່າໄມ້ ໃຫ້ມີຄວາມໝັ້ນຄົງ ແລະ ຍືນຍົງ. ສືບຕໍ່ຈັດສັນທີ່ດິນກະສິກຳ ແລະ ເນື້ອທີ່ການຜະ ລິດໃຫ້ພຽງພໍ ເພື່ອສ້າງຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການຜະລິດເປັນສິນຄ້າ; ເສີມຂະຫຍາຍການຜະລິດກະສິກຳທີ່ມີທ່າແຮງຂອງແຕ່ລະທ້ອງຖິ່ນໂດຍເນັ້ນໃສ່ການຜະລິດກະສິກຳສະອາດ, ກະສິກຳປອດສານພິດ ທີ່ມີມູນຄ່າສູງ ແລະ ກະເສດສຸມທີ່ທັນສະໄໝ ແລະ ມີຄຸນນະພາບສູງ; ປັບປຸງການຜະລິດຂອງຊາວກະສິກອນດ້ວຍການສ້າງເປັນຟາມ, ກຸ່ມການຜະລິດ, ວິສາຫະກິດ ແລະ ຄອບຄົວຕົວແບບ ພ້ອມທັງ ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນການຜະລິດ ເພື່ອຮັບປະກັນການສະໜອງສິນຄ້າກະສິກຳໃຫ້ແກ່ອຸດສະຫະກຳປຸງແຕ່ງ ແລະ ຂະແໜງບໍລິການໃຫ້ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອສ້າງມູນຄ່າເພີ່ມໃຫ້ຜະລິດຕະພັນ. ພ້ອມດຽວກັນນັ້ນ ກໍ່ສືບຕໍ່ສຸມໃສ່ຟື້ນຟູ, ຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ແບບຍືນນານ ເພື່ອໃຫ້ ສປປ ລາວ ເປັນປະເທດສີຂຽວຕາມທິດຍືນຍົງ.

» **ຄາດໝາຍ**:

- **ຄາດໝາຍການຜະລິດສະບຽງອາຫານ**:
  - ຮັບປະກັນດ້ານສະບຽງອາຫານ ແລະ ໂພຊະນາການ ໃນແຕ່ລະປະເພດ ໃຫ້ປະຊາຊົນ ຢ່າງພຽງພໍ.
  - ຜະລິດເຂົ້າຕາມ 10 ແຂວງຈຸດສຸມຂອງລັດຖະບານ (ແຂວງຫລວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ, ວຽງຈັນ, ນະຄອນຫລວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ສາລະວັນແລະຈຳປາສັກ) ໃຫ້ໄດ້ຢ່າງໜ້ອຍ 2,5 ລ້ານໂຕນຮອດປີ 2020 ໃນເນື້ອທີ່ປູກເຂົ້າ 600.000 ເຮັກຕາ, ໃນນັ້ນ ສຳລັບການບໍລິໂພກ 2,1 ລ້ານໂຕນ ແລະ ຄັງແຮເຂົ້າ 400.000 ໂຕນ ; ໂຄງການຊົນລະປະທານທີ່ສາມາດສະໜອງນ້ຳໃຫ້ແກ່ການປູກເຂົ້າມີທັງໝົດປະມານ 315.374 ເຮັກຕາ, ຮອດປີ 2020 ໃຫ້ເພີ່ມເປັນ 476.012 ເຮັກຕາ ໃນສະມັດຕະພາບສະເລ່ຍ 4-5 ໂຕນຕໍ່ເຮັກຕາ, ສາມາດສະໜອງໃຫ້ປະຊາຊົນບໍລິໂພກໄດ້ປະມານ 2.600-2.700 ກິໂລແຄລໍລີ ຕໍ່ຄົນ ຕໍ່ປີ ເພື່ອເຮັດໃຫ້ປະຊາຊົນໄດ້ຮັບໂພຊະນາການທີ່ຄົບໝູ່ (ເຂົ້າ, ທາດແປ້ງ, ຊີ້ນ, ປາ, ຜັກ, ໄຂ່ ແລະນົມ).
  - ຮັບປະກັນອັດຕາການບໍລິໂພກ ຊີ້ນ, ປາ ແລະ ໄຂ່ ໂດຍສະເລ່ຍໃຫ້ໄດ້ 65 ກິໂລຕໍ່ຄົນຕໍ່ປີ
  - ສາລີຫວານໃຫ້ໄດ້ປະມານ 228.000 ໂຕນ, ເຜືອກ-ມັນໃຫ້ໄດ້ປະມານ 304.000 ໂຕນ, ປະເພດໄມ້ໃຫ້ໝາກ ໃຫ້ໄດ້ 800.000 ໂຕນ ແລະ ພືດຜັກ ໃຫ້ໄດ້ 1,5 ລ້ານໂຕນ.
  - ຜະລິດຊີ້ນ ແລະ ໄຂ່ ໃຫ້ໄດ້ 258 ພັນໂຕນ, ປາ ແລະ ສັດນ້ຳ ໃຫ້ໄດ້ 229,5 ພັນໂຕນ.
  - ການຂະຫຍາຍຕົວຂອງຝູງສັດ ປະມານ 6% ຕໍ່ປີ ແລະ ການລ້ຽງປາ ແລະ ສັດນ້ຳ ໃຫ້ໄດ້ 8-10% ຕໍ່ປີ.

**ຄາດໝາຍການຜະລິດເປັນສິນຄ້າ**:

- ສູ້ຊົນຜະລິດສິນຄ້າກະສິກຳໃຫ້ມີການຂະຫຍາຍຕົວທັງດ້ານປະລິມານ ແລະ ຄຸນນະພາບ ເພື່ອສະໜອງໃຫ້ໂຮງງານປຸງແຕ່ງພາຍໃນ ແລະ ສົ່ງອອກ.
- ຜະລິດເຂົ້າເປັນສິນຄ້າພາຍໃນ ແລະ ສົ່ງອອກ ໃຫ້ໄດ້ 1-1,5 ລ້ານໂຕນ (ເຂົ້າເປືອກ), ໃນນັ້ນ ສຳລັບປຸງແຕ່ງພາຍໃນໃຫ້ໄດ້ 500.000-600.000 ໂຕນ.
- ສຳລັບພືດຕ່າງໆ: ຜະລິດສາລີອາຫານສັດ ໃຫ້ບັນລຸ 1,3 ລ້ານໂຕນ, ກາເຟ ໃຫ້ໄດ້ປະມານ 120.000ໂຕນ, ອ້ອຍໃຫ້ໄດ້ຫລາຍກວ່າ 2 ລ້ານໂຕນ, ມັນຕົ້ນໃຫ້ໄດ້ 1,5 ລ້ານໂຕນ, ຖົ່ວເຫຼືອງໃຫ້ໄດ້ 50.000ໂຕນ, ໝາກເດືອຍ 213.150 ໂຕນ ແລະ ອື່ນໆ. ນອກນັ້ນ ກໍສູ້ຊົນຜະລິດພືດສິນຄ້າອື່ນໆທີ່ມີທ່າແຮງໄດ້ປຽບຕາມທີ່ຕະ ຫລາດຕ້ອງການ.
- ສຳລັບການລ້ຽງສັດ: ສູ້ຊົນຫັນການລ້ຽງສັດແບບທຳມະຊາດໄປສູ່ການລ້ຽງແບບເປັນຟາມໃຫ້ສາມາດສະ ໜອງຜົນຜະລິດ ຈາກຟາມໃຫ້ໄດ້ 30% ຂອງຜົນຜະລິດສັດທັງໝົດ. ສຸມໃສ່ການລ້ຽງສັດພັນປັບປຸງ ເພື່ອເປັນສິນຄ້າສະໜອງຕະຫລາດພາຍໃນໃຫ້ພຽງພໍ ແລະ ສູ້ຊົນສືບຕໍ່ສົ່ງອອກສັດໃຫຍ່ ປະເພດງົວ, ຄວາຍ ໄປປະເທດໃກ້ຄຽງ ໂດຍຄິດໄລ່ເປັນນ້ຳໜັກຊີ້ນ ຢ່າງຕ່ຳໃຫ້ໄດ້ 10.000-15.000ໂຕນ ໃນປີ 2020. ເພີ່ມທະວີການປູກຫຍ້າແລະການຜະລິດອາຫານສັດໃຫ້ເປັນຂະບວນການ, ສ້າງແນວພັນຫຍ້າຫລາຍຊະນິດທີ່ມີຄຸນນະພາບ ເພື່ອເປັນບ່ອນສາທິດ ແລະທັງເປັນບ່ອນຂະຫຍາຍແນວພັນຫຍ້າປຸງແຕ່ງອາຫານສັດ ເພື່ອສົ່ງເສີມການລ້ຽງສັດເປັນສິນຄ້າໃຫ້ໄດ້ຫລາຍຂຶ້ນ.

- **ຄາດໝາຍການຄຸ້ມຄອງປ່າໄມ້ ແລະ ຊັບພະຍາກອນປ່າໄມ້**:
  - ຄຸ້ມຄອງ ແລະ ນຳໃຊ້ປ່າຜະລິດ ແລະ ປ່າຊຸມຊົນຢ່າງມີປະສິດທິຜົນສູງ.
  - ສືບຕໍ່ສຳຫລວດ ແລະ ສ້າງແຜນຈັດສັນປ່າຜະລິດໃຫ້ໄດ້ 600.000 ເຮັກຕາ
  - ສ້າງເຂດຢັ້ງຢືນປ່າໄມ້ໃຫ້ໄດ້ 30% ຂອງປ່າຜະລິດທັງໝົດ, ຟື້ນຟູປ່າຜະລິດໃຫ້ໄດ້ 500.000 ເຮັກຕາ
  - ສົ່ງເສີມການປູກໄມ້ພື້ນເມືອງ, ໄມ້ອຸດສະຫະກຳຂອງທຸກພາກສ່ວນໃນສັງຄົມໃຫ້ໄດ້ 500.000 ເຮັກຕາ
  - ສ້າງແຜນຈັດສັນ ແລະ ຄຸ້ມຄອງປ່າໄມ້ຂັ້ນບ້ານໃຫ້ໄດ້ 1.500 ບ້ານ
  - ພັດທະນາວຽກງານຫລຸດຜ່ອນອາຍພິດຈາກການທຳລາຍປ່າໄມ້ (REDD+) ໂດຍການກຽມຄວາມພ້ອມເພື່ອການຊື້-ຂາຍສິນເຊື່ອການປ່ອຍກາກບອນປ່າໄມ້ໃນປີ 2020
  - ປັບປຸງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

» **ກິດຈະກຳ ແລະ ໂຄງການ**:

- ສົ່ງເສີມການຜະລິດກະສິກຳສະອາດ ແລະ ປອດໄພ ຢູ່ແຕ່ລະທ້ອງຖິ່ນ, ສົ່ງເສີມກະສິກຳປອດສານພິດຢູ່ທ້ອງຖິ່ນທີ່ມີເງື່ອນໄຂ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫລາດທັງພາຍໃນ ແລະ ຕ່າງປະເທດ.
- ຊຸກຍູ້ສົ່ງເສີມການຜະລິດກະສິກຳຕິດພັນການຕະຫລາດ ແລະ ມີການປຸງແຕ່ງ.
- ຫັນການຜະລິດແບບທຳມະຊາດຂອງປະຊົນຊົນ ໄປສູ່ການຜະລິດແບບເປັນຟາມທີ່ນຳໃຊ້ເຕັກນິກວິທະຍາ ສາດ ແລະ ເຕັກໂນໂລຊີທີ່ທັນສະໄໝ ເພື່ອຍົກສູງຜະລິດຕະພາບຂອງການຜະລິດ, ພ້ອມດຽວກັນນັ້ນ ກໍ່ຕ້ອງຈັດຕັ້ງກຸ່ມຜະລິດ ແລະ ສະຫະກອນກະສິກຳ.
- ສຸມໃສ່ປັບປຸງ, ຍົກລະດັບຊົນລະປະທານໃຫ້ແໜ້ນໜາຖາວອນ ແລະ ຄຸ້ມຄອງນຳໃຊ້ໃຫ້ມີປະສິດທິຜົນສູງ.
- ສ້າງ ແລະ ປັບປຸງສູນສົ່ງເສີມ ແລະ ພັດທະນາກະສິກຳໃຫ້ເປັນລະບົບຄົບຊຸດ ເພື່ອສາມາດເປັນບ່ອນສາທິດດ້ານເຕັກນິກ-ວິຊາການດ້ານການຜະລິດກະສິກຳ ແລະ ການສະໜອງແນວພັນໃຫ້ແກ່ປະຊາຊົນ.
- ສຸມໃສ່ການຜະລິດກະສິກຳ-ປ່າໄມ້ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ແລະ ພູມສັນຖານ ດັ່ງນີ້:
- ເຂດທົ່ງພຽງ ແມ່ນສົ່ງເສີມໃຫ້ມີການປູກພືດ (ເຂົ້າ, ສາລີ, ປະເພດຖົ່ວ, ຜັກຕ່າງໆ, ຢາສູບ ແລະ ອື່ນໆ) ແລະ ລ້ຽງສັດ (ງົວ, ຄວາຍ, ໝູ, ສັດປີກ ແລະ ອື່ນໆ) ໃນນີ້: ສຸມໃສ່ພັດທະນາເຂດທົ່ງພຽງໃຫ່ຍທີ່ມີທ່າແຮງສູງທີ່ສາມາດເຮັດຊົນລະກະເສດໂດຍກຳນົດເອົາທົ່ງພຽງເຊບັ້ງໄຟ ແລະ ເຊບັ້ງຫຽງ ຂອງແຂວງຄຳມ່ວນ ແລະ ແຂວງສະຫວັນນະເຂດ ເປັນເຂດໂຄງການປູກເຂົ້າຈຸດສຸມລະດັບຊາດ; ນອກຈາກນັ້ນ, ສຸມໃສ່ພັດທະນາເຂດທີ່ມີຊົນລະປະທານຢູ່ແລ້ວໃນ 10 ແຂວງ (ຫຼວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ, ວຽງຈັນ, ນະຄອນຫລວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ສາລະວັນ) ໂດຍໃຫ້ຊາວກະສິກອນມີສ່ວນ ຮ່ວມຫລາຍຂຶ້ນເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ.
- ເຂດພູພຽງ ປະກອບມີ 3 ພູພຽງ ຄື: ພູພຽງບໍລິເວນ: ພູພຽງນາກາຍ ແລະ ພູພຽງຊຽງຂວາງ ຊຶ່ງໃນນີ້: ພູພຽງນາກາຍເປັນເຂດສົ່ງເສີມໃຫ້ປູກກາເຟ, ພືດຜັກ, ໄມ້ໃຫ້ໝາກ, ດອກໄມ້ ແລະ ພືດເມືອງໜາວ; ພູພຽງນາກາຍ: ເໝາະແກ່ການລ້ຽງປາ ແລະ ການປະມົງ; ພູພຽງຊຽງຂວາງ: ສົ່ງເສີມປູກພືດເມືອງໜາວ, ພືດຜັກ ແລະ ໄມ້ກິນໝາກ; ນອກຈາກນັ້ນ, ຍັງສາມາດປັບປຸງເປັນຫຍ້າລ້ຽງສັດໄດ້ ຈຶ່ງເໝາະແກ່ການສົ່ງເສີມໃຫ້ມີການລ້ຽງສັດ ເຊັ່ນ: ງົວ, ແບ້ ແລະ ແກະ.
- ສຳລັບເຂດພູດອຍ ແມ່ນສົ່ງເສີມໃຫ້ປູກພືດທີ່ເໝາະສົມກັບນິເວດກະສິກຳ.
- ສຸມໃສ່ໂຄງການຄ້ຳປະກັນສະບຽງອາຫານ, ໂຄງການຜະລິດເປັນສິນຄ້າທີ່ຕິດພັນກັບຜົນຜະລິດກະສິກຳ.

» **ນະໂຍບາຍ**:

- ນະໂຍບາຍດ້ານການພັດທະນາ ແລະ ຄຸ້ມຄອງທີ່ດິນກະສິກຳສຳລັບການຜະລິດເຂົ້າ, ປູກພືດ-ຜັກ, ລ້ຽງສັດ: ການຂຶ້ນທະບຽນດິນນາ ແລະ ຫ້າມຫັນປ່ຽນດິນນາປູກເຂົ້າໃນເຂດຊົນລະປະທານເພື່ອເປົ້າໝາຍອື່ນ; ສຳຫຼວດຈັດສັນພື້ນທີ່ດິນນາ ແລະ ປະເມີນຄຸນນະພາບດິນນາໃຫ້ເປັນອັນລະອຽດ; ອອກໃບສຳມະໂນດິນນາກະສິກຳໃຫ້ແຕ່ລະຄອບຄົວໃນພື້ນທີ່ເຂດຈຸດສຸມໃຫ້ສຳເລັດຢ່າງຊ້າໃນປີ 2020. ຈັດສັນເຂດດິນທີ່ເໝາະສົມກັບພືດແຕ່ລະຊະນິດ, ເຂດລ້ຽງສັດໃຫຍ່, ສັດປີກ, ສັດນ້ຳຢ່າງຊັດເຈນ.

- ນະໂຍບາຍສົ່ງເສີມດ້ານການຜະລິດ ແລະ ປຸງແຕ່ງໂດຍສຸມໃສ່ສ້າງໂຮງສີທີ່ທັນສະໄໝ ແລະ ໄດ້ມາດຕະຖານສາກົນ, ສ້າງໂຮງງານປຸງແຕ່ງຜະລິດຕະພັນຈາກກະສິກຳ-ປ່າໄມ້.
- ສ້າງແວດລ້ອມເອື້ອອຳນວຍໃຫ້ແກ່ການເຮັດກະສິກຳແບບຍືນຍົງ ແລະ ມີປະສິດທິຜົນໂດຍການສົ່ງເສີມໃຫ້ຊາວກະສິກອນ ສາມາດເຂົ້າເຖິງຂໍ້ມູນຂ່າວສານ, ຕະຫຼາດ ແລະ ຜູ້ຊົມໃຊ້, ມີຄວາມຮູ້ທີ່ແທດເໝາະ, ມີຄຸນນະພາບ ແລະ ສາມາດນຳໃຊ້ເຕັກໂນໂລຢີທີ່ເໝາະສົມ ເພື່ອຍົກສູງສະມັດຕະພາບຂອງຜົນຜະລິດຫຼາຍກວ່າການເພີ່ມເນື້ອທີ່ການຜະລິດ.
- ນະໂຍບາຍດ້ານການເງິນ ແລະ ທະນາຄານເຮັດໃຫ້ຜູ້ຜະລິດ, ຜູ້ປຸງແຕ່ງ, ຜູ້ປະກອບການເຂົ້າເຖິງແຫຼ່ງທຶນທີ່ສົມເຫດສົມຜົນ; ສ້າງຕ່ອງໂສ້ການຜະລິດທີ່ມີຄວາມກົມກຽວກັນລະຫວ່າງວິສາຫະກິດຂະໜາດໃຫຍ່ ແລະ ຂະໜາດນ້ອຍ-ກາງ.
- ນະໂຍບາຍດ້ານກະສິກຳສະອາດ ແລະ ກະສິກຳປອດສານພິດ.
- ນະໂຍບາຍດ້ານພະລັງງານເພື່ອສາມາດສະໜອງໃຫ້ແກ່ໂຮງສີ, ໂຮງງານປຸງແຕ່ງໄດ້ຢ່າງເປັນປົກກະຕິ.
- ນະໂຍບາຍເປີດກວ້າງດ້ານການຕະຫລາດ, ການຄຸ້ມຄອງ-ການຜູກມັດທາງດ້ານລາຄາ, ການເກັບອາກອນ ແລະ ການສົ່ງເສີມການລົງທຶນໃສ່ການຜະລິດກະສິກຳ.
- ນະໂຍບາຍດ້ານແຮງງານຕ້ອງສາມາດສະໜອງແຮງງານທີ່ມີສີມື ແລະ ຊ່ຽວຊານທາງດ້ານວິຊາການກະສິກຳປ່າໄມ້ຕາມມາດຖານສາກົນ.
- ນະໂຍບາຍທາງດ້ານຊັບສິນທາງປັນຍາ, ມາດຖານ ແລະ ວັດແທກ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜະລິດຕະພັນ ແລະ ປົກປ້ອງຜະລິດຕະພັນກະສິກຳ-ປ່າໄມ້ຂອງລາວບໍ່ໃຫ້ມີການປອມແປງເຄື່ອງໝາຍການຄ້າ.
- ນະໂຍບາຍຄົ້ນຄວ້າ ແລະ ສົ່ງເສີມດ້ານແນວພັນທີ່ເປັນເອກະລັກຂອງລາວ ແລະ ເປັນມິດກັບທຳມະຊາດ.
- ນະໂຍບາຍດ້ານການຂົນສົ່ງເພື່ອອຳນວຍຄວາມສະດວກໃຫ້ແກ່ການຂົນສົ່ງທັງພາຍໃນ ແລະ ຕ່າງປະເທດ.
- ນະໂຍບາຍໃນການພັດທະນາຊົນນະບົດທີ່ຕິດພັນກັບການພັດທະນາກະສິກຳເປັນສິນຄ້າ ແລະ ຄ້ຳປະກັນສະ ບຽງອາຫານແບບຍືນຍົງ.
- ນະໂຍບາຍການສົ່ງເສີມການລົງທຶນຂອງເອກະຊົນທັງພາຍໃນ ແລະ ຕ່າງປະເທດເປັນຕົ້ນສຸມໃສ່ຫັນເປັນຊົນລະກະເສດ.

**ງ. ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການໃຫ້ມີຄວາມຫລາກຫລາຍ ເພື່ອຫລຸດຜ່ອນການເອື່ອຍອີງໃສ່ຊັບພະຍາກອນທຳມະຊາດ:**

ສົ່ງເສີມໃຫ້ມີການລົງທຶນໃສ່ການຜະລິດເປັນສິນຄ້າ ທີ່ບໍ່ຕິດພັນກັບການນຳໃຊ້ຊັບພະຍາກອນທຳມະຊາດຢ່າງແຂງແຮງ ເປັນຕົ້ນ ແມ່ນອຸດສາຫະກຳປຸງແຕ່ງກະສິກຳ, ອຸດສາຫະກຳປຸງແຕ່ງອາຫານ-ເຄື່ອງໃຊ້ສອຍຄົວເຮືອນ, ອຸດສະຫະກຳ ຕ່ຳແຜນດ້ວຍມື ແລະ ອື່ນໆ ເພື່ອເປັນພື້ນຖານຂອງການເຕີບໂຕດ້ານເສດຖະກິດທີ່ເຂັ້ມແຂງ, ໄປຄຽງຄູ່ກັບສົ່ງເສີມໃຫ້ບັນ ດາບໍລິສັດທີ່ເຮັດກິດຈະການຂຸດຄົ້ນບໍ່ແຮ່, ນຳໃຊ້ຊັບພະຍາກອນປ່າໄມ້ ແລະ ອື່ນໆ ປັບປຸງການຜະລິດໃຫ້ມີການປຸງແຕ່ງວັດຖຸດິບແຮ່ທາດ ກ່ອນການສົ່ງອອກ ເພື່ອສ້າງມູນຄ່າເພີ່ມຕໍ່ຊັບພະຍາກອນທຳມະຊາດ, ພ້ອມດຽວກັນນັ້ນ ກໍ່ປັບປຸງເຂດການຂຸດຄົ້ນ ໃຫ້ເຂົ້າສູ່ສະພາບປົກກະຕິ ໂດຍຫຼີກລ້ຽງຜົນກະທົບຕໍ່ສັງຄົມແລະ ສິ່ງແວດລ້ອມ.

ພັດທະນາການບໍລິການດ້ານການທ່ອງທ່ຽວທີ່ສະອາດ, ສວຍງາມ ແລະ ເປັນມິດກັບສິ່ງແວດລ້ອມ, ໄປຄຽງຄູ່ກັບການປັບປຸງການບໍລິການດ້ານໂຮງແຮມ, ຮ້ານອາຫານ, ສະຖານທີ່ທ່ອງທ່ຽວ ແລະ ການບໍລິການນຳທ່ຽວ ໃຫ້ມີຄຸນນະພາບ ແລະ ມີຄວາມຫຼາກຫຼາຍ ຕິດພັນກັບການຜະລິດດ້ານສີລະປະຫັດຖະກຳ ແລະ ສິນລະປະຈິດຕະກຳ ເພື່ອຕອບສະໜອງຄວາມຕ້ອງການໃຫ້ແກ່ນັກທ່ອງທ່ຽວ ແລະ ທັງເປັນການສ້າງລາຍໄດ້ໃຫ້ປະຊາຊົນ ແລະ ປະເທດຊາດ.

**ຈ. ສ້າງຕ່ອງໂສ້ການຜະລິດຢ່າງກົມກ່ຽວລະຫວ່າງລັດວິສາຫະກິດ, ວິສາຫະກິດຂະໜາດໃຫຍ່ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ:**

- **ລັດວິສາຫະກິດ:**

– ປັບປຸງ ແລະ ກໍ່ສ້າງລັດວິສາຫະກິດໃຫ້ມີຄວາມເຂັ້ມແຂງດ້ານໂຄງສ້າງ ແລະ ໄປຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ ດ້ວຍຮູບການທີ່ເໝາະສົມ; ສາມາດເປັນກຳລັງແຮງໃຫ້ແກ່ລັດເຮົາໃນການຊຸກຍູ້ການເຕີບໂຕ, ການສະສົມທຶນຮອນ ແລະ

ການສະໜອງສາທາລະນະປະໂຫຍດໃຫ້ສັງຄົມ; ພ້ອມກັນນັ້ນ ກໍຕອບສະໜອງຄວາມຕ້ອງການໃຫ້ແກ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

– ປັບປຸງກົນໄກການຄຸ້ມຄອງໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ ແລະ ສາມາດກວດສອບໄດ້ ເພື່ອໃຫ້ວິສາຫະກິດຂອງລັດເປັນເຈົ້າຕົນເອງ ໃນການດຳເນີນທຸລະກິດ, ມີຄວາມຮັບຜິດຊອບດ້ວຍຕົນເອງ ແລະ ຮັບປະກັນການເຄື່ອນໄຫວທຸລະກິດໃຫ້ມີປະສິດທິຜົນ, ມີຄວາມສາມາດໃນການແຂ່ງຂັນ ແລະ ເປັນເຈົ້າການໃນການພົວພັນຮ່ວມມືກັບຕ່າງປະເທດ. ເປີດກ້ວາງສິດເປັນເຈົ້າຕົນເອງໃນກຳມະສິດນຳໃຊ້ຊັບສິນນັ້ນຢ່າງມີປະສິດທິຜົນສູງ ແລະ ມີຄວາມຮັບຜິດຊອບສູງຕໍ່ຊັບສິນທີ່ລັດມອບໃຫ້.

– ຈຳແນກໃຫ້ຈະແຈ້ງ ລະຫວ່າງ ວິສາຫະກິດຂອງລັດທີ່ປະຕິບັດໜ້າທີ່ ຫຼື ເປົ້າໝາຍຍຸດທະສາດດ້ານການເມືອງ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກັບວິສາຫະກິດທີ່ປະຕິບັດໜ້າທີ່ ຫຼື ເປົ້າໝາຍຍຸດທະສາດດ້ານເສດຖະ ກິດ-ສັງຄົມ.

– ປັບປຸງນະໂຍບາຍ, ນິຕິກຳ, ກົດໝາຍ, ລະບອບ ແລະ ລະບຽບການຕ່າງໆ ທີ່ກ່ຽວພັນເຖິງທຸລະກິດ-ວິສາຫະກິດໃຫ້ເໝາະສົມ ແລະ ເອື້ອອຳນວຍກ່ວາເກົ່າ, ສອດຄ່ອງກັບກົນໄກເສດຖະກິດຕະຫຼາດ.

– ເພີ່ມທະວີບົດບາດ ແລະ ຄວາມສາມາດຄຸ້ມຄອງຂອງລັດ ຕໍ່ວິສາຫະກິດຂອງລັດເພື່ອສ້າງໃຫ້ລັດວິສາຫະກິດມີຄວາມໜັກແໜ້ນ, ເຂັ້ມແຂງ ສາມາດເປັນເຈົ້າພາທາງໃຫ້ແກ່ທຸລະກິດເອກະຊົນ ແລະ ເປັນພື້ນຖານຄວາມໝັ້ນຄົງຂອງຊາດ.

- **ວິສາຫະກິດຂະໜາດໃຫຍ່ກັບວິສາຫະກິດຂະໜາດນ້ອຍ ແລະ ກາງ**:

– ສ້າງວິສາຫະກິດຂະໜາດໃຫຍ່ໃຫ້ໄດ້ຈຳນວນໜຶ່ງ ເພື່ອເປັນຫົວຈັກແກ່ດຶງວິສາຫາກິດຂະໜາດນ້ອຍ ແລະ ກາງ, ສ້າງໃຫ້ມີສຳພັນເສດຖະກິດລະຫວ່າງກັນ ເປັນຕົ້ນ: ວິສາຫະກິດກ່ຽວກັບການທ່ອງທ່ຽວຄົບວົງຈອນ (ຕົວຢ່າງ: ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະໜອງຜັກສະອາດ ແລະ ປອດສານພິດ, ເຄື່ອງຕໍ່າແຜນ, ຈັກສານ ແລະ ແກະສະລັກໃນເຂດທ່ອງທ່ຽວ, ຄວາມພ້ອມທາງດ້ານໂຄງລ່າງພື້ນຖານ: ຖະໜົນ, ໄຟຟ້າ, ນ້ຳປະປາ), ວິສາຫະກິດອຸດສາຫະກຳປຸງແຕ່ງກະສິກຳ (ກຸ່ມຜະລິດກະສິກຳສະໜອງວັດຖຸດິບໃຫ້ອຸດສາກະກຳປຸງແຕ່ງ) ແລະ ວິສາຫາກິດອື່ນໆ.

– ປັບປຸງຜະລິດຕະພາບຂອງພາກທຸລະກິດ/ວິສາຫະກິດຕ່າງໆທັງຂອງລັດ, ເອກະຊົນພາຍໃນ ແລະ ຕ່າງປະເທດລວມທັງວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍການສົ່ງເສີມການເພີ່ມຜະລິດຕະພາບໃຫ້ສູງຂຶ້ນ, ນຳໃຊ້ເທັກໂນໂລຍີທີ່ສະອາດເໝາະສົມ ແລະ ທັນສະໄໝກັບສະພາບການພັດທະນາຂອງປະເທດ ແລະ ບັນດານະວັດຕະກຳໃໝ່, ກຳນົດມາດ ຕະຖານຜະລິດຕະພັນ ແລະ ການບໍລິການ ເພື່ອຍົກສູງຜະລິດຕະພາບຂອງການຜະລິດສິນຄ້າ, ການເຂົ້າເຖິງຕະຫລາດທັງ ພາຍໃນ ແລະ ຕ່າງປະເທດ, ການເພີ່ມມູນຄ່າໃຫ້ສິນຄ້າ.

– ປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການສ້າງຕັ້ງ ແລະ ການດຳເນີນທຸລະກິດທີ່ຕິດພັນກັບລະບຽບກົດໝາຍ, ການເຂົ້າເຖິງແຫຼ່ງທຶນ, ແຮງງານທີ່ມີທັກສະ, ການເຂົ້າເຖິງການບໍລິການໃຫ້ຄຳປຶກສາໃນການພັດທະນາທຸລະ ກິດ ເພື່ອສ້າງ ແລະ ພັດທະນາຜູ້ປະກອບການໃຫ້ມີຄຸນນະພາບ, ການພັດທະນາພື້ນຖານໂຄງລ່າງທີ່ຄົບຊຸດເພື່ອສ້າງແຮງຈູງໃຈ ໃຫ້ແກ່ຜູ້ລົງທຶນມີຄວາມເຊື່ອໝັ້ນໃນການດຳເນີນທຸລະກິດ.

– ສົ່ງເສີມການເຂົ້າເຖິງແຫລ່ງທຶນຂອງວິສາຫະກິດຂະໜາດນ້ອຍ ແລະ ກາງ ໂດຍການສ້າງໂຄງການສະໜັບສະໜູນແຫລ່ງທຶນໄລຍະຍາວແກ່ທະນາຄານທຸລະກິດທີ່ສົນໃຈປ່ອຍກູ້ໃຫ້ແກ່ຕະຫຼາດວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ສ້າງກອງທຶນຫຼຸດຜ່ອນຄວາມສ່ຽງເພື່ອຊຸກຍູ້ໃຫ້ທະນາຄານທຸລະກິດບໍລິການປ່ອຍກູ້ໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງຫລາຍຂຶ້ນ.

– ປັບປຸງການເຂົ້າເຖິງການບໍລິການດ້ານການເງິນຂອງວິສາຫະກິດໃນເຂດຊົນນະບົດ ໂດຍການສົ່ງເສີມການບໍລິການທະນາຄານຜ່ານທາງໂທລະສັບມືຖື ແລະ ທາງເອເລັກໂທນິກ ໂດຍຕ້ອງສ້າງລະບຽບການຄຸ້ມຄອງທີ່ຮັດກຸມ.

### ສ. ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໃນບາງວຽກຈຸດສຸມ ດັ່ງນີ້:

- ສຸມໃສ່ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ໃຫ້ມີຄຸນນະພາບສູງ ແລະ ມີຄວາມຍືນຍົງ ໂດຍການສ້າງຕົວແບບນິຄົມອຸດສາຫະກຳ, ຕົວເມືອງໃໝ່ໃຫ້ສຳເລັດ ເພື່ອເປັນຫົວຈັກແກ່ດຶງການພັດທະນາຂອງປະເທດ ໂດຍເລັ່ງໃສ່ພັດທະນາເຂດເສດຖະກິດພິເສດ ແລະ ສະເພາະ 5 ແຫ່ງຢູ່ນະຄອນຫລວງວຽງຈັນ, 2 ແຫ່ງຢູ່ແຂວງຄຳມ່ວນ ແລະ 1 ແຫ່ງຢູ່ແຂວງສະຫວັນນະເຂດ.

- ສົ່ງເສີມໃຫ້ມີການລົງທຶນໃນອຸດສາຫະກຳປຸ່ງແຕ່ງທີ່ນຳໃຊ້ເຕັກໂນໂລຊີທັນສະໄໝຫລາຍຂຶ້ນ.

- ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການລົງທຶນ ໃຫ້ເທົ່າກັບ ຫຼື ລື່ນປະເທດອ້ອມຂ້າງ ເປັນຕົ້ນ: ປັບປຸງການບໍລິການຜ່ານປະຕູດຽວໃຫ້ມີຄວາມສະດວກວ່ອງໄວ, ອາຍຸການຂໍອະນຸຍາດມາລົງທຶນນ້ອຍລົງ ແລະ ສະໜອງຂໍ້ມູນກ່ຽວ

ກັບຂົງເຂດການລົງທຶນໃຫ້ມີຄວາມຊັດເຈນຂຶ້ນ. ເປີດເຂດເສດຖະກິດອື່ນທີ່ມີເງື່ອນໄຂ ແລະ ທ່າແຮງໄດ້ປຽບໂດຍສອດຄ່ອງກັບເງື່ອນໄຂທີ່ເຫັນວ່າໄດ້ຕາມເງື່ອນໄຂຂອງການສ້າງເຂດເສດຖະກິດພິເສດ ແລະ ສະເພາະທີ່ໄດ້ກຳນົດໄວ້ໃນແຜນຍຸດທະສາດການພັດທະນາເຂດເສດຖະກິດພິເສດ ແລະ ສະເພາະ ແຕ່ 2011-2020 ທີ່ລັດຖະບານໄດ້ຮັບຮອງແລ້ວ.

- ສ້າງພື້ນຖານອັນໜັກແໜ້ນທາງດ້ານນິຕິກຳ ເພື່ອສ້າງຄວາມເຊື່ອໝັ້ນໃນການລົງທຶນຂອງພາກເອກະຊົນໃຫ້ນັບມື້ນັບຫລາຍຂຶ້ນ.
- ລັດຖະບານລົງທຶນໃສ່ພື້ນຖານໂຄງລ່າງເຊື່ອມຕໍ່ທີ່ຈຳເປັນຢູ່ພາຍໃນເຂດເສດຖະກິດທີ່ມີທ່າແຮງໄດ້ປຽບ.
- ເອົາໃຈໃສ່ຄຸ້ມຄອງຕາມນະໂຍບາຍທີ່ລັດຖະບານໄດ້ກຳນົດອອກໃຫ້ມີປະສິດທິຜົນສູງ (ກົນໄກຫ້ອງການບໍລິການປ່ອຍ-ສັງຄົມກວ້າງ), ຄຸ້ມຄອງ ແລະ ປະຕິບັດນະໂຍບາຍປະຕູດຽວຢູ່ໃນເຂດໃຫ້ມີຄວາມສັກສິດ, ມີຄວາມສະດວກ ແລະ ໂປ່ງໃສ.

## 3.4.2. ແຜນວຽກຈຸດສຸມ 2: ຮັບປະກັນໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ:

» **ທິດທາງ**:

ສືບຕໍ່ພັດທະນາເສດຖະກິດໃຫ້ມີການຂະຫຍາຍຕົວຢ່າງຕໍ່ເນື່ອງ ໂດຍການສ້າງພື້ນຖານການຜະລິດທີ່ໜັກແໜ້ນ ແລະ ມີຄວາມຫຼາກຫຼາຍ, ປັບປຸງການບໍລິການໃຫ້ມີຄຸນນະພາບ ແລະ ເຂັ້ມແຂງຂຶ້ນ; ຄຽງຄູ່ກັບນັ້ນ, ກໍ່ເອົາໃຈໃສ່ຄຸ້ມຄອງເສດຖະກິດມະຫາພາກໃຫ້ມີສະຖຽນລະພາບ ໂດຍການພັດທະນານະໂຍບາຍການເງິນ ແລະ ເງິນຕາໃຫ້ມີຄວາມສອດຄ່ອງ ແລະຄວາມມີກົມກຽວກັນຫລາຍຂຶ້ນເພື່ອຮັບປະກັນໃຫ້ເສດຖະກິດມະຫາພາກມີຄວາມໝັ້ນທ່ຽງແລະຂະຫຍາຍຕົວຢ່າງຕໍ່ເນື່ອງ; ສ້າງຂອບເສດຖະກິດມະຫາພາກໃຫ້ສອດຄ່ອງກັບສະພາບເສດຖະກິດ-ສັງຄົມໃນໄລຍະໃໝ່ເພື່ອເປັນເຄື່ອງມືທີ່ມີປະສິດທິຜົນສູງໃນການຕິດຕາມການປ່ຽນແປງສະພາບເສດຖະກິດຢ່າງເປັນລະບົບປົກກະຕິເພື່ອກຳນົດນະໂຍບາຍໃນການຄຸ້ມຄອງ ແລະ ດັດສົມເສດຖະກິດມະຫາພາກຢ່າງເໝາະສົມ ໂດຍສະເພາະແມ່ນຄຸ້ມຄອງອັດຕາເງິນເຟີ້ໃຫ້ຢູ່ໃນຂອບເຂດທີ່ເໝາະສົມ, ກຳນົດອັດຕາດອກເບ້ຍ, ຄຸ້ມຄອງອັດຕາແລກປ່ຽນໃຫ້ມີຄວາມສະຫງົບ ແລະ ຢູ່ໃນທ່າທີ່ໄດ້ປຽບເພື່ອຊຸກຍູ້ການຜະລິດສິນຄ້າສົ່ງອອກຕ່າງປະເທດຫລາຍຂຶ້ນ ແລະ ສາມາດແຂ່ງຂັນໄດ້, ຄຸ້ມຄອງໜີ້ສິນພາຍໃນ (ໜີ້ສິນຂອງລັດ ແລະ ໜີ້ສາທາລະນະ) ແລະ ໜີ້ສິນຕ່າງປະເທດໃຫ້ຫຼຸດລົງເປັນກ້າວໆ; ປັບປຸງ ແລະ ດຳເນີນມາດຕະການດ້ານນະໂຍບາຍ ການເງິນ ແລະ ເງິນຕາທີ່ເໝາະສົມ ເພື່ອສ້າງສະພາບຄ່ອງທາງດ້ານການເງິນ-ເງິນຕາ ແລະ ຫລຸດຜ່ອນການຂາດດຸນການຄ້າລົງເທື່ອລະກ້າວ ເຮັດໃຫ້ຄັງສຳຮອງເງິນຕາຕ່າງປະເທດເພີ່ມຂຶ້ນ ແລະ ຮັບປະກັນການຊຳລະສະສາງກັບຕ່າງປະເທດ; ພັດທະນາຄັງສະສົມຂອງລັດເປັນເງິນ, ເປັນວັດຖຸ, ສິນຄ້າສະສົມແຫ່ງລັດ ໃຫ້ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ແລະ ສຸກເສີນ ເປັນຕົ້ນ ແມ່ນວຽກງານປ້ອງກັນ, ຕ້ານ ແລະ ຟື້ນຟູຜົນກະທົບຈາກໄພພິບັດ; ວຽກງານດັດສົມຕະຫລາດໃຫ້ມີຄວາມໝັ້ນທ່ຽງ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ເພື່ອຮັບປະກັນສະຖຽນລະພາບທາງດ້ານເສດຖະກິດ ແລະ ສ້າງເງື່ອນໄຂໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະ ບານບັນລຸຄາດໝາຍທີ່ກຳນົດໄວ້.

» **ຄາດໝາຍ**:

- ສູ້ຊົນເຮັດໃຫ້ລວມຍອດມູນຄ່າຜະລິດຕະພັນພາຍໃນ ຂະຫຍາຍຕົວ ບໍ່ຫຼຸດ 7,5% ຕໍ່ປີ.
- ອັດຕາເງິນເຟີ້ໃຫ້ຢູ່ໃນລະດັບທີ່ເໝາະສົມ (ໃນລະດັບບໍ່ເກີນ 5%),
- ຮັກສາອັດຕາແລກປ່ຽນໃຫ້ມີຄວາມສະຫງົບປົກກະຕິ ແລະ ເໜັງຕີງຢູ່ໃນກອບ 5% ທຽບກັບເງິນຕາຕ່າງປະ ເທດສະກຸນຫລັກ.
- ຄວບຄຸມປະລິມານເງິນລວມ M2 ໃຫ້ເພີ່ມຂຶ້ນສະເລ່ຍຢູ່ໃນລະດັບ 24% ຕໍ່ປີ,
- ຮັບປະກັນໃຫ້ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າໄດ້ຫລາຍກວ່າ 5 ເດືອນ.
- ສູ້ຊົນໃຫ້ຍອດເງິນຝາກຂອງທະນາຄານທຸລະກິດ ບັນລຸໄດ້ 84% ຂອງ GDP ໃນທ້າຍປີ 2020.
- ຍົກສູງຄຸນນະພາບສິນເຊື່ອ ແລະ ຄວບຄຸມອັດຕາສ່ວນໜີ້ທີ່ບໍ່ເກີດດອກອອກຜົນໃຫ້ຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ.
- ສູ້ຊົນປະຕິບັດລາຍຮັບງົບປະມານທັງໝົດໃຫ້ໄດ້ໃນລະຫວ່າງ 19-20% ຂອງ GDP, ໃນນັ້ນ ລາຍຮັບພາຍໃນຢູ່ລະຫວ່າງ 16-17% ຂອງ GDP; ລາຍຈ່າຍງົບປະມານທັງໝົດ ບໍ່ເກີນ 25% ຂອງ GDP; ໃນນັ້ນ, ລາຍຈ່າຍເງິນເດືອນບໍ່ໃຫ້ເກີນ 45% ຂອງລາຍຮັບພາຍໃນ; ຮັບປະກັນການຂາດດຸນງົບປະມານໃຫ້ຢູ່ໃນລະດັບບໍ່ເກີນ 5% ຂອງ GDP ຕໍ່ປີ.

- ສູ້ຊົນໃຫ້ສາມາດສ້າງຄັງສະສົມແຫ່ງລັດ ໃນແຕ່ລະປີຢູ່ໃນລະດັບ 2-3% ຂອງລາຍຮັບພາຍໃນ.
- ເຮັດໃຫ້ການຂາດດຸນການຄ້າ ຢູ່ໃນລະດັບທີ່ສາມາດຄຸ້ມຄ່ຽງໄດ້.

» **ນະໂຍບາຍ, ໂຄງການ**:

- ສ້າງກອບນະໂຍບາຍການເງິນ-ເງິນຕາຢ່າງເໝາະສົມດ້ວຍການຫລຸດຜ່ອນການຂາດດຸນງົບປະມານໃຫ້ຢູ່ໃນລະດັບທີ່ເສດຖະກິດຮັບເອົາໄດ້ ແລະ ຫຼຸດສັດສ່ວນໜີ້ສິນຕ່າງປະເທດຕໍ່ GDP ໃຫ້ຢູ່ໃນລະດັບປອດໄພຕາມມາດຕະ ຖານສາກົນ ແລະ ກຳນົດການເພີ່ມຂຶ້ນຂອງລາຍຈ່າຍງົບປະມານໃຫ້ສົມຄູ່ກັບການເພີ່ມຂຶ້ນຂອງລາຍຮັບງົບ ປະມານທີ່ມີຄວາມໝັ້ນຄົງ.
- ພັດທະນານະໂຍບາຍເງິນຕາ ແລະ ເຄື່ອງມືທາງກົງ ແລະ ທາງອ້ອມໃຫ້ສົມບູນ ແລະ ສອດຄ່ອງກັບສະພາບຕົວຈິງ.
- ສ້າງແບບຈຳລອງເສດຖະກິດມະຫາພາກ ແລະ ອັດຕາແລກປ່ຽນໃຫ້ຄົບຊຸດ.
- ຍົກລະດັບມາດຖານການນຳໃຊ້ເຄື່ອງມືນະໂຍບາຍເງິນຕາໃຫ້ມີປະສິດທິພາບສູງ.
- ສ້າງກອບເສດຖະກິດມະຫາພາກໃນການຕິດຕາມການປ່ຽນແປງຂອງເສດຖະກິດ ເພື່ອເປັນພື້ນຖານໃຫ້ແກ່ການຄົ້ນຄວ້າ, ກຳນົດນະໂຍບາຍ ແລະ ມາດຕະການເພື່ອດັດສົມ, ຊຸກຍູ້ສົ່ງເສີມ ແລະ ແກ້ໄຂໃຫ້ທັນເວລາ.
- ສ້າງຍຸດທະສາດໄລຍະກາງ ແລະ ໄລຍະຍາວ ເພື່ອຄຸ້ມຄອງໜີ້ສິນພາກລັດໃຫ້ມີຄວາມຍືນຍົງ; ລວມສູນໜີ້ສິນພາກລັດຢູ່ກະຊວງການເງິນ ແລະ ບໍລິຫານລາຍຈ່າຍໜີ້ສິນຕ່າງປະເທດໃຫ້ເປັນປົກກະຕິ.
- ສ້າງມາດຕະການເພື່ອປ້ອງກັນຄວາມສ່ຽງທີ່ຈະກໍ່ໃຫ້ເກີດເປັນໜີ້ສິນງົບປະມານສະສົມ ເຊັ່ນ: ການລົງທຶນລ່ວງໜ້າຂອງພາກເອກະຊົນໃສ່ໂຄງການລົງທຶນກໍ່ສ້າງພື້ນຖານໂຄງລ່າງຂອງລັດຖະບານ, ການສ້າງໜີ້ສິນນອກງົບປະມານ ແລະການຄ້ຳປະກັນໃຫ້ລັດວິສາຫາກິດກູ້ຢືມຈາກແຫລ່ງຕ່າງໆ.
- ສ້າງກົນໄກປະສານງານດ້ານເສດຖະກິດມະຫາພາກລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ກັບ ກະຊວງການເງິນ, ທະນາຄານ ແຫ່ງ ສປປລາວ, ກະຊວງອຸດສາຫະກຳການຄ້າ ແລະ ພາກສ່ວນທີ່ກ່ຽວຂ້ອງໃຫ້ມີຄວາມເປັນເອກະພາບສູງ ແລະ ກົມກຽວກັນຫລາຍຂຶ້ນ.
- ສືບຕໍ່ປະຕິບັດບັນດາຂໍ້ແນະນຳທີ່ຍັງຄົງຄ້າງ ຂອງອົງການຕ້ານການຟອກເງິນສາກົນ FATF (ເຊັ່ນ: ປັບປຸງລະບຽບການສ້າງຕັ້ງທະນາຄານ)

## 3.4.3. ແຜນວຽກຈຸດສຸມ 3: ຮັບປະກັນຄວາມສອດຄ່ອງ ແລະ ກົມກຽວລະຫວ່າງ ຄວາມສາມາດສະໜອງແຫຼ່ງທຶນກັບການວາງແຜນພັດທະນາ.

» **ທິດທາງ**

ການພັດທະນາ ແລະ ການສະໜອງທຶນຕ້ອງມີຄວາມສອດຄ່ອງ, ກົມກຽວ ແລະ ຕິດພັນກັນຕັ້ງແຕ່ຫົວທີຄື: ການສະໜອງທຶນຕ້ອງສອດຄ່ອງກັບນະໂຍບາຍລວມຂອງການພັດທະນາປະເທດ ເປັນຕົ້ນ ສຸມໃສ່ການບັນລຸຕາມມາດຕະຖານການຫຼຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ; ຄວາມຕ້ອງການຂອງການລົງທຶນຕ້ອງສອດຄ່ອງ ແລະ ຮັບປະກັນກັບຄວາມສາມາດຂອງການສະໜອງງົບປະມານໃນແຕ່ລະໄລຍະ ໂດຍປະສານສົມທົບສະໜິດແໜ້ນກັບການລະດົມທຶນຊ່ວຍເຫລືອລ້າ ແລະ ກູ້ຢືມຈາກຕ່າງປະເທດ, ການດຶງດູດການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ, ການສະໜອງສິນເຊື່ອໃຫ້ແກ່ການຜະລິດ ແລະ ການບໍລິການ, ການປະກອບສ່ວນຂອງຕະຫລາດທຶນ ແລະ ຂອງປະຊາຊົນ.

**ຄາດໝາຍ**:

ເພື່ອເຮັດໃຫ້ເສດຖະກິດມີການຂະຫຍາຍຕົວໃນລະດັບ 7,5% ຂຶ້ນໄປ ໃນໄລຍະ 5 ປີ (2016-2020) ແມ່ນມີຄວາມຕ້ອງການລົງທຶນທັງໝົດ ປະມານ 223 ພັນຕື້ກີບ ຫຼື ປະມານ 27 ຕື້ໂດລາສະຫະລັດ, ກວມ 30% ຂອງລວມຍອດຜະລິດຕະພັນພາຍໃນ; ໃນນີ້:

- ການລົງທຶນຈາກງົບປະມານລັດ ກວມປະມານ 9-11% ຂອງການລົງທຶນລວມ
- ການລົງທຶນຈາກການຊ່ວຍເຫຼືອລ້າແລະກູ້ຢືມ ກວມປະມານ 12-16% ຂອງການລົງທຶນລວມ

- ການລົງທຶນຂອງເອກະຊົນພາຍໃນແລະຕ່າງປະເທດ ກວມປະມານ 54-57% ຂອງການລົງທຶນລວມ
- ການລົງທຶນຈາກລະບົບການເງິນ-ເງິນຕາ ປະມານ 19-21% ຂອງການລົງທຶນລວມ.

» **ນະໂຍບາຍ, ໂຄງການ**:

- ການລົງທຶນຈາກງົບປະມານລັດຕ້ອງສຸມໃສ່ປັບປຸງແລະສ້າງພື້ນຖານໂຄງລ່າງທາງດ້ານເສດຖະກິດ-ສັງຄົມທີ່ຈຳເປັນພື້ນຖານ ເປັນຕົ້ນ: ຖະໜົນຫົນທາງ, ຊົນລະປະທານ, ໂຮງຮຽນ, ໂຮງໝໍ, ສຸກສາລາ, ນໍ້າລິນ, ສູນຄົ້ນຄ້ວາເຕັກນິກກະ ສິກຳ; ຊຸກຍູ້ສົ່ງເສີມດ້ານເຕັກນິກ-ວິຊາການ, ການພັດທະນາເຂດຊົນນະບົດ ແລະ ເຂດຫ່າງໄກສອກຫລີກ.
- ການລົງທຶນຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມ ແມ່ນສຸມໃສ່ພັດທະນາຂົງເຂດສັງຄົມ ໂດຍສະເພາະ ການພັດທະນາຊັບພະຍາກອນມະນຸດຕິດພັນກັບການປັບປຸງຊີວິດການເປັນຢູ່ ແລະ ການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ແກ້ໄຂບັນຫາການຂາດສານອາຫານ, ປັບປຸງສຸກຂະອານາໄມ.
- ການລົງທຶນຂອງເອກກະຊົນພາຍໃນ ແລະ ຕ່າງປະເທດ ແມ່ນສຸມໃສ່ຂະແໜງພັດທະນາເສດຖະກິດ ເປັນຕົ້ນ ການກໍ່ສ້າງເຂື່ອນໄຟຟ້າ, ການພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ, ລົງທຶນໃນຂະແໜງອຸດສະຫາກຳປຸງແຕ່ງ, ວັດສະດຸກໍ່ສ້າງ ແລະ ອຸດສະຫະກຳປະກອບກົນຈັກ, ພັດທະນາການທ່ອງທ່ຽວ. ການກໍ່ສ້າງທາງລົດໄຟ ແລະ ອື່ນໆ.
- ແຫຼ່ງທຶນຈາກລະບົບການເງິນ-ເງິນຕາ (ສິນເຊື່ອຂອງຂະແໜງທະນາຄານ ແລະ ລະດົມທຶນຈາກຕະຫລາດຫຼັກຊັບ) ແມ່ນສະໜອງ ແລະ ລະດົມທຶນໃຫ້ວິສາຫາກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ເພື່ອຊຸກຍູ້ສົ່ງເສີມ ແລະ ພັດທະນາການຜະລິດກະສິກຳ, ອຸດສະຫາກຳປຸງແຕ່ງ-ການຄ້າ, ຫັດຖະກຳ ແລະ ການບໍລິການເພື່ອສ້າງຖານການຜະລິດໃຫ້ເຂັ້ມແຂງ, ມີຄວາມຫຼາກຫຼາຍ, ສ້າງວຽກເຮັດງານທຳ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ.

## 3.4.4. ແຜນວຽກຈຸດສຸມ 4: ການພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນຢ່າງມີຄວາມສອດຄ່ອງ ແລະ ສົມດູນ.

» **ທິດທາງ**:

ການ ພັດທະນາ ຂອງ ບັນດາ ເຂດ ແຄວ້ນ ແລະ ທ້ອງ ຖິ່ນຕ້ອງມີ ຄວາມ ສອດຄ່ອງກົມກຽວ ໂດຍອີງໃສ່ທ່າແຮງໄດ້ປຽບແລະຈຸດພິເສດຂອງແຕ່ລະພາກ, ແຕ່ລະທ້ອງຖິ່ນ. ກຳນົດເອົາເມືອງ ຫລື ເຂດທີ່ມີເງື່ອນໄຂ, ມີທ່າແຮງໄດ້ປຽບ ແລະມີຄວາມອາດສາມາດເຂົ້າເຖິງການພັດທະນາຂອງບັນດາປະເທດໃນພາກພື້ນເພື່ອສ້າງເສດຖະກິດທົ່ວເຂດໃຫ້ເປັນແບບຢ່າງທີ່ມີກຳລັງແຮງໃຫ້ແກ່ບັນດາເມືອງ ແລະ ເຂດອ້ອມຂ້າງອື່ນໆໄດ້ ຮັບຜົນປະໂຫຍດ ຈາກການພັດທະນາດັ່ງກ່າວ (ໂດຍສະເພາະ ບັນດາເມືອງລຽບຕາມຊາຍແດນ). ນຳໃຊ້ທ່າແຮງໄດ້ປຽບທາງດ້ານທີ່ຕັ້ງພູມສາດ ແລະ ທີ່ຕັ້ງເສດຖະກິດ, ຄວາມອາດສາມາດບົ່ມຊ້ອນ ທາງດ້ານແຫຼ່ງຊັບພະຍາກອນທຳມະຊາດ ແ ລະ ຊັບພະຍາກອ ນມະນຸດເພື່ ອ ພັດທ ະນາບັນ ດາຂະແໜງການ ຜະລິດ ແລະ ບໍລິກາ ນທີ່ມີທ່າແຮງໃຫ້ມີມູນຄ່າ ເພີ່ມສູງຂຶ້ນເພື່ອຕອບສະໜອງຄວາມຕ້ອງການພາຍໃນ ແລະ ສົ່ງອອກຕ່າງປະເທດ. ພ້ອມດຽວກັນນັ້ນ, ກໍ່ສຸມໃສ່ການລົງທຶນຢ່າງເໝາະສົມ ເພື່ອຊຸກຍູ້ການພັດທະນາເສດຖະກິດຢູ່ບັນດາເຂດທີ່ມີການພັດທະນາທີ່ຫລ້າຊ້າ ເພື່ອສ້າງເງື່ອນໄຂໃຫ້ເຂດດັ່ງກ່າວມີການພັດທະນາໄວຂຶ້ນ ແລະມີຄຸນນະພາບຂຶ້ນ ເພື່ອຫລຸດຜ່ອນຄວາມແຕກໂຕນໃນການພັດທະນາ.

ເສີມຂະຫຍາຍທ່າແຮງຂອງແຕ່ລະເຂດເພື່ອສ້າງທ່າກ້າວກະໂດດໃຫ້ທົ່ວເສດຖະກິດບົນພື້ນຖານຂອງການເພີ່ມທະວີສາຍພົວພັນເປີດກວ້າງລະຫວ່າງບັນດາເຂດກັບການພັດທະນາເສດຖະກິດສາກົນ ແລະ ຄວາມຕ້ອງການຂອງຕະຫຼາດຕ່າງ ປະເທດ. ຫັນປ່ຽນໂຄງສ້າງເສດຖະກິດຂອງແຕ່ລະເຂດແຄວ້ນຕາມທິດເພີ່ມອັດຕາສ່ວນຂະແໜງການທີ່ບໍ່ແມ່ນກະສິກຳທີ່ມີທ່າແຮງໄດ້ປຽບທຽບທາງດ້ານມູນຄ່າເພີ່ມ ດ້ວຍການເອົາໃຈໃສ່ພັດທະນາ ສົ່ງເສີມບັນດາອາຊີບຫັດຖະກຳ, ຕໍ່າແຜ່ນທີ່ເປັນເອກະລັກຂອງລາວ; ປະຕິບັດເປົ້າໝາຍຍົກສູງສະມັດຕະພາບຂອງການຜະລິດກະສິກຳໃຫ້ສູງຂຶ້ນເພື່ອຫັນແຮງງານທີ່ເຮັດວຽກກະສິກຳຢູ່ຊົນນະບົດໄປເຮັດວຽກໃນຂະແໜງອຸດສາຫະກຳ ແລະ ການບໍລິການຫຼາຍຂຶ້ນ.

ສຸມໃສ່ການຈັດສັນເຂດການພັດທະນາຕ່າງໆໃຫ້ມີຄວາມສອດຄ່ອງກັບທ່າແຮງໄດ້ປຽບຂອງແຕ່ລະເຂດແຄ້ວນເພື່ອສົ່ງເສີມການຜະລິດ ແລະ ການລົງທຶນ ຢ່າງມີຈຸດສຸມ ເຊັ່ນ: ເຂດການຜະລິດກະສິກຳ, ເຂດຜະລິດອຸດສາຫະກຳປຸງແຕ່ງ, ເຂດການທ່ອງທ່ຽວ, ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ ແລະ ເຂດທີ່ຢູ່ອາໄສ; ປັບປຸງພື້ນຖານລະບົບໂຄງລ່າງຕາມທິດທາງເຊື່ອມໂຍງ

ເສດຖະກິດຂອງພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນເສັ້ນທາງ, ສະໜາມບິນ, ສະໜາມກິລາ ແລະ ອື່ນໆ, ເພີ່ມທະວີການປະສານງານ ແລະ ແລກປ່ຽນບົດຮຽນລະຫວ່າງເຂດແຄວ້ນ ແລະ ບັນດາແຂວງພາຍໃນພາກໃນການພັດທະນາ ເພື່ອຜົນປະໂຫຍດຮ່ວມກັນ, ປັບປຸງສະພາບແວດລ້ອມການລົງທຶນໃຫ້ແທດເໝາະກັບສະພາບຕົວຈິງ ເພື່ອສົ່ງເສີມການປະກອບທຸລະກິດ ແລະ ການຈ້າງງານ.

### ກ. ເຂດພາກເໜືອ:

ຍູ້ແຮງການຂະຫຍາຍຕົວທາງດ້ານເສດຖະກິດຂອງເຂດຢ່າງຕັ້ງໜ້າ ແລະ ຄາດຄະເນອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP) ຮອດປີ 2020 ບໍ່ຫຼຸດ 9,5% ,ໃນນັ້ນ: ກະສິກຳເພີ່ມຂຶ້ນສະເລ່ຍ 6%, ກວມເອົາ 34% ຂອງລວມຍອດຜະລິດຕະພັນພາຍໃນ ໃນປີ 2020; ອຸດສາຫະກຳເພີ່ມຂຶ້ນສະເລ່ຍ 11%, ກວມເອົາ 30% ຂອງລວມຍອດຜະລິດຕະພັນພາຍໃນໃນປີ 2020; ແລະ ການບໍລິການເພີ່ມຂຶ້ນສະເລ່ຍ 12%, ກວມເອົາ 36% ຂອງລວມຍອດຜະລິດຕະພັນພາຍໃນໃນປີ 2020; ສູ້ຊົນເຮັດໃຫ້ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນໃຫ້ໄດ້ 2.085 ໂດລາສະຫະລັດ. ແນ່ໃສ່ອັດຕາສ່ວນແຮງງານທີ່ບໍ່ແມ່ນຂະແໜງກະສິກຳໃຫ້ຫຼາຍຂຶ້ນ. ຈັງຫວະການຂະຫຍາຍຕົວຂອງພົນລະເມືອງສະເລ່ຍປະມານ 2,4% ຕໍ່ປີ ແລະ ຮອດປີ 2020 ຄາດວ່າພົນລະເມືອງປະມານ 2.879.594 ລ້ານຄົນ. ສູ້ຊົນຫຼຸດຜ່ອນອັດຕາຄວາມທຸກຍາກໃຫ້ຕໍ່າກວ່າ 7,72% ໃນປີ 2020.

» **ເຂດຜະລິດກະສິກຳ**:

ຊຸກຍູ້ການປູກເຂົ້າເພື່ອຄໍ້າປະກັນສະບຽງອາຫານ ຕາມທິດຊີ້ນຳຂອງລັດຖະບານ ໂດຍສະເພະ ບັນດາທົ່ງພຽງນ້ອຍ ແລະ ທົ່ງພຽງກາງ ຂອງບັນດາແຂວງພາກເໜືອທີ່ມີທ່າແຮງ ແລະ ເງື່ອນໄຂດີ ເປັນຕົ້ນ: ແຂວງຫຼວງນໍ້າທາ, ບໍ່ແກ້ວ, ໄຊຍະບູລີ ແລະ ແຂວງວຽງຈັນ ໂດຍເລັ່ງໃສ່ຜະລິດເຂົ້າເພື່ອເປັນສິນຄ້າສົ່ງອອກໃຫ້ປະເທດຈີນ ແລະ ປະເທດທີ່ໃກ້ຄຽງໂດຍນຳໃຊ້ແນວພັນເຂົ້າທີ່ຕະຫລາດຕ້ອງການ. ໃນ 5 ປີ ສູ້ຊົນຜະລິດເຂົ້າ ໃຫ້ສາມາດບຸກເບີກ ເນື້ອທີ່ 979.225 ເຮັກຕາ, ຄາດຄະເນຜົນຜະລິດ 3.853.821 ໂຕນ; ສືບຕໍ່ພັດທະນາ ແລະ ສົ່ງເສີມການຜະລິດກະສິກຳຕິດພັນກັບການປຸງແຕ່ງຕາມທິດສີຂຽວ ແລະ ຍືນຍົງ ເພື່ອເປັນແຫລ່ງສະບຽງອາຫານໃຫ້ແກ່ບັນດາແຂວງພາກເໜືອ ແລະ ຂາຍອອກເປັນສິນຄ້າ ໂດຍການສ້າງສູນການຜະລິດ ແລະ ສູນທົດລອງແນວພັນພືດ-ສັດ, ສູນສາທິດການສົ່ງເສີມເຕັກນິກວິທະຍາສາດເພື່ອສົ່ງເສີມແນວພັນທີ່ດີຢ່າງກວ້າງຂວາງ, ເລັ່ງປັບປຸງຊະນິດແນວພັນພືດລົ້ມລຸກ, ໄມ້ເສດຖະກິດ ແລະ ສັດ ເປັນຕົ້ນແມ່ນສ້າງສູນແນວພັນເຂົ້າທີ່ດີມີຄຸນນະພາບຢູ່ແຂວງຫຼວງນໍ້າທາ, ໄຊຍະບູລີ ແລະ ແຂວງວຽງຈັນ; ສູນຜະລິດແນວພັນສາລີຢູ່ແຂວງຫົວພັນ, ໄຊຍະບູລີ, ຫຼວງນໍ້າທາ ແລະ ບໍ່ແກ້ວ; ສ້າງສູນການຜະລິດແນວພັນມັນຕົ້ນ ຢູ່ແຂວງອຸດົມໄຊ ແລະ ຫຼວງນໍ້າທາ, ສ້າງສູນຜະລິດແນວພັນຖົ່ວເຫຼືອງຢູ່ແຂວງຫົວພັນ ແລະ ແຂວງຊຽງຂວາງ. ສ້າງໂຮງງານຜະລິດຊາຢູ່ເມືອງຜົ້ງສາລີ ແລະ ເມືອງຍອດອູ ແຂວງ ຜົ້ງສາລີ; ນອກນັ້ນ, ຍັງສ້າງສູນຜະລິດແນວພັນພືດເສດຖະກິດຢູ່ບັນດາແຂວງພາກເໜືອເຊັ່ນ: ມັນ, ກ້ວຍ, ພືດຜັກແລະໄມ້ໃຫ້ໝາກ. ສົ່ງເສີມປະຊາຊົນປູກຫຍ້າເພື່ອສະໜອງໃຫ້ສູນລ້ຽງງົວພັນຢູ່ແຂວງຊຽງຂວາງ ແລະ ຫົວພັນ; ສ້າງສູນແນວພັນໝູຢູ່ເມືອງໄຊ ແຂວງອຸດົມໄຊ; ສ້າງສູນສາທິດລ້ຽງປາ ແລະ ຜະລິດແນວພັນປານໍ້າຈືດຢູ່ແຂວງໄຊຍະບູລີ ແລະ ແຂວງວຽງຈັນ. ທັງໝົດນີ້ກໍ່ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫຼາດພາຍໃນເຂດ, ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ແຂວງໄຊສົມບູນ ແລະ ບັນດາແຂວງອື່ນໆ, ເຂດທ່ອງທ່ຽວ ແລະ ເພື່ອສົ່ງອອກໃຫ້ປະເທດໃກ້ຄຽງ.

ສ້າງເຂດປູກໄມ້ເສດຖະກິດ ເປັນຕົ້ນແມ່ນໄມ້ສັກ, ໄມ້ດູລາຍ, ໄມ້ດູ່, ໄມ້ໂລ່ງເລງ ແລະ ໄມ້ຈັນທອມ ແລະ ໄມ້ຊະນິດອື່ນໆທີ່ມີມູນຄ່າສູງໂດຍຈັດແບ່ງເຂດເພາະປູກຢູ່ແຂວງຫຼວງພະບາງ, ຫຼວງນໍ້າທາ, ບໍ່ແກ້ວ, ໄຊຍະບູລີ, ແຂວງວຽງຈັນ ແລະ ແຂວງຊຽງຂວາງ.

ສ້າງເຂດປູກພືດທີ່ໃຫ້ພະລັງງານທົດແທນເປັນຕົ້ນແມ່ນໝາກເຍົາ ຢູ່ແຂວງຫຼວງນໍ້າທາ, ບໍ່ແກ້ວ, ອຸດົມໄຊ, ໄຊຍະບູລີ, ວຽງຈັນ, ຫຼວງພະບາງແລະເຂດລຽບຕາມລ່ອງແມ່ນໍ້າຂອງເຂດຮ່ອມພູທີ່ມີຄວາມເໝາະສົມ. ສ້າງເຂດປູກໄມ້ປ່ອງ ແລະ ຫວາຍ ໃນເນື້ອທີ່ 50.000 ຮຕ ໂດຍຖືເອົາແຂວງຫົວພັນເປັນຈຸດສຸມຕົ້ນຕໍ ແລະສາມາດພັດທະນາໄດ້ໃນເຂດອື່ນໆທີ່ມີຄວາມເໝາະສົມ.

ສົ່ງເສີມໃຫ້ບໍລິສັດເປັນຜູ້ນຳໜ້າໃນການສ້າງສູນສາທິດການເພາະປູກຢາງພາລາ ແລະ ນຳພາຊູກຍູ້ປະຊາຊົນປູກຢາງພາລາຢູ່ແຂວງຫຼວງນໍ້າທາ, ບໍ່ແກ້ວ, ອຸດົມໄຊ, ໄຊຍະບູລີ, ວຽງຈັນ, ຫຼວງພະບາງ ແລະ ຜົ້ງສາລີ.

ສ້າງເຂດສາທິດປ່າໄມ້ ໂດຍອີງຕາມຈຸດພິເສດຂອງຊັບພະຍາກອນທຳມະຊາດແຕ່ລະທ້ອງຖິ່ນ, ເລືອກເອົາເຂດທີ່ມີສະພາບແວດລ້ອມ ແລະ ເງື່ອນໄຂອັນເໝາະສົມ ໂດຍຈັດແບ່ງເຂດເພາະປູກຢູ່ແຂວງຫຼວງພະບາງ ແລະ ບໍ່ແກ້ວ ເຊັ່ນ: ໄມ້ຈັນທອມ, ຕົ້ນຄັ່ງ ແລະ ກໍ່ສາມາດພັດທະນາຢູ່ເຂດອື່ນໆທີ່ມີສະພາບແວດລ້ອມອັນເໝາະສົມຂອງບັນດາແຂວງພາກເໜືອ.

» **ເຂດຜະລິດອຸດສາຫະກຳ**:

ຂະຫຍາຍການຈັດວາງກຳລັງການຜະລິດໃນຮູບແບບໃໝ່ຕາມແນວຄິດ 1 3 3 4 (1 ສູນກາງເສດຖະກິດ, 3 ແລວທາງເສດຖະກິດ, 3 ເຂດຈຸດສຸມອຸດສະຫະກຳການຜະລິດ ແລະ 4 ເຂດຮ່ວມມືເສດຖະກິດຊາຍແດນ) ໃຫ້ປະກົດຜົນເປັນຈິງເທື່ອລະກ້າວ, ສ້າງໃຫ້ພາກເໜືອກາຍເປັນເຂດເສດຖະກິດລວມສູນ ແລະ ເຊື່ອມໂຍງໃນລະດັບສູງ, ມີຕ່ອງໂສ້ທີ່ຕິດພັນກັນເພື່ອໃຫ້ເປັນແຮງຍູ້ດັນການພັດທະນາ.

ອຸດສາຫະກຳປຸງແຕ່ງຖືເປັນອຸດສາຫະກຳປາຍແຫຼມທີ່ສາມາດສ້າງມູນຄ່າເພີ່ມສູງໃຫ້ແກ່ການຂະຫຍາຍຕົວຂອງບັນດາແຂວງພາກເໜືອ ເຊັ່ນ:

ອຸດສາຫະກຳປຸງແຕ່ງຜະລິດຕະພັນໄມ້ສຳເລັດຮູບແລະ ເຄື່ອງເຟີນິເຈີ ເຊັ່ນ: ເມືອງໄຊ, ເມືອງຫລວງພະບາງ, ເມືອງຊຳເໜືອ ແລະ ເມືອງໄຊຍະບູລີ ຊຶ່ງແຕ່ລະແຂວງໃຫ້ມີໂຮງງານປຸງແຕ່ງໄມ້ແປຮູບມາດຕະຖານ ແລະ ໂຮງງານເຟີນີເຈີ 1-2 ແຫ່ງທີ່ສາມາດແຂ່ງຂັນໄດ້ໃນລະດັບສູງ;

ອຸດສາຫະກຳປຸງແຕ່ງຢາງພາລາ: ສົ່ງເສີມຮູບແບບທຸລະກິດຫຼາຍປະເພດ ໂດຍສະເພາແມ່ນ ຮູບແບບບໍລິສັດ+ທີ່ດິນ+ຄອບຄົວກະສິກອນ ເຊິ່ງເຮັດໃຫ້ຂະແໜງກະສິກຳ, ການຄ້າ ແລະ ອຸດສາຫະກຳຫັນເປັນລະບົບດຽວກັນທີ່ມີຮູບແບບບໍລິການທີ່ຫຼາກຫຼາຍ, ສ້າງຕັ້ງໂຮງງານປຸງແຕ່ງຢາງພາລາທີ່ໄດ້ມາດຖານ ແລະ ມີກຳລັງການຜະລິດທີ່ພຽງພໍກັບຄວາມຕ້ອງ ການຕະຫຼາດຢູ່ເມືອງຫຼວງນ້ຳທາ, ຫ້ວຍຊາຍ, ເມືອງໄຊ ແລະ ເມືອງໄຊຍະບູລີ.

ອຸດສາຫະກຳປຸງແຕ່ງຄັ່ງ, ໄມ້ປ່ອງ, ຫວາຍ: ສ້າງຕັ້ງສູນທົດລອງ-ເພາະລ້ຽງຄັ່ງຢູ່ແຂວງຫຼວງພະບາງ ແລະ ແຂວງ

ໄຊຍະບູລີ ແຂວງລະ 200 ຮຕ ເນື່ອງຈາກເປັນເຂດທີ່ມີຊັບພະຍາກອນຄັ່ງທີ່ອຸດົມສົມບູນຢູ່ພາກເໜືອ, ສ້າງໂຮງງານປຸງແຕ່ງຄັ່ງໃຫ້ໄດ້ 1 ແຫ່ງຢູ່ແຂວງທີ່ມີເງື່ອນໄຂ ໂດຍສະເພາະ ແຂວງຫລວງພະບາງ ໃຫ້ມີກຳລັງການຜະລິດ 5.000 ໂຕນຕໍ່ປີ. ສູນຫັດຖະກຳຈັກສານໄມ້ປ່ອງ, ຫວາຍເພື່ອຜະລິດເປັນສິນຄ້າທີ່ເປັນເອກະລັກສະເພາະ ແລະ ສ້າງມູນຄ່າເພີ່ມຢູ່ແຂວງຫົວພັນ ແລະ ແຂວງວຽງຈັນ.

ອຸດສາຫະກຳປຸງແຕ່ງອາຫານແລະນ້ຳມັນພືດ: ສ້າງຕັ້ງໂຮງງານບົດແປ້ງໃຫ້ໄດ້ 1-2 ແຫ່ງຢູ່ແຕ່ລະແຂວງ (ແຂວງຜົ້ງສາລີ, ອຸດົມໄຊ, ໄຊຍະບູລີ ແລະ ຊຽງຂວາງ); ສ້າງໂຮງງານຜະລິດນ້ຳມັນພືດຢູ່ເມືອງຫ້ວຍຊາຍ, ເມືອງໄຊຍະບູລີ.

ອຸດສາຫະກຳປຸງແຕ່ງຜະລິດຕະພັນ ແລະ ອາຫານສັດ: ສ້າງໂຮງງານຜະລິດຫົວອາຫານສັດຂະໜາດກຳລັງຜະລິດ 200.000 ໂຕນຕໍ່ປີ ຢູ່ເມືອງວຽງຄຳ ແລະ ເມືອງຫຼວງພະບາງແຂວງລະ 1 ແຫ່ງ, ສ້າງໂຮງງານປຸງແຕ່ງອາຫານສັດ ຂະໜາດ 100.000 ໂຕນຕໍ່ປີ ຢູ່ເມືອງໄຊ ແຂວງ ອຸດົມໄຊ, ສ້າງໂຮງງານປຸງແຕ່ງຫຍ້າລ້ຽງສັດ ຢູ່ເມືອງຊຳເໜືອ ແຂວງຫົວພັນ ແລະ ເມືອງໂພນສະຫວັນ ແຂວງຊຽງຂວາງ.

ອຸດສະຫະກຳປຸງແຕ່ງໝາກໄມ້ ແລະ ພືດຜັກ: ສ້າງໂຮງງານປຸງແຕ່ງຢູ່ເມືອງ ຫລວງພະບາງ, ຫ້ວຍຊາຍ ແລະ ໄຊຍະບູລີ.

ອຸດສາຫະກຳປຸງແຕ່ງອ້ອຍ, ຊາ: ສ້າງໂຮງງານນ້ຳຕານທີ່ມີຂະໜາດການຜະລິດ 200 ໂຕນ ຕໍ່ປີ ຢູ່ແຂວງຜົ້ງສາລີ ແລະຫຼວງນ້ຳທາ ແຂວງລະ 1 ແຫ່ງ, ສ້າງໂຮງງານປຸງແຕ່ງຜະລິດຕະພັນຊາພື້ນເມືອງ ຢູ່ເມືອງຜົ້ງສາລີ ຫຼື ເມືອງຍອດອູ ແຂວງ ຜົ້ງສາລີ ແລະ ແຂວງຊຽງຂວາງ ເພື່ອເກັບຊື້ໃບຊາຈາກແຂວງໃກ້ຄຽງເຂົ້າສູ່ວິສາຫະກິດທີ່ມີແລ້ວໃຫ້ຫລາຍຂຶ້ນ.

ການຜະລິດວັດສະດຸກໍ່ສ້າງໂດຍສຸມໃສ່ການຜະລິດຊີມັງ ເປັນຕົ້ນ ຢູ່ເມືອງລອງ, ນ້ຳບາກ, ໄຊຍະບູລີ, ວຽງທອງ ແລະ ວັງວຽງ.

ພັດທະນາອຸດສາຫະກຳເຄມີ ເປັນຕົ້ນ ເຄມີກູ້ລົວ, ດ່າງ, ເກືອໂຊດຽມ, ປຸຍກາລີ ໂດຍສະເພາະ ຢູ່ແຂວງວຽງຈັນ.

» **ອຸດສາຫະກຳພະລັງງານໄຟຟ້າແລະບໍ່ແຮ່**:

ສຸມໃສ່ພັດທະນາເຂື່ອນໄຟຟ້ານ້ຳຕົກຂະໜາດໃຫຍ່, ກາງ ແລະ ນ້ອຍຕາມຈຸດທີ່ເປັນສາຂາແມ່ນ້ຳຂອງ ເຊັ່ນ: ເຂື່ອນໄຟຟ້ານ້ຳທາ 2, ເຂື່ອນໄຟຟ້ານ້ຳຂອງຈຸດປາກແບ່ງ ແຂວງອຸດົມໄຊ, ນ້ຳຊຳ ແຂວງຫົວພັນ ແລະ ນ້ຳງື່ມ 4A ແຂວງຊຽງຂວາງ. ນອກຈາກນັ້ນ, ກໍ່ຂະຫຍາຍສະຖານນີໄຟຟ້າ, ຕາຂ່າຍ ແລະ ສາຍສົ່ງໄປສູ່ເຂດຊົນນະບົດຫ່າງໄກສອກຫລີກ, ສຸມໃສ່ພັດທະ ນາແຫຼ່ງພະລັງງານໄຟຟ້າເພື່ອສົ່ງອອກ.

ສຳລັບຈຸດສຸມດ້ານອຸດສະຫະກຳບໍ່ແຮ່: ໂຄງການສຳຫລວດສ້າງແຜນທີ່ໃນມາດຕາສ່ວນ 1:200.000 ຂອງພາກ ເໜືອໃຫ້ສຳເລັດ ໂດຍສຸມໃສ່ ພາກເໜືອຂອງແຂວງອຸດົມໄຊ, ຊຽງຂວາງ ແລະ ແຂວງວຽງຈັນ, ພາກຕາເວັນຕົກຂອງແຂວງຫົວພັນ ແລະ

ລິເລີ່ມການສ້າງແຜນທີ່ຂອງເຂດທີ່ຮູ້ຈຸດປະກົດຂອງແຮ່ທາດ ໃນອັດຕາສ່ວນ 1:50.000. ສືບຕໍ່ສຸມໃສ່ຂະຫຍາຍການຂຸດຄົ້ນ-ນຳໃຊ້ ເກືອກາລີ ຢູ່ແຂວງວຽງຈັນ.

ອຸດສະຫະກຳປຸງແຕ່ງໂລຫະສີດຳ ໂດຍສ້າງໂຮງງານຫລອມເຫລັກທີ່ມີຂະໜາດການຜະລິດ 500.000 ໂຕນຕໍ່ປີ ຢູ່ ແຂວງຊຽງຂວາງ ແລະ ແຂວງວຽງຈັນ ໂດຍນຳໃຊ້ຊັບພະຍາກອນແຮ່ເຫລັກ ຢູ່ພູຍອນ ແຂວງຊຽງຂວາງ, ແຮ່ເຫລັກຢູ່ຜາເຫລັກ ແຂວງວຽງຈັນ.

ອຸດສະຫະກຳປຸງແຕ່ງໂລຫະສີ: ຂະຫຍາຍຂະໜາດການຂຸດຄົ້ນແຮ່ທອງຢູ່ຜາເອີນສຸຍ ແຂວງຫລວງນ້ຳທາ ໃຫ້ໄດ້ແຮ່ທາດເຂັ້ມຂຸ້ນ 100.000 ໂຕນຕໍ່ປີຂຶ້ນໄປ, ຂະຫຍາຍຂະໜາດການຂຸດຄົ້ນແຮ່ສັງກະສີຢູ່ ໄກໂສ (ເມືອງກາສີ) ແລະ ຜາຫລວງ ແຂວງວຽງຈັນ ໃຫ້ຫລາຍຂຶ້ນ. ເລືອກເອົາສະຖານທີ່ ທາງພາກເໜືອຂອງແຂວງຊຽງຂວາງ, ແຂວງອຸດົມໄຊ ແລະ ພາກຕາເວັນອອກຂອງແຂວງຫົວພັນ ເປັນບ່ອນສ້າງໂຮງງານຫລອມຊືນ ແລະ ສັງກະສີ.

ສືບຕໍ່ຂະຫຍາຍໂຮງງານຊີມັງ ວັງວຽງ ຫລັງທີ 2 ໃຫ້ມີກຳລັງການຜະລິດ 800.000 ໂຕນຕໍ່ປີ, ສ້າງໂຮງງານຊີມັງຫລັງໃໝ່ຢູ່ ແຂວງຫລວງພະບາງ, ອຸດົມໄຊ ແລະ ໂຮງງານຜະລິດວັດສະດຸທີ່ມີສ່ວນປະກອບຂອງຊີມັງ ຢູ່ ແຂວງວຽງຈັນ ແລະ ຊຽງຂວາງ ໂດຍສຸມໃສ່ໃຫ້ມີຄຸນນະພາບສູງຂຶ້ນກວ່າເກົ່າ.

» **ເຂດການຄ້າ, ບໍລິການ ແລະ ການທ່ອງທ່ຽວ**:

ສ້າງ ແລະ ປັບປຸງລະບົບການບໍລິການຜ່ານຕາມເສັ້ນທາງເລກທີ 3, ເລກທີ 2 ແລະ ເລກທີ 13 ໃຕ້ ໃຫ້ເປັນລະບົບຄົບຊຸດ, ສະດວກແລະວ່ອງໄວ. ພັດທະນາບັນດາຮູບແບບການບໍລິການທີ່ມີຄຸນນະພາບສູງຢູ່ແຂວງຫຼວງພະບາງ, ຫຼວງນ້ຳທາ ແລະ ຊຽງຂວາງ. ສ້າງຕັ້ງສູນກາງເສດຖະກິດ ແລະ ການບໍລິການຢູ່ແຂວງຫຼວງນ້ຳທາ ໂດຍຖືເອົາການພັດທະນາກະສິກຳ, ການບໍລິການຂົນສົ່ງ, ການຄ້າ ແລະ ການທ່ອງທ່ຽວເປັນຈຸດສຸມ.

ການຮ່ວມມືດ້ານການບໍລິການການຄ້າ: ປັບປຸງລະບົບກົນໄກການສະໜອງ ແລະ ຊື້ຂາຍສິນຄ້າລະຫວ່າງແຂວງຕໍ່ແຂວງໃຫ້ສະດວກ ໂດຍສະເພາະສະບຽງອາຫານ (ເຂົ້າ, ພືດ ແລະ ສັດ) ເພື່ອດຸນດ່ຽງໃຫ້ພຽງພໍກັບຄວາມຕ້ອງການຢູ່ພາຍໃນພາກ ແລະ ຈຳກັດການ ນຳເຂົ້າ ສິນ ຄ້າທີ່ ຈຳ ເປັນຈາກຕ່າງປະເທດ ໂດຍພັດທະນາການຄ້າພາຍໃນເຂດໃຫ້ແຂງແຮງ, ສ້າງລະບົບຕະຫຼາດຢູ່ເຂດຊົນນະບົດ, ເຂດພູສູງ. ປະສົມປະສານການພັດທະນາເສດຖະກິດຊາຍແດນກັບການເປີດກວ້າງການພົວພັນແລກປ່ຽນສິນຄ້າ ແລະ ການບໍລິການຜ່ານແດນ ເຊັ່ນ: ຢູ່ຫ້ວຍຊາຍ, ໄຕຈາງ, ນາແມວ, ບໍ່ເຕັນ...

ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການທ່ອງທ່ຽວ ແລະ ສ້າງສາຍພົວພັນການທ່ອງທ່ຽວກັບບັນດາແຂວງຕ່າງໆໃນພາກເໜືອ, ປະເທດລຸ່ມແມ່ນ້ຳຂອງ ແລະ ອາຊຽນ ໂດຍສູ້ຊົນໃຫ້ສາມາດດຶງດູດນັກທ່ອງທ່ໜວໃຫ້ເພີ່ມຂຶ້ນສະເລ່ຍຢ່າງໜ້ອຍ 10% ຕໍ່ປີຂຶ້ນໄປ, ສ້າງລາຍຮັບໃຫ້ເພີ່ມຂຶ້ນສະເລ່ຍ 15% ຕໍ່ປີຂຶ້ນໄປ ໂດຍຕ້ອງສຸມໃສ່ພັດທະນາສູນກາງທ່ອງທ່ຽວແຫ່ງຊາດ ຢູ່ແຂວງຫຼວງພະບາງ, ປະສົມປະສານການພັດທະນາການທ່ອງທ່ຽວທຳມະຊາດກັບການທ່ອງທ່ຽວປະຫວັດສາດ ແລະ ວັດທະນະທຳ-ຮີດຄອງປະເພນີ ຂອງຊົນເຜົ່າ. ຂະຫຍາຍເສັ້ນທາງທ່ອງທ່ຽວເຖິງສູນກາງເສດຖະກິດຊາຍແດນ ແລະ ທ່ອງທ່ຽວຜ່ານແດນເຊື່ອມຕໍ່ກັບ 4 ປະເທດອ້ອມຂ້າງ, ສ້າງພື້ນຖານໃຫ້ແກ່ການເຊື່ອມໂຍງການທ່ອງທ່ຽວຂອງອະນຸພາກພື້ນລຸ່ມແມ່ນ້ຳຂອງ, ສ້າງລະບົບຄວາມປອດໄພໃນການທ່ອງທ່ຽວໃຫ້ໄດ້ມາດຖານ, ຍົກລະດັບການຝຶກອົບຮົມໃຫ້ແກ່ບຸກຄະລາກອນ, ສ້າງລະບົບການບໍລິການຂໍ້ມູນຂ່າວສານການທ່ອງທ່ຽວຜ່ານເຄື່ອຂ່າຍເອເລັກໂທຣນິກ.

ການບໍລິການ ແລະ ຂົນສົ່ງທາງນ້ຳ: ເພື່ອເຮັດໃຫ້ການຄົມມະນາຄົມທາງນ້ຳມີປະສິດທິຜົນ, ເຮັດໃຫ້ການເຊື່ອມໂຍງ ແລະ ການພົວພັນທັງພາຍໃນ ແລະ ພາຍນອກຂອງບັນດາເມືອງທີ່ລຽບຕາມແຄມແມ່ນ້ຳຂອງໄດ້ຮັບການພັດທະນາ ຊຶ່ງຕ້ອງມີທ່າເຮືອທີ່ເປັນສູນກາງສຳຄັນໜຶ່ງແຫ່ງ ແລະ ທ່າເຮືອສຳຮອງຫລາຍແຫ່ງເພື່ອຮອງຮັບການຄົມມະນາຄົມທາງນ້ຳ ໂດຍສຸມໃສ່ ທ່າເຮືອເມືອງຫ້ວຍຊາຍ, ຫລວງພະບາງ ແລະ ປາກແບງ ໃຫ້ກາຍເປັນທ່າເຮືອສູນກາງຂອງລຳແມ່ນ້ຳຂອງ; ສະໜອງການຂົນສົ່ງທາງເຮືອໃຫ້ໄດ້ມາດຕະຖານໃນລະດັບສູງ ເຊັ່ນ: ອຸປະກອນການຍົກຍ້າຍສິນຄ້າ, ສາງເກັບມ້ຽນສິນຄ້າຜ່ານຊົ່ວຄາວ (Inland Container Deport ຂຽນຫຍໍ້ ICD) ທີ່ສາມາດຮອງຮັບສິນຄ້າໄດ້ກວ່າໝື່ນໂຕນ; ເພີ່ມຂີດຄວາມສາມາດໃນດ້ານຕ່າງໆຂອງບັນດາທ່າເຮືອທີ່ມີແລ້ວ ແລະ ສ້າງຂຶ້ນໃໝ່ ເຊັ່ນ: ທ່າເຮືອບ້ານໄຊ, ຊຽງກົກ, ບ້ານມອນ, ເມືອງຄອບ, ທ່າຊວ່ງໃຫ້ຢູ່ໃນລະດັບພໍໃຊ້, ສ້າງສາງສິນຄ້າ ແລະ ອຸປະກອນກວດກາຕ່າງໆ ເພື່ອສ້າງຄວາມສະດວກໃຫ້ແກ່ການສັນຈອນຂອງສິນຄ້າ ແລະ ຜູ້ໂດຍສານ.

ສ້າງໃຫ້ມີສູນການຄ້າປອດພາສີ ແລະ ສູນບໍລິການຢູ່ບັນດາທ່າເຮືອທີ່ສ້າງຂຶ້ນໃໝ່ ເຊັ່ນ: ທ່າເຮືອທ່າເດື່ອ, ປາກຄອນ, ປາກລາຍ, ບ້ານວັງ ແລະ ວຽງຈັນໃຫ້ເປັນທ່າເຮືອລະດັບພໍໃຊ້ໄດ້ ແລະ ສ້າງລະບົບບໍລິການສາທາລະນະຕ່າງໆຢູ່ບັນດາທ່າເຮືອເຫລົ່ານີ້.

» **ເຂດການພັດທະນາທາງເສດຖະກິດແລະທີ່ຢູ່ອາໄສ**:

ໂດຍຖືເອົາການພັດທະນາເຂດເສດຖະກິດຂອງບັນດາຕົວເມືອງເປັນແກນກາງເນື່ອງຈາກວ່າເປັນເຂດທີ່ມີພື້ນຖານໂຄງລ່າງ ແລະການບໍລິການທີ່ທັນສະໄໝ, ມີບັນດາອຸດສາຫະກຳທີ່ເປັນຈຸດສຸມແລະສາມາດສ້າງມູນຄ່າເພີ່ມສູງເຊັ່ນ: ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ-ປ່າໄມ້, ໄຟຟ້າ, ຂຸດຄົ້ນແລະປຸງແຕ່ງແຮ່ທາດ (ຄຳ, ກົ່ວ, ເຫຼັກ, ແຮ່ບົກຊິດ...), ອຸດສາຫະກຳຜະລິດວັດຖຸກໍ່ສ້າງ, ກຸ່ມອຸດສາຫະກຳແລະເຂດຜະລິດເພື່ອສົ່ງອອກເພື່ອສ້າງແຮງກະຕຸ້ນແກ່ການພັດທະນາເສດຖະກິດຂອງພາກເໜືອ, ສ້າງພາກເໜືອຕາມທິດພັດທະນາ 1 3 3 4 ຄື: ສຸມໃສ່ການພັດທະນາ 1 ສູນກາງເສດຖະກິດຂອງພາກເໜືອຢູ່ແຂວງຫຼວງພະບາງ, ສຸມໃສ່ພັດທະນາ 3 ເຂດອຸດສາຫະກຳ ຢູ່ 3 ແຂວງ (ແຂວງວຽງຈັນ, ຊຽງຂວາງ ແລະ ອຸດົມໄຊ), ສຸມໃສ່ 3 ແລວທາງເສດຖະກິດ (ບໍ່ເຕັນ-ວຽງຈັນ, ຫວ້ຍຊາຍ-ໄຕຈາງ ແລະ ເມືອງເງິນ-ໜອງແຮດ); ແລະ 4 ເຂດຮ່ວມມືເສດຖະກິດຊາຍແດນ (ບໍ່ເຕັນ, ຫວ້ຍຊາຍ-ຕົ້ນເຜິ້ງ, ໜອງແຮດ ແລະ ແກ່ນທ້າວ). ພ້ອມທັງເຂດເສດຖະກິດທີ່ສ້າງຕັ້ງໃໝ່ເຊັ່ນ: ເຂດເສດຖະກິດພິເສດໜອງຄ້າງ ເມືອງຊຳໃຕ້ ແລະ ເຂດເສດຖະກິດສະເພາະຄັງໜອງຫຼວງຢູ່ເມືອງແປກ.

**ການຈັດສັນທີ່ຢູ່ອາໄສ**: ເຕົ້າໂຮມປະຊາຊົນມາຢູ່ໃນເຂດທີ່ມີເງື່ອນໄຂສະດວກໃນການພັດທະນາ, ລຽບຕາມເສັ້ນທາງຫຼືເຂດທີ່ໃກ້ກັບຕົວເມືອງ (ຊານເມືອງ), ຍົກຍ້າຍປະຊາຊົນຜູ້ທຸກຍາກທີ່ອາໄສຢ່າງກະແຈກກະຈາຍໃນເຂດພູສູງເຂົ້າມາອາໄສໃນເຂດທີ່ກຳນົດໄວ້ເພື່ອປັບປຸງພື້ນຖານການດຳລົງຊີວິດໃຫ້ດີຂຶ້ນ, ໂດຍການສົ່ງເສີມເຕັກນິກທາງດ້ານການປູກຝັງ ແລະ ລ້ຽງສັດ. ການພັດທະນາຫັດຖະກຳ ແລະ ການບໍລິການການທ່ອງທ່ຽວເຊິ່ງຈະເຮັດໃຫ້ປະຊາຊົນທີ່ຍົກຍ້າຍເຂົ້າມາອາໄສຕາມເຂດທີ່ກຳນົດໄວ້ສາມາດເຂົ້າຮ່ວມຂະບວນການພັດທະນາການຜະລິດຢ່າງທົ່ວເຖິງ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກເທື່ອລະກ້າວ. ສ້າງຕັ້ງກຸ່ມບ້ານຈຸດສຸມໃຫ້ແກ່ການຈັດສັນທີ່ຢູ່ອາໄສ ແລະ ສ້າງວຽກເຮັດງານທຳໃຫ້ປະຊາຊົນ, ສ້າງຕັ້ງຕົວເມືອງຊົນນະບົດທີ່ເປັນຈຸດສຸມໃຫ້ມີຫຼາຍອາຊີບ, ສົ່ງເສີມອຸດສາຫະກຳປຸງແຕ່ງເພື່ອຫັນແຮງງານທີ່ເຮັດວຽກຢູ່ໃນກະສິກຳຊົນນະບົດມາເຮັດວຽກຂະແໜງອຸດສາຫະກຳ ແລະ ການບໍລິການຫຼາຍຂຶ້ນ; ເລັ່ງໃສ່ພັດທະນາ 6 ຈຸດສຸມ ຢູ່ແຂວງວຽງຈັນ (ກຸ່ມບ້ານລອ່ງແຈ້ງ, ກຸ່ມບ້ານເມືອງອອມ, ກຸ່ມບ້ານເມືອງອ່າວເມືອງໄຊສົມບູນ ແລະ ກຸ່ມຜາລະແວກເມືອງຮົ່ມ), ແຂວງຊຽງຂວາງ (ກຸ່ມບ້ານສັນຫຼວງເມືອງຄູນ ແລະ ກຸ່ມບ້ານນ້ຳສຽມເມືອງຜາໄຊ).

» **ການຫລຸດຜ່ອນຄວາມທຸກຍາກ**:

ຊຸກຍູ້ສົ່ງເສີມຈັດສັນປະຊາຊົນຈາກບ່ອນທີ່ຢູ່ກະແຈກກະຈາຍມາສູ່ເຂດຈຸດສຸມເພື່ອແກ້ໄຂຄວາມທຸກຍາກ ໂດຍເລືອກເອົາເຂດທີ່ມີເງື່ອນໄຂສະດວກໃນການພັດທະນາ, ເຂດທີ່ລຽບຕາມເສັ້ນທາງ ຫລື ເຂດທີ່ໃກ້ກັບຕົວເມືອງ (ຊານເມືອງ), ຈັດສັນອາຊີບຄົງທີ່ຢ່າງເໝາະສົມໃຫ້ປະຊາຊົນມີວຽກເຮັດງານທຳ ເປັນຕົ້ນ ແມ່ນປະຊາຊົນໃນເຂດພູສູງ. ສຸມໃສ່ຫລຸດຜ່ອນອັດຕາຄອບຄົວທຸກຍາກ ແລະ ບ້ານທຸກຍາກໃຫ້ຕ່ຳກວ່າ 5% ແລະ 10% ຕາມລຳດັບໃນປີ 2020.

» **ການພັດທະນາພື້ນຖານໂຄງລ່າງ**:

ເພື່ອຮອງຮັບແກ່ການເຊື່ອມໂຍງກັບສາກົນແລະເຊື່ອມຕໍ່ລະຫວ່າງເສັ້ນທາງຫຼວງຫາເມືອງແລະເຂດຈຸດສຸມໂດຍຖືເອົາການພັດທະນາເທດສະບານເປັນໃຈກາງຈຶ່ງສຸມໃສ່ການພັດທະນາພື້ນຖານໂຄງລ່າງທີ່ຈຳເປັນດັ່ງນີ້:

- **ທາງບົກ**:

ຍົກລະດັບທາງຫຼວງແຫ່ງຊາດເລກທີ 13 ເໜືອ (ຊ່ວງປາກມອງ-ອຸດົມໄຊ) ເຊື່ອມຕໍ່ໃສ່ 1B; ຍົກລະດັບທາງຫຼວງແຫ່ງຊາດເລກທີ 19 ຫາຫາດສາ-ປ່າຄາ (ຊາຍແດນລາວ-ຈີນ); ສືບຕໍ່ກໍ່ສ້າງເສັ້ນທາງແຕ່ເມືອງແອດແຂວງຫົວພັນ (ຊາຍແດນລາວ-ຫວຽດນາມ) ຮອດເມືອງທ່າໂທມ ແຂວງຊຽງຂວາງ; ສືບຕໍ່ກໍ່ສ້າງເສັ້ນທາງແຕ່ເມືອງສິງແຂວງຫຼວງນ້ຳທາ (ຊາຍແດນລາວ-ຈີນ) ຜ່ານແຂວງບໍ່ແກ້ວຫາເມືອງແກ່ນທ້າວແຂວງໄຊຍະບູລີ (ຊາຍແດນລາວ-ໄທ).

ປັບປຸງ ແລະ ສ້າງເສັ້ນທາງເຊື່ອມຕໍ່ບັນດາທາງຫຼວງແຫ່ງຊາດໃຫ້ມີຄວາມສະດວກສະບາຍແລະທາງທ້ອງຖິ່ນຕ່າງໆທີ່ມີຄວາມຈຳເປັນ ໃຫ້ມີປະສິດທິຜົນສູງ ເຊັ່ນ: ຍົກລະດັບເສັ້ນທາງແຕ່ເມືອງຫ້ວຍຊາຍ-ປາກທາ-ຜາອຸດົມ-ປາກແບງອຸດົມໄຊ, ໂຄງການພັດທະນາຕົວເມືອງຫ້ວຍຊາຍ ແຂວງ ບໍ່ແກ້ວ (ສ້າງແຫລ່ງທ່ອງທ່ຽວແຄມຂອງເຂດໜອງຖານ, ຕ້ານເຈື່ອນແຄມຂອງ ແລະ ປັບປຸງທ່າເຮືອ ບ້ານຂອນແກ້ວ) ທຶນສົມທົບເອດີບີ, ໂຄງການກໍ່ສ້າງຍົກລະດັບເສັ້ນທາງປູຢາງສອງຊັ້ນ ກິໂລ 59 ທາງ 13 ເໜືອ ຫາດ່ານພູຫລັກຄຳ ເມືອງນາໝໍ່ (ຊາຍແດນ ສປຈີນ).

- **ພັດທະນາທາງນໍ້າ**:

ປັບປຸງເສັ້ນທາງເດີນເຮືອຕາມລໍານໍ້າຂອງ ແລະ ການປ້ອງກັນຕາຝັ່ງເຈື່ອນເປັນເປົ້າໝາຍ, ຖືເອົາມາດຕະຖານນໍ້າໜັກ 500 ໂຕນ ສໍາລັບເຮືອບັນທຸກສິນຄ້າທາງນໍ້າແຕ່ຫ້ວຍຊາຍ-ຫຼວງພະບາງ ໃນໄລຍະ 300 ກມ, ກໍ່ສ້າງອຸປະກອນທີ່ຕິດພັນໃຫ້ສໍາເລັດ ເພື່ອໃຫ້ການຄົມມະນາຄົມຂົນສົ່ງເຊື່ອມຕໍ່ທາງນໍ້າລະຫວ່າງລາວ-ໄທ-ມຽນມ້າ ແລະ ຈີນກາຍເປັນເສັ້ນທາງເດີນເຮືອລະດັບສາກົນ.

- **ພັດທະນາສະໜາມບິນ**:

ສ້າງສະໜາມບິນແຫ່ງໃໝ່ຢູ່ຫ້ວຍຊາຍ ແຂວງບໍ່ແກ້ວ, ສະໜາມບິນໜອງຄ້າງ ແຂວງຫົວພັນ ເພື່ອປະກອບເຂົ້າໃນການພັດທະນາເຂດເສດຖະກິດພິເສດ, ສຶກສາການກໍ່ສ້າງສະໜາມບິນເຊໂນ, ສຶກສາຄວາມເປັນໄປໄດ້ໃນການກໍ່ສ້າງສະໜາມບິນ ເມືອງບຸນເໜືອແຂວງຜົ້ງສາລີ, ພ້ອມທັງຂະຫຍາຍສະຖານນີແລະລານຈອດຍົນ, ສະຖານນີຄຸ້ມຄອງ, ສາງນໍ້າມັນ, ໂທລະຄົມສື່ສານ, ການບັນຊາແລະອື່ນໆ, ພ້ອມກັນນັ້ນກໍ່ຕ້ອງປັບປຸງບັນດາດ່ານຊາຍແດນໃຫ້ກາຍເປັນດ່ານສາກົນ.

ພ້ອມກັນນັ້ນກໍ່ຕ້ອງໄດ້ເພີ່ມທະວີການປະສານງານ ແລະ ແລກປ່ຽນບົດຮຽນລະຫວ່າງເຂດແຄ້ວນແລະບັນດາແຂວງພາຍໃນພາກໃນການພັດທະນາເພື່ອຜົນປະໂຫຍດຮ່ວມກັນ, ປັບປຸງສະພາບແວດລ້ອມການລົງທຶນໃຫ້ແທດເໝາະກັບສະພາບຕົວຈິງເພື່ອສົ່ງເສີມການປະກອບທຸລະກິດ ແລະ ການຈ້າງງານອີກດ້ວຍ.

## ຂ. ເຂດພາກກາງ:

ດ້ວຍທີ່ຕັ້ງພິເສດໃນອະນຸພາກພື້ນແມ່ນໍ້າຂອງ, ເຂດພາກກາງ ຖືເປັນເຂດສູນກາງດ້ານເສດຖະກິດຂອງປະເທດ ປະຕິບັດການຫັນປ່ຽນໂຄງສ້າງເສດຖະກິດ ຕາມທິດຫັນເປັນທັນສະໄໝ, ສ້າງຜະລິດຕະພັນສິນຄ້າຫຼາກຫຼາຍ, ບົນພື້ນຖານການຊຸກຍູ້ຢ່າງແຮງການພັດທະນາບັນດາຂະແໜງການອຸດສາຫະກໍາ ທີ່ມີເຕັກໂນໂລຊີສູງ, ມີປະສິດທິຜົນ ແລະ ສ້າງມູນຄ່າເພີ່ມສູງ ໃຫ້ແກ່ເສດຖະກິດ. ໃນນັ້ນ ສໍາຄັນກວ່າໝູ່ ແມ່ນອຸດສາຫະກໍາຜະລິດໄຟຟ້າ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ, ຜະລິດຕະພັນກະສິກໍາປ່າໄມ້ທີ່ມີການປຸງແຕ່ງ, ການທ່ອງທ່ຽວ ແລະ ການຄ້າສາກົນ ເພື່ອດຶງດູດແຮງງານທີ່ບໍ່ແມ່ນຂະແໜງກະສິກໍາໃຫ້ຫຼາຍຂຶ້ນ.

ເສີມຂະຫຍາຍບົດບາດການເປັນສູນກາງ ທາງດ້ານເສດຖະກິດ, ການເມືອງ, ວັດທະນະທໍາ, ສັງຄົມ ແລະ ເຕັກນິກວິທະຍາສາດຂອງນະຄອນຫຼວງວຽງຈັນ ແລະ ທ່າແຮງໄດ້ປຽບຂອງແຂວງສະຫວັນນະເຂດໃນຂອດການພົວພັນເສດຖະກິດກັບບັນດາປະເທດໃນແນວຕາເວັນອອກ-ຕາເວັນຕົກ, ສຸມໃສ່ບັນດາຂະແໜງອຸດສາຫະກໍາທີ່ນໍາໃຊ້ ເຕັກໂນໂລຊີສູງ, ຜະລິດສິນຄ້າເພື່ອການສົ່ງອອກ.

ສູ້ຊົນເຮັດໃຫ້ການຂະຫຍາຍຕົວທາງດ້ານເສດຖະກິດຢູ່ໃນລະດັບສູງແລະໝັ້ນທ່ຽງໂດຍເລັ່ງໃສ່ພັດທະນາອຸດສາຫະກໍາການປຸງແຕ່ງທີ່ດຶງດູດແຮງງານຫຼາຍເພື່ອແນ່ໃສ່ເຮັດໃຫ້ອັດຕາສ່ວນແຮງງານໃນບັນດາຂະແໜງທີ່ບໍ່ແມ່ນກະສິກໍາເພີ່ມຂຶ້ນ.ອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP) ຮອດປີ 2020 ບໍ່ຫຼຸດ 10,63% ໃນນັ້ນ: ໃນນັ້ນ: ກະສິກໍາເພີ່ມຂຶ້ນສະເລ່ຍ 6,4%, ກວມເອົາ 25,58% ຂອງລວມຍອດຜະລິດຕະພັນພາຍໃນໃນປີ 2020; ອຸດສາຫະກໍາເພີ່ມຂຶ້ນສະເລ່ຍ 13,05%, ກວມເອົາ 39,94% ຂອງລວມຍອດຜະລິດຕະພັນພາຍໃນໃນປີ 2020; ແລະ ການບໍລິການເພີ່ມຂຶ້ນສະເລ່ຍ 11,12%, ກວມເອົາ 34,49% ຂອງລວມຍອດຜະລິດຕະພັນພາຍໃນໃນປີ 2020; ສູ້ຊົນເຮັດໃຫ້ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນໃຫ້ໄດ້ 3.784 ໂດລາສະຫະລັດ.  ຈັງຫວະການຂະຫຍາຍຕົວຂອງພົນລະເມືອງສະເລ່ຍປະມານ 2,28% ຕໍ່ປີ ແລະ ຮອດປີ 2020 ຄາດວ່າພົນລະເມືອງປະມານ 2.760.341 ລ້ານຄົນ. ສູ້ຊົນເຮັດໃຫ້ອັດຕາຄວາມທຸກຍາກຂອງພາກ ກາງຢູ່ໃນລະດັບຕໍ່າກ່ວາ 1% ໃນປີ 2020.

### » ເຂດກະສິກໍາ-ປ່າໄມ້:

ຖືເອົາແຂວງຄໍາມ່ວນ ແລະ ແຂວງສະຫວັນນະເຂດ ເປັນແຂວງຜະລິດເຂົ້າເພື່ອຄໍ້າປະກັນສະບຽງອາຫານຕາມທິດທາງຂອງລັດຖະບານໂດຍສະເພາະເຂດທົ່ງພຽງເຊບັ້ງໄຟແຂວງຄໍາມ່ວນຢູ່ຈຸດສຸມວັງວຽງຜີ ເມືອງເຊບັ້ງໄຟ, ຈຸດສຸມນາວາງ ເມືອງໜອງບົກ, ເຂດນໍາໃຊ້ນໍ້າໃຕ້ເຂື່ອນ ເມືອງຍົມມະລາດ ແລະ ເມືອງຫີນບູນ;  ຈຸດສຸມເຂດທົ່ງພຽງເຊບັ້ງຫຽງແຂວງສະຫວັນນະເຂດແມ່ນເຂດພູເຮືອຊາວວາ ເມືອງໄຊບູລີ, ເຂດຫ້ວຍທວດ ເມືອງຈໍາພອນ ແລະ ເຂດທ່າລະຫານໍ້າເພື່ອຫັນການຜະລິດໄປສູ່ລະບົບຊົນລະກະເສດໃນຕໍ່ໜ້າ. ມີການນໍາໃຊ້ເຕັກໂນໂລຢີສູງ, ນໍາໃຊ້ເມັດພັນທີ່ມີຄຸນນະພາບເພື່ອຮັບປະກັນການສະໜອງເຂົ້າໃຫ້ທົ່ວປະເທດ ແລະ ສາມາດສົ່ງອອກໄດ້. ສູ້ຊົນຜະລິດເຂົ້າລວມໃນ 5 ປີ ຕໍ່ໜ້າ ສາມາດບຸກ ເບີກໃຫ້ໄດ້ເນື້ອທີ່ 3.094.590 ເຮັກຕາ, ຄາດຄະເນຜົນຜະລິດ 13.108.999 ໂຕນ.

ສົ່ງເສີມການປູກອ້ອຍ, ມັນຕົ້ນຢູ່ແຂວງບໍລິຄຳໄຊ, ຄຳມ່ວນ ແລະ ແຂວງສະຫວັນນະເຂດ, ຊຸກຍູ້ການປູກຢາສູບຢູ່ແຂວງບໍລິຄຳໄຊເພື່ອເປັນສິນຄ້າ, ສົ່ງເສີມການພືດ-ຜັກ ຢູ່ເຂດເມືອງຫາດຊາຍຟອງ, ນະຄອນຫຼວງວຽງຈັນ ແລະ ເມືອງບໍລິຄັນ ແຂວງບໍລິຄຳໄຊ.

ການລ້ຽງສັດ: ສົ່ງເສີມການລ້ຽງສັດແບບເປັນຟາມໃຫ້ຫຼາຍຂຶ້ນໂດຍມີການນຳໃຊ້ແນວພັນປັບປຸງ ເປັນຕົ້ນ ແມ່ນໝູ,ໄກ່ ຢູ່ນະຄອນຫຼວງວຽງຈັນ, ບໍລິຄຳໄຊແລະສະຫວັນນະເຂດເພື່ອຕອບສະໜອງຄວາມຕ້ອງການຕະຫຼາດແລະອຸດສະຫະກຳປຸງແຕ່ງ, ການລ້ຽງປາກະຊັງຕາມເຂດລຳນ້ຳເຊືອງ, ນ້ຳຫີນບູນຢູ່ຈຸດນະຄອນຫຼວງວຽງຈັນ, ຄຳມ່ວນ ເປັນຕົ້ນ.

ສືບຕໍ່ຈັດສັນທີ່ດິນ, ປົກປ້ອງ ແລະ ສ້າງປ່າທົດແທນຄືນໃໝ່, ດຳເນີນການມອບດິນມອບປ່າ ພ້ອມດຽວກັນກັບດຳເນີນວຽກງານສົ່ງເສີມກະສິກຳ-ປ່າໄມ້, ແນະນຳເຕັກນິກການປຸງແຕ່ງຜະລິດຕະພັນຈາກປ່າ ເພື່ອແນໃສ່ປ່ຽນແປງແບບແຜນການດຳລົງຊີວິດ ແລະ ວິທີການທຳມາຫາກິນ, ຍົກລະດັບລາຍໄດ້ຂອງປະຊາຊົນເຂດພູດອຍເທື່ອລະກ້າວ.

ປັບປຸງ ແລະ ຍົກລະດັບດ່ານສາກົນລະດັບຕ່າງໆຢູ່ຂອບເຂດທົ່ວປະເທດໃຫ້ມີລະບົບສຸຂະອະນາໄມພືດ ທີ່ມີຄຸນນະພາບ ແລະ ໄດ້ຕາມມາດຕະຖານສາກົນ.

» **ເຂດອຸດສາຫະກຳ**:

ສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕື່ມເພື່ອດຶງດູດນັກລົງທຶນພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນໃນເຂດ ນິຄົມອຸດສາຫະກຳ ແລະ ການຄ້າຫຼັກ 21 ຢູ່ ນະຄອນຫລວງວຽງຈັນ, ເຂດເສດຖະກິດພິເສດສະຫວັນ-ເຊໂນ ແຂວງ ສະຫວັນນະເຂດ ແລະ ເຂດເສດຖະກິດສະເພາະພູຂຽວ ແຂວງ ຄຳມ່ວນ ເພື່ອສ້າງເປັນສູນກາງຮ່ວມມືທາງດ້ານເສດຖະກິດ, ອຸດສາຫະກຳ-ການຄ້າ, ການເງິນ, ການບໍລິການ ແລະ ການພັດທະນາດ້ານເຕັກໂນໂລຊີທີ່ທັນສະໄໝ ເຊັ່ນ: ສົກສາການສ້າງໂຮງງານທົ່ວອາຫານສັດທີ່ທັນສະໄໝ ຢູ່ເຂດພາກກາງ. ນຳໃຊ້ທ່າແຮງທີ່ໄດ້ປຽບທາງດ້ານທີ່ຕັ້ງໃນການເປັນໃຈກາງ ແລະ ທາງຜ່ານຂອງອານຸພາກພື້ນ ເພື່ອເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ, ທັງເປັນແຫຼ່ງສະໜອງວຽກເຮັດງານທຳ ແລະ ຝຶກອົບຮົມໃຫ້ແກ່ພະນັກງານ, ກຳມະກອນໃຫ້ມີຄວາມຮູ້, ຄວາມສາມາດເພື່ອແຂ່ງຂັນ ແລະ ຕອບສະໜອງຕໍ່ຄວາມຕ້ອງການຂອງຕະຫຼາດອາຊຽນໄດ້.

» **ເຂດການຄ້າ, ການບໍລິການ ແລະ ການທ່ອງທ່ຽວ**:

ປະຕິບັດນະໂຍບາຍຊຸກຍູ້, ສົ່ງເສີມ ແລະ ພັດທະນາການຄ້າຫຼາຍພາກສ່ວນເພື່ອເປີດກວ້າງແລະທັນເປັນທັນສະໄໝ ເພື່ອຕອບສະໜອງຄວາມຕ້ອງການໃນການເຊື່ອມໂຍງ. ພັດທະນາພື້ນຖານໂຄງລ່າງ ແລະ ຕະຫຼາດສິນຄ້າລະຫວ່າງແຂວງ, ເມືອງໃຫ້ມີຄວາມເຂັ້ມແຂງ ແລະ ຫລາກຫລາຍ. ເປີດກວ້າງການພົວພັນດ້ານການຄ້າ ກັບບັນດາຕະຫຼາດໃນພາກພື້ນ. ສຸມໃສ່ການພັດທະນາຕະຫຼາດຕາມເສັ້ນທາງຕາເວັນອອກ-ຕາເວັນຕົກ. ເປີດກວ້າງຂໍ້ມູນການຕະຫຼາດກັບບັນດາວິສາຫະກິດ ແລະ ບັນດານັກລົງທຶນພາຍໃນປະເທດ ແລະ ຕ່າງປະເທດໃຫ້ເປັນລະບົບປົກກະຕິ ແລະ ທັນສະພາບການ.

ດ້ານໄປສະນີ ແລະ ໂທລະຄົມມະນາຄົມ: ສ້າງສູນກາງດ້ານໄປສະນີເຊື່ອມໂຍງກັບອະນຸພາກພື້ນ ແລະ ສ້າງສູນໂທລະຄົມມະນາຄົມໃຫ້ເປັນພື້ນຖານໂຄງລ່າງແຫ່ງຊາດທີ່ເຂັ້ມແຂງ.

ສືບຕໍ່ພັດທະນາການບໍລິການໂລຈິດສະຕິກ (Logistic) ໂດຍສະເພາະການອຳນວຍຄວາມສະດວກດ້ານການຄ້າ ແລະ ການຂົນສົ່ງຜ່ານແດນຕາມເສັ້ນທາງເລກ 8, 9 ແລະ ເລກທີ 12ໃຫ້ວ່ອງໄວຂຶ້ນກວ່າເກົ່າ.

ປັບປຸງຄຸນນະພາບ, ພື້ນຖານໂຄງລ່າງ ແລະ ອຸປະກອນຮັບໃຊ້ຕ່າງໆເພື່ອຍົກລະດັບຂອດການບໍລິການຢູ່ດ່ານຊາຍແດນຕ່າງໆ ເຊັ່ນ: ດ່ານສະຫວັນ-ລາວບາວ, ດ່ານນ້ຳພ້າວ ແລະ ດ່ານອື່ນໆ ໃຫ້ມີຄວາມວ່ອງໄວ ແລະ ຮອງຮັບໄດ້ຕາມມາດຕະຖານສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການທ່ອງທ່ຽວ, ການຄ້າແລະການບໍລິການຂົນສົ່ງ.

ປັບປຸງເສັ້ນທາງເຂົ້າແຫຼ່ງທ່ອງທ່ຽວ, ການຂົນສົ່ງ, ທີ່ພັກເຊົາ ແລະ ສ້າງຜູ້ນຳທ່ຽວໃຫ້ໄດ້ທັງປະລິມານ ແລະ ຄຸນນະ ພາບ, ພັດທະນາແຫຼ່ງທ່ອງທ່ຽວຂອງແຕ່ລະທ້ອງຖິ່ນທີ່ມີຢູ່ແລ້ວໃຫ້ເປັນທີ່ຮູ້ຈັກຫຼາຍຂຶ້ນ, ສ້າງສູນບໍລິການຂໍ້ມູນຂ່າວສານການທ່ອງທ່ຽວ, ແລກປ່ຽນບົດຮຽນການທ່ອງທ່ຽວລະຫວ່າງພາກ ແລະ ສ້າງແຜນການທ່ອງທ່ຽວທີ່ເຊື່ອມກັບພາກພື້ນ ແລະສາກົນ.

ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ມີຄວາມຫລາກຫລາຍ ແລະ ມີສີສັນຕາມລະດູການທ່ອງທ່ຽວ ໂດຍສຸມໃສ່ການທ່ອງທ່ຽວເຊື່ອມຕໍ່ 3 ປະເທດ ລາວ-ໄທ-ຫວຽດນາມ ຕາມເສັ້ນທາງເລກທີ 8, 9 ແລະ ເລກ 12 ໃຫ້ມີລັກສະນະຄົບວົງຈອນຕື່ມ.

» **ການພັດທະນາພື້ນຖານໂຄງລ່າງ**:

ສືບຕໍ່ປັບປຸງ ແລະ ຍົກລະດັບພື້ນຖານໂຄງລ່າງທີ່ຈຳເປັນ, ເຊື່ອມໂຍງຕາມແລວຕາເວັນອອກ-ຕາເວັນຕົກ ແລະ ສາມາດນຳໃຊ້ຮ່ວມກັນລະຫວ່າງບັນດາແຂວງ ເປັນຕົ້ນ ແມ່ນເສັ້ນທາງເລກ 8, 9, 12 ແລະ ທາງ 13 ໃຕ້, ສ່ວນທາງ 13 ເໜືອຄວນປັບປຸງໃຫ້ເປັນເສັ້ນທາງດ່ວນແຕ່ຫຼວງພະບາງ-ນະຄອນຫຼວງເພື່ອຮັບຮອງການຂົນສົ່ງສິນຄ້າ, ເປັນຈຸດເຊື່ອມຕໍ່ເສດຖະກິດພາກເໜືອ ແລະ ພາກໃຕ້ ແລະ ພັດທະນາເສັ້ນທາງທ່ອງທ່ຽວຕາມແລວຕາເວັນອອກ-ຕາເວັນຕົກເຊື່ອມກັບການທ່ອງທ່ຽວຂອງບັນດາປະເທດໃກ້ຄຽງ.

ຈັດຕັ້ງປະຕິບັດໂຄງການກໍ່ສ້າງເສັ້ນທາງປູຢາງສອງຊັ້ນ ເລກທີ 8534 ແຍກທາງ 13 ໃຕ້ ຄຳປຸ່ນ-ແກ້ງເປ ເມືອງ ເຊບັ້ງໄຟ (ຄຳມ່ວນ), ໂຄງການກໍ່ສ້າງຂົວເບຕົງ 18 ແຫ່ງ ຕາມເສັ້ນທາງ 11E ແຕ່ເທດສະບານ ເມືອງເກສອນ-ເຮືອນຫີນ; ນອກຈາກນັ້ນ ກໍ່ຍັງມີໂຄງການຮ່ວມມືໃນການພັດທະນາຂອງໂຄງການສາກົນ (ODA), ໂຄງການກໍ່ສ້າງເສັ້ນທາງປູຢາງຂົ້ວແຕ່ 3 ແຍກສີໄຄ - 3 ແຍກສີເກີດ, ໂຄງການກໍ່ສ້າງເບຕົງ ແຕ່ 4 ແຍກໄຟແດງຕາມມິໄຊ ຫາ ສາມແຍກສີເກີດ, ໂຄງການກໍ່ສ້າງທາງຍຸດທະສາດຫີນເຫີບ - ຊະນະຄາມ.

» **ການພັດທະນາດ້ານສັງຄົມ**:

ພັດທະນາໂຄງລ່າງພື້ນຖານສັງຄົມ, ການຂະຫຍາຍການສຶກສາ ແລະ ສະທາລະນະສຸກ. ປະຕິບັດນະໂຍບາຍຊ່ວຍ ເຫຼືອ ແລະ ສຸມການພັດທະນາຢູ່ເຂດທຸກຍາກ ແລະ ເຂດຫຍຸ້ງຍາກຫລາຍ ໂດຍສະເພາະໃຫ້ບູລິມະສິດພິເສດ ໃຫ້ແກ່ເຂດຫຍຸ້ງຍາກຢູ່ຕາມຊາຍແດນ. ເພີ່ມທະວີການລົງທຶນໃຫ້ແກ່ບັນດາໂຄງການແຫ່ງຊາດທີ່ມີຄວາມຈຳເປັນຮີບດ່ວນຢູ່ຂົງເຂດສັງຄົມ.

### ຄ. ເຂດພາກໃຕ້

ຍູ້ແຮງການຂະຫຍາຍຕົວທາງດ້ານເສດຖະກິດໃຫ້ຢູ່ໃນຈັງຫວະໄວ ໂດຍເລັ່ງໃສ່ພັດທະນາອຸດສາຫະກຳປຸງແຕ່ງທີ່ດຶງດູດແຮງງານຫຼາຍ ແນໃສ່ເຮັດໃຫ້ອັດຕາສ່ວນແຮງງານໃນບັນດາຂະແໜງກະສິກຳເພີ່ມຂຶ້ນ. ສູ້ຊົນຮອດປີ 2020 ອັດຕາການຂະຫຍາຍຕົວຂອງລວມຍອດຜະລິດຕະພັນພາຍໃນ (GDP) ບໍ່ຫຼຸດ 12,13% ໃນນັ້ນ: ກະສິກຳ ເພີ່ມຂຶ້ນສະເລ່ຍ 7,78%, ກວມເອົາ 29,49% ຂອງລວມຍອດຜະລິດຕະພັນພາຍໃນໃນປີ 2020; ອຸດສາຫະກຳເພີ່ມຂຶ້ນສະເລ່ຍ 14,07%, ກວມເອົາ 33,73% ຂອງລວມຍອດຜະລິດຕະພັນພາຍໃນໃນປີ 2020 ແລະ ການບໍລິການເພີ່ມຂຶ້ນສະເລ່ຍ 14,87%, ກວມເອົາ 36,78% ຂອງລວມຍອດຜະລິດຕະພັນພາຍໃນໃນປີ 2020. ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນໃຫ້ໄດ້ 2.169 ໂດລາສະຫະລັດ. ຈັງຫວະການຂະຫຍາຍຕົວຂອງພົນລະເມືອງສະເລ່ຍປະມານ 2,03% ຕໍ່ປີ ແລະ ຮອດປີ 2020 ຄາດວ່າພົນລະເມືອງ ປະມານ 1.473.707 ລ້ານຄົນ. ສູ້ຊົນຫຼຸດຜ່ອນອັດຕາຄວາມທຸກຍາກໃຫ້ຕໍ່າກວ່າ 6,57% ໃນປີ 2020.

» **ເຂດກະສິກຳ-ປ່າໄມ້**:

ສົ່ງເສີມ ແລະຂະຫຍາຍເນື້ອທີ່ ປູກກາເຟ, ໝາກມ່ວງຫິມະພານ, ຜັກປອດສານພິດ, ຊາ, ພິກໄທ ແລະ ໝາກໄມ້ໃຫ້ໝາກຢູ່ແຂວງຈຳປາສັກ, ສາລະວັນ ແລະ ເຊກອງ ໂດຍເນັ້ນໃສ່ຫຼາຍກວ່າໝູ່ຢູ່ເຂດພູພຽງບໍລິເວນ (ເມືອງປາກຊ່ອງ) ເພື່ອຕອບສະໜອງແກ່ອຸດສາຫະກຳປຸງແຕ່ງຜະລິດຕະພັນຈາກກະສິກຳ ແລະ ການສົ່ງອອກ, ປູກເຂົ້າເພື່ອກຸ້ມກິນ ແລະ ທົດແທນການນຳເຂົ້າ ໂດຍສຸມໃສ່ເຂດທົ່ງພຽງຈຳປາສັກ ແລະ ທົ່ງພຽງອັດຕະປື. ສູ້ຊົນຜະລິດເຂົ້າລວມໃນ 5 ປີ ສາມາດບຸກເບີກໃຫ້ໄດ້ເນື້ອທີ່ 1.308.772 ເຮັກຕາ, ຄາດຄະເນຜົນຜະລິດ 6.080.590 ໂຕນ, ການລ້ຽງປາ, ປູກມອນລ້ຽງມ້ອນ ແລະ ການປູກພືດຕະກຸນຖົ່ວຢູ່ເຂດລຽບຕາມແຄມແມ່ນ້ຳຂອງ ກວມເອົາ 8 ຕົວເມືອງຂອງແຂວງຈຳປາສັກ. ສົ່ງເສີມເຕັກນິກ, ແນວພັນສັດ ເພື່ອຂະຫຍາຍການລ້ຽງສັດແບບເປັນຟາມໃຫ້ຫຼາຍຂຶ້ນຢູ່ແຂວງສາລະວັນ ແລະ ເຊກອງ; ຖືເອົາແຂວງຈຳປາສັກເປັນບ່ອນຂະຫຍາຍເນື້ອທີ່ປູກມັນຕົ້ນ ແລະ ໝາກເຍົາ ເພື່ອຜະລິດພະລັງງານທົດແທນໃນອະນາຄົດ. ສຸມໃສ່ແຂວງທີ່ມີທ່າແຮງ ແລະ ເງື່ອນໄຂປູກພືດອຸດສາຫະກຳເພື່ອເປັນສິນຄ້າ ເຊັ່ນ: ຢາງພາລາ ແລະ ອຸດສາຫະກຳຜະລິດເຈ້ຍ ຢູ່ແຂວງອັດຕະປື ເພື່ອສົ່ງອອກດ່ານຊາຍແດນພູເກືອ. ມີນິຕິກຳທີ່ຈະແຈ້ງເພື່ອເປັນບ່ອນອີງໃນການປຶກສາຫາລືຊົດເຊີຍແກ່ປະຊາຊົນທີ່ຖືກກະທົບຈາກໂຄງການປູກໄມ້ອຸດສາຫະກຳ. ສົມທົບການຂຸດຄົ້ນປ່າໄມ້ຢ່າງມີການເລືອກເຟັ້ນໂດຍມີການເບິ່ງແຍງ, ຮັກສາ ແລະ ປູກປ່າຄືນໃນເນື້ອທີ່ໆໄດ້ຂຸດຄົ້ນຢ່າງເໝາະສົມກັບການມອບດິນ, ມອບປ່າ ແລະ ທີ່ຢູ່ອາໄສເປັນຫຼັກແຫຼ່ງ ແລະ ດຳເນີນການຖ່າຍທອດເຕັກນິກກະສິກຳປ່າໄມ້ ໃຫ້ແກ່ປະຊາຊົນເຂດພູດອຍ.

» **ເຂດອຸດສາຫະກຳ**:

ພັດທະນາອຸດສາຫະກຳໄຟຟ້າ, ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ ແລະ ຂຸດຄົ້ນແຮ່ທາດ. ສ້າງຕັ້ງບັນດາກຸ່ມອຸດສາຫະກຳ-ຫັດຖະກຳເທື່ອລະກ້າວ ຕາມເສັ້ນທາງຫຼັກຂອງແລວທາງເສດຖະກິດອາຊີໃຕ້ ແລະ ຕົວເມືອງທີ່ຂຶ້ນກັບບັນດາສາມຫຼ່ຽມພັດທະນາຫວຽດນາມ-ລາວ-ກຳປູເຈຍ ແລະ ໄທ-ລາວ-ກຳປູເຈຍ.

ສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕື່ມເພື່ອດຶງດູດນັກລົງທຶນພາຍໃນ ແລະ ຕ່າງປະເທດ ເຂົ້າມາລົງທຶນຢູ່ເຂດຈັດສັນການຜະລິດອຸດສາຫະກຳຫຼັກ 16 ເມືອງບາຈຽງ, ຫຼັກ 12 ເມືອງໂພນທອງ, ຫຼັກ 30 ເມືອງຊະນະສົມບູນ ແຂວງຈຳປາສັກ, ກໍ່ສ້າງໂຮງຜະລິດໄຟຟ້າຈາກພະລັງງານລົມ ຢູ່ເມືອງດາກຈຶງ ແຂວງ ເຊກອງ, ສືບຕໍ່ກໍ່ສ້າງໂຮງງານຜະລິດພະລັງງານໄຟຟ້າຈາກຖ່ານຫີນ ຢູ່ເມືອງກະລຶມ ແຂວງ ເຊກອງ ແລະ ປັບປຸງເຂດບໍລິການການຄ້າຊາຍແດນວັງເຕົາ ເມືອງໂພນທອງ, ໜອງນົກຂຽນ ເມືອງໂຂງ ໃຫ້ມີຄວາມວ່ອງໄວ ແລະ ທຽມທັນກັບດ່ານສາກົນ.

» **ເຂດການຄ້າ, ການບໍລິການ ແລະການທ່ອງທ່ຽວ**:

ສຸມ ໃສ່ບັນດາຕົວເມືອງທີ່ຮັກ ສາບົດບາດເປັນຂົວຕໍ່ໃນການພັດທະນາ ລະຫວ່າງສູນກາງການຂະຫຍາຍຕົວຂອງເຂດກັບບັນດາເຂດຜະລິດສິນຄ້າ ແລະ ບັນດາຕະຫຼາດບໍລິໂພກພາຍໃນເຂດເຊັ່ນ: ເມືອງສາມັກຄີໄຊ (ອັດຕະປື); ເມືອງຄົງເຊໂດນ (ສາລະວັນ), ເມືອງທ່າແຕງ (ເຊກອງ), ເມືອງປາກຊ່ອງ, ເມືອງປະທຸມພອນ (ຈຳປາສັກ) ຈະປະກອບສ່ວນອັນສຳຄັນໃນການຖ່າຍທອດເຕັກໂນໂລຊີ, ຂະຫຍາຍຕະຫຼາດ ແລະ ຫັນເປັນທັນສະໄໝໃຫ້ແກ່ບັນດາເຂດທີ່ດ້ອຍພັດທະນາໃນພາກໃຕ້.

ກໍ່ສ້າງສູນກາງການຄ້າຢູ່ບັນດ າແຂວງທີ່ມີທ່າແຮງ ເພື່ອເປັນຂົວຕໍ່ກະຈາຍສິນຄ້າພາຍໃນພາກ ແລະ ການຈໍລະຈອນສິນຄ້າໃຫ້ຫລາກຫລາຍຂຶ້ນ ເປັນຕົ້ນໄປສູ່ດ່ານຊາຍແດນ. ເອົາໃຈໃສ່ພັດທະນາລະບົບຕະຫຼາດຊາຍແດນ, ພິເສດແມ່ນຕະຫຼາດຢູ່ດ່ານຊາຍແດນຕິດກັບຫວຽດນາມ ແລະ ກຳປູເຈຍ.

ພັດທະນາສູນກາງການທ່ອງທ່ຽວເຂດ ຢູ່ປາກເຊ ແລະ ຕາມເສັ້ນທາງການທ່ອງທ່ຽວຕໍ່ເຂດ ແລະ ຕາມເສັ້ນທາງຫຼວງ 18B, ທາງຫຼວງ 14A, ທາງເລກທີ 15 ຕິດພັນກັບການທ່ອງທ່ຽວ ໄຕງວຽນ, ທ່ອງທ່ຽວລຽບຊາຍຝັ່ງທະເລພາກກາງຕອນໃຕ້ຂອງຫວຽດນາມ, ທ່ອງທ່ຽວບັນດາແຂວງຕາເວັນອອກສຽງເໜືອຂອງໄທ.

ສຸມໃສ່ພັດທະນາແຫຼ່ງທ່ອງທ່ຽວທີ່ອົງການຢູເນດສໂກ (UNESCO) ໄດ້ຮັບຮອງເອົາເປັນສະຖານທີທ່ອງທ່ຽວມໍລະດົກໂລກ ເປັນຕົ້ນ ວັດພູຈຳປາສັກ, ນ້ຳຕົກຄອນພະເພັງ-ຫຼີ່ຜີ, ເຂດມະຫານະທີສີພັນດອນ ແລະ ພັດທະນາແຫຼ່ງທ່ອງທ່ຽວອື່ນໆ ເຊັ່ນ: ວັດສະແຄະ ແລະ ວັດທາດເຈົ້າໄຊເສດຖາ ເພື່ອດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ.

ເວົ້າລວມແລ້ວ, ຢູ່ແຂວງພາກໃຕ້ຄວນເນັ້ນໃສ່ການສ້າງມູນຄ່າເພີ່ມຂອງຂະແໜງກະສິກຳໂດຍຫັນໄປສູ່ການນຳໃຊ້ເຕັກໂນໂລຢີ ແລະ ການຜະລິດທີ່ສະອາດ ແລະ ມີການປຸງແຕ່ງຫລາຍຂຶ້ນ ເປັນຕົ້ນແມ່ນ: ກາເຟ, ຊາ, ເຂົ້າ, ແລະ ພືດຕະກຸນຖົ່ວອື່ນໆ; ພ້ອມດຽວກັນນັ້ນ, ກໍຕ້ອງສ້າງຕັ້ງໂຮງງານເພື່ອປຸງແຕ່ງຜະລິດຕະພັນ, ສ້າງສູນສີມືແຮງງານເພື່ອສາມາດຜະລິດສີມືແຮງງານທີ່ມີຄວາມຊຳນານງານ, ມີຄວາມອົດທົນ. ປັບປຸງພື້ນຖານໂຄງລ່າງທີ່ອຳນວຍຄວາມສະດວກໃນການພັດທະນາຂະແໜງການທ່ອງທ່ຽວເຊື່ອມຕໍ່ 4 ແຂວງ ແລະ ຂົງເຂດທີ່ມີຄຸນນະພາບ ແລະ ເປັນມິດກັບສິ່ງແວດລ້ອມ.

» **ການພັດທະນາພື້ນຖານໂຄງລ່າງ**:

ພັດທະນາບັນດາເສັ້ນທາງຫຼັກທີ່ຜ່ານເຂດໄປຫາຊາຍແດນຫວຽດນາມ-ລາວ; ຊາຍແດນລາວ-ກຳປູເຈຍ. ພ້ອມດຽວກັນນັ້ນກໍ່ຍົກລະດັບບັນດາເສັ້ນທາງແຂວງ ແລະ ເມືອງ, ຮັບປະກັນ 100% ຈຳນວນເມືອງ ມີເສັ້ນທາງຮອດສູນກາງຕະຫຼອດປີ. ປັບປຸງ ແລະ ປະຕິບັດໂຄງການຊົນລະປະທານ ທີ່ມີຢູ່ໃຫ້ສຳເລັດ; ສ້າງເພີ່ມບັນດາໂຄງການຊົນລະປະທານຂະໜາດກາງ ແລະ ນ້ອຍທີ່ຈຳເປັນ ແລະ ສ້າງລະບົບສະໜອງນ້ຳ ຢູ່ບັນດາຕົວເມືອງ ທີ່ເປັນສົ້ນຕໍ່. ພັດທະນາ 2 ເມືອງພູດອຍຊາຍແດນຫວຽດນາມແລະເມືອງກະລຶມ. ຈັດຕັ້ງປະຕິບັດໂຄງການກໍ່ສ້າງທາງປູຢາງ ພ້ອມຂົວເບຕົງ ເສັ້ນທາງເລກທີ 3.6909 ແຕ່ແຍກທາງເລກທີ 20 ບ້ານເຕເມແບ່ງ - ແຍກທາງ 15 ບ້ານໜອງບົວ (ແຂວງສາລະວັນ); ນອກຈາກນັ້ນ, ກໍ່ຍັງມີໂຄງການຮ່ວມມືໃນການພັດທະນາຂອງໂຄງການສາກົນ, ໂຄງການກໍ່ສ້າງຂົວຂ້າມນ້ຳເຊກອງ.

### 3.4.5. ແຜນວຽກຈຸດສຸມ 5: ພັດທະນາກຳລັງແຮງງານໃຫ້ມີຄຸນນະພາບ, ດຸໝັ່ນ ແລະ ອົດທົນ

» **ທິດທາງ**:

ພັດທະນາກຳລັງແຮງງານໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ໃຫ້ທຽບເທົ່າກັບມາດຕະຖານຂອງແຮງງານສາກົນ, ສ້າງແຮງງານໃນຫລາຍຂົງເຂດ ແລະ ຫຼາຍລະດັບໃຫ້ສອດຄ່ອງ ແລະ ຕິດພັນກັບໂຄງປະກອບເສດຖະກິດໂດຍສຸມໃສ່ຂົງເຂດກະສິກຳ, ອຸດສາຫະກຳ ແລະ ການບໍລິການ ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດ ແລະ ສາມາດແຂ່ງຂັນກັບພາກພື້ນ ໂດຍສະເພາະແມ່ນບັນດາປະເທດສະມາຊິກອາຊຽນ. ສ້າງແຮງງານໃຫ້ມີສະຕິຊາດ, ເປັນພົນລະເມືອງດີ, ເຄົາລົບນັບຖືລະບຽບກົດໝາຍ, ມີລະບຽບວິໄນ, ມີຈັນຍາບັນ, ອົດທົນ ແລະ ຫ້າວຫັນໃນການເຮັດວຽກ, ມີຄວາມກະຕືລືລົ້ນຕໍ່ການພັດທະນາຕົນເອງ ແລະ ເປັນແຮງງານທີ່ແຂງແຮງມີພາລານາໄມສົມບູນ, ມີວຽກເຮັດງານທຳທີ່ໝັ້ນຄົງ ແລະ ມີຄຸນນະພາບ, ມີລາຍໄດ້ສົມເຫດສົມຜົນ, ໄດ້ຮັບການຄຸ້ມຄອງ ແລະ ປົກປ້ອງສິດຜົນປະໂຫຍດຕາມກົດໝາຍ ແລະ ພັນທະສາກົນດ້ານແຮງງານ.

» **ຄາດໝາຍຕົ້ນຕໍ**:

- ຄວບຄຸມອັດຕາການວ່າງງານໃຫ້ຢູ່ໃນລະດັບ 2%.
- ພັດທະນາສີມືແຮງງານໃຫ້ກຳລັງແຮງງານໃຫ້ໄດ້ 658.000 ຄົນ
- ບໍລິການຈັດຫາວຽກເຮັດງານທຳໃຫ້ແຮງງານທີ່ເພີ່ມຂຶ້ນໃໝ່ປະມານ 716.200 ຄົນ.
- ປັບປຸງສູນພັດທະນາສີມືແຮງງານແຂວງອຸດົມໄຊໃຫ້ເປັນສູນທົດສອບ-ອອກໃບຢັ້ງຢືນມາດຕະຖານສີມືແຮງງານແລະ ປັບປຸງສູນພັດທະນາສີມືແຮງງານແຂວງອັດຕະປື; ກໍ່ສ້າງສູນພັດທະນາສີມືແຮງງານ ແຂວງບໍ່ແກ້ວ ແລະ ໄຊຍະບູລີ.
- ສ້າງມາດຕະຖານສີມືແຮງງານໃຫ້ໄດ້ 25 ສາຂາອາຊີບ.
- ທົດສອບ-ອອກໃບຢັ້ງຢືນມາດຕະຖານສີມືແຮງງານໃນຂົງເຂດກໍ່ສ້າງ 10 ສາຂາອາຊີບ, ລົດຍົນ 7 ສາຂາອາຊີບ, ໄອທີ 6 ສາຂາອາຊີບ ແລະ ທ່ອງທ່ຽວ 4 ສາຂາອາຊີບ.
- ຂຶ້ນທະບຽນຜູ້ອອກແຮງງານຢູ່ໃນຫົວໜ່ວຍແຮງງານທີ່ຜູ້ອກແຮງງານແຕ່ 100 ຄົນຂຶ້ນໄປໃຫ້ໄດ້ 100% ຂອງຈຳນວນ 306 ແຫ່ງ.
- ຈັດຕັ້ງການແຂ່ງຂັນສີມືແຮງງານລະດັບຊາດ ແລະ ລະດັບແຂວງ ໃຫ້ໄດ້ຢ່າງໜ້ອຍ 1 ຄັ້ງຕໍ່ປີ.

» **ກິດຈະກຳແລະ ໂຄງການຕົ້ນຕໍ**:

- ຊຸກຍູ້ໃຫ້ຫົວໜ່ວຍຜູ້ນຳໃຊ້ແຮງງານເພີ່ມທະວີການພັດທະນາສີມືແຮງງານໃຫ້ມີຄວາມຊຳນານທາງດ້ານເຕັກນິກວິຊາຊີບສູງຂຶ້ນ.
- ພັດທະນາກົນໄກໃນການປົກປ້ອງ ແລະ ຄຸ້ມຄອງແຮງງານລາວທີ່ເຮັດວຽກຢູ່ຕ່າງປະເທດ ແລະ ແກ້ໄຂບັນຫາແຮງງານຕ່າງປະເທດມາເຮັດວຽກຢູ່ລາວຕາມລະບຽບກົດໝາຍ.
- ສົ່ງເສີມການຄົ້ນຄວ້າ, ການນຳໃຊ້ວິທະຍາສາດ-ເຕັກນິກ ແລະ ການອອກໃບຢັ້ງຢືນມາດຕະຖານສີມືແຮງງານ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ກຳລັງແຮງງານ ແລະ ຜູ້ນຳໃຊ້ແຮງງານສູງຂຶ້ນເຮັດໃຫ້ກຳລັງແຮງງານລາວສາມາດມີວຽກເຮັດງານທຳທີ່ໝັ້ນຄົງ, ມີລາຍໄດ້ທີ່ສູງຂຶ້ນ.
- ເພີ່ມທະວີການຮ່ວມມືກັບຕ່າງປະເທດເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານທຶນຮອນ ແລະ ເຕັກນິກວິຊາການໃນການພັດທະນາສີມືແຮງງານລາວໃຫ້ມີຄຸນນະພາບສູງຂຶ້ນ.
- ສ້າງຄວາມເຂັ້ມແຂງດ້ານການບໍລິຫານຈັດຫາງານ ແລະ ການເຄື່ອນຍ້າຍແຮງງານທີ່ປອດໄພ
- ສ້າງແຜນຊັບຊ້ອນພະນັກງານ ແລະການຈັດຫາງານຢ່າງເປັນລະບົບໂດຍການຮ່ວມມືກັບສະຖາບັນການສຶກສາ ແລະ ສະຖາບັນຝຶກອົບຮົມວິຊາຊີບ (TVET) ເປັນຕົ້ນຫຼັກສູດການຮຽນການສອນຈະຕ້ອງມີການປັບປຸງໃຫ້ແທດເໝາະກັບສະພາບການພັດທະນາໃນແຕ່ລະໄລຍະ ແລະ ຕອບສະໜອງກັບຄວາມຕ້ອງການຂອງນາຍຈ້າງ.[16]
- ສຳຫລວດກຳລັງແຮງງານ ແລະ ຕະຫລາດແຮງງານພາຍໃນປະເທດ.

---

16 ຫຼັກສູດຈະຕ້ອງລວມເອົາ (i) ທັດສະນະໃນການເຮັດວຽກ, (ii) ທັກສະໃນການສື່ສານ ແລະ (ii) ການເຮັດວຽກເປັນທີມ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ**:

ສ້າງດຳລັດວ່າດ້ວຍກອງທຶນ ແລະ ພັດທະນາສີມືແຮງງານ, ດຳລັດວ່າດ້ວຍກອງທຶນຊ່ວຍເຫລືອແຮງງານກັບຄືນປະເທດ.

- ສ້າງນະໂຍບາຍ ແລະ ກົນໄກເພື່ອຮັບປະກັນການຫັນປ່ຽນໂຄງປະກອບແຮງງານຈາກກະສິກຳໄປສູ່ອຸດສາຫະກຳ ແລະ ການບໍລິການ.
- ສ້າງດຳລັດວ່າດ້ວຍຄວາມປອດໄພ ແລະ ສຸຂະພາບແຮງງານ; ປັບປຸງນະໂຍບາຍຄ່າຕອບແທນແຮງງານຂັ້ນຕ່ຳໃຫ້ມີຄວາມສອດຄ່ອງ ແລະ ແທດເໝາະກັບສະພາບເງື່ອນໄຂເສດຖະກິດໃນແຕ່ລະໄລຍະ.
- ສ້າງຂອບວຽກທາງດ້ານນິຕິກຳທີ່ມີຄວາມຈະແຈ້ງ, ຄົບຖ້ວນ ແລະ ໂປ່ງໃສເພື່ອຄຸ້ມຄອງ ແລະ ປົກປ້ອງແຮງງານເຄື່ອນຍ້າຍເປັນຕົ້ນ ຈັດຕັ້ງປະຕິບັດນິຕິກຳກ່ຽວກັບການຈັດຫາງານຢ່າງຮັດກຸມ ແລະ ມີປະສິດທິຜົນສູງ.
- ປັບປຸງຂໍ້ກຳນົດແລະກົນໄກຕ່າງໆທີ່ກ່ຽວຂ້ອງກັບການຮັບປະກັນຄວາມສອດຄ່ອງກັບກົດໝາຍແຮງງານສະບັບປັບປຸງປີ 2014 ແລະ ຍົກລະດັບຄວາມສາມາດໃຫ້ແກ່ພະນັກງານຂັ້ນແຂວງ ແລະ ເມືອງທີ່ຮັບຜິດຊອບວຽກງານດັ່ງກ່າວ ເພື່ອຮັບປະກັນການຈັດຕັ້ງປະຕິບັດກົດໝາຍແຮງງານໃຫ້ມີປະສິດທິພາບສູງ.

## 3.4.6. ແຜນວຽກຈຸດສຸມ 6: ພັດທະນາຜູ້ປະກອບການ, ສ້າງວິຊາການ ແລະ ຜູ້ຊຳນານງານ

» **ທິດທາງ**:

ການພັດທະນາຄົນແມ່ນປັດໄຈສຳຄັນທີ່ສຸດ ໂດຍສະເພາະໃນຍຸກຂອງວິທະຍາສາດ-ເຕັກໂນໂລຊີ ແລະ ການເຊື່ອມໂຍງ; ສະນັ້ນ, ການສຸມໃສ່ພັດທະນາລະບົບອາຊີວະສຶກສາແມ່ນມີຄວາມສຳຄັນ ແລະ ຈຳເປັນຢ່າງຍິ່ງ ເພື່ອສ້າງຄົນໃຫ້ມີຄວາມຫລາກຫລາຍທາງດ້ານລະດັບຄວາມຮູ້, ຄວາມສາມາດ ແລະ ຫຼາຍສາຂາວິຊາຊີບ, ສ້າງໃຫ້ໄດ້ຜູ້ຊ່ຽວຊານສະເພາະດ້ານ ເພື່ອໃຫ້ສາມາດປະກອບສ່ວນເຂົ້າໃນການພັດທະນາ ແລະ ສ້າງສາປະເທດຊາດ ແລະ ສາມາດດຳເນີນທຸລະກິດ ຢ່າງມີປະສິດທິພາບ ແລະ ມີປະສິດທິຜົນສູງ; ຄຽງຄູ່ກັນນັ້ນ, ຕ້ອງສຸມໃສ່ພັດທະນາ ແລະ ຄຸ້ມຄອງສູນບໍລິການເຕັກນິກເພື່ອສ້າງນັກຊ່ຽວຊານໃນແຕ່ລະອາຊີບໃຫ້ສາມາດຕອບສະໜອງໄດ້ຕາມສະພາບການພັດທະນາຂອງປະເທດໃນແຕ່ລະໄລຍະ. ສ້າງຜູ້ປະກອບການພາຍໃນໃຫ້ມີຄວາມຮູ້, ຄວາມສາມາດ ແລະ ມີຄວາມຄິດນຳໃຊ້ພູມປັນຍາທ້ອງຖິ່ນ ແລະ ເອກະລັກສະເພາະຂອງປະເທດ ເພື່ອສ້າງມູນຄ່າເພີ່ມໃຫ້ແກ່ຜະລິດຕະພັນ ແລະ ເພີ່ມທະວີການແຂ່ງຂັນ. ສ້າງແຮງງານຫນຸ່ມນ້ອຍລາວໃຫ້ກາຍເປັນຜູ້ມີຫົວຄິດປະດິດສ້າງ ແລະ ເປັນເຈົ້າການໃນການນຳໃຊ້ນະວັດຕະກຳໃໝ່ເຂົ້າສູ່ການດຳເນີນທຸລະກິດຕາມກະແສການປ່ຽນແປງຂອງໂລກຢ່າງມີຫລັກການ.

» **ຄາດໝາຍຕົ້ນຕໍ**:

- ສ້າງໃຫ້ໄດ້ນາຍຊ່າງດ້ານກໍ່ສ້າງ ແລະ ສ້ອມແປງພາຫະນະ, ນັກວິສະວະກອນໃນຂະແໜງໄຟຟ້າ, ກໍ່ສ້າງ, ບໍ່ແຮ່, ທໍລະນີສາດ ແລະ ອື່ນໆ ທີ່ສາມາດດຳເນີນທຸລະກິດສ່ວນຕົວໄດ້ ຫລື ສາມາດເປັນວິສາຫະກິດຂະຫນາດນ້ອຍໄດ້ ເພື່ອສ້າງຜູ້ປະກອບການລຸ້ນໃຫມ່,
- ສ້າງໃຫ້ໄດ້ນັກຊ່ຽວຊານພາຍໃນ ໃນການຄຸ້ມຄອງ-ບໍລິຫານ ເຊັ່ນ: ບໍລິຫານທຸລະກິດ, ການເງິນ, ເສດຖະສາດ, ນັກກົດໝາຍ ແລະ ທະນາຍຄວາມ ແລະ ອື່ນໆ.
- ສ້າງໂຮງຮຽນເຕັກນິກ-ວິຊາຊີບຢ່າງໜ້ອຍໃຫ້ໄດ້ 1 ແຫ່ງ ຢູ່ທຸກແຂວງ, ພ້ອມທັງ ຍົກລະດັບໂຮງຮຽນເຕັກນິກ-ວິຊາຊີບໃນບາງແຂວງທີ່ມີເງື່ອນໄຂ ເປັນວິທະຍາໄລ ເພື່ອສະໜອງການຝຶກອົບຮົມໃນລະດັບຕ່າງໆດ້ວຍຫລາຍຮູບແບບ ພ້ອມທັງມີຫລັກສູດໃນການສ້າງໃຫ້ເປັນຜູ້ປະກອບການທີ່ມີຄຸນນະພາບ.
- ຂະຫຍາຍໂອກາດເຂົ້າຮຽນອາຊີວະສຶກສາແລະອົບຮົມວິຊາຊີບໃຫ້ໄດ້ 60% ຂອງຈຳນວນຜູ້ຮຽນຈົບສາມັນສຶກສາ.
- ສ້າງຄວາມເຂັ້ມແຂງໃຫ້ຫົວໜ່ວຍທຸລະກິດ ໂດຍສະເພາະ ແມ່ນວິສາຫະກິດຂະໜາດນ້ອຍ ແລະ ກາງ ທາງດ້ານການປຸງແຕ່ງ, ການອອກແບບຫັດຖະກຳ, ສີໄມ້ລາຍມືຂອງທ້ອງຖິ່ນ ຕາມເອກະລັກຂອງຊາດ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ**:

- ສຸມໃສ່ປັບປຸງ ແລະ ຂະຫຍາຍຫຼັກສູດໃນລະດັບອາຊີວະສຶກສາ ແລະ ມະຫາວິທະຍາໄລ.

- ປັບປຸງ ແລະ ຂະຫຍາຍພື້ນຖານໂຄງລ່າງຮັບໃຊ້ໃຫ້ແກ່ການຮຽນ-ການສອນ ແລະ ຝຶກອົບຮົມວິຊາຊີບດ້ານຕ່າງໆ.
- ປັບປຸງ ແລະ ພັດທະນາກົນໄກການປະສານງານລະຫວ່າງພາກລັດ ແລະ ເອກະຊົນ ໃນການສ້າງນາຍຊ່າງ ແລະ ວິຊາການຜູ້ຊຳນານງານໃຫ້ແທດເໝາະກັບຄວາມຕ້ອງການຂອງຕະຫລາດໃນແຕ່ລະໄລຍະ.
- ປັບປຸງລະບົບເກັບກຳຂໍ້ມູນຂ່າວສານທີ່ຈຳເປັນ ແລະ ເຜີຍແຜ່ຢ່າງເປັນປົກກະຕິ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ:**

- ປະຕິຮູບລະບົບອາຊີວະສຶກສາ ແລະ ອົບຮົມວິຊາຊີບເພື່ອຮັບປະກັນໃຫ້ການກໍ່ສ້າງ ແລະ ອົບຮົມກຳລັງແຮງງານມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.
- ກໍ່ສ້າງຄູອາຊີວະສຶກສາສຳລັບສາຂາວິຊາຕ່າງໆ (ວິຊາສະເພາະແລະວິຊາຄູ) ໃນລະດັບຕ່າງໆຢູ່ທັງພາຍໃນ ແລະ ຕ່າງປະເທດໃຫ້ສາມາດຕອບສະໜອງແກ່ສະຖານອາຊີວະສຶກສາ ແລະ ອົບຮົມວິຊາຊີບໃນຂອບເຂດທົ່ວປະເທດໃຫ້ພຽງພໍຂັ້ນພື້ນຖານ.
- ສ້າງນະໂຍບາຍສົ່ງເສີມການຜະລິດຂອງຫົວໜ່ວຍທຸລະກິດ ຕິດພັນກັບການສ້າງວຽກເຮັດງານທຳ.
- ສ້າງນະໂຍບາຍຊຸກຍູ້ສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບມັດທະຍົມຕົ້ນ ແລະ ຜູ້ທີ່ດ້ອຍໂອກາດດ້ານການສຶກສາໄດ້ເຂົ້າຮຽນວິຊາຊີບຫຼາຍຂຶ້ນ.

## 3.4.7. ແຜນວຽກຈຸດສຸມ 7: ເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ

1) **ການຮ່ວມມືສອງຝ່າຍ-ຫຼາຍຝ່າຍ**:

ທິດທາງການຂົນຂວາຍແຫຼ່ງທຶນຊ່ວຍເຫຼືອທາງການເພື່ອການພັດທະນາ (ຊກພ) ແມ່ນສຸມໃສ່ການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອແນໃສ່ລະດົມ ແລະ ຍາດແຍ່ງທຶນຮອນ, ເຕັກນິກ, ວິຊາການມາປະກອບສ່ວນໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ການຮ່ວມມືທີ່ເລັ່ງໃສ່ການຈັດຕັ້ງປະຕິບັດແຜນງານທີ່ຫຼາຍພາກສ່ວນມີສ່ວນຮ່ວມທັງໃນການຈັດຕັ້ງປະຕິບັດ, ການລະດົມ ແລະ ຮັບປະກັນທຶນສົມທົບ. ກອບການຮ່ວມມືລະຫວ່າງ ສປປລາວ ແລະ ບັນດາຄູ່ຮ່ວມພັດທະນາໂດຍລວມແລ້ວ ຕ້ອງສອດຄ່ອງ ແລະ ສ່ອງແສງໃຫ້ເຫັນຜົນໄດ້ຮັບຢ່າງມີປະສິດທິຜົນສູງ ແລະ ມີການສົມທົບຊຸກຍູ້ເຊິ່ງກັນ ແລະ ກັນ ແລະ ມີລັກສະນະເປັນຕ່ອງໂສ້ຕິດພັນກັບໂຄງການໃນໄລຍະຜ່ານມາ. ພ້ອມນີ້, ກໍ່ຊຸກຍູ້ ແລະ ລະດົມທຶນຈາກອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານໃຫ້ຫຼາຍຂຶ້ນ ໂດຍສອດຄ່ອງກັບດຳລັດ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງເພື່ອໃຫ້ການລະດົມ ແລະ ນຳໃຊ້ທຶນຖືກເປົ້າໝາຍ ແລະ ມີປະສິດທິຜົນສູງ.

» **ການຮ່ວມມືສອງຝ່າຍ**:

ສືບຕໍ່ຜັນຂະຫຍາຍການຮ່ວມມືກັບປະເທດຕ່າງໆໃຫ້ກວ້າງຂວາງ ແລະ ລົງເລິກຂະແໜງການທີ່ປະເທດຕ່າງໆເນັ້ນໜັກ; ໃນນັ້ນ, ເອົາໃຈໃສ່ວຽກງານ ແລະ ໂຄງການທີ່ຕິດພັນກັບການແກ້ໄຂຄວາມທຸກຍາກແລະບາງເປົ້າໝາຍສະຫັດສະຫວັດທີ່ຍັງມີຄວາມສ່ຽງທີ່ຈະບໍ່ບັນລຸ. ສຸມໃສ່ການສ້າງພື້ນຖານໂຄງລ່າງທີ່ຈຳເປັນແລະການສ້າງຂີດຄວາມສາມາດ ເພື່ອເປັນພື້ນຖານໃຫ້ແກ່ການພັດທະນາປະເທດ ແລະ ນຳເອົາປະເທດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາພາຍໃນປີ 2020; ພ້ອມນີ້, ກໍ່ສືບຕໍ່ປຶກສາກັບປະເທດຕ່າງໆກ່ຽວກັບການກູ້ຢືມໃນເງື່ອນໄຂດອກເບ້ຍຜ່ອນຜັນ. ນອກຈາກນັ້ນ, ກໍ່ສູ້ຊົນເປີດກວ້າງການຮ່ວມມືກັບບາງປະເທດໃນເອີຣົບທີ່ເຫັນວ່າຍັງມີທ່າແຮງ.

ໂດຍອີງຕາມທິດທາງການພັດທະນາຂອງບັນດາປະເທດຕ່າງໆການເພີ່ມທະວີການຮ່ວມມືໃນຂອບໃຕ້- ໃຕ້ ແລະ ການຮ່ວມມືແບບສາມຫຼ່ຽມເສດຖະກິດ ແມ່ນມີຄວາມຈຳເປັນໂດຍອາດເລີ່ມຈາກໂຄງການຝຶກອົບຮົມ ແລະ ການແລກປ່ຽນຊ່ຽວຊານເພື່ອໃຫ້ກ້າວໄປສູ່ການຮ່ວມມືສາມຝ່າຍ ໂດຍໃຫ້ປະເທດທີ່ຈະເລີນແລ້ວມາສະໜອງແຫຼ່ງທຶນໃນການຈັດຕັ້ງປະຕິບັດການຮ່ວມມືໃນລັກສະນະດັ່ງກ່າວ.

ສືບຕໍ່ຮ່ວມມື ແລະ ລະດົມທຶນຈາກບັນດາປະເທດໃນອາຊີ, ຊີງເຂດເອີລົບ ແລະ ອາເມລິກາ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ຫຼາຍຂຶ້ນ ແລະ ມີໝາກຜົນສູງ.

» **ການຮ່ວມມືຫຼາຍຝ່າຍ**:

ສືບຕໍ່ເພີ່ມທະວີການຍາດແຍ່ງການຮ່ວມມືຈາກຂອບອະນຸພາກພື້ນໃຫ້ໄດ້ຫຼາຍກວ່າເກົ່າ ໂດຍເລີ່ມຈາກຂອບອາຊຽນ ແລະ ອາຊຽນບວກຄູ່ເຈລະຈາ. ການຮ່ວມມືທີ່ເປັນອະນຸພາກພື້ນເຫັນວ່າໄປໄດ້ດີ ແລະ ສືບຕໍ່ຍາດແຍ່ງການຮ່ວມມືໃນກອບການຮ່ວມມືອະນຸພາກພື້ນແມ່ນ້ຳຂອງ (GMS) ແລະ ຂອບສາມຫຼ່ຽມພັດທະນາ. ນອກນັ້ນ, ການຮ່ວມມືກັບສະຖາບັນການເງິນຕ່າງໆ ເປັນຕົ້ນ: ທະນາຄານໂລກ, ກອງທຶນການເງິນສາກົນ, ທະນາຄານພັດທະນາອາຊີ, ອົງການກຸ່ມຜະລິດ ແລະ ສົ່ງອອກນ້ຳມັນ ແຕ່ກູ້ຢືມຕ້ອງສອດຄ່ອງກັບສະພາບການຄຸ້ມຄອງໜີ້ສິນສາທາລະນະຂອງ ສປປລາວ ທີ່ຍືນຍົງ. ສືບຕໍ່ກູ້ຢືມໃນອັດຕາດອກເບ້ຍຜ່ອນຜັນທີ່ມີໄລຍະຍາວນານ ເພື່ອຮັບໃຊ້ໃຫ້ແກ່ໂຄງການທີ່ຈຳເປັນໃນການສ້າງພື້ນຖານໂຄງລ່າງ. ສ່ວນການກູ້ຢືມໃນອັດຕາທຸລະກິດ ຄວນມີກົນໄກຄົ້ນຄ້ວາສະເພາະທີ່ມີປະສິດທິຜົນສູງ ແລະ ໃຫ້ບູລິມະສິດແກ່ຂະ

ແໜງເສດຖະກິດທີ່ມີຜົນຕອບແທນໄວ ແລະ ແນ່ນອນ, ບໍ່ອາດລວມເຂົ້າໃນບັນຊີການຊ່ວຍເຫຼືອທາງການເພື່ອການພັດທະນາໄດ້. ນອກນັ້ນ, ຍັງໄດ້ສືບຕໍ່ຍາດແຍ່ງທຶນຮອນຈາກກອງທຶນສາກົນທີ່ຈັດຕັ້ງຂຶ້ນ ເພື່ອແກ້ໄຂບັນຫາຮີບຮ້ອນຂອງໂລກ ເປັນຕົ້ນ: ກອງທຶນກ່ຽວກັບໂລກເອດ ແລະ ພະຍາດຕິດແປດອື່ນໆ, ກອງທຶນສິ່ງແວດລ້ອມ, ກອງທຶນກາກບອນ ແລະ ກອງທຶນພັດທະນາຕ່າງໆ.

ສືບຕໍ່ຍາດແຍ່ງການຮ່ວມມື ແລະ ຊ່ວຍເຫຼືອຈາກອົງການຕ່າງໆໃນລະບົບເຄືອຄ່າຍຂອງອົງການສະຫະປະຊາຊາດ ເພື່ອລະດົມທຶນໃຫ້ໄດ້ຫຼາຍຂຶ້ນ ໃນການປັບປຸງວຽກງານການປົກຄອງ, ວຽກງານການປົກປັກຮັກສາ ແລະ ພັດທະນາຊັບພະຍາກອນມະນຸດ, ແກ້ໄຂຄວາມທຸກຍາກ, ແກ້ໄຂລະເບີດບໍ່ທັນແຕກ, ແກ້ໄຂ ແລະ ຕອບໂຕ້ການລະບາດຂອງພະຍາດຕ່າງໆ ແລະ ການປະຕິບັດສົນທິສັນຍາຕ່າງໆ. ພ້ອມນີ້, ກໍ່ເອົາໃຈໃສ່ຄຸ້ມຄອງການຊ່ວຍເຫຼືອຂອງບັນດາອົງການຈັດຕັ້ງສາ ກົນທີ່ບໍ່ສັງກັດລັດຖະບານຢ່າງເປັນລະບົບ ເພື່ອເຮັດໃຫ້ການໄຫຼເຂົ້າ ແລະ ການຈັດຕັ້ງປະຕິບັດໂຄງການທີ່ໄດ້ຮັບການຊ່ວຍ ເຫຼືອມີປະສິດທິຜົນສູງ ແລະ ສອດຄ່ອງຕາມທິດທາງການພັດທະນາປະເທດ.

2) **ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ (ການເຊື່ອມຈອດ ແລະ ເຊື່ອມໂຍງການຄ້າ)**

» **ທິດທາງ**:

ສືບຕໍ່ຂະຫຍາຍການຮ່ວມມືກັບພາກພື້ນດ້ານເສດຖະກິດ-ສັງຄົມ, ການເມືອງ ຫຼື ຄວາມໝັ້ນຄົງ ໂດຍເລີ່ມຈາກການເຊື່ອມໂຍງທາງດ້ານເສດຖະກິດ-ການຄ້າ ໂດຍຮັບປະກັນຜົນປະໂຫຍດຮ່ວມກັນເພື່ອຫຼຸດຜ່ອນຄວາມແຕກໂຕນທາງດ້ານການພັດທະນາກັບປະເທດອື່ນ.

ໃນຂະບວນການເຊື່ອມໂຍງກັບພາກພື້ນ ແລະສາກົນນີ້ຕ້ອງຮັບປະກັນໄດ້ການເຊື່ອມຈອດພາຍໃນປະເທດ ຊຶ່ງຖືເປັນພື້ນຖານສຳຄັນໃນການເຊື່ອມໂຍງ (ດ້ານພື້ນຖານໂຄງລ່າງ, ດ້ານຄົມມະນາຄົມທາງບົກ, ທາງນ້ຳ ແລະ ທາງອາກາດ, ເຊື່ອມຕໍ່ຕາໜ່າງໄຟຟ້າ, ໂທລະຄົມມະນາຄົມ, ສ້າງແລວເສດຖະກິດ, ເຂດເສດຖະກິດ ແລະອື່ນໆ). ພ້ອມດຽວກັນນັ້ນ. ກໍ່ຖືເອົາການເຊື່ອມຈອດເປັນຍຸດທະສາດສຳຄັນໃນການຫັນຈາກປະເທດທີ່ບໍ່ມີທາງອອກສູ່ທະເລກາຍເປັນປະເທດເຊື່ອມຕໍ່ກັບພາກພື້ນ ແລະ ສາກົນ.

» **ຄາດໝາຍ**:

- ສູ້ຊົນໃຫ້ອັດຕາການເຊື່ອມໂຍງທາງການຄ້າທັງໝົດຕໍ່ລວມຍອດຜະລິດຕະພັນພາຍໃນ (ອັດຕາການເປີດປະເທດ) ໃຫ້ໄດ້ຫລາຍກວ່າ 70% ໃນປີ 2020.
- ຂະຫຍາຍເສັ້ນທາງການຄົມມະນາຄົມ ເຊັ່ນ: ສູ້ຊົນໃຫ້ໄດ້ກໍ່ສ້າງຂົວຂ້າມນ້ຳຂອງທີ່ປາກຊັນ (ແຂວງບໍລິຄຳໄຊ-ຈັງຫວັດບຶງການ), ຂົວຂ້າມແມ່ນ້ຳຂອງຢູ່ປາກຕະພານ (ແຂວງສາລະວັນ-ຈັງຫວັດອຸບົນ), ຂົວຂ້າມນ້ຳຂອງບ້ານກ້ອນຕື້ນ ເມືອງປາກທາ ແຂວງບໍ່ແກ້ວ, ຂົວຂ້າມນ້ຳຂອງຢູ່ຫລວງພະບາງ-ຈອມເພັດ ແລະ ຂົວຂ້າມນ້ຳຂອງສະເພາະທາງລົດໄຟ ຢູ່ ນະຄອນຫລວງວຽງຈັນ.
- ສຶກສາຄວາມເປັນໄປໄດ້ ແລະ ສຳຫລວດອອກແບບການປັບປຸງຄອງເດີນເຮືອແຕ່ຊາຍແດນລາວ-ຈີນ-ມຽນມາ ຫາ ແຂວງຫລວງພະບາງ.

- ກໍ່ສ້າງທ່າເຮືອໃຫ້ໄດ້ມາດຕະຖານສາກົນເພື່ອຮອງຮັບເຮືອບັນທຸກຂະໜາດ 500 ໂຕນ ເຂົ້າຈອດໄດ້ຄື: ທ່າເຮືອຊຽງກົກ ແຂວງຫລວງນໍ້າທາ, ທ່າເຮືອປາກແບງ ແຂວງອຸດົມໄຊ, ທ່າເຮືອຄົກຈອງ ແຂວງຫລວງພະບາງ ແລະ ສ້າງທ່າທຽບເຮືອແຫ່ງທີ 3 ຢູ່ທ່າເຮືອຫວຸ້ງອ່າງ ຂອງ ສສ ຫວຽດນາມ.
- ຄຸ້ມຄອງລະບົບສະໜາມບິນ ແລະ ສິ່ງອໍານວຍຄວາມສະດວກໃຫ້ແກ່ການບິນໃຫ້ໄດ້ມາດຕະຖານສາກົນ ເພື່ອຮອງຮັບການຂະຫຍາຍຕົວຂອງວຽກງານຂົນສົ່ງທາງອາກາດທັງພາຍໃນ ແລະ ສາກົນ
- ສຸມໃສ່ພັດທະນາຕາໜ່າງທາງລົດໄຟ ສາຍຕັ້ງ, ສາຍຂວາງໃຫ້ສາມາດເຊື່ອມຈອດກັບບັນດາປະເທດໃກ້ຄຽງທີ່ມີທ່າແຮງ ແລະ ຕະຫລາດການຂົນສົ່ງໃຫ້ໄດ້ໂດຍພື້ນຖານ.

» **ກິດຈະກໍາ ແລະ ໂຄງການຕົ້ນຕໍ**:

ເພື່ອຮັບປະກັນ ໃຫ້ການເຊື່ອມໂຍງມີປະສິດທິພາບ ແລະ ສ້າງໂອກາດອັນດີໃຫ້ແກ່ປະເທດ, ການມີຄວາມພ້ອມທາງດ້ານສະຖຽນລະພາບທາງເສດຖະກິດມະຫາພາກ, ການຂະຫຍາຍຕົວຂອງເສດຖະກິດທີ່ໝັ້ນທ່ຽງ ແລະການເຂົ້າເຖິງແຫລ່ງທຶນພາຍໃນ ແລະ ຕ່າງປະເທດຂອງພາກທຸລະກິດ, ການກຽມພ້ອມທາງດ້ານທະນາຄານ ແລະ ສະຖາບັນການເງິນຕ່າງໆແມ່ນສິ່ງທີ່ຈໍາເປັນພາວະວິໄສ ເພື່ອສ້າງຮາກຖານທີ່ເຂັ້ມແຂງໃຫ້ແກ່ການເຊື່ອມໂຍງ.

ເຊື່ອມໂຍງທາງດ້ານເສດຖະກິດ-ການຄ້າ: ຖືເປັນການສ້າງໂອກາດດ້ານການຂະຫຍາຍຕະຫຼາດທັງພາຍໃນ ແລະ ຕ່າງປະເທດໃຫ້ກວ້າງອອກ. ເປີດກວ້າງການແຂ່ງຂັນໃນຂະແໜງອຸດສະຫະກໍາປຸງແຕ່ງ ແລະ ການບໍລິການທາງການຄ້າ ໂດຍການກໍານົດສິນຄ້າປາຍແຫຼມຂອງປະເທດ, ເຂດອຸດສະຫະກໍາ, ສ້າງຄວາມຫລາກຫລາຍຂອງສິນຄ້າພ້ອມທັງກຽມພ້ອມດ້ານນິຕິກໍາ, ລະບຽບ, ກົດໝາຍເພື່ອອໍານວຍຄວາມສະດວກດ້ານການຄ້າ ເປັນຕົ້ນ ການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ແລະ ປະຊາຄົມເສດຖະກິດອາຊຽນ, ປັບປຸງການເຂົ້າເຖິງແຫລ່ງທຶນ, ສ້າງຜູ້ປະກອບການໃໝ່ທີ່ມີຄວາມພ້ອມໃນທຸກດ້ານ; ສົ່ງເສີມ ແລະ ຍົກລະດັບຜູ້ປະກອບການທີ່ມີຢູ່ແລ້ວໃຫ້ສາມາດແຂ່ງຂັນໄດ້ຫຼາຍຂຶ້ນ; ປັບປຸງ ແລະ ສົ່ງເສີມບັນດາວິສາຫະກິດຂະໜາດກາງ ແລະ ນ້ອຍໃຫ້ມີຄວາມພ້ອມ ແລະ ເຂັ້ມແຂງ; ສ້າງການເຊື່ອມໂຍງລະຫວ່າງວິສາຫະກິດຂະໜາດກາງ ແລະ ນ້ອຍ ກັບ ວິສາຫະກິດຂະໜາດໃຫຍ່ເພື່ອສ້າງຕ່ອງໂສ້ການຜະລິດ. ສຸມໃສ່ເພີ່ມອັດຕາການຄ້າກັບພາຍນອກໃຫ້ສູງຂຶ້ນ. ເພີ່ມທະວີກົນໄກປະສານງານລະຫວ່າງຂະແໜງການຕ່າງໆ ແລະ ລະຫວ່າງທ້ອງຖິ່ນ.

ການເຊື່ອມໂຍງທາງດ້ານຄົມມະນາຄົມ: ຍົກລະດັບຂະແໜງໂຍທາທິການ ແລະ ຂົນສົ່ງໃຫ້ເປັນປາຍແຫລມຂອງການພັດທະນາເພື່ອເຊື່ອມຈອດພາຍໃນປະເທດ, ເຊື່ອມໂຍງ ແລະ ເຊື່ອມຕິດກັບພາກພື້ນ ແລະ ສາກົນ ໂດຍສ້າງຄວາມສະດວກ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພ ເພື່ອສ້າງເງື່ອນໄຂໃຫ້ແກ່ການລົງທຶນ, ການຜະລິດ, ການຄ້າ ແລະ ການ ທ່ອງທ່ຽວ. ສຸມໃສ່ປັບປຸງ ແລະ ຂະຫຍາຍດ້ານໂຄງລ່າງພື້ນຖານ: ທາງບົກ: ທາງຫຼວງແຫ່ງຊາດ, ທາງເຊື່ອມຕໍ່ແຂວງ, ເມືອງ ແລະ ບ້ານ; ເສັ້ນທາງຫຼວງອາຊຽນທາງເລກທີ 3, 13 ເໜືອ, 13 ໃຕ້, ເລກທີ 2, ເລກທີ 8, ເລກທີ 12, ເລກທີ 16B ແລະ ເລກທີ 9; ທາງລົດໄຟແຕ່ບໍ່ເຕັນ-ນະຄອນຫຼວງ, ນະຄອນຫຼວງ-ທ່າແຂກ-ມູຢາ, ທ່າແຂກ-ສະຫວັນນະເຂດ-ຈໍາປາສັກ-ໜອງນົກຂຽນ ແລະຈໍາປາສັກ-ວັງເຕົາ; ທາງນໍ້າ: ປັບປຸງຄອງເດີນເຮືອແຕ່ຊາຍແດນລາວ-ຈີນ-ມຽນມາ ຫາ ຫ້ວຍຊາຍ, ຍົກລະດັບການບໍລິການຂອງທ່າເຮືອຫວຸງອາງເພື່ອຮອງຮັບການນໍາເຂົ້າແລະສົ່ງອອກສິນຄ້າຂອງລາວໃຫ້ມີຄວາມສະດວກ ແລະ ລາຄາທີ່ເໝາະສົມ; ທາງອາກາດ: ປັບປຸງ ແລະ ຍົກລະດັບສະໜາມບິນພາຍໃນ ແລະ ສະໜາມບິນສາກົນໃຫ້ໄດ້ມາດຕະຖານສາກົນ, ຂະຫຍາຍເສັ້ນທາງການບິນກັບບັນດາປະເທດໃນພາກພື້ນໃຫ້ຫຼາຍຂຶ້ນ, ສ້າງສິ່ງຮອງຮັບການບິນຢ່າງຄົບຊຸດ ເຊັ່ນ: ບຸກຄະລາກອນທີ່ມີຄຸນນະພາບ, ອຸປະກອນວິທະຍຸການບິນ, ແລະ ຄຸ້ມຄອງການຈາລະຈອນທາງອາກາດໃຫ້ມີຄວາມປອດໄພ; ພັດທະນາ ແລະ ຂະຫຍາຍລະບົບໂລຈິດສະຕິກໃນລາວໃຫ້ໄດ້ມາດຕະຖານ.

ການເຊື່ອມໂຍງທາງດ້ານພະລັງງານ: ພັດທະນາພະລັງງານແຫ່ງຊາດໃຫ້ມີຄວາມຍືນຍົງ ແນ່ໃສ່ຮັບປະກັນຄວາມໝັ້ນຄົງທາງດ້ານພະລັງງານຮັບໃຊ້ພາຍໃນ (ພະລັງງານນໍ້າ, ພະລັງງານຄວາມຮ້ອນຖ່ານຫີນ) ແລະ ສາມາດແຂ່ງຂັນໄດ້ໃນພາກພື້ນ, ສຸມໃສ່ສ້າງພະລັງງານທີ່ມີຄວາມແນ່ນອນ, ສ້າງພື້ນຖານກໍາມະສິດ ແລະ ຮູບການທຸລະກິດພະລັງງານຫຼາຍຮູບແບບເພື່ອແນ່ໃສ່ສະໜອງຄວາມຕ້ອງການໃຫ້ຜູ້ຊົມໃຊ້ຢ່າງພຽງພໍ; ສຶກສາແຫລ່ງກໍາເນີດພະລັງງານໃໝ່ ແລະ ເພີ່ມທະວີການຂະຫຍາຍຕົວຂອງພະລັງງານທົດແທນ ແລະ ພະລັງງານທາງເລືອກອື່ນ (ພະລັງງານແສງຕາເວັນ, ລົມ, ຊີວະມວນ, ແກສຊີວະພາບ); ສຸມໃສ່ພັດທະນາ ແລະນໍາໃຊ້ພະລັງງານທີ່ສະອາດ ແລະ ເປັນມິດກັບສິ່ງແວດລ້ອມໂດຍໃຫ້ຕິດພັນກັບການປົກປັກຮັກສາປ່າໄມ້, ປ່າຍອດນໍ້າ; ສືບຕໍ່ຂຸດຄົ້ນບັນດາແຮ່ທາດທີ່ໄດ້ຜ່ານການສໍາຫຼວດແລ້ວ ແລະ ແຮ່ທາດທີ່ມີຈໍານວນຫຼາຍ ເພື່ອຄວາມຍືນຍົງຂອງຊັບພະຍາກອນແຮ່ທາດ. ຂະຫຍາຍໄຟຟ້າໄປສູ່ຊົນນະບົດ ເຂດທຸລະກັນດານຫ່າງໄກສອກຫຼີກ ໃຫ້ໄດ້ຢ່າງຕໍ່າ 90% ຂອງຈໍານວນຄອບຄົວໃນທົ່ວປະເທດໃຫ້ມີໄຟຟ້າ

ໃຊ້ ໃນປີ 2020, ໂຄງການເພື່ອສົ່ງອອກຕ່າງປະເທດ: ກໍາລັງກໍ່ສ້າງ 3 ໂຄງການລວມກໍາລັງຕິດຕັ້ງ 3.428 ເມກາວັດ ເຊັ່ນ: ໂຄງການພະລັງຄວາມຮ້ອນຫົງສາ 1.878 ເມກາວັດ, ໂຄງການນໍ້າຂອງໄຊຍະບູລີ 1.260 ເມກາວັດ ແລະ ເຊຊະໝານ1ກໍາລັງຕິດຕັ້ງ 290 ເມກາວັດ. ພ້ອມນີ້ ໃນໄລຍະ 5 ປີ ຕໍ່ໜ້ານີ້ ສູ້ຊົນໃຫ້ບັນດາໂຄງການທີ່ມີສັນຍາພັດທະນາໂຄງການ (PDA) ແລະ ສັນຍາສໍາປະທານໂຄງການ (CA) ໃຫ້ໄດ້ລົງມືກໍ່ສ້າງ 24 ໂຄງການ, ອັດຕາການຂະຫຍາຍຕົວຂອງຂະແໜງໄຟຟ້າ ໃນລະດັບສະເລ່ຍ 32% ຕໍ່ປີ, ຫຼຸດຜ່ອນການຂາດດຸນລະຫວ່າງການສົ່ງອອກ ແລະ ນໍາເຂົ້າໄຟຟ້າ ໂດຍປະລິມານການນໍາເຂົ້າໄຟຟ້າບໍ່ໃຫ້ເກີນ 20% ຂອງການນໍາໃຊ້ພາຍໃນປະເທດພາຍໃນປີ 2020.

ການເຊື່ອມໂຍງທາງດ້ານແຮງງານ: ເຮັດໃຫ້ແຮງງານສາມາດປັບຕົວກັບການປ່ຽນແປງຂອງຕະຫຼາດແຮງງານພາກພື້ນ ແລະສາກົນເທື່ອລະກ້າວໂດຍການສຸມໃສ່ການພັດທະນາສີມືແຮງງານໃຫ້ແຮງງານມີຄວາມຮູ້, ຄວາມສາມາດ, ຫົວຄິດປະດິດສ້າງ, ມີລະບຽບວິໄນໃນການອອກແຮງງານຊຶ່ງຕ້ອງມີຫຼັກສູດການຝຶກສີມືແຮງງານທີ່ຕະຫຼາດການຜະລິດຕ້ອງການ ເປັນຕົ້ນ ໃນກຸ່ມປະເທດອາຊຽນ, ການສ້າງມາດຕະຖານສີມືແຮງງານ, ການທົດສອບ, ການອອກໃບຢັ້ງຢືນ ແລະ ຈັດການແຂ່ງຂັນສີມືແຮງງານເປັນປະຈໍາ; ການຍົກລະດັບຄ່າແຮງຂັ້ນຕໍ່າ; ຕ້ອງກໍານົດອັດຕາສ່ວນການຮັບເອົາແຮງງານຕ່າງປະເທດຢ່າງຊັດເຈນເພື່ອສາມາດຄຸ້ມຄອງແຮງງານພາຍໃນໃຫ້ມີວຽກເຮັດງານທໍາ; ການເຄື່ອນຍ້າຍແຮງງານພາຍໃນ ແລະ ຕ່າງປະເທດຕ້ອງມີລະບົບ ແລະ ກົນໄກຮອງຮັບຢ່າງຈະແຈ້ງ; ສຸມໃສ່ສ້າງລະບົບຂ່າວສານຕະຫລາດແຮງງານ; ສ້າງ ແລະ ປັບປຸງຕາໜ່າງການບໍລິການຈັດຫາງານໃຫ້ເຂັ້ມແຂງສາມາດຕອບສະໜອງຄວາມຕ້ອງການຂອງຕະຫລາດແຮງງານ; ຫັນປ່ຽນໂຄງປະກອບແຮງງານໂດຍການເຄື່ອນຍ້າຍແຮງງານຈາກພາກສ່ວນກະສິກໍາທີ່ກວມອັດຕາສ່ວນສູງ ແຕ່ປະສິດທິພາບຕໍ່າມາສູ່ພາກອຸດສະຫະກໍາ ແລະ ການບໍລິການໃຫ້ຫລາຍຂຶ້ນ. ສ້າງ ແລະ ປັບປຸງຕາໜ່າງປະກັນສັງຄົມໃຫ້ເຂັ້ມແຂງ ແລະ ມີປະສິດທິພາບເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ໃຊ້ແຮງງານໃນທຸກຂະແໜງ ແລະ ອາຊີບ.

ການເຊື່ອມໂຍງທາງດ້ານວັດທະນະທໍາ ແລະ ການທ່ອງທ່ຽວ: ຂະຫຍາຍຂອບເຂດການພົວພັນ, ເຊື່ອມໂຍງກັບເວທີສື່ມວນຊົນພາກພື້ນ ແລະ ສາກົນໃຫ້ກວ້າງຂວາງ, ມີຄວາມໝັ້ນຄົງ ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບດ້ານຂໍ້ມູນຂ່າວສານ. ການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ດ້ານວັດທະນະທໍາຕ້ອງບົນພື້ນຖານການຮັກສາຄຸນຄ່າມູນເຊື້ອວັດທະນະທໍາຮີດຄອງປະເພນີອັນດີງາມທີ່ເປັນເອກະລັກເປັນມໍລະດົກອັນລໍ້າຄ່າຂອງຊາດ, ຖືວຽກງານວັດທະນະທໍາເປັນພື້ນຖານຂອງການພັດທະນາທີ່ໝັ້ນຄົງຂອງຊາດ, ສ້າງໃຫ້ສັງຄົມມີຄວາມສາມັກຄີ, ຊຸກດັນໃຫ້ສັງຄົມມີການຂະຫຍາຍ ຕົວສູງຮອບດ້ານ. ສຶກສາອົບຮົມໃຫ້ສັງຄົມມີຄວາມຮັກວັດທະນະທໍາ ແລະ ຮີດຄອງປະເພນີລາວ. ເອົາການພັດທະນາວັດທະນະທໍາຕິດພັນກັບການທ່ອງທ່ຽວ ຊຶ່ງຖືເປັນກາລະໂອກາດຂອງຊາດ ເພື່ອໂຄສະນາເຜີຍແຜ່ວັດທະນະທໍາລາວໃຫ້ພາຍນອກໄດ້ຮັບຮູ້ຢ່າງກວ້າງຂວາງ.

ສົ່ງເສີມການຮ່ວມມືສາກົນດ້ານການທ່ອງທ່ຽວເພື່ອດຶງດູດການທ່ອງທ່ຽວເຂົ້າປະເທດໃຫ້ນັບມື້ເພີ່ມຂຶ້ນ ໂດຍການເຊື່ອມໂຍງດ້ານການທ່ອງທ່ຽວລາວເຂົ້າກັບການທ່ອງທ່ຽວໃນລະດັບພາກພື້ນ ແລະ ສາກົນ.

ການເຊື່ອມໂຍງທາງດ້ານເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ (ICT): ຍົກຖານະບົດບາດຂະແໜງເຕັກໂນໂລຊີສື່ສານ-ຂໍ້ມູນຂ່າວສານໃຫ້ເປັນຕົວຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມເພື່ອເຊື່ອມໂຍງ ແລະ ເຊື່ອມຕິດກັບພາກພື້ນ ແລະ ສາກົນ ໂດຍສ້າງຄວາມສະດວກ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພຂອງການຕິດຕໍ່ສື່ສານ ແລະ ສົ່ງຂໍ້ມູນ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຶງດູດການລົງທຶນ, ການຜະລິດ ແລະ ການທ່ອງທ່ຽວ. ສຸມໃສ່ພັດທະນາເຄືອຂ່າຍເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານໃຫ້ມີຄວາມໄວສູງ ແຜ່ກະຈາຍຢ່າງທົ່ວເຖິງ, ມີບໍລິການທີ່ມີຄຸນນະພາບ ແລະ ສາມາດເຊື່ອມຕໍ່ເຂົ້າມາດຖານເຕັກໂນໂລຊີຂອງບັນດາປະເທດອາຊຽນ ແລະ ສາກົນ. ພັດທະນາຂະຫຍາຍລະບົບລວມສູນການສື່ສານເພື່ອເປັນການຮອງຮັບວຽກງານກໍ່ສ້າງປະຕູເຂົ້າອອກສາກົນໃຫ້ທັນສະໄໝ ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການສະເພາະໜ້າ ແລະ ຍາວນານ. ສ້າງລະບົບເຊື່ອມໂຍງດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດເຊື່ອມຕໍ່ອາຊຽນ ແລະ ບັນດາປະເທດໃນພາກພື້ນ.

» **ນະໂຍບາຍ ແລະ ນິຕິກໍາຕ່າງໆ**:

- **ການເຊື່ອມໂຍງທາງການຄ້າ**:
  - ພັດທະນາລະບົບນິຕິກໍາໃນຂົງເຂດເສດຖະກິດໃຫ້ກົມກຽວ ແລະ ສອດຄ່ອງກັນ, ເພີ່ມທະວີໃນການຈັດຕັ້ງປະຕິບັດກົດໝາຍໃຫ້ເຂັ້ມງວດ.
  - ປັບປຸງ ແລະ ສ້າງນະໂຍບາຍໃນການສົ່ງເສີມການມີສ່ວນຮ່ວມຂອງພາກລັດ ແລະ ເອກະຊົນ, ຜູ້ປະກອບການໂດຍສ້າງເວທີປຶກສາຫາລືນໍາກັນຢ່າງເປັນປະຈໍາ.

- ປັບປຸງ ແລະ ສ້າງນະໂຍບາຍພັດທະນາ ແລະ ສົ່ງເສີມຜະລິດຕະພັນທີ່ມີເອກະລັກຂອງປະເທດ ແລະ ສາມາດແຂ່ງຂັນກັບອະນຸພາກພື້ນ, ພາກພື້ນ ແລະ ສາກົນໄດ້ ໂດຍສ້າງຜະລິດຕະພັນສິນຄ້າໃໝ່ ຫຼື ບໍລິການໃໝ່ທີ່ມີລັກ ສະນະສະເພາະ, ພັດທະນາສິນຄ້າໃຫ້ມີຄວາມຫຼາກຫຼາຍຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ແລະ ຄວາມຕ້ອງການຂອງຕະຫຼາດທີ່ໄດ້ຮັບສິດທິພິເສດໃຫ້ສາມາດສະໜອງໄດ້ຕາມເງື່ອນໄຂ; ສົ່ງເສີມການເສີມຂະຫຍາຍເສດຖະກິດພູມປັນຍາຂອງຊຸມຊົນໃຫ້ຫຼາຍຂຶ້ນ.
- ປັບປຸງ ແລະ ສ້າງນະໂຍບາຍເຂົ້າເຖິງແຫລ່ງທຶນ, ການດຶງດູດການລົງທຶນຈາກພາຍໃນ ແລະ ຕ່າງປະເທດໃຫ້ສອດຄ່ອງກັບການພັດທະນາໃນໄລຍະໃໝ່.

- **ການເຊື່ອມໂຍງທາງດ້ານຄົມມະນາຄົມ**:
  - ສ້າງ ແລະ ປັບປຸງນິຕິກຳຕ່າງໆ ເປັນຕົ້ນ ການຄຸ້ມຄອງພາຫະນະ, ຕິດຕາມ ແລະ ຄຸ້ມຄອງການຂົນສົ່ງສິນຄ້າ ແລະ ໂດຍສານດ້ວຍລະບົບ GPS (IT).
  - ນະໂຍບາຍການພັດທະນາແລວທາງເສດຖະກິດເໜືອ, ໃຕ້, ຕາເວັນອອກ ແລະ ຕາເວັນຕົກ ໂດຍໃຫ້ເຊື່ອມໂຍງກັບການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານທັງທາງບົກ, ນ້ຳ ແລະອາກາດຢ່າງມີປະສິດທິຜົນສູງ.
  - ນະໂຍບາຍການພັດທະນາຕົວເມືອງສີຂຽວເພື່ອຄວາມເປັນລະບຽບຮຽບຮ້ອຍ, ສະອາດ: ບໍ່ມີມົນລະພິດ ແລະ ເປັນທີ່ໜ້າຢູ່ຂອງປະເທດ.
  - ນະໂຍບາຍການຄົມມະນາຄົມທີ່ຕິດພັນກັບນະໂຍບາຍການຜະລິດເປັນສິນຄ້າ ແລະ ການເຮັດການຜະລິດອື່ນໆ.

- **ການເຊື່ອມໂຍງທາງດ້ານພະລັງງານ**:
  - ນະໂຍບາຍເພື່ອຮັບປະກັນຄວາມໝັ້ນຄົງທາງດ້ານພະລັງງານ ໂດຍສຸມໃສ່ສະໜອງ ແລະ ຈຳໜ່າຍໄຟຟ້າຢ່າງພຽງພໍໃຫ້ແກ່ເຂດການຜະລິດ ແລະ ດ້ານບໍລິການ. ສຳລັບເຂດທີ່ສະໜອງໄຟຟ້າຍັງບໍ່ທັນພຽງພໍ ແມ່ນສຸມໃສ່ສຶກສາແຫຼ່ງສະໜອງໄຟຟ້າແບບຕ່າງໆ; ຂະຫຍາຍໄຟຟ້າໄປສູ່ເຂດທີ່ຍັງບໍ່ທັນມີໄຟ ຫຼື ມີແຕ່ຍັງບໍ່ພຽງພໍ.

    ນະໂຍບາຍປັບປຸງກົນໄກໃຫ້ປະຊາຊົນມີສ່ວນຮ່ວມຫລາຍຂຶ້ນໃນການຄຸ້ມຄອງ ແລະ ຫຼຸດຜ່ອນການເກື້ອກູນຂອງພາກລັດກ້າວໄປສູ່ການໄລ່ລຽງແບບທຸລະກິດ.
  - ສຶກສາ ແລະ ສ້າງແຜນແມ່ບົດໄຟຟ້າຊົນນະບົດ ແລະ ກໍ່ສ້າງໄຟຟ້ານ້ຳຕົກຂະໜາດນ້ອຍໃນເຂດທີ່ມີເງື່ອນໄຂ, ໄຟຟ້າແສງຕາເວັນ ຫຼື ຈັກດີແຊວໃນເຂດຫ່າງໄກສອກຫຼີກທີ່ບໍ່ມີເງື່ອນໄຂດ້ານພະລັງນ້ຳ.
  - ນະໂຍບາຍກ່ຽວກັບການກຳນົດລາຄາໄຟຟ້າ.
  - ນະໂຍບາຍຕໍ່ການລົງທຶນເພື່ອພັດທະນາແຫລ່ງພະລັງງານທົດແທນ ແລະ ພະລັງງານທາງເລືອກໃໝ່.
  - ນະໂຍບາຍກ່ຽວກັບການປະຢັດ ແລະ ການໃຊ້ໄຟຟ້າຢ່າງມີປະສິດທິຜົນ ຊຶ່ງເປັນນະໂຍບາຍໃນການເຊື່ອມໂຍງພະລັງງານກັບສາກົນ.
  - ນະໂຍບາຍປ້ອງກັນສິ່ງແວດລ້ອມໂດຍສົ່ງເສີມການນຳໃຊ້ເຕັກໂນໂລຊີໃໝ່ທີ່ເປັນມິດກັບສິ່ງແວດລ້ອມ ແລະ ສ້າງມົນລະພິດຕ່ຳທີ່ສຸດຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ຊຸກຍູ້ການພັດທະນາ ແລະ ນຳໃຊ້ພະລັງງານທີ່ສະອາດໃຫ້ຫຼາຍຂຶ້ນ.
  - ນະໂຍບາຍປະສານສົມທົບກັບຫຼາຍຂະແໜງການ ເປັນຕົ້ນ ກ່ຽວກັບການປົກປັກຮັກສາປ່າໄມ້, ປ່າຍອດນ້ຳຕ້ອງປະສານສົມທົບກັບຂະແໜງກະສິກຳ-ປ່າໄມ້.

- **ການເຊື່ອມໂຍງທາງດ້ານແຮງງານ**:
  - ນະໂຍບາຍການພັດທະນາສີມືແຮງງານທັງປະລິມານ ແລະ ຄຸນນະພາບ ໂດຍສ້າງມາດຕະຖານສີມືແຮງງານແຫ່ງຊາດຂຶ້ນໃນຫຼາກຫຼາຍສາຂາອາຊີບ ແລະ ຈັດການແຂ່ງຂັນສີມືແຮງງານລະດັບແຂວງ, ລະດັບຊາດຢ່າງເປັນປະຈຳເພື່ອຍົກລະດັບ ແລະ ປະສົບການໃນການພັດທະນາສີມືຂອງແຮງງານ.
  - ນະໂຍບາຍສ້າງລະບົບຖານຂໍ້ມູນຂ່າວສານຕະຫຼາດແຮງງານທີ່ມີຄຸນນະພາບໃນຂອບເຂດທົ່ວປະເທດ.
  - ນະໂຍບາຍຂະຫຍາຍວຽກງານປະກັນສັງຄົມ ແລະ ປະກັນສຸຂະພາບຢ່າງທົ່ວເຖິງພ້ອມທັງການໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍປະກັນສັງຄົມໃຫ້ກຸ່ມເປົ້າໝາຍຢ່າງກວ້າງຂວາງ.

## 3.5. ເພື່ອບັນລຸເປົ້າໝາຍ 2 ຕ້ອງສຸມໃສ່ບັນດາວຽກຈຸດສຸມດັ່ງນີ້:

### 3.5.1. ແຜນວຽກຈຸດສຸມ 1: ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໝັກແໜ້ນ ແລະ ກວ້າງຂວາງຕາມທິດ 3 ສ້າງ.

» **ທິດທາງ**:

ເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ[17] ໂດຍການປັບປຸງ ແລະ ສ້າງຮາກຖານການເມືອງໃຫ້ມີຄວາມໜັກແໜ້ນ ແລະ ພັດທະນາຊົນນະບົດຢ່າງຮອບດ້ານຕິດພັນກັບການສ້າງບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍຄື: ພັດທະນາເສດຖະກິດເປັນໃຈກາງ ໄປຄຽງຄູ່ກັບການພັດທະນາດ້ານສັງຄົມ-ວັດທະນະທຳ ແລະ ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຮັກສາສະຖຽນລະພາບດ້ານການເມືອງ; ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດຕິດພັນກັບການຈັດວາງການຜະລິດຕາມເຂດແຄ້ວນ; ຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ແກ່ປະຊາຊົນຢ່າງມີຈຸດສຸມ; ສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນ ດ້ວຍການສົ່ງເສີມການຜະລິດເປັນສິນຄ້າ ແລະ ການບໍລິການຕາມທ່າແຮງຂອງທ້ອງຖິ່ນຕົນ;

ສືບຕໍ່ແກ້ໄຂບັນຫາລູກລະເບີດບໍ່ທັນແຕກທີ່ເປັນໄພຂົ່ມຂູ່ຊີວິດຂອງປະຊາຊົນ ແລະ ເສດຖະກິດ-ສັງຄົມ ດ້ວຍມາດຕະການຫັນເອົາວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກເຊື່ອມເຂົ້າໃນແຜນພັດທະນາຂອງຊາດ, ຂະແໜງການ, ທ້ອງຖິ່ນ ແລະ ທຸກພາກສ່ວນໃນສັງຄົມ ພ້ອມທັງຄູ່ຮ່ວມພັດທະນາ ດ້ວຍຄວາມຮັບຜິດຊອບສູງ ເປັນຕົ້ນ ສຸມໃສ່ແກ້ໄຂບັນຫາລະເບີດບໍ່ທັນແຕກອອກຈາກເຂດພື້ນທີ່ໂຄງການພັດທະນາ, ແຫລ່ງທ່ອງທ່ຽວ, ເຂດການຜະລິດກະສິກຳ, ເຂດລ້ຽງສັດ ແລະ ເຂດທີ່ຢູ່ອາໄສຂອງປະຊາຊົນ. ພ້ອມກັນນັ້ນ, ເອົາໃຈໃສ່ປິ່ນປົວ, ຟື້ນຟູສຸຂະພາບ ແລະ ຊ່ວຍເຫລືອຜູ້ທີ່ເກີດອຸບັດຕິເຫດຈາກລູກລະເບີດບໍ່ທັນແຕກ.

ສືບຕໍ່ຈັດຕັ້ງປະຕິບັດວຽກງານສາມສ້າງໂດຍປັບປຸງກໍ່ສ້າງ ແລະ ຍົກລະດັບຄວາມສາມາດນຳພາຂອງອົງຄະນະພັກແຂວງ, ອົງຄະນະພັກເມືອງ ແລະ ຮາກຖານພັກບ້ານໃຫ້ມີຄວາມເຂັ້ມແຂງ, ປອດໃສ ແລະ ມີລັກສະນະນຳໜ້າສູງຂຶ້ນ. ເສີມຂະຫຍາຍສິດເປັນເຈົ້າ ເສີມສ້າງຄວາມປອງດອງ ແລະ ຄວາມເປັນປຶກແຜ່ນລະຫວ່າງເຜົ່າ-ລະຫວ່າງຊັ້ນຄົນພາຍໃນທ້ອງຖິ່ນໃຫ້ໜັກແໜ້ນ.

» **ຄາດໝາຍຕົ້ນຕໍ**:

- ອັດຕາຄວາມທຸກຍາກໃຫ້ຫລຸດລົງຕໍ່າກວ່າ 10% ໃນປີ 2020.
- ອັດຕາຄອບຄົວທຸກຍາກຍັງເຫຼືອບໍ່ເກີນ 5% ໃນປີ 2020.
- ບ້ານທຸກຍາກຍັງເຫຼືອບໍ່ເກີນ 10%.
- ເມືອງທຸກຍາກຍັງເຫຼືອບໍ່ເກີນ 10% ຂອງຈຳນວນເມືອງທັງໝົດ.
- ສ້າງຄອບຄົວພັດທະນາໃຫ້ໄດ້ຫຼາຍກວ່າ 50% ຂອງຈຳນວນຄອບຄົວທັງໝົດ.
- ສ້າງບ້ານພັດທະນາໃຫ້ໄດ້ຫຼາຍກວ່າ 50% ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ.
- ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດເມືອງໜຶ່ງໃຫ້ໄດ້ຫຼາຍກວ່າ 3 ແຫ່ງ.
- ລຶບລ້າງເມືອງທຸກຍາກໃຫ້ໄດ້ເຄິ່ງໜຶ່ງຂອງຈຳນວນເມືອງທຸກຍາກທັງໝົດທົ່ວປະເທດ.
- ສ້າງເມືອງພັດທະນາໃຫ້ໄດ້ຫຼາຍກວ່າ 10%.
- ແກ້ໄຂການເຄື່ອນຍ້າຍຂອງປະຊາຊົນໃຫ້ໄດ້ຢ່າງເດັດຂາດ.
- ສູ້ຊົນຫຼຸດຈຳນວນຜູ້ຖືກເຄາະຮ້າຍຈາກລະເບີດບໍ່ທັນແຕກຈາກ 45 ຄົນຕໍ່ປີ ໃນປີ 2014 ໃຫ້ເຫຼືອຕໍ່າກວ່າ 40 ຄົນຕໍ່ປີໃນປີ 2020.
- ຮັບປະກັນການປິ່ນປົວທາງການແພດ ແລະ ການຟື້ນຟູສຸຂະພາບຂອງຜູ້ລອດຊີວິດຈາກອຸປະຕິເຫດລະເບີດບໍ່ທັນແຕກໃຫ້ສອດຄ່ອງກັບສົນທິສັນຍາສາກົນ.

---

17 ແຜນການຫຼຸດຜ່ອນຄວາມທຸກຍາກຢ່າງມີຈຸດສຸມແມ່ນລວມເອົາ ບັນຫາຕ່າງໆຂອງຄວາມທຸກຍາກທີ່ສຳຄັນຢູ່ ສປປລາວ: (i) ເຄິ່ງໜຶ່ງຂອງຈຳນວນຜູ້ທີ່ທຸກຍາກແມ່ນທຸກຍາກຮ້າຍແຮງ ແລະ ອີກເຄິ່ງໜຶ່ງແມ່ນຍັງພົບກັບຂໍ້ຫຍຸ້ງຍາກໃນການບົ້ນອອກຈາກຄວາມທຸກຍາກ; ແລະ (ii) ຜູ້ທຸກຍາກຈຳນວນຫຼວງຫຼາຍແມ່ນອາໄສຢູ່ໃນແຂວງໃຫຍ່ໆທີ່ມີອັດຕາຄວາມທຸກຍາກປານກາງ. ສິ່ງດັ່ງກ່າວຮຽກຮ້ອງໃຫ້ມີການແກ້ໄຂບັນຫາຄວາມທຸກຍາກໃນລະດັບຄົວເຮືອນຢ່າງທົ່ວເຖິງ ແລະ ຮັບປະກັນການບໍລິການດ້ານປະກັນສັງຄົມທີ່ພຽງພໍໃຫ້ແກ່ແຮງງານເຄື່ອນຍ້າຍຢ່າງກວ້າງຂວາງ.

ກວາດກູ້ລະເບີດທີ່ບໍ່ທັນແຕກອອກຈາກເນື້ອທີ່ບູລິມະສິດຮັບໃຊ້ການທຳມາຫາກິນຂອງປະຊາຊົນບັນດາເຜົ່າແລະໂຄງການພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃຫ້ໄດ້ 30.000 ເຮັກຕາ ໃນປີ 2020.

- ສຳເລັດການສຳຫລວດທີ່ບໍ່ແມ່ນດ້ານວິຊາການ ເພື່ອເກັບກຳຂໍ້ມູນພື້ນຖານລູກລະເບີດບໍ່ທັນແຕກ (ລບຕ) ຕົກຄ້າງ ຢູ່ໃນ 9 ແຂວງທີ່ມີລູກລະເບີດບໍ່ທັນແຕກຕົກຄ້າງ ໂດຍສອດຄ່ອງກັບມາດຕະຖານການສຳຫລວດແຫ່ງຊາດຂອງ ສປປລາວ ຕາມກຳລັງ, ເຄື່ອງມື, ທຶນຮອນ ແລະ ຄວາມສາມາດທີ່ມີ ໂດຍຮອດປີ 2020 ເພີ່ມຂຶ້ນໃຫ້ໄດ້ 5.238 ບ້ານ ໃນ 9 ແຂວງ (ອັດຕະປື, ຈຳປາສັກ, ຫົວພັນ, ຄຳມ່ວນ, ຫລວງພະບາງ, ສາລະວັນ, ສະຫວັນນະເຂດ, ເຊກອງ ແລະ ຊຽງຂວາງ).
- ສຳເລັດການສຳຫລວດດ້ານວິຊາການເພື່ອຊອກຫາຈຸດຫລັກຖານ ລບຕ ຕົກຄ້າງຢູ່ຈຸດສຸມພັດທະນາຕ່າງໆຮອດປີ 2020 ໃຫ້ໄດ້ 124 ຈຸດສຸມພັດທະນາຢູ່ໃນ 9 ແຂວງທີ່ມີ ລບຕ ຕົກຄ້າງ.
- ຊ່ວຍເຫລືອຜູ້ຖືກເຄາະຮ້າຍ (ຜູ້ລອດຊີວິດ) ຈາກລະເບີດບໍ່ທັນແຕກ ໃຫ້ໄດ້ 1.500 ຄົນໃນປີ 2020.

» **ກິດຈະກຳ ແລະໂຄງການຕົ້ນຕໍ**:

- ທັນລົງຮາກຖານເພື່ອສຸມໃສ່ສ້າງບ້ານເປັນຫົວໜ່ວຍພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ: ໂດຍເລັ່ງການຕ້ານປະກົດການຫຍໍ້ທໍ້ຢູ່ໃນບ້ານ ແລະ ເມືອງຕ່າງໆ ເພື່ອເຮັດໃຫ້ພື້ນຖານມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ປະຊາຊົນມີຄວາມກະຕືລືລົ້ນປະກອບສ່ວນເຂົ້າໃນການພັດທະນາ, ການແກ້ໄຂຄວາມທຸກຍາກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ.
- ສຸມໃສ່ການດູດດຶງທຶນຈາກແຫລ່ງຕ່າງໆ ແລະ ປຸກລະດົມໃຫ້ທຸກພາກສ່ວນຂອງສັງຄົມປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກຢ່າງກວ້າງຂວາງ ແລະ ຕັ້ງໜ້າ.
- ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງທີ່ຈຳເປັນໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ເປັນຕົ້ນ ການຍົກລະດັບ ແລະ ກໍ່ສ້າງເສັ້ນທາງຢູ່ຊົນນະບົດໃຫ້ເຊື່ອມຈອດລະຫວ່າງບ້ານຫາເມືອງ ແລະ ເມືອງຫາແຂວງ ເພື່ອເຊື່ອມຈອດຕໍ່ພາກພື້ນ, ສ້າງສິ່ງອຳນວຍຄວາມສະດວກການບໍລິການຂອງພາກລັດ ແລະ ເອກະຊົນໄປສູ່ປະຊາຊົນ, ຂົນສົ່ງຜົນຜະລິດ ແລະ ສິນຄ້າອອກສູ່ຕະຫລາດຈຳໜ່າຍລະຫວ່າງເມືອງ, ແຂວງ ແລະ ຊາຍແດນ.
- ຈັດສັນພູມລຳເນົາຄົງທີ່ ແລະ ບ່ອນທຳມາຫາກິນໃຫ້ແກ່ປະຊາຊົນ ໂດຍສະເພາະ ບ້ານທີ່ບໍ່ມີບ່ອນເຮັດການຜະລິດ. ຈັດສັນແຜນຜັງບ້ານທີ່ດີ ແລະ ການປະຕິບັດຕາມແຜນຜັງ ຊຶ່ງປະກອບມີ: ຫ້ອງການບ້ານ, ສະໂມສອນບ້ານ, ສູນຂໍ້ມູນຂ່າວສານບ້ານ ແລະ ອື່ນໆ. ສະໜອງນ້ຳເພື່ອການຜະລິດຂອງປະຊາຊົນໃຫ້ໄດ້ 2 ລະດູຢູ່ຂົງເຂດຊົນນະບົດ ທັງເປັນການຮັບມືກັບສະພາບການປ່ຽນແປງດິນຟ້າອາກາດ ແລະ ຫລຸດຜ່ອນຜົນເສຍຫາຍຈາກໄພທຳມະຊາດທີ່ອາດເກີດຂຶ້ນ ແນ່ໃສ່ສະໜັບສະໜູນເປົ້າໝາຍການຜະລິດສະບຽງອາຫານ ແລະ ການຜະລິດເປັນສິນຄ້າກະສິກຳ ໂດຍຕິດພັນກັບແຜນງານພັດທະນາຊົນລະກະເສດ.
- ເຕົ້າໂຮມບ້ານ ແລະ ຍົກຍ້າຍປະຊາຊົນເຂົ້າເປັນບ້ານໃຫຍ່ ຕາມທິດສາມສ້າງ ໂດຍຄຳນຶງເຖິງຜົນກະທົບທາງລົບທາງດ້ານເສດຖະກິດ-ສັງຄົມ, ໂພຊະນາການ ແລະ ການມີສ່ວນຮ່ວມຂອງປະຊາຊົນທີ່ຖືກຍົກຍ້າຍ.
- ສົ່ງເສີມເສດຖະກິດພູມປັນຍາ ແລະ ການຜະລິດເປັນສິນຄ້າໃຫ້ມີຄວາມຫຼາກຫຼາຍ.
- ຊຸກຍູ້ສົ່ງເສີມໃຫ້ປະຊາຊົນຜະລິດສິນຄ້າໃຫ້ມີຄວາມຫຼາກຫຼາຍຕາມມູນເຊື້ອທີ່ມີຢູ່ທ້ອງຖິ່ນຕ່າງໆ ເພື່ອດູດດຶງການທ່ອງທ່ຽວ ເປັນຕົ້ນ ຜະລິດຕະພັນກະສິກຳ-ປ່າໄມ້ ແລະ ອື່ນໆ ເພື່ອຜະລິດເປັນຂອງຂວັນ, ບໍລິໂພກພາຍໃນ ແລະ ຂາຍສົ່ງອອກຄື: ຜ້າໄໝລາວ, ຜະລິດຕະພັນໄມ້ ແລະ ໂລຫະຕ່າງໆ ທີ່ມີການຄັອດລອດລາຍ, ການຍ້ອມສີ ແລະ ອື່ນໆ.
- ສ້າງວຽກເຮັດງານທຳ ແລະ ສ້າງລາຍໄດ້ໃຫ້ແກ່ປະຊາຊົນຫຼາຍຂຶ້ນ ຕິດພັນກັບອຸດສາຫະກຳທ່ອງທ່ຽວ.
- ສຸມໃສ່ແກ້ໄຂບັນຫາລູກລະເບີດທີ່ບໍ່ທັນແຕກ ໂດຍຮັບປະກັນໃຫ້ມີການສຳຫຼວດຢ່າງມີຈຸດສຸມ ແລະຈັດບູລິມະສິດຄັກແນ່.
- ສຸມໃສ່ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ຍືນຍົງ.
- ສະໜອງນ້ຳສະອາດ ແລະ ສຸຂະອະນາໄມ ໃນຊົນນະບົດ ເພື່ອໃຫ້ປະຊາຊົນສາມາດເຂົ້າເຖິງນ້ຳປະປາ ແລະ ມີການນຳໃຊ້ວິດຖ່າຍຂອງປະຊາຊົນໃຫ້ຫຼາຍກວ່າເກົ່າ ແລະ ໃນໂຮງຮຽນໃຫ້ທົ່ວເຖິງ[18].

---

18 ການສະໜອງນ້ຳສະອາດ ແລະ ສຸຂະອະນາໄມ ແມ່ນວຽກງານໜຶ່ງທີ່ສຳຄັນໃນການແກ້ໄຂບັນຫາການຂາດສານອາຫານ. ໃນເດັກນ້ອຍຕ່ຳກວ່າ 5 ປີ ທີ່ເສຍຊີວິດເຫັນວ່າ 10% ແມ່ນຍ້ອນພະຍາດຖອກທ້ອງ, ຕົວເລກດັ່ງກ່າວສະແດງໃຫ້ເຫັນເຖິງການພົວພັນກັນຢ່າງສະໜິດແໜ້ນລະຫວ່າງວຽກງານການສະໜອງນ້ຳສະອາດ ແລະ ສຸຂະອະນາໄມ ກັບ ການຖອກທ້ອງ ແລະ ນ້ຳໜັກຕ່ຳກວ່າມາດຕະຖານ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ**:

- ປັບປຸງ ແລະ ສ້າງນະໂຍບາຍການລົງທຶນເຂົ້າໃນຂົງເຂດວຽກງານການຜະລິດ, ການບໍລິການດ້ານການທ່ອງທ່ຽວ, ການສຶກ, ສາທາລະນະສຸກ ຢູ່ຊົນນະບົດຫ່າງໄກສອກຫລີກໃຫ້ຈະແຈ້ງ ເພື່ອດູດດຶງການລົງທຶນຈາກພາກເອກະຊົນໃຫ້ຫລາຍ, ແນໃສ່ສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບໃຫ້ປະຊາຊົນຫລາຍຂຶ້ນ ໂດຍການສຸມໃສ່ການລົງທຶນທີ່ມີການນຳໃຊ້ແຮງງານຢູ່ຊົນນະບົດ ເປັນຕົ້ນ ກິດຈະການດ້ານກະສິກຳ-ປ່າໄມ້, ອຸດສາຫະກຳການທ່ອງທ່ຽວ, ອຸດສາຫະກຳບໍ່ແຮ່, ອຸດສາຫະກຳພະລັງງານ, ການປຸງແຕ່ງ ແລະ ອື່ນໆ. ພ້ອມກັນນັ້ນ, ກໍເອົາໃຈໃສ່ການຝຶກສີມືວິຊາຊີບໃນດ້ານຕ່າງໆ ເພື່ອຍົກລະດັບສີມືແຮງງານ, ຄວາມຊຳນິຊຳນານໃຫ້ແກ່ປະຊາຊົນຢູ່ຊົນນະບົດ ເພື່ອຫລຸດຜ່ອນການຫລັ່ງໄຫລເຂົ້າສູ່ຕົວເມືອງ ແລະ ກະຈາຍການພັດທະນາໄປສູ່ຊົນນະບົດໃຫ້ຫລາຍຂຶ້ນ.
- ອອກນະໂຍບາຍຢ່າງເໝາະສົມໃນດ້ານການເກັບພາສີ-ອາກອນ, ສິນເຊື່ອ, ການນຳໃຊ້ຊັບພະຍາກອນກັບທີ່, ການຫັນຊັບສິນເປັນທຶນ, ການສົ່ງເສີມຜູ້ປະກອບການ ແລະ ອື່ນໆ ສຳລັບເຂດຊົນນະບົດຫ່າງໄກສອກຫລີກ ແລະ ທຸລະກັນ ດານທີ່ທຸກຍາກໃຫ້ເປັນຮູບປະທຳ.
- ປັບປຸງ ແລະ ສ້າງລະບຽບການຕ່າງໆ ຢູ່ຂັ້ນພື້ນຖານທ້ອງຖິ່ນ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງ ໂດຍຜັນຂະຫຍາຍຈາກລະບຽບຫລັກການລວມ.
- ເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການຂອງຂະແໜງການຕ່າງໆ ໃນການຈັດຕັ້ງຜັນຂະຫຍາຍນະໂຍບາຍທີ່ກ່ຽວຂ້ອງກັບຂະແໜງການຕົນໃຫ້ເປັນອັນລະອຽດ ພ້ອມທັງສຸມການນຳພາ-ຊີ້ນຳ, ພະນັກງານ ແລະ ທຶນຮອນເຂົ້າໃນການຈັດຕັ້ງປະຕິບັດຕົວຈິງຢູ່ທ້ອງຖິ່ນໃຫ້ເປັນຮູບປະທຳ.
- ອອກນະໂຍບາຍທີ່ມີລັກສະນະສົ່ງເສີມສະເພາະຕໍ່ພະນັກງານຂັ້ນເມືອງ, ແຂວງ ແລະ ສູນກາງ ທີ່ໄປເຮັດວຽກປະຈຳ, ໄລຍະຍາວ, ໄລຍະສັ້ນ ແລະ ຊົ່ວຄາວ ຢູ່ເຂດຫ່າງໄກສອກຫລີກທຸລະກັນດານໃຫ້ສອດຄ່ອງກັບສະພາບຕົວຈິງ ແລະ ຄວາມສາມາດທີ່ມີ.
- ສ້າງແຜນຍຸດທະສາດການຈ້າງງານໃນເຂດຊົນນະບົດແຫ່ງຊາດ ໂດຍສຸມໃສ່ກຳນົດຍຸດທະສາດ, ວິທີການ ແລະ ໂຄງການສົ່ງເສີມການສ້າງວຽກເຮັດງານທຳ ແລະ ສ້າງລາຍຮັບໃນເຂດຊົນນະບົດ.
- ເພີ່ມທະວີການປະສານສົມທົບກັນ ລະຫວ່າງພາກລັດ ແລະ ອົງການສັງຄົມພົນລະເຮືອນໃນການຈັດຕັ້ງປະຕິບັດວຽກງານ ລບຕ, ຊຶ່ງອົງການສັງຄົມພົນລະເຮືອນຈະມີບົດບາດສຳຄັນໃນການປະກອບສ່ວນຊ່ວຍເຫຼືອໃຫ້ແກ່ລັດຖະບານ.

## 3.5.2. ແຜນວຽກຈຸດສຸມ 2: ຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ

» **ທິດທາງ**:

ການຮັບປະກັນ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການບໍລິໂພກທີ່ມີໂພຊະນາການຄົບຖ້ວນ ແລະ ປອດໄພຕໍ່ສຸຂະພາບຂອງຜູ້ຜະລິດ-ຜູ້ບໍລິໂພກ ແມ່ນໜ້າວຽກທີ່ສຳຄັນຂອງການພັດທະນາ ທີ່ຕ້ອງເອົາໃຈໃສ່ການຍົກລະດັບສະມັດຕະພາບຂອງການຜະລິດ, ສຸຂະພາບຂອງປະຊາຊົນ ທັງທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງຂອງໄວໜຸ່ມ ເປັນຕົ້ນແມ່ນສຸມໃສ່ກຸ່ມຜູ້ດ້ອຍໂອກາດ, ເດັກນ້ອຍ ແລະ ແມ່ຍິງໃນໄວຈະເລີນພັນ ເພື່ອປະກອບສ່ວນໃນການແກ້ໄຂຄວາມທຸກຍາກ, ຫຼຸດຜ່ອນການຂາດສານອາຫານຂອງປະຊາຊົນ ທັງເປັນການຍົກລະດັບຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ສູງຂຶ້ນ ຕາມທິດພັດທະນາທີ່ຍືນຍົງ ແລະ ສົມດູນ.

» **ຄາດໝາຍຕົ້ນຕໍ**:

- ປະຊາຊົນມີສະບຽງອາຫານທີ່ພຽງພໍ ແລະ ໄດ້ຮັບໂພຊະນາການທີ່ຄົບຖ້ວນ ສາມາດສະໜອງໃຫ້ປະຊາຊົນບໍລິໂພກໄດ້ປະມານ 2.600-2.700 ກິໂລກະລໍລີຕໍ່ປີ.
- ສາມາດກຳນົດສິນຄ້າກະສິກຳທີ່ເປັນທ່າແຮງສູງຂອງຊາດ, ເປັນເອກະລັກຂອງທ້ອງຖິ່ນ ແລະ ສາມາດເປັນບູລິມະສິດໃນການສົ່ງອອກຕາມມາດຖານກະສິກຳສະອາດ.
- ຍົກສູງສະມັດຕະພາບຂອງການຜະລິດກະສິກຳ.

- ຫັນປ່ຽນຮູບແບບການລ້ຽງສັດແບບທຳມະຊາດໄປສູ່ການລ້ຽງແບບເປັນຟາມ ແລະ ເປັນອຸດສະຫະກຳ ໂດຍສາມາດສະໜອງຜົນຜະລິດຈາກຟາມໃຫ້ໄດ້ຫຼາຍກວ່າ 30% ຂອງຜົນຜະລິດສັດທັງໝົດ.
- ສຳເລັດການຈັດສັນ, ການກຳນົດເຂດ ແລະ ຟື້ນຟູເນື້ອທີ່ປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ ຫລື ອັດຕາການປົກຫຸ້ມປ່າໄມ້ໃຫ້ໄດ້ 70% ໃນປີ 2020.
- ສ້າງເຂດຈຸດສຸມຊຸມຊົນລະກະເສດທີ່ເປັນຕົວແບບໃຫ້ໄດ້ຢ່າງໜ້ອຍ 2 ແຫ່ງຂອງແຕ່ລະການຜະລິດ: ເຂົ້າ, ພືດ, ສັດ ແລະ ການປະມົງ.
- ຈັດສັນເຂດການຜະລິດກະສິກຳຕາມທ່າແຮງຂອງສະພາບດິນ ແລະ ອາກາດ ດັ່ງນີ້:
  - ເຂດທົ່ງພຽງໃຫຍ່ (ທົ່ງພຽງວຽງຈັນ, ທົ່ງພຽງບໍລິຄຳໄຊ, ທົ່ງພຽງເຊບັ້ງໄຟ, ທົ່ງພຽງເຊບັ້ງຫຽງ, ທົ່ງພຽງເຊໂດນ, ທົ່ງພຽງຈຳປາສັກ ແລະ ທົ່ງພຽງອັດຕະປື) ເໝາະສົມໃນການພັດທະນາຊົນລະກະເສດ, ການປູກເຂົ້າ (ສຸມໃສ່ເຮັດຊົນລະກະເສດຢູ່ແຂວງສະຫວັນນະເຂດ ແລະ ຄຳມ່ວນ ແລະ ເຂດທີ່ມີຊົນລະປະທານແລ້ວຢູ່ 10 ແຂວງຄື: ແຂວງຫລວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ, ວຽງຈັນ, ນະຄອນຫຼວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ສາລະວັນ. ການປູກພືດອຸດສະຫະກຳ.
  - ເຂດພູພຽງ ແລະ ພູດອຍ (ພູພຽງບໍລິເວນ, ພູພຽງນາກາຍ ແລະ ພູພຽງຊຽງຂວາງ) ເໝາະແກ່ການປູກພືດໄມ້ໃຫ້ໝາກ, ດອກໄມ້ ແລະ ພືດເມືອງໜາວ; ສຳລັບພູພຽງນາກາຍເໝາະສົມກັບການລ້ຽງປາ ແລະ ການປະມົງ ເນື່ອງຈາກມີອ່າງເກັບນ້ຳຂະໜາດໃຫຍ່; ສຳລັບພູພຽງຊຽງຂວາງເໝາະສົມກັບການປັບປຸງເປັນທົ່ງຫຍ້າຊຽວລ້ຽງສັດໄດ້ດີ ແລະ ປູກຕົ້ນໄມ້, ດອກໄມ້ເມືອງໜາວ ແລະ ໝາກໄມ້ເມືອງໜາວໄດ້ດີ.
- ແລະ ຄາດໝາຍອື່ນໆ.

» **ໂຄງການຕົ້ນຕໍ**:

ເພື່ອສາມາດຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ຕ້ອງສຸມໃສ່ການເຮັດກະສິກຳແບບຍືນຍົງ ແລະ ແບບປະສົມປະສານໂດຍສົ່ງເສີມການຜະລິດກະສິກຳທີ່ສະອາດ ແລະ ກະສິກຳປອດສານພິດເປັນມິດກັບສິ່ງແວດລ້ອມໂດຍເອົາໃຈໃສ່ ດັ່ງນີ້:

- ຈັດສັນເຂດການຜະລິດກະສິກຳທີ່ເໝາະສົມໂດຍການກຳນົດ ແລະ ແບ່ງເຂດການນຳໃຊ້ທີ່ດິນ ເປັນຕົ້ນ ເຂດປູກເຂົ້າ, ພືດອຸດສະຫະກຳ, ເຂດລ້ຽງສັດໃຫຍ່, ສັດປີກ, ສັດນ້ຳ ແລະ ເຂດປູກໄມ້ຢ່າງມີຈຸດສຸມ ເພື່ອສາມາດສະໜອງໃຫ້ແກ່ຕະຫຼາດພາຍໃນ ແລະ ສົ່ງອອກ.
- ພັດທະນາພື້ນຖານໂຄງລ່າງດ້ານຊົນລະປະທານ ແລະ ສ້າງເຂດຈຸດສຸມຊົນລະກະເສດ ເປັນຕົ້ນ ສຸມໃສ່ 2 ທົ່ງພຽງຈຸດສຸມບູລິມະສິດ (ທົ່ງພຽງເຊບັ້ງໄຟ ແລະ ເຊບັ້ງຫຽງ) ໃນການຜະລິດເຂົ້າ ແລະ ເຂດທົ່ງພຽງອື່ນໆ ໂດຍການຫັນເປັນຊົນລະກະເສດຢ່າງມີຈຸດສຸມ (ຜະລິດກະສິກຳຄົບວົງຈອນ).
- ປັບປຸງຊົນລະປະທານທີ່ມີຢູ່ແລ້ວຢູ່ 10 ແຂວງຄື: ແຂວງຫລວງນ້ຳທາ, ບໍ່ແກ້ວ, ໄຊຍະບູລີ, ວຽງຈັນ, ນະຄອນຫລວງວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກແລະສາລະວັນ.
- ກຳນົດເຂດຜະລິດກະສິກຳປອດສານພິດຢູ່ບ່ອນທີ່ມີເງື່ອນໄຂ ແລະ ທ່າແຮງ, ກຳນົດເຂດຜະລິດກະສິກຳສະອາດຢ່າງກວ້າງຂວາງ ແລະຮັບປະກັນຄວາມປອດໄພດ້ານສະບຽງອາຫານ.
- ປ້ອງກັນ ແລະ ແກ້ໄຂຜົນກະທົບຈາກໄພພິບັດ.
- ຂະຫຍາຍການເຮັດກະເສດສຸມທີ່ທັນສະໄໝ ແລະ ມີປະສິດທິຜົນສູງ, ໝູນໃຊ້ວິທະຍາສາດ-ເຕັກນິກທີ່ກ້າວໜ້າເຂົ້າໃສ່ພື້ນຖານການຜະລິດ.
- ການປັບປຸງພັດທະນາລະບົບການຄຸ້ມຄອງການນຳໃຊ້ປັດໄຈການຜະລິດ.
- ສະໜອງການບໍລິການ ແລະ ສົ່ງເສີມເຕັກນິກການຜະລິດໂດຍເອົາໃຈໃສ່ວຽກງານຄົ້ນຄວ້າແນວພັນເຂົ້າ, ແນວພັນພືດ ແລະ ສັດ, ທົດລອງເຕັກນິກວິທະຍາການໃໝ່ໆ, ເຂົ້າໃນການຍົກລະດັບສະມັດຕະພາບຂອງການຜະລິດໃຫ້ສູງຂຶ້ນ.
- ສ້າງຄັງແຮເຂົ້າເພື່ອຄ້ຳປະກັນສະບຽງອາຫານໃນເວລາເກີດໄພພິບັດ, ວິກິດການດ້ານຂາດແຄນສະບຽງອາຫານ ແລະອື່ນໆ.
- ປັບປຸງ ແລະ ພັດທະນາລະບົບການນຳໃຊ້ມາດຕະການດ້ານສຸຂະອະນາໄມສັດ ແລະພືດ.

- ພັດທະນາກະສິກຳໂດຍຕິດພັນກັບອຸດສາຫະກຳປຸງແຕ່ງແຕ່ຫົວທີເພື່ອການຜະລິເປັນສິນຄ້າ ແລະ ຕ້ອງກຳນົດໜ້າວຽກລະອຽດລະຫວ່າງຂະແໜງກະສິກຳ ແລະ ຂະແໜງອຸດສະຫະກຳ ແລະ ການຄ້າໃຫ້ຈະແຈ້ງເພື່ອຊຸກຍູ້ ສົ່ງເສີມການຜະລິດເປັນສິນຄ້າໃນແຕ່ລະຂະໜາດໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ.
- ແລະ ອື່ນໆ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ**:

- ນະໂຍບາຍດ້ານການຜະລິດສະບຽງອາຫານຕ້ອງຊັດເຈນທັງທາງດ້ານການຂະຫຍາຍເຂດການຜະລິດ (ເນື້ອທີ່) ແລະ ການຍົກສະມັດຕະພາບຂອງການຜະລິດ ແລະ ນະໂຍບາຍເຫຼົ່ານັ້ນຕ້ອງສາມາດຈັດຕັ້ງປະຕິບັດໄດ້.
- ນະໂຍບາຍກ່ຽວກັບການກຳນົດ ແລະ ແບ່ງເຂດການນຳໃຊ້ທີ່ດິນກະສິກຳສຳລັບແຕ່ລະປະເພດຢ່າງຊັດເຈນແລະສອດຄ່ອງກັບເງື່ອນໄຂທີ່ຕັ້ງສັນຖານ ແລະ ອາກາດ ເປັນຕົ້ນ ເຂດທົ່ງພຽງໃຫຍ່, ທົ່ງພຽງນ້ອຍ, ເຂດພູພຽງ; ນອກຈາກການຜະລິດເຂົ້າແລ້ວ ຍັງຕ້ອງໄດ້ມີເຂດທີ່ເໝາະສົມກັບການປູກພືດ ເຊັ່ນ: ພືດອຸດສະຫະກຳ, ພືດໄລຍະສັ້ນ ແລະ ໄລຍະຍາວ ແລະ ການລ້ຽງສັດ: ສັດໃຫຍ່, ສັດນ້ອຍ ແລະ ສັດນ້ຳທີ່ເຫັນວ່າມີທ່າແຮງ.
- ນະໂຍບາຍທາງດ້ານການພັດທະນາພື້ນຖານໂຄງລ່າງຢ່າງຄົບຊຸດ ເປັນຕົ້ນ ປັບປຸງ ແລະ ພັດທະນາຊົນລະປະທານ, ພັດທະນາສູນຄົ້ນຄວ້າແນວພັນພືດ, ແນວພັນເຂົ້າ ແລະ ແນວພັນສັດທີ່ເຫັນວ່າປະເທດມີທ່າແຮງໃນການແຂ່ງຂັນ ແລະ ສາມາດສະໜອງໃຫ້ແກ່ການບໍລິໂພກພາຍໃນຢ່າງພຽງພໍ; ພັດທະນາສູນທົດລອງ, ສູນວິໄຈ ແລະ ສະຖານີບໍລິການເຕັກນິກກະສິກຳທີ່ທັນສະໄໝ ພ້ອມທັງໃຫ້ໄດ້ຕາມມາດຕະຖານສາກົນເພື່ອສາມາດແຂ່ງຂັນກັບຕະຫຼາດພາກພື້ນ ແລະ ສາກົນຢ່າງເຕັມສ່ວນ. ຄຽງຄູ່ກັນນັ້ນ, ຕ້ອງມີເສັ້ນທາງທີ່ສາມາດທ່ຽວໄດ້ທັງສອງລະດູ ເພື່ອການຂົນສົ່ງຜະລິດຕະພັນ ຫຼື ວັດຖຸດິບ; ມີການສະໜອງພະລັງງານໄຟຟ້າ ແລະ ນ້ຳຢ່າງພຽງພໍໃຫ້ແກ່ຊາວກະສິກອນ ແລະ ໂຮງງານ.
- ນະໂຍບາຍທາງດ້ານການປ່ອຍສິນເຊື່ອໃຫ້ແກ່ຊາວກະສິກອນຢ່າງເໝາະສົມ ໂດຍການສົ່ງເສີມການສ້າງຕັ້ງເປັນກຸ່ມການຜະລິດ, ກຸ່ມການເກັບຊື້ ແລະ ມີຄັງແຮ ເປັນຕົ້ນ ແມ່ນ ຄັງແຮເຂົ້າ, ພືດ ແລະ ສັດ ເພື່ອສາມາດລຸດຕົ້ນທຶນໃນການຜະລິດ, ມີຄວາມສາມາດຕໍ່ລອງທາງດ້ານການຈຳໜ່າຍ, ລາຄາ ແລະ ມີຫຼັກຄ້ຳປະກັນໃນການກູ້ຢືມເງິນຈາກສະຖາບັນການເງິນ.
- ນະໂຍບາຍການລົງທຶນຜະລິດສິນຄ້າກະສິກຳທີ່ເຫັນວ່າເປັນບູລິມະສິດຂອງຊາດ ແລະ ເປັນສິນຄ້າທີ່ເປັນທ່າແຮງຂອງທ້ອງຖິ່ນ ຫຼື ເປັນເອກະລັກຂອງທ້ອງຖິ່ນ ເພື່ອສາມາດສົ່ງເສີມຜະລິດຕະພັນກະສິກຳໃຫ້ຕິດພັນກັບການທ່ອງທ່ຽວ; ການສົ່ງເສີມພາກເອກະຊົນໃຫ້ມີສ່ວນຮ່ວມຫຼາຍຂຶ້ນ ແລະມີການຈັດປະເພດການລົງທຶນທາງດ້ານກະສິກຳຢ່າງຊັດເຈນ ແລະ ແບ່ງຄວາມຮັບຜິດຊອບລະຫວ່າງພາກລັດ ແລະ ເອກະຊົນ ແລະການມີສ່ວນຮ່ວມຂອງປະຊາຊົນໃນແຕ່ລະທ້ອງຖິ່ນ.
- ນະໂຍບາຍດ້ານສຸຂະອະນາໄມຂອງພືດ ແລະ ສັດ ໂດຍເລັ່ງໃສ່ການປ້ອງກັນ ແລະ ສາມາດຮັບມືໄດ້ຖ້າເກີດມີການລະບາດຂອງພະຍາດ, ມີລະບົບກວດກາ ແລະ ຢັ້ງຢືນຄວາມປອດໄພໃຫ້ແກ່ຜູ້ປະກອບການເພື່ອສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ບໍລິໂພກທັງພາຍໃນ ແລະ ຕ່າງປະເທດ; ຄຽງຄູ່ກັນນັ້ນ, ຕ້ອງໄດ້ມີການຮັບປະກັນຄວາມສະອາດ ແລະ ການກວດກາຂະບວນການນຳເຂົ້າເຄື່ອງບໍລິໂພກ, ອາຫານສັດຕ່າງໆ ແລະ ຢາສັກກັນພະຍາດ, ຄວາມສະອາດຂອງສະຖານ ທີ່ລ້ຽງ ແລະ ການໃຫ້ຄວາມຮູ້ແກ່ຜູ້ລ້ຽງຢ່າງເປັນລະບົບ ແລະ ເປັນປົກກະຕິ; ກວດກາບັນດາໂຮງງານ ແລະ ໂຮງຂ້າສັດໃຫ້ໄດ້ຕາມມາດຕະຖານສາກົນ.
- ນະໂຍບາຍສົ່ງເສີມການລົງຮາກຖານເພື່ອຖ່າຍທອດຄວາມຮູ້ແກ່ຊາວກະສິກອນ ແລະ ນຳພາປະຕິຕົວຈິງຢ່າງເປັນປົກກະຕິ ທັງເຕັກນິກການປູກ, ການລ້ຽງ, ການຫລຸດຕົ້ນທຶນ ແລະ ຜະລິດຕະພັນທີ່ຕະຫຼາດຕ້ອງການຢ່າງເປັນປົກກະຕິ ແລະ ທັນກັບສະພາບການ.
- ນະໂຍບາຍສ້າງຕັ້ງກອງທຶນເພື່ອຫຼຸດຜ່ອນຄວາມສ່ຽງໃນການເໜັງຕີງຂອງລາຄາສິນຄ້າກະສິກຳຫຼືການເໜັງຕີງລາຄາຂອງປັດໄຈການຜະລິດ ເພື່ອຊ່ວຍຫລຸດຜ່ອນການແບກຫາບພາລະຕົ້ນທຶນຂອງກຸ່ມກະສິກອນທີ່ເຮັດການຜະລິດ ແລະສາມາດແຂ່ງຂັນລາຄາກັບຜູ້ຜະລິດພາຍນອກໄດ້.
- ນະໂຍບາຍສົ່ງເສີມການບໍລິໂພກທີ່ຖືກຫຼັກສຸຂະອະນາໄມ ແລະ ຄົບໝູ່ອາຫານ ໂດຍມີການເຜີຍແຜ່ ແລະ ບັນຈຸເຂົ້າໃນຫຼັກສູດການສຶກສາຕັ້ງແຕ່ຂັ້ນລ້ຽງເດັກຂຶ້ນໄປ.

- ປັບປຸງການປະສານສົມທົບລະຫວ່າງຂະແໜງການຕ່າງໆທີ່ກ່ຽວຂ້ອງໃຫ້ເຂັ້ມແຂງ, ມີປະສິດທິພາບ ແລະ ໃຫ້ເປັນລະບົບຂຶ້ນກວ່າເກົ່າ ເປັນຕົ້ນ ສາທາລະນະສຸກ, ສຶກສາ, ກະສິກຳ, ສິ່ງແວດລ້ອມ ແລະ ອຸດສາຫະກຳ-ການຄ້າ ແລະ ອື່ນໆ; ຂະແໜງການອຸດສະຫະກຳ-ການຄ້າຕ້ອງໄດ້ເອົາໃຈໃສ່ຂອດການປຸງແຕ່ງ ແລະ ການສະໜອງວັດຖຸດິບເຂົ້າສູ່ໂຮງງານທີ່ມີຄວາມປອດໄພ, ສະອາດ ແລະ ໄດ້ມາດຕະຖານ; ປັບປຸງຂອດການຈຳໜ່າຍ ແລະ ຂະຫຍາຍສູ່ຕະຫຼາດຕ່າງໆຢ່າງເປັນລະບົບຕໍ່ເນື່ອງ; ປັບປຸງການປະສານງານ ແລະ ການມີສ່ວນຮ່ວມຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ, ຂະແໜງການພະລັງງານ-ບໍ່ແຮ່, ທະນາຄານ ແລະ ສະຖາບັນການເງິນ ໃຫ້ເຂັ້ມແຂງຂຶ້ນ.
- ເສີມຂະຫຍາຍການຮ່ວມມື ແລະ ປະສານງານກັນຢ່າງສະໜິດແໜ້ນລະຫວ່າງພາກລັດ ແລະ ເອກະຊົນ ເປັນຕົ້ນ ພາກທຸລະກິດ, ວິສາຫະກິດ ແລະ ຜູ້ປະກອບການພາຍໃນ ແລະ ຕ່າງປະເທດເພື່ອຂະຫຍາຍຕະຫຼາດການຜະລິດ ແລະ ສາມາດສະໜອງວັດຖຸດິບທາງດ້ານຜົນຜະລິດກະສິກຳໃຫ້ແກ່ອຸດສະຫະກຳການປຸງແຕ່ງຢ່າງພຽງພໍ.
- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບການກຳນົດເຂດ ແລະ ແຜນແມ່ບົດການນຳໃຊ້ດິນກະສິກຳເພື່ອໃຫ້ສອດຄ່ອງກັບສະພາບຕົວຈິງຂອງການພັດທະນາ ແລະ ຄວາມຈຳເປັນຂອງການພັດທະນາກະສິກຳແບບຍືນຍົງ.
- ສ້າງ ແລະ ປັບປຸງນິຕິກຳກ່ຽວກັບສຸຂະອະນາໄມພືດ ແລະ ສັດ ໃຫ້ໄປຕາມສັນຍາ ແລະ ສົນທິສັນຍາທີ່ລາວເປັນພາຄີ.
- ສ້າງແຜນຍຸດທະສາດແລະແຜນດຳເນີນງານທາງດ້ານສະບຽງອາຫານແລະໂພຊະນາການທີ່ຕິດພັນກັບຫຼາຍຂະແໜງການ ໄລຍະ 2016-2020

### 3.5.3. ແຜນວຽກຈຸດສຸມ 3: ທຸກຄົນເຂົ້າເຖິງການສຶກສາໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ.

» **ທິດທາງ**:

ສືບຕໍ່ປະຕິຮູບລະບົບການສຶກສາໃຫ້ເຂັ້ມແຂງຂຶ້ນກວ່າເກົ່າ ໂດຍສຸມການລົງທຶນໃສ່ບັນດາວຽກງານທີ່ກຳນົດໄວ້ໃນແຜນຍຸດທະສາດການສຶກສາ ແລະ ຍຸດທະສາດການພັດທະນາຊັບພະຍາກອນມະນຸດ ເພື່ອພັດທະນາທຸກຄົນໃຫ້ມີຄວາມຮູ້, ຄວາມສາມາດເລີ່ມແຕ່ລະດັບອະນຸບານ ຈົນເຖິງອະຊີວະສຶກສາ ແລະ ມະຫາວິທະຍາໄລ ເພື່ອຕອບສະໜອງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ; ປັບປຸງ ແລະ ຂະຫຍາຍໂຄງລ່າງພື້ນຖານດ້ານການສຶກສາໃຫ້ທົ່ວເຖິງ ໂດຍສະເພາະໃນເຂດຫ່າງໄກສອກຫຼີກ; ຂະຫຍາຍໂອກາດດ້ານການສຶກສາໃຫ້ແກ່ເດັກ ເພື່ອສ້າງຄວາມສາມາດໃນການອ່ານໃຫ້ແກ່ເດັກນ້ອຍກ່ອນໄວຮຽນ, ໄວໜຸ່ມ, ການຮູ້ໜັງສືໃຫ້ແກ່ຜູ້ໃຫຍ່ ແລະ ສຸມໃສ່ປະຊາຊົນຢູ່ເຂດຊົນນະບົດຫ່າງໄກສອກຫລີກ ເພື່ອບັນລຸນະໂຍບາຍການສຶກສາພາກບັງຄັບໃນຊັ້ນປະຖົມ ແລະ ຂະຫຍາຍຂຶ້ນຮອດຊັ້ນມັດທະຍົມສຶກສາ ເພື່ອເປັນພື້ນຖານໃຫ້ແກ່ການພັດທະນາ ແລະ ສ້າງກຳລັງແຮງງານໃຫ້ມີສີມືແລະ ມີຄຸນນະພາບສູງຂຶ້ນ; ຮັບປະກັນໃຫ້ມີນະໂຍບາຍເພື່ອດຶງດູດໃຫ້ນັກຮຽນເຂົ້າຮຽນໃນສາຍອາຊີວະສຶກສາໃຫ້ຫລາຍຂຶ້ນ; ພ້ອມດຽວກັນນັ້ນ, ກໍ່ປັບປຸງ ແລະ ຂະຫຍາຍຫຼັກສູດການສອນຢູ່ໃນລະດັບອາຊີວະສຶກສາ ແລະ ມະຫາວິທະຍາໄລດ້ານສາຂາວິຊາທີ່ເປັນທ່າແຮງໃນການພັດທະນາເສດຖະກິດ-ສັງຄົມ ເປັນຕົ້ນແມ່ນ ຂະແໜງໄຟຟ້າ, ບໍ່ແຮ່, ປຸງແຕ່ງ, ຫັດຖະກຳ, ນາຍຊ່າງ ແລະ ຂະແໜງການບໍລິການ ເພື່ອຮັບປະກັນຄຸນນະພາບຂອງການສຶກສາໃຫ້ສູງຂຶ້ນ ແລະ ທັງສາມາດຕອບສະໜອງແຮງງານເຂົ້າໃນຂົງເຂດການຜະລິດ ແລະ ການບໍລິການໃນການພັດທະນາປະເທດໃນຕໍ່ໜ້າ ແລະ ສາມາດເຊື່ອມໂຍງ ແລະ ແຂ່ງຂັນກັບພາກພື້ນ ແລະ ສາກົນ.

ພັດທະນານັກກິລາ-ກາຍຍະກຳລາວໃຫ້ຫຍັບເຂົ້າໃກ້ກັບລະດັບຂອງພາກພື້ນ ແລະ ສາກົນເທື່ອລະກ້າວ ແລະ ກາຍເປັນກິລາ-ກາຍຍະກຳອາຊີບໃນຕໍ່ໜ້າ; ຫັນວຽກງານກິລາໃຫ້ກາຍເປັນຂອງໝົດທຸກພາກສ່ວນໃນສັງຄົມ ເຮັດໃຫ້ຊັ້ນຄົນຕ່າງໆໂດຍສະເພາະແມ່ນ ໄວໜຸ່ມ-ແມ່ຍິງ-ຜູ້ອາຍຸສູງມີຄວາມສົນໃຈຫຼິ້ນກິລາ-ກາຍຍະກຳຫຼາຍຂຶ້ນ; ພ້ອມກັນນັ້ນ, ກໍ່ສົ່ງເສີມແລະພັດທະນາກິລາ-ກາຍຍະກຳພື້ນເມືອງຂອງບັນດາເຜົ່າບາງຊະນິດທີ່ເໝາະສົມໃຫ້ກາຍເປັນກິລາລະດັບຊາດ.

» **ຄາດໝາຍ**:

- ອັດຕາເຂົ້າຮຽນລວມຂອງເດັກອາຍຸ 5 ປີ ໃຫ້ໄດ້ 80%.
- ອັດຕາລອດເຫຼືອຂອງນັກຮຽນຊັ້ນປະຖົມ ໃຫ້ໄດ້ 90%.
- ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນຕົ້ນໃຫ້ໄດ້ 85%.

- ອັດຕາເຂົ້າຮຽນຊັ້ນມັດທະຍົມຕອນປາຍ 60%.
- ສູ້ຊົນເຮັດໃຫ້ອັດຕາການເລື່ອນຊັ້ນນັກຮຽນທີ່ຮຽນຈົບ ມໍຕົ້ນ ຂຶ້ນສາຍວິຊາຊີບໃຫ້ໄດ້ 5% ຂອງນັກຮຽນທີ່ຮຽນຈົບທັງໝົດ ແລະ ໄດ້ເຂົ້າຮຽນຊັ້ນມັດທະຍົມຕອນປາຍໃຫ້ໄດ້ 90%.
- ສູ້ຊົນໃຫ້ນັກຮຽນທີ່ຮຽນຈົບ ມໍ 7 ໃຫ້ໄດ້ເຂົ້າຮຽນຕໍ່ໃນສະຖາບັນອາຊີວະສຶກສາໃຫ້ໄດ້ 60%, ເຂົ້າຮຽນຕໍ່ໃນສະຖາບັນການສຶກສາຊັ້ນສູງໃຫ້ໄດ້ 20%.
- ອັດຕາການຮູ້ໜັງສືຂອງປະຊາຊົນໃນກຸ່ມອາຍຸ 15-24 ປີ ໃຫ້ໄດ້  99%.
- ອັດຕາການຮູ້ໜັງສືຂອງປະຊາຊົນໃນກຸ່ມອາຍຸ 15 ປີ ຂຶ້ນໄປ ໃຫ້ໄດ້  95%.
- ສົ່ງເສີມໃຫ້ທຸກຄົນໃນສັງຄົມໄດ້ອອກກຳລັງກາຍ ແລະ ການຫຼິ້ນກິລາ-ກາຍຍະກຳໃຫ້ໄດ້ 30% ຂອງປະຊາກອນທັງໝົດ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ**:

- ພັດທະນາພື້ນຖານໂຄງລ່າງດ້ານການສຶກສາ ໂດຍສະເພາະ ຂະຫຍາຍໂຮງຮຽນອະນຸບານ, ໂຮງຮຽນປະຖົມຢູ່ບ້ານທີ່ຍັງບໍ່ທັນມີໂຮງຮຽນຖາວອນ, ໂຮງຮຽນມັດທະຍົມຕົ້ນ ແລະ ມັດທະຍົມຕອນປາຍ ຢູ່ບ່ອນທີ່ມີເງື່ອນໄຂ ພ້ອມທັງໃຫ້ໄດ້ມາດຕະຖານຂອງກະຊວງສຶກສາ ແລະ ກິລາ, ສ້າງໂຮງຮຽນວິຊາຊີບຢູ່ຕາມພາກ.
- ປັບປຸງຄຸນນະພາບການຮຽນ-ການສອນໂດຍການເອົາໃຈໃສ່ປັບປຸງຄຸນນະພາບຂອງຄູ, ສະໜອງອຸປະກອນການຮຽນ-ການສອນ, ຫ້ອງທົດລອງ, ຫ້ອງປະຕິບັດງານຕ່າງໆເພື່ອຫລຸດຜ່ອນການສອນທິດສະດີ ແລະ ເພີ່ມການເຮັດທົດລອງ ແລະ ປະຕິບັດຕົວຈິງ.
- ປັບປຸງລະບົບການບໍລິຫານຄຸ້ມຄອງການສຶກສາແຕ່ສູນກາງຮອດທ້ອງຖິ່ນ.
- ສຸມໃສ່ການຄົ້ນຄວ້າວິທະຍາສາດ ແລະ ການນຳເອົາຜົນການຄົ້ນຄວ້າວິທະຍາສາດ ເຂົ້າສູ່ຂະບວນການຮຽນ-ການສອນໃຫ້ຫລາຍຂຶ້ນ ເພື່ອຍົກລະດັບຄຸນນະພາບຂອງນັກຮຽນ-ນັກສຶກສາໃຫ້ສູງຂຶ້ນ.
- ສຸມໃສ່ປັບປຸງລະບົບກິລາກາຍຍະສຶກສາ ໂດຍສະເພາະແມ່ນພັດທະນາຄູຝຶກ ແລະ ຄັດເລືອກນັກກິລາທີ່ມີພອນສະຫວັນເພື່ອສ້າງເປັນທີມນັກກິລາແຫ່ງຊາດ.
- ສືບຕໍ່ປະຕິບັດໂຄງການອາຫານທ່ຽງ ແລະ ຮັບປະກັນຄວາມປອດໄພໃນສັງຄົມໃຫ້ກັບເດັກນ້ອຍໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ເພື່ອສ້າງແຮງຈູງໃຈໃນການເຂົ້າຮຽນຢູ່ໂຮງຮຽນ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ**:

- ສືບຕໍ່ຈັດຕັ້ງຜັນຂະຫຍາຍຍຸດທະສາດການປະຕິຮູບການສຶກສາໃຫ້ປະກົດຜົນເປັນຈິງ.
- ສືບຕໍ່ປະຕິບັດແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນແລະຂອບພັດທະນາຂະແໜງການສຶກສາ.
- ປະຕິບັດນະໂຍບາຍໃນການຍົກລະດັບຂອງຄູສອນ, ປັບປຸງວິທີສອນຂອງຄູສອນຫ້ອງດ່ຽວ ແລະ ຫ້ອງຄວບ, ສະໜອງພະນັກງານຄູໃຫ້ສົມດູນກັບຈຳນວນນັກຮຽນ; ສ້າງໂຮງຮຽນຕົ້ນແບບ, ສົ່ງເສີມການອ່ານ ແລະ ສະໜອງອຸປະກອນ/ສື່ປະກອບການຮຽນ-ການສອນຕາມຈຳນວນທີ່ເໝາະສົມ.
- ສືບຕໍ່ຈັດຕັ້ງຜັນຂະຫຍາຍນະໂຍບາຍເລື່ອນຊັ້ນແບບຕໍ່ເນື່ອງ.
- ປັບປຸງນະໂຍບາຍຕໍ່ຜູ້ປະຕິບັດໜ້າທີ່ຢູ່ເຂດຫ່າງໄກສອກຫຼີກໃຫ້ມີຄວາມສອດຄ່ອງ ແລະ ເໝາະສົມ.
- ສົ່ງເສີມໃຫ້ພາກເອກະຊົນມີສ່ວນຮ່ວມໃນຂົງເຂດສັງຄົມຕື່ມອີກ ໂດຍສ້າງເງື່ອນໄຂທີ່ເອື້ອອຳນວຍທາງດ້ານແວດລ້ອມແລະໂຄງລ່າງຕ່າງໆ ໃຫ້ແກ່ພາກເອກະຊົນມີສ່ວນຮ່ວມໃນຫຼາຍຮູບແບບ ລວມທັງການນຳໃຊ້ວິທີການຮ່ວມມືລະຫວ່າງພາກລັດ-ເອກະຊົນ.

## 3.5.4. ແຜນວຽກຈຸດສຸມ 4: ຮັບປະກັນການບໍລິການດ້ານສາທາລະນະສຸກໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ.

» **ທິດທາງ**:

ຂະຫຍາຍການບໍລິການດ້ານສາທາລະນະສຸກແບບເຊື່ອມສານ ແລະ ຍົກສູງຄຸນນະພາບຂອງການບໍລິການ ເພື່ອຮັບປະກັນໃຫ້ທຸກຄົນໄດ້ເຂົ້າເຖິງການບໍລິການຮັກສາສຸຂະພາບ ແລະ ໄດ້ຮັບການບໍລິການຈາກແພດໝໍທີ່ມີຄຸນນະພາບສູງຂຶ້ນ; ເສີມສ້າງຄວາມເຂັ້ມແຂງດ້ານການຄຸ້ມຄອງການສະໜອງການບໍລິການສາທາລະນະສຸກຂອງລັດຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງໂດຍການປັບປຸງ ແລະ ຂະຫຍາຍໂຄງລ່າງພື້ນຖານດ້ານສາທາລະນະສຸກໃຫ້ໄປເຖິງຊົນນະບົດບ່ອນຫ່າງໄກສອກຫຼີກ; ພ້ອມດຽວກັນນັ້ນ, ກໍຍົກສູງຄວາມສາມາດໃນການປິ່ນປົວ ແລະ ປ້ອງກັນພະຍາດ ຢູ່ໂຮງໝໍຂັ້ນຕ່າງໆ ໂດຍສະໜອງ ແລະ ສ້າງໃຫ້ໄດ້ພະນັກງານແພດ, ພະຍາບານທີ່ມີຄວາມຊໍານິຊໍານານ ແລະ ມີຈັນຍາບັນ, ທັດສະນະຮັບໃຊ້, ບໍລິການທີ່ດີ ແລະ ນໍາໃຊ້ເຕັກໂນໂລຊີຢ່າງເໝາະສົມ ເພື່ອຍົກສູງຄຸນນະພາບຂອງການບໍລິການຮັກສາສຸຂະພາບ; ພ້ອມດຽວກັນນັ້ນ ພັດທະນາການເງິນສາທາລະນະສຸກໃຫ້ມີຄວາມຍືນຍົງ ດ້ວຍການເພີ່ມງົບປະມານຈາກພາກລັດ ແລະ ການຂະຫຍາຍກອງທຶນປະກັນສຸຂະພາບພາກເອກະຊົນ ແລະ ຊຸມຊົນໃຫ້ກວມອັດຕາສ່ວນສູງຂຶ້ນ ແລະ ນໍາໃຊ້ຢ່າງມີປະສິດທິຜົນ ເພື່ອໃຫ້ເຂົາເຈົ້າໄດ້ຮັບການບໍລິການຮັກສາສຸຂະພາບໃນເວລາເຈັບເປັນ. ຮັບປະກັນໃຫ້ແມ່ຍິງເກີດລູກຢ່າງປອດໄພ; ເສີມຂະຫຍາຍວຽກງານດ້ານໂພຊະນາການ ໂດຍຮັບປະກັນໃຫ້ເດັກນ້ອຍໄດ້ຮັບສານອາຫານຢ່າງພຽງພໍ, ຖືກຫຼັກອານາໄມ ແລະ ຄົບ 5 ໝວດຕາມຫຼັກໂພຊະນາການ; ປຸກລະດົມ, ໂຄສະນາຂົນຂວາຍຊຸມຊົນໃຫ້ເຂົ້າໃຈເຖິງບັນຫາສໍາຄັນຂອງການຮັກສາສຸຂະພາບ, ໄດ້ຮັບຂໍ້ມູນຂ່າວສານ ແລະ ການບໍລິການດ້ານສຸຂະພາບຈະເລີນພັນ ແລະ ການວາງແຜນຄອບຄົວ, ວຽກງານສຸຂະອານາໄມພ້ອມທັງສະໜອງນໍ້າສະອາດ ໃນເຂດຕົວເມືອງ ແລະ ຊົນນະບົດໃຫ້ພຽງພໍ ແລະ ວິດຖ່າຍ ຢູ່ເຂດຫ່າງໄກສອກຫລີກໃຫ້ທົ່ວເຖິງ ແລະ ຫລາຍຂຶ້ນ ເພື່ອຮັບປະກັນໃຫ້ປະຊາຊົນໄດ້ຊົມໃຊ້ນໍ້າສະອາດ ແລະ ວິດຖ່າຍຢ່າງກວ້າງຂວາງ. ເພີ່ມອັດຕາການປົກຄຸມດ້ານສຸຂະອະນາໄມໃນໂຮງຮຽນໃຫ້ສູງຂຶ້ນ.

» **ຄາດໝາຍຕົ້ນຕໍ**:

- ເພີ່ມອາຍຸຍືນສະເລ່ຍໃຫ້ໄດ້ 71 ປີ.
- ຫຼຸດອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານໃຫ້ໄດ້ 20% ແລະ ເດັກນ້ອຍທີ່ມີລວງສູງຕໍ່າກວ່າມາດຕະຖານໃຫ້ໄດ້ 32%.
- ອັດຕາການຕາຍຂອງເດັກອາຍຸຕໍ່າກວ່າ 1 ປີ ໃຫ້ຫຼຸດລົງຢູ່ 30/1.000 ເດັກເກີດມີຊີວິດ.
- ອັດຕາການຕາຍຂອງເດັກອາຍຸຕໍ່າກວ່າ 5 ປີ ໃຫ້ຫຼຸດລົງຢູ່ 40/1.000 ເດັກເກີດມີຊີວິດ.
- ອັດຕາສ່ວນການຕາຍຂອງແມ່ ໃຫ້ຫຼຸດລົງຢູ່ 160/100.000 ເດັກເກີດມີຊີວິດ.
- ອັດຕາຊົມໃຊ້ນໍ້າສະອາດຂອງປະຊາຊົນໃຫ້ບັນລຸໄດ້ 90%.
- ອັດຕາການຊົມໃຊ້ວິດຖ່າຍ ໃຫ້ບັນລຸໄດ້ 75%.
- ອັດຕາການສັກຢາກັນພະຍາດໝາກແດງ ໃຫ້ບັນລຸໄດ້ 90%.
- ອັດຕາປົກຄຸມການປະກັນສຸຂະພາບແຫ່ງຊາດໃຫ້ໄດ້ 80%.

» **ກິດຈະກໍາ ແລະ ໂຄງການຕົ້ນຕໍ**:

- ປັບປຸງ ແລະ ສ້າງສຸກສາລາ ຢູ່ບ່ອນທີ່ເໝາະສົມ, ຍົກລະດັບໂຮງໝໍເມືອງໃຫ້ສາມາດຜ່າຕັດນ້ອຍ, ປັບປຸງໂຮງໝໍແຂວງ ແລະ ໂຮງໝໍພາກ ໃຫ້ສາມາດຮອງຮັບການບໍລິການຮັກສາສຸຂະພາບຂອງປະຊາຊົນ.
- ພັດທະນາໂຮງໝໍສູນກາງໃຫ້ທັນສະໄໝ ເພື່ອເພີ່ມຄວາມເຊື້ອໝັ້ນຂອງປະຊາຊົນ.
- ກໍ່ສ້າງ ແລະ ບໍາລຸງພະນັກງານແພດແບບຕໍ່ເນື່ອງໃຫ້ຜູ້ທີ່ປະຈໍາການຢູ່ເຂດຫ່າງໄກສອກຫຼີກ; ຈັດສົ່ງນັກສຶກສາແພດທີ່ຮຽນຈົບໃໝ່ ລົງຝຶກຫັດຢູ່ທ້ອງຖິ່ນໃຫ້ຫຼາຍຂຶ້ນ.
- ຂະຫຍາຍລະບົບປະກັນສັງຄົມພາກເອກະຊົນ ແລະ ຊຸມຊົນໃຫ້ກວ້າງຂວາງ.
- ສືບຕໍ່ສ້າງບ້ານສາທາລະນະສຸກແບບຢ່າງໃຫ້ກວ້າງຂວາງ.

- ສືບຕໍ່ເອົາໃຈໃສ່ກວດກາຄຸນນະພາບຂອງອາຫານ ແລະ ເຄື່ອງດື່ມ, ຢາປົວພະຍາດ ພ້ອມທັງມີມາດຕະການຢ່າງເດັດຂາດຕໍ່ຜູ້ລະເມີດລະບຽບກົດໝາຍ.
- ປັບປຸງລະບົບຂໍ້ມູນຂ່າວສານສາທາລະນະສຸກໃຫ້ມີຄວາມຊັດເຈນ, ວ່ອງໄວ ແລະ ທັນການ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ:**

- ສືບຕໍ່ປະຕິບັດນະໂຍບາຍປິ່ນປົວແບບເສຍຄ່າ ແລະ ບໍ່ເສຍຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ ໂດຍສະເພາະນະໂຍບາຍເກີດລູກ ແລະ ການປິ່ນປົວເດັກອາຍຸຕໍ່າກວ່າ 5 ປີ ບໍ່ເສຍຄ່າ.
- ຊຸກຍູ້ໃຫ້ພາກສ່ວນເອກະຊົນໃຫ້ມີບົດບາດປະກອບສ່ວນໃນວຽກງານປິ່ນປົວ ແລະ ຮັກສາສຸຂະພາບຂອງປະຊາຊົນຫຼາຍຂຶ້ນ.
- ສ້າງນະໂຍບາຍຂໍ້ມູນຂ່າວສານສາທາລະນະສຸກ ແລະ ຄູ່ມືແນະນຳກ່ຽວກັບມາດຕະຖານຂອງຂໍ້ມູນ.
- ສ້າງນະໂຍບາຍ ວ່າດ້ວຍການຮັບປະກັນຄຸນນະພາບການໃຫ້ການບໍລິການຮັກສາສຸຂະພາບ.

### 3.5.5. ແຜນວຽກຈຸດສຸມ 5: ການບໍລິການທາງດ້ານການປົກປ້ອງສັງຄົມໄດ້ຮັບການຍົກລະດັບ ແລະ ທຸກຄົນໄດ້ເຂົ້າເຖິງຢ່າງກວ້າງຂວາງ

ລະບົບປະກັນສັງຄົມໄດ້ຮັບການສ້າງຕັ້ງ ແລະ ປັບປຸງໃຫ້ເຂັ້ມແຂງ ພ້ອມທັງຂະຫຍາຍອັດຕາປົກຄຸມຂອງລະບົບປະກັນສັງຄົມຢ່າງກວ້າງຂວາງ ແລະ ມີປະສິດທິພາບສູງຂຶ້ນເຮັດໃຫ້ຜູ້ອອກແຮງງານ, ຜູ້ທຸກຍາກ ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງພວກເຂົາ ເພື່ອຮັບປະກັນການພັດທະນາທີ່ສົມດູນ ແລະ ຍືນຍົງ. ມີກົນໄກຄຸ້ມຄອງ ແລະ ປົກປ້ອງສິດຜົນປະໂຫຍດສຳລັບເດັກນ້ອຍ, ປຸກລະດົມຂົນຂວາຍຜູ້ອອກແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ປະກອບສ່ວນເຂົ້າໃນກອງທຶນປະກັນສຸຂະພາບໃຫ້ຫລາຍຂຶ້ນ; ພ້ອມດຽວກັນນັ້ນ ກໍ່ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານຄຸນງາມຄວາມດີ ແລະ ຜູ້ເສຍອົງຄະໃນພາລະກິດຮັບໃຊ້ການປະຕິວັດຊາດປະຊາທິປະໄຕ. ຊຸກຍູ້ສົ່ງເສີມໃຫ້ສັງຄົມມີສ່ວນຮ່ວມໃນການຊ່ວຍເຫລືອຜູ້ດ້ອຍໂອກາດທາງສັງຄົມ ແລະ ຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆໄດ້ຮັບການຊ່ວຍເຫລືອສົງເຄາະທີ່ມີຄວາມໂປ່ງໃສມີປະສິດທິຜົນ ແລະ ວ່ອງໄວ.

» **ຄາດໝາຍ**

- ຂະຫຍາຍຂອບເຂດປົກຄຸມປະກັນສັງຄົມ ແລະ ປະກັນສຸຂະພາບ ໃຫ້ກວມເອົາ 80% ຂອງພົນລະເມືອງ ໃນປີ 2020.
- ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດປະຊາທິປະໄຕໃຫ້ໄດ້ ຈຳນວນ 31,830 ທ່ານ.
- ສ້າງຕັ້ງກອງທຶນສັງຄົມສົງເຄາະ ໃຫ້ໄດ້ທັງໝົດ 18 ແຂວງ ເພື່ອຊ່ວຍເຫລືອ ແລະ ພັດທະນາຄຸນນະພາບຊີວິດຂອງຜູ້ດ້ອຍໂອກາດ, ຜູ້ປະສົບໄພພິບັດ ແລະ ຜູ້ຕົກເປັນເຫຍື່ອຂອງການຄ້າມະນຸດ.
- ສ້າງຕາໜ່າງປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ຂັ້ນບ້ານໃຫ້ໄດ້ 800 ບ້ານ.

**ກິດຈະກຳ**

- ໂຄສະນາເຜີຍແຜ່ລະບຽບກົດໝາຍ ກ່ຽວກັບປະກັນສັງຄົມ ໃຫ້ກັບຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານພາກເອກະຊົນ ແລະ ປະຊາຊົນທົ່ວໄປ ເພື່ອໃຫ້ພວກເຂົາເຂົ້າໃຈ ແລະ ເຫັນຄວາມສຳຄັນຂອງການປະກັນສຸຂະພາບ.
- ເຜີຍແຜ່ນະໂຍບາຍ, ດຳລັດວ່າດ້ວຍສະຫວັດດີການສັງຄົມ ລວມທັງຕາໜ່າງການຮັກສາຄວາມປອດໄພຂອງສັງຄົມໃຫ້ແກ່ຜູ້ເຄາະຮ້າຍຈາກໄພພິບັດ ແລະ ຮັບປະກັນໃຫ້ມີການປະສານສົມທົບກັນກັບວຽກຈຸດສຸມ 2 ໃນເປົ້າໝາຍ 3.
- ປັບປຸງກົນໄກການປະສານງານລະຫວ່າງຂະແໜງແຮງງານ, ຂະແໜງສາທາລະນະສຸກ ແລະ ຂະແໜງການກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານປະກັນສັງຄົມໃຫ້ເປັນທັນສະໄໝ ແລະ ມີປະສິດທິພາບສູງຂຶ້ນ.
- ກໍ່ສ້າງພື້ນຖານໂຄງລ່າງໃຫ້ແກ່ໝູ່ບ້ານພະນັກງານເສຍອົງຄະ.
- ສຳຫຼວດສະຖິຕິຄົນພິການ ແລະ ຜູ້ອາຍຸສູງ ໃນຂອບເຂດທົ່ວປະເທດ.
- ໂຄງການດູແລຮັກສາສຸຂະພາບຂັ້ນພື້ນຖານໃຫ້ແກ່ຄົນພິການ ແລະ ຜູ້ອາຍຸສູງ.

- ປັບປຸງການບໍລິການໃຫ້ຄໍາປຶກສາ, ການປົກປ້ອງເດັກນ້ອຍ ແລະ ຄອບຄົວທີ່ມີຄວາມສ່ຽງ.
- ເສີມຂະຫຍາຍແຜນງານການຊ່ວຍເຫຼືອສຸກເສີນຢ່າງກວ້າງຂວາງ ເພື່ອຊ່ວຍເຫຼືອຜູ້ເຄາະຮ້າຍຈາກໄພພິບັດ ໂດຍມີການຮ່ວມມືກັນຈາກທຸກພາກສ່ວນໃນສັງຄົມ.
- ປະຕິບັດວຽກງານປົກປ້ອງ ແລະ ຊ່ວຍເຫຼືອເດັກນ້ອຍ ແລະ ສ້າງຄະນະດັ່ງກ່າວຢູ່ຂັ້ນແຂວງ ແລະ ເມືອງ.

## 3.5.6. ແຜນວຽກຈຸດສຸມ 6: ພັດທະນາ ແລະ ປົກປັກຮັກສາຮີດຄອງປະເພນີ ແລະ ວັດທະນະທໍາອັນດີງາມຂອງຊາດ.

» **ທິດທາງ**:

ປົກປັກຮັກສາ, ເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍລະດົກທາງດ້ານວັດທະນະທໍາ ແລະ ຮັກສາຮີດຄອງປະເພນີອັນດີງາມຂອງຊາດໃຫ້ຢູ່ຄູ່ກັບສັງຄົມລາວຕະຫລອດໄປ; ເສີມຂະຫຍາຍວັດທະນະທໍາອັນດີງາມທີ່ເປັນເອກະລັກສະເພາະຂອງເຜົ່າຊົນ ແລະ ໂຄສະນາໃຫ້ສັງຄົມ ແລະ ຊາວໂລກໄດ້ຮັບຮູ້ ເພື່ອເປັນການສົ່ງເສີມວຽກງານການທ່ອງທ່ຽວຕິດພັນກັບວັດທະນະທໍາ; ພັດທະນາອະລິຍະທໍາທາງດ້ານວັດຖຸ ແລະຈິດໃຈຂອງສັງຄົມ, ພ້ອມທັງຮັບເອົາຄຸນຄ່າວັດທະນະທໍາທີ່ກ້າວໜ້າຂອງມວນມະນຸດຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝສາມາດເຊື່ອມໂຍງກັບສາກົນ, ສະກັດກັ້ນສິ່ງຫຍໍ້ທໍ້ທາງດ້ານວັດທະນະທໍາທີ່ເປັນໄພຕໍ່ສັງຄົມ. ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະ ທໍາໃຫ້ມີຄວາມຫລາກຫລາຍ ແລະ ມີຄຸນນະພາບສູງ,ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດຢ່າງຍືນຍົງ. ສ້າງ ແລະ ພັດທະນາບ້ານວັດທະນະທໍາ ແລະ ຄອບຄົວວັດທະນະທໍາໃຫ້ຫລາຍຂຶ້ນ ເພື່ອເຮັດໃຫ້ແກ່ການສ້າງສັງຄົມໃຫ້ມີຄວາມສະຫງົບ, ປອດໄພ ແລະ ສີວິໄລ.

» **ຄາດໝາຍ**:

- ສ້າງຄອບຄົວຊຶ່ງເປັນຫົວໜ່ວຍທີ່ສໍາຄັນທີ່ສຸດໃຫ້ກາຍເປັນຄອບຄົວວັດທະນະທໍາຢ່າງແທ້ຈິງ ແລະ ກວມ 80% ຂອງຄອບຄົວທົ່ວປະເທດ, ບ້ານວັດທະນະທໍາກວມ 65% ແລະ ກຸ່ມບ້ານວັດທະນະທໍາກວມ 16%.
- ຟື້ນຟູ, ອະນຸລັກ ແລະ ສົ່ງເສີມມໍລະດົກວັດທະນະທໍາທາງດ້ານວັດຖຸ ແລະ ບໍ່ເປັນວັດຖຸທີ່ເປັນເອກະລັກແຕ່ລະປະເພດໃຫ້ກວ້າງຂວາງກວ່າເກົ່າ.
- ຍົກລະດັບມໍລະດົກວັດທະນະທໍາ, ປະຫວັດສາດແລະທໍາມະຊາດລະດັບທ້ອງຖິ່ນໃຫ້ເປັນມໍລະດົກລະດັບຊາດ.
- ສ້າງສວນອຸດທິຍານທາງດ້ານວັດທະນະທໍາລະດັບຊາດ ແລະ ລະດັບທ້ອງຖິ່ນ.
- ສ້າງບ້ານວັດທະນະທໍາຕົວແບບໃຫ້ກາຍເປັນຈຸດຫມາຍປາຍທາງໃຫ້ແກ່ການທ່ອງທ່ຽວ.

» **ໂຄງການຕົ້ນຕໍ**:

- ສົ່ງເສີມການຟື້ນຟູ, ອານຸລັກ, ປົກປັກຮັກສາ, ສືບທອດເສີມຂະຫຍາຍມູນເຊື້ອ ແລະ ຄຸນຄ່າມໍລະດົກທາງດ້ານວັດທະນະທໍາທີ່ເປັນເອກະລັກອັນດີງາມຂອງຊາດ.
- ຈັດຕັ້ງເຜີຍແຜ່ ແລະ ແນະນໍາກ່ຽວກັບການປູກຈິດສໍານຶກໃຫ້ປະຊາຊົນບັນດາເຜົ່າຮັບຮູ້ຄຸນຄ່າວັດທະນະທໍາຂອງຊາດຢູ່ຕົວເມືອງໃຫຍ່ ແລະ ເຂດຊຸມຊົນ ເພື່ອສ້າງແບບແຜນການດໍາລົງຊີວິດແບບໃໝ່ທີ່ສອດຄ່ອງກັບວັດທະນະທໍາທີ່ກ້າວໜ້າ.
- ສ້າງແຜນແມ່ບົດຄຸ້ມຄອງ, ປົກປັກຮັກສາທົ່ງໄຫຫີນແຂວງຊຽງຂວາງ ແລະ ຫີນໝາກໜໍ່ ແຂວງຄໍາມ່ວນ ເພື່ອສະເຫນີເຂົ້າເປັນມໍລະດົກໂລກ.
- ຂຸດຄົ້ນ ແລະ ຄົ້ນຄວ້າແຫລ່ງບູຮານຄະດີໃນຂອບຂອບເຂດທົ່ວປະເທດ.

» **ນະໂຍບາຍ ແລະ ນິຕິກໍາຕ່າງໆ**:

- ປັບປຸງ ແລະ ສ້າງນິຕິກໍາຄຸ້ມຄອງວຽກງານວັດທະນະທໍາ ແລະ ກ້າວໄປສູ່ການຈົດທະບຽນເປັນມໍລະດົກແຫ່ງຊາດ.
- ຄົ້ນຄວ້າກໍານົດລາງວັນດ້ານຕ່າງໆຂອງຂະແໜງວັດທະນະທໍາໃນລະດັບພູມີພາກໃຫ້ສອດຄ່ອງກັບມາດຕະຖານຂອງພາກພື້ນ
- ເພີ່ມທະວີການປະສານງານລະຫວ່າງສູນກາງແລະທ້ອງຖິ່ນໃນການປັບປຸງຫລັກສູດການຮຽນ-ການສອນຂອງຂະແໜງວັດທະນະທໍາ ນັບແຕ່ລະດັບຊັ້ນສູງ, ປຣິນຍາຕີໃຫ້ມີຄຸນນະພາບ.

## 3.5.7. ແຜນວຽກຈຸດສຸມ 7: ຮັບປະກັນສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳແລະ ສີວິໄລ.

### 1. ເພີ່ມຄວາມຄວາມສາມັກຄີແລະຄວາມປອງດອງ

» **ທິດທາງ**:

ເສີມຂະຫຍາຍ ແລະ ຍົກສູງສະຕິຂອງປະຊາຊົນບັນດາເຜົ່າ ໃຫ້ມີຄວາມເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານຢ່າງໜັກແໜ້ນ; ເປີດກ້ວາງ ແລະ ເສີມຂະຫຍາຍປະຊາທິປະໄຕຕາມຫຼັກການແບບລວມສູນຢ່າງເຂັ້ມງວດ, ເພີ່ມທະວີກໍ່ສ້າງຮາກຖານການເມືອງໃຫ້ເຂັ້ມແຂງດ້ວຍການອົບຮົມດ້ານການເມືອງ-ແນວຄິດ ແລະ ລະບຽບວິໄນທີ່ພັກ-ລັດວາງອອກ. ເສີມຂະຫຍາຍແນວຄິດປະດິດສ້າງຂອງນັກຮຽນຮູ້ປັນຍາຊົນ, ພະນັກງານທະຫານ-ຕຳຫລວດປະກອບສ່ວນໃນການສ້າງລັດປະຊາທິປະໄຕ ທີ່ມີສັນຕິພາບ ເອກະລາດ ວັດທະນາຖາວອນ. ເສີມຂະຫຍາຍແບບແຜນນຳພາທີ່ເປັນມູນເຊື້ອອັນດີງາມຂອງພັກ-ລັດໃຫ້ແທດເໝາະກັບສະພາບຕົວຈິງ, ມີວິທະຍາສາດ, ມີປະຊາທິປະໄຕ. ເປັນເຈົ້າການໃນເຊື່ອມໂຍງ ແລະ ຮ່ວມມືກັບຕ່າງປະເທດ ໃຫ້ສອດຄ່ອງກັບແນວທາງການຕ່າງປະເທດຂອງພັກ-ລັດ.

ເສີມຂະຫຍາຍວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບໃຫ້ມີຄວາມເຂັ້ມແຂງໂດຍໃຫ້ທຸກຄົນເປັນເຈົ້າການໃນການຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສ້າງຄວາມເຊື່ອໝັ້ນ ແລະ ຄວາມປອດໄພໃນການດຳລົງຊີວິດ, ການດຳເນີນທຸລະກິດ ແລະ ການທ່ອງທ່ຽວ; ຮັບປະກັນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ດຳເນີນເປັນປົກກະຕິ ແລະ ມີໝາກຜົນສູງ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ**:

- ເຜີຍແຜ່ແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການສຶກສາອົບຮົມການເມືອງແນວຄິດໃຫ້ແມ່ຍິງ, ໄວໜຸ່ມ, ເຍົາວະຊົນ ແລະ ປະຊາຊົນບັນດາເຜົ່າໃຫ້ເຊື່ອມຊຶມຢ່າງກວ້າງຂວາງ ແລະ ເລິກເຊິ່ງເພື່ອປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາປະເທດຊາດ.
- ປັບປຸງກົງຈັກການຈັດຕັ້ງ ແລະ ການຄຸ້ມຄອງ ຕາມທິດເສີມຂະຫຍາຍວຽກງານສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ (3 ສ້າງ).
- ເພີ່ມທະວີການປະສານງານລະຫວ່າງສູນກາງ-ທ້ອງຖິ່ນ, ທ້ອງຖິ່ນ-ທ້ອງຖິ່ນ, ລັດ-ເອກະຊົນ ແລະ ພາກສ່ວນກ່ຽວຂ້ອງອື່ນໆ.

### 2. ສະກັດກັ້ນປະກົດການຫຍໍ້ທໍ້ທາງສັງຄົມ

» **ທິດທາງ**:

ເພື່ອສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ໃນສັງຄົມທີ່ເປັນໄພຂົ່ມຂູ່ ແລະ ກີດຂວາງການປົກປັກຮັກສາ ແລະ ການພັດທະນາປະເທດຊາດໃຫ້ຫລຸດໜ້ອຍຖອຍລົງເທື່ອລະກ້າວ ຊຶ່ງການຄ້າມະນຸດແມ່ນໜຶ່ງໃນປະກົດການຫຍໍ້ທໍ້ທີ່ຮ້າຍແຮງ, ມີລັກສະນະການເມືອງ ແລະ ລັກສະນະຂ້າມຊາດ. ດັ່ງນັ້ນ ການປ້ອງກັນ ແລະ ປົກປ້ອງປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ບໍ່ໃຫ້ຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດແມ່ນຈຳເປັນຢ່າງຍິ່ງ; ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວ ເວົ້າລວມ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເວົ້າສະເພາະ ແລະ ເພື່ອປົກປ້ອງຖານະບົດບາດທາງດ້ານການເມືອງ ແລະ ກຽດສັກສີຂອງ ສປປລາວ; ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍແລະ ລະບຽບການຕ່າງໆຂອງລັດໃຫ້ປະກົດຜົນເປັນຈິງ.

ເພີ່ມທະວີໃນການໂຄສະນາເຜີຍແຜ່, ເຊື່ອມຊຶມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູ, ກົດໝາຍ ແລະ ນິຕິກຳຕ່າງໆຂອງລັດໃຫ້ແກ່ສັງຄົມ ໂດຍສະເພາະປະຊາຊົນໃນເຂດຊົນນະບົດດ້ວຍຫລາຍຮູບການ; ແນ່ໃສ່ໃຫ້ປະຊາຊົນບັນດາເຜົ່າມີສະຕິເຄົາລົບ ແລະປະຕິບັດກົດໝາຍ, ເປັນເຈົ້າການເຂົ້າຮ່ວມພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ ໂດຍສະເພາະແມ່ນການສະກັດກັ້ນ ແລະ ຕ້ານປະກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນ: ການສໍ້ລາດບັງຫລວງ, ການຫລັກຊັບ, ການປຸ້ນຊັບ, ການຊິງຊັບ, ການຄ້າມະນຸດ, ການຄ້າໂສເພນີ, ການຄ້າຂາຍ ແລະ ເສບຢາເສບຕິດ.

» **ຄາດໝາຍ**:

- ເຮັດໃຫ້ທົ່ວສັງຄົມ ໂດຍສະເພາະແມ່ນແມ່ຍິງ, ເດັກນ້ອຍ ກຸ່ມສ່ຽງ ມີຄວາມຮັບຮູ້ກ່ຽວກັບຜົນຮ້າຍ ແລະ ຜົນກະທົບຂອງການຄ້າມະນຸດ
- ນຳເອົາຜູ້ກະທຳຜິດມາລົງໂທດຕາມກົດໝາຍ ແລະ ໃຫ້ການປົກປ້ອງຊ່ວຍເຫລືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ
- ເຮັດໃຫ້ການຮ່ວມມືສະກັດກັ້ນ ແລະ ຕ້ານການຄ້າມະນຸດໄດ້ຮັບການປັບປຸງດີຂຶ້ນໃນທົ່ວປະເທດ
- ເຮັດໃຫ້ນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດໄດ້ຮັບການຈັດຕັ້ງປະຕິບັດເປັນຮູບປະທຳ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ:**

- ສ້າງ ແລະ ຜັນຂະຫຍາຍແຜນງານແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດໄລຍະ 2016-2020 ແລະ 2016-2025 ແລະ ວິໄສສທັດຮອດປີ 2030.
- ຂະຫຍາຍ ແລະ ປັບປຸງກົນໄກການຈັດຕັ້ງເພື່ອສະກັດກັ້ນ ແລະຕ້ານການຄ້າມະນຸດຂັ້ນສູນກາງ ແລະ ທ້ອງຖິ່ນ.
- ຮ່ວມມືສອງຝ່າຍ, ຫລາຍຝ່າຍ ແລະ ຮ່ວມມືກັບອົງການຈັດຕັ້ງສາກົນ, ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ກ່ຽວກັບວຽກງານປ້ອງກັນ, ສະກັດກັ້ນ ແລະ ການຕ້ານການຄ້າມະນຸດ.
- ສ້າງ ແລະ ເຜີຍແຜ່ກົດໝາຍ, ນິຕິກຳຕ່າງໆກ່ຽວກັບການປ້ອງກັນ, ສະກັດກັ້ນ ແລະ ຕ້ານການຄ້າມະນຸດ.
- ໂຄສະນາປູກຈິດສຳນຶກກ່ຽວກັບຜົນຮ້າຍ, ຜົນກະທົບຂອງການຄ້າມະນຸດ ແລະ ບົດບາດຍິງ-ຊາຍກ່ຽວກັບການຕ້ານການຄ້າມະນຸດ.
- ສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນເຈົ້າການໃນການສະກັດກັ້ນ ແລະ ຕ້ານການຄ້າມະນຸດ.
- ສຳຫລວດກ່ຽວກັບສະພາບການຄ້າມະນຸດ ແລະ ການກັບຄືນສູ່ສັງຄົມ.
- ສ້າງ ແລະ ປັບປຸງຖານຂໍ້ມູນສຳລັບການຕ້ານການຄ້າມະນຸດລະດັບຊາດ ແລະ ລະບົບສາຍດ່ວນຕ້ານການຄ້າມະນຸດ.
- ສ້າງຄວາມເຂັ້ມແຂງໃຫ້ພະນັກງານປົກປ້ອງກົດໝາຍໃຫ້ມີຄວາມຊຳນານງານໃນການກຳນົດຜູ້ຖືກເຄາະຮ້າຍ ແລະ ການດຳເນີນຄະດີ.
- ປັບປຸງການປະສານງານລະຫວ່າງຂະແໜງການ, ອົງການທີ່ຮັບຜິດຊອບດຳເນີນຄະດີຕາມຂະບວນຍຸຕິທຳ ແລະ ພາກສ່ວນທີ່ເຮັດໜ້າທີ່ຊ່ວຍເຫລືອຜູ້ຖືກເຄາະຮ້າຍ.
- ປັບປຸງການປະສານງານ, ແລກປ່ຽນຂໍ້ມູນຂ່າວສານລະຫວ່າງສອງຝ່າຍ ແລະ ຫລາຍຝ່າຍກ່ຽວກັບການບັງຄັບໃຊ້ກົດໝາຍ, ການດຳເນີນຄະດີ ແລະ ການປົກປ້ອງຊ່ວຍເຫລືອຜູ້ຖືກເຄາະຮ້າຍ.
- ຊ່ວຍເຫລືອທາງດ້ານສະຖານທີ່ພັກເຊົາທີ່ປອດໄພ ແລະ ສິ່ງຈຳເປັນໃນການດຳລົງຊີວິດ.
- ຊ່ວຍເຫລືອທາງດ້ານການແພດ, ທາງດ້ານກົດໝາຍ, ທາງດ້ານການສຶກສາ, ການຝຶກອົບຮົມວິຊາຊີບ ແລະ ຊອກວຽກເຮັດງານທຳໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ.
- ຊ່ວຍເຫລືອທາງດ້ານເສດຖະກິດ, ຊ່ວຍເຫລືອການກັບຄືນສູ່ຄອບຄົວ ແລະ ສັງຄົມ.

  ສຳຫລວດ, ປະເມີນຜົນການຈັດຕັ້ງປະຕິບັດແຜນງານແຫ່ງຊາດແຕ່ລະໄລຍະ, ທົບທວນ ແລະ ກະກຽມສ້າງແຜນງານແຫ່ງຊາດໃນຕໍ່ໜ້າ.

» **ນະໂຍບາຍ ແລະ ນິຕິກຳ**

- ແຜນງານແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ.
- ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ສະບັບເລກທີ 156/ນຍ, ລົງວັນທີ 8 ກັນຍາ 2008 .
- ຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການເພີ່ມວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ສະບັບເລກທີ 27/ນຍ, ລົງວັນທີ 5 ຕຸລາ 2011.

- ກົດໝາຍອາຍາ ສະບັບປັບປຸງ ປີ 2005 ມາດຕາ 134.
- ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງປີ 2004.
- ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກປີ 2006.

## 3.6. ເພື່ອບັນລຸເປົ້າໝາຍ 3 ຕ້ອງສຸມໃສ່ແຜນວຽກຈຸດສຸມດັ່ງນີ້:

### 3.6.1. ແຜນວຽກຈຸດສຸມ 1: ການປົກປັກຮັກສາສະພາບແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ.

» **ທິດທາງ**:

ເພື່ອຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄຸນນະພາບຕາມທິດສີຂຽວ ແລະ ຍືນຍົງ, ເອົາໃຈໃສ່ການວາງແຜນ, ການຄຸ້ມຄອງນຳໃຊ້ຊັບພະຍາກອນທຳມະຊາດ (ດິນ, ປ່າໄມ້, ຊີວະນານາພັນ, ແຮ່ທາດ, ຊັບພະຍາກອນນ້ຳ ແລະ ດິນບໍລິເວນນ້ຳ) ຢ່າງສົມເຫດສົມຜົນ, ໝັ້ນຄົງ, ຍຸຕິທຳ ແລະ ເກີດປະໂຫຍດສູງສຸດ ແມ່ນທິດທາງໜ້າທີ່ຫລັກຂອງການບັນລຸການພັດທະນາຕົວເມືອງ ແລະ ຊົນນະບົດທີ່ມີຄວາມຍືນຍົງທາງດ້ານສິ່ງແວດລ້ອມ, ສີຂຽວສະອາດ ແລະ ງາມຕາ ເພື່ອໃຫ້ປະ ຊາຊົນມີຊີວິດການເປັນຢູ່ທີ່ດີ, ມີສຸຂະພາບທີ່ແຂງແຮງ ແລະ ປອດໄພຈາກມົນລະພິດ. ເພີ່ມຄວາມຮັບຮູ້ ແລະ ສ້າງຄວາມເຂົ້າໃຈກ່ຽວກັບປະໂຫຍດທາງດ້ານເສດຖະກິດ ແລະ ສັງຄົມ ໂດຍສະເພາະ ຈາກການມີສ່ວນຮ່ວມໃນການຄຸ້ມຄອງຊັບພະຍາ ກອນທຳມະຊາດຢ່າງມີປະສິດທິຜົນ ແລະ ການປົກປັກຮັກສາສິ່ງແວດລ້ອມ.

» **ຄາດໝາຍ**:

- ຂົງເຂດການຄຸ້ມຄອງ ແລະ ບໍລິຫານທີ່ດິນ:
  - ສູ້ຊົນສ້າງແຜນແມ່ບົດການນຳໃຊ້ທີ່ດິນແຫ່ງຊາດ ແລະ ຈັດສັນການນຳໃຊ້ທີ່ດິນແບບຮອບດ້ານໃຫ້ສຳເລັດໃນຂັ້ນແຂວງ (18 ແຂວງ), 92 ເມືອງ ແລະ 3.455 ບ້ານໃນຂອບເຂດທົ່ວປະເທດ.
  - ສຳຫລວດ ແລະ ຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ ໃນເຂດຊົນນະບົດ ແລະ ຕົວເມືອງໃຫ້ໄດ້ 400.000 ຕອນ.
  - ສຳຫລວດຂຶ້ນບັນຊີສຳມະໂນທີ່ດິນ ພ້ອມທັງປ້ອນຂໍ້ມູນຕອນດິນເຂົ້າຄອມພິວເຕີ້ໃຫ້ໄດ້ 500.000 ຕອນ;
  - ດຳເນີນການສ້າງແຜນທີ່ເຂດປະເມີນລາຄາທີ່ດິນຢູ່ໃນ 100 ເມືອງໃນຂອບເຂດທົ່ວປະເທດ;
  - ປັບປຸງລະບົບການຄຸ້ມຄອງທີ່ດິນໃຫ້ມີຄວາມທັນສະໄໝດ້ວຍການນຳໃຊ້ລະບົບໄອທີ ເຂົ້າໃນວຽກງານເກັບກຳຂໍ້ມູນແບບຄົບຊຸດ (ຂໍ້ມູນສຳມະໂນທີ່ດິນ, ການເຊົ່າ ແລະ ສຳປະທານ, ການຂຶ້ນທະບຽນທີ່ດິນ, ຈົດທະບຽນທີ່ດິນ, ການປະເມີນລາຄາທີ່ດິນ) ເພື່ອຮັບປະກັນສິດນຳໃຊ້ທີ່ດິນຂອງປະຊາຊົນ, ຫລຸດຜ່ອນຂໍ້ຂັດແຍ່ງກ່ຽວກັບທີ່ດິນ, ຮັບປະກັນການເກັບລາຍຮັບຈາກທີ່ດິນໃຫ້ເພີ່ມຂຶ້ນ.
- ຂົງເຂດການຄຸ້ມຄອງຊັບພະຍາກອນນ້ຳ:
  - ຄຸ້ມຄອງຊັບພະຍາກອນນ້ຳແບບຄົບຊຸດ ຕາມຫຼັກການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານໃນເຂດ 10 ອ່າງແມ່ນ້ຳທີ່ເປັນບູລິມະສິດຂອງການພັດທະນາ (ນ້ຳອູ, ນ້ຳງື່ມ, ເຊບັ້ງໄຟ, ເຊບັ້ງຫຽງ, ນ້ຳງຽບ, ນ້ຳເທີນ-ນ້ຳກະດິງ, ເຊໂດນ, ນ້ຳຊ່ຳ, ນ້ຳມ້າ, ເຊກອງ ແລະ ອ່າງຮັບນ້ຳຍ່ອຍອື່ນໆທີ່ມີເງື່ອນໄຂ ).
  - ສ້າງສວນສາທິດແຫ່ງຊາດກ່ຽວກັບການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານທີ່ນ້ຳເປາະ, ເມືອງວັງວຽງ ແຂວງວຽງຈັນ ເພື່ອເປັນບ່ອນສຶກສາຄົ້ນຄວ້າ, ຝຶກອົບຮົມ, ທັດສະນະສຶກສາ, ແລກປ່ຽນບົດຮຽນ ແລະ ປູກຈິດສຳນຶກໃຫ້ມວນຊົນຢ່າງກວ້າງຂວາງ.
  - ສ້າງ ແລະ ຈັດຕັ້ງປະຕິບັດແຜນການຄຸ້ມຄອງດິນບໍລິເວນນ້ຳ ແລະ ສົນທິສັນຍາຣາມຊາໃຫ້ເຄັ່ງຄັດ ແລະ ມີປະສິດທິພາບສູງ.
  - ປັບປຸງ ແລະ ສ້າງຈຸດຕິດຕາມກວດກາຄຸນນະພາບນ້ຳຢ່າງໜ້ອຍໃຫ້ມີ 200 ຈຸດ ແລະ ສຶກສາເພື່ອຈັດລະດັບຄວາມສ່ຽງຂອງຄຸນນະ ພາບນ້ຳໃນອ່າງຮັບນ້ຳໃຫ້ໄດ້ຢ່າງໜ້ອຍ 2 ອ່າງ (ເປັນກໍລະນີສຶກສາ).

- ຂົງເຂດຄຸ້ມຄອງບໍລິຫານຊັບພະຍາກອນປ່າໄມ້ ແລະ ຊີວະນາໆພັນ:
  - ສ້າງແຜນຈັດສັນ, ຄຸ້ມຄອງ, ປົກປັກຮັກສາ ແລະ ຟື້ນຟູປ່າໄມ້ແບບຍືນຍົງໃນເຂດປ່າສະຫງວນແຫ່ງຊາດໃຫ້ໄດ້ 7 ແຫ່ງ (ນ້ຳຫ້າ, ລະວີງ-ລະເວີນ, ນ້ຳແອດ-ພູເລີຍ, ນາກາຍ-ນ້ຳເທີນ, ຫີນໜາມໜໍ່, ດົງອຳພຳ, ດົງຫົວສາວ).
  - ສຳເລັດການຈັດສັນ, ການກຳນົດເຂດ ແລະ ຟື້ນຟູເນື້ອທີ່ປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ ໂດຍການຟື້ນຟູປ່າໄມ້ ດ້ວຍທຳມະຊາດໃຫ້ໄດ້ 1,5 ລ້ານເຮັກຕາ ແລະ ການປູກປ່າໃຫ້ໄດ້ 35.000 ເຮັກຕາ.
  - ສຳເລັດການປັບປຸງ ການຂຶ້ນບັນຊີ ຊີວະນາໆພັນ ໃນ ສປປລາວ ແລະ ບັນຊີ ຊີວະນາໆພັນທີ່ຫາຍາກແຫ່ງຊາດ ຢູ່ໃນປ່າປ້ອງກັນ ແລະ ປ່າສະຫງວນແຫ່ງຊາດ.
  - ສຳເລັດການສ້າງກົນໄກການຄຸ້ມຄອງ ການຫຼຸດຜ່ອນທາດອາຍພິດເຮືອນແກ້ວ ຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເຊື່ອມໂຊມ.
  - ສຳເລັດການດຳເນີນການທົດລອງສ້າງຕົວແບບສວນອຸທິຍານແຫ່ງຊາດທາງທຳມະຊາດ ໃນ 2 ເຂດຄື: ປ່າສະຫງວນແຫ່ງຊາດ ນ້ຳແອັດ-ພູເລີຍ ແລະ ປ່າສະຫງວນແຫ່ງຊາດ ນາກາຍ-ນ້ຳເທີນ ແລະ ສະເໜີເອົາປ່າສະຫງວນ ຫີນໜາມໜໍ່ຂຶ້ນເປັນສະຖານມໍລະດົກທາງທຳມະຊາດຂອງໂລກແຫ່ງທຳອິດຂອງລາວ ໂດຍອົງການ UNESCO;
  - ຫຼຸດຜ່ອນການຄ້າໄມ້ ແລະ ສັດປ່າຜິດກົດໝາຍ ໃຫ້ໄດ້ 5%.
- ຂົງເຂດການຄຸ້ມຄອງຊັບພະຍາກອນແຮ່ທາດ:
  - ສຳຫຼວດ, ຈັດສັນ, ສ້າງກົນໄກ ແລະ ລະບົບຖານຂໍ້ມູນຊັບພະຍາກອນແຮ່ທາດ ໃຫ້ສາມາດກຳນົດໄດ້ແຮ່ທາດທີ່ມີທ່າແຮງໃນການສົ່ງອອກເປັນວັດຖຸດິບ, ທ່າແຮງໃນການນຳມາຊົມໃຊ້ພາຍໃນ, ແຮ່ທາດທີ່ມີປະລິມານຫຼາຍ, ປະລິມານໜ້ອຍ ເພື່ອສາມາດກຳນົດທິດທາງໃນການວາງແຜນນຳໃຊ້ແຮ່ທາດໃຫ້ມີປະສິດທິຜົນສູງສຸດ ໂດຍວາງແຜນ ແລະ ກຳນົດເຂດສະຫງວນ ແລະ ປົກປັກຮັກສາແຮ່ທາດໃຫ້ໄດ້ 27,950.82 ກິໂລຕາແມັດ ໃນ 12 ເຂດສະຫງວນທົ່ວປະເທດ.
  - ສຳຫຼວດແລະສ້າງແຜນທີ່ ທໍລະນີສາດ-ແຮ່ທາດມາດຕາສ່ວນ 1:200,000 ຢູ່ໃນເຂດພາກເໜືອເຊິ່ງກວມເອົາເຂດ
  - ເໜືອແຂວງວຽງຈັນ-ຕາເວັນຕົກສ່ຽງໃຕ້ແຂວງຫຼວງພະບາງ, ໃຕ້ແຂວງຫຼວງພະບາງ ແລະ ເຂດຕາເວັນອອກແຂວງໄຊຍະບູລີ.
  - ສຳຫຼວດ ແລະ ສ້າງແຜນທີ່ ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:200,000 ເຂດທີ່ຍັງບໍ່ທັນສຳເລັດ 75,045 ກິໂລຕາແມັດ ໃຫ້ສຳເລັດບໍ່ຫຼຸດ 50 % ຂອງເນື້ອທີ່ດັ່ງກ່າວ.
  - ສຳເລັດການ ປັບປຸງຫ້ອງວິໄຈ ແລະ ຫໍພິພິດຕະພັນ ທໍລະນີສາດ-ແຮ່ທາດ.
- ຂົງເຂດສິ່ງແວດລ້ອມ (ສົ່ງເສີມຄຸນນະພາບສິ່ງແວດລ້ອມ ແລະ ການຄວບຄຸມ ແລະ ຄຸ້ມຄອງມົນລະພິດ):
  - ສ້າງແຜນຄຸ້ມຄອງສິ່ງແວດລ້ອມແບບຮອບດ້ານໃນທຸກຂັ້ນແຂວງ ແລະ ຂັ້ນເມືອງ ແລະ ຊຸກຍູ້ສົ່ງເສີມໃຫ້ແຂວງທີ່ໄດ້ຮັບຮອງແລ້ວ ນຳໃຊ້ເຂົ້າໃນການວາງແຜນ ແລະ ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຂອງທ້ອງຖິ່ນຕົນໃຫ້ໄດ້ຢ່າງໜ້ອຍ 50%.
  - ສຳເລັດການສ້າງແນວຄວາມຄິດ, ກົນໄກ ແລະ ຄູ່ມືສຳລັບ ການພັດທະນາຕົວເມືອງແບບຍືນຍົງ. ຈັດຕັ້ງປະຕິບັດການເຮັດທົດລອງໂຄງການລົງທຶນ ຫຼື ກິດຈະການພັດທະນາຕົວແບບຕາມຕົວເມືອງລຽບເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ແລະ ລຽບຕາມລຳແມ່ນ້ຳຂອງ ໃຫ້ໄດ້ຢ່າງໜ້ອຍ 10 ຕົວເມືອງ.
  - ສ້າງກົນໄກການສົ່ງເສີມການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດການເຕີບໂຕສີຂຽວທີ່ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.
  - ຊຸກຍູ້ສົ່ງເສີມການພັດທະນາ ແລະ ນຳໃຊ້ຫຼັກສູດການສຶກສາດ້ານສິ່ງແວດລ້ອມ ເຂົ້າໃນລະບົບການສຶກສາທຸກຂັ້ນ.
  - ການພັດທະນາຊົນນະບົດສີຂຽວ ແລະ ຍືນຍົງໂດຍສ້າງລະບົບຄຸ້ມຄອງ ແລະ ຫລຸດຜ່ອນສິ່ງເສດເຫລືອ, ສານເຄມີທີ່ເປັນພິດອັນຕະລາຍ ແລະ ລະບົບການບຳບັດນ້ຳເສຍແບບປະສົມປະສານໃນເຂດຕົວເມືອງເທດສະບານຂອງແຂວງ ແລະ ນະຄອນຫຼວງ.
  - ເກັບກຳຂໍ້ມູນການປ່ອຍມົນລະພິດທາງອາກາດ ແລະ ທາງນ້ຳ ຈາກຂະແໜງການອຸດສະຫະກຳ ແລະ ການບໍລິ ການຢ່າງໜ້ອຍໃຫ້ໄດ້ ໂດຍພື້ນຖານ ແລະ ເກັບກຳ ຂໍ້ມູນການຈູດປ່າເຮັດໄຮ່ ຊຶ່ງເປັນແຫຼ່ງທີ່ມາອັນສຳຄັນ ຂອງມົນລະພິດທາງອາກາດໃຫ້ໄດ້ໂດຍພື້ນຖານ.

- ຕິດຕາມກວດກາ ແລະ ຄວບຄຸມມົນລະພິດ ຢູ່ໃນຂົງເຂດອ່າງຮັບນໍ້າ 10 ອ່າງບູລິມະສິດ.
- ຈັດຕັ້ງປະຕິບັດກົນໄກການຄວບຄຸມ, ກຳຈັດ, ຫຼຸດຜ່ອນປະລິມານ ສິ່ງເສດເຫຼືອທົ່ວໄປ, ສິ່ງເສດເຫລືອທີ່ເປັນພິດ ແລະ ອັນຕະລາຍ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດຫຼັກການ 3 Rs ໃນເຂດເທດສະບານເມືອງ ໃຫ້ໄດ້ຢ່າງໜ້ອຍ 5 ຕົວເມືອງ.
- ສ້າງຖານຂໍ້ມູນດ້ານສິ່ງແວດລ້ອມແບບຄົບຊຸດ, ກວດກາ ແລະ ວິໄຈ ມົນລະພິດ ສິ່ງເສດເຫຼືອທົ່ວໄປ, ສານເຄມີທີ່ເປັນພິດ ແລະ ອັນຕະລາຍ, ມົນລະພິດທາງອາກາດ, ມົນລະພິດທາງສຽງ ແລະ ປະລິມານການປ່ອຍນໍ້າເສຍ ໃນຂອບເຂດທົ່ວປະເທດໂດຍສະເພາະ ຕົວເມືອງຕາມເສັ້ນທາງຫຼວງເລກທີ 13.
- ສ້າງ, ພັດທະນາ ຫ້ອງວິໄຈ ແລະ ເຄື່ອງມືທີ່ທັນສະໄໝ ເພື່ອຮັບໃຊ້ໃນການວິໄຈ ແລະ ຕິດຕາມກວດກາ ຄຸນນະພາບສິ່ງແວດລ້ອມ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ**:

- ວາງແຜນ ແລະ ຄຸ້ມຄອງການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ໃນນັ້ນ: ດິນ, ປ່າໄມ້, ແຮ່ທາດ, ແຫຼ່ງນໍ້າ, ຊີວະນານາພັນ.
- ວາງແຜນພັດທະນາຕົວເມືອງ ແລະ ຊຸມນະບົດໃຫ້ຍືນຍົງໂດຍຕິດພັນສະໜິດແໜ້ນກັບການສ້າງສະພາບແວດລ້ອມທີ່ດີ ແລະ ການກຳນົດເຂດເມືອງໃໝ່ສຳລັບຢູ່ອາໄສ, ເຂດສາທາລະນະ ເພື່ອພັກຜ່ອນ, ເຂດປະຫວັດສາດ, ເຂດອະນຸລັກມໍລະດົກ.
- ເພີ່ມທະວີການຄົ້ນຄວ້າ, ທົດລອງ ແລະ ນັກວິຊາການທາງດ້ານສິ່ງແວດລ້ອມໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ໂດຍການຊຸກຍູ້ສົ່ງເສີມການຈັດຕັ້ງປະຕິບັດຫລັກສູດການສຶກສາໃນແຕ່ລະຂັ້ນ.
- ສ້າງກົນໄກທາງການເງິນທີ່ຍືນຍົງ ໃນການກຳນົດແຫຼ່ງທຶນແລະກອງທຶນທີ່ຖາວອນເພື່ອຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍມີມາດຕະການເກັບອາກອນສິ່ງແວດລ້ອມ ແລະ ຄ່າປັບໄໝຕໍ່ຜູ້ລ່ວງລະເມີດ, ອັດຕາຄ່າພາກຫຼວງຈາກການສຳປະທານໃຫ້ແກ່ຂະແໜງພະລັງງານ, ກະສິກຳ ແລະ ບໍ່ແຮ່ຕ່າງໆ ແລະ ການມີສ່ວນຮ່ວມຂອງບັນດາໂຄງການລົງທຶນເອກະຊົນໃນການພັດທະນາເຂດຊົນນະບົດ, ປັບປຸງຄຸນນະພາບສິ່ງແວດລ້ອມ, ການພັດທະນາການທ່ອງທ່ຽວທາງທຳມະຊາດ ແລະ ວັດທະນະທຳ, ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ໃນ ເຂດຊົນນະບົດເພື່ອຮັບປະກັນການມີວຽກເຮັດງານທຳ ແລະ ຫລຸດຜ່ອນການຍົກຍ້າຍຖິ່ນຖານເຂົ້າສູ່ຕົວເມືອງ ແລະ ເຂດຊຸມຊົນແອອັດຕ່າງໆ.
- ຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາກັບສາກົນຢ່າງມີປະສິດທິພາບ ແລະ ທັນກຳນົດເວລາຕາມກອບການຮ່ວມມືກັບສາກົນ ແລະ ພາກພື້ນ.
- ເຂົ້າຮ່ວມເຈລະຈາກ່ຽວກັບຂໍ້ຕົກລົງດ້ານການຮ່ວມມືດ້ວຍຄວາມສະໝັກໃຈ ສຳລັບການປົກຄອງການນຳໃຊ້ກົດໝາຍດ້ວຍປ່າໄມ້ ແລະ ການຄ້າ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ.
- ປັບປຸງ ແລະ ສ້າງລະບົບຖານຂໍ້ມູນທີ່ດິນແບບຄົບຊຸດ (ຂໍ້ມູນສຳມະໂນທີ່ດິນ, ການເຊົ່າ ແລະ ສຳປະທານ, ການຂຶ້ນທະບຽນທີ່ດິນ) ໃນ 18 ແຂວງທົ່ວປະເທດ ເພື່ອສ້າງຖານການເກັບລາຍຮັບຈາກທີ່ດິນ.
- ສຳຫຼວດ, ຈັດສັນ, ກຳນົດເຂດພື້ນທີ່ປ່າໄມ້ທີ່ຍັງບໍ່ທັນໄດ້ກຳນົດໃນ 3 ປະເພດປ່າ ໃຫ້ສຳເລັດໃນຂອບເຂດທົ່ວປະເທດ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມໃຫ້ແກ່ບັນດາໂຄງການຂຸດຄົ້ນຊັບພະຍາກອນທຳມະຊາດ.
- ປັບປຸງລະບົບຂໍ້ມູນຂ່າວສານ ກ່ຽວກັບຄ່າໃຊ້ຈ່າຍທາງດ້ານສິ່ງແວດລ້ອມ ແລະ ສ້າງແຮງຈູງໃຈໃຫ້ບັນດາຜູ້ປະກອບການ ແລະ ບຸກຄົນຕ່າງໆປະຕິບັດຕາມທິດເສດຖະກິດສີຂຽວ.
- ສ້າງຄູ່ມືຄຸ້ມຄອງທາງດ້ານການເງິນແບບໃໝ່ ເພື່ອລະດົມການລົງທຶນຈາກພາກລັດ-ເອກະຊົນ ເຂົ້າໃນກິດຈະກຳຕ່າງໆໃນການປະຕິບັດນະໂຍບາຍສີຂຽວ.
- ສ້າງກົນໄກການຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ເພື່ອຮັບປະກັນການບໍລິຫານປ່າໄມ້ທີ່ມີປະສິດທິພາບ ແລະຍືນຍົງ, ປັບປຸງການຂຶ້ນບັນຊີຊີວະນາງພັນໃນ ສປປລາວ ແລະ ບັນຊີຊີວະນາງພັນທີ່ຫາຍາກ.

- ສ້າງກົນໄກທາງດ້ານການເງິນ, ລະບຽບການ ແລະ ສຶກສາຂໍ້ມູນສະພາບພື້ນຖານໃນການຄຸ້ມຄອງການຫຼຸດຜ່ອນທາດອາຍພິດເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ເສື່ອມໂຊມ ເພື່ອຮັບປະກັນໃຫ້ລາຍຮັບຈາກຂະແໜງປ່າໄມ້ໄດ້ຖືກນຳໃຊ້ເຂົ້າໃນການຟື້ນຟູ ແລະ ຄຸ້ມຄອງປ່າໄມ້.
- ເຮັດການປະເມີນເຂດປ່າໄມ້ພື້ນຖານ ແລະ ປ່າສະຫງວນທີ່ມີມູນຄ່າສູງໃນທົ່ວປະເທດ.

### » ນະໂຍບາຍ ແລະ ນິຕິກຳຕ່າງໆ:

- ນະໂຍບາຍການຮັກສາ ແລະ ຄຸ້ມຄອງແຫລ່ງນໍ້າ, ການຄໍ້າປະກັນແຫຼ່ງອາຫານ, ຄໍ້າປະກັນທາງດ້ານພະລັງງານ ແລະການພັດທະນາຕົວເມືອງທີ່ສະອາດ ແລະ ປອດໄພຊຶ່ງບັນດານະໂຍບາຍເຫຼົ່ານີ້ຕ້ອງມີການເຊື່ອມສານກັນຢ່າງກົມກຽວ ແລະ ຕິດພັນກັນຢ່າງສະໜິດແໜ້ນ.
- ນະໂຍບາຍເພີ່ມການປົກຫຸ້ມຂອງປ່າໄມ້.
- ນະໂຍບາຍສົ່ງເສີມການນຳໃຊ້ທີ່ດິນໄປພ້ອມໆກັບການປົກປັກຮັກສາ, ເຮັດໃຫ້ພົນລະເມືອງລາວມີສິດນຳໃຊ້ທີ່ດິນເພື່ອດຳລົງຊີວິດ, ສ້າງທີ່ຢູ່ອາໄສ ແລະ ທຳການຜະລິດຕາມກົດໝາຍ, ກຳນົດຢ່າງເປັນເອກະພາບ, ຫັນທີ່ດິນໃຫ້ເປັນທຶນ, ເປັນແຫຼ່ງສ້າງຄວາມຮັ່ງມີໃຫ້ປະຊາຊົນ ແລະ ປະເທດຊາດທັງຮັບປະກັນສິດຄຸ້ມຄອງລວມສູນ ແລະ ກຳມະສິດຂອງລັດ, ຕ້ານ ແລະ ສະກັດກັ້ນການລະເມີດກົດໝາຍ, ການສ້າງຮັ່ງຄູນມີຈາກທີ່ດິນທີ່ລະເມີດກົດໝາຍ.
- ສ້າງນະໂຍບາຍທີ່ດິນແຫ່ງຊາດ ແລະ ປັບປຸງກົດໝາຍວ່າດ້ວຍທີ່ດິນ ແລະ ສ້າງແຜນແມ່ບົດເພື່ອວາງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນ ແລະ ຊັບພະຍາກອນທຳມະຊາດໃນລະດັບທ້ອງຖິ່ນ, ເຂດແຄວ້ນ ແລະ ທົ່ວປະເທດ;
- ນະໂຍບາຍສ້າງກົນໄກການເງິນທີ່ຍືນຍົງໂດຍຮັບປະກັນການນຳໃຊ້ຜົນປະໂຫຍດຈາກການເຕີບໂຕຂອງເສດຖະກິດໃຫ້ກະຈ າຍລົງສູ່ຊົນນະບົດໃຫ້ທົ່ວເຖິງ ເ ພື່ອ ຫຼຸດຜ່ອນປະກົດ ການຫ ຍໍ້ທໍ້ໃນສັງຄົ ມ ແລ ະ ຫຼຸ ດຜ່ອ ນຜົນກ ະທົ ບຕໍ່ສິ່ງແວດລ້ອມ ເປັນຕົ້ນ ການບຸກລຸກປ່າໄມ້, ການຂຸດຄົ້ນ ເຄື່ອງປ່າຂອງດົງແບບຊະຊາຍ. ການເກັບຄ່າຊັບພະຍາກອນທຳມະຊາດຕ້ອງມີການທົບທວນຄືນເພື່ອໃຫ້ແຫຼ່ງລາຍຮັບນີ້ສົ່ງຜົນປະໂຫຍດສູງສຸດ ຕໍ່ການພັດທະນາພື້ນຖານໂຄງລ່າງ, ວັດທະນະທຳ-ສັງຄົມ ແລະ ສິ່ງແວດລ້ອມ ເປັນຕົ້ນ ຄ່າຕອບແທນຈາກການສຳປະທານໂຄງການໃຫຍ່.
- ນະໂຍບາຍດຶງດູດການລົງທຶນ ແລະ ລະດົມແຫຼ່ງທຶນທັງພາຍໃນແລະຕ່າງປະເທດເພື່ອສ້າງເສດຖະກິດສີຂຽວຕາມທິດທີ່ຍືນຍົງ.
- ນະໂຍບາຍສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການທີ່ກ່ຽວຂ້ອງກ່ຽວກັບການປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ຊີວະນານາພັນໃນການຮັກສາຄວາມສົມດຸນລະຫວ່າງການປົກປັກຮັກສາ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ ເຊັ່ນ: ຄວາມສົມດຸນຂອງລະບົບນິເວດ, ການຟື້ນຟູດິນ, ນໍ້າ ແລະ ປ່າໄມ້.
- ປະຕິບັດລະບຽບລັດແຫ່ງກົດໝາຍໂດຍການຄວບຄຸມການລັກລອບຄ້າສັດປ່າ, ການຕັດໄມ້ທີ່ຜິດກົດໝາຍ ແລະ ການຄ້າຂາຍໄມ້ທ່ອນ ລວມທັງປະຕິບັດກົດໝາຍການປະເມີນຜົນກະທົບທາງດ້ານສິ່ງແວດລ້ອມແລະສັງຄົມໂດຍສະເພາະ ແມ່ນໃນຂະແໜງຂົນສົ່ງ, ພະລັງງານ ແລະ ບໍ່ແຮ່.
- ນະໂຍບາຍໃນການສ້າງວຽກເຮັດງານທຳທີ່ຍືນຍົງໃຫ້ແກ່ຊຸມຊົນເພື່ອຫຼຸດຜ່ອນການທຳລາຍສິ່ງແວດລ້ອມ ແລະ ເພື່ອຜົນປະໂຫຍດຂອງຊາດໃນໄລຍະຍາວ.
- ສ້າງນິຕິກຳ ແລະ ລະບຽບການໃນການສ້າງຕັ້ງສວນອຸທິຍານທາງດ້ານທຳມະຊາດແຫ່ງຊາດຄຽງຄູ່ກັບການທ່ອງທ່ຽວແບບອະນຸລັກທຳມະຊາດໃນເຂດທີ່ມີປ່າໄມ້ ແລະ ຊີວະນານາພັນອຸດົມສົມບູນ
- ກວດກາ, ຕິດຕາມ ແລະ ໂຄສະນາເຜີຍແຜ່ລະບຽບການຕ່າງໆ.
- ເພີ່ມຄວາມສັກສິດໃນການນຳໃຊ້ກົດໝາຍ ແລະ ນິຕິກຳຕ່າງໆ ຕໍ່ກັບການຂຸດຄົ້ນໄມ້.
- ຕິດຕາມກວດກາ ແລະ ປະເມີນປະສິດທິພາບການລົງທຶນຂະໜາດໃຫຍ່ຂອງນັກລົງທຶນພາຍໃນ ແລະ ຕ່າງປະເທດໃນກອບການສຳປະທານທີ່ດິນ ເພື່ອຄົ້ນຄວ້າວິທີການ ແລະ ມາດຕະການແກ້ໄຂບັນຫາໃຫ້ທັນການ.

## 3.6.2. ແຜນວຽກຈຸດສຸມ 2: ກຽມຄວາມພ້ອມໃນການຮັບມືໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ.

» **ທິດທາງ**:

ເພື່ອຮັບປະກັນການມີສ່ວນຮ່ວມໃນການຫຼຸດຜ່ອນອາຍພິດເຮືອນແກ້ວໃຫ້ໜ້ອຍທີ່ສຸດ, ເພີ່ມທະວີ ແລະ ຍົກສູງຄວາມ-ສາມາດໃນການປັບໂຕ ແລະ ກຽມຄວາມພ້ອມໃນການຮັບມືກັບສະພາບການປ່ຽນແປງດິນຟ້າອາກາດ ໂດຍມີການເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນຄວາມສ່ຽງທາງດ້ານໄພບັດເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານຂອງຂະແໜງການທີ່ກ່ຽວຂ້ອງ.

» **ຄາດໝາຍ**:

- ສຳເລັດການກຳນົດກອບການສຶກສາຄົ້ນຄວ້າຄຸນລັກສະນະດ້ານອຸທົກກະສາດ, ກາຍະພາບ, ສານເຄມີຢູ່ໃນນ້ຳ, ກາຍະອິນຊີຂອງນ້ຳໜ້າດິນ ແລະ ນ້ຳໃຕ້ດິນ ລວມທັງການຈັດປະເພດສາຍນ້ຳ, ອ່າງຮັບນ້ຳ ແລະ ຄຸນນະພາບນ້ຳ ເພື່ອຮັບປະກັນການຈັດສັນທີ່ສົມດຸນ ແລະ ຍືນຍົງ ໄປຄຽງຄູ່ກັບການປົກປັກຮັກສາລະບົບນິເວດວິທະຍາ.
- ສ້າງຕັ້ງ ແລະ ປັບປຸງສະຖານອຸຕຸນິຍົມທັນເປັນທັນສະໄໝ 18 ສະຖານີ ແລະ ສະຖານີອຸທົກກະສາດ 8 ສະຖານີ.
- ສຳເລັດການສ້າງຕັ້ງ ແລະ ປັບປຸງຕາໜ່າງສະຖານີ ແລະ ລະບົບເຕືອນໄພໃນເຂດອ່າງແມ່ນ້ຳທີ່ເປັນບູລິມະສິດ 6 ແຂວງພາກກາງ ແລະ ພາກໃຕ້ (ອັດຕະປື, ເຊກອງ, ສາລະວັນ, ຈຳປາສັກ, ສະຫວັນນະເຂດ ແລະ ຄຳມ່ວນ).
- ສ້າງຕັ້ງ ແລະ ປັບປຸງສະຖານີ ອຸຕຸການບິນ ຢູ່ສະໜາມບິນສາກົນ ແລະ ສະໜາມບິນພາຍໃນທົ່ວປະເທດ.
- ສ້າງແຜນຄຸ້ມຄອງ ແລະ ສະກັດກັ້ນຕ້ານໄພທຳມະຊາດ (ລະບົບເຕືອນໄພ, ການຕອບໂຕ້, ການຊ່ວຍເຫຼືອສຸກເສີນ, ການຍົກຍ້າຍຄົນ ແລະ ຊັບສິນ ແລະ ລະບົບຟື້ນຟູ) ທີ່ມີປະສິດທິພາບ ແລະ ປະສິດທິຜົນສູງໃນຂອບເຂດທົ່ວປະເທດ.
- ສ້າງລະບົບການປ້ອງກັນ ແລະ ຄວບຄຸມໄພພິບັດເພື່ອສາມາດຮັບປະກັນຄວາມປອດໄພຂອງປະຊາຊົນໄດ້ທັນເວລາໃນຂອບເຂດທົ່ວປະເທດ.
- ປັບປຸງສະຖານີເຕືອນໄພແຜ່ນດິນໄຫວ 2 ແຫ່ງ ແລະ ສ້າງໃໝ່ 5 ແຫ່ງ ຢູ່ແຂວງພາກເໜືອ.
- ສ້າງກົນໄກ ແລະ ເສີມສ້າງຄວາມສາມາດກ່ຽວກັບການປັບຕົວການປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນຜົນກະທົບຈາກໄພພິບັດ,ການຕອບໂຕ້ສຸກເສີນຈາກໄພພິບັດທຳມະຊາດແລະການຫຼຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວຢູ່ໃນຂົງເຂດການປ່ຽນແປງການນຳໃຊ້ທີ່ດິນແລະປ່າໄມ້,ຂົງເຂດກະສິກຳ,ຂົງເຂດພະລັງງານ,ຂົງເຂດອຸດສາຫະກຳ ແລະ ຂົງເຂດສິ່ງແວດລ້ອມເຫຼືອໃຫ້ຄົບຊຸດພ້ອມທັງດຳເນີນການເຊື່ອມສານ ວຽກງານ ການປັບໂຕເຂົ້າກັບການປ່ຽນແປງດິນຟ້າອາກາດເຂົ້າໃນ ຂະແໜງບູລິມະສິດ (ຂະແໜງກະສິກຳ, ປ່າໄມ້, ນ້ຳ ແລະ ສາທາລະນະສຸກ).
- ສ້າງຕັ້ງກອງທຶນປ້ອງກັນໄພພິພັດ ແລະ ກອງທຶນຄົ້ນຄ້ວາການປ່ຽນແປງດິນຟ້າອາກາດ ແຫ່ງຊາດ ເພື່ອເປັນກົນໄກການເງິນທີ່ສຳຄັນ ສຳລັບ ການຮັບມືກັບຜົນກະທົບ, ການສຶກສາ ການປ່ຽນແປງຂອງດິນຟ້າອາກາດ ແລະ ເຂດທີ່ມີຄວາມສ່ຽງໄພພິບັດ (ເຂດຄວາມບອບບາງຕໍ່ກັບການປ່ຽນແປງດິນຟ້າອາກາດ) ແລະ ສົ່ງເສີມການຄົ້ນຄວ້າ ແລະ ໝູນໃຊ້ນະວັດຕະກຳໃໝ່ໆ.
- ສຳເລັດການສ້າງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດແຫ່ງຊາດ ໄລຍະກາງ ແລະ ໄລຍະຍາວ (NAP) ພ້ອມທັງ ແຜນປັບຕົວຂັ້ນທ້ອງຖິ່ນ ໃນ 3 ແຂວງ, 15 ເມືອງ.
- ເຊື່ອມສານວຽກງານການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ຢ່າງໜ້ອຍເຂົ້າໃນ 3 ຂະແໜງການຄື:ຊັບພະຍາກອນນ້ຳ, ກະສິກຳ ແລະ ສາທາລະນະສຸກ.
- ສ້າງບົດສື່ສານແຫ່ງຊາດ ກ່ຽວກັບ ການປ່ຽນແປງດິນຟ້າອາກາດ ສະບັບທີ 3 (TNC) ພ້ອມທັງ ສ້າງແຜນສູ້ຊົນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວໃນຂົງເຂດ (ການນຳໃຊ້ທີ່ດິນ ແລະ ປ່າໄມ້, ກະສິກຳ, ພະລັງງານ, ອຸດສາຫະກຳ ແລະ ສິ່ງເສດເຫຼືອ).
- ສ້າງບົດແນະນຳ ໃນການພິຈາລະນາໂຄງການຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມກົນໄກ NAMA, JCM, REDD+;
- ສູ້ຊົນສ້າງຄວາມກຽມພ້ອມ ຂອງ ສປປ ລາວ ໃນການເຂົ້າເຖິງແຫຼ່ງທຶນສາກົນ ກ່ຽວກັບການປ່ຽນແປງດິນຟ້າອາກາດ;

- ສ້າງແຜນຫຼຸດຜ່ອນຄວາມສ່ຽງໄພພິບັດ ໃນລະດັບທ້ອງຖິ່ນ ໃຫ້ໄດ້ 8 ແຂວງ, 45 ເມືອງ ແລະ 160 ບ້ານ; ແຜນກຽມພ້ອມ ແລະ ຕອບໂຕ້ໄພພິບັດແຫ່ງຊາດ ແລະ ໃນຂັ້ນທ້ອງຖິ່ນ ໃຫ້ໄດ້ຢ່າງໜ້ອຍ 2 ແຂວງ.
- ສ້າງຕັ້ງສູນປະສານງານ-ບັນຊາການ ສຸກເສີນໄພພິບັດແຫ່ງຊາດ ແລະ ລະບົບ ICT-ສະຖິຕິໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ.
- ສູ້ຊົນສ້າງແຜນຫຼຸດຜ່ອນຄວາມສ່ຽງຈາກໄພພິບັດ ແລະ ແຜນການກຽມພ້ອມຕອບໂຕ້ໄພພິບັດສຸກເສີນໃນລະດັບແຂວງ, ເມືອງ ແລະ ບ້ານ ໃນ 8 ແຂວງບຸລິມະສິດ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ:**

- ເພີ່ມທະວີຄວາມສາມາດໃນການປັບໂຕ ແລະ ຫຼຸດຜ່ອນຜົນກະທົບຈາກການປ່ຽນແປງດິນຟ້າອາກາດໂດຍການສຶກສາເຂດທີ່ມີຄວາມບອບບາງຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ເຂດທີ່ມີຄວາມສ່ຽງໄພພິບັດພ້ອມທັງເສີມຂະຫຍາຍ,ພັດທະນາໂຄງການ REDD+ ໃນແຕ່ລະໄລຍະເພື່ອຫລຸດຜ່ອນທາດອາຍພິດເຮືອນແກ້ວ.
- ສ້າງຕັ້ງຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ ທັງໃນລະດັບສູນກາງ ແລະ ທ້ອງຖິ່ນ.
- ສ້າງລະບົບການຄຸ້ມຄອງ, ຕິດຕາມກວດກາແລະປະເມີນຜົນກະທົບຈາກມົນລະພິດທາງນໍ້າ, ອາກາດ ແລະ ສຽງຢ່າງເປັນລະບົບ ແລະ ຄົບຊຸດ.
- ສ້າງກົນໄກໃນການຄຸ້ມຄອງສິ່ງເສດເຫລືອ, ການຈຳແນກ ແລະ ຫລຸດຜ່ອນຈຳນວນຂີ້ເຫຍື້ອໂດຍການສົ່ງເສີມ 3 ວິທີການ (ຫລຸດຜ່ອນ, ນຳໃຊ້ຄືນ ແລະ ໝູນໃຊ້ຄືນ).
- ສ້າງກົນໄກໃນການຄຸ້ມຄອງສານເຄມີທີ່ເປັນພິດອັນຕະລາຍ ແລະ ລະບົບການບຳບັດນ້ຳເສຍໃນເຂດຕົວເມືອງເທດສະບານຂອງແຂວງແລະນະຄອນຫລວງ.
- ສ້າງລະບົບເຕືອນໄພລ່ວງໜ້າທີ່ຄົບຊຸດ (ອຸປະກອນການທົດລອງ, ເຄື່ອງມື, ພາຫະນະທີ່ພ້ອມ ແລະ ທັງນັກວິຊາການທີ່ມີຄວາມຮູ້ພ້ອມຮັບມືຢ່າງທັນການກັບເຫດສຸກເສີນທີ່ເກີດຂຶ້ນ).
- ສ້າງກົນໄກການເງິນທີ່ຍືນຍົງໃນການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໃນການກຳນົດແຫລ່ງທຶນ ແລະ ກອງທຶນທີ່ຖາວອນ.
- ສ້າງກົນໄກຄຸ້ມຄອງ ແລະ ລະບົບເຄືອຂ່າຍການແລກປ່ຽນຂໍ້ມູນ ຂ່າວສານເພື່ອຮັບປະກັນການເຊື່ອມໂຍງກັບພາກພື້ນ ແລະສາກົນຕາມພາລະບົດບາດຂອງຕົນເອງ ໂດຍສາມາດຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາກັບສາກົນໄດ້ຢ່າງມີປະສິດທິພາບ ແລະ ທັນກຳນົດເວລາ.
- ສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງໄພພິບັດ.
- ສ້າງບົດແນະນຳ ການເຊື່ອມສານວຽກງານ ການປ່ຽນແປງດິນຟ້າອາກາດ, ການຫຼຸດຜ່ອນຄວາມສ່ຽງຈາກ ໄພພິບັດ ແລະ ການຫຼຸດຜ່ອນທາດອາຍພິດເຮືອນແກ້ວ ເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານ ເຂົ້າໃນຂະແໜງການບູລິມະສິດ ເພື່ອສ້າງຄວາມສາມາດ ໃນການປັບໂຕເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ການຫຼຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວ.
- ສ້າງແຜນທີ່ຄວາມບອບບາງ ແລະ ສ້າງແຜນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດແຫ່ງຊາດໄລຍະກາງ ແລະ ໄລຍະຍາວ (NAP) ທັງໃນລະດັບຊາດ, ທ້ອງຖິ່ນ ແລະ ຂະແໜງການ.
- ສ້າງບົດສື່ສານແຫ່ງຊາດ ກ່ຽວກັບການປ່ຽນແປງດິນຟ້າອາກາດ ສະບັບທີ 3 (TNC) ພ້ອມທັງສ້າງແຜນສູ້ຊົນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວໃນຂົງເຂດ (ການນຳໃຊ້ທີ່ດິນ ແລະ ປ່າໄມ້, ກະສິກຳ, ພະລັງງານ, ອຸດສາຫະກຳ ແລະ ສິ່ງເສດເຫຼືອ).
- ສ້າງເງື່ອນໄຂໃນການກຽມຄວາມກຽມພ້ອມ ຂອງ ສປປ ລາວ ໃນການເຂົ້າເຖິງແຫຼ່ງທຶນສາກົນກ່ຽວກັບການປ່ຽນແປງດິນຟ້າອາກາດ.
- ປັບປຸງ ຄະນະກຳມະການປ້ອງກັນ ແລະ ຄວບຄຸມໄພພິບັດ ແຕ່ລະຂັ້ນໃຫ້ສຳເລັດ ພ້ອມທັງສ້າງແຜນຫຼຸດຜ່ອນຄວາມສ່ຽງໄພພິບັດ ແລະ ແຜນກຽມພ້ອມ-ຕອບໂຕ້ໄພພິບັດ ໃນລະດັບຊາດ ແລະ ຂັ້ນທ້ອງຖິ່ນ.

ສ້າງຕັ້ງສູນປະສານງານ-ບັນຊາການ ສຸກເສີນໄພພິບັດແຫ່ງຊາດ ພ້ອມທັງ ປະກອບອຸປະກອນ ICT ເພື່ອໃຫ້ການລາຍງານຂໍ້ມູນ ແລະ ການສື່ສານ ແກ້ໄຂບັນຫາໄພພິບັດໄດ້ຢ່າງທັນການ.

» **ນະໂຍບາຍ ແລະນິຕິກຳຕ່າງໆ**:

- ນະໂຍບາຍສ້າງກົນໄກການເງິນທີ່ຍືນຍົງ ໂດຍຮັບປະກັນການນຳໃຊ້ຜົນປະໂຫຍດຈາກການເຕີບໂຕຂອງເສດຖະກິດໃຫ້ກະຈາຍລົງສູ່ຊຸມຊົນນະບົດໃຫ້ທົ່ວເຖິງ ເພື່ອຫຼຸດຜ່ອນປະກົດການຫຍໍ້ທໍ້ໃນສັງຄົມແລະ ຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ.
- ນະໂຍບາຍກ່ຽວກັບການຫລຸດຜ່ອນການປ່ອຍທາດອາຍພິດເຮືອນແກ້ວເພື່ອຮັບປະກັນໃນການວາງແຜນການປັບໂຕ ແລະ ແກ້ໄຂບັນຫາກ່ຽວກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດ.
- ປັບປຸງ ແລະ ສ້າງນິຕິກຳໃນການນຳໃຊ້ ແລະການຄຸ້ມຄອງຊັບພະຍາກອນທຳມະຊາດ, ລະບຽບການໃນການສ້າງຄວາມເຂົ້າໃຈໃຫ້ແກ່ຊຸມຊົນ ແລະປະຊາຊົນໃນເຂດທີ່ມີຄວາມສ່ຽງໃນການໃຊ້ຊັບພະຍາກອນທຳມະຊາດ ເພື່ອໃຫ້ເຂົາເຈົ້າມີຄວາມຮັບຮູ້ເຖິງຜົນປະໂຫຍດ ແລະ ຜົນເສຍຫາຍຈາກການໃຊ້ຊັບພະຍາກອນທຳມະຊາດທີ່ບໍ່ມີປະສິດທິພາບ.
- ສ້າງຍຸດທະສາດ ແລະ ແຜນງານຫລຸດຜ່ອນຄວາມສ່ຽງໄພພິບັດແຫ່ງຊາດ (2015-2020) ແລະ ສ້າງແຜນປະຕິບັດງານແຫ່ງຊາດ ກ່ຽວກັບ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດໄລຍະຍາວ
- ຈັດຕັ້ງປະຕິບັດນະໂຍບາຍຄຸ້ມຄອງ ແລະ ສະກັດກັ້ນຕ້ານໄພທຳມະຊາດ (ລະບົບເຕືອນໄພ, ການຕອບໂຕ້ ແລະ ການຊ່ວຍເຫລືອສຸກເສີນ, ການຍົກຍ້ານຄົນແລະຊັບສິນແລະລະບົບຟື້ນຟູ) ທີ່ມີປະສິດທິພາບ ແລະ ປະສິດທິຜົນໃນຂອບເຂດທົ່ວປະເທດ.
- ປະຕິບັດນະໂຍບາຍຮັບມືກັບໄພພິບັດ ເປັນຕົ້ນກ່ຽວກັບການປົກປ້ອງດິນບໍລິເວນນໍ້າ ແລະ ປ່າໄມ້ໃນເຂດດ້ອຍຊັ້ນ ເພື່ອຊ່ວຍຫຼຸດຜ່ອນຄວາມສ່ຽງໃຫ້ແກ່ຊຸມຊົນ ແລະ ຜົນເສຍຫາຍທີ່ເກີດຂຶ້ນຈາກໄພພິບັດທຳມະຊາດທີ່ຄາດຄະເນບໍ່ໄດ້.
- ສ້າງກົດໝາຍວ່າດ້ວຍໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ, ດຳລັດວ່າດ້ວຍກອງທຶນການປ້ອງກັນ ແລະ ຄວບຄຸມໄພພິບັດແຫ່ງຊາດ, ບົດແນະນຳການເຊື່ອມສານວຽກງານການຫຼຸດຜ່ອນຜົນກະທົບຈາກໄພພິບັດ ແລະ ການປັບໂຕເຂົ້າກັບການປ່ຽນແປງດິນຟ້າອາກາດເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດ, ແຜນງານ ແລະ ແຜນການຂອງຂະແໜງການ ໂດຍສະເພາະຂະແໜງກະສິກຳ, ປ່າໄມ້, ນໍ້າ ແລະ ສາທາລະນະສຸກ.
- ສ້າງບົດແນະນຳໃນການພິຈາລະນາໂຄງການຫຼຸດຜ່ອນອາຍພິດເຮືອນແກ້ວ ຕາມກົນໄກ NAMA, JCM, REDD+; ການເຊື່ອມສານ ວຽກງານ ກັບປັບຕົວ ເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຂະແໜງກະສິກຳ, ປ່າໄມ້, ນໍ້າ ແລະ ສາທາລະນະສຸກ.

## 3.6.3. ແຜນວຽກຈຸດສຸມ 3: ຫຼຸດຜ່ອນຄວາມບໍ່ມີສະຖຽນລະພາບຂອງການຜະລິດກະສິກຳທີ່ເກີດຈາກຜົນກະທົບຂອງໄພພິບັດ.

» **ທິດທາງ**:

ເພື່ອຕອບສະໜອງການພັດທະນາທີ່ຍືນຍົງ ແລະ ການຂະຫຍາຍຕົວຂອງເສດຖະກິດທີ່ໝັ້ນທ່ຽງ ແລະ ຕໍ່ເນື່ອງນັ້ນການຫລຸດຜ່ອນຄວາມບໍ່ມີສະຖຽນລະພາບຂອງຜົນຜະລິດກະສິກຳ ເພື່ອຮັບປະກັນໄດ້ທາງດ້ານຕະຫລາດ ແລະ ລາຄາຜົນຜະລິດກະສິກຳແມ່ນສິ່ງທີ່ຈຳເປັນພື້ນຖານໃນການຊຸກຍູ້ເສດຖະກິດ ແລະ ສົ່ງເສີມອາຊີບທີ່ໝັ້ນຄົງໃຫ້ຊາວກະສິກອນຊຶ່ງການກະກຽມ ແລະ ພະຍາກອນລ່ວງໜ້າກ່ຽວກັບສະພາບແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ (ເປັນຕົ້ນ ນໍ້າຖ້ວມ ແລະ ແຫ້ງແລ້ງ ບໍ່ໄປຕາມວົງຈອນຂອງລະດູ) ແມ່ນປັດໄຈຫລັກຂອງການເຮັດກະສິກຳ. ຄຽງຄູ່ກັນນັ້ນ, ຕ້ອງຮັບປະກັນການຈຳໜ່າຍ, ຕະຫລາດຮອງຮັບ, ລາຄາຜົນຜະລິດກະສິກຳທີ່ໝັ້ນຄົງ ແລະ ສ້າງຕ່ອງໂສ້ການຜະລິດຢ່າງຄົບຊຸດ. ສ້າງຄວາມຫລາກຫລາຍໃຫ້ແກ່ຜະລິດຕະພັນ ຫຼື ວັດຖຸດິບກະສິກຳ ເພື່ອສ້າງມູນຄ່າເພີ່ມໃຫ້ສູງຂຶ້ນ. ຄຽງຄູ່ກັນນັ້ນ, ສ້າງອາຊີບທີ່ຫລາກຫລາຍໃຫ້ແກ່ຊາວນາ ບໍ່ອາໄສແຕ່ການເຮັດນາ, ປູກພືດເສດຖະກິດພຽງຢ່າງດຽວ.

» **ຄາດໝາຍ**:

- ອັດຕາການປ່ຽນແປງຂອງລະດັບນໍ້າ ແລະ ຄຸນນະພາບຂອງນໍ້າ.
- ການປ່ຽນແປງຂອງອຸນຫະພູມສະເລ່ຍ.

- ກຳນົດເຂດຄວາມບອບບາງຕໍ່ກັບການປ່ຽນແປງດິນຟ້າອາກາດ ແລະ ເຂດທີ່ມີຄວາມສ່ຽງຕໍ່ໄພພິບັດໃນຂອບເຂດທົ່ວປະເທດ.
- ສ້າງຕັ້ງ ແລະ ປັບປຸງສະຖານີອຸຕຸກະສາດຕາມຂົງເຂດຈຸດສຸມການຜະລິດກະສິກຳທົ່ວປະເທດ.
- ຜົນຜະລິດກະສິກຳທີ່ບໍ່ໝັ້ນຄົງ (ບໍ່ຄົງທີ່ມີການຂຶ້ນໆລົງໆ) ຫຼຸດໜ້ອຍລົງ ຫຼື ຄວາມຜິດພາດອັນເປັນມາດຕະຖານຂອງມູນຄ່າທີ່ຖອຍຫຼັງການຜະລິດດ້ານກະເສດຕະກຳ.
- ເນື້ອທີ່ການເພີ່ມຂຶ້ນ ຫຼື ການຫຼຸດລົງ ຂອງປ່າໄມ້.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ:**

- ເຊື່ອມໂຍງແຜນການຄຸ້ມຄອງ, ປ້ອງກັນ ແລະ ຄວບຄຸມໄພພິບັດເຂົ້າໃນແຜນພັດທະນາວຽກງານກະສິກຳໃນແຕ່ລະລະດັບ ແລະ ໃນແຕ່ລະໄລຍະຢ່າງທັນການ.
- ພັດທະນາແຜນດຳເນີນງານເພື່ອຫລຸດຜ່ອນຄວາມສ່ຽງຈາກໄພພິບັດໃນຂົງເຂດກະສິກຳ.
- ເສີມສ້າງຄວາມສາມາດໃນການກຽມພ້ອມຮັບມືກັບໄພພິບັດລວມທັງການແກ້ໄຂ ແລະ ຟື້ນຟູຫລັງການເກີດໄພພິບັດໃຫ້ໄດ້ໃນທຸກລະດັບຢ່າງທັນການ.
- ສ້າງບົດແນະນຳການເຊື່ອມສານວຽກງານການປ່ຽນແປງດິນຟ້າອາກາດ, ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດແລະການຫລຸດຜ່ອນທາດອາຍພິດເຮືອນແກ້ວເຂົ້າໃນຍຸດທະສາດ ແລະ ແຜນດຳເນີນງານຂອງຂະແໜງການກະສິກຳ-ປ່າໄມ້ ແລະ ໂຍທາທິການ ແລະ ຂົນສົ່ງ.
- ດຳເນີນການສຶກສາ ແລະ ເກັບກຳຂໍ້ມູນ ເພື່ອສ້າງແຜນທີ່ກຳນົດເຂດຄວາມສ່ຽງທີ່ອາດຈະເກີດໄພພິບັດເຊັ່ນ: ເຂດທີ່ມີຄວາມສ່ຽງຕໍ່ນ້ຳຖ້ວມ, ເຂດທີ່ມີຄວາມສ່ຽງຕໍ່ໄພແຫ້ງແລ້ງ, ເຂດທີ່ມີຄວາມສ່ຽງຕໍ່ການລະບາດຂອງພະຍາດສັດ ແລະພືດ, ເຂດທີ່ມີຄວາມສ່ຽງຕໍ່ການເຊາະເຈື່ອນດິນ.
- ດຳເນີນການສຶກສາ, ຄົ້ນຄວ້າ, ພັດທະນາ ແລະ ປັບປຸງ ແລະ ຫັນໄປນຳໃຊ້ແນວພັນເຂົ້າ ແລະ ແນວພັນພືດທີ່ມີຄວາມທົນທານສາມາດປັບໂຕເຂົ້າກັບສະພາບການປ່ຽນແປງດິນຟ້າອາກາດ.
- ສ້າງ ແລະ ຈັດຕັ້ງປະຕິບັດຄັງແຮເຂົ້າທີ່ເປັນຍຸດທະສາດແຫ່ງຊາດ.
- ສ້າງແຜນການສູ້ຊົນການຫຼຸດຜ່ອນ ແລະ ເກັບກຳຂໍ້ມູນອັດຕາການປ່ອຍທາດອາຍພິດເຮືອນແກ້ວໃນຂົງເຂດ (ຂົງເຂດການປ່ຽນແປງດິນການນຳໃຊ້ທີ່ດິນ ແລະ ປ່າໄມ້, ຂົງເຂດກະສິກຳ, ຂົງເຂດພະລັງງານ, ຂົງເຂດອຸດສາຫະກຳ, ຂົງເຂດສິ່ງເສດເຫຼືອ).

» **ນະໂຍບາຍ ແລະ ນິຕິກຳ:**

- ສ້າງນະໂຍບາຍ ແລະ ກົນໄກການຕອບໂຕ້ໄພພິບັດຕາມທຳມະຊາດ ແລະ ໄພພິບັດສຸກເສີນໃນຂັ້ນແຂວງ ແລະ ເມືອງ.
- ນະໂຍບາຍສົ່ງເສີມການຈັດຕັ້ງປະຕິບັດໂຄງການທົດລອງການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ໃນຂະແໜງກະສິກຳແລະປ່າໄມ້ໂດຍການມີສ່ວນຮ່ວມຂອງຊຸມຊົນ.

## 3.7. ບັນດາແຜນວຽກຈຸດສຸມປິ່ນອ້ອມທີ່ພົວພັນກັບຫຼາຍຂະແໜງການມີ ດັ່ງນີ້:

### 3.7.1. ແຜນວຽກຈຸດສຸມທີ 1: ເພີ່ມທະວີປະສິດທິພາບຂອງການຄຸ້ມຄອງ ແລະ ບໍລິຫານລັດ

1. **ການປັບປຸງກົງຈັກການຈັດຕັ້ງຂອງອົງການບໍລິຫານລັດ**

» **ທິດທາງ**:

ປັບປຸງກົງຈັກການຈັດຕັ້ງຂອງອົງການບໍລິຫານລັດທຸກຂັ້ນໃຫ້ກະທັດທັດ, ສົມເຫດສົມຜົນ ແລະ ມີປະສິດທິພາບສູງ ໂດຍການກຳນົດພາລະບົດບາດໜ້າທີ່ຂອງແຕ່ລະປະເພດກົງຈັກການຈັດຕັ້ງຕາມມາດຕະຖານ ແລະ ເງື່ອນໄຂໃຫ້ຈະ ແຈ້ງ, ຄົ້ນຄວ້າຕຳແໜ່ງງານໃຫ້ແທດເໝາະກັບພາລະບົດບາດໜ້າທີ່ຂອງແຕ່ລະກະຊວງ-ອົງການຂັ້ນສູນກາງ ເພື່ອປະຕິບັດພາລະບົດບາດຄຸ້ມຄອງມະຫາ

ພາກເປັນຕົ້ນຕໍ. ປັບປຸງກົງຈັກການປົກຄອງຢູ່ຂັ້ນທ້ອງຖິ່ນໃຫ້ເຂັ້ມແຂງໂດຍຕິດພັນກັບການແບ່ງຄວາມຮັບຜິດຊອບລະຫວ່າງສູນກາງ ແລະ ທ້ອງຖິ່ນ ແລະ ຄວາມຮັບຜິດຊອບຂອງທ້ອງຖິ່ນແຕ່ລະຂັ້ນ (ຂັ້ນແຂວງ, ເມືອງ ແລະ ບ້ານ) ຕາມທິດສາມສ້າງ, ປັບປຸງກົງຈັກຊ່ວຍວຽກຂອງຫ້ອງການປົກຄອງທ້ອງຖິ່ນແຕ່ລະຂັ້ນໃຫ້ເຂັ້ມແຂງ, ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາ ແລະ ສາມາດຈັດຕັ້ງຜັນຂະຫຍາຍນະໂຍບາຍຂອງລັດຖະບານໃຫ້ປະກົດຜົນເປັນຈິງ.

» **ຄາດໝາຍຕົ້ນຕໍ**:

- ປັບປຸງກົງຈັກຂັ້ນສູນກາງໃຫ້ກະທັດຮັດ, ເຂັ້ມແຂງ ແລະ ສາມາດປະຕິບັດພາລະບົດບາດຄຸ້ມຄອງມະຫາພາກຢ່າງມີປະສິດທິພາບ ແລະ ມີສະຖຽນລະພາບ.
- ປັບປຸງກົງຈັກການຈັດຕັ້ງຂັ້ນທ້ອງຖິ່ນ ແຕ່ລະຂັ້ນໃຫ້ກະທັດຮັດ, ເຂັ້ມແຂງ ເພື່ອຄຸ້ມຄອງບໍລິຫານລັດຢູ່ຂັ້ນທ້ອງຖິ່ນຕາມທິດສາມສ້າງຢ່າງມີປະສິດທິພາບ.
- ກົງຈັກການຈັດຕັ້ງຂັ້ນທ້ອງຖິ່ນມີຄວາມເໝາະສົມ, ສາມາດຜັນຂະຫຍາຍນະໂຍບາຍ ແລະ ແຜນການຂອງລັດຖະບານເຂົ້າໃນວຽກງານຕົວຈິງ ແລະ ສາມາດສະໜອງການບໍລິການແກ່ປະຊາຊົນໄດ້ຢ່າງສະດວກ ແລະ ວ່ອງໄວ.

» **ກິດຈະກຳ**:

- ຄົ້ນຄວ້າປັບປຸງກົງຈັກຊ່ວຍວຽກຕ່າງໆຂອງລັດຖະບານໃຫ້ເໝາະສົມ ແລະ ແທດເໝາະກັບມາດຕະຖານຂອງກົງຈັກ ແລະ ຕຳແໜ່ງງານຕາມພາລະບົດບາດ.
- ຄົ້ນຄວ້າຈັດປະເພດກົງຈັກການຈັດຕັ້ງໃນລະດັບຕ່າງໆ ໂດຍການກຳນົດມາດຕະຖານ ແລະ ເງື່ອນໄຂຂອງກົງຈັກແຕ່ລະປະເພດເຊັ່ນ: ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການຈັດຕັ້ງມະຫາຊົນ ແລະ ຫົວໜ່ວຍບໍລິການທາງດ້ານວິຊາການຕ່າງໆ.
- ປັບປຸງກົງກົນໄກການປະສານງານລະຫວ່າງແຂວງ, ເມືອງ ແລະ ບ້ານ ໃຫ້ເໝາະສົມ ໂດຍສະເພາະໃນເຂດຫ່າງໄກສອກຫລີກທຸລະກັນດານ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ:**

- ສ້າງຍຸດທະສາດກ່ຽວກັບວຽກງານປັບປຸງ ແລະ ພັດທະນາກົງຈັກການຈັດຕັ້ງ.
- ສ້າງ ແລະ ປັບປຸງ ກ່ຽວກັບລະບຽບການການກຳນົດມາດຕະຖານກົງຈັກການຈັດຕັ້ງແຕ່ລະຂັ້ນ
- ຄົ້ນຄວ້າອອກລະບຽບການ, ຄຳແນະນຳ ກ່ຽວກັບຂັ້ນຕອນ ແລະ ວິທີການວິເຄາະໜ້າວຽກທີ່ຕິດພັນກັບການກຳນົດຕຳແໜ່ງງານໃນລະບົບການຄຸ້ມຄອງລັດຖະກອນ.

2. **ການປັບປຸງນະໂຍບາຍ, ນິຕິກຳ ແລະ ລະບຽບການບໍລິຫານລັດ**

» **ທິດທາງ**:

ປັບປຸງບັນດານະໂຍບາຍ ແລະ ນິຕິກຳຕ່າງໆ ໃຫ້ເປັນລະບົບຄົບຊຸດ ເພື່ອຮັບໃຊ້ສັງຄົມດ້ວຍການປັບປຸງ ແລະ ການພັດທະນາກົດໝາຍ ແລະ ລະບຽບການຕ່າງໆ ໃຫ້ຈະແຈ້ງ ຮັດກຸມ ເຂັ້ມງວດ ແລະ ມີຄວາມສັກສິດ ໃນນັ້ນ ແມ່ນການແມ່ນການສ້າງຄວາມສາມາດໃນການກຳນົດນະໂຍບາຍຕ່າງໆໃຫ້ແທດເໝາະ ແລະ ສອດຄ່ອງກັບສະພາບເງື່ອນໄຂຂອງປະເທດ ແລະ ໃຫ້ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ.

» **ຄາດໝາຍ**:

- ສູ້ຊົນປັບປຸງການບໍລິຫານລັດໃຫ້ມີຄຸນນະພາບ ເພື່ອໃຫ້ບັນດາການຈັດຕັ້ງຂອງລັດເຄື່ອນໄຫວປະຕິບັດໜ້າທີ່ຢ່າງມີປະສິດທິພາບ.
- ປັບປຸງບັນດານິຕິກຳ ແລະ ລະບຽບບໍລິຫານໃນລະບຽບບໍລິຫານ ໃນຂົງເຂດການເມືອງການປົກຄອງ ແລະ ບໍລິຫານລັດໃຫ້ເປັນລະບົບຄົບຊຸດ.

» **ກິດຈະກຳ ແລະ ໂຄງການ**:

- ສ້າງລະບຽບການກ່ຽວກັບສາຍພົວພັນລະຫວ່າງລັດຖະບານກັບອົງການປົກຄອງທ້ອງຖິ່ນ, ລະບຽບການ-ຂັ້ນຕອນການມອບສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບໃຫ້ແກ່ອົງການປົກຄອງທ້ອງຖິ່ນຕາມທິດສາມສ້າງ.
- ປັບປຸງກົນໄກການບໍລິການຂອງລັດ ເຮັດໃຫ້ປະຊາຊົນເຂົ້າເຖິງການບໍລິການຢ່າງສະດວກ ວ່ອງໄວ ແລະ ມີປະສິດທິພາບ.
- ສ້າງໂຄງການ ແລະ ລະບຽບການນຳໃຊ້ລະບົບເອເລັກໂທຣນິກເຂົ້າໃນການບໍລິຫານລັດ (E-GOVERMENT).

## 3. ການຄຸ້ມຄອງ, ພັດທະນາລັດຖະກອນ ແລະ ຄຸ້ມຄອງພົນລະເມືອງ

» **ທິດທາງ**:

ປັບປຸງລະບົບການຄຸ້ມຄອງລັດຖະກອນໃຫ້ເປັນລະບົບຄົບຊຸດ ແລະ ເຂັ້ມແຂງ, ໃນນັ້ນແມ່ນຄົ້ນຄ້ວາປັບປຸງກົງຈັກ ຄຸ້ມຄອງລັດຖະກອນໃຫ້ເໝາະສົມກັບບໍລິມາດຂອງວຽກງານ; ຄົ້ນຄ້ວາອອກນະໂຍບາຍ ແລະ ອອກນິຕິກຳວຽກງານຄຸ້ມຄອງລັດຖະກອນ; ຄົ້ນຄ້ວາກຳນົດຕຳແໜ່ງງານຢ່າງລະອຽດໃຫ້ສອດຄ່ອງກັບພາລະບົດບາດໜ້າທີ່ຂອງແຕ່ລະການຈັດຕັ້ງ ແລະ ບັນຈຸ-ຊັບຊ້ອນລັດຖະກອນເຂົ້າໃນຕຳແໜ່ງຢ່າງເໝາະສົມຕາມພື້ນຖານຄວາມຮູ້ວິຊາສະເພາະສົມທົບກັບຄວາມສາມາດ ແລະ ປະສົບການຂອງລັດຖະກອນ; ນຳໃຊ້ເທັກໂນໂລຊີເຂົ້າໃນການຄຸ້ມຄອງລັດຖະກອນໃຫ້ມີປະສິດທິພາບ-ປະສິດທິຜົນ; ສຸມໃສ່ການສ້າງ ແລະ ພັດທະນາລັດຖະກອນທຸກເພດໄວ ໃນທຸກຂົງເຂດວຽກງານໃຫ້ມີຄວາມຮູ້ຄວາມສາມາດສູງຂຶ້ນ ເພື່ອສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນໂດຍການສ້າງ ແລະ ພັດທະນາຫຼັກສູດການຝຶກອົບຮົມທີ່ເຫັນວ່າມີຄວາມຈຳເປັນອັນຮີບດ່ວນ ເພື່ອຍົກລະດັບໃຫ້ລັດຖະກອນຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງໃນຂົງເຂດວຽກງານຕ່າງໆ.

ພັດທະນາລະບົບການຂຶ້ນທະບຽນໃຫ້ເປັນມາດຕະຖານດຽວກັນ ໂດຍມີສະຖິຕິກ່ຽວກັບຂໍ້ມູນທີ່ມີຄວາມຊັດເຈນ, ຄົບຊຸດ ແລະ ທັນກັບສະພາບການໃນການອອກໃບຢັ້ງຢືນການເກີດ, ການຕາຍ (ລວມທັງສາເຫດການຕາຍ) ແລະ ເຫດການ ອື່ນໆທີ່ສຳຄັນ ເພື່ອສ້າງນະໂຍບາຍໃນການພັດທະນາດ້ານສາທາລະນະສຸກ, ການສຶກສາ, ດ້ານຄວາມຍຸຕິທຳ, ກຳມະສິດ ທາງຊັບສິນ, ການຈ້າງງານທີ່ເປັນທາງການ, ທີ່ຢູ່ອາໄສ ແລະ ດ້ານອື່ນໆ ເພື່ອເຮັດໃຫ້ເຂົາເຈົ້າໄດ້ຮັບການບໍລິການດັ່ງກ່າວ; ພ້ອມດຽວກັນນັ້ນ ກໍ່ຕ້ອງມີການໂຄສະນາເຜີຍແຜ່ສະຖິຕິດັ່ງກ່າວ.

» **ຄາດໝາຍຕົ້ນຕໍ**:

- ປັບປຸງກົງຈັກການຈັດຕັ້ງຂອງລັດໃຫ້ກະທັດຮັດ, ສົມເຫດສົມຜົນ, ມີປະສິດທິພາບ ແລະ ມີສະຖຽນລະພາບ.
- ສ້າງກົດໝາຍວ່າດ້ວຍການຄຸ້ມຄອງພົນລະເມືອງໃຫ້ສຳເລັດໃນສົກປີ 2017-2018.
- ປັບປຸງ ແລະ ພັດທະນາຖານຂໍ້ມູນຄຸ້ມຄອງລັດຖະກອນດ້ວຍລະບົບເທັກໂນໂລຊີທີ່ທັນສະໄໝ (PIMS) ໃຫ້ເປັນລະບົບເອກະພາບ ແລະ ນຳໃຊ້ໃນທົ່ວປະເທດເພື່ອໃຫ້ສາມາດຂຶ້ນທະບຽນລັດຖະກອນ ແລະ ອອກບັດປະຈຳຕົວລັດຖະກອນ ພາຍໃນປີ 2020.
- ສ້າງຄວາມເຂັ້ມແຂງໃຫ້ພະນັກງານ-ລັດຖະກອນຂັ້ນເມືອງ ໃນວຽກງານຄຸ້ມຄອງພົນລະເມືອງ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ**:

- ຄົ້ນຄ້ວາຄວາມເປັນໄປໄດ້ໃນການສ້າງຄະນະການຄຸ້ມຄອງລັດຖະກອນ ຫຼື ອົງການຄຸ້ມຄອງລັດຖະກອນ (Civil Service Commission) ເພື່ອເປັນກົງຈັກສະເພາະໃນການປະຕິບັດໜ້າທີຄຸ້ມຄອງລັດຖະກອນໃຫ້ມີປະສິດທິຜົນສູງ.
- ປັບປຸງການຈັດຕັ້ງທີ່ເຮັດໜ້າທີໃນການພັດທະນາ ແລະ ຝຶກອົບຮົມຍົກລະດັບໃຫ້ລັດຖະກອນ ເພື່ອພັດທະນາຫຼັກ ສູດຝຶກອົບຮົມຕ່າງໆ ພ້ອມທັງຈັດຕັ້ງປະຕິບັດແຜນພັດທະນາ ແລະ ຝຶກອົບຮົມໃຫ້ລັດຖະກອນຢູ່ແຕ່ລະຂະແໜງ ການໃນດ້ານຕ່າງໆ ເປັນຕົ້ນແມ່ນດ້ານການບໍລິການຄຸ້ມຄອງ, ວິຊາສະເພາະ, ພາສາຕ່າງປະເທດ ແລະ ການນຳໃຊ້ເຕັກໂນໂລຊີ.
- ສ້າງກົດໝາຍວ່າດ້ວຍພະນັກງານ-ລັດຖະກອນແຫ່ງ ສປປ ລາວ ແລະ ປັບປຸງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນໃຫ້ສຳເລັດ.
- ສ້າງຖານຂໍ້ມູນຄຸ້ມຄອງພົນລະເມືອງ ໃຫ້ເປັນລະບົບ ແລະ ທັນສະໄໝ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ:**

- ສ້າງຍຸດທະສາດການວາງແຜນລັດຖະກອນ, ຄຳແນະນຳກ່ຽວກັບຂັ້ນຕອນຂອງການກຳນົດຕຳແໜ່ງງານ.
- ສ້າງຍຸດທະສາດສົ່ງເສີມລັດຖະກອນເພດຍິງ, ຊົນເຜົ່າ ແລະ ລັດຖະກອນທີ່ປະຕິບັດໜ້າທີ່ວຽກງານຢູ່ເຂດຫ່າງໄກສອກຫຼີກທຸລະກັນດານທີ່ດ້ອຍໂອກາດໃນການຍົກລະດັບໃນດ້ານຕ່າງໆ ໃຫ້ມີເງື່ອນໄຂໄດ້ຮັບການພັດທະນາ ແລະ ຝຶກອົບຮົມ.
- ຄົ້ນຄ້ວາອອກດຳລັດທີ່ກ່ຽວຂ້ອງກັບວຽກງານການຄຸ້ມຄອງລັດຖະກອນ ເຊັ່ນ: ແຜນການກຳນົດລັດຖະກອນ, ການຄຸ້ມຄອງລັດຖະກອນຂົງເຂດບໍລິຫານ, ວິຊາການ ແລະ ການບໍລິການ, ການປະເມີນຜົນການປະຕິບັດວຽກງານຂອງລັດຖະກອນ, ການພັດທະນາ ແລະ ຝຶກອົບຮົມລັດຖະກອນ, ຄ່າຕອບແທນຂອງລັດຖະກອນ ແລະ ອື່ນໆ.
- ປັບປຸງນະໂຍບາຍ ແລະ ລະບຽບກົດໝາຍກ່ຽວກັບການກຳນົດໜ້າທີ່ແລະພາລະບົດບາດໃຫ້ແກ່ອົງການທີ່ມີ
- ສິດອຳນາດໃນການຂຶ້ນທະບຽນພົນລະເຮືອນໃຫ້ຈະແຈ້ງຂຶ້ນຕື່ມ.

4. **ປັບປຸງຂົງເຂດວຽກງານຍຸຕິທຳ**

» **ທິດທາງ**:

ປັບປຸງ ແລະ ພັດທະນາກົງຈັກ ແລະ ສະຖາບັນທີ່ກ່ຽວຂ້ອງກັບວຽກງານຍຸຕິທຳ, ນະໂຍບາຍ ແລະ ນິຕິກຳຕ່າງໆ ລວມທັງບຸກຄະລາກອນໃນຂົງເຂດວຽກງານຍຸຕິທຳໃຫ້ເປັນລະບົບ ຄົບຊຸດ ເພື່ອໃຫ້ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ໂດຍການສ້າງຄວາມເຂັ້ມແຂງໃຫ້ແກ່ສະຖາບັນທີ່ກ່ຽວຂ້ອງກັບວຽກງານຍຸຕິທຳໃນດ້ານຕ່າງໆ. ເສີມຂະຫຍາຍປະສິດທິຜົນຂອງກົດໝາຍເຂົ້າໃນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມໃຫ້ນັບມື້ນັບກວ້າງຂວາງ ເຮັດໃຫ້ການຄຸ້ມຄອງພົນລະເມືອງເຂົ້າສູ່ລະບົບ, ມີຄວາມຖືກຕ້ອງ, ຊັດເຈນ, ປະຊາຊົນລາວທຸກເພດໄວ, ທຸກເຜົ່າຊົນ ລວມທັງກຸ່ມຄົນທີ່ດ້ອຍໂອກາດໄດ້ມີສິດສະເໝີພາບກັນຕາມລະບຽບກົດໝາຍ.

» **ຄາດໝາຍຕົ້ນຕໍ**

- ບັນດາກົງຈັກ ແລະ ສະຖາບັນທີ່ກ່ຽວຂ້ອງກັບວຽກງານຍຸຕິທຳໄດ້ຮັບການປັບປຸງໃຫ້ເປັນລະບົບແລະມີການປະສານງານ ກັນເປັນຢ່າງດີ ນັບທັງຂັ້ນສູນກາງ ແລະ ທ້ອງຖິ່ນ.
- ປັບປຸງ ແລະ ພັດທະນາບັນດານະໂຍບາຍ ແລະ ນິຕິກຳຕ່າງໆໃນຂົງເຂດວຽກງານຍຸຕິທຳໃຫ້ມີປະສິດທິຜົນສູງຂຶ້ນ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານຍຸຕິທຳໃນແຕ່ລະຂັ້ນ.
- ພະນັກງານ-ລັດຖະກອນໃນຂົງເຂດວຽກງານຍຸຕິທຳໄດ້ຮັບການພັດທະນາ ແລະ ຍົກລະດັບໃນດ້ານຕ່າງໆ ເພື່ອປະຕິບັດໜ້າທີ່ໃຫ້ມີປະສິດທິພາບ-ປະສິດທິຜົນ, ມີຄວາມໂປ່ງໃສ, ສາມາດກວດສອບໄດ້, ມີຄວາມເຊື່ອຖືຈາກສັງຄົມ.

» **ກິດຈະກຳ ແລະ ໂຄງການ:**

- ປັບປຸງບັນດາກົງຈັກ, ສະຖາບັນການຈັດຕັ້ງທີ່ກ່ຽວຂ້ອງກັບວຽກງານຍຸຕິທຳໃຫ້ເປັນລະບົບເທື່ອລະກ້າວ ໃນນັ້ນ ສຸມໃສ່ປັບປຸງລະບົບສານ, ໄອຍະການ, ກົງຈັກບໍລິຫານໃນຂົງເຂດວຽກງານຍຸຕິທຳ ທັງຢູ່ສູນກາງ ແລະ ທ້ອງຖິ່ນລວມທັງຢູ່ຂັ້ນຮາກຖານ.
- ຄົ້ນຄວ້າສ້າງນະໂຍບາຍຕ່າງໆໃນຂົງເຂດຍຸຕິທຳ ຕາມແຜນແມ່ບົດພັດທະນາລັດແຫ່ງກົດໝາຍ ຂອງ ສປປລາວ.
- ປັບປຸງພາລະບົດບາດໃນການເຄື່ອນໄຫວວຽກງານໄອຍະການໃຫ້ມີຄວາມເຂັ້ມແຂງ ແລະ ສາມາດຕິດຕາມໄດ້.
- ຊຸກຍູ້ການຈັດຕັ້ງປະຕິບັດບັນດາກົດໝາຍໃຫ້ເຂັ້ມງວດ ແລະ ປັບປຸງໜ່ວຍສືບສວນ-ສອບສວນໃຫ້ມີປະສິດທິພາບ, ມີຄວາມວ່ອງໄວ ແລະ ໂປ່ງໃສ.
- ປັບປຸງພາລະບົດບາດຂອງສະພາທະນາຍຄວາມ, ສຳນັກງານທະບຽນສານໃຫ້ມີຄວາມເຂັ້ມແຂງ ເພື່ອຮັບປະກັນໃຫ້ວຽກງານຍຸຕິທຳດຳເນີນໄປຢ່າງຖືກຕ້ອງ.
- ຄົ້ນຄວ້າປັບປຸງ ແລະ ສ້າງນິຕິກຳຕ່າງໆໃນຂົງເຂດຍຸຕິທຳໃຫ້ສອດຄ່ອງກັບລັດຖະທຳມະນູນ ແລະ ສົນທິສັນຍາສາກົນຕ່າງໆທີ່ ສປປລາວ ເປັນພາຄີ ເຊັ່ນ: ການສ້າງ ແລະ ບູລະນະລະບົບກົດໝາຍແພ່ງ, ລະບົບກົດໝາຍອາຍາ ແລະເສດຖະກິດໃຫ້ຄົບຊຸດ; ລະບົບກົດໝາຍກ່ຽວກັບການສຶກສາ, ສາທາລະນະສຸກ, ຖະແຫຼງຂ່າວ-ວັດທະນາທຳ,

ທ່ອງທ່ຽວ ແລະ ວິທະຍາສາດ ແລະ ເທັກໂນໂລຊີ; ລະບົບກົດໝາຍກ່ຽວກັບການປົກປ້ອງສິດທິບຸກຄົນ, ສິດເສລີພາບ ແລະ ປະຊາທິປະໄຕຂອງພົນລະເມືອງໃນການນຳໃຊ້ສິດອັນຊອບທຳ; ສ້າງສະຕິຕື່ນຕົວ ແລະ ຈິດສຳ ນຶກໃຫ້ປະຊາຊົນບັນດາເຜົ່າ, ທຸກເພດທຸກໄວ ໃນການເຄົາລົບ ແລະ ປະຕິບັດກົດໝາຍ, ລະບຽບຕ່າງໆໃຫ້ສູງຂຶ້ນເຮັດໃຫ້ກົດໝາຍມີຄວາມສັກສິດ ແລະ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

- ພັດທະນາລະບົບການຕັດສິນຂອງສານເພື່ອຮັບປະກັນໃຫ້ຄຳຕັດສິນ, ຄຳພິພາກສາຂອງແຕ່ລະຂັ້ນຖືກພິຈາລະນາໄປຕາມພາລະບົດບາດ ເຮັດໃຫ້ການແກ້ໄຂຄະດີມີຄວາມວ່ອງໄວ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ.
- ພັດທະນາ ແລະ ຍົກສູງຄວາມສາມາດຂອງພະນັກງານ ທາງດ້ານຄຸນທາດການເມືອງ ແລະ ຈັນຍາບັນໃຫ້ສູງຂຶ້ນເພື່ອແນ່ໃສ່ປົກປັກຮັກສາຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ແລະ ຄວາມເຊື່ອໝັ້ນຂອງສັງຄົມ.
- ກວດສອບ ແລະ ປະເມີນການຈັດຕັ້ງປະຕິບັດລະບຽບກົດໝາຍໃນແຕ່ລະໄລຍະ ເປັນຕົ້ນ: ກົດໝາຍວ່າດ້ວຍການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍງົບປະມານ, ກົດໝາຍວ່າດ້ວຍການລົງທຶນ ແລະ ອື່ນໆ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ**

- ຄົ້ນຄວ້າສ້າງ ແລະ ປັບປຸງລະບຽບຂັ້ນຕອນ, ມາດຕະຖານເຕັກນິກໃນການສ້າງລະບຽບກົດໝາຍ ແລະ ນິຕິກຳຕ່າງໆ.
- ສ້າງກົນໄກເພື່ອທົບທວນ ແລະ ປະເມີນຜົນນຳໃຊ້ກົດໝາຍ ເປັນແຕ່ລະໄລຍະເພື່ອຮັບປະກັນໃນການດັດແກ້ ແລະ ປັບ ປຸງກົດໝາຍໃຫ້ທ່ວງທັນກັບສະພາບການ.
- ຄົ້ນຄວ້າສ້າງ ແລະ ປັບປຸງລະບຽບລັດຖະກອນຕຸລາການເພື່ອຮັບປະກັນຄວາມມີປະສິດທິພາບ ແລະ ປະຕິບັດຕາມກົດໝາຍທີ່ກຳນົດໄວ້.

## 3.7.2. ແຜນວຽກຈຸດສຸມທີ 2: ສົ່ງເສີມຄວາມຮູ້ພູມປັນຍາໃສ່ການຄົ້ນຄ້ວາ, ການພັດທະນາວິທະຍາ ສາດ, ການຄຸ້ມຄອງ ແລະ ນຳໃຊ້ເຕັກໂນໂລຊີ, ນະວັດຕະກຳ ແລະ ການສື່ສານ:

1. **ສົ່ງເສີມຄວາມຮູ້ພູມປັນຍາໃສ່ການຄົ້ນຄວ້າ, ການພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ**:

» **ທິດທາງ**:

ພັດທະນາ ແລະ ຍົກສູງວຽກງານວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ກາຍເປັນທ່າແຮງ ແລະ ປະກອບສ່ວນສຳຄັນໃຫ້ແກ່ການຈັດຕັ້ງປະຕິບັດບັນດາເປົ້າໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃຫ້ບັນລຸຜົນ ຊຶ່ງເປົ້າໝາຍຫຼັກແມ່ນ:

1) ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ເປັນກຳລັງຂັບເຄື່ອນທີ່ສຳຄັນໃນການຊຸກຍູ້ໃຫ້ເສດຖະກິດຂະຫຍາຍຕົວຢ່າງແຂງແຮງ ແລະ ໝັ້ນທ່ຽງ, ພ້ອມທັງສ້າງຄວາມເຂັ້ມແຂງທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳຕ່າງໆທີ່ຕິດພັນກັບການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ແລະ ພັດທະນາຕາມທິດເສດຖະກິດ-ສັງຄົມພູມປັນຍາ.

2) ພັດທະນາຊັບພະຍາກອນມະນຸດ ໃນຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ມີຄວາມຮູ້ຄວາມສາມາດ, ເປັນກຳລັງແຮງທາງດ້ານສະຕິປັນຍາ ໃຫ້ແກ່ການພັດທະນາປະເທດ ຢ່າງບໍ່ຢຸດຢັ້ງ.

3) ຄົ້ນຄ້ວານຳໃຊ້ວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ເປັນເຄື່ອງມືທີ່ມີປະສິດທິຜົນ ໃນການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ, ກະກຽມຄວາມພ້ອມ ແລະ ຮັບມືກັບໄພພິບັດທາງທຳມະຊາດ ຢ່າງມີປະສິດທິຜົນ.

» **ຄາດໝາຍຕົ້ນຕໍ**:

- ສຸມການລົງທຶນໃສ່ການຄົ້ນຄວ້າ ເພື່ອພັດທະນາ ຈາກ 1% ໃຫ້ໄດ້ 2% ຂອງການລົງທຶນຂອງລັດ ໃນປີ 2020.
- ສົ່ງເສີມການລົງທຶນຂອງພາກທຸລະກິດ ໃສ່ການຄົ້ນຄວ້າ ແລະ ພັດທະນາ ໃຫ້ໄດ້ຢ່າງໜ້ອຍ 30% ຂອງການລົງທຶນພາກລັດ ຕໍ່ການຄົ້ນຄວ້າວິທະຍາສາດ ພາຍໃນປີ 2020.
- ສົ່ງເສີມການສ້າງເຂດພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ໄດ້ 1 ແຫ່ງໂດຍເລີ່ມກໍ່ສ້າງເຂດດັ່ງກ່າວ ພາຍໃນປີ 2018.

- ປັບປຸງ ແລະ ຍົກລະດັບສະຖາບັນຄົ້ນຄວ້າ ທີ່ຂຶ້ນກັບການຄຸ້ມຄອງ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ໄດ້ລະດັບສາກົນ ຢ່າງໜ້ອຍ 1 ແຫ່ງພາຍໃນປີ 2020.
- ສ້າງສູນສົ່ງເສີມ ແລະ ຖ່າຍທອດເຕັກໂນໂລຊີ ໂດຍສອດຄ່ອງກັບທ່າແຮງການພັດທະນາຂອງທ້ອງຖິ່ນ ໃຫ້ໄດ້ 4 ແຫ່ງ ໃນຂອບເຂດທົ່ວປະເທດ ພາຍໃນປີ 2020.
- ສ້າງສູນຂໍ້ມູນ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ໃຫ້ໄດ້ 1 ແຫ່ງ ພາຍໃນປີ 2020.
- ສ້າງນັກຄົ້ນຄ້ວາ ໃຫ້ໄດ້ 11 ຄົນ ຕໍ່ 10,000 ຄົນ ຂອງພົນລະເມືອງ ພາຍໃນປີ 2020.
- ສົ່ງເສີມການພັດທະນານັກຄົ້ນຄ້ວາຢູ່ບັນດາມະຫາວິທະຍາໄລ ໃນທົ່ວປະເທດ ໂດຍການຈັດສັນງົບປະມານ ເພື່ອສົ່ງເສີມການຄົ້ນຄ້ວາ ໃຫ້ໄດ້ 50 ໂຄງການ ພາຍໃນປີ 2020.
- ສ້າງວາລະສານວິທະຍາສາດ, ຊຸກຍູ້ການຄົ້ນຄ້ວາ ແລະ ພິມບົດຄົ້ນຄວ້າເຂົ້າໃສ່ວາລະສານດັ່ງກ່າວ ແລະ ວາລະສານ ສາກົນ ໃຫ້ໄດ້ 250 ບົດ ພາຍໃນປີ 2020.
- ສ້າງສູນຝຶກອົບຮົມພະນັກງານຄຸ້ມຄອງວິທະຍາສາດ ແລະ ເຕັກໂນໂລຊີ ໃຫ້ໄດ້ 1 ແຫ່ງ ແລະ ເລີ່ມຕົ້ນການກໍ່ສ້າງ ພາຍໃນປີ 2016.
- ຈັດສັນງົບປະມານໃສ່ໂຄງການຄົ້ນຄວ້າ ທີ່ຕິດພັນກັບການສົ່ງເສີມການພັດທະນາແບບຍືນຍົງ ໃຫ້ໄດ້ 25% ຂອງ
- ງົບປະ ມານຄົ້ນຄວ້າໃນແຕ່ລະປີ.
- ສ້າງສູນທົດລອງນຳໃຊ້ ເຕັກໂນໂລຊີທີ່ທັນສະໄໝ ເພື່ອຄາດຄະເນ ແລະ ເຕືອນໄພລ່ວງໜ້າ ຕໍ່ສະພາບການປ່ຽນແປງ ດິນຟ້າອາກາດ ໃຫ້ໄດ້ 1 ແຫ່ງ ພາຍໃນປີ 2020.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ**:

- ເກັບກຳສະຖິຕິ ແລະ ຂໍ້ມູນຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອເປັນພື້ນຖານໃຫ້ແກ່ການຄົ້ນຄວ້າວາງນະ ໂຍບາຍ ແລະ ແຜນພັດທະນາຂະແໜງການໄລຍະຍາວ.
- ສ້າງສູນແລກປ່ຽນຂໍ້ມູນຂ່າວສານ, ຄວາມຮູ້ ແລະ ບົດຮຽນທີ່ດີເລີດທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດ ຕະກຳ.
- ສົ່ງເສີມການນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ ເພື່ອພັດທະນາຂະແໜງການທີ່ເປັນທ່າແຮງຂອງປະເທດໃນ ການຜະລິດວິສາຫະກິດຂະໜາດກາງ ແລະ ນ້ອຍ.
- ຄົ້ນຄວ້າ ແລະ ດັດປັບນຳໃຊ້ເຕັກໂນໂລຊີຂອງສາກົນໃຫ້ແທດເໝາະກັບສະພາບເງື່ອນໄຂຂອງປະເທດເຮົາ ເພື່ອຍົກ ປະສິດທິພາບຂອງການຜະລິດ ແລະ ເສີມສ້າງຄວາມອາດສາມາດແຂ່ງຂັນພາຍໃນ.
- ສ້າງສູນຖ່າຍທອດເຕັກໂນໂລຊີ ເພື່ອສົ່ງເສີມການນຳໃຊ້ ທີ່ເໝາະສົມກັບສະພາບເງື່ອນໄຂການຜະລິດ ແລະ ບໍລິການ ຂອງປະເທດເຮົາ.
- ກຳນົດນະໂຍບາຍ, ລະບຽບການ, ຫລຸດຜ່ອນສິ່ງກີດຂວາງ ແລະ ສ້າງສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການພັດທະ ນານະວັດຕະກຳ ແລະ ການປະກອບການ.
- ສ້າງລະບົບນະວັດຕະກຳແຫ່ງຊາດ ລວມເຖິງການສ້າງນະໂຍບາຍ, ນິຕິກຳ, ກົນໄກຊຸກຍູ້ສົ່ງເສີມ, ກອງທຶນນະວັດຕະກຳ ແລະ ການປົກປ້ອງຊັບສິນທາງປັນຍາທີ່ເໝາະສົມ ເພື່ອສົ່ງເສີມຫົວຄິດປະດິດສ້າງ, ການພັດທະນາກິດຈະການປະກອບການ ແລະ ການຜະລິດນະວັດຕະກຳທີ່ເປັນປະໂຫຍດຕໍ່ການພັດທະນາເສດຖະກິດ-ສັງຄົມ.
- ສົ່ງເສີມ ແລະ ຍົກລະດັບປະສິດທິຜົນຂອງການຮ່ວມມື ໂດຍສຸມໃສ່ການຄົ້ນຄວ້ານຳໃຊ້ຜົນສຳເລັດທາງດ້ານວິທະຍາ ສາດ, ເຕັກໂນໂລຊີ ແລະ ນະວັດຕະກຳຂອງສາກົນ ມາປະຍຸກໃຊ້ໃຫ້ເໝາະສົມກັບສະພາບເງື່ອນໄຂຂອງປະເທດເຮົາ.
- ຮ່ວມມືກັບສາກົນໃນການຄົ້ນຄວ້າ ແລະ ພັດທະນາຢ່າງມີຈຸດສຸມໃນຂົງເຂດທີ່ປະເທດເຮົາມີຄວາມຮຽກຮ້ອງຕ້ອງການ.
- ສົ່ງເສີມກິດຈະກຳການຮ່ວມມືລະຫວ່າງພາກລັດ, ສະຖາບັນການສຶກສາ ແລະ ທຸລະກິດໃນການພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳໃຫ້ນັບມື້ນັບຫລາຍຂຶ້ນ.
- ສ້າງພິພິດທະພັນວິທະຍາສາດແຫ່ງຊາດ ແລະ ຈັດຕັ້ງປະຕິບັດ ບັນດາກິດຈະກຳປູກຈິດສຳນຶກ ເປັນຕົ້ນ ຄາລະວານ ວິທະຍາສາດ, ຫໍສະໝຸດວິທະຍາສາດເຄື່ອນທີ່, ການຖາມຕອບ ແລະ ແຂ່ງຂັນທາງດ້ານວິທະຍາສາດ ແລະ ອື່ນໆ ເພື່ອສ້າງວັດທະນະນຳທາງດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ແກ່ສັງຄົມ ເພື່ອສົ່ງເສີມການ ສ້າງເສດຖະກິດ-ສັງຄົມພູມປັນຍາ.

- ສົ່ງເສີມການສຶກສາທາງດ້ານວິທະຍາສາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ (STEM Education) ໃຫ້ ຫລາຍຂຶ້ນ.
- ສ້າງວາລະສານວິທະຍາສາດເພື່ອສົ່ງເສີມການຄົ້ນຄ້ວາ, ຈັດພິມແລະເຜີຍແຜ່ໝາກຜົນຂອງການຄົ້ນຄ້ວາແລະພັດທະນາ.
- ສົ່ງເສີມການຮຽນຂອງນັກຮຽນມັດທະຍົມຕາມພອນສະຫວັນເພື່ອສ້າງເງື່ອນໄຂໃຫ້ມີໜໍ່ແໜງນັກວິທະຍາສາດລຸ້ນໃໝ່.
- ຈັດຕັ້ງປະຕິບັດບັນດາກິດຈະກຳ ເພື່ອສະແດງການຮັບຮູ້, ຍ້ອງຍໍ ແລະ ສັນລະເສີນນັກຄົ້ນຄ້ວາ-ນັກວິທະຍາສາດດີເດັ່ນ ເພື່ອສົ່ງເສີມການສ້າງ ແລະ ພັດທະນາ ນັກຄົ້ນຄ້ວາ-ນັກວິທະຍາສາດ.
- ສ້າງຫຼັກສູດການຮຽນການສອນ ເພື່ອພັດທະນາພະນັກງານຄຸ້ມຄອງວິທະຍາສາດ ແລະ ເຕັກໂນໂລຊີ.
- ສ້າງຍຸດທະສາດການພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳໃຫ້ເປັນອົງປະກອບທີ່ສຳຄັນໃນການພັດທະນາແບບຍືນຍົງ.
- ສົ່ງເສີມການຄົ້ນຄວ້າ ແລະ ພັດທະນາ ວຽກງານວິທະຍາສາດ ແລະ ເຕັກໂນໂລຊີໃຫ້ແທດເໝາະກັບເປົ້າໝາຍການພັດທະນາແບບຍືນຍົງ.
- ສົ່ງເສີມການນຳໃຊ້ເຕັກໂນໂລຊີ ທີ່ເປັນມິດກັບສິ່ງແວດລ້ອມ ແລະ ປະຢັດການນຳໃຊ້ຊັບພະຍາກອນທຳມະຊາດຕາມທິດການເຕີບໂຕສີຂຽວ ແລະ ການພັດທະນາແບບຍືນຍົງ.
- ຄົ້ນຄວ້າ ແລະ ນຳໃຊ້ ເຕັກໂນໂລຊີ ທີ່ທັນສະໄໝ ເພື່ອເຕືອນໄພລ່ວງໜ້າ ແລະ ຮັບມືກັບໄພພິບັດທາງທຳມະຊາດ.
- ສົ່ງເສີມການລົງທຶນຂອງພາກທຸລະກິດໃສ່ການພັດທະນາເຕັກໂນໂລຊີແລະນະວັດຕະກຳເພື່ອການພັດທະນາແບບຍືນຍົງ.
- ສ້າງສູນທົດລອງນຳໃຊ້ ເຕັກໂນໂລຊີທີ່ທັນສະໄໝ ເພື່ອຄາດຄະເນ ແລະ ເຕືອນໄພລ່ວງໜ້າຕໍ່ສະພາບການປ່ຽນແປງດິນຟ້າອາກາດ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ**:

- ສ້າງນະໂຍບາຍ, ແຜນການ ແລະ ແຜນງານຕ່າງໆ ເພື່ອສົ່ງເສີມການພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອການພັດທະນ າເປັນຕົ້ນ ແມ່ນ ນະໂຍບາຍສົ່ງເສີມນະວັດຕະກຳແຫ່ງຊາດ, ນະໂຍບາຍສົ່ງເສີມການຄົ້ນຄວ້າ ແລະ ພັດທະນາແຫ່ງຊາດ ແລະ ລະບຽບການທີ່ກ່ຽວຂ້ອງ, ນະໂຍບາຍສົ່ງເສີມການພັດທະນາເຕັກໂນໂລຊີສະອາດ, ນະໂຍບາຍສົ່ງເສີມຊັບສິນທາງປັນຍາ, ຍຸດທະສາດການພັດທະນາວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳແຫ່ງຊາດ, ຍຸດທະສາດການພັດທະນາ ແລະ ຄຸ້ມຄອງເຕັກໂນໂລຊີຊີວະພາບ, ແຜນປະຕິບັດງານສົ່ງເສີມການຫັນເປັນອຸດສາຫະກຳ ແລະ ທັນສະໄໝ ໃນຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ, ແຜນປະຕິບັດງານ ເພື່ອການຄຸ້ມຄອງ ແລະ ນຳໃຊ້ທາດເຄມີ, ຊີວະ, ກຳມັນຕະພາບລັງສີ, ນິວເຄຼຍ ແລະ ອື່ນໆ.
- ສ້າງນິຕິກຳ ເພື່ອຄຸ້ມຄອງ ແລະ ສົ່ງເສີມການພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອການພັດທະນາເປັນຕົ້ນແມ່ນ ກົດໝາຍວ່າດ້ວຍຄວາມປອດໄພທາງລັງສີ-ນິວເຄຼຍ, ກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ, ດຳລັດວ່າດ້ວຍ ເຕັກໂນໂລຊີຂັ້ນສູງ, ດຳລັດວ່າດ້ວຍການສະເຫຼີມສະຫຼອງສັບປະດາວິທະຍາສາດແຫ່ງຊາດ, ດຳລັດວ່າດ້ວຍກອງທຶນສົ່ງເສີມນະວັດຕະກຳ, ດຳລັດວ່າດ້ວຍອົງກອນລະດັບຊາດ ເພື່ອຄວາມປອດໄພທາງລັງສີ-ນິວເຄຼຍ, ດຳລັດວ່າດ້ວຍສະພາບັນດິດວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ, ດຳລັດວ່າດ້ວຍການຄຸ້ມຄອງນັກວິທະຍາສາດ, ດຳລັດວ່າດ້ວຍ ການຄຸ້ມຄອງທາດເຄມີເປັນອັນຕະລາຍ ແລະ ອື່ນໆ.

## 2. ຄຸ້ມຄອງ, ນຳໃຊ້ເຕັກໂນໂລຊີສື່ສານ-ຂໍ້ມູນຂ່າວສານ ແລະ ສື່ມວນຊົນ

» **ທິດທາງ**:

ສົ່ງເສີມການພັດທະນາໂຄງລ່າງພື້ນຖານດ້ານໂທລະຄົມມະນາຄົມ ແລະ ຂໍ້ມູນຂ່າວສານທາງເອເລັກໂຕຣນິກທີ່ມີຄວາມໄວສູງໃຫ້ຂະຫຍາຍຕົວຢ່າງໄວ ແລະ ມີຄຸນນະພາບເພື່ອສ້າງໃຫ້ເປັນຂະແໜງບໍລິການທີ່ທັນສະໄໝ, ຊ່ວຍອຳນວຍຄວາມສະດວກໃຫ້ແກ່ການຄ້າຂາຍ ຜ່ານທາງເອເລັກໂຕຣນິກ ແລະ ຂັບເຄື່ອນອັດຕາຄວາມໄວຂອງການພັດທະນາເສດຖະ ກິດ-ສັງຄົມໃຫ້ເຂັ້ມແຂງ ແລະ ກາຍເປັນສູນກາງ (ໄອຊີທີ) ເຊື່ອມໂຍງກັບອະນຸພາກພື້ນ ແລະ ສາກົນຢ່າງມີຄຸນນະພາບ.

ພັດທະນາສື່ມວນຊົນລາວໃຫ້ກ້າວສູ່ຄຸນນະພາບໃໝ່, ທັນສະໄໝຊັດເຈນ ແລະ ທັນກັບເຫດການ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ; ເຮັດໃຫ້ສື່ມວນຊົນກາຍເປັນກະບອກສຽງຂອງພັກ ແລະ ລັດ ແລະ ສາມາດເຊື່ອມໂຍງກັບເວທີສື່ມວນຊົນພາກພື້ນ ແລະ ສາກົນ; ປັບປຸງ ແລະ ສ້າງບັນດາກົດໝາຍເພື່ອຄຸ້ມຄອງວຽກງານສື່ມວນຊົນໃຫ້ທັນສະໄໝ, ຮັດກຸມ ແລະ ຄົບຊຸດ.

» **ຄາດໝາຍຕົ້ນຕໍ**:

- ສ້າງປ່ອງບໍລິການໄປສະນີອັດຕະໂນມັດໃສ່ຫ້ອງການໄປສະນີໃນທຸກໆເມືອງ ຂອງບັນດາແຂວງ ໃຫ້ສໍາເລັດພາຍໃນປີ 2020.
- ສ້າງສູນສໍາຮອງສູນອິນເຕີເນັດແຫ່ງຊາດທີ່ພາກເໜືອ ແລະ ພາກກາງ ໃຫ້ສໍາເລັດ ພາຍໃນປີ 2018.
- ສ້າງສູນຄຸ້ມຄອງຄື້ນຄວາມຖີ່ໃຫ້ໄດ້ຕື່ມ 2 ແຫ່ງ ແລະ ສົ່ງເສີມການນໍາໃຊ້ດາວທຽມລາວ ແທນ ດາວທຽມຂອງຕ່າງປະເທດ.
- ສ້າງສູນຂໍ້ມູນແຫ່ງຊາດ ເພື່ອເປັນບ່ອນຮັບຝາກຂໍ້ມູນແບບເອເລັກໂຕຣນິກ ແບບລວມສູນຂອງລັດແລະເອກະຊົນ ໃຫ້ສໍາເລັດ ພາຍໃນປີ 2018.
- ສ້າງໃຫ້ມີລະບົບເຄືອຂ່າຍຄອມພິວເຕີພາຍໃນ ແລະ ລະບົບກອງປະຊຸມທາງໄກຂອງພາກລັດ ເຊື່ອມໂຍງບັນດາຫ້ອງການລັດ, ຫ້ອງການເມືອງ ແລະ ບ້ານ ໃຫ້ບັນລຸໄດ້ 50%.
- ສ້າງຄວາມເຂັ້ມແຂງໃຫ້ກັບສູນບໍລິຫານລັດ ດ້ວຍເອເລັກໂຕຣນິກຢູ່ສູນກາງ ໃຫ້ສາມາດບໍລິການຄົບວົງຈອນ ແລະມີຕົວແທນການບໍລິການຢູ່ທ້ອງຖິ່ນ ໃຫ້ບັນລຸໄດ້ 50%.
- ສ້າງການບໍລິຫານ ແລະ ບໍລິການຂອງບັນດາຫ້ອງການລັດ ໃຫ້ເປັນເອເລັກໂຕຣນິກ ແລະ ອັດຕະໂນມັດ ເທື່ອລະກ້າວໃຫ້ບັນລຸໄດ້ 50%.
- ຕິດຕັ້ງລະບົບຄຸ້ມຄອງ ແລະ ໃຫ້ບໍລິການລະຫັດຊື່ອິນເຕີເນັດສູງສຸດແຫ່ງຊາດ .LA ໃຫ້ສໍາເລັດ ກ່ອນປີ 2016.
- ສ້າງສູນຮຽນຮູ້ການນໍາໃຊ້ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ ປະຈໍາກຸ່ມບ້ານໃຫ່ຍ ໃຫ້ບັນລຸໄດ້ ຢ່າງໜ້ອຍ 2 ແຫ່ງ ແລະ ປະຈໍາຫ້ອງວ່າການເມືອງ ໃຫ້ບັນລຸໄດ້ 2 ແຫ່ງ ໃນປີ 2020 ໂດຍລົງເລິກໃສ່ເຂດຈຸດສຸມ ຂອງການເຮັດທົດລອງສາມສ້າງ ເພື່ອເປັນສູນຝຶກທັກສະການນໍາໃຊ້ເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ ຂອງພະນັກງານລັດ ແລະ ປະຊາຊົນທົ່ວໄປ.
- ສູ້ຊົນໃຫ້ອັດຕາສ່ວນປະຊາຊົນຮູ້ນໍາໃຊ້ຄອມພິວເຕີ ບັນລຸໄດ້ 30% ແລະ ຮູ້ນໍາໃຊ້ອິນເຕີເນັດ ບັນລຸໄດ້ 40% ຂອງພົນລະເມືອງ, ອັດຕາສ່ວນຄົວເຮືອນນໍາໃຊ້ຄອມພິວເຕີ ບັນລຸໄດ້ 20% ຂອງຄົວເຮືອນທັງໝົດ, ອັດຕາສ່ວນຂອງຜູ້ລົງທະບຽນນໍາໃຊ້ໂທລະສັບຕັ້ງໂຕະແບບມີສາຍ ແລະ ບໍ່ມີສາຍ ໃຫ້ບັນລຸ 15% ແລະ ອັດຕາສ່ວນຂອງຜູ້ລົງທະບຽນນໍາໃຊ້ໂທລະສັບມືຖື ໃຫ້ບັນລຸ 100% ຂອງປະຊາກອນທັງໝົດ, ອັດຕາສ່ວນຂອງຜູ້ລົງທະບຽນນໍາໃຊ້ອິນເຕີເນັດຄວາມໄວສູງແບບມີສາຍ ແລະ ບໍ່ມີສາຍ ໃຫ້ບັນລຸ 20% ໃນປີ 2020.
- ຂະຫຍາຍເຄືອຂ່າຍສາຍສົ່ງດ້ວຍສາຍໃຍແກ້ວທາງອາກາດ ແລະ ຝັງດິນ ໃຫ້ເຂົ້າເຖິງບັນດາເມືອງ ຂອງນະຄອນຫຼວງວຽງຈັນ ແລະ ເທດສະບານເມືອງຂອງທຸກໆແຂວງ ໃນຂອບເຂດທົ່ວປະເທດ ໃຫ້ໄດ້ຕື່ມອີກ 10.000 ກມ ເພື່ອໃຫ້ກາຍເປັນພື້ນຖານໂຄງລ່າງຂອງລະບົບບໍລິຫານລັດດ້ວຍເອເລັກໂຕຣນິກ.
- ຂະຫຍາຍສະຖານີຮັບສົ່ງສັນຍານໂທລະສັບມືຖືລະບົບ 3G ແລະ 4G ໃຫ້ກວມເອົາທຸກພື້ນທີ່ທົ່ວປະເທດຢ່າງມີຄຸນນະພາບ, ປະສິດທິພາບ ແລະ ປະຫຍັດຕົ້ນທຶນ.
- ສູ້ຊົນໃຫ້ຂະແໜງ ປທສ ສ້າງລາຍຮັບປະກອບສ່ວນເຂົ້າໃນລວມຍອດຜະລິດຕະພັນພາຍໃນ (GDP) ໃຫ້ບັນລຸ ໄດ້ 8% ໃນປີ 2020.

» **ກິດຈະກໍາ ແລະ ໂຄງການຕົ້ນຕໍ:**

- ຄົ້ນຄວ້າ, ສ້າງ ແລະ ປັບປຸງກົດໝາຍ, ດໍາລັດ, ຂໍ້ຕົກລົງ ແລະ ລະບຽບການຕ່າງໆ ເພື່ອຄຸ້ມຄອງດັດສົມການນໍາໃຊ້ ແລະ ການໃຫ້ບໍລິການໄອຊີທີປະເພດຕ່າງໆ ໃຫ້ສອດຄ່ອງກັບສາກົນ ແລະ ຮອງຮັບການເຂົ້າຮ່ວມເປັນປະຊາຄົມເສດຖະກິດອາຊຽນ.
- ຄົ້ນຄວ້າສ້າງສູນຂໍ້ມູນແຫ່ງຊາດ ແລະ ສູນສໍາຮອງຂໍ້ມູນແຫ່ງຊາດໃຫ້ສາມາດຮອງຮັບຄວາມຕ້ອງການພາຍໃນຢ່າງມີປະສິດທິພາບ.

- ສ້າງຕັ້ງກອງທຶນພັດທະນາໂທລະຄົມມະນາຄົມ ແລະ ລະບຽບການໃຊ້ຈ່າຍຂອງກອງທຶນທີ່ກົດໝາຍໂທລະຄົມມະນາຄົມໄດ້ກຳນົດໄວ້.
- ໂຄງການສ້າງສູນສຳຮອງສູນອິນເຕີເນັດແຫ່ງຊາດ 2 ແຫ່ງ ທີ່ພາກເໜືອ ແລະ ພາກກາງ.
- ໂຄງການຂະຫຍາຍລະບົບສູນກາງອິນເຕີເນັດ ເພື່ອຮອງຮັບການເຊື່ອມອິນເຕີເນັດພາຍໃນປະເທດໃຫ້ໄດ້ 100%.
- ໂຄງການຂະຫຍາຍລະບົບສູນກາງໂທລະສັບ ເພື່ອຮອງຮັບການເຊື່ອມຕໍ່ໂທລະສັບພາຍໃນປະເທດໃຫ້ໄດ້ 100%.
- ໂຄງການກະກຽມຄວາມພ້ອມການເຊື່ອມໂຍງດ້ານໂທລະຄົມມະນາຄົມກັບພາກພື້ນອາຊຽນ ເພື່ອຮອງຮັບການຕິດຕັ້ງອຸປະກອນເຊື່ອມຕໍ່ທັງພາຍໃນ ແລະ ຕ່າງປະເທດ.
- ໂຄງການສ້າງລະບົບຕິດຕາມກວດກາໄພຄຸກຄາມທາງອິນເຕີເນັດ ເພື່ອຮັບປະກັນໃຫ້ລະບົບອິນເຕີເນັດຂອງ ສປປລາວ ມີຄວາມປອດໄພຈາກການໂຈມຕີ ແລະ ສາມາດເຊື່ອມໂຍງຮັບການແຈ້ງເຕືອນຈາກສາກົນ.
- ໂຄງການສ້າງສູນກວດກາຄື້ນຄວາມຖີ່ບໍ່ມີຄົນປະຈຳການຢູ່ແຕ່ລະແຂວງ ເພື່ອຮັບປະກັນການກວດກາ, ຕິດຕາມ ແລະ ຊອກຫາຈຸດທີ່ຕັ້ງຂອງແຫລ່ງກະຈາຍຄື້ນສັນຍານຈາກພາຍໃນ ແລະ ປະເທດອ້ອມຂ້າງ.
- ຄຸ້ມຄອງຄື້ນຄວາມຖີ່ວິທະຍຸ ແລະ ອຸປະກອນສື່ສານໃຫ້ສາມາດກວດກາ ແລະ ຕິດຕາມໄດ້ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສັງຄົມ.
- ສືບຕໍ່ປະຕິບັດໂຄງການລັດຖະບານເອເລັກໂຕຣນິກ ແລະ ໂຄງການດາວທຽມໃຫ້ສຳເລັດຕາມແຜນການ.
- ສ້າງ ແລະ ປັບປຸງລະບົບຖານຂໍ້ມູນຂ່າວສານໃຫ້ມີປະສິດທິຜົນ ແລະ ທັນກັບສະພາບການ.
- ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງສື່ມວນຊົນ, ປັບປຸງວຽກງານ IT ເພື່ອເປັນສູນກາງໃນການບໍລິການ ແລະ ຄຸ້ມຄອງຜະລິດຕະພັນສື່ມວນຊົນ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ:**

- ນະໂຍບາຍສົ່ງເສີມການດຶງດູດການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດໃນລະບົບໂທລະຄົມມະນາຄົມ.
- ສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານໂທລະຄົມມະນາຄົມ ແລະ ອິນເຕີເນັດໃຫ້ແທດເໝາະກັບທິດທາງການພັດທະນາໃນເງື່ອນໄຂເຊື່ອມໂຍງກັບພາກພື້ນ ແລະ ສາກົນ.
- ສ້າງນະໂຍບາຍບຣອດແບນແຫ່ງຊາດ ເພື່ອກຳນົດແຜນຂະຫຍາຍບຣອດແບນ ແລະ ຄວາມສາມາດຊົມໃຊ້ຂອງປະຊາຊົນໃນຂອບເຂດທົ່ວປະເທດ.
- ສ້າງນະໂຍບາຍການສົ່ງເສີມ, ພັດທະນາ ແລະ ນຳໃຊ້ຊອບແວເປີດ.

## 3.7.3. ແຜນວຽກຈຸດສຸມທີ 3: ສົ່ງເສີມ ແລະ ພັດທະນາແມ່ຍິງ, ເຍົາວະຊົນ ແລະ ໄວໜຸ່ມ

1) **ການພັດທະນາແມ່ຍິງ**

» **ທິດທາງ**:

ສຶກສາອົບຮົມທາງດ້ານຄຸນທາດການເມືອງໃຫ້ໜັກແໜ້ນ, ສົ່ງເສີມໃຫ້ແມ່ຍິງໄດ້ຮັບການພັດທະນາດ້ານການສຶກສາ, ຍົກລະດັບວິຊາສະເພາະ, ວິຊາຊີບ-ສີມືແຮງງານ ແລະ ໄດ້ຮັບການບໍລິການດ້ານສາທາລະນະສຸກຢ່າງທົ່ວເຖິງ, ສາມາດປະກອບສ່ວນໃ ນການພັດທະນາເສດຖະກິດ-ສັງຄົມ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ຂອງແມ່ຍິງລາວ. ສ້າງຄວາມເຂັ້ມແຂງໃຫ້ແກ່ສະຫະພັນແມ່ຍິງໃນແຕ່ລະຂັ້ນ ເພື່ອເປັນຕົວແທນໃນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ ແລະ ເດັກ; ຫລຸດຜ່ອນການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ຮັບປະກັນສິດສະເໝີພາບເທົ່າທຽມກັນລະຫວ່າງຍິງ-ຊາຍ.

» **ຄາດໝາຍ**:

- ແມ່ຍິງໄດ້ຮັບການສຶກສາອົບຮົມການເມືອງ-ແນວຄິດ, ທິດສະດີການເມືອງ, ລັດຖະທຳມະນູນ, ກົດໝາຍ, ສົນທິ ສັນຍາ, ສັນຍາສາກົນ ທີ່ພົວພັນເຖິງການພັດທະນາ ແລະ ປົກປ້ອງແມ່ຍິງ, ຄວາມສະເໝີພາບຍິງຊາຍ, ມູນເຊື້ອວັດທະນະທຳຂອງຊາດ, ຄຸນລັກສະນະທີ່ເປັນມູນເຊື້ອຂອງແມ່ຍິງລາວໃຫ້ໄດ້ 80% ຂອງຈຳນວນແມ່ຍິງທັງໝົດ.

- ຂະຫຍາຍສະມາຊິກສະຫະພັນແມ່ຍິງໃຫ້ກວມ 70% ຂອງແມ່ຍິງໃນເກນອາຍຸ 15 ປີຂຶ້ນໄປ.
- ຂະຫຍາຍການຈັດຕັ້ງສະຫະພັນແມ່ຍິງ ໄປສູ່ຫົວໜ່ວຍທຸລະກິດ-ເອກະຊົນໃຫ້ໄດ້ 20% ຂອງຈຳນວນທັງໝົດ.
- ສະຫະພັນແມ່ຍິງລາວຈັດຕັ້ງປະຕິບັດຄຳຂວັນ, ຂໍ້ແຂ່ງຂັນ 3 ດີ ຕິດພັນກັບວຽກງານ 3 ສ້າງໃຫ້ເຂົ້າສູ່ລວງເລິກ.
- ຊຸກຍູ້ ສົ່ງເສີມໃຫ້ແມ່ຍິງໄດ້ຮັບຕຳແໜ່ງນຳພາ-ຄຸ້ມຄອງ 20% ຂຶ້ນໄປ:
  - ຂັ້ນບ້ານກວມ 10% ຂຶ້ນໄປ;
  - ຂັ້ນເມືອງ ກວມ 20% ຂຶ້ນໄປ;
  - ຂັ້ນແຂວງ, ນະຄອນຫລວງ ກວມ 20%.
- ກະຊວງ-ອົງການຂັ້ນສູນກາງ ກວມ 30% ຂຶ້ນໄປ ໂດຍສະເພາະໃນຂະແໜງການທີ່ມີແມ່ຍິງກວມກວ່າເຄິ່ງໜຶ່ງ,
- ສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ VIII ໃຫ້ກວມ 30% ຂຶ້ນໄປ.
- ສົ່ງເສີມໃຫ້ເດັກຍິງໃນເກນອາຍຸໄດ້ຮຽນຈົບມັດທະຍົມຕອນຕົ້ນ ໃຫ້ໄດ້ 85%.
- ສົ່ງເສີມ ສິດສະເໝີພາບຍິງ-ຊາຍ ໃນການເຂົ້າເຖິງ ການບໍລິການດ້ານການສຶກສາ, ສາທາລະນະສຸກ ແລະ
- ສະຫວັດດີການສັງຄົມ ເພື່ອຫລຸດຜ່ອນອັດຕາການຕາຍຂອງແມ່ ແລະ ເດັກ.
- ສົ່ງເສີມໃຫ້ແມ່ຍິງມີວິຊາຊີບ, ສີມືແຮງງານ ແລະ ມີວຽກເຮັດງານທຳທີ່ມີລາຍຮັບເພີ່ມຂຶ້ນ.
- ສົ່ງເສີມໃຫ້ສະຫະພັນແມ່ຍິງຈັດຕັ້ງກອງທຶນເພື່ອພັດທະນາຊີວິດການເປັນຢູ່ຂອງແມ່ຍິງ ແລະ ຄອບຄົວໃຫ້ດີຂຶ້ນ.
- ສ້າງເງື່ອນໄຂໃຫ້ແມ່ຍິງ ແລະ ເດັກນ້ອຍທີ່ມີບັນຫາໄດ້ເຂົ້າເຖິງຂະບວນການຍຸຕິທຳຢ່າງກວ້າງຂວາງ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ:**

- ຍົກລະດັບຄວາມຮູ້ດ້ານແນວທາງ, ລັດຖະທຳມະນູນ, ກົດໝາຍ ແລະ ສົນທິສັນຍາສາກົນທີ່ພົວພັນເຖິງການພັດທະນາປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ.
- ສົ່ງເສີມການເຊື່ອມທັດສະນະບົດບາດຍິງ-ຊາຍ ເຂົ້າໃນທຸກຂົງເຂດວຽກງານ.
- ສ້າງຄວາມເຂັ້ມແຂງໃຫ້ການຈັດຕັ້ງສະຫະພັນແມ່ຍິງແຕ່ລະຂັ້ນ.
- ປັບປຸງສູນຝຶກອົບຮົມແມ່ຍິງລາວ, ຝຶກອົບຮົມວິຊາຊີບ ແລະ ພັດທະນາສີມືແຮງງານໃຫ້ແມ່ຍິງ.
- ໂຄສະນາ, ປູກຈິດສຳນຶກ ແລະ ສ້າງຂະບວນການໃນທົ່ວສັງຄົມຮັກສາມູນເຊື້ອວັດທະນະທຳອັນດີງາມຂອງຊາດ ແລະ ຂອງແມ່ຍິງລາວ.
- ຈັດຕັ້ງໃຫ້ຄຳປຶກສາກ່ຽວກັບສິດຜົນປະໂຫຍດຂອງແມ່ຍິງ-ເດັກນ້ອຍ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ຄວາມຮຸນແຮງໃນຄອບຄົວ.
- ປັບປຸງ ແລະ ຂະຫຍາຍກອງທຶນພັດທະນາຂອງສະຫະພັນແມ່ຍິງ.
- ພົວພັນຮ່ວມມືກັບການຈັດຕັ້ງແມ່ຍິງບັນດາປະເທດເພື່ອນມິດ, ອົງການແມ່ຍິງອາຊຽນ ແລະ ການຈັດຕັ້ງຕ່າງໆ.
- ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາແມ່ຍິງລາວ.
- ໂຄສະນາ, ປູກຈິດສຳນຶກ ແລະ ສ້າງຂະບວນການໃນທົ່ວສັງຄົມກ່ຽວກັບຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.
- ລາຍງານການຈັດຕັ້ງປະຕິບັດຖະແຫລງການປັກກິ່ງ ແລະ ສົນທິສັນຍາວ່າດ້ວຍການຕ້ານທຸກຮູບແບບການຈຳແນກຕໍ່ແມ່ຍິງ (CEDAW).

» **ນະໂຍບາຍ ແລະ ນິຕິກຳຕ່າງໆ:**

- ແນວທາງນະໂຍບາຍຂອງພັກ-ລັດຕໍ່ການພັດທະນາ, ປົກປ້ອງສິດຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ,
- ການສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ຄວາມສະເໝີພາບຍິງ-ຊາຍ.
- ກົດໝາຍວ່າດ້ວຍສະຫະພັນແມ່ຍິງລາວ.

- ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ.
- ກົດໝາຍວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ.
- ວິໄສທັດພັດທະນາແມ່ຍິງ ຮອດປີ 2030, ແຜນຍຸດທະສາດພັດທະນາແມ່ຍິງ 2016-2025
- ແຜນພັດທະນາແມ່ຍິງລາວ 2016-2020.
- ແ ຜນດໍາເນີນງານແຫ່ງຊາດກ່ຽວກັບການປ້ອງກັນແລະລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກໃນ ສປປ ລາວ (2014-2020).
- ວິໄສທັດຮອດປີ 2030 ແລະ ຍຸດທະສາດແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ (2016-2025).
- ແຜນດໍາເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ປີ ຄັ້ງທີ III (2016-2020).

2) **ການສົ່ງເສີມຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມກ້າວໜ້າຂອງແມ່ຍິງ**

» **ທິດທາງ**:

ຮັບປະກັນຄວາມສະເໝີພາບຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງມີສ່ວນຮ່ວມຫລາຍກວ່າເກົ່າໃນຂົງເຂດການເມືອງ, ເສດຖະກິດ, ວັດທະນາທໍາ-ສັງຄົມ ແລະ ລະດັບຄອບຄົວ; ຫລຸດຜ່ອນການຈໍາແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນລະດັບສູງ.

» **ຄາດໝາຍ**:

- ແມ່ຍິງໃນຕໍາແໜ່ງນໍາພາ ແລະ ຕັດສິນບັນຫາໃນອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນໃນຂັ້ນຕ່າງໆ ກວມ 20% ຂຶ້ນໄປ.
- ສະມາຊິກສະພາເພດຍິງຊຸດທີ VIII ໃຫ້ໄດ້ 30% ຂຶ້ນໄປ.
- ພະນັກງານລັດຖະກອນແມ່ຍິງໄດ້ຮັບການຍົກລະດັບທິດສະດີການເມືອງ-ການປົກຄອງ, ກົດໝາຍ, ການບໍລິຫານ-ຄຸ້ມຄອງ ໃຫ້ໄດ້ 30% ຂອງຈໍານວນທັງໝົດທີ່ໄດ້ຮັບການຍົກລະດັບ.
- ສູ້ຊົນຈັດຕັ້ງປະຕິບັດຂໍ້ສະເໜີແນະຈາກຊີດໍ ໂດຍຂະແໜງການ ໃຫ້ໄດ້ 50%.
- ຈັດຕັ້ງປະຕິບັດແຜນດໍາເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ ໃຫ້ໄດ້ 70% ໃນປີ 2020.
- ອັດຕາການເກີດລູກໃນກຸ່ມໄວໜຸ່ມຍິງ 15-19 ປີ ໃຫ້ຫຼຸດລົງມາເປັນ 90%.
- ແ ມ່ຍິງທີ່ສາມາດເຂົ້າເຖິງແຫລ່ງທີ່ດິນເພື່ອທໍາມາຫາກິນ ເປັນຕົ້ນ: ນໍາໃຊ້ເຂົ້າໃນກະສິກໍາ-ປູກຝັງ-ລ້ຽງສັດ ເພີ່ມຂຶ້ນ 50%, ການບໍລິການ 50% ໂດຍອີງຕາມທ່າແຮງຂອງແຕ່ລະທ້ອງຖິ່ນ.
- ກົງຈັກ ຄກມ ທຸກຂັ້ນໄດ້ຮັບການປັບປຸງ ກວມເອົາ 95% ແລະ ກົງຈັກຊ່ວຍວຽກ ຄກມ ທຸກຂັ້ນໄດ້ຮັບການປັບປຸງຫລາຍກວ່າ 80%.
- ຮັບປະກັນທັງຍິງ-ຊາຍມີສິດສະເໝີພາບ ກ່ຽວກັບກາລະໂອກາດທາງດ້ານເສດຖະກິດ ເປັນຕົ້ນ: ການເຂົ້າເຖິງແຫລ່ງຊັບພະຍາກອນທາງດ້ານເສດຖະກິດເພື່ອທໍາມາຫາກິນ ເຊັ່ນ: ດິນ, ທຶນ, ການຍົກລະດັບວິຊາຊີບ ດ້ານວິຊາການເຕັກໂນໂລຊີອັນໃໝ່ ແລະ ພື້ນຖານໂຄງລ່າງ (ໄຟຟ້າ, ຫົນທາງ, ຕະຫລາດ).
- ຫຼຸດຜ່ອນການຈໍາແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃຫ້ຫຼຸດລົງ.

» **ກິດຈະກໍາ ແລະ ໂຄງການຕົ້ນຕໍ:**

- ໂຄງການປະຕິບັດຄວາມສະເໝີພາບຍິງ-ຊາຍ ແລະ ມອບສິດເປັນເຈົ້າທາງດ້ານເສດຖະກິດໃຫ້ແມ່ຍິງແນ່ໃສ່ເພື່ອລຶບລ້າງທຸກຮູບການຈໍາແນກຕໍ່ແມ່ຍິງ ໂດຍສະເພາະຄວາມຮຸນແຮງຕໍ່ແມ່ຍິງ.
- ໂຄງການຝຶກອົບຮົມຄູຝຶກ ເພື່ອສ້າງຄວາມເຂັ້ມແຂງໃຫ້ ຄກມ ຂັ້ນເມືອງ ແລະ ບ້ານ ຕາມທິດສາມສ້າງກ່ຽວກັບການສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແນ່ໃສ່ລຶບລ້າງທຸກຮູບການຈໍາແນກຕໍ່ແມ່ຍິງ.
- ໂຄງການໂຄສະນາ, ປູກຈິດສໍານຶກ ແລະ ສ້າງຂະບວນການໃນທົ່ວສັງຄົມກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

- ໂຄງການສ້າງຄວາມເຂັ້ມແຂງໃຫ້ພາກສ່ວນຈັດຕັ້ງປະຕິບັດວຽກງານການປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ໂດຍເລັ່ງໃສ່ເມືອງ ແລະ ບ້ານສາມສ້າງ.
- ໂຄງການສ້າງຄອບຄົວ, ບ້ານ ແລະ ເມືອງພັດທະນາ ທີ່ຕິດພັນກັບການປະຕິບັດສິດສະເໝີພາບຍິງ-ຊາຍ ແລະ ລຶບລ້າງການໃຊ້ຄວາມຮຸນແຮງໃນຄອບຄົວໂດຍສະເພາະຕໍ່ແມ່ຍິງ ແລະ ເດັກນ້ອຍ.
- ໂຄງການຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ຄັ້ງທີ VIII (2016-2020).
- ໂຄງການສ້າງບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາຊີດໍປະຈຳແຕ່ລະໄລຍະ, ໂຄງການສ້າງບົດລາຍງານການທົບທວນການຈັດຕັ້ງປະຕິບັດຖະແຫລງການ ແລະ ແຜນປະຕິບັດງານປັກກິ່ງ +25.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ:**

- ເຊື່ອມຊຶມບັນດາແນວທາງນະໂຍບາຍ ແລະ ມະຕິຂອງພັກ, ຄຳສັ່ງຂອງລັດໃຫ້ໄດ້ຢ່າງກວ້າງຂວາງ.
- ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ ຄກມ ທຸກຂັ້ນດ້ານການຈັດຕັ້ງ ແລະ ບຸກຄະລາກອນ ແນໃສ່ປັບປຸງກົນໄກການປະສານງານ ໂດຍສະເພາະບັນດາກອງເລຂາທິການໃນການຫັນເປັນແຜນການ, ການປະສານງານ, ຕິດຕາມກວດກາ, ປະເມີນຜົນ ແລະ ສະຫຼຸບລາຍງານ ໃຫ້ເປັນລະບົບປົກກະຕິຕໍ່ເນື່ອງ.
- ເພີ່ມທະວີການໂຄສະນາ ແລະ ສ້າງຂະບວນການປູກຈິດສຳນຶກທົ່ວສັງຄົມ, ສ້າງຈິນຕະນາການໃໝ່ກ່ຽວກັບຄວາມໝາຍຄວາມສຳຄັນ ແລະ ຄວາມຈຳເປັນໃນການສົ່ງເສີມຄວາມສະເໝີພາບຍິງ-ຊາຍ, ການມອບສິດເປັນເຈົ້າໃຫ້ແມ່ຍິງໃນທຸກດ້ານ, ລຶບລ້າງແນວຄວາມຄິດທີ່ຍຶດຖືຈິນຕະນາການແບບເກົ່າແລະປະຕິບັດສິດສະເໝີພາບ ຍິງ-ຊາຍໃຫ້ປະກົດຜົນເປັນຈິງ ເຮັດໃຫ້ທຸກຄົນໃນສັງຄົມທັງຍິງ ແລະ ຊາຍ ໄດ້ຮ່ວມກັນພັດທະນາ.
- ຫັນລົງຮາກຖານເພື່ອຕິດຕາມຊຸກຍູ້ສະພາບການຈັດຕັ້ງປະຕິບັດວຽກງານ, ເກັບກຳສະພາບການ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງທ້ອງຖິ່ນ.
- ສືບຕໍ່ຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະ ທຶນຮອນກັບປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ, ສະຖາບັນການເງິນ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງສັງຄົມຕ່າງໆທັງພາຍໃນ ແລະ ຕ່າງປະເທດ.
- ກົດໝາຍ ວ່າດ້ວຍການຕ້ານ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ.
- ວິໄສທັດຮອດປີ 2030 ແລະ ຍຸດທະສາດແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ (2016-2025).
- ແຜນດຳເນີນງານແຫ່ງຊາດເພື່ອຄວາມສະເໝີພາບຍິງ-ຊາຍ 5 ປີ ຄັ້ງທີ III (2016-2020).

3) **ວຽກງານແມ່ ແລະ ເດັກ**

» **ທິດທາງ**:

ຫລຸດຜ່ອນການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ເດັກ ໂດຍຖືສຳຄັນໃນວຽກປົກປ້ອງຊ່ວຍເຫລືອເດັກເພື່ອຮັບປະກັນການຢູ່ລອດ, ການພັດທະນາ ແລະ ການມີສ່ວນຮ່ວມຂອງເດັກ. ຊຸກຍູ້ສົ່ງເສີມ ແລະ ໃຫ້ໂອກາດແກ່ເດັກຍິງ ປະກອບສ່ວນເຂົ້າໃນຂະບວນການພັດທະນາໃຫ້ຫລາຍຂຶ້ນ.

**ຄາດໝາຍ**:

- ປະຕິບັດສິດທິຂອງເດັກໃນການເຂົ້າເຖິງການບໍລິການຕ່າງໆ ເປັນຕົ້ນ: ການສຶກສາ, ສາທາລະນະສຸກ,
- ສະຫວັດດີການສັງຄົມ ໃຫ້ໄດ້ 40% ຂອງຜູ້ໃຫ້ບໍລິການ.
- ຮັບປະກັນໃນການພັດທະນາເດັກຢ່າງຮອບດ້ານ ເພື່ອສ້າງໄດ້ຄົນລຸ້ນໃໝ່ທີ່ເປັນກຳລັງແຮງຂອງຊາດທີ່ເຂັ້ມແຂງຮອບດ້ານ.
- ຫລຸດຜ່ອນການຈຳແນກ ແລະ ການໃຊ້ຄວາມຮຸນແຮງຕໍ່ເດັກໃຫ້ໄດ້ໃນລະດັບສູງ.
- ປົກປ້ອງ ແລະ ຊ່ວຍເຫລືອເດັກເພື່ອຮັບປະກັນການຢູ່ລອດ, ການພັດທະນາ ແລະ ການມີສ່ວນຮ່ວມຂອງເດັກ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ:**

- ໂຄງການສ້າງຄອບຄົວ, ບ້ານ ແລະ ເມືອງພັດທະນາທີ່ປະຕິບັດສິດທິພື້ນຖານຂອງເດັກໃນການຢູ່ລອດ, ການພັດທະນາ, ການປົກປ້ອງ ແລະ ການມີສ່ວນຮ່ວມ.
- ໂຄງການຝຶກອົບຮົມຄູຝຶກ ເພື່ອສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະທິການເພື່ອແມ່ ແລະ ເດັກທຸກຂັ້ນ ພ້ອມດ້ວຍກົງຈັກເສນາທິການໂດຍເລັ່ງໃສ່ຄະນະກຳມະທິການເພື່ອແມ່ ແລະ ເດັກຂັ້ນແຂວງ, ເມືອງ ແລະ ບ້ານຕາມທິດສາມສ້າງ ກ່ຽວກັບວຽກປົກປ້ອງຊ່ວຍເຫລືອເດັກເພື່ອຮັບປະກັນການຢູ່ລອດ, ການພັດທະນາ ແລະ ການມີສ່ວນຮ່ວມຂອງເດັກ.
- ໂຄງການໂຄສະນາ, ປູກຈິດສຳນຶກ ແລະ ສ້າງຂະບວນການໃນທົ່ວສັງຄົມ ກ່ຽວກັບການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ແລະ ປົກປ້ອງສິດທິເດັກ.
- ໂຄງການສ້າງຄວາມເຂັ້ມແຂງໃຫ້ແຕ່ລະພາກສ່ວນ ຈັດຕັ້ງປະຕິບັດວິໄນລະບົບປ້ອງກັນ ແລະ ແກ້ໄຂຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກໂດຍເລັ່ງໃສ່ເມືອງ ແລະ ບ້ານສາມສ້າງ ໃຫ້ປະກົດຜົນເປັນຈິງ.
- ໂຄງການຕິດຕາມ, ກວດກາ, ຊຸກຍູ້ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນຍຸດທະສາດແຫ່ງຊາດວຽກແມ່ ແລະ ເດັກ 2016-2025, ແຜນດຳເນີນງານແຫ່ງຊາດວຽກງານເພື່ອແມ່ ແລະ ເດັກ 2016-2020 ແລະ ແຜນດຳເນີນງານແຫ່ງຊາດກ່ຽວກັບການປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ ແລະ ຄວາມຮຸນແຮງຕໍ່ເດັກ ໃນ ສປປລາວ (2014-2020).
- ສ້າງບົດລາຍງານແຫ່ງຊາດໃນການຈັດຕັ້ງປະຕິບັດສົນທິສັນຍາວ່າດ້ວຍສິດທິເດັກ ແລະ ສົນທິສັນຍາອື່ນໆທີ່ກ່ຽວຂ້ອງກັບເດັກ.
- ການພັດທະນາເດັກລະຫວ່າງທ້ອງຖິ່ນ ເພື່ອແລກປ່ຽນວັດທະນະທຳ ແລະ ຮີດຄອງປະເພນີຕ່າງໆ.
- ໂຄງການສ້າງຖານຂໍ້ມູນສະຖິຕິທີ່ກ່ຽວຂ້ອງກັບເດັກ, ຕິດຕາມ-ກວດກາ ແລະ ສະຫລຸບລາຍງານສະພາບການພັດທະນາເດັກໃນແຕ່ລະໄລຍະ.
- ໂຄງການໄວໜຸ່ມລາວ ຫ່າງໄກຢາເສບຕິດ ເພື່ອພັດທະນາເດັກນອກໂມງຮຽນຢ່າງເຕັມຄວາມສາມາດ.
- ໂຄງການຮ່ວມມືໃນກອບພາກພື້ນອາຊຽນ ແລະ ການຮ່ວມມືໃຕ້-ໃຕ້ໃນວຽກສິດທິເດັກ.
- ໂຄງການຈັດຕັ້ງປະຕິບັດບັນດາກົດໝາຍ ແລະ ຂໍ້ແນະນຳສາກົນ ແລະ ພາກພື້ນທີ່ກ່ຽວຂ້ອງກັບເດັກ.
- ດຳເນີນການສຶກສາຄົ້ນຄວ້າໃນດ້ານຕ່າງໆທີ່ກ່ຽວຂ້ອງກັບເດັກໃນແຕ່ລະໄລຍະ.

» **ນະໂຍບາຍ ແລະ ນິຕິກຳຕ່າງໆ**:

- ເອົາໃຈໃສ່ສ້າງຄວາມເຂັ້ມແຂງໃຫ້ຄະນະກຳມະທິການເພື່ອແມ່ ແລະ ເດັກທຸກຂັ້ນດ້ານການຈັດຕັ້ງ ແລະ ບຸກຄະລາກອນ ແນໃສ່ປັບປຸງກົນໄກປະສານງານ ໂດຍສະເພາະ ກອງເສນາທິການໃນການຫັນເປັນແຜນການ, ການປະສານງານ, ຕິດຕາມກວດກາ, ປະເມີນຜົນ ແລະ ສະຫລຸບລາຍງານໃຫ້ເປັນລະບົບປົກກະຕິຕໍ່ເນື່ອງ.
- ສ້າງ, ປັບປຸງບັນດານິຕິກຳ ແລະ ນະໂຍບາຍຕ່າງໆທີ່ກ່ຽວຂ້ອງກັບເດັກຢ່າງຮອບດ້ານ ແລະ ການສ້າງສິ່ງແວດລ້ອມທີ່ປອດໄພກັບເດັກ.
- ສືບຕໍ່ຮ່ວມມືກັບທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ, ພາກພື້ນ ແລະ ສາກົນໃນວຽກສິດທິເດັກ.

### 4) **ການພັດທະນາເຍົາວະຊົນ ແລະ ໄວໜຸ່ມ**

» **ທິດທາງ**:

ສ້າງໃຫ້ຊາວໜຸ່ມ ແລະ ເຍົາວະຊົນລາວບັນດາເຜົ່າເປັນກຳລັງແຮງສືບທອດມູນເຊື້ອ, ອຸດົມການຂອງພັກ ແລະ ຂອງຊາດໂດຍການສຶກສາອົບຮົມຊາວໜຸ່ມ-ເຍົາວະຊົນໃຫ້ມີຄຸນທາດການເມືອງໜັກແໜ້ນ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທ ະນາທຳອັນດີງາມຂອງຊາດ ແລະ ຊົນເຜົ່າ, ມີຈິດໃຈສາມັກຄີ, ເຂົ້າຮ່ວມໃນການປະຕິບັດສິດພັນທະປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ປົກປັກຮັກສາສິ່ງແວດລ້ອມ; ຍົກລະດັບການສຶກສາ, ວິຊາຊີບ ແລະ ສີມືແຮງງານ, ວິທະຍາສາດ-ເຕັກໂນໂລຊີໃໝ່ທີ່ທັນສະໄໝ ແລະ ພາສາຕ່າງປະເທດ; ເຮັດໃຫ້ຊາວໜຸ່ມ-ເຍົາວະຊົນສາມາດ

ເຂົ້າເຖິງການບໍລິການ ແລະ ຂໍ້ມູນທາງດ້ານສຸຂະພາບທີ່ເປັນມິດຕໍ່ກັບໄວໜຸ່ມ ລວມທັງສຸຂະພາບທາງເພດ ແລະ ສຸຂະພາບຈະເລີນພັນ, ປຸກຈິດສຳນຶກທີ່ຖືກຕ້ອງ, ຕີຖອຍປະກົດການຫຍໍ້ທໍ້ດ້ານຕ່າງໆໃນສັງຄົມ ແລະ ຈຳກັດພຶດຕິກຳລະເມີດລະບຽບກົດໝາຍໃນກຸ່ມຊາວໜຸ່ມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ. ເພີ່ມການລົງທຶນໃສ່ເຍົາວະຊົນ ແລະ ໄວໜຸ່ມ ເພື່ອກາຍເປັນກຳລັງແຮງທີ່ມີຄຸນນະພາບ ແລະ ນຳໃຊ້ເຂົາເຈົ້າໃຫ້ມີຜົນປະໂຫຍດສູງສຸດ.

» **ຄາດໝາຍ**:

- ສຶກສາອົບຮົມການເມືອງ-ແນວຄິດໃຫ້ແກ່ຊາວໜຸ່ມລາວໃນຖັນແຖວກຳລັງປະກອບອາວຸດ ແລະ ຊາວໜຸ່ມລາວໃນຖັນແຖວພະນັກງານ-ລັດຖະກອນໃຫ້ໄດ້ 100%.
- ສ້າງສະມາຊິກຊາວໜຸ່ມ, ເຍົາວະຊົນ ແລະ ໄວໜຸ່ມທົ່ວໄປທີ່ເປັນນັກຮຽນນັກສຶກສາໃຫ້ໄດ້ 80%.
- ສ້າງສະມາຊິກຊາວໜຸ່ມ, ເຍົາວະຊົນ ແລະ ໄວໜຸ່ມທົ່ວໄປຢູ່ຂັ້ນຮາກຖານທົ່ວປະເທດໃຫ້ໄດ້ 60%.
- ປັບປຸງ ແລະ ຂະຫຍາຍການຈັດຕັ້ງຊາວໜຸ່ມ, ເຍົາວະຊົນ ແລະ ກໍ່ສ້າງສະຫະພັນ ແລະ ສະມາຄົມໃຫ້ເຕີບໃຫຍ່ເຂັ້ມແຂງ, ມີຄວາມສາມາດໃນການນຳພາ, ສຶກສາອົບຮົມ, ເຕົ້າໂຮມຊາວໜຸ່ມ, ເຍົາວະຊົນ ແລະ ໄວໜຸ່ມລາວບັນດາເຜົ່າໃຫ້ເປັນປຶກແຜ່ນຢູ່ອ້ອມຂ້າງພັກ ໃນນັ້ນ: ຂັ້ນສູນກາງຮອດຂັ້ນເມືອງໃຫ້ໄດ້ 50% ແລະ ຂັ້ນຮາກຖານໃຫ້ໄດ້ 30%.
- ຂະຫຍາຍວຽກງານກອງເຍົາວະຊົນ, ອະນຸຊົນທັນອານຳໜ້າ ໃຫ້ໄດ້ 85% ຂອງຈຳນວນການຈັດຕັ້ງທີ່ມີຢູ່.
- ຂະຫຍາຍສະມາຊິກຊາວໜຸ່ມ, ສະມາຊິກເຍົາວະຊົນ ແລະ ອະນຸຊົນທັນວາໃຫ້ໄດ້ 80% ຂອງຈຳນວນສະມາຊິກທີ່ມີຮອດປີ 2020.
- ສ້າງສະມາຊິກຊາວຫນຸ່ມໃນຖັນແຖວພະນັກງານຊາວໜຸ່ມຕ້ອງຖືກບຳລຸງສ້າງໃຫ້ກາຍເປັນພະນັກງານໜຸ່ມທີ່ມີຄູນນະພາບ ໃຫ້ໄດ້ 30%.
- ເຜີຍແຜ່ ແລະ ເຊື່ອມຊຶມລະບຽບກົດໝາຍໃຫ້ແກ່ຊາວໜຸ່ມ ແລະ ໄວໜຸ່ມເພື່ອສ້າງໃຫ້ເຂົາເຈົ້າມີແບບແຜນການດຳລົງຊີວິດທີ່ປອດໃສຂາວສະອາດ, ມີສຸຂະພາບຈະເລີນພັນທີ່ດີ, ແນໃສ່ຕ້ານ ແລະ ສະກັດກັ້ນການແຜ່ລະບາດຂອງ HIV, ໄຂ້ຍຸງ, ສິ່ງເສບຕິດ ແລະ ພະຍາດຕິດຕໍ່ອື່ນໆໃຫ້ໄດ້ 50% ຂອງຈຳນວນສະມາຊິກຊາວໜຸ່ມ ແລະ ເຍົາວະຊົນ.
- ປຸກລະດົມ, ຊຸກຍູ້ ເຮັດໃຫ້ຊາວໜຸ່ມ ແລະ ໄວໜຸ່ມໃຫ້ໄດ້ເຂົ້າໂຮງຮຽນມັດທະຍົມຕອນປາຍ ແລະ ທຽບເທົ່າໃຫ້ໄດ້ 50% ຂຶ້ນໄປ ແລະ ຜູ້ຢູ່ໃນເກນອາຍຸອອກແຮງງານຕ້ອງໄດ້ຮັບການຝຶກອົບຮົມວິຊາຊີບໃຫ້ໄດ້ 50% ຂອງຈຳນວນສະມາຊິກຊາວໜຸ່ມທັງໝົດໃນປີ 2020.
- ແ ຕ່ລະປີຊາວໜຸ່ມທີ່ຮອດເກນອາຍຸຕ້ອງໄດ້ເຂົ້າຮ່ວມການຝຶກແອບການທະຫານ ແລະ ບຳລຸງວິຊາປ້ອງກັນຄວາມສະຫງົບ, ເປັນທະຫານພັນທະ ແລະ ຜູ້ທີ່ບໍ່ໄດ້ເປັນທະຫານພັນທະ ຕ້ອງໄດ້ຮັບການເຊື່ອມຊຶມກົດໝາຍວ່າດ້ວຍທະຫານພັນທະໃຫ້ໄດ້ 50% ຂອງຊາວໜຸ່ມທີ່ມີເງື່ອນໄຂເປັນທະຫານພັນທະ.

» **ກິດຈະກຳ ແລະ ໂຄງການຕົ້ນຕໍ:**

- ຂະຫຍາຍສະມາຊິກຊາວໜຸ່ມ-ເຍົາວະຊົນ, ຊຸກຍູ້ໄວໜຸ່ມທົ່ວໄປໃຫ້ສົນໃຈເຂົ້າສູ່ການຈັດຕັ້ງສະຫະພັນຊາວໜຸ່ມ ແລະ ສະມາຄົມ.
- ສ້າງກອງອາສະໝັກຂັ້ນກະຊວງ, ແຂວງ, ເມືອງ, ສະຖາບັນ, ວິທະຍາໄລ ແລະ ຂັ້ນບ້ານ.
- ສົ່ງເສີມການສຶກສາວິຊາຊີບ ໃຫ້ແກ່ຊາວໜຸ່ມ-ເຍົາວະຊົນ ໃນຕົວເມືອງ ແລະ ຊົນນະບົດ ໂດຍສະເພາະຜູ້ດ້ອຍໂອກາດ, ຊົນນະບົດຫ່າງໄກສອກຫຼີກ, ເພດຍິງ, ເຜົ່າ ແລະ ຜູ້ເສຍອົງຄະ ເພື່ອເປັນກຳລັງແຮງທີ່ມີຄຸນນະພາບ ແລະ ມີປະສິດທິພາບໃນການຜະລິດ.
- ສົ່ງເສີມການສ້າງວຽກເຮັດງານທຳ ແລະ ຄຸ້ມຄອງສິດຜົນປະໂຫຍດຂອງຊາວໜຸ່ມ-ເຍົາວະຊົນໃນຕົວເມືອງ ແລະ ຊົນນະບົດ.
- ສຸມໃສ່ວຽກງານການແກ້ໄຂຄວາມທຸກຍາກຂອງໄວຫນຸ່ມ ໂດຍສະເພາະໄວໜຸ່ມຍິງ.
- ເອົາໃຈໃສ່ການຮັກສາສຸຂະພາບຂອງໄວໜຸ່ມ ໂດຍບໍ່ຈຳແນກເພດ, ລະດັບການສຶກສາ, ເຜົ່າ, ສະຖານະສົມລົດ ແລະ ອື່ນໆ ເປັນຕົ້ນ ສ້າງ ແລະ ສະໜອງຂໍ້ມູນຂ່າວສານ ແລະ ການບໍລິການສຸຂະພາບໃຫ້ແກ່ໄວໜຸ່ມເຂົ້າໃຈເຖິງຜົນຮ້າຍຂອງພະຍາດຕິດແປດ ເປັນຕົ້ນ HIV/AIDs, ໃຫ້ການບໍລິການສາທາລະນະສຸກຂັ້ນພື້ນຖານ, ການວາງແຜນຄອບຄົວ

ແລະ ສຸຂະພາບຈະເລີນພັນ. ຫຼຸດຜ່ອນການແຕ່ງງານກ່ອນໄວອັນຄວນ ແລະ ການຖືພາແຕ່ຍັງນ້ອຍ ໂດຍຜ່ານການເຂົ້າເຖິງຂໍ້ມູນຂ່າວສານ ແລະ ການບໍລິການສຸຂະພາບຈະເລີນພັນ ແລະ ໂອກາດທາງດ້ານການສຶກສາ.

- ໂຄສະນາຫຼັກການໂພຊະນາການໃຫ້ຊາວໜຸ່ມ-ເຍົາວະຊົນ.
- ຝຶກອົບຮົມກ່ຽວກັບຄວາມຮູ້ ແລະ ຄວາມເຂົ້າໃຈໃຫ້ຊາວໜຸ່ມ-ເຍົາວະຊົນໃນການປົກປັກຮັກສາສິ່ງແວດລ້ອມດ້ວຍການນໍາໃຊ້ເຕັກໂນໂລຊີທີ່ທັນສະໄໝ.
- ສຶກສາອົບຮົມ, ໂຄສະນາເຜີຍແຜ່ ແລະ ສື່ສານຂໍ້ມູນຕ່າງໆ ໃຫ້ແກ່ໄວໜຸ່ມ-ເຍົາວະຊົນເພື່ອຕິຖອຍປະກົດການຫຍໍ້ທໍ້ໃນສັງຄົມ.
- ເອົາໃຈໃສ່ສະກັດກັ້ນ ແລະ ແກ້ໄຂຜົນກະທົບທາງດ້ານເສດຖະກິດ-ສັງຄົມຕໍ່ໄວໜຸ່ມຈາກການເຊື່ອມໂຍງເສດຖະກິດ-ສັງຄົມໃນພາກພື້ນ ແລະ ສາກົນ. ພ້ອມທັງ ເສີມຂະຫຍາຍໂອກາດທາງດ້ານການສຶກສາ ແລະ ຝຶກທັກສະ ໂດຍສະເພາະ ເດັກຍິງ ໃຫ້ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ.
- ຍົກລະດັບການບໍລິການສັງຄົມ, ຮັບປະກັນໃຫ້ເດັກນ້ອຍ ແລະ ໄວໜຸ່ມຜູ້ທີ່ດ້ອຍໂອກາດທຸກຄົນໄດ້ຮັບການບໍລິການດັ່ງກ່າວຢ່າງທົ່ວເຖິງ.
- ສົ່ງເສີມການພັດທະນາໂຄງການກ່ຽວກັບການສ້າງທັກສະ ແລະ ຄວາມສາມາດໃຫ້ແກ່ເດັກນ້ອຍ ແລະ ໄວໜຸ່ມ ລວມທັງຊຸມຊົນ ແລະ ຫົວໜ່ວຍຄອບຄົວ ມີຄວາມສາມາດຢ່າງຍືນຍົງໃນການພັດທະນາຕົນເອງ ແລະ ຫຼຸດ ຜ່ອນຄວາມທຸກຍາກ.

## » ນະໂຍບາຍ ແລະ ນິຕິກໍາຕ່າງໆ:

- ກໍານົດນະໂຍບາຍສົ່ງເສີມໄວໜຸ່ມ-ເຍົາວະຊົນລາວໃຫ້ໄດ້ເຂົ້າຮ່ວມໃນຂະບວນການຮັກຊາດ ແລະ ພັດທະນາ ແລະ ຕັດສິນບັນຫາ, ສ້າງວຽກເຮັດງານທໍາ, ສ້າງລາຍຮັບໃຫ້ແກ່ຄົນຮຸ່ນໜຸ່ມ ແລະ ຊາວໜຸ່ມໃຫ້ຫຼາຍຂຶ້ນ.
- ເພີ່ມທະວີການຊີ້ນໍາ-ນໍາພາການຈັດຕັ້ງປະຕິບັດຍຸດທະສາດການພັດທະນາໄວໜຸ່ມ-ເຍົາວະຊົນ ໂດຍຕິດພັນກັບແຜນພັດທະນາເສດຖະກິດ-ສັງຄົມ, ຍຸດທະສາດການພັດທະນາໃນແຕ່ລະຂົງເຂດ ແລະ ຄວາມຮຽກຮ້ອງຕ້ອງການຂອງຊາວໜຸ່ມ, ເຍົາວະຊົນໃນແຕ່ລະໄລຍະ.
- ຄຊປປລ ແຕ່ລະຂັ້ນ, ຊາວໜຸ່ມ, ເຍົາວະຊົນທຸກຄົນຕ້ອງຍົກສູງຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຕັ້ງໜ້າຫັນລົງກໍ່ສ້າງຮາກຖານ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ຕິດພັນກັບການຍູ້ແຮງຂະບວນການຂໍ້ແຂ່ງຂັນຂອງ ຄຊປປລ ວາງອອກໃນແຕ່ລະໄລຍະໃຫ້ຟົດຟື້ນເຂັ້ມແຂງ, ປະຕິບັດຢູ່ຂັ້ນຮາກຖານໃຫ້ມີຈຸດສຸມ, ມີຈຸດທົດລອງ ແລະ ຕ້ອງເຮັດໃຫ້ສໍາເລັດຢ່າງຂາດຕົວທັງຮັບປະກັນປະສິດທິຜົນ.
- ເອົາໃຈໃສ່ປັບປຸງ, ກໍ່ສ້າງການຈັດຕັ້ງຂອງ ຄຊປປລ ແລະ ເຍົາວະຊົນທັນວາແຕ່ລະຂັ້ນໃຫ້ໜັກແໜ້ນເຂັ້ມແຂງ, ຍຶດໝັ້ນ 6 ຫຼັກການປ່ຽນແປງໃໝ່ຂອງພັກ ເພື່ອເຮັດໃຫ້ ຄຊປປລ ມີກໍາລັງແຮງທາງດ້ານປະລິມານ ແລະ
- ຄຸນນະພາບ, ເປັນແກ່ນນໍາໃນການນໍາພາຂະບວນໄວໜຸ່ມ, ເຍົາວະຊົນໃຫ້ທົ່ວເຖິງ.
- ກໍ່ສ້າງ, ປັບປຸງພື້ນຖານວັດຖຸເຕັກນິກ ແລະ ພັດທະນາລະບົບຂໍ້ມູນຂ່າວສານຂັ້ນພື້ນຖານຂອງໄວໜຸ່ມ ໃນຂອບເຂດທົ່ວປະເທດ.
- ສູນກາງ ຊປປລ ຮັບຜິດຊອບຊີ້ນໍາທາງດ້ານວິຊາການໃນການພັດທະນາຊາວໜຸ່ມ - ເຍົາວະຊົນ ແລະ ເປັນເຈົ້າການປະສານງານ ແລະ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ, ເສີມຂະຫຍາຍບົດບາດການຮ່ວມມືກັບແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ຄອບຄົວ ແລະ ສື່ມວນຊົນເພື່ອໃຫ້ມີສ່ວນຮ່ວມໃນການເຜີຍແຜ່ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດພັດທະນາຊາວໜຸ່ມ-ເຍົາວະຊົນໃຫ້ປະກົດຜົນເປັນຈິງ.
- ສ້າງ, ປັບປຸງນິຕິກໍາ ແລະ ນະໂຍບາຍ ກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ ແລະ ໄວໜຸ່ມ ໂດຍການຮັບປະກັນໃຫ້ເຂົາເຈົ້າມີສ່ວນຮ່ວມໃນການພັດທະນາ ກໍ່ຄືການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດ ບັນດານິຕິກໍາ ແລະ ນະໂຍບາຍດັ່ງກ່າວ.

# ພາກທີສາມ

## ນະໂຍບາຍ, ມາດຕະການ ແລະ ກົນໄກ ໃນການຈັດຕັ້ງປະຕິບັດແຜນ ພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020)

# ພາກທີສາມ: ນະໂຍບາຍ, ມາດຕະການ ແລະ ກົນໄກໃນການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020)

## 1. ນະໂຍບາຍ:

- ຫັນປ່ຽນຮູບແບບການພັດທະນາເສດຖະກິດຈາກທາງກວ້າງໄປສູ່ທາງເລິກ, ຈາກເນັ້ນໜັກແຕ່ດ້ານປະລິມານໄປສູ່ຄຸນນະພາບ ໂດຍຍົກສູງປະສິດທິຜົນການຜະລິດ, ການລົງທຶນ, ການນຳໃຊ້ຊັບພະຍາກອນຢ່າງສົມເຫດສົມຜົນ, ສົ່ງເສີມການປະດິດສ້າງໃໝ່ ແລະ ການນຳໃຊ້ວິທະຍາສາດ-ເຕັກໂນໂລຊີໃໝ່ທີ່ທັນສະໄໝ ທັງເປັນມິດກັບສິ່ງແວດລ້ອມ ແລະ ສັງຄົມ.
- ສ້າງບັນດາປະຖົມປັດໄຈດ້ານທຶນຮອນ, ວັດຖຸ-ເຕັກນິກ ແລະ ວິທະຍາສາດ, ຂໍ້ມູນຂ່າວສານ, ບຸກຄະລາກອນ, ຜູ້ປະກອບການ ແລະ ກຳລັງແຮງງານ ເພື່ອຮອງຮັບການພັດທະນາຕາມແຜນການທີ່ກຳນົດໄວ້.
- ເອົາໃຈໃສ່ການດຸນດ່ຽງຕ່າງໆ ທາງດ້ານມະຫາພາກ ເຊັ່ນ: ດຸນດ່ຽງລະຫວ່າງການລົງທຶນ, ການຂະຫຍາຍຕົວ ແລະ
- ສະຖຽນລະພາບດ້ານເສດຖະກິດມະຫາພາກ, ລະຫວ່າງເສດຖະກິດກັບສັງຄົມ ແລະ ສິ່ງແວດລ້ອມ, ລະຫວ່າງການສະໜອງ ແລະ ຄວາມຕ້ອງການທຶນ ແລະ ແຮງງານ, ລະຫວ່າງການໃຊ້ສອຍກັບການສະສົມ ແລະ ອື່ນໆ.
- ປັບປຸງພື້ນຖານການຜະລິດໃຫ້ເຂັ້ມແຂງ ໂດຍການຊຸກຍູ້ສົ່ງເສີມແລະສ້າງຄວາມເຂັ້ມແຂງໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs), ສຸມໃສ່ການຜະລິດສະບຽງອາຫານ ແລະ ການຜະລິດເປັນສິນຄ້າໃຫ້ມີຄຸນນະພາບສູງ ແລະ ມີຄວາມຫຼາກຫຼາຍ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ.
- ສືບຕໍ່ປະຕິບັດນະໂຍບາຍ 3 ສ້າງໃຫ້ເຂົ້າສູ່ລວງເລິກ, ນະໂຍບາຍສົ່ງເສີມການລົງທຶນ, ຊຸກຍູ້ການຜະລິດ, ຄຸ້ມຄອງເສດຖະກິດມະຫາພາກ, ພັດທະນາຊັບພະຍາກອນມະນຸດ, ພັດທະນາເຂດແຄວ້ນ, ນະໂຍບາຍດ້ານສິ່ງແວດລ້ອມ, ນະໂຍບາຍການຄ້າ ແລະ ນະໂຍບາຍອື່ນໆ. ສ້າງນະໂຍບາຍເອື້ອອຳນວຍໃຫ້ທົ່ວສັງຄົມ, ທຸກພາກສ່ວນ ເສດຖະກິດເຂົ້າຮ່ວມໃນການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຢ່າງເປັນຂະບວນກວ້າງຂວາງ. ຊຸກຍູ້ສົ່ງເສີມການພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ແລະ ເອົາໃຈໃສ່ປັບປຸງກໍ່ສ້າງເສດຖະກິດຂອງລັດ ແລະ ລວມໝູ່ໃຫ້ມີຄວາມເຂັ້ມແຂງເປັນຫຼັກແຫຼ່ງໃຫ້ແກ່ພາກສ່ວນເສດຖະກິດອື່ນ.
- ປະຕິບັດແຜນນະໂຍບາຍເປີດກວ້າງການຮ່ວມມື ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງສະເໝີຕົ້ນສະເໝີປາຍ.
- ປັບປຸງການບໍລິການ ລວມທັງ ການບໍລິການທາງຜ່ານໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ໂດຍການເລັ່ງລັດດຳເນີນໂຄງການຂະໜາດໃຫຍ່ທາງດ້ານການຜະລິດ ແລະ ໂຄງລ່າງເຊັ່ນ: ດ້ານພະລັງງານ, ທາງລົດໄຟ, ທາງດ່ວນ, ສະໜາມບິນ, ລະບົບການບໍລິການຂົນສົ່ງ ແລະ ຄ່ຽນຖ່າຍສິນຄ້າ ແລະ ອື່ນໆ ເພື່ອຊຸກຍູ້ການເຕີບໂຕຂອງເສດຖະກິດ ແລະ ເປັນພື້ນຖານ ໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

## 2. ມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020)

### 2.1. ຂອບວຽກທາງດ້ານເສດຖະກິດມະຫາພາກ

- ຮັບປະກັນການຂະຫຍາຍຕົວເສດຖະກິດຢ່າງຕໍ່ເນື່ອງ (ສະເລ່ຍ 7,5% ຕໍ່ປີຂຶ້ນໄປ) ທັງຮັບປະກັນການເຕີບໂຕທີ່ສົມດຸນ ແລະ ຍືນຍົງ ເຊິ່ງເປັນຈຸດໝາຍລວມໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII; ສ້າງເງື່ອນໄຂໃນການຊຸກຍູ້-ສົ່ງເສີມໃຫ້ບັນດາວິສາຫະກິດຂະໜາດນ້ອຍ-ຂະໜາດກາງມີການຂະຫຍາຍຕົວຢ່າງເຂັ້ມແຂງ ແລະ ຍືນຍົງ. ຊຸກຍູ້ສົ່ງເສີມ

ຂະແໜງການທີ່ບໍ່ແມ່ນຊັບພະຍາກອນທຳມະຊາດ ລວມທັງ ຂະແໜງປຸງແຕ່ງກະສິກຳ ແລະ ທ່ອງທ່ຽວໃຫ້ມີການຂະຫຍາຍຕົວຢ່າງຕັ້ງໜ້າ ໂດຍການຊຸກຍູ້ການລົງທຶນທັງພາກລັດ ແລະ ເອກະຊົນໃຫ້ຫຼາຍຂຶ້ນ ແລະ ມີປະສິດທິຜົນສູງຂຶ້ນ.

– ສ້າງຜູ້ປະກອບການໃຫ້ມີຄວາມພ້ອມ ແລະ ຄວາມສາມາດທາງດ້ານເຕັກນິກວິຊາການໃນການແຂ່ງຂັນຢູ່ພາຍໃນ ແລະ ສາກົນ ດ້ວຍການສະໜອງການບໍລິການທາງດ້ານການເງິນ ແລະ ສ້າງນິຕິກຳ, ລະບຽບການທີ່ເໝາະສົມ ແລະ ຮັດກຸມ ເພື່ອແກ້ໄຂຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆ.

– ສ້າງກອບເສດຖະກິດມະຫາພາກ ແລະ ປັບປຸງລະບົບລາຍງານໃຫ້ມີຄວາມຊັດເຈນ ແລະ ວ່ອງໄວ, ນຳໃຊ້ໜ່ວຍງານເສດຖະກິດມະຫາພາກ ແລະ ໜ່ວຍງານແກ້ໄຂໜີ້ສິນຂອງລັດຂັ້ນສູນກາງ ໃຫ້ເຄື່ອນໄຫວເປັນປົກກະຕິ ເພື່ອຕິດຕາມສະພາບເສດຖະກິດມາຫາພາກ, ກຳນົດນະໂຍບາຍ ແລະ ມາດຕະການແກ້ໄຂໃຫ້ທັນເວລາ ໂດຍສະເພາະສະພາບເສດຖະກິດມະຫາພາກ ຢູ່ພາຍໃນ, ວິກິດເສດຖະກິດຢູ່ພາກພື້ນ ແລະ ສາກົນ;

– ຈັດຕັ້ງປະຕິບັດນະໂຍບາຍພັດທະນາເສດຖະກິດຫຼາຍພາກສ່ວນໃຫ້ມີຄວາມເຂັ້ມແຂງ, ສອດຄ່ອງກົມກຽວ ແລະ ຊຸກຍູ້ຊ່ວຍໜູນເຊິ່ງກັນ ແລະ ກັນ; ປັບປຸງ, ຂະຫຍາຍ, ຍົກສະມັດຕະພາບ ແລະ ປະສິດທິຜົນຂອງລັດວິສາຫະກິດໃຫ້ມີຄວາມເຂັ້ມແຂງທັງເປັນຫຼັກແຫຼ່ງໃຫ້ແກ່ພາກສ່ວນເສດຖະກິດອື່ນ. ວິສາຫະກິດໃດທີ່ບໍ່ມີປະສິດທິຜົນກໍ່ຕ້ອງຕັດສິນໃຈຢຸດເຊົາ ຫຼື ຫັນປ່ຽນຮູບແບບການດຳເນີນທຸລະກິດ; ພ້ອມດຽວກັນນັ້ນ, ກໍຕ້ອງປັບປຸງກົດໝາຍ ແລະ ລະບຽບການ ລວມທັງກົນໄກຈັດຕັ້ງປະຕິບັດໃຫ້ສອດຄ່ອງແທດເໝາະກັບເງື່ອນໄຂປະຈຸບັນ;

– ຊຸກຍູ້ສົ່ງເສີມໃຫ້ພາກເອກະຊົນລວມທັງທຸກພາກສ່ວນໃນສັງຄົມເຂົ້າຮ່ວມໃນຂະບວນການພັດທະນາຢ່າງຕັ້ງໜ້າ ໂດຍສະເພາະ ຂະບວນການດຳເນີນທຸລະກິດຢ່າງເປັນເຈົ້າການ ແລະມີຄວາມບຸກບືນພັດທະນາທຸລະກິດຂອງຕົນເອງໃຫ້ເຕີບໃຫຍ່ເຂັ້ມແຂງ ແລະ ສາມາດແຂ່ງຂັນໄດ້.

– ແຕ່ລະທ້ອງຖິ່ນເອົາໃຈໃສ່ຄົ້ນຄວ້າ ແລະ ກຳນົດໃຫ້ໄດ້ທ່າແຮງຕົ້ນຕໍຂອງຕົນ ເພື່ອນຳໃຊ້ເຂົ້າໃນການປັບປຸງພື້ນຖານເສດຖະກິດໃຫ້ເຂັ້ມແຂງ, ມີຄຸນນະພາບ ແລະ ມີຄວາມຍືນຍົງ ແລະ ສ້າງສຳພັນເສດຖະກິດລະຫວ່າງທ້ອງຖິ່ນໃຫ້ມີຄວາມເຂັ້ມແຂງ ແລະ ກົມກຽວກັນທັງຊຸກຍູ້ຊ່ວຍເຫຼືອເຊິ່ງກັນ ແລະ ກັນ. ພ້ອມດຽວກັນນັ້ນ, ກໍ່ຕ້ອງປັບປຸງສ້າງຕະຫລາດເອກະພາບພາຍໃນປະເທດໃຫ້ມີຄວາມເຂັ້ມແຂງເຮັດໃຫ້ການຈໍລະຈອນສິນຄ້າມີຄວາມຄ່ອງຕົວ ແລະ ມີໝາກຜົນສູງຂຶ້ນ.

– ເລັ່ງລັດດຳເນີນໂຄງການຂະໜາດໃຫຍ່ດ້ານພະລັງງານ, ທາງລົດໄຟ, ທາງດ່ວນ, ສະໜາມບິນ, ລະບົບການບໍລິການຂົນສົ່ງ ແລະ ຄັງຮຽນຖ່າຍສິນຄ້າ ແລະ ອື່ນໆ ເພື່ອອຳນວຍຄວາມສະດວກໃຫ້ແກ່ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ.

## 2.2. ດ້ານແຫຼ່ງທຶນ

– ລະດົມທຸກພາກສ່ວນໃນສັງຄົມປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຂຸດຄົ້ນ ແລະ ລະດົມແຫຼ່ງທຶນ:

  - ຂຸດຄົ້ນແຫຼ່ງທຶນພາຍໃນ (ພາສີ-ອາກອນ ແລະ ການສົ່ງອອກ) ໃຫ້ໄດ້ຢ່າງຄົບຖ້ວນ, ສ້າງນິຕິກຳຫັນຊັບສິນເປັນທຶນໃຫ້ສຳເລັດ ເພື່ອຜົນປະໂຫຍດລວມຂອງຊາດໃຫ້ໄດ້ໃນລະດັບສູງ; ລະດົມພາກສ່ວນເອກະຊົນໃຫ້ມີສ່ວນຮ່ວມໃນການລົງທຶນກໍ່ສ້າງພື້ນຖານໂຄງລ່າງໃນຮູບແບບການຮ່ວມມືລະຫວ່າງລັດ ແລະ ເອກະຊົນ (PPP).
  - ລະດົມການຊ່ວຍເຫຼືອທາງການເພື່ອການພັດທະນາ (ຊ່ວຍເຫຼືອລ້າ ແລະ ກູ້ຍືມຈາກຕ່າງປະເທດ) ໂດຍການນຳໃຊ້ກົນໄກກອງປະຊຸມໂຕະມົນໃນການລະດົມທຶນ.
  - ເພື່ອສຸມໃສ່ພັດທະນາຂົງເຂດສັງຄົມທີ່ຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ. ຊອກຫາແຫຼ່ງທຶນຈາກກອງທຶນສາກົນ ກໍຄື ເພື່ອນມິດຍຸດທະສາດທີ່ມີອັດຕາດອກເບ້ຍຕໍ່າ ແລະ ໄລຍະຊຳລະຍາວນານ ເພື່ອມາພັດທະນາໂຄງການບູລິມະສິດຂອງລັດຖະບານ.
  - ລະດົມການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ໄດ້ຫຼາຍແລະມີຄຸນນະພາບສູງຂຶ້ນດ້ວຍການປັບປຸງນິຕິກຳໃຫ້ສອດຄ່ອງກວ່າເກົ່າ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການລົງທຶນ, ປັບປຸງບັນຊີຮຽກການລົງທຶນໃຫ້ຄົບຊຸດ ແລະ ນຳໃຊ້ໃຫ້ທັນສະພາບການ ເພື່ອລະດົມການລົງທຶນໃນຮູບແບບຕ່າງໆໃຫ້ຫຼາຍຂຶ້ນ. ຊຸກຍູ້ສົ່ງເສີມເອກະຊົນພາຍໃນລົງທຶນໃສ່ການຜະລິດ ແລະ ການບໍລິການຕ່າງໆ ໂດຍສະເພາະ ການຜະລິດເປັນສິນຄ້າ

ແນໃສ່ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກ. ຊຸກຍູ້, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດບັນດາໂຄງການທີ່ໄດ້ຮັບອະນຸຍາດຢ່າງເປັນລະບົບ, ສອດຄ່ອງກັບກົດໝາຍ ແລະ ສັນຍາທີ່ໄດ້ເຊັນກັບລັດຖະບານໃຫ້ດໍາເນີນຢ່າງເປັນປົກກະຕິ ແລະ ມີປະສິດທິພາບສູງ; ປັບປຸງການປະສານງານລະຫວ່າງພາກສ່ວນກ່ຽວຂ້ອງໃຫ້ເຂັ້ມແຂງ ແລະ ເປັນເອກະພາບສູງໃນການຈັດຕັ້ງປະຕິບັດ.

- ຊຸກຍູ້ໃຫ້ບັນດາທະນາຄານທຸລະກິດ ປັບປຸງນະໂຍບາຍອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ ຕາມທິດສົ່ງເສີມການຜະລິດເປັນສິນຄ້າ, ການບໍລິການພາຍໃນດ້ວຍການຈໍາກັດໜີ້ເສຍຂອງລະບົບທະນາຄານໃຫ້ໜ້ອຍລົງ. ນໍາໃຊ້ກົນໄກການລະດົມທຶນຂອງຕະຫຼາດຫຼັກຊັບ ເພື່ອລະດົມທຶນຈາກສັງຄົມເຂົ້າໃນການຜະລິດທຸລະກິດ ແລະ ການບໍລິການໃຫ້ໄດ້ຫຼາຍຂຶ້ນ ແລະ ມີປະສິດທິຜົນສູງຂຶ້ນ.

– ກໍານົດຂອບສັດສ່ວນການລົງທຶນຈາກງົບປະມານພາຍໃນຂອງລັດໃຫ້ຊັດເຈນ ແລະ ແທດເໝາະກັບຕົວຈິງ ຂອງການພັດທະນາ ແລະ ນໍາໃຊ້ໃຫ້ມີປະສິດທິຜົນສູງສຸດ.

– ໃນໄລຍະ 2016-2020 ມີຄວາມຕ້ອງການທຶນ ເພື່ອການພັດທະນາຈໍານວນ 223 ພັນຕື້ກີບ ໃນນີ້:
  - ການລົງທຶນຂອງລັດທັງໝົດ 21-27% ຂອງການລົງທຶນລວມ, ໃນນັ້ນ:
    > ການລົງທຶນພາຍໃນກວມປະມານ 9-11% ຂອງການລົງທຶນລວມ
    > ການລົງທຶນຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມ ກວມປະມານ 12-16% ຂອງການລົງທຶນລວມ
  - ການລົງທຶນຂອງເອກກະຊົນພາຍໃນ ແລະ ຕ່າງປະເທດ ກວມປະມານ 54-57% ຂອງການລົງທຶນລວມ
  - ການລົງທຶນຈາກລະບົບການເງິນ-ເງິນຕາ ກວມປະມານ 19-21% ຂອງການລົງທຶນລວມ

## 2.3. ດ້ານການຄຸ້ມຄອງລາຍຮັບ ແລະ ລາຍຈ່າຍ:

– ສືບຕໍ່ປັບປຸງກົນໄກເກັບລາຍຮັບໃຫ້ຄົບຊຸດ, ຊັດເຈນ ແລະ ໂປ່ງໃສ, ເກັບກໍາ ແລະ ຂຶ້ນບັນຊີຫົວໜ່ວຍທຸລະກິດໃຫ້ຄົບຖ້ວນ. ຕ້ານການຮົ່ວໄຫຼງົບປະມານ ໂດຍສະເພາະ ການຍົກເວັ້ນ ຫລື ຫລຸດຜ່ອນລາຍຮັບ ຫລື ການຫັກລົບບັນຊີທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ວາງໄວ້. ຖ້ານິຕິກໍາໃດບໍ່ສອດຄ່ອງ ແລະ ບໍ່ຮັດກຸມກໍ່ຕ້ອງຮີບຮ້ອນຄົ້ນຄວ້າ ແລະ ສະເໜີປັບປຸງໃຫ້ທັນເວລາ.

– ປັບປຸງລະບົບການເກັບພາສີອາກອນ ແລະ ລະບົບຄັງເງິນແຫ່ງຊາດໃຫ້ແທດເໝາະກັບສະພາບການຕົວຈິງໃນໄລຍະໃໝ່ ໂດຍມີການຊີ້ນໍາລວມສູນ ແລະ ມີການແບ່ງຂັ້ນຄຸ້ມຄອງຢ່າງຈະແຈ້ງ ແລະ ສາມາດກວດສອບໄດ້ ເພື່ອຈັດຕັ້ງປະຕິບັດຢ່າງເປັນເອກະພາບ. ປັບປຸງກົນໄກ ແລະ ເຄື່ອງມືຄຸ້ມຄອງລາຍຮັບ-ລາຍຈ່າຍຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນໃຫ້ຮັດກຸມ ແລະ ມີປະສິດທິຜົນສູງ.

– ຮັບປະກັນການຄຸ້ມຄອງລາຍຈ່າຍໃຫ້ໄປຕາມແຜນທີ່ສະພາແຫ່ງຊາດໄດ້ຮັບຮອງ. ນໍາໃຊ້ທຶນໃຫ້ມີປະສິດທິຜົນສູງສຸດ. ລາຍຈ່າຍປົກກະຕິກໍຕ້ອງຂຶ້ນແຜນລະອຽດ ແລະ ກວດກາການໃຊ້ຈ່າຍຢ່າງເປັນລະບົບ.

## 2.4. ມາດຕະການດ້ານການຜະລິດ

– ປັບປຸງພື້ນຖານການຜະລິດໃຫ້ເຂັ້ມແຂງ ໂດຍການຊຸກຍູ້ສົ່ງເສີມການຜະລິດ ຕາມທ່າແຮງໄດ້ປຽບຂອງປະເທດ ແລະ ຂອງແຕ່ລະທ້ອງຖິ່ນ ເພື່ອສາມາດຕອບສະໜອງຄວາມຕ້ອງການພາຍໃນປະເທດຢ່າງທົ່ວເຖິງ.

– ສົ່ງເສີມການຜະລິດສິນຄ້າ ແລະ ການບໍລິການໃຫ້ມີຄວາມຫຼາກຫຼາຍ ເພື່ອຫຼຸດຜ່ອນການເອື່ອຍອີງໃສ່ຊັບພະຍາກອນທໍາມະຊາດ:
  - ສົ່ງເສີມໃຫ້ມີການລົງທຶນໃສ່ການຜະລິດເປັນສິນຄ້າ ທີ່ບໍ່ຕິດພັນກັບການນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງແຂງແຮງ ເປັນຕົ້ນ ໃນອຸດສາຫະກໍາປຸງແຕ່ງກະສິກໍາ, ອຸດສາຫະກໍາປຸງແຕ່ງອາຫານ-ເຄື່ອງໃຊ້ສອຍຄົວເຮືອນ, ອຸດສະຫະກໍາຕໍ່າແຜນດ້ວຍມື ແລະ ອື່ນໆ ເພື່ອເປັນພື້ນຖານຂອງການເຕີບໂຕດ້ານເສດຖະກິດທີ່ເຂັ້ມແຂງ; ໄປຄຽງຄູ່ກັບການສົ່ງເສີມໃຫ້ບັນດາບໍລິສັດທີ່ເຮັດກິດຈະການຂຸດຄົ້ນບໍ່ແຮ່, ນໍາໃຊ້ຊັບພະຍາກອນປ່າໄມ້ (ໄມ້),ປັບປຸງການຜະລິດໃຫ້ມີການປຸງແຕ່ງວັດຖຸດິບແຮ່ທາດກ່ອນການສົ່ງອອກ ເພື່ອສ້າງມູນຄ່າເພີ່ມຕໍ່ຊັບພະຍາກອນ ທໍາມະຊາດ, ພ້ອມດຽວກັນນັ້ນກໍ່ປັບປຸງເຂດການຂຸດຄົ້ນໃຫ້ເຂົ້າສູ່ສະພາບປົກກະຕິ ໂດຍຫຼີກລ້ຽງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ.

- ພັດທະນາການບໍລິການດ້ານການທ່ອງທ່ຽວທີ່ສະອາດ, ສວຍງາມ ແລະເປັນມິດກັບສິ່ງແວດລ້ອມ, ໄປຄຽງຄູ່ກັບການປັບປຸງການບໍລິການດ້ານໂຮງແຮມ, ຮ້ານອາຫານ, ສະຖານທີ່ທ່ອງທ່ຽວ ແລະ ການບໍລິການນໍາທ່ຽວ ໃຫ້ມີຄຸນນະພາບ ແລະ ມີຄວາມຫຼາກຫຼາຍ ຕິດພັນກັບການຜະລິດດ້ານຫັດຖະກໍາ ແລະ ສິນລະປະຈິດຕະກໍາ ເພື່ອຕອບສະໜອງຄວາມຕ້ອງການໃຫ້ແກ່ນັກທ່ອງທ່ຽວ ແລະ ທັງເປັນການສ້າງລາຍໄດ້ໃຫ້ປະຊາຊົນ ແລະ ປະເທດຊາດ.

## 2.5. ມາດຕະການດ້ານການບໍລິການ ແລະ ການບໍລິການທາງຜ່ານ (ໂລຈິດສະຕິກ)

– ພັດທະນາຂະແໜງບໍລິການຕິດພັນສະໜິດແໜ້ນກັບການຜະລິດໃຫ້ສາມາດສ້າງລາຍຮັບສູງຕໍ່ປະເທດ, ສ້າງວຽກເຮັດງານທໍາໃຫ້ປະຊາຊົນ ແລະ ກາຍເປັນຈຸດບໍລິການຂົນສົ່ງສິນຄ້າຜ່ານແດນໃນອະນຸພາກພື້ນ, ພ້ອມທັງສະໜອງສິນຄ້າ ແລະ ການບໍລິການ ທີ່ຫລາກຫລາຍຕາມຄວາມຕ້ອງການຂອງຕະຫລາດທັງຢູ່ພາຍໃນ ແລະ ຕ່າງປະເທດ.

– ການບໍລິການທາງຜ່ານ (Logistic):

  - ພັດທະນາລະບົບການຂົນສົ່ງສິນຄ້າໃຫ້ມີຄຸນນະພາບ, ມີຄວາມສະດວກ ແລະ ວ່ອງໄວ ເພື່ອກາຍເປັນສູນກາງໃນກິດຈະການບໍລິການຜ່ານຂອງອະນຸພາກພື້ນ; ປັບປຸງ ແລະ ກໍ່ສ້າງເສັ້ນທາງໃຫ້ໄດ້ມາດຕະຖານ ເພື່ອຮັບປະກັນໃນການບໍລິການຂົນສົ່ງສິນຄ້າ ແລະ ມີການເຊື່ອມຈອດກັບປະເທດໃກ້ຄຽງ
  - ສ້າງສິ່ງອໍານວຍຄວາມສະດວກຕາມເສັ້ນທາງ ເຊັ່ນ: ຈຸດພັກລົດ, ສາງສິນຄ້າ, ສະຖານີລົດ ແລະ ສ້າງສູນເຕົ້າໂຮມ ແລະ ແຈກຢາຍສິນຄ້າ (Logistics Park) 4 ແຫ່ງ ຄື: ນາເຕີຍ, ສະຫວັນນະເຂດ, ນະຄອນຫຼວງວຽງຈັນ ແລະ ຈໍາປາສັກ
  - ປັບປຸງດ້ານເຂົ້າ-ອອກ ຕາມເສັ້ນທາງບໍລິການຜ່ານຊາຍແດນ ໃຫ້ໄດ້ມາດຕະຖານສາກົນທີ່ສາມາດຮອງຮັບການເຮັດບໍລິການຜ່ານໃຫ້ມີຄວາມສະດວກ ແລະ ວ່ອງໄວ.

## 2.6. ມາດຕະການໃນການຄົ້ນຄວ້າ ແລະ ນໍາໃຊ້ຜົນການຄົ້ນຄວ້າວິທະຍາສາດ-ເຕັກໂນໂລຊີ

– ຄົ້ນຄວ້າ ແລະ ດັດປັບນໍາໃຊ້ເຕັກໂນໂລຊີຂອງສາກົນ ໃຫ້ແທດເໝາະກັບສະພາບເງື່ອນໄຂຂອງປະເທດເຮົາເພື່ອຍົກປະສິດທິພາບຂອງການຜະລິດໃຫ້ສູງຂຶ້ນ ແລະ ເສີມສ້າງຄວາມອາດສາມາດແຂ່ງຂັນພາຍໃນ.

– ຮ່ວມມືກັບສາກົນໃນການຄົ້ນຄວ້າ ແລະ ພັດທະນາ ການນໍາໃຊ້ວິທະຍາສາດຢ່າງທົ່ວເຖິງ ແລະ ກວ້າງຂວາງ ໂດຍສະເພາະແມ່ນບັນດາຂົງເຂດຈຸດສຸມໃນການພັດທະນາ.

– ສົ່ງເສີມການລົງທຶນຂອງພາກທຸລະກິດໃສ່ການພັດທະນາເຕັກໂນໂລຊີແລະນະວັດຕະກໍາໃໝ່ທີ່ທັນສະໄໝແລະສອດຄ່ອງກັບສະພາບຕົວຈິງ ເພື່ອການພັດທະນາແບບຍືນຍົງ.

– ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງສື່ມວນຊົນ, ປັບປຸງວຽກງານ IT ເພື່ອເປັນສູນກາງໃນການບໍລິການ ແລະ ຄຸ້ມຄອງຜະລິດຕະພັນສື່ມວນຊົນ.

– ສົ່ງເສີມການດຶງດູດການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດໃນລະບົບໂທລະຄົມມະນາຄົມ.

## 2.7. ມາດຕະການດ້ານຊຸກຍູ້ສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs)

– ຊຸກຍູ້ສົ່ງເສີມຕ່ອງໂສ້ການຜະລິດລະຫວ່າງວິສາຫະກິດຂະໜາດໃຫຍ່ ກັບ ວິສາຫະກິດຂະໜາດນ້ອຍ ແລະ ກາງເພື່ອເພີ່ມປະລິມານ ແລະ ຍົກສູງສະມັດຕະພາບຂອງຜົນຜະລິດ ພ້ອມທັງສ້າງວຽກເຮັດງານທໍາໃຫ້ຫຼາຍຂຶ້ນ, ສ້າງໃຫ້ມີສາຍພົວພັນເສດຖະກິດລະຫວ່າງຂະແໜງການ ແລະ ລະຫວ່າງທ້ອງຖິ່ນດ້ວຍກັນ ເປັນຕົ້ນ: ວິສາຫະກິດກ່ຽວກັບການທ່ອງ ທ່ຽວຄົບວົງຈອນ, ວິສາຫະກິດອຸດສາຫະກໍາປຸງແຕ່ງກະສິກໍາ ແລະ ວິສາຫາກິດອື່ນໆ.

– ປັບປຸງລະບົບອາກອນ ສໍາລັບວິສາຫະກິດຂະໜາດນ້ອຍ ແລະ ກາງ, ສ້າງຄູ່ມືແນະນໍາລະອຽດສໍາລັບລະບົບອາກອນແບບມອບເໝົາ, ສ້າງລະບົບການບັນຊີທີ່ງ່າຍດາຍ ເພື່ອສ້າງເງື່ອນໄຂໃຫ້ບັນດາວິສາຫະກິດຂະໜາດນ້ອຍ ແລະ ກາງຫັນມາຖືບັນຊີ ແລະ ເສຍອາກອນຢ່າງຖືກຕ້ອງ ແລະ ຄົບຖ້ວນ.

- ປັບປຸງ ແລະ ນຳໃຊ້ກອງທຶນສົ່ງເສີມວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ມີປະສິດທິຜົນສູງ.
- ສະໜອງຂໍ້ມູນ ແລະ ໃຫ້ຄຳປຶກສາໃຫ້ແກ່ຜູ້ປະກອບການກ່ຽວກັບການເຂົ້າເຖິງແຫຼ່ງທຶນ, ຕະຫຼາດ, ກຳນົດມາດຕະຖານຜະລິດຕະພັນ ແລະ ການບໍລິການສິນຄ້າ, ບັນດານະວັດຕະກຳໃໝ່ ແລະ ການນຳໃຊ້ເຕັກໂນໂລຊີທີ່ເໝາະສົມ ແລະ ທັນສະໄໝ ເພື່ອຍົກສູງຜະລິດຕະພາບຂອງການຜະລິດ.
- ປັບປຸງ ແລະ ພັດທະນາພື້ນຖານໂຄງລ່າງທີ່ຄົບຊຸດ ເພື່ອສ້າງແຮງຈູງໃຈໃຫ້ແກ່ຜູ້ລົງທຶນມີຄວາມເຊື່ອໝັ້ນໃນການດຳເນີນທຸລະກິດ.

## 2.8. ການສ້າງຂີດຄວາມສາມາດ ແລະ ການສ້າງສີມືແຮງງານ

- ການສ້າງຂີດຄວາມສາມາດເພື່ອການພັດທະນາ:
    - ພັດທະນາສີມືແຮງງານຕາມອາຊີບທີ່ຕະຫລາດຕ້ອງການເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການພັດທະນາປະເທດໃນແຕ່ລະໄລຍະ.
    - ສ້າງໂອກາດດ້ານວຽກເຮັດງານທຳໃຫ້ແກ່ໄວໜຸ່ມໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບໂດຍອີງໃສ່ທ່າແຮງທາງດ້ານໂຄງສ້າງປະຊາກອນ (ປະຊາກອນໜຸ່ມ ກວມປະມານ 60% ຂອງປະຊາກອນທັງໝົດ).
- ການສ້າງຂີດຄວາມສາມາດເພື່ອຊຸກຍູ້ທາງດ້ານການຜະລິດເປັນສິນຄ້າ:
    - ສ້າງຂີດຄວາມສາມາດໃຫ້ຜູ້ປະກອບການສາມາດແຂ່ງຂັນຢູ່ພາຍໃນ ແລະ ຕ່າງປະເທດ ໂດຍຊຸກຍູ້ໃຫ້ນຳໃຊ້ຜົນຂອງການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີເຂົ້າໃນການປັບປຸງການຜະລິດ ແລະ ບໍລິການ ເພື່ອຍົກສະມັດຕະພາບ ແລະ ຄຸນນະພາບຂອງສິນຄ້າ. ພ້ອມກັນນັ້ນ, ສົ່ງເສີມການພົວພັນສະໜິດແໜ້ນຂອງຂະບວນການຜະລິດລະຫວ່າງຜູ້ສະໜອງວັດຖຸດິບກັບຜູ້ຜະລິດເປັນສິນຄ້າໃຫ້ມີຄວາມສອດຄ່ອງກັນ.
    - ສ້າງຍຸດທະສາດເພື່ອຊຸກຍູ້ສົ່ງເສີມສະເພາະແຕ່ລະຜະລິດຕະພັນ, ຄຽງຄູ່ກັນນັ້ນ ກໍ່ຕ້ອງສ້າງແຜນດຳເນີນງານທີ່ຊັດເຈນເພື່ອການຮອງຮັບຍຸດທະສາດດັ່ງກ່າວ.
    - ປັບປຸງເຕັກໂນໂລຊີຫລັງເກັບກ່ຽວດ້ວຍການສຶກສາ ແລະ ຜັນຂະຫຍາຍເຕັກໂນໂລຊີໃໝ່ໃຫ້ແກ່ຊາວກະສິກອນ.
    - ສົ່ງເສີມການສ້າງຕັ້ງສະມາຄົມທຸລະກິດປຸງແຕ່ງຜະລິດຕະພັນກະສິກຳລະດັບທ້ອງຖິ່ນ ຕົວຢ່າງ: ກຸ່ມການປູກ, ກຸ່ມຜູ້ປຸງແຕ່ງ, ສົ່ງອອກພືດຜັກ ແລະ ອື່ນໆ.
    - ສົ່ງເສີມການເຂົ້າເຖິງສິນເຊື່ອຂອງວິສາຫະກິດຂະໜາດກາງ ແລະ ນ້ອຍ (SMEs) ດ້ວຍການສ້າງໂຄງການສະໜັບສະໜູນແຫລ່ງທຶນໄລຍະຍາວ ແກ່ ທະນາຄານທຸລະກິດທີ່ສົນໃຈປ່ອຍກູ້ໃຫ້ຕະຫລາດ SMEs ແລະ ສ້າງກອງທຶນແບ່ງປັນຄວາມສ່ຽງເພື່ອຊຸກຍູ້ໃຫ້ທະນາຄານທຸລະກິດໃຫ້ການບໍລິການແກ່ SMEs ຫຼາຍຂຶ້ນ.

# 3. ກົນໄກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020)

- ລັດຖະບານອອກດຳລັດຈັດຕັ້ງປະຕິບັດ, ກະຊວງແຜນການ ແລະ ການລົງທຶນ ອອກບົດແນະນຳໃນການຈັດຕັ້ງປະຕິບັດດ້ານວິຊາການ ແລະ ທັງເປັນໃຈກາງປະສານງານກັບບັນດາຂະແໜງການອ້ອມຂ້າງຂັ້ນສູນກາງ ແລະ ທ້ອງຖິ່ນໃນການຈັດຕັ້ງຜັນຂະຫຍາຍແຜນການນີ້ໃຫ້ເປັນອັນລະອຽດ, ມີປະສິດທິພາບແລະມີປະສິດທິຜົນສູງສຸດ.
- ເພື່ອຮັບປະກັນການບັນລຸຈຸດໝາຍລວມ, ທິດທາງ ແລະ ເປົ້າໝາຍຂອງການພັດທະນາເສດຖະກິດ-ສັງຄົມທີ່ກຳນົດໄວ້, ບັນດາລັດຖະມົນຕີ, ເຈົ້າແຂວງ-ເຈົ້າຄອງນະຄອນຫຼວງ ຕ້ອງໄດ້ຍົກສູງຄວາມຮັບຜິດຊອບໃຫ້ຫຼາຍຂຶ້ນໂດຍການນຳໃຊ້ກົນໄກການຄຸ້ມຄອງຕາມທິດ 3 ສ້າງ ແຕ່ຂັ້ນສູນກາງ ຫາ ຂັ້ນທ້ອງຖິ່ນຮາກຖານ ເພື່ອໃຫ້ມີຄວາມສະດວກ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີຜົນສຳເລັດ ແລະ ປະສິດທິຜົນສູງ.
- ບັນດາກະຊວງ, ອົງການຂັ້ນສູນກາງ ຕ້ອງໄດ້ເຮັດບົດບາດຄຸ້ມຄອງມະຫາພາກ ໂດຍຫັນບັນດາຄາດໝາຍ, ແຜນຈຸດສຸມອອກເປັນອັນລະອຽດຕາມພາລະບົດບາດຂອງຕົນ ໂດຍໃຫ້ສອດຄ່ອງ ລະຫວ່າງແຜນງານ, ແຜນເງິນ ແລະ ແຜນຄົນ. ສຳລັບອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

- ໂຄສະນາເຜີຍແຜ່ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII (2016-2020), ນະໂຍບາຍຂອງພັກ-ລັດຖະບານ ແລະ ນິຕິກຳຕ່າງໆ ໃຫ້ພະນັກງານ, ທະຫານ-ຕຳຫຼວດ, ນັກຮຽນຮູ້-ປັນຍາຊົນ, ປະຊາຊົນທຸກຊົນເຜົ່າ, ທຸກເພດໄວ, ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດ ເຊື່ອມຊຶມ ແລະ ກຳແໜ້ນເນື້ອໃນຈິດໃຈຂອງເອກະສານດັ່ງກ່າວ ເພື່ອໃຫ້ສາມາດຈັດຕັ້ງຜັນຂະຫຍາຍໃຫ້ມີປະສິດທິຜົນ ແລະ ໃຫ້ປະກົດຜົນເປັນຈິງ.
- ເພີ່ມທະວີການປະສານງານຢ່າງກົມກຽວລະຫວ່າງພາກລັດດ້ວຍກັນ (ສາຍຕັ້ງ ແລະ ສາຍຂວາງ), ພາກລັດກັບເອກະຊົນກ່ຽວກັບການຈັດຕັ້ງປະຕິບັດ ແລະ ການຕິດຕາມແຜນພັດທະນາເສດຖະກິດ-ສັງຄົມໂດຍມີການປຶກສາຫາລືຢ່າງເປັນປະຈຳ ກ່ຽວກັບບັນຫາການພັດທະນາຕ່າງໆຢ່າງເປັນເຈົ້າການ.
- ເສີມຂະຫຍາຍພາລະບົດບາດຂອງທຸກອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ, ແນວໂຮມ, ບັນດາອົງການຈັດຕັ້ງມະຫາຊົນ, ປະຊາຊົນ, ບັນດາອົງການຈັດຕັ້ງສັງຄົມ, ພາກທຸລະກິດທັງພາຍໃນ ແລະ ຕ່າງປະເທດເຂົ້າຮ່ວມໃນການຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີຜົນສຳເລັດ.
- ສ້າງຂອບການປະສານງານລະຫວ່າງພາກລັດ ແລະ ເອກະຊົນ, ອົງການຈັດຕັ້ງສາກົນ ແລະ ຜູ້ໃຫ້ທຶນ ໃນການຮ່ວມກັນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ໄດ້ຕາມກຳນົດໝາຍ.

# 4. ການຕິດຕາມ ແລະ ປະເມີນຜົນແຜນການ 5 ປີ ຄັ້ງທີ VIII (2016-2020)

## 4.1. ອົງປະກອບສຳຄັນໃນລະບົບການຕິດຕາມ ແລະ ປະເມີນຜົນແຜນການ 5 ປີ ຄັ້ງທີ VIII

- ເພື່ອເຮັດໃຫ້ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII, ລວມທັງການຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (SDGs); ການສ້າງຂອບການຕິດຕາມ ແລະ
- ປະເມີນຜົນຕ້ອງຕິດພັນກັບບັນດາຕົວຊີ້ວັດໃນແຜນພັດທະນາ ເພື່ອຕິດຕາມການຈັດຕັ້ງປະຕິບັດໃນແຕ່ລະໄລຍະ. ກະຊວງແຜນການ ແລະ ການລົງທຶນ ໄດ້ເປັນເຈົ້າການປະສານງານກັບທຸກພາກສ່ວນໃນການສ້າງຂອບຕິດຕາມ ແລະ ປະເມີນຜົນ ສຳລັບແຜນ 5 ປີ ຄັ້ງທີ VIII (2016-2020) ເພື່ອເປັນເຄື່ອງມືໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນດັ່ງກ່າວ.
- ຂອບການຕິດຕາມ ແລະ ປະເມີນຜົນແຜນການ 5 ປີ ຄັ້ງທີ VIII ແມ່ນຖືກສ້າງຂຶ້ນບົນພື້ນຖານ: (i) ທິດທາງຂອງຍຸດທະສາດການພັດທະນາແຫ່ງຊາດ ຮອດປີ 2025 ແລະ ວິໄສທັດ ປີ 2030; (ii) ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ; (iii) ຄຳເຫັນຈາກບັນດາຄູ່ຮ່ວມພັດທະນາ ແລະ (iv) ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.
- ກະຊວງແຜນການ ແລະ ການລົງທຶນ ຮ່ວມກັບ ທຸກຂະແໜງການ ແລະ ທ້ອງຖິ່ນ ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະຕາມຂອບແຜນການ 5 ປີ ແລະ ແຜນໄລຍະຍາວ ໂດຍ ກະຊວງແຜນການ ແລະ ການລົງທຶນເປັນໃຈກາງປະສານງານ ແລະ ລາຍງານສະພາບການຈັດຕັ້ງປະຕິບັດແຜນພັດທະນາໃນແຕ່ລະໄລຍະ.
- ຂໍ້ມູນ, ຄຸນນະພາບຂອງຕົວຊີ້ວັດ ແລະ ຄາດໝາຍທີ່ກ່ຽວຂ້ອງໃນຂອບການຕິດຕາມ ແລະ ປະເມີນຜົນ ຈະຕ້ອງໄດ້ມີການປັບປຸງໃຫ້ສອດຄ່ອງກັບສະພາບການພັດທະນາຕົວຈິງໃນແຕ່ລະໄລຍະຢ່າງສົມເຫດສົມຜົນ.
- ໃນການບັນລຸໜ້າວຽກທີ່ພົວພັນກັບຫຼາຍຂະແໜງການນັ້ນ ແມ່ນຮຽກຮ້ອງໃຫ້ມີການປະສານງານທີ່ເຂັ້ມແຂງ, ເປັນລະບົບລະຫວ່າງຂະແໜງການກັບຂະແໜງການ, ກະຊວງກັບທ້ອງຖິ່ນ ແລະ ກັບທຸກພາກສ່ວນໃນສັງຄົມຢ່າງເຂັ້ມແຂງ

## 4.2. ການຕິດຕາມກວດກາ ແລະ ປະເມີນຜົນ

- **ການແບ່ງໜ້າທີ່ຮັບຜິດຊອບ**
  - ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງປະສານກັບທຸກພາກສ່ວນທີ່ກ່ຽວຂ້ອງ ຮັບຜິດຊອບໃນການຄຸ້ມຄອງລະບົບຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VIII ດ້ວຍການສຸມໃສ່ການຕິດຕາມຄວາມ

ຄືບໜ້າຂອງແຜນການ 5 ປີ ຄັ້ງທີ VIII ໂດຍສະເພາະແມ່ນໝາກຜົນລະດັບຊາດ; ຂະແໜງການ ແລະ ທ້ອງຖິ່ນ ສຸມໃສ່ຕິດຕາມຄວາມຄືບໜ້າຂອງການປະຕິບັດໜ້າວຽກຈຸດສຸມ ແລະ ບັນຫາທີ່ພົວພັນກັບຫຼາຍຂະແໜງການທີ່ກ່ຽວຂ້ອງກັບຂະແໜງການຕົນຢ່າງເປັນເຈົ້າການ.

– ໃນການຊີ້ນຳລວມການຕິດຕາມ ແລະ ປະເມີນຜົນ, ກະຊວງແຜນການ ແລະ ການລົງທຶນ ເຮັດໜ້າທີ່ໃນການ (i) ສັງລວມບັນດາຕົວຊີ້ວັດ, ຂໍ້ມູນປີຖານ ແລະ ຄາດໝາຍທີ່ກ່ຽວຂ້ອງກັບໝາກຜົນລະດັບຊາດດັ່ງທີ່ກຳນົດໄວ້ຢູ່ໃນແຜນ; (ii) ປະສານງານກັບຂະແໜງການ ແລະ ທ້ອງຖິ່ນ ເພື່ອສັງລວມຂໍ້ມູນກ່ຽວກັບໜ້າວຽກຈຸດສຸມຂອງແຕ່ລະພາກສ່ວນເພື່ອຊ່ວຍໃຫ້ບັນລຸໝາກຜົນໃນລະດັບຊາດ; (iii) ໃຫ້ຄຳແນະນຳແກ່ຂະແໜງການໃນການກຳນົດຕົວຊີ້ວັດ, ຂໍ້ມູນປີຖານ ແລະ ຄາດໝາຍຕ່າງໆທີ່ສຳຄັນຕໍ່ການບັນລຸແຜນ; (iv) ຕິດຕາມ-ປະເມີນໝາກຜົນໃນລະດັບຊາດ ແລະ ລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດ; (v) ນຳໃຊ້ຜົນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນເຂົ້າໃນ ການສ້າງແຜນໃນແຕ່ລະໄລຍະ.

– ໃນການຄຸ້ມຄອງຮັກສາລະບົບຕິດຕາມ ແລະ ປະເມີນຜົນ ຈະຕ້ອງມີການປັບຕົວຊີ້ວັດ, ຂໍ້ມູນປີຖານ ແລະ ຄາດໝາຍຂອງແຜນ 5 ປີ ຢ່າງເປັນປະຈຳໃນແຕ່ລະໄລຍະ ຕາມສະພາບຕົວຈິງຂອງການພັດທະນາ (ຂໍ້ມູນທາງດ້ານການສຳຫຼວດປະຊາກອນ ຫຼື ຂໍ້ມູນຈາກການສຳຫຼວດອື່ນໆໂດຍສູນສະຖິຕິ ທີ່ອາດຈະດຳເນີນໃນລະຫວ່າງທີ່ກຳລັງຈັດຕັ້ງປະຕິບັດແຜນຢູ່) ຫຼືສາມາດປັບຄາດໝາຍໂດຍອີງໃສ່ຜົນການປະເມີນຄວາມຄືບໜ້າຫຼ້າສຸດ (ຊຶ່ງສາມາດປັບໄດ້ໃນໄລຍະທີ່ມີການປະເມີນຜົນສຳເລັດຈາກການຈັດຕັ້ງປະຕິບັດຫຼືໃນໄລຍະທີ່ກະກຽມສ້າງແຜນປະຈຳປີ).

– ລະບົບການຕິດຕາມ ແລະ ປະເມີນຜົນດັ່ງກ່າວນີ້ຈະຕ້ອງແທດເໝາະກັບຕົວຈິງ ແລະ ມີຂໍ້ມູນປີຖານ ແລະ ຄາດໝາຍທີ່ຖືກຕ້ອງຕາມຕົວຈິງ ແລະ ມີແຫຼ່ງຂໍ້ມູນທີ່ສາມາດກວດກາໄດ້.

- **ປະເພດຂອງການຕິດຕາມ ແລະ ປະເມີນຜົນ**

ການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VIII ແມ່ນການຕິດຕາມກວດກາໝາກຜົນໄດ້ຮັບສະເພາະແຕ່ໃນລະດັບຊາດເທົ່ານັ້ນ ຊຶ່ງຈະສຸມໃສ່ຜົນສຳເລັດຂອງການຈັດຕັ້ງປະຕິບັດຄາດໝາຍຂອງແຜນເພື່ອບັນລຸໝາກຜົນຕ່າງໆທີ່ກຳນົດໃນລະດັບຊາດ. ສ່ວນການຕິດຕາມຜົນສຳເລັດຕາມແຕ່ລະໜ້າວຽກຈຸດສຸມ (ຕິດຕາມຜົນໄດ້ຮັບຂອງໜ້າວຽກຈຸດສຸມ) ກໍ່ຄືການຕິດຕາມການຈັດຕັ້ງປະຕິບັດ ແມ່ນຂະແໜງການເປັນເຈົ້າການ. ຂະແໜງການແລະທ້ອງຖິ່ນຈະຕ້ອງຕິດຕາມການຈັດຕັ້ງປະຕິບັດໃນແຕ່ລະໜ້າວຽກຈຸດສຸມຢ່າງເປັນລະບົບປົກກະຕິ ແລະ ລາຍງານຜົນເຖິງກະຊວງແຜນການ ແລະ ການລົງທຶນຢ່າງເປັນລະບົບ ເພື່ອສັງລວມ ແລະ ລາຍງານລັດຖະບານໃຫ້ທັນຕາມກຳນົດເວລາ.

## 4.3. ການປະເມີນຜົນ

ການປະເມີນຜົນການຈັດຕັ້ງປະຕິບັດແມ່ນດຳເນີນໃນເວລາທີ່ສະພາບການພັດທະນາມີການປ່ຽນແປງຊຶ່ງຮຽກຮ້ອງໃຫ້ມີການປະເມີນລົງເລິກຕື່ມ; ເວລາທີ່ຕ້ອງການຈັດສັນທຶນ ຫຼື ງົບປະມານເຂົ້າໃນແຜນການ, ແຜນງານ ຫຼື ກິດຈະກຳຕ່າງໆເພື່ອບັນລຸໄດ້ຕາມແຜນການທີ່ກຳນົດໄວ້; ເວລາທີ່ກິດຈະກຳໃດໜຶ່ງບໍ່ມີຄວາມຄືບໜ້າ ແລະ ບໍ່ມີເຫດຜົນຈະແຈ້ງໃນການດຳເນີນກິດຈະການ ແລະ ເວລາທີ່ຜົນໄດ້ຮັບຈາກແຜນງານ ຫຼື ກິດຈະກຳ ບໍ່ສອດຄ່ອງກັບໝາກຜົນທີ່ຕ້ອງການ.

## 4.4. ການລາຍງານຜົນການຕິດຕາມ ແລະ ປະເມີນຜົນ

- **ການວິເຄາະ ແລະ ລາຍງານຂໍ້ມູນ**

  – ຂໍ້ມູນທີ່ທັນສະພາບການ ແລະ ເຊື່ອຖືໄດ້ເປັນສິ່ງທີ່ຈຳເປັນທີ່ສຸດສຳລັບການສ້າງແຜນ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດແຜນງານໃຫ້ມີປະສິດທິພາບ. ການນຳໃຊ້ ແລະ ການຄາດຄະເນຈຳນວນປະຊາກອນທີ່ເປັນທາງການແມ່ນມີຄວາມຈຳເປັນ ແລະ ຮຽກຮ້ອງໃຫ້ພາກສ່ວນທີ່ກ່ຽວຂ້ອງຈະຕ້ອງນຳໃຊ້ຂໍ້ມູນດັ່ງກ່າວນີ້ ເພື່ອຄວາມເປັນເອກະພາບກັນ. ການຄາດຄະເນຈຳນວນປະຊາກອນທີ່ເປັນທາງການສຳລັບຂັ້ນແຂວງກໍ່ຕ້ອງໄດ້ດຳເນີນເຊັ່ນກັນ. ສະນັ້ນ, ການປັບປຸງລະບົບການຂຶ້ນທະບຽນຂໍ້ມູນ, ການຕິດຕາມສະພາບເຫດການສຳຄັນຕ່າງໆທີ່ເກີດຂຶ້ນໃຫ້ດີຂຶ້ນກວ່າເກົ່າ ເພື່ອປະກອບເຂົ້າເປັນເຄື່ອງມືສຳລັບການສ້າງແຜນທີ່ມີປະສິດທິພາບ.
  – ໃນການລາຍງານຕ້ອງສ່ອງແສງໃຫ້ເຫັນຂໍ້ມູນກ່ຽວກັບຄວາມຄືບໜ້າຂອງແຜນມາຮອດປະຈຸບັນ ແລະ ກຳນົດຄວາມສຳຄັນຂອງຄວາມຄືບໜ້າດັ່ງກ່າວທີ່ເປັນພື້ນຖານໃຫ້ແກ່ການສ້າງແຜນໃນໄລຍະຕໍ່ໄປ. ການວິເຄາະຂໍ້ມູນທີ່ເກັບກຳມາໄດ້ຈາກການລົງໄປຕິດຕາມກວດກາ ແລະ ການວິເຄາະໝາກຜົນລະດັບຊາດແມ່ນ ເພື່ອ (i) ວິເຄາະສາເຫດຂອງບັນຫາທີ່ກີດຂວາງການຈັດຕັ້ງປະຕິບັດແຜນຢ່າງຈະແຈ້ງ; (ii) ປັບປຸງວິທີການຈັດຕັ້ງປະຕິບັດແຜນໃຫ້ດີຂຶ້ນກວ່າເກົ່າ; (iii) ສະໜອງຂໍ້ມູນທີ່ຊີ້ບອກເຖິງທ່າອ່ຽງ ແລະ ທິດທາງຂອງຜົນໄດ້ຮັບໃນໄລຍະຜ່ານມາຈົນຮອດປະຈຸບັນ;

- **ການນຳສະເໜີຂໍ້ມູນ**

ການນຳສະເໜີ ຜົນໄດ້ຮັບ ແລະ ຂໍ້ມູນຈາກການລົງໄປຕິດຕາມກວດກາຕ້ອງມີຄວາມຈະແຈ້ງ, ເຊື່ອຖືໄດ້ ຊຶ່ງ ເປັນສິ່ງສຳຄັນຫຼາຍໃນການຊ່ວຍເຮັດໃຫ້ຜູ້ທີ່ຕ້ອງການຂໍ້ມູນສາມາດຖອດຖອນບົດຮຽນຈາກການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະໄດ້ຢ່າງມີປະສິດທິພາບ. ມີພຽງຜົນໄດ້ຮັບ ແລະ ຂໍ້ມູນທີ່ສຳຄັນເທົ່ານັ້ນ ທີ່ຈະສັງລວມເຂົ້າໃນເອກະສານຊ້ອນທ້າຍເພື່ອໃຫ້ຮູ້ຂໍ້ມູນທາງດ້ານວິຊາການຢ່າງລະອຽດ. ໃນການນຳສະ ເໜີທີ່ເປັນຮູບພາບ (ແຜນວາດ, ຮູບສະແດງ, ແຜນທີ່) ຈະຖືກນຳໃຊ້ເພື່ອສະແດງ ແລະ ຊີ້ໃຫ້ເຫັນບັນຫາທີ່ສຳຄັນ ແລະ ຕ້ອງຫຼີກລ້ຽງການສະແດງ ຂໍ້ມູນຍ່ອຍເກີນໄປ.

## 4.5. ການນຳໃຊ້ຜົນການຕິດຕາມ ແລະ ປະເມີນຜົນ

– ການຕິດຕາມ ແລະ ປະເມີນຜົນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແມ່ນເປັນເຄື່ອງມືທີ່ສຳຄັນສຳລັບການປັບປຸງການບໍລິການຂອງລັດ, ເນື່ອງຈາກວ່າສາມາດຊ່ວຍ (i) ສະໜອງຂໍ້ມູນທີ່ສຳຄັນໃຫ້ແກ່ການນຳ, ສະພາແຫ່ງຊາດ ແລະ ພາກສ່ວນຕ່າງໆໃນສັງຄົມໄດ້ຮັບຮູ້ຂໍ້ມູນທີ່ຊັດເຈນ ແລະ ທັນສະກັບສະພາບການ; (ii) ເປັນຂໍ້ມູນເພື່ອຊ່ວຍປະກອບເຂົ້າໃນການສ້າງ ແລະ ການຈັດສັນງົບປະມານ; (iii) ເປັນຂໍ້ມູນປະກອບເຂົ້າໃນການຈັດສັນ ແຫຼ່ງທຶນການບໍລິຫານ ແລະ ພັດທະນາ; (iv) ຊ່ວຍໃນການສຶກສາຂໍ້ຫຍຸ້ງຍາກໃນການຈັດຕັ້ງປະຕິບັດແຜນການ ແລະ ກຳນົດວິທີແກ້ໄຂ; (v) ຊ່ວຍກະຕຸກຊຸກຍູ້ໃຫ້ມີການສືບຕໍ່ສ້າງ ແລະ ປັບປຸງແຜນການ ແລະ ແຜນງານ; (vi) ຊ່ວຍໃນການຕິດຕາມກວດກາວຽກງານການຊ່ວຍເຫຼືອຈາກຄູ່ຮ່ວມພັດທະນາທຽບກັບຄາດໝາຍທີ່ກຳນົດໄວ້; (vii) ສະໜອງຂໍ້ມູນລະອຽດເລິກເຊິ່ງຈາກການປະເມີນສູ່ການວາງແຜນ; (viii) ຊ່ວຍໃຫ້ການສະໜອງການບໍລິການມີປະສິດທິຜົນກວ່າເກົ່າ; (ix) ຊ່ວຍປະກອບສ່ວນເຂົ້າໃນຂະບວນການສ້າງແຜນຍຸດທະສາດ ແລະ ແຜນໄລຍະຍາວ (ດ້ວຍການສະໜອງຂໍ້ມູນປີຖານ ແລະ ຄວາມຄືບໜ້າຫຼ້າສຸດ) ແລະ (x) ປະກອບສ່ວນໃນການປັບປຸງການສື່ສານກັບທຸກພາກສ່ວນໃນສັງຄົມໃຫ້ດີຂຶ້ນກວ່າເກົ່າ.

– ການເຜີຍແຜ່ຜົນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແມ່ນມີຄວາມສຳຄັນຫຼາຍ. ການເຜີຍແຜ່ຂໍ້ມູນກ່ຽວກັບຜົນສຳເລັດ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດແຜນແມ່ນໃນບົດລາຍງານໃນແຕ່ລະປີຂອງການຈັດຕັ້ງປະຕິບັດແຜນ ເພື່ອຮັບປະກັນວ່າພາກສ່ວນຕ່າງໆໃນສັງຄົມໄດ້ຮັບຮູ້ຂໍ້ມູນຢ່າງທົ່ວເຖິງ.

– ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມໃຫ້ມີຜົນສຳເລັດຕາມຄາດໝາຍນັ້ນມັນຮຽກຮ້ອງໃຫ້ມີການປະສານງານ ແລະ ການຮ່ວມມືເຂົ້າໃນຂະບວນການຕິດຕາມ ແລະ ປະເມີນຜົນຕັ້ງແຕ່ຫົວທີ; ການຕິດຕາມກວດກາ ແລະ ປະເມີນຜົນທີ່ເປີດກວ້າງ ແລະ ໂປ່ງໃສແມ່ນມີຄວາມສຳຄັນເພື່ອສ້າງຄວາມເຊື່ອຖືໂດຍສະເພາະຂໍ້ມູນທາງດ້ານງົບປະມານ.

## 4.6. ລະບົບການຕິດຕາມ ແລະ ປະເມີນຜົນແບບຍືນຍົງ

- ຂະບວນການຕິດຕາມ ແລະ ປະເມີນຜົນ ຈະຕ້ອງໄດ້ປັບໃໝ່ທຸກໆ 5 ປີ ໂດຍມີການປັບຕົວຊີ້ວັດ, ຂໍ້ມູນປີຖານ ແລະ ຄາດໝາຍຂອງແຜນໃນລະດັບຊາດ ແລະ ລະດັບຂະແໜງການໃຫ້ສອດຄ່ອງໃນແຕ່ລະໄລຍະ ເນື່ອງຈາກວ່າໝາກຜົນທີ່ຕ້ອງການໃນການຈັດຕັ້ງປະຕິບັດແຜນຈະຕ້ອງປ່ຽນແປງຕາມສະພາບຕົວຈິງຂອງການພັດທະນາໃນແຕ່ລະໄລຍະ. ການປັບປຸງວຽກງານການຕິດຕາມ ແລະ ປະເມີນຜົນທີ່ປະຕິບັດເປັນປະຈຳນັ້ນ ຈະຊ່ວຍຮັບປະກັນໃຫ້ລະບົບແຜນພັດທະເສດຖະກິດ-ສັງຄົມມີຄວາມຍືນຍົງ.
- ລະບົບການຕິດຕາມ ແລະ ປະເມີນຜົນຈະມີຄວາມຍືນຍົງໄດ້ກໍ່ຕໍ່ເມື່ອມີຄວາມຕ້ອງການນຳໃຊ້ ແລະ ມີການລະ ດົມການມີສ່ວນຮ່ວມຈາກພາກສ່ວນຕ່າງໆນັບມື້ນັບຫຼາຍຂຶ້ນ. ດັ່ງນັ້ນ ລະບົບຕິດຕາມ ແລະ ປະເມີນຜົນ ຈະຕ້ອງມີຜົນໄດ້ຮັບທີ່ໜ້າເຊື່ອຖື ແລະ ສ້າງຄວາມເຊື່ອໝັ້ນໃຫ້ໄດ້.
- ເພື່ອເຮັດໃຫ້ລະບົບຕິດຕາມ ແລະ ປະເມີນຜົນມີຄວາມຍືນຍົງ, ການມອບໝາຍໜ້າທີ່ຮັບຜິດຊອບໃຫ້ພາກສ່ວນກ່ຽວຂ້ອງຈະຕ້ອງຈະແຈ້ງ ໃນການບໍລິຫານ ແລະ ຮັກສາລະບົບ. ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການໃນການບໍລິຫານລະບົບຕິດຕາມ ແລະ ປະເມີນຜົນແຜນໃນລະດັບຊາດ, ຊຶ່ງຂະແໜງການຈະເປັນຜູ້ສະໜອງຂໍ້ມູນຄວາມຄືບໜ້າໃນການປະຕິບັດໜ້າວຽກຈຸດສຸມຂອງຕົນ ຊຶ່ງເປັນປະໂຫຍດໃຫ້ແກ່ການຕິດຕາມ ແລະ ປະເມີນຜົນແຜນໃນລະດັບຊາດຕາມແຕ່ລະໄລຍະ. ສູນສະຖິຕິແຫ່ງຊາດຈະສະໜອງການຊ່ວຍເຫຼືອໃນການຕິດຕາມກວດກາໃນລະດັບຊາດ ແລະ ຂະແໜງການ (ແລະ ອີງການຈັດຕັ້ງໃນທຸກລະດັບ). ນອກນັ້ນ, ກໍມີຄວາມຈຳເປັນຕ້ອງໄດ້ສຶກສາວິເຄາະຄວາມຕ້ອງການຂອງການຝຶກອົບຮົມກ່ຽວກັບການຕິດຕາມ ແລະ ປະເມີນຜົນ, ແລ້ວສະໜອງການຝຶກອົບຮົມໃນວຽກງານດັ່ງກ່າວ ເພື່ອກະກຽມຄວາມພ້ອມໃນການຕິດຕາມ ແລະ ປະເມີນຜົນແຜນການ 5 ປີ ຄັ້ງທີ VIII (2016-2020) ໃຫ້ມີປະສິດທິຜົນສູງ.

ກະຊວງແຜນການ ແລະ ການລົງທຶນ

# ເອກະສານຊ້ອນທ້າຍ

# ເອກະສານຊ້ອນທ້າຍ 1: ຂອບຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020).

| SDG | ລ/ດ | ຜົນຂອງການວັດແທກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກໍາຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| ຈຸດໝາຍລວມ - ຮັບປະກັນສະຖຽນ ລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ; ສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໜັກແໜ້ນ ແລະ ທົ່ວເຖິງ, ພັດທະນາປະເທດໃຫ້ຫລຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາໃນປີ 2020 ໂດຍຊຸກຍູ້ການເຕີບໂຕທີ່ຕໍ່ເນື່ອງ, ສົມດຸນ ແລະ ຍືນຍົງ; ມີການຄຸ້ມຄອງ ແລະ ນໍາໃຊ້ຊັບພະຍາກອນທໍາມະຊາດຢ່າງມີປະສິດທິພາບ; ສ້າງໃຫ້ໄດ້ການຫັນປ່ຽນຮູບແບບການພັດທະນາຕາມທິດເສີມຂະຫຍາຍທ່າແຮງທີ່ບົ່ມຊ້ອນ ແລະ ຂໍ້ໄດ້ປຽບຂອງປະເທດ, ເຂົ້າຮ່ວມໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ ຢ່າງເປັນເຈົ້າການ. | | | | | | | | | | | | | |
| ໝາກຜົນ 1 - ເສດຖະກິດແຫ່ງຊາດມີການເຕີບໂຕຢ່າງຕໍ່ເນື່ອງ, ໝັ້ນທ່ຽງແລະສ້າງໄດ້ຄວາມສົມດຸນຂອງການເຕີບໂຕ ໂດຍຖືເອົາການພັດທະນາເສດຖະກິດເປັນໃຈກາງເພື່ອສຸມໃສ່ສ້າງພື້ນຖານເສດຖະກິດໃຫ້ເຂັ້ມແຂງ ແລະ ຫລຸດຜ່ອນຄວາມບອບບາງທາງດ້ານເສດຖະກິດ | | | | | | | | | | | | | |
| 1 | 1 | **ຕົວຊີ້ວັດໝາກຜົນ 1** | ອັດຕາການເຕີບໂຕລວມຍອດຜະລິດຕະພັນພາຍໃນ (GDP) | % | ລະດັບຊາດ /ແຂວງ | >7.5 | ປະຈໍາປີ | ບັນຊີແຫ່ງຊາດ | ສູນສະຖິຕິແຫ່ງຊາດ | 7.5 | 2014-2015 | ບົດສະຫລຸບແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາສົກປີ | |
| | 2 | | ລວມຍອດລາຍຮັບແຫ່ງຊາດ ຕໍ່ຫົວຄົນ (GNI) | ໂດລາ | ລະດັບຊາດ | 2,520 | ປະຈໍາປີ | ບັນຊີແຫ່ງຊາດ | ສູນສະຖິຕິແຫ່ງຊາດ | 1,557 | 2014-2015 | ບົດສະຫລຸບແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາສົກປີ | |
| | 3 | | ອັດຕາເງິນເຟີ້ | % | ລະດັບຊາດ | <5 | ປະຈໍາປີ | ຂໍ້ມູນຈາກການລາຍງານ | ສູນສະຖິຕິແຫ່ງຊາດ | 1.68 | 2014-2015 | ສູນສະຖິຕິແຫ່ງຊາດ | |
| | 4 | | ອັດຕາສ່ວນໂຄງການທີ່ຕ້ອງການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ແບ່ງຕາມ:<br>- ໂຄງການກໍ່ສ້າງພື້ນຖານໂຄງລ່າງ<br>- ໂຄງການສໍາປະທານ<br>- ໂຄງການໃນເຂດເສດຖະກິດພິເສດ-ເຂດເສດຖະກິດສະເພາະ | <br>%<br>%<br>% | ລະດັບຊາດ / ຂະແໜງການ | | ປະຈໍາປີ | ການປະເມີນໂຄງການ/ ບົດບັນທຶກຂອງສະພາແຫ່ງຊາດ | ທຸກກະຊວງ / ກະຊວງແຜນການ ແລະ ການລົງທຶນ | | | | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 2 |
| 2 | 5 | | ອັດຕາການຫວ່າງງານ | % | ຊາຍ/ຍິງ/ອາຍຸ | ຢູ່ໃນລະຫວ່າງອັດຕາຄວບຄຸມ 2% | ປະຈໍາ 5 ປີ ລວມທັງຄາດຄະເນປະຈໍາປີ | ການສໍາຫຼວດ | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ/ສູນສະຖິຕິແຫ່ງຊາດ (ກົມສະຖິຕິສັງຄົມ) | 1.51 (ຊາຍ 1.8% ຍິງ 2.0%) | 2010 | ການສໍາຫຼວດແຮງງານ ປີ 2010 | |
| **ໝາກຜົນ 1 ວຽກຈຸດສຸມ 1: ຮັບປະກັນໃຫ້ເສດຖະກິດແຫ່ງຊາດສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງໝັ້ນທ່ຽງ ແລະ ສົມດຸນ** | | | | | | | | | | | | | |
| 3 | 6 | ການເຕີບໂຕທີ່ໝັ້ນທ່ຽງ | ມູນຄ່າລວມຍອດຜະລິດຕະພັນພາຍໃນ ຕາມລາຄາປະຈຸບັນ | ຕື້ກີບ | ລະດັບຊາດ /ແຂວງ | 187,885 | ປະຈໍາປີ | ບັນຊີແຫ່ງຊາດ | ສູນສະຖິຕິແຫ່ງຊາດ | 102,320 | 2014-2015 | ແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ ແລະ ສູນຖິຕິແຫ່ງຊາດ | ຕົວຊີ້ວັດການຫຼຸດພົ້ນ LDC |
| 4 | 7 | | ມູນຄ່າລວມຍອດຜະລິດຕະພັນພາຍໃນ ຕາມລາຄາຄົງທີ່ | ຕື້ກີບ | ລະດັບຊາດ /ແຂວງ | 65,071 | ປະຈໍາປີ | ບັນຊີແຫ່ງຊາດ | ສູນສະຖິຕິແຫ່ງຊາດ | 45,248 | 2014-2015 | ແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ ແລະ ສູນຖິຕິແຫ່ງຊາດ | ຕົວຊີ້ວັດການຫຼຸດພົ້ນ LDC |
| | 8 | | ລວມຍອດຜະລິດຕະພັນພາຍໃນ ຕໍ່ຫົວຄົນ | ກີບ | ລະດັບຊາດ /ແຂວງ | 3,190 | ປະຈໍາປີ | ບັນຊີແຫ່ງຊາດ | ສູນສະຖິຕິແຫ່ງຊາດ | 1,970 | 2014-2015 | ແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ ແລະ ສູນຖິຕິແຫ່ງຊາດ | ຕົວຊີ້ວັດການຫຼຸດພົ້ນ LDC |
| 5 | 9 | ຄວາມຫຼາກຫຼາຍຂອງຂະແໜງການຜະລິດ | ອັດຕາສ່ວນການຜະລິດຂອງຂະແໜງຊັບພະຍາກອນທໍາມະຊາດໃນລວມຍອດຜະລິດຕະພັນພາຍໃນ | % | ລະດັບ ຂະແໜງການ | | ປະຈໍາປີ | ບັນຊີແຫ່ງຊາດ | ສູນສະຖິຕິແຫ່ງຊາດ | | | | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 1 |
| | | ການເຕີບໂຕທີ່ສົມດຸນ | ສັດສ່ວນການຊົມໃຊ້ຂອງກຸ່ມປະຊາກອນທຸກຍາກທີ່ສຸດໃນການຊົມໃຊ້ແຫ່ງຊາດ (%) | | | | | | | | | | ເບິ່ງໝາກຜົນ 2, ວຽກຈຸດສຸມ 1 |
| | 10 | ຄວາມສະດວກໃນການດໍາເນີນທຸລະກິດ | ຈໍານວນຂັ້ນຕອນໃນການຂໍດໍາເນີນທຸລະກິດ | ຈໍານວນ | ລະດັບຊາດ | 4 | ປະຈໍາປີ | ຂໍ້ມູນຄາດຄະເນ | ກະຊວງອຸດສາຫະກໍາ ແລະການຄ້າ | 6 | 2015 | ການສໍາຫຼວດຂອງທະນາຄານໂລກ | |
| | 11 | | ໄລຍະເວລາໃນການຂໍດໍາເນີນທຸລະກິດ (ມື້) | ມື້ | ລະດັບຊາດ | 62 | ປະຈໍາປີ | ຂໍ້ມູນຄາດຄະເນ | ກະຊວງອຸດສາຫະກໍາ ແລະການຄ້າ | 72 | 2015 | ການສໍາຫຼວດຂອງທະນາຄານໂລກ | |
| **ໝາກຜົນ 1 ວຽກຈຸດສຸມ 2: ຮັບປະກັນໃຫ້ເສດຖະກິດມະຫາພາກມີສະຖຽນລະພາບ** | | | | | | | | | | | | | |
| | 12 | ການຈັດຕັ້ງປະຕິບັດນະໂຍບາຍການເງິນ ແລະ ເງິນຕາ | ຂາດດຸນງົບປະມານ ຕໍ່ GDP | % | ລະດັບຊາດ | 5 | ປະຈໍາປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 4.7 | 2014-2015 | ແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ ແລະ ກະຊວງການເງິນ | |
| 6 | 13 | | ອັດຕາສ່ວນຂອງລາຍຮັບງົບປະມານ ຕໍ່ GDP | % | ລະດັບຊາດ | 19-20 | ປະຈໍາປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 24.6 | 2014-2015 | ແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ ແລະ ກະຊວງການເງິນ | |
| 7 | 14 | | ອັດຕາສ່ວນຂອງລາຍຮັບພາຍໃນ ຕໍ່ GDP | % | ລະດັບຊາດ | 16-17 | ປະຈໍາປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 18.9 | 2014-2015 | ແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ ແລະ ກະຊວງການເງິນ | |
| 8 | 15 | | ລາຍຮັບຈາກອາກອນ | ຕື້ກີບ | ລະດັບຊາດ | | ປະຈໍາປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 9,694 | 2014-2015 | ກະຊວງການເງິນ | |
| 9 | 16 | ການຈັດຕັ້ງປະຕິບັດນະໂຍບາຍການເງິນ ແລະ ເງິນຕາ | ລາຍຈ່າຍງົບປະມານທັງໝົດ | ຕື້ກີບ | ລະດັບຊາດ | 176,720 | ປະຈໍາປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 118,639 | 2014-2015 | ແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ ແລະ ກະຊວງການເງິນ | |
| 10 | 17 | | ອັດຕາສ່ວນຂອງລາຍຈ່າຍງົບປະມານ ຕໍ່ GDP | % | ລະດັບຊາດ | ບໍ່ເກີນ 25 | ປະຈໍາປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 29.3 | 2014-2015 | ແຜນພັດທະນາເສດຖະກິດ-ສັງຄົມ ປະຈໍາປີ ແລະ ກະຊວງການເງິນ | |

| SDG | ລ/ດ | ຜົນຂອງການວັດແທກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| | 18 | ການຈັດຕັ້ງປະຕິບັດນະໂຍບາຍການເງິນ ແລະ ເງິນຕາ | ອັດຕາສ່ວນລາຍຈ່າຍເງິນເດືອນລັດຖະກອນ ຕໍ່ລາຍຮັບພາຍໃນ | % | ລະດັບຊາດ / ຂະແໜງການ | 45 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 43.1 | 2014-2015 | ກະຊວງການເງິນ | |
| | | | ອັດຕາເງິນເຟີ້ | | | | | | | | | | ເບິ່ງຕົວຊີ້ວັດລະດັບໝາກຜົນ 1 |
| | 19 | | ອັດຕາແລກປ່ຽນ<br>– ກີບ/ 1 ໂດລາສະຫະລັດ<br>– ອັດຕາການປ່ຽນແປງທຽບໃສ່ໄລຍະດຽວກັນຂອງປີຜ່ານມາ | ກີບ/ໂດລາ | ລະດັບຊາດ | ± 5% | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງສປປລາວ | 8123.15<br>-1.11% | 2014-2015 | ທະນາຄານແຫ່ງ ສປປ ລາວ | |
| | 20 | | ຄັງສຳຮອງເງິນຕາຕ່າງປະເທດ | ເດືອນ | ລະດັບຊາດ | ≥ 5 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງສປປລາວ | ≥ 5% | 2014-2015 | ທະນາຄານແຫ່ງ ສປປ ລາວ | |
| 11 | 21 | | ອັດຕາໜີ້ສິນ ຕໍ່ GDP | % | ລະດັບຊາດ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ | 52 | 2015 | ກະຊວງການເງິນ | |
| 12 | 22 | ການລົງທຶນພາຍໃນ ແລະ ຕ່າງປະເທດ | ການລົງທຶນໂດຍກົງຈາກຕ່າງປະເທດ | ຕື້ກີບ | ລະດັບຊາດ/ ຂະແໜງການ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ (ກົມສົ່ງເສີມການລົງທຶນ) | 15,611 | 2014-2015 | | |
| 13 | 23 | | ອັດຕາການຂະຫຍາຍຕົວຂອງການລົງທຶນໂດຍກົງ ຈາກຕ່າງປະເທດ | % | ລະດັບຊາດ/ ຂະແໜງການ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ (ກົມສົ່ງເສີມການລົງທຶນ) | | | | |
| | 24 | | ມູນຄ່າການຜະລິດ ຢູ່ໃນຂະແໜງອຸດສາຫະກຳປຸງແຕ່ງ | ຕື້ກີບ | ລະດັບຊາດ/ ຂະແໜງການ | 6,281 | ປະຈຳປີ | ຖານຂໍ້ມູນ ແລະ ການສຳຫຼວດຕົວຢ່າງ ຂອງກະຊວງອຸດສາຫະກຳ ແລະ ການຄ້າ | ກະຊວງອຸດສາຫະກຳ ແລະ ການຄ້າ | 5,462 | 2015 | ບົດສະຫຼຸບປະຈຳປີ | |
| | 25 | | ອັດຕາການຂະຫຍາຍຕົວຂອງການລົງທຶນ ພາຍໃນທັງໝົດ | % | ລະດັບຊາດ/ ຂະແໜງການ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ (ກົມແຜນການ) | | | | |
| **ໝາກຜົນ 1 ວຽກຈຸດສຸມ 3: ຮັບປະກັນຄວາມສອດຄ່ອງແລະກົມກຽວລະຫວ່າງຄວາມສາມາດສະໜອງແຫຼ່ງທຶນກັບການວາງແຜນພັດທະນາ** | | | | | | | | | | | | | |
| | 26 | ຄຸນນະພາບຂອງການລົງທຶນ | ອັດຕາສ່ວນຂອງໂຄງການທີ່ໄດ້ຖືກຈັດຕັ້ງປະຕິບັດຕາມ ແຜນອະນຸມັດຈາກສະພາແຫ່ງຊາດ | % | ລະດັບຊາດ / ຂະແໜງການ | | ປະຈຳປີ | ການປະເມີນໂຄງການ/ ບົດບັນທຶກຂອງສະພາແຫ່ງຊາດ | ທຸກກະຊວງ / ກະຊວງແຜນການ ແລະ ການລົງທຶນ | | | | |
| | | | ອັດຕາສ່ວນໂຄງການທີ່ຕ້ອງການປະເມີນຜົນກະທົບດ້ານສິ່ງແວດລ້ອມ ແລະ ສັງຄົມ ແບ່ງຕາມ:<br>– ໂຄງການກໍ່ສ້າງພື້ນຖານໂຄງລ່າງ<br>– ໂຄງການສຳປະທານ<br>– ໂຄງການໃນເຂດເສດຖະກິດສະເພາະ-ເຂດເສດຖະກິດພິເສດ | | | | | | | | | | ເບິ່ງຕົວຊີ້ວັດການເຕີບໂຕສີຂຽວທີ 2 ແລະ ຕົວຊີ້ວັດລະດັບໝາກຜົນ 1 |
| | 27 | | ອັດຕາສ່ວນໂຄງການທີ່ຖືກປະເມີນດ້ານການເງິນແລ້ວ ແບ່ງຕາມ:<br>– ໂຄງການກໍ່ສ້າງພື້ນຖານໂຄງລ່າງ<br>– ໂຄງການສຳປະທານ<br>– ໂຄງການໃນເຂດເສດຖະກິດສະເພາະ-ເຂດເສດຖະກິດພິເສດ | %<br>%<br>% | ລະດັບຊາດ / ຂະແໜງການ | | ປະຈຳປີ | ການປະເມີນໂຄງການ/ ບົດບັນທຶກຂອງສະພາແຫ່ງຊາດ | ທຸກກະຊວງ / ກະຊວງແຜນການ ແລະ ການລົງທຶນ | | | | |
| | 28 | | ອັດຕາສ່ວນໂຄງການທີ່ຖືກປະເມີນດ້ານເສດຖະກິດແລ້ວ:<br>– ໂຄງການກໍ່ສ້າງພື້ນຖານໂຄງລ່າງ<br>– ໂຄງການສຳປະທານ<br>– ໂຄງການໃນເຂດເສດຖະກິດສະເພາະ-ເຂດເສດຖະກິດພິເສດ | %<br>%<br>% | ລະດັບຊາດ / ຂະແໜງການ | | ປະຈຳປີ | ການປະເມີນໂຄງການ/ ບົດບັນທຶກຂອງສະພາແຫ່ງຊາດ | ທຸກກະຊວງ / ກະຊວງແຜນການ ແລະ ການລົງທຶນ | | | | |
| | 29 | ການລົງທຶນ: ລະດັບຂອງການລົງທຶນ, ແຫຼ່ງ ແລະ ປະເພດຂອງການລົງທຶນ | ມູນຄ່າການລົງທຶນທັງໝົດ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020) | ພັນຕື້ກີບ | ລະດັບຊາດ / ຂະແໜງການ | 223 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ (ກົມແຜນການ) | 248.76 | 2015 | ກະຊວງແຜນການ ແລະ ການລົງທຶນ | |
| | 30 | | ສັດສ່ວນການລົງທຶນຈາກງົບປະມານ ຂອງລັດຖະບານ ຕໍ່ການລົງທຶນທັງໝົດ | % | ລະດັບຊາດ / ຂະແໜງການ | 9-11 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ/ກະຊວງການເງິນ | 5.23 | 2015 | ກະຊວງແຜນການ ແລະ ການລົງທຶນ | |
| | 31 | | ສັດສ່ວນການລົງທຶນຈາກເງິນກູ້ຢືມຕ່າງປະເທດ ແລະ ການຊ່ວຍເຫຼືອລ້າ ຕໍ່ການລົງທຶນທັງໝົດ | % | ຕາມປະເພດ ການກູ້ຢືມ/ ການຊ່ວຍເຫຼືອລ້າ/ ຂະແໜງການ | 12-16 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ/ກະຊວງການເງິນ | 10.85 | 2015 | ກະຊວງແຜນການ ແລະ ການລົງທຶນ | |
| | 32 | ການລົງທຶນ: ລະດັບຂອງການລົງທຶນ, ແຫຼ່ງ ແລະ ປະເພດຂອງການລົງທຶນ | ສັດສ່ວນການລົງທຶນຈາກພາກສ່ວນເອກະຊົນທັງພາຍ ໃນແລະຕ່າງປະເທດ ຕໍ່ການລົງທຶນທັງໝົດ | % | ການລົງທຶນ ພາຍໃນ/ ຕ່າງປະເທດ ແລະ ຂະແໜງການ | 54-57 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຜນການ ແລະ ການລົງທຶນ | 67.24 | 2015 | ກະຊວງແຜນການ ແລະ ການລົງທຶນ | |
| | 33 | | ສັດສ່ວນການລົງທຶນ ໂດຍຜ່ານລະບົບການເງິນ-ເງິນຕາ ຕໍ່ການລົງທຶນທັງໝົດ | % | ຂະແໜງ ການຍ່ອຍ | 19-21 | ປະຈຳປີ | ຂໍ້ມູນຈາກການລາຍງານ | ທະນາຄານແຫ່ງສປປ ລາວ | 16.68 | 2015 | ກະຊວງແຜນການ ແລະ ການລົງທຶນ | |

| SDG | ລ/ດ | ຜົນຂອງການຈັດແຫກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| 14 | 34 | ການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ການຮ່ວມມືກັບຄູ່ຮ່ວມພັດທະນາ | ມູນຄ່າການຊ່ວຍເຫຼືອທາງການເພື່ອການພັດທະນາ (ODA) ແລະ ການຊ່ວຍເຫຼືອອື່ນໆໃຫ້ຂະແໜງການທີ່ກ່ຽວຂ້ອງໂດຍກົງ | % ໂດລາ | ລະດັບຊາດ/ ຜູ້ໃຫ້ທຶນ / ຂະແໜງການ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ/ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) | | | | |
| | | ການຊ່ວຍເຫຼືອທາງການເພື່ອການພັດທະນາ ແລະ ການຮ່ວມມືກັບຄູ່ຮ່ວມພັດທະນາ | *ສັດສ່ວນການຊ່ວຍເຫຼືອ ຕໍ່ GDP* | *%* | | | | | | *5.24* | *2014-2015* | *ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ)* | |
| | | | *ມູນຄ່າການຊ່ວຍເຫຼືອທັງໝົດ* | *ໂດລາ* | | | | | | *660* | *2014-2015* | *ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ)* | |
| | 35 | | ສັດສ່ວນຂອງການຊ່ວຍເຫຼືອ ODA ສຸດທິ ຈາກປະເທດ OECD/DAC (Organisation for Economic Co-operation and Development/Development Assistance Communities) ຕໍ່ GDP | % | ລະດັບຊາດ/ ຜູ້ໃຫ້ທຶນ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ/ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) | 43.6 | 2015 | *ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ)* | |
| | 36 | | ສັດສ່ວນຂອງການຊ່ວຍເຫຼືອ ODA ສອງຝ່າຍ ຈາກປະເທດ OECD/DAC (Organisation for Economic Co-operation and Development/Development Assistance Communities) ຕໍ່ GDP | % | ລະດັບຊາດ/ ຜູ້ໃຫ້ທຶນ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງການເງິນ/ ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ) | 22.26 | 2015 | *ກະຊວງແຜນການ ແລະ ການລົງທຶນ (ກົມຮ່ວມມືສາກົນ)* | |
| **ໝາກຜົນ 1 ວຽກຈຸດສຸມ 4: ພັດທະນາເຂດແຄວ້ນແລະທ້ອງຖິ່ນຢ່າງມີຄວາມສອດຄ່ອງ ແລະ ສົມດຸນ** | | | | | | | | | | | | | |
| | 37 | ການຂະຫຍາຍຕົວທາງເສດຖະກິດມີຄວາມເທົ່າທຽມ ແລະ ສົມດຸນ | ອັດຕາການຂະຫຍາຍຕົວຂອງ GDP ໃນແຕ່ລະພາກປີຕໍ່ປີ: | % | ລະດັບພາກ/ ແຂວງ | | ປະຈຳປີ | ບັນຊີແຫ່ງຊາດ | ສູນສະຖິຕິແຫ່ງຊາດ | | | | |
| | | | *- ເໜືອ* | *%* | *ລະດັບພາກ/ ແຂວງ* | *10.00* | *ປະຈຳປີ* | *ບັນຊີແຫ່ງຊາດ* | *ສູນສະຖິຕິແຫ່ງຊາດ* | *9.60* | *2015* | *ຈາກບົດລາຍງານຂອງແຂວງທົ່ວປະເທດ* | |
| | | | *- ກາງ* | *%* | *ລະດັບພາກ/ ແຂວງ* | *10.60* | *ປະຈຳປີ* | *ບັນຊີແຫ່ງຊາດ* | *ສູນສະຖິຕິແຫ່ງຊາດ* | *11.50* | *2015* | *ຈາກບົດລາຍງານຂອງແຂວງທົ່ວປະເທດ* | |
| | | | *- ໃຕ້* | *%* | *ລະດັບພາກ/ ແຂວງ* | *12.10* | *ປະຈຳປີ* | *ບັນຊີແຫ່ງຊາດ* | *ສູນສະຖິຕິແຫ່ງຊາດ* | *12.60* | *2015* | *ຈາກບົດລາຍງານຂອງແຂວງທົ່ວປະເທດ* | |
| | 38 | ການຂະຫຍາຍຕົວທາງເສດຖະກິດມີຄວາມເທົ່າທຽມ ແລະ ສົມດຸນ | GDP ຕໍ່ຫົວຄົນໃນແຕ່ລະພາກ | ໂດລາ | ລະດັບພາກ/ ແຂວງ | | ປະຈຳປີ | ບັນຊີແຫ່ງຊາດ | ສູນສະຖິຕິແຫ່ງຊາດ | | | | |
| | | | *- ເໜືອ* | *ໂດລາ* | *ລະດັບພາກ/ ແຂວງ* | *2,005* | *ປະຈຳປີ* | *ບັນຊີແຫ່ງຊາດ* | *ສູນສະຖິຕິແຫ່ງຊາດ* | *1,231* | *2015* | *ຈາກບົດລາຍງານຂອງແຂວງທົ່ວປະເທດ* | |
| | | | *- ກາງ* | *ໂດລາ* | *ລະດັບພາກ/ ແຂວງ* | *3,784* | *ປະຈຳປີ* | *ບັນຊີແຫ່ງຊາດ* | *ສູນສະຖິຕິແຫ່ງຊາດ* | *2,147* | *2015* | *ຈາກບົດລາຍງານຂອງແຂວງທົ່ວປະເທດ* | |
| | | | *- ໃຕ້* | *ໂດລາ* | *ລະດັບພາກ/ ແຂວງ* | *2,168* | *ປະຈຳປີ* | *ບັນຊີແຫ່ງຊາດ* | *ສູນສະຖິຕິແຫ່ງຊາດ* | *1,505* | *2015* | *ຈາກບົດລາຍງານຂອງແຂວງທົ່ວປະເທດ* | |
| 15 | 39 | | ອັດຕາຄອບຄົວທຸກຍາກທັງຫມົດ | % | ລະດັບຊາດ / ແຂວງຕໍ່ ວ ເມືອງ-ຊົນນະບົດ | <5 | ປະຈຳປີ | ຂໍ້ມູນຈາກແຜນງານຂອງຄະນະພັດທະນາຊົນນະບົດ | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | 6.59 | 2015 | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | |
| 16 | 40 | | % ບ້ານທີ່ທຸກຍາກ | % | ລະດັບຊາດ | <10 | ປະຈຳປີ | ຂໍ້ມູນຈາກແຜນງານຂອງຄະນະພັດທະນາຊົນນະບົດ | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | 20.50 | 2015 | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | |
| | | | ອັດຕາສ່ວນຂອງຈຳນວນປະຊາກອນທີ່ຢູ່ຕ່ຳກວ່າເສັ້ນຄວາມທຸກຍາກ (%) ແບ່ງຕາມພາກ/ແຂວງ (ອັດຕາສ່ວນປະຊາກອນທຸກຍາກ) | | | | | | | | | | ເບິ່ງຕົວຊີ້ວັດລະດັບໝາກຜົນ 2 |
| 17 | 41 | | % ບ້ານທີ່ເຂົ້າເຖິງເສັ້ນທາງໄດ້ທຸກລະດູ | % | ລະດັບພາກ/ ແຂວງ | | ປະຈຳປີ | ຂໍ້ມູນຈາກແຜນງານຂອງຄະນະພັດທະນາຊົນນະບົດ | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | 85 | 2015 | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | |
| **ໝາກຜົນ 1 ວຽກຈຸດສຸມ 5: ພັດທະນາກຳລັງແຮງງານໃຫ້ມີຄຸນນະພາບ, ມີວິໄນ, ຄຸໝັ່ນ ແລະ ອົດທົນ** | | | | | | | | | | | | | |
| 18 | 42 | ຜະລິດຕະພາບແຮງງານ ໂດຍສະເພາະໃນຂະແໜງກະສິກຳ ແລະ ການທ່ອງທ່ຽວ | ຜະລິດຕະພາບແຮງງານ (GDP/ຄົນ):<br>- ຂະແໜງທີ່ບໍ່ແມ່ນຊັບພະຍາກອນທຳມະຊາດ<br>- ຂະແໜງຊັບພະຍາກອນທຳມະຊາດ | ໂດລາ | ລະດັບຊາດ / ຂະແໜງການ | | ປະຈຳ 5 ປີ ລວມທັງຄາດຄະເນປະຈຳປີ | ການສຳຫຼວດ | ສູນສະຖິຕິແຫ່ງຊາດ/ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | | | | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 3 |
| 19 | 43 | | ອັດຕາການເຕີບໂຕ GDP ສະເລ່ຍຕໍ່ຄົນ (ອັດຕາການເຕີບໂຕຕໍ່ຜະລິດຕະພາບແຮງງານ) | % | ລະດັບຊາດ / ຂະແໜງການ | | ປະຈຳ 5 ປີ ລວມທັງຄາດຄະເນປະຈຳປີ | ການສຳຫຼວດ | ສູນສະຖິຕິແຫ່ງຊາດ/ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | | | | |
| 20 | 44 | ການຈ້າງງານ | ຈຳນວນຜູ້ມີວຽກເຮັດງານທຳ | ຄົນ | ລະດັບຊາດ | 4,470,000 | ປະຈຳ 5 ປີ ລວມທັງຄາດຄະເນປະຈຳປີ | ການສຳຫຼວດ | ສູນສະຖິຕິແຫ່ງຊາດ/ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 3,021,212 | 2010 | ການສຳຫຼວດແຮງງານ ປີ 2010 | |

| SDG | ລ/ດ | ຫົວຂອງການວັດແທກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| | | | ອັດຕາການຫວ່າງງານ | | | | | | | | | | ເບິ່ງຕົວຊີ້ວັດລະດັບໝາກຜົນ 1 |
| 21 | 45 | ວຽກງານທີ່ມີຄວາມສ່ຽງ | ສັດສ່ວນຂອງແຮງງານທີ່ເຮັດວຽກໃນກິດຈະການຕົນເອງ ແລະ ເຮັດວຽກບ້ານ ຕໍ່ ຜູ້ມີວຽກເຮັດງານທຳທັງໝົດ | % | ຊາຍ/ຍິງ | | ປະຈຳ 5 ປີ | ການສຳຫຼວດ | ສູນສະຖິຕິແຫ່ງຊາດ/ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 84 (ຊາຍ 79% ຍິງ 89%) | 2010 | ການສຳຫຼວດແຮງງານ ປີ 2012 | |
| | 46 | ຄວາມອາດສາມາດຂອງກຳລັງແຮງງານ | ອັດຕາສ່ວນຂອງກຳລັງແຮງງານທີ່ມີການສຶກສາໃນລະດັບມັດທະຍົມ ຫຼື ສູງກວ່າ | % | ຊາຍ/ຍິງ/ ຂະແໜງການ | | ປະຈຳ 5 ປີ | ການສຳຫຼວດ | ສູນສະຖິຕິແຫ່ງຊາດ/ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 39 (ຊາຍ 45% ຍິງ 33%) | 2010 | ການສຳຫຼວດແຮງງານ ປີ 2013 | |
| | 47 | ໂອກາດດ້ານການຈ້າງງານ | ຈຳນວນຜູ້ທີ່ມີວຽກເຮັດງານທຳໃໝ່<br>ການເພີ່ມຂຶ້ນຂອງຜູ້ທີ່ມີວຽກເຮັດງານທຳໃໝ່ສະເລ່ຍຕໍ່ປີ | ຄົນ<br>% | ຊາຍ/ຍິງ/ຊົນເຜົ່າ/ ທີ່ຕັ້ງ | 716,193 | ປະຈຳ 5 ປີ ລວມທັງຄາດຄະເນປະຈຳປີ | ການສຳຫຼວດ | ສູນສະຖິຕິແຫ່ງຊາດ/ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 74,824 | 2015 | ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານ ຮສສ 2015-2016 | |
| | 48 | ການຢັ້ງຢືນຄວາມຊ່ຽວຊານຂອງກຳລັງແຮງງານ | ຈຳນວນຜູ້ທີ່ມີໃບປະກາດ ຫຼື ມີໃບຢັ້ງຢືນຮຽນຈົບໃນສາຂາອາຊີບດັ່ງນີ້: ກະສິກຳປຸງແຕ່ງ, ທ່ອງທ່ຽວ, ຊ່າງກໍ່ສ້າງ/ອີສະລະກອນ, ຊ່າງແປງລົດ, ບໍລິຫານທຸລະກິດ ແລະ ການຄຸ້ມຄອງ:<br>– ຈຳນວນ<br>– % ການເພີ່ມຂຶ້ນຕໍ່ປີ | ຈຳນວນ<br>% | ຊາຍ/ຍິງ/ ຂະແໜງການ | 12,500 | ປະຈຳປີ | ຂໍ້ມູນບໍລິຫານ | ສູນສະຖິຕິແຫ່ງຊາດ/ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 694 | 2015 | ສະຖາບັນພັດທະນາສີມືແຮງງານ ລາວ-ເກົາຫຼີ | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 4 |
| **ໝາກຜົນ 1 ວຽກຈຸດສຸມ 6: ພັດທະນາຜູ້ປະກອບການ, ສ້າງວິຊາການ ແລະ ຜູ້ຊຳນານງານ** | | | | | | | | | | | | | |
| | 49 | ຄວາມສາມາດໃນການແຂ່ງຂັນຂອງ SME ລາວ | ຈຳນວນ SME ທີ່ມີຄົນລາວເປັນເຈົ້າຂອງ | ຈຳນວນ | ລະດັບຊາດ | | ປະຈຳປີ | ການສຳຫຼວດວິສາຫະກິດຂະໜາດນ້ອຍ-ກາງ | ກະຊວງອຸດສາຫະກຳ ແລະ ການຄ້າ | 117,663 | 2015 | ສູນສະຖິຕິແຫ່ງຊາດ | |
| | 50 | | ຈຳນວນ SME ທີ່ມີຄົນລາວເປັນເຈົ້າຂອງທີ່ເພີ່ມຂຶ້ນ/ຫຼຸດລົງ | % | ລະດັບຊາດ | 13% ຕໍ່ປີ | | | | ເພີ່ມຂຶ້ນ 13% ຕໍ່ປີ | 2015 | ກະຊວງອຸດສາຫະກຳ ແລະ ການຄ້າ | |
| **ໝາກຜົນ 1 ວຽກຈຸດສຸມ 7: ເປີດກວ້າງການຮ່ວມມືແລະເຊື່ອມໂຍງກັບພາກພື້ນ ແລະ ສາກົນ** | | | | | | | | | | | | | |
| | 51 | ການອຳນວຍຄວາມສະດວກທາງດ້ານການຄ້າ | ມູນຄ່າການນຳເຂົ້າຕໍ່ 1 ຕູ້ ຄອນເທນເນີ (container) | ໂດລາ | ລະດັບຊາດ | | ປະຈຳປີ | ການສຳຫຼວດຂອງທະນາຄານໂລກ | ກະຊວງອຸດສາຫະກຳ ແລະ ການຄ້າ | | | | |
| | 52 | | ມູນຄ່າການສົ່ງອອກຕໍ່ 1 ຕູ້ ຄອນເທນເນີ (container) | ໂດລາ | ລະດັບຊາດ | | ປະຈຳປີ | | ກະຊວງອຸດສາຫະກຳ ແລະ ການຄ້າ | | | | |
| 22 | 53 | | ມູນຄ່າການສົ່ງອອກ ແລະ ນຳເຂົ້າ | | | | | | | | | | |
| | | | *ມູນຄ່າການສົ່ງອອກ* | *ລ້ານໂດລາ* | *ລະດັບຊາດ* | *3,933* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງອຸດສາຫະກຳ ແລະ ການຄ້າ* | *3,426.00* | *2015* | *ບົດສະຫຼຸບປະຈຳປີ* | *ຕົວຊີ້ວັດການຫຼຸດພົ້ນ LDC* |
| | | | *ມູນຄ່າການສົ່ງອອກ* | *ລ້ານໂດລາ* | *ລະດັບຊາດ* | *5,000* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງອຸດສາຫະກຳ ແລະ ການຄ້າ* | *4,047.00* | *2015* | *ບົດສະຫຼຸບປະຈຳປີ* | |
| | 54 | | ສັດສ່ວນຂອງມູນຄ່າການສົ່ງອອກພາຍໃຕ້ສິດທິພິເສດທາງດ້ານການຄ້າ | | | | | | ກະຊວງອຸດສາຫະກຳ ແລະ ການຄ້າ | | | | |
| **ໝາກຜົນ 2 - ພັດທະນາຊັບພະຍາກອນມະນຸດ ໃຫ້ກາຍເປັນປັດໄຈຕັດສິນການພັດທະນາ ໂດຍການຍົກລະດັບຄວາມສາມາດຂອງບຸກຄະລາກອນພາກລັດ ແລະ ກຳລັງແຮງງານເອກະຊົນໃຫ້ສູງຂຶ້ນ; ຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໄດ້ຮັບການແກ້ໄຂຢ່າງທົ່ວເຖິງ, ທຸກເຜົ່າຊົນ ແລະ ເພດໄວສາມາດເຂົ້າເຖິງການສຶກສາ ແລະ ການບໍລິການສາທາລະນະສຸກໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ; ສົ່ງເສີມການປົກປັກຮັກສາ ແລະ ພັດທະນາເອກະລັກວັດທະນະທຳອັນດີງາມຂອງຊາດ. ຮັບປະກັນສະຖຽນລະພາບດ້ານການເມືອງຢ່າງໝັ້ນແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ມີຄວາມຍຸຕິທຳ ແລະ ໂປ່ງໃສ** | | | | | | | | | | | | | |
| | 55 | ຕົວຊີ້ວັດໝາກຜົນ 2 | ດັດສະນີຊັບສິນມະນຸດ (HAI) | ດັດສະນີ | ລະດັບຊາດ / ແຂວງ/ເພດ | 66 | ປະຈຳ 5 ປີ | | | 60.8 | 2015 | | ຕົວຊີ້ວັດການຫຼຸດພົ້ນ LDC |
| 23 | 56 | | ຕົວຊີ້ວັດຈາກ HAI: ອັດຕາການຕາຍຂອງເດັກນ້ອຍລຸ່ມ 5 ປີ | ຕໍ່ເດັກເກີດມີຊີວິດ 1000 ຄົນ | ລະດັບຊາດ / ແຂວງ/ເພດ | 40 | ປະຈຳ 5 ປີ | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) | ກະຊວງສາທາລະນະສຸກ/ ສູນສະຖິຕິແຫ່ງຊາດ | 72 | 2012 | ບົດສະຫຼຸບ 5 ປີ ຂອງກະຊວງສາທາ | ຕົວຊີ້ວັດການຫຼຸດພົ້ນ LDC |
| 24 | 57 | ຕົວຊີ້ວັດໝາກຜົນ 2 | ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີທີ່ມີລວງສູງຕ່ຳກວ່າມາດຕະຖານ | % | ລະດັບຊາດ /ແຂວງ | 34 | ປະຈຳ 5 ປີ | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS)/ການສຳຫຼວດໂພສະນາການ | ກະຊວງສາທາລະນະສຸກ/ ສູນສະຖິຕິແຫ່ງຊາດ | 38 | 2011 | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) | |
| 25 | 58 | ຕົວຊີ້ວັດໝາກຜົນ 2 | ອັດຕາການຕາຍຂອງແມ່ | ຕໍ່ເດັກເກີດມີຊີວິດ 100.000 ຄົນ | ລະດັບຊາດ | 160 | ປະຈຳ 5 ປີ | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) | ກະຊວງສາທາລະນະສຸກ | 220 | 2013 | ບົດສະຫຼຸບ 5 ປີ ຂອງກະຊວງສາທາ | |
| | 59 | | ອັດຕາການຮຽນຈົບຊັ້ນປະຖົມ | % | ລະດັບຊາດ/ແຂວງ/ ເພດ/ພາສາຊົນເຜົ່າ | 89 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສຶກສາທິການ ແລະ ກິລາ | 76 | 2015 | ການລາຍງານປະຈຳປີ ຂອງກະຊວງສຶກສາ | |
| | 66 | | ອັດຕາການຮຽນຈົບຊັ້ນມັດທະຍົມຕົ້ນ | % | ລະດັບຊາດ/ແຂວງ/ ເພດ/ພາສາຊົນເຜົ່າ | 98 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສຶກສາທິການ ແລະ ກິລາ | 91.3 | 2015 | ການລາຍງານປະຈຳປີ ຂອງກະຊວງສຶກສາ | |
| | 61 | | ອັດຕາການຮຽນຈົບຊັ້ນມັດທະຍົມປາຍ | % | ລະດັບຊາດ/ແຂວງ/ ເພດ/ພາສາຊົນເຜົ່າ | 98 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສຶກສາທິການ ແລະ ກິລາ | 94.4 | 2015 | ການລາຍງານປະຈຳປີ ຂອງກະຊວງສຶກສາ | |
| | 62 | | ອັດຕາຄົນຮູ້ໜັງສື ແລະ ຄິດໄລ່ເລກຄະນິດຂອງປະຊາກອນອາຍຸລະຫວ່າງ 15-24 ປີ | % | ລະດັບຊາດ/ ແຂວງ/ເພດ | 99 | ປະຈຳ 5 ປີ ລວມທັງຄາດຄະເນປະຈຳປີ | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) | ກະຊວງສຶກສາທິການ ແລະ ກິລາ | 89.1 | 2012 | ບົດລາຍງານປະຈຳປີ ກະຊວງສຶກສາ | ຕົວຊີ້ວັດການຫຼຸດພົ້ນ LDC |

| SDG | ລ/ດ | ຜົນຂອງການວັດແທກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| 26 | 63 | ຕົວຊີ້ວັດໝາກຜົນ 2 | ອັດຕາສ່ວນຂອງຈຳນວນປະຊາກອນທີ່ຢູ່ຕ່ຳກວ່າເສັ້ນຄວາມທຸກຍາກ (%) ແບ່ງຕາມພາກ/ແຂວງ (ອັດຕາສ່ວນປະຊາກອນທຸກຍາກ) | % | ລະດັບຊາດ/ແຂວງ/ຊົນເຜົ່າ/ຕົວເມືອງ/ຊົນນະບົດ/ຄົວເຮືອນທີ່ນຳໂດຍຜູ້ຍິງ/ຄົວເຮືອນທີ່ມີເດັກຕ່ຳກວ່າ 18 ປີ | 10 | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ສູນສະຖິຕິແຫ່ງຊາດ (ກົມສະຖິຕິສັງຄົມ) | 23.2 | 2012-2013 | ສູນສະຖິຕິແຫ່ງຊາດ | |
| **ໝາກຜົນ 2 ວຽກຈຸດສຸມ 1 - ສືບຕໍ່ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ຢ່າງໝັກແໜ້ນ ແລະ ກວ້າງຂວາງຕາມທິດ 3 ສ້າງ** | | | | | | | | | | | | | |
| 27 | | ການຫຼຸດຜ່ອນຄວາມທຸກຍາກ | ອັດຕາຄອບຄົວທຸກຍາກທັງໝົດ | | | | | | | | | | ເບິ່ງໝາກຜົນ 1, ວຽກຈຸດສຸມ 4 |
| | | | % ບ້ານທີ່ທຸກຍາກ | | | | | | | | | | ເບິ່ງໝາກຜົນ 1, ວຽກຈຸດສຸມ 4 |
| | | | ອັດຕາສ່ວນຂອງຈຳນວນປະຊາກອນທີ່ຢູ່ຕ່ຳກວ່າເສັ້ນຄວາມທຸກຍາກ (%) ແບ່ງຕາມພາກ/ແຂວງ (ອັດຕາສ່ວນປະຊາກອນທຸກຍາກ) | | | | | | | | | | ເບິ່ງຕົວຊີ້ວັດລະດັບໝາກຜົນ 2 |
| 28 | 64 | ການເຕີບໂຕທີ່ສົມດູນ | ສັດສ່ວນການຊົມໃຊ້ຂອງກຸ່ມປະຊາກອນທຸກຍາກທີ່ສຸດໃນການຊົມໃຊ້ແຫ່ງຊາດ (%) | % | ລະດັບຊາດ | | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ສູນສະຖິຕິແຫ່ງຊາດ (ກົມສະຖິຕິສັງຄົມ) | 7.2% | 2012-2013 | ສູນສະຖິຕິແຫ່ງຊາດ | |
| | 65 | | ອັດຕາສ່ວນຄວາມແຕກຕ່າງດ້ານຄວາມທຸກຍາກ (ທຽບໃສ່ເສັ້ນຄວາມທຸກຍາກ) | % | ລະດັບຊາດ/ແຂວງ | | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ສູນສະຖິຕິແຫ່ງຊາດ (ກົມສະຖິຕິສັງຄົມ) | 5.5% | 2012-2013 | ສູນສະຖິຕິແຫ່ງຊາດ | |
| | 66 | | ດັດສະນີຄວາມຮ້າຍແຮງຂອງຄວາມທຸກຍາກ | ຄ່າດັດສະນີ | ລະດັບຊາດ/ແຂວງ | | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ສູນສະຖິຕິແຫ່ງຊາດ (ກົມສະຖິຕິສັງຄົມ) | 1.9 | 2012-2013 | ສູນສະຖິຕິແຫ່ງຊາດ | |
| | 67 | | ຕົວສຳປະສິດ Gini coefficient | ຄ່າຕົວສຳປະສິດ | ລະດັບຊາດ | | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ສູນສະຖິຕິແຫ່ງຊາດ (ກົມສະຖິຕິສັງຄົມ) | 36.2 | 2012-2013 | ສູນສະຖິຕິແຫ່ງຊາດ | |
| | 68 | ຊີວິດການເປັນຢູ່ & ສະຫວັດດີການຂອງຄົວເຮືອນໄດ້ຮັບການປັບປຸງ | ອັດຕາສ່ວນຂອງຄົວເຮືອນທີ່ມີຊັບສິນຕໍ່ໄປນີ້:<br>- ໂທລະທັດ<br>- ໂທລະສັບມືຖື<br>- ວິທະຍຸ<br>- ລົດຈັກ | % | ລະດັບຊາດ / ແຂວງ/ ຕົວເມືອງ-ຊົນນະບົດ | | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ສູນສະຖິຕິແຫ່ງຊາດ (ກົມສະຖິຕິສັງຄົມ) | ໂທລະທັດ = 75.1%<br>ມືຖື = 76%<br>ວິທະຍຸ = 19.6%<br>ລົດຈັກ = 79.5% | 2012-2013 | ສູນສະຖິຕິແຫ່ງຊາດ | |
| 29 | 69 | | ສະພາບຂອງທີ່ພັກອາໄສ: % ຂອງບ້ານທີ່ກໍ່ດ້ວຍດິນຈີ່ ຫຼື ຊີມັງ | % | ລະດັບຊາດ / ແຂວງ/ ຕົວເມືອງ-ຊົນນະບົດ | | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ສູນສະຖິຕິແຫ່ງຊາດ (ກົມສະຖິຕິສັງຄົມ) | 59% | 2012-2013 | ສູນສະຖິຕິແຫ່ງຊາດ | |
| | 70 | ການເຂົ້າເຖິງການບໍລິການ ແລະ ຊັບພະຍາກອນ | ຈຳນວນ ແລະ % ຂອງບ້ານທີ່ບໍ່ມີໂຮງຮຽນປະຖົມ ຫຼື ໃຊ້ເວລາຍ່າງໄປໂຮງຮຽນຫຼາຍກວ່າ 1 ຊົ່ວໂມງ | ຈຳນວນ<br>% | ລະດັບຊາດ/ແຂວງ | | ປະຈຳປີ | ຂໍ້ມູນຈາກແຜນງານຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ | 31 ບ້ານ<br>0.37% | 2015 | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | |
| | 71 | | ຈຳນວນ ແລະ % ຂອງບ້ານທີ່ບໍ່ມີສຸກສາລາ, ຖົງຢາປະຈຳບ້ານ ຫຼື ໃຊ້ເວລາຍ່າງໄປໂຮງໝໍເມືອງຫຼາຍກວ່າ 2 ຊົ່ວໂມງ | ຈຳນວນ<br>% | ລະດັບຊາດ/ແຂວງ | | ປະຈຳປີ | ຂໍ້ມູນຈາກແຜນງານຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ | 257 ບ້ານ<br>3.03% | 2015 | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | |
| | 72 | ການເຂົ້າເຖິງການບໍລິການ ແລະ ຊັບພະຍາກອນ | ຈຳນວນ ແລະ % ຂອງບ້ານທີ່ບໍ່ມີນ້ຳສະອາດຊົມໃຊ້ | ຈຳນວນ<br>% | ລະດັບຊາດ/ແຂວງ | | ປະຈຳປີ | ຂໍ້ມູນຈາກແຜນງານຂອງຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂັ້ນສູນກາງ | 266 ບ້ານ<br>3.44% | 2015 | ຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ | |
| 30 | 73 | ການຫຼຸດຜ່ອນຜົນກະທົບຈາກລະເບີດບໍ່ທັນແຕກ | ຈຳນວນບ້ານທີ່ຍັງບໍ່ທັນສຳເລັດການສຳຫຼວດເຕັກນິກກ່ຽວກັບລະເບີດບໍ່ທັນແຕກໃນ 9 ແຂວງເປົ້າໝາຍ | ບ້ານ | ລະດັບຊາດ/ແຂວງ | 5,238 | ປະຈຳປີ | ຂໍ້ມູນຈາກການລາຍງານ | ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ສປປລາວ | 987 | 2015 | ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ສປປລາວ (ຄຊກລ) | |
| 31 | 74 | | ການສຳຫຼວດດ້ານວິຊາການຊອກຫາຈຸດຫຼັກຖານ ລບຕ ຕົກຄ້າງຢູ່ຈຸດສຸມພັດທະນາຕ່າງໆ | ຈຸດສຸມ | ລະດັບຊາດ | 124 | ປະຈຳປີ | ຂໍ້ມູນຈາກການລາຍງານ | ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ສປປລາວ | 0 | 2015 | ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ສປປລາວ (ຄຊກລ) | |
| 32 | 75 | | ຈຳນວນຜູ້ເສຍຊີວິດເນື່ອງຈາກເຫດການລະເບີດແຕກ | ຄົນ | ລະດັບຊາດ/ເພດ/ອາຍຸ | <40 | ປະຈຳປີ | ຂໍ້ມູນຈາກການລາຍງານ | ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ສປປລາວ | 45 | 2014 | ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ສປປລາວ (ຄຊກລ) | |
| 33 | 76 | | ຈຳນວນຜູ້ລອດຊີວິດຈາກເຫດການລະເບີດແຕກທີ່ໄດ້ຮັບການຊ່ວຍເຫຼືອ | ຄົນ | ລະດັບຊາດ/ເພດ/ອາຍຸ | 1,500 | ປະຈຳປີ | ຂໍ້ມູນຈາກການລາຍງານ | ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ສປປລາວ | 562 | 2014 | ຄະນະກຳມະການຄຸ້ມຄອງແຫ່ງຊາດເພື່ອແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ສປປລາວ (ຄຊກລ) | |
| **ໝາກຜົນ 2 ວຽກຈຸດສຸມ 2 - ຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ** | | | | | | | | | | | | | |
| | 77 | ການຄ້ຳປະກັນດ້ານສະບຽງອາຫານໄດ້ຮັບການປັບປຸງ | ລະບົບການຜະລິດສະບຽງອາຫານ ແລະ ສະມັດຕະພາບຂອງການຜະລິດກະສິກຳໄດ້ຮັບການປັບປຸງໃຫ້ດີຂຶ້ນ: | ໂຕນ/ຮຕ<br>ກິໂລ/ຄົນ/ປີ | | | | | | | | | |

| SDG | ລ/ດ | ຜົນຂອງການວັດແທກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| | | ການຄໍ້າປະກັນດ້ານສະບຽງອາຫານໄດ້ຮັບການປັບປຸງ | *ປະລິມານເຂົ້າຕໍ່ເຮັກຕາ* | *ໂຕນ/ຮຕ* | *ລະດັບຊາດ* | *4.46* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງກະສິກຳ ແລະ ປ່າໄມ້* | *4.26* | *2015* | *ບົດລາຍງານປະຈຳປີ* | |
| | | | *ປະລິມານເຂົ້າຕໍ່ຫົວຄົນ* | *ກິໂລ/ຄົນ/ປີ* | *ລະດັບຊາດ* | *280* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງກະສິກຳ ແລະ ປ່າໄມ້* | *330* | *2015* | *ບົດລາຍງານປະຈຳປີ* | |
| 34 | 78 | | ຜົນຜະລິດປາ/ຊີ້ນ/ໄຂ່ ຕໍ່ຫົວຄົນ (ປາແມ່ນລວມເອົາສັດນ້ຳທັງໝົດ) | ກິໂລ/ຄົນ/ປີ | ລະດັບຊາດ | 65 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 53 | 2015 | ບົດລາຍງານປະຈຳປີ | |
| 35 | 79 | ການຂາດສານອາຫານ | ອັດຕາສ່ວນຂອງປະຊາກອນທີ່ບໍລິໂພກອາຫານຕ່ຳກວ່າຄວາມຕ້ອງການ ຕໍ່ມື້ຄື 2100 ກາໂລລີ/ມື້/ຄົນ (ຕ່ຳກວ່າເສັ້ນຄວາມທຸກຍາກທາງດ້ານການບໍລິໂພກອາຫານທີ່ສັດກຳນົດ) | % | ລະດັບຊາດ/ແຂວງ | | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ກະຊວງສາທາລະນະສຸກ/ສູນສະຖິຕິແຫ່ງຊາດ | 20.1 | | | |
| | | | ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີທີ່ມີລວງສູງຕ່ຳກວ່າມາດຕະຖານ | | | 34 | | | | | | | ເບິ່ງຕົວຊີ້ວັດລະດັບໝາກຜົນ 2 |
| | 80 | | ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ | % | ລະດັບຊາດ/ແຂວງ | 17 | ປະຈຳ 5 ປີ | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS)/ການສຳຫຼວດໂພສະນາການ | ກະຊວງສາທາລະນະສຸກ/ສູນສະຖິຕິແຫ່ງຊາດ | 27 | 2011 | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) | |
| 36 | 81 | | % ເດັກລຸ່ມ 5 ປີ ທີ່ຂາດສານອາຫານຮຸນແຮງ (ຈ່ອຍ) | % | ລະດັບຊາດ/ແຂວງ | 5 | ປະຈຳ 5 ປີ | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS)/ການສຳຫຼວດໂພສະນາການ | ກະຊວງສາທາລະນະສຸກ/ສູນສະຖິຕິແຫ່ງຊາດ | 6 | 2011 | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) | |
| **ໝາກຜົນ 2 ວຽກຈຸດສຸມ 3 - ທຸກຄົນເຂົ້າເຖິງການສຶກສາໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ** | | | | | | | | | | | | | |
| 37 | 82 | ການເຂົ້າເຖິງການບໍລິການດ້ານການສຶກສາກ່ອນໄວຮຽນ | ອັດຕາເຂົ້າຮຽນຂອງເດັກນ້ອຍທີ່ມີອາຍຸໃນເກນເຂົ້າຮຽນຊັ້ນອະນຸບານ ທີ່ໄດ້ຮັບການບໍລິການດ້ານການສຶກສາກ່ອນໄວຮຽນ | % | ລະດັບຊາດ/ແຂວງ/ເພດ/ອາຍຸ | 55 | ປະຈຳ 5 ປີ / ປະຈຳປີ | ການສຳຫຼວດ/ຂໍ້ມູນຈາກການລາຍງານ | ກະຊວງສຶກສາທິການ ແລະ ກິລາ | 43.2 | 2015 | | |
| 38 | 83 | ການເຂົ້າເຖິງການສຶກສາ | ຕົວຊີ້ວັດຈາກດັດສະນີຊັບພະຍາກອນມະນຸດ (HAI): ອັດຕາການເຂົ້າຮຽນລວມຊັ້ນມັດທະຍົມ | % | ລະດັບຊາດ/ແຂວງ/ເພດ | 75 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສຶກສາທິການ ແລະ ກິລາ | 60 | 2015 | ການລາຍງານປະຈຳປີຂອງກະຊວງສຶກສາ | ຕົວຊີ້ວັດການຫຼຸດພົ້ນ LDC |
| 39 | 84 | | ອັດຕາການເຂົ້າຮຽນລວມຊັ້ນປະຖົມ | % | ລະດັບຊາດ / ແຂວງ/ເພດ/ພາສາຊົນເຜົ່າ | 110 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສຶກສາທິການ ແລະ ກິລາ | 118.4 | 2015 | ການລາຍງານປະຈຳປີຂອງກະຊວງສຶກສາ | |
| 40 | 85 | | ອັດຕາການເຂົ້າຮຽນລວມຊັ້ນມັດທະຍົມຕົ້ນ | % | | 85 | | | ກະຊວງສຶກສາທິການ ແລະ ກິລາ | 78.1 | 2015 | ການລາຍງານປະຈຳປີຂອງກະຊວງສຶກສາ | ຕົວຊີ້ວັດການຫຼຸດພົ້ນ LDC |
| 41 | 86 | | ອັດຕາການເຂົ້າຮຽນລວມຊັ້ນມັດທະຍົມປາຍ | % | | 60 | | | ກະຊວງສຶກສາທິການ ແລະ ກິລາ | 45.8 | 2015 | ການລາຍງານປະຈຳປີຂອງກະຊວງສຶກສາ | ຕົວຊີ້ວັດການຫຼຸດພົ້ນ LDC |
| | 87 | | ອັດຕາການເຂົ້າຮຽນໃຫມ່ສຸດທິຊັ້ນປີ 1 | | | 98 | | | ກະຊວງສຶກສາທິການ ແລະ ກິລາ | 97.2 | 2015 | ການລາຍງານປະຈຳປີຂອງກະຊວງສຶກສາ | |
| | | ການຮຽນຈົບຊັ້ນ | ອັດຕາການຮຽນຈົບຊັ້ນປະຖົມ | | | | | | | | | | ເບິ່ງຕົວຊີ້ວັດລະດັບໝາກຜົນ 2 |
| | | | ອັດຕາການຮຽນຈົບຊັ້ນມັດທະຍົມຕົ້ນ | | | | | | | | | | ເບິ່ງຕົວຊີ້ວັດລະດັບໝາກຜົນ 2 |
| | | | ອັດຕາການຮຽນຈົບຊັ້ນມັດທະຍົມປາຍ | | | | | | | | | | ເບິ່ງຕົວຊີ້ວັດລະດັບໝາກຜົນ 2 |
| 42 | 88 | ຜົນການຮຽນ | % ນັກຮຽນໃນແຕ່ລະຊັ້ນຮຽນທີ່ສາມາດອ່ານອອກ ແລະ ຄິດໄລ່ເລກຄະນິດໄດ້ຕາມມາດຕະຖານ:<br>– ຊັ້ນປະຖົມ<br>– ຊັ້ນມັດທະຍົມຕົ້ນ | % | ວິຊາ/ລະດັບປະຖົມ/ມັດທະຍົມ | | ເກັບກຳເປັນໄລຍະ | ຄະແນນ ແລະ ຄວາມຖີ່ຂອງການປະເມີນຜົນການຮຽນ (National assessments ASLO/ RIES) | ກະຊວງສຶກສາທິການ ແລະ ກິລາ | | | | |
| | | ຄວາມສະເໝີພາບຍິງ-ຊາຍໃນການສຶກສາ | ອັດຕາສ່ວນການເຂົ້າຮຽນຂອງເດັກຍິງຕໍ່ເດັກຊາຍໃນຊັ້ນປະຖົມ/ມັດທະຍົມຕົ້ນ/ມັດທະຍົມປາຍ/ຊັ້ນສູງ | | | | | | | | | | |
| 43 | 89 | | *ປະຖົມ* | *ຄ່າດັດສະນີ* | *ລະດັບຊາດ/ແຂວງ* | *0.97-1.03* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງສຶກສາທິການ ແລະ ກິລາ* | *0.97* | *2015* | *ບົດລາຍງານປະຈຳປີ ກະຊວງສຶກສາ* | |
| 44 | 90 | | *ມັດທະຍົມຕົ້ນ* | *ຄ່າດັດສະນີ* | *ລະດັບຊາດ/ແຂວງ* | *0.97-1.03* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງສຶກສາທິການ ແລະ ກິລາ* | *0.94* | *2015* | *ບົດລາຍງານປະຈຳປີ ກະຊວງສຶກສາ* | |
| 45 | 91 | | *ມັດທະຍົມປາຍ* | *ຄ່າດັດສະນີ* | *ລະດັບຊາດ/ແຂວງ* | *0.97-1.03* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງສຶກສາທິການ ແລະ ກິລາ* | *0.87* | *2015* | *ບົດລາຍງານປະຈຳປີ ກະຊວງສຶກສາ* | |
| | | | ອັດຕາຜູ້ທີ່ສຳເລັດການສຶກສາຊັ້ນປະຖົມ/ມັດທະຍົມຕົ້ນ/ມັດທະຍົມປາຍແບ່ງຕາມເພດ | | | | | | | | | | |
| 46 | 92 | | *ປະຖົມ* | *ຄ່າດັດສະນີ* | *ລະດັບຊາດ/ແຂວງ* | *0.97-1.03* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງສຶກສາທິການ ແລະ ກິລາ* | *0.97* | *2015* | *ບົດລາຍງານປະຈຳປີ ກະຊວງສຶກສາ* | |
| 47 | 93 | | *ມັດທະຍົມຕົ້ນ* | *ຄ່າດັດສະນີ* | *ລະດັບຊາດ/ແຂວງ* | *0.97-1.03* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງສຶກສາທິການ ແລະ ກິລາ* | *0.94* | *2015* | *ບົດລາຍງານປະຈຳປີ ກະຊວງສຶກສາ* | |
| 48 | 94 | ຄວາມສະເໝີພາບຍິງ-ຊາຍໃນການສຶກສາ | *ມັດທະຍົມປາຍ* | *ຄ່າດັດສະນີ* | *ລະດັບຊາດ/ແຂວງ* | *0.97-1.03* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງສຶກສາທິການ ແລະ ກິລາ* | *0.84* | *2015* | *ບົດລາຍງານປະຈຳປີ ກະຊວງສຶກສາ* | |
| 49 | 95 | ການຮູ້ໜັງສື | ຕົວຊີ້ວັດຈາກ HAI: ອັດຕາການຮູ້ໜັງສືຂອງປະຊາກອນອາຍຸສູງກວ່າ 15 ປີຂຶ້ນໄປ | % | ລະດັບຊາດ/ແຂວງ/ເພດ/ອາຍຸ | 95 | ປະຈຳ 5 ປີ ລວມທັງຄາດຄະເນປະຈຳປີ | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) ແລະ ການສຳຫຼວດ census | ກະຊວງສຶກສາທິການ ແລະ ກິລາ | 81.3 | 2012 | ບົດລາຍງານປະຈຳປີ ກະຊວງສຶກສາ | ຕົວຊີ້ວັດການຫຼຸດພົ້ນ LDC |

| SDG | ລ/ດ | ຜົນຂອງການວັດແທກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ລາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| | | ການຮູ້ໜັງສື | ອັດຕາສ່ວນຂອງຈຳນວນປະຊາກອນທີ່ຢູ່ຕ່ຳກວ່າເສັ້ນຄວາມທຸກຍາກ (%) ແບ່ງຕາມພາກ/ແຂວງ (ອັດຕາສ່ວນປະຊາກອນທຸກຍາກ) | % | ລະດັບຊາດ/ແຂວງ/ຊົນເຜົ່າຕົວເມືອງ/ຊົນນະບົດ/ຄົວເຮືອນທີ່ນຳໂດຍຜູ້ຍິງ/ຄົວເຮືອນທີ່ມີເດັກຕ່ຳກວ່າ 18 ປີ | 10 | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ສູນສະຖິຕິແຫ່ງຊາດ (ກົມສະຖິຕິສັງຄົມ) | 23.2 | 2012-2013 | ສູນສະຖິຕິແຫ່ງຊາດ | ຕົວຊີ້ວັດການຫຼຸດພົ້ນ LDC, ຕົວຊີ້ວັດລະດັບໝາກຜົນ 2 |
| 50 | 96 | ການສຶກສາໃນລະດັບອະຊີວະສຶກສາ | ອັດຕາສ່ວນຜູ້ທີ່ຈົບການສຶກສາຊັ້ນມັດທະຍົມຕົ້ນທີ່ເຂົ້າຮຽນຕໍ່ໃນລະດັບອະຊີວະສຶກສາ | % | ລະດັບຊາດ/ເພດ | 5 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສຶກສາທິການ ແລະ ກິລາ | 2.2 | 2015 | ບົດລາຍງານປະຈຳປີ ກະຊວງສຶກສາ | |
| 51 | 97 | | ອັດຕາສ່ວນ ຂອງຜູ້ທີ່ຈົບການສຶກສາຊັ້ນມັດທະຍົມປາຍທີ່ ເຂົ້າຮຽນຕໍ່ໃນລະດັບອະຊີວະສຶກສາ | % | ລະດັບຊາດ/ເພດ | 60 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສຶກສາທິການ ແລະ ກິລາ | 56 | 2015 | ບົດລາຍງານປະຈຳປີ ກະຊວງສຶກສາ | |
| 52 | 98 | | ຈຳນວນນັກຮຽນທີ່ໄດ້ຮັບການສຶກສາຊັ້ນອະຊີວະ ແລະ ໄດ້ຮັບການຝຶກອົບຮົມວິຊາຊີບ | ຄົນ | ລະດັບຊາດ/ເພດ | 105,000 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສຶກສາທິການ ແລະ ກິລາ | 65,000 | 2015 | ບົດລາຍງານປະຈຳປີ ກະຊວງສຶກສາ | |
| **ໝາກຜົນ 2 ວຽກຈຸດສຸມ 4: ຮັບປະກັນການບໍລິການດ້ານສາທາລະນະສຸກໄດ້ຢ່າງທົ່ວເຖິງ ແລະ ມີຄຸນນະພາບ** | | | | | | | | | | | | | |
| 53 | 99 | ການປະກັນສັງຄົມ ແລະ ສຸຂະພາບ | % ປະຊາກອນທີ່ເຂົ້າຮ່ວມອົງການປະກັນສັງຄົມ ແລະ ສຸຂະພາບ: | % | ລະດັບຊາດ/ແຂວງ/ປະເພດການເຮັດປະກັນ | 80 | ປະຈຳປີ | ກະຊວງສາທາລະນະສຸກ | ກະຊວງສາທາລະນະສຸກ/ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 30.36 | 2015 | ຈາກການສັງລວມຕົວເລກສະຖິຕິ ຣສສ | |
| 54 | 100 | | *ອົງການປະກັນສຸຂະພາບຂອງຊຸມຊົນ* | *ຄົນ* | *ລະດັບຊາດ/ແຂວງ/ປະເພດການເຮັດປະກັນ* | | *ປະຈຳປີ* | *ກະຊວງສາທາລະນະສຸກ* | *ກະຊວງສາທາລະນະສຸກ/ກະຊວງແຮງງານ ແລະ ສະຫວັດດີການສັງຄົມ* | *999,414* | *2015* | ຈາກການສັງລວມຕົວເລກສະຖິຕິ ຣສສ | |
| 55 | 101 | | *ກອງທຶນປະກັນສຸຂະພາບ* | *%* | *ລະດັບຊາດ/ແຂວງ/ປະເພດການເຮັດປະກັນ* | *100* | *ປະຈຳປີ* | *ກະຊວງສາທາລະນະສຸກ* | *ກະຊວງສາທາລະນະສຸກ/ກະຊວງແຮງງານ ແລະ ສະຫວັດດີການສັງຄົມ* | *28* | *2015* | *ບົດສະຫຼຸບປະຈຳປີຂອງກະຊວງສາທາ* | |
| 56 | 102 | | *ອົງການປະກັນສັງຄົມແຫ່ງລັດ (SASS)* | *ຄົນ* | *ລະດັບຊາດ/ແຂວງ/ປະເພດການເຮັດປະກັນ* | | *ປະຈຳປີ* | *ກະຊວງສາທາລະນະສຸກ* | *ກະຊວງສາທາລະນະສຸກ/ກະຊວງແຮງງານ ແລະ ສະຫວັດດີການສັງຄົມ* | *821,979* | *2015* | ຈາກການສັງລວມຕົວເລກສະຖິຕິ ຣສສ | |
| 57 | 103 | | *ອົງການປະກັນສັງຄົມພາກວິສາຫະກິດ (SSO)* | *% ຂອງຫົວໜ່ວຍທຸລະກິດ* | *ລະດັບຊາດ/ແຂວງ/ປະເພດການເຮັດປະກັນ* | *90* | *ປະຈຳປີ* | *ກະຊວງສາທາລະນະສຸກ* | *ກະຊວງສາທາລະນະສຸກ/ກະຊວງແຮງງານ ແລະ ສະຫວັດດີການສັງຄົມ* | *1.17* | *2015* | ຈາກການສັງລວມຕົວເລກສະຖິຕິ ຣສສ | |
| 58 | 106 | | *ການປະກັນໄພພາຍໃຕ້ລະບົບປະກັນໄພພາກເອກະຊົນ* | *ຄົນ* | *ລະດັບຊາດ/ແຂວງ/ປະເພດການເຮັດປະກັນ* | | *ປະຈຳປີ* | *ກະຊວງສາທາລະນະສຸກ* | *ກະຊວງສາທາລະນະສຸກ/ກະຊວງແຮງງານ ແລະ ສະຫວັດດີການສັງຄົມ* | *67,231* | *2015* | ຈາກການສັງລວມຕົວເລກສະຖິຕິ ຣສສ | |
| 59 | 105 | ການປະກັນສຸຂະພາບສຳລັບທຸກຄົນ | ລາຍຈ່າຍສຸຂະພາບ | ໂດລາ/ຄົນ | ລະດັບຊາດ | | ປະຈຳປີ | ບົດລາຍງານຂອງກະຊວງສາທາລະນະສຸກ | ກະຊວງສາທາລະນະສຸກ | | | | |
| | | ສຸຂະພາບເດັກ | ຕົວຊີ້ວັດຂອງດັດສະນີຊັບສິນມະນຸດ (HAI): ອັດຕາການຕາຍຂອງເດັກກຸ່ມ 5 ປີ | | | | | | | | | | ຕົວຊີ້ວັດລະດັບໝາກຜົນ 2 |
| 60 | 106 | ສຸຂະພາບເດັກ | ອັດຕາການຕາຍຂອງເດັກກຸ່ມ 1 ປີ | ຕໍ່ ເດັກເກີດມີຊີວິດ 1000 ຄົນ | ລະດັບຊາດ/ແຂວງ/ຖານະທາງດ້ານເສດຖະກິດ-ສັງຄົມ | 30 | ປະຈຳ 5 ປີ | ການສຳຫຼວດດັດສະນີພາຍສັງຄົມລາວ (LSIS) | ກະຊວງສາທາລະນະສຸກ | 32 | 2015 | ບົດສະຫຼຸບ 5 ປີ ຂອງກະຊວງສາທາ | |
| 61 | 107 | | ອັດຕາການສັກຢາກັນພະຍາດຄໍຕີບໃຫ້ເດັກນ້ອຍ 1 ປີ (%) | % | ລະດັບຊາດ/ແຂວງ/ເມືອງ | | ປະຈຳປີ | ການສຳຫຼວດ/ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | | | | |
| 62 | 108 | | ອັດຕາການສັກຢາກັນໝາກແດງໃຫ້ເດັກນ້ອຍ 1 ປີ (%) | % | ລະດັບຊາດ/ແຂວງ/ເມືອງ | 90 | ປະຈຳປີ | ການສຳຫຼວດ/ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | 82 | 2013 | ບົດສະຫຼຸບ 5 ປີ ຂອງກະຊວງສາທາ | |
| | | ສຸຂະພາບແມ່ | ອັດຕາການຕາຍຂອງແມ່ | | | | | | | | | | ຕົວຊີ້ວັດລະດັບໝາກຜົນ 2 |
| 63 | 109 | | ອັດຕາການເກີດໂດຍມີແພດຊ່ວຍ | % | ລະດັບຊາດ/ແຂວງ/ເມືອງ | 80 | ປະຈຳປີ | ການສຳຫຼວດ/ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ/ສູນສະຖິຕິແຫ່ງຊາດ | 58 | 2015 | ອົງການອະນາໄມໂລກ (WHO) | |
| | 110 | | ອັດຕາສ່ວນແມ່ຍິງນຳໃຊ້ວິທີຄຸມກຳເນີດ | % | ລະດັບຊາດ/ແຂວງ/ຖານະທາງດ້ານເສດຖະກິດ-ສັງຄົມ | 80 | ປະຈຳ 5 ປີ | ການສຳຫຼວດ | ກະຊວງສາທາລະນະສຸກ/ສູນສະຖິຕິແຫ່ງຊາດ | 49 | 2013 | ບົດສະຫຼຸບ 5 ປີ ຂອງກະຊວງສາທາ | |
| 64 | 111 | | ອັດຕາສ່ວນຂອງແມ່ຍິງໃນໄວຈະເລີນພັນ (15-49 ປີ) ທີ່ມີການວາງແຜນຄອບຄົວດ້ວຍວິທີທີ່ທັນສະໄໝ | % | | 60 | ປະຈຳ 5 ປີ | ການສຳຫຼວດ | ກະຊວງສາທາລະນະສຸກ/ສູນສະຖິຕິແຫ່ງຊາດ | 42 | 2011 | ການສຳຫຼວດດັດສະນີພາຍສັງຄົມລາວ (LSIS) | |
| 65 | 112 | | ອັດຕາການເກີດລູກໃນກຸ່ມໄວໜຸ່ມຍິງ 15-19 ປີ | ຕໍ່ 1000 ຄົນ | | 70 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | 94 | 2012 | ການສຳຫຼວດດັດສະນີພາຍສັງຄົມລາວ (LSIS) | |
| | 113 | | ອັດຕາການກວດທ້ອງກ່ອນເກີດຢ່າງຕ່ຳ 1 ຄັ້ງກັບພະນັກງານແພດທີ່ຜ່ານການຝຶກແອບ | % | | 90 | ປະຈຳປີ | ການສຳຫຼວດ/ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ/ສູນສະຖິຕິແຫ່ງຊາດ | 54 | 2011 | ການສຳຫຼວດດັດສະນີພາຍສັງຄົມລາວ (LSIS) | |

| SDG | ລ/ດ | ຜົນຂອງການວັດແທກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| 66 | 114 | ສຸຂະພາບແມ່ | ອັດຕາການກອດທ້ອງກ່ອນເກີດຢ່າງຕໍ່າ 4 ຄັ້ງ ກັບພະນັກງານແພດທີ່ຜ່ານການຝຶກແອບ | % | ລະດັບຊາດ/ແຂວງ/ ຖານະທາງດ້ານ ເສດຖະກິດ-ສັງຄົມ | 75 | ປະຈຳປີ | ການສຳຫຼວດ/ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ/ ສູນສະຖິຕິແຫ່ງຊາດ | 37 | 2011 | ການສຳຫຼວດດັດສະນີໝາຍ ສັງຄົມລາວ (LSIS) | |
| 67 | 115 | ການຄວບຄຸມການລະບາດຂອງເຊື້ອ HIV/AIDS | ຄາດຄະເນຈຳນວນຜູ້ຕິດເຊື້ອ HIV ຕໍ່ 1000 ຄົນ | ຄົນ | ລະດັບຊາດ /ເພດ | 0.26 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | 0.26 | 2011 | ບົດສະຫຼຸບຂອງສູນຕ້ານເອດ | |
| | 116 | ການປ້ອງກັນ HIV | ອັດຕາສ່ວນຂອງປະຊາກອນທີ່ມີຄວາມສ່ຽງ ໄດ້ຮັບການບໍລິການປິ່ນປົວ HIV | % | ລະດັບຊາດ /ເພດ | 80 | ປະຈຳປີ | ລະບົບການເຝົ້າລະວັງການຕິດເຊື້ອ HIV, ໂລກຕິດຕໍ່ທາງເພດສຳພັນ ແລະ ພຶດຕິກຳທີ່ພົວພັນການຕິດເຊື້ອ HIV (IBBS) | ກະຊວງສາທາລະນະສຸກ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | ບໍ່ມີຂໍ້ມູນ | |
| 68 | 117 | ການປິ່ນປົວພະຍາດ HIV | ອັດຕາສ່ວນປະຊາກອນທີ່ຕິດເຊື້ອ HIV ແລ້ວໄດ້ຮັບການປິ່ນປົວແບບ ART (Standard antiretroviral therapy) ຢ່າງຕໍ່ເນື່ອງ | % | ລະດັບຊາດ /ເພດ | 90 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | 33 | 2015 | ບົດສະຫຼຸບຂອງສູນຕ້ານເອດ | |
| 69 | 118 | ການຄວບຄຸມພະຍາດໄຂ້ຍຸງ | ອັດຕາການເປັນໄຂ້ຍຸງ | ຕໍ່ 1,000 ຄົນ | ລະດັບຊາດ /ແຂວງ | 2.5 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | 7.2 | 2015 | ສູນໄຂ້ຍຸງ | |
| | 119 | | ສັດສ່ວນຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີ ທີ່ມີຜົນກວດວ່າເປັນໄຂ້ຍຸງ ໄດ້ຮັບການປິ່ນປົວດ້ວຍຢາ ຮັກສາທີ່ເໝາະສົມ | % | ລະດັບຊາດ | 99 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | 99 | 2015 | ສູນໄຂ້ຍຸງ | |
| 70 | 120 | ການຄວບຄຸມພະຍາດວັນນະໂລກ | ອັດຕາການເປັນວັນນະໂລກ ຕໍ່ປະຊາກອນ 100.000 ຄົນ | ຕໍ່ 100,000 ຄົນ | ລະດັບຊາດ | 357 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | 514 | 2015 | ສູນວັນນະໂລກ | |
| 71 | 121 | | ອັດຕາຄົນເປັນວັນນະໂລກທີ່ກວດພົບແລະໄດ້ຮັບການປິ່ນປົວໂດຍມີແພດຕິດຕາມໂດຍກົງ (DOTS) (%) | % | ລະດັບຊາດ | 70 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | 36.4 | 2015 | ສູນວັນນະໂລກ | |
| 72 | 122 | | ອັດຕາຄົນເປັນວັນນະໂລກ ແລະ ໄດ້ຮັບການປິ່ນປົວໂດຍມີແພດຕິດຕາມໂດຍກົງ (DOTS) (%). | % | ລະດັບຊາດ | 90 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | 90 | 2015 | ສູນວັນນະໂລກ | |
| 73 | 123 | ການເຂົ້າເຖິງນ້ຳທີ່ປອດໄພ ແລະ ການປັບປຸງທາງດ້ານສຸຂາພິບານ | ອັດຕາສ່ວນປະຊາກອນຊົມໃຊ້ນ້ຳສະອາດ (%) | % | ລະດັບແຂວງ | 90 | ປະຈຳ 5 ປີ | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) | ກະຊວງສາທາລະນະສຸກ | 84.71 | 2014 | ບົດສະຫຼຸບ 5 ປີ ຂອງກະຊວງສາທາ | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 5 |
| 74 | 124 | | ອັດຕາສ່ວນປະຊາກອນຊົມໃຊ້ວິດຖ່າຍ (%) | % | ລະດັບແຂວງ | 75 | ປະຈຳ 5 ປີ | ການສຳຫຼວດດັດສະນີໝາຍສັງຄົມລາວ (LSIS) | ກະຊວງສາທາລະນະສຸກ | 67.92 | 2014 | ບົດສະຫຼຸບ 5 ປີ ຂອງກະຊວງສາທາ | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 6 |
| | 125 | ການລົງທຶນໃນວຽກງານນ້ຳ ແລະ ສຸຂາພິບານ | ການລົງທຶນໃນວຽກງານ: | | | | | | | | | | |
| | | | *ການສະໜອງນ້ຳໃນເຂດຕົວເມືອງ* | *ໂດລາ* | *ລະດັບຊາດ/ ຕົວເມືອງ/ ຊົນນະບົດ* | *205,000,000* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງໂຍທາທິການ ແລະ ຂົນສົ່ງ* | *187,022* | *2015* | *ກົມນ້ຳປະປາ, ກະຊວງໂຍທາທິການ ແລະ ຂົນສົ່ງ* | |
| | | | *ສຸຂາພິບານໃນເຂດຕົວເມືອງ* | *ໂດລາ* | *ລະດັບຊາດ/ ຕົວເມືອງ/ ຊົນນະບົດ* | | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງໂຍທາທິການ ແລະ ຂົນສົ່ງ* | | | | |
| | | | *ການສະໜອງນ້ຳໃນເຂດຊົນນະບົດ* | ໂດລາ | ລະດັບຊາດ/ ຕົວເມືອງ/ ຊົນນະບົດ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງໂຍທາທິການ ແລະ ຂົນສົ່ງ | | | | |
| | | | *ສຸຂາພິບານໃນເຂດຊົນນະບົດ* | ໂດລາ | ລະດັບຊາດ/ ຕົວເມືອງ/ ຊົນນະບົດ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງໂຍທາທິການ ແລະ ຂົນສົ່ງ | | | | |
| **ໝາກຜົນ 2 ວຽກຈຸດສຸມ 5 - ການບໍລິການທາງດ້ານການປົກປ້ອງສັງຄົມໄດ້ຮັບການຍົກລະດັບ ແລະ ທຸກຄົນໄດ້ເຂົ້າເຖິງຢ່າງກວ້າງຂວາງ** | | | | | | | | | | | | | |
| 75 | 126 | ການປະກັນສັງຄົມ | ແຮງງານທີ່ເຮັດວຽກໃນຂະແໜງທີ່ບໍ່ແມ່ນທາງການທີ່ໄດ້ຮັບການບໍລິການທາງດ້ານການປະກັນສັງຄົມ | ຄົນ | ລະດັບຊາດ/ ຂະແໜງການ/ເພດ | 10,000 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 2,986 | 2015 | ຫ້ອງການກອງທຶນປະກັນສັງຄົມແຫ່ງຊາດ | |
| | 127 | ການປົກປ້ອງແມ່ຍິງ &ເດັກນ້ອຍ | ຈຳນວນບ້ານທີ່ໄດ້ສ້າງ ຕັ້ງຕາໜ່າງການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກນ້ອຍ | ບ້ານ | ລະດັບຊາດ /ແຂວງ | 800 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 496 | 2015 | ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານ ຮສສ 2015-2016 | |
| | 128 | | ຈຳນວນນັກສັງຄົມສົງເຄາະທີ່ມີເງື່ອນໄຂຄົບຖ້ວນ | ຄົນ | ລະດັບຊາດ /ແຂວງ | 250 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | 36 | 2015 | ກົມສັງຄົມສົງເຄາະ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | |
| | 129 | ການປົກປ້ອງແມ່ຍິງ &ເດັກນ້ອຍ | ຈຳນວນໜ່ວຍງານປົກປ້ອງເດັກນ້ອຍທີ່ສ້າງຕັ້ງຂຶ້ນ | ຄະນະ | ລະດັບຊາດ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ຂັ້ນສູນກາງ: 1 ຂັ້ນແຂວງ: 11 ຂັ້ນເມືອງ: 35 | 2015 | ກົມສັງຄົມສົງເຄາະ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | |
| | 130 | ການເຂົ້າເຖິງຄວາມຍຸຕິທຳຂອງແມ່ຍິງ | ຈຳນວນການຮ້ອງທຸກຕໍ່ສານຈາກສະຫະພັນແມ່ຍິງລາວ | ຈຳນວນ | ລະດັບຊາດ /ແຂວງ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ສະຫະພັນແມ່ຍິງລາວ | | | | |

| SDG | ລ/ດ | ຜົນຂອງການວັດແທກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| **ໝາກຜົນ 2 ວຽກຈຸດສຸມ 6 - ພັດທະນາ ແລະ ປົກປັກຮັກສາຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຊາດ** | | | | | | | | | | | | | |
| | 131 | ສະຖານທີ່ດ້ານວັດທະນະທຳ ແລະ ທ່ອງທ່ຽວ | ຈຳນວນບ້ານວັດທະນະທຳໃໝ່ | ບ້ານ | ລະດັບຊາດ | 2,000 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | 4,821 | 2015 | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | |
| | 132 | | ຈຳນວນແຫຼ່ງມໍລະດົກດ້ານວັດທະນະທຳລະດັບຊາດແຫ່ງໃໝ່ | ຈຳນວນ | ລະດັບຊາດ | 5 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | 15 | 2015 | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 7 |
| | 133 | | ຈຳນວນນັກທ່ອງທ່ຽວເຂົ້າມາໃນ ສປປ ລາວ | ເທື່ອຄົນ | ລະດັບຊາດ/ ປາຍທາງທີ່ໄດ້ລົງທະບຽນ | 6,000,000 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | 4,684,429 | 2015 | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | |
| | 134 | | ລາຍຮັບຈາກການທ່ອງທ່ຽວ | ໂດລາ | ລະດັບຊາດ | 953,000,000 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | 725,365,681 | 2015 | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ | |
| **ໝາກຜົນ 2 ວຽກຈຸດສຸມ 7 - ຮັບປະກັນສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳແລະ ສີວິໄລ** | | | | | | | | | | | | | |
| | 135 | ຄວາມສາມັກຄີ ແລະ ປອງດອງ | ອັດຕາສ່ວນຂອງເມືອງໃນຊົນນະບົດທີ່ໄດ້ຮັບຮູ້ເຖິງຂໍ້ມູນ ກ່ຽວກັບລະບຽບກົດໝາຍ, ແນວທາງ ແລະ ນະໂຍບາຍຂອງພັກ ແລະ ລັດຖະບານ | % | ລະດັບຊາດ | | ປະຈຳປີ | ຂໍ້ມູນຈາກການລາຍງານ | | | | | |
| | 136 | | % ແລະ ຈຳນວນກົດໝາຍທັງໝົດທີ່ຜ່ານສະພາຮັບຮອງ ແລະ ໄດ້ຮັບການຈັດຕັ້ງປະຕິບັດ | % ຈຳນວນ | ລະດັບຊາດ | | ປະຈຳປີ | ການປະເມີນກົດໝາຍ | | | | | |
| | | | ການເຂົ້າເຖິງການບໍລິການດ້ານກົດໝາຍຂອງແມ່ຍິງ | | | | | | | | | | |
| | 137 | | ຈຳນວນຄຳຮ້ອງທຸກທີ່ໄດ້ຮັບການແກ້ໄຂໂດຍສານ ແລະ ໜ່ວຍງານໄກ່ເກ່ຍຂັ້ນບ້ານ | ຈຳນວນ | ລະດັບຊາດ | | ປະຈຳປີ | ສານປະຊາຊົນສູງສຸດ/ກະຊວງຍຸຕິທຳ | | | | | |
| | 138 | ພັນທະທາງດ້ານການຈັດຕັ້ງປະຕິບັດເລື່ອງມີການປົກປ້ອງສິດທິມະນຸດ | ອັດຕາສ່ວນຂອງຂໍ້ສະເໜີແນະຈາກຜົນການທົບທວນສະຖານະສິດທິມະນຸດດ້ວຍກົນໄກ Universal Periodic Review ຄັ້ງທີ 2<br>ທີ່ໄດ້ຖືກນຳມາຈັດຕັ້ງປະຕິບັດ | % | ລະດັບຊາດ | | ປະຈຳປີ | ບົດລາຍງານສຳລັບຜົນການທົບທວນສະຖານະສິດທິມະນຸດດ້ວຍກົນໄກ Universal Periodic Review | | | | | |
| 78 | 139 | | ອັດຕາສ່ວນຂອງເດັກນ້ອຍອາຍຸຕ່ຳກວ່າ 5 ປີ ທີ່ໄດ້ຖືກຈົດທະບຽນການເກີດໂດຍອົງການກ່ຽວຂ້ອງ | % | ລະດັບຊາດ/ເພດ | | ປະຈຳ 5 ປີ | ການສຳຫຼວດດັດສະນີໝາຍທາງດ້ານສັງຄົມ(LSIS)/ການສຳຫຼວດສຸຂະພາບແມ່ ແລະ ເດັກ (MICS)/ ການສຳຫຼວດ Census | | | | | |
| 79 | 140 | ການຕ້ານການຄ້າມະນຸດ | ຈຳນວນຜູ້ທີ່ຖືກຈັບເນື່ອງຈາກກະທຳຜິດທາງດ້ານການຄ້າມະນຸດ | ຈຳນວນ | ລະດັບຊາດ/ເພດ/ ອາຍຸ | | ປະຈຳປີ | ຂໍ້ມູນຈາກການລາຍງານ | | | | | |
| 80 | 141 | | ຈຳນວນຜູ້ເຄາະຮ້າຍຈາກການຄ້າມະນຸດ ຕໍ່ 100,000 ຄົນ | ຈຳນວນ | ລະດັບຊາດ/ເພດ/ ອາຍຸ | | ປະຈຳປີ | ຂໍ້ມູນຈາກການລາຍງານ | | | | | |
| **ໝາກຜົນ 3 - ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມໄດ້ຮັບການປົກປັກຮັກສາ ແລະ ນຳໃຊ້ຢ່າງມີປະສິດທິຜົນຕາມທິດສີຂຽວ ແລະ ຍືນຍົງ; ກຽມພ້ອມຮັບມືກັບໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ຢ່າງມີປະສິດທິພາບ ພ້ອມທັງກໍ່ສ້າງຄືນສິ່ງທີ່ຖືກທຳລາຍ ແລະ ໄດ້ຮັບຜົນກະທົບຈາກໄພທຳມະຊາດໃຫ້ດີກວ່າເກົ່າ** | | | | | | | | | | | | | |
| 81 | 142 | **ຕົວຊີ້ວັດໝາກຜົນ 3** | ອັດຕາສ່ວນເນື້ອທີ່ປ່າໄມ້ທົ່ວປະເທດ | % | ລະດັບຊາດ | 70 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 42 | 2010 | ການສຳຫຼວດເນື້ອທີ່ປ່າໄມ້ຂອງກະຊວງກະສິກຳ | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 12 |
| | 143 | | ດັດສະນີຄວາມບອບບາງທາງດ້ານເສດຖະກິດ (EVI) | ດັດສະນີ | ລະດັບຊາດ | 32 | | | | 36.2 | 2015 | | |
| 82 | 144 | ຜົນກະທົບຈາກໄພພິບັດ | ຈຳນວນຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ຕໍ່ 100,000 ຄົນ | ຄົນ | | | | | | 10,928 | 2015 | ບົດສະຫຼຸບການຈັດຕັ້ງປະຕິບັດວຽກງານ ຮສສ 2015-2016 | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 14 ແລະ ຕົວຊີ້ວັດລະດັບໝາກຜົນ 3 |
| **ໝາກຜົນ 3 ວຽກຈຸດສຸມ 1 - ການປົກປັກຮັກສາສະພາບແວດລ້ອມ ແລະ ນຳໃຊ້ຊັບພະຍາກອນທຳມະຊາດໃຫ້ມີຄວາມຍືນຍົງ** | | | | | | | | | | | | | |
| 83 | 145 | ການປ້ອງກັນປ່າໄມ້ | ເນື້ອທີ່ປ່າຜະລິດ ທີ່ໄດ້ຮັບການຢັ້ງຢືນ ຈາກ FSC<br>ເນື້ອທີ່ປ່າຜະລິດ ທີ່ໄດ້ຮັບການອະນຸຍາດ ຈາກ FLEGT | ເຮັກຕາ | ລະດັບຊາດ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງກະສິກຳ ແລະ ປ່າໄມ້ | 81,600 | 2015 | ກະຊວງກະສິກຳ ແລະ ປ່າໄມ້ | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 8 |
| | 146 | ການສຳປະທານທີ່ມີປະໂຫຍດຢ່າງທົ່ວເຖິງ | ຈຳນວນໂຄງການທີ່ໄດ້ຮັບການປະເມີນຜົນ IEE & EIA | ຈຳນວນ | ລະດັບຊາດ | | ປະຈຳປີ | ການປະເມີນສັນຍາສຳປະທານ | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 399 | 2015 | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 9 |
| | 147 | ການຄຸ້ມຄອງທີ່ດິນ | ການຈັດສັນການນຳໃຊ້ທີ່ດິນໃນຂອບເຂດທົ່ວປະເທດ | | | | | | | | | | |
| | | | *ຂັ້ນແຂວງ* | *ແຂວງ* | *ລະດັບຊາດ* | *18* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ* | *0* | *2015* | *ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ* | *ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 10* |
| | | | *ຂັ້ນເມືອງ* | *ເມືອງ* | *ລະດັບຊາດ* | *93* | *ປະຈຳປີ* | *ຂໍ້ມູນຈາກການລາຍງານ* | *ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ* | *55* | *2015* | *ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ* | *ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 10* |

| SDG | ລ/ດ | ຜົນຂອງການວັດແທກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| | 148 | ການເຕີບໂຕທີ່ມີຄວາມທົນທານ ແລະ ເປັນການເຕີບໂຕສີຂຽວ | ຈຳນວນເມືອງທີ່ສຳເລັດການສ້າງກອບດຳເນີນງານ ແລະ ກອບຕິດຕາມຂອງເມືອງລຽບຕາມເສັ້ນທາງຫຼວງແຫ່ງຊາດ ເລກທີ 13 ແລະ ລຽບຕາມລຳແມ່ນ້ຳຂອງ ເພື່ອສ້າງເປັນເມືອງ ສີຂຽວ ແລະ ສະອາດ | ເມືອງ | ລະດັບຊາດ | 10 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ/ ກະຊວງໂຍທາທິການ ແລະ ຂົນສົ່ງ | 0 | ບໍ່ມີ | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ/ ກະຊວງໂຍທາທິການ ແລະ ຂົນສົ່ງ | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 11 |
| | | ປ່າປົກຫຸ້ມ | ອັດຕາສ່ວນເນື້ອທີ່ປ່າໄມ້ທົ່ວປະເທດ | | | | | | | | | | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 12 ແລະ ຕົວຊີ້ວັດລະດັບໝາກຜົນ 3 |
| 84 | 149 | ຊີວະນາໆພັນ | ຈຳນວນຊີວະນາໆພັນທີ່ໃກ້ຈະສູນພັນ | ຊະນິດ | ລະດັບຊາດ | | ປະຈຳປີ | ບັນຊີແດງ ຂອງອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN) | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ | 212 | 2015 | ບົດສະຫຼຸບປະຈຳປີ | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 13 |
| | | | *ສັດລ້ຽງລູກດ້ວຍນົມ* | *ຊະນິດ* | *ລະດັບຊາດ* | | *ປະຈຳປີ* | *ບັນຊີແດງ ຂອງອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN)* | *ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ* | *45* | *2015* | *ບົດສະຫຼຸບປະຈຳປີ* | |
| | | | *ສັດເລືອຄານ* | *ຊະນິດ* | *ລະດັບຊາດ* | | *ປະຈຳປີ* | *ບັນຊີແດງ ຂອງອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN)* | *ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ* | *17* | *2015* | *ບົດສະຫຼຸບປະຈຳປີ* | |
| | | | *ສັດປີກ ຫຼື ນົກ* | *ຊະນິດ* | *ລະດັບຊາດ* | | *ປະຈຳປີ* | *ບັນຊີແດງ ຂອງອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN)* | *ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ* | *24* | *2015* | *ບົດສະຫຼຸບປະຈຳປີ* | |
| | | | *ສັດນ້ຳ* | *ຊະນິດ* | *ລະດັບຊາດ* | | *ປະຈຳປີ* | *ບັນຊີແດງ ຂອງອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN)* | *ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ* | *55* | *2015* | *ບົດສະຫຼຸບປະຈຳປີ* | |
| | | | *ສັດເຄິ່ງບົກເຄິ່ງນ້ຳ* | *ຊະນິດ* | *ລະດັບຊາດ* | | *ປະຈຳປີ* | *ບັນຊີແດງ ຂອງອົງການສາກົນເພື່ອການອະນຸລັກທຳມະຊາດ (IUCN)* | *ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ* | *9* | *2015* | *ບົດສະຫຼຸບປະຈຳປີ* | |
| **ໝາກຜົນ 3 ວຽກຈຸດສຸມ 2 - ກຽມຄວາມພ້ອມໃນການຮັບມືໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ** | | | | | | | | | | | | | |
| | | ຜົນກະທົບຈາກໄພພິບັດ | ຈຳນວນຜູ້ທີ່ໄດ້ຮັບຜົນກະທົບຈາກໄພພິບັດ ຕໍ່ 100,000 ຄົນ | ຄົນ | | | | | | | | | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 14 ແລະ ຕົວຊີ້ວັດລະດັບໝາກຜົນ 3 |
| **ໝາກຜົນ 3 ວຽກຈຸດສຸມ 3 - ຫຼຸດຜ່ອນຄວາມບໍ່ມີສະຖຽນລະພາບຂອງການຜະລິດກະສິກຳທີ່ເກີດຈາກຜົນກະທົບຂອງໄພພິບັດ** | | | | | | | | | | | | | |
| | 150 | ສະຖຽນລະພາບທາງດ້ານການຜະລິດກະສິກຳ | ຕົວຊີ້ວັດຈາກ EVI: ດັດສະນີສະຖຽນລະພາບທາງດ້ານການຜະລິດກະສິກຳ | ຄ່າດັດສະນີ | ລະດັບຊາດ | | ປະຈຳປີ | ນຳໃຊ້ແຫຼ່ງຂໍ້ມູນໃນຄູ່ມືແນະນຳ, ເອກະສານຊ້ອນທ້າຍ 1 | ສູນສະຖິຕິແຫ່ງຊາດ | | | | ຕົວຊີ້ວັດກ່ຽວກັບການເຕີບໂຕສີຂຽວ 15 ແລະ ຕົວຊີ້ວັດການຫຼຸດພົ້ນ LDC |
| **ວຽກຈຸດສຸມທີ່ພົວພັນກັບຫຼາຍຂະແໜງການ** | | | | | | | | | | | | | |
| **ວຽກຈຸດສຸມທີ່ພົວພັນກັບຫຼາຍຂະແໜງການ - ເພີ່ມທະວີປະສິດທິພາບຂອງການຄຸ້ມຄອງ ແລະ ບໍລິຫານລັດ** | | | | | | | | | | | | | |
| | 151 | ການຄຸ້ມຄອງ ແລະ ບໍລິຫານລັດໄດ້ຮັບການປັບປຸງໃຫ້ດີຂຶ້ນ | ອັດຕາສ່ວນຂອງເມືອງທີ່ເປັນເມືອງ 3 ສ້າງ | % | ລະດັບຊາດ | | ປະຈຳປີ | ຂໍ້ມູນຈາກການລາຍງານ | | | | | |
| | 152 | | ອັດຕາສ່ວນຂອງເມືອງທີ່ສຳເລັດການຝຶກອົບຮົມກ່ຽວກັບນະໂຍບາຍ 3 ສ້າງ | % | ລະດັບຊາດ | | ປະຈຳປີ | ຂໍ້ມູນຈາກການລາຍງານ | | | | | |
| **ວຽກຈຸດສຸມທີ່ພົວພັນກັບຫຼາຍຂະແໜງການ - ສົ່ງເສີມຄວາມຮູ້ພູມປັນຍາໃສ່ການຄົ້ນຄ້ວາ, ການພັດທະນາວິທະຍາ ສາດ, ການຄຸ້ມຄອງ ແລະ ນຳໃຊ້ເຕັກໂນໂລຊີ, ນະວັດຕະກຳ ແລະ ການສື່ສານ** | | | | | | | | | | | | | |
| 85 | 153 | ການເຂົ້າເຖິງຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີການສື່ສານໂທລະຄົມມະນາຄົມ (ICT) | % ຈຳນວນປະຊາກອນທີ່ລົງທະບຽນໃຊ້ອິນເຕີເນັດ – ຜູ້ທີ່ໃຊ້ອິນເຕີເນັດທີ່ຕໍ່ຈາກສາຍດິນ ແລະ ໃຊ້ອິນເຕີເນັດແບບບໍ່ມີສາຍ | % | ລະດັບຊາດ | 30 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ | 7 | 2015 | ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ | |
| 86 | 154 | | % ຂອງປະຊາກອນທີ່ລົງທະບຽນໃຊ້ໂທລະສັບມືຖື | % | ລະດັບຊາດ | 100 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ | 57 | 2015 | ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ | |
| 87 | 155 | | ສັດສ່ວນຂອງປະຊາກອນທີ່ລົງທະບຽນນຳໃຊ້ໂທລະສັບຕັ້ງໂຕະ ແລະ ໂທລະສັບບໍ່ມີສາຍ | % | ລະດັບຊາດ | 20 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ | 14 | 2015 | ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ | |
| **ວຽກຈຸດສຸມທີ່ພົວພັນກັບຫຼາຍຂະແໜງການ - ສົ່ງເສີມ ແລະ ພັດທະນາ ແມ່ຍິງ, ເຍົາວະຊົນ ແລະ ໄວໜຸ່ມ** | | | | | | | | | | | | | |
| 88 | 156 | ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ຄວາມສະເໝີພາບຍິງ-ຊາຍ | % ແມ່ຍິງທີ່ເຮັດວຽກຢູ່ໃນຕຳແໜ່ງຜູ້ຕັດສິນ / ຕຳແໜ່ງທີ່ວຫນ້າ | % | ລະດັບຊາດ / ແຂວງ/ເມືອງ | >15 | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງພາຍໃນ | 13.34 | 2015 | ສະຖິຕິລັດຖະກອນ 2015 | |
| 89 | 157 | | % ແມ່ຍິງໃນສະພາແຫ່ງຊາດ | % | ລະດັບຊາດ | 30 | ປະຈຳປີ | ຂໍ້ມູນຈາກການລາຍງານ | ສະພາແຫ່ງຊາດ | 27.5 | 2015 | ສະພາແຫ່ງຊາດ | |
| 90 | 158 | | ອັດຕາສ່ວນຂອງແມ່ຍິງທີ່ເປັນເຈົ້າຂອງທຸລະກິດ/ວິສາຫະກິດ | % | ລະດັບຊາດ | 48 | ເກັບກຳເປັນໄລຍະ | ການສຳຫຼວດ | ກະຊວງອຸດສາຫະກຳ ແລະ ການຄ້າ | 45 | 2015 | ກະຊວງອຸດສາຫະກຳ ແລະ ການຄ້າ | |
| | | | ຕົວຊີ້ວັດຄວາມສະເໝີພາບລະຫວ່າງເພດໃນການສຶກສາ | | | | | | | | | | ເບິ່ງໝາກຜົນ 2, ວຽກຈຸດສຸມ 3 |

| SDG | ລ/ດ | ຜົນຂອງການຈັດແຫກ | ຕົວຊີ້ວັດ | ຫົວໜ່ວຍ | ແບ່ງຕາມ | ຄາດໝາຍ | ຄວາມຖີ່ໃນການເກັບກຳຂໍ້ມູນ | ແຫຼ່ງຂໍ້ມູນ | ພາກສ່ວນຮັບຜິດຊອບ | ຂໍ້ມູນປີຖານ | ປີຖານ | ແຫຼ່ງຂໍ້ມູນປີຖານ | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|---|---|
| | | | ຕົວຊີ້ວັດຄວາມສະເໝີພາບລະຫວ່າງເພດໃນການຈ້າງງານ | | | | | | | | | | ເບິ່ງໝາກຜົນ 1, ວຽກຈຸດສຸມ 5 |
| 91 | 159 | | ອັດຕາສ່ວນຂອງເວລາທີ່ໃຊ້ໃນການເຮັດວຽກບ້ານ ແລະ ເບິ່ງແຍງບ້ານ ແບ່ງຕາມເພດ, ອາຍຸ ແລະ ທີ່ຕັ້ງ | % | ລະດັບຊາດ/ເພດ/ທີ່ຕັ້ງ | | ປະຈຳ 5 ປີ | ການສຳຫຼວດການໃຊ້ຈ່າຍ ແລະ ການຊົມໃຊ້ (LECS) | ສູນສະຖິຕິແຫ່ງຊາດ | | | | |
| 92 | 160 | | ອັດຕາສ່ວນແມ່ຍິງຖືພາທີ່ຍັງໜຸ່ມນ້ອຍຕໍ່ແມ່ຍິງຖືພາທັງໝົດ | % | ລະດັບຊາດ | | ປະຈຳປີ | ຂໍ້ມູນຈາກການລາຍງານ | ກະຊວງສາທາລະນະສຸກ | | | | |

**KEY for NSEDP M&E Framework**

Blue shaded cells represent indicators that are linked to LDC graduation criteria.

Grey cells represent indicators that appear again under another output. These indicators are therefore relevant to more than one output.

# ເອກະສານຊ້ອນທ້າຍ 2: ຕາຕະລາງສັງລວມຕົວເລກການຈັດຕັ້ງປະຕິບັດຄາດໝາຍແຜນການ 5 ປີ ຄັ້ງທີ VII (2011-2015)

| ລ/ດ | ລາຍການ | ຫົວໜ່ວຍ | ປະຕິບັດສົກປີ 2010-2011 | ປະຕິບັດສົກປີ 2011-2012 | ປະຕິບັດສົກປີ 2012-2013 | ປະຕິບັດສົກປີ 2013-2014 | ປະຕິບັດສົກປີ 2014-2015 | ລວມ 5 ປີ | ສະເລ່ຍ 5 ປີ | ສົມທຽບ | ຄາດໝາຍແຜນການ 5 ປີ |
|---|---|---|---|---|---|---|---|---|---|---|---|
| 1 | 2 | 3 | 4 | 5 | 6 | 7 | 8 | 9 | 10 | 11 | 12 |
| I. | **ດ້ານການເຕີບໂຕເສດຖະກິດ** | | | | | | | | | | |
| 1 | ອັດຕາການຂະຫຍາຍຕົວຂອງGDP | % | 8.1 | 8.3 | 8 | 7.8 | 7.5 | | 7.94 | | >8 |
| | - ກະສິກຳ-ປ່າໄມ້ | % | 2.9 | 2.8 | 3.1 | 3 | 3 | | 2.96 | | 3.5 |
| | - ອຸດສະຫະກຳ | % | 15.8 | 14.4 | 7.4 | 8.5 | 8.9 | | 11.00 | | 15 |
| | - ບໍລິການ | % | 7.8 | 8.1 | 9.7 | 9.3 | 9.1 | | 8.80 | | 6.5 |
| 2 | ລວມຍອດຜະລິດຕະພັນພາຍໃນ (GDP) | ຕື້ກີບ | 62,458.00 | 70,343.00 | 80,199.00 | 90,823.12 | 102,320.00 | **406,143.12** | 81,228.62 | | 104,000 |
| | ລວມຍອດຜະລິດຕະພັນພາຍໃນ (GDP) | ລ້ານໂດລາ | 7,771.95 | 8,781.10 | 10,193.17 | 11,305.98 | 12,596.10 | **50,677.49** | 10,129.66 | | |
| 3 | ໂຄງປະກອບ | % | 100.00 | 100.00 | 100.00 | 100.00 | 100.00 | | 100.00 | | 100 |
| | - ກະສິກຳ-ປ່າໄມ້ | % | 27.90 | 26.70 | 25.20 | 24.80 | 23.70 | | 25.66 | | 23 |
| | - ອຸດສະຫະກຳ | % | 26.90 | 29.60 | 28.00 | 27.50 | 29.10 | | 28.22 | | 39 |
| | - ບໍລິການ | % | 45.20 | 43.70 | 46.80 | 47.70 | 47.20 | | 46.12 | | 38 |
| 4 | ລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວຄົນ | ໂດລາ | 1,217.00 | 1,349.00 | 1,534.00 | 1,671.00 | 1,970.00 | | | | 1,700 |
| II. | **ການລົງທຶນທັງໝົດ** | **ຕື້ກີບ** | **28,663.23** | **36,225.52** | **45,198.21** | **94,611.60** | **44,359.03** | **249,057.59** | **49,811.52** | **196.11%** | **127,000.00** |
| 1 | ການລົງທຶນຈາກງົບປະມານພາຍໃນ | ຕື້ກີບ | 1,753.23 | 2,139.07 | 2,939.64 | 3,057.13 | 3,424.93 | **13,314.00** | 2,662.80 | 98.62% | 12000-15000 |
| 2 | ການລົງທຶນຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມ | ຕື້ກີບ | 5,062.89 | 5,639.55 | 6,097.63 | 4,819.92 | 5,361.27 | **26,981.26** | 5,396.25 | | 30000-33000 |
| | | *ໂດລາ* | *630.00* | *704.00* | *775.00* | *600.00* | *660.00* | *3,369.00* | *673.80* | *91.05%* | *3500-3900* |
| 3 | ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ | ຕື້ກີບ | 15,348.70 | 21,520.00 | 24,388.00 | 77,930.40 | 28,081.73 | **167,268.83** | 33,453.77 | 247.81% | 64000-71000 |
| 4 | ການລົງທຶນຈາກສິນເຊື່ອ | ຕື້ກີບ | 6,498.41 | 6,926.90 | 11,772.94 | 8,804.15 | 7,491.10 | **41,493.50** | 8,298.70 | 307.36% | 12000-15000 |
| III. | ດ້ານການເງິນ | | | | | | | | | | |
| 1 | ລາຍຮັບທັງໝົດ | ຕື້ກີບ | 14,310.00 | 17,263.00 | 20,176.00 | 23,331.00 | 24,468.00 | **99,548.00** | 19,909.60 | | |
| | - ລາຍຮັບພາຍໃນ | ຕື້ກີບ | 10,601.00 | 12,698.00 | 15,264.00 | 18,161.00 | 19,923.00 | **76,647.00** | 15,329.40 | | |
| 2 | ລາຍຈ່າຍທັງໝົດ | ຕື້ກີບ | 15,997.00 | 19,115.00 | 26,269.00 | 28,160.00 | 29,097.00 | **118,638.00** | 23,727.60 | | |
| 3 | ດຸ່ນງົບປະມານ | ຕື້ກີບ | (1,687.00) | (1,852.00) | (6,093.00) | (4,829.00) | (4,629.00) | **(19,090.00)** | (3,818.00) | | |
| IV. | **ດ້ານເງິນຕາ** | | | | | | | | | | |
| 1 | ອັດຕາເງິນເຟີ້ | % | 7.42 | 5.12 | 5.64 | 5.16 | 1.68 | | 5.00 | | <8 |
| 2 | ອັດຕາແລກປ່ຽນ | | | | | | | | | | |
| | - ເງິນກີບທຽບໃສ່ໂດລາ | ກີບ/ໂດລາ | 8,036.34 | 8,010.73 | 7,867.92 | 8,033.20 | 8,123.15 | | 8,014.27 | | 8500 |
| | + ອັດຕາປ່ຽນແປງ | % | 4.16% | 0.32% | 1.82% | -2.06% | -1.11% | | 0.63% | | -/+5 |
| | - ເງິນກີບທຽບໃສ່ບາດ | ກີບ/ບາດ | 266.51 | 258.13 | 259.32 | 251.13 | 245.52 | | 256.12 | | |
| | + ອັດຕາປ່ຽນແປງ | % | -3.39% | 3.25% | -0.46% | 3.26% | 2.29% | | 0.99% | | -/+5 |
| 3 | ອັດຕາເພີ່ມປະລິມານເງິນລວມ (M2) | % | 37.94% | 28.01% | 20.61% | 27.14% | 20.66% | | 26.87% | | |
| 4 | ຄັງສຳຮອງເງິນຕາຕ່າງປະເທດ | ລ້ານໂດລາ | 718.10 | 658.57 | 583.44 | 834.70 | 798.20 | | | | |
| | - ຄັງສຳຮອງເງິນຕາຕ່າງປະເທດກຸ້ມການນຳເຂົ້າ | ເດືອນ | ຄັງສຳຮອງເງິນຕາຕ່າງປະເທດກຸ້ມການນຳເຂົ້າ ສະເລ່ຍຕໍ່ປີ 5 ເດືອນ | | | | | | | | >6 |
| V. | **ດ້ານການຄ້າ** | | | | | | | | | | |
| | ມູນຄ່າການສົ່ງອອກ | ລ້ານໂດລາ | 2,027.15 | 1,696.44 | 3,645.86 | 3,433.71 | 3,426.07 | **14,229.23** | 2,845.85 | | |
| | *ອັດຕາການຂະຫຍາຍຕົວຕໍ່ປີ* | | *13.32%* | *-16.31%* | *114.91%* | *-5.82%* | *-0.22%* | **105.87%** | *21.17%* | | |

| ລ/ດ | ລາຍການ | ຫົວໜ່ວຍ | ປະຕິບັດສົກປີ 2010-2011 | ປະຕິບັດສົກປີ 2011-2012 | ປະຕິບັດສົກປີ 2012-2013 | ປະຕິບັດສົກປີ 2013-2014 | ປະຕິບັດສົກປີ 2014-2015 | ລວມ 5 ປີ | ສະເລ່ຍ 5 ປີ | ສົມທຽບ | ຄາດໝາຍແຜນການ 5 ປີ |
|---|---|---|---|---|---|---|---|---|---|---|---|
| | ມູນຄ່າການນຳເຂົ້າ | ລ້ານໂດລາ | 2,324.58 | 2,566.78 | 3,649.75 | 4,680.84 | 4,407.72 | **17,629.67** | 3,525.93 | | |
| | *ອັດຕາການຂະຫຍາຍຕົວຕໍ່ປີ* | | *39.12%* | *10.42%* | *42.19%* | *28.25%* | *-5.83%* | *114.14%* | *22.83%* | | |
| | ດຸ່ນການຄ້າ | ລ້ານໂດລາ | (297.43) | (870.34) | (3.89) | (1,247.13) | (981.65) | **(3,400.44)** | (680.09) | | |
| * | **ສົມທຽບຕໍ່ GDP** | | | | | | | | | | |
| I | ການລົງທຶນທັງໝົດຕໍ່ GDP | % | 45.89% | 51.50% | 56.36% | 104.17% | 43.35% | **61.32%** | | | 32 |
| 1 | ການລົງທຶນຈາກງົບປະມານພາຍໃນ/ລົງທຶນທັງໝົດ | % | 6.12% | 5.90% | 6.50% | 3.23% | 7.72% | **5.35%** | | | 10-12 |
| 2 | ການລົງທຶນຈາກການຊ່ວຍເຫຼືອລ້າ ແລະ ກູ້ຢືມ/ລົງທຶນທັງໝົດ | % | 17.66% | 15.57% | 13.49% | 5.11% | 12.09% | **10.85%** | | | 24-26 |
| 3 | ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ/ລົງທຶນທັງໝົດ | % | 53.55% | 59.41% | 53.96% | 82.63% | 63.31% | **67.24%** | | | 50-56 |
| 4 | ການລົງທຶນຈາກສິນເຊື່ອ/ລົງທຶນທັງໝົດ | % | 22.67% | 19.12% | 26.05% | 9.33% | 16.89% | **16.68%** | | | 10-12 |
| II | **ການເງິນຕໍ່ GDP** | | | | | | | | | | |
| 1 | ລາຍຮັບທັງໝົດ | % | 22.91% | 24.54% | 25.16% | 25.69% | 23.91% | **24.51%** | | | 19-21 |
| | - ລາຍຮັບພາຍໃນ | % | 16.97% | 18.05% | 19.03% | 20.00% | 19.47% | **18.87%** | | | |
| 2 | ລາຍຈ່າຍທັງໝົດ | % | 25.61% | 27.17% | 32.75% | 31.01% | 28.44% | **29.21%** | | | 22-25 |
| 3 | ດຸ່ນງົບປະມານ | % | -2.70% | -2.63% | -7.60% | -5.32% | -4.52% | **-4.70%** | | | 3-5 |
| III | **ການຄ້າຕໍ່ GDP** | | | | | | | | | | |
| | ມູນຄ່າການສົ່ງອອກ | % | 26.08% | 19.32% | 35.77% | 30.37% | 27.20% | **28.08%** | | | 18 |
| | ມູນຄ່າການນຳເຂົ້າ | % | 29.91% | 29.23% | 35.81% | 41.40% | 34.99% | **34.79%** | | | |
| | ດຸ່ນການຄ້າ | % | -3.83% | -9.91% | -0.04% | -11.03% | -7.79% | **-6.71%** | | | |

ແຫຼ່ງຂໍ້ມູນ: ກະຊວງການເງິນ (ສະບັບວັນທີ 20 ເມສາ 2016), ທະນາຄານແຫ່ງສປປ ລາວ, ກະຊວງອຸດສາຫະກຳ ແລະ ການຄ້າ, ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# ເອກະສານຊ້ອນທ້າຍ 3: ຄາດໝາຍຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020)

| **ລາຍການ** | **ສົກປີ / ມູນຄ່າ** | **2016-2020** |
|---|---|---|
| ພົນລະເມືອງ | ລ້ານຄົນ | 7.08 |
| ອັດຕາການຂະຫຍາຍຕົວຂອງ GDP | % | 7.5 |
| ອັດຕາການຂະຫຍາຍຕົວຂອງກະສິກຳ-ປ່າໄມ້ ແລະ ການປະມົງ | % | 3.2 |
| ອັດຕາການຂະຫຍາຍຕົວຂອງອຸດສະຫະກຳ | % | 9.3 |
| ອັດຕາການຂະຫຍາຍຕົວຂອງບໍລິການ | % | 8.9 |
| ໂຄງປະກອບ: ກະສິກຳ-ປ່າໄມ້ ແລະ ການປະມົງ | % | 19.0 |
| ອຸດສະຫະກຳ | % | 32.0 |
| ບໍລິການ | % | 41.0 |
| ມູນຄ່າລວມຍອດຜະລິດຕະພັນພາຍໃນ (GDP) ໃນປີ | ຕື້ກີບ | 746,896 |
| ມູນຄ່າລວມຍອດຜະລິດຕະພັນພາຍໃນ (GDP) ໃນປີ | ລ້ານໂດລາ | 90,509 |
| GDP ຕໍ່ຫົວຄົນ | ລ້ານກີບ/ຄົນ | 26.5 |
| GDP ຕໍ່ຫົວຄົນ | ໂດລາ/ຄົນ | 3,190 |
| GNI ຕໍ່ຫົວຄົນ (ຄິດໄລ່ວິທີ Atlast) | ໂດລາ/ຄົນ | 2,520 |
| **ສັດສ່ວນການລົງທຶນທັງໝົດຕໍ່ GDP** | **%** | **30%** |
| **ການລົງທຶນທັງໝົດ** | **ຕື້ກີບ** | **223,000** |
| **ການລົງທຶນຈາກງົບປະມານພາຍໃນ** | **%** | **9-11%** |
| *ສັດສ່ວນຕໍ່ GDP* | *%* | *3.3* |
| **ການຊ່ວຍເຫຼືອລ້າ ແລະ ກູ້ຢືມ** | **%** | **12-16%** |
| *ສັດສ່ວນຕໍ່ GDP* | *%* | *3.8* |
| **ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ** | **%** | **54-57%** |
| *ສັດສ່ວນຕໍ່ GDP* | *%* | *16.6* |
| **ການລົງທຶນຈາກລະບົບການເງິນ-ເງິນຕາ** | **%** | **19-21%** |
| *ສັດສ່ວນຕໍ່ GDP* | *%* | *6.0* |
| **ລາຍຮັບງົບປະມານທັງໝົດ** | **% ຕໍ່ GDP** | **19-20%** |
| *ລາຍຮັບພາຍໃນ* | *% ຕໍ່ GDP* | *16-17%* |
| **ລາຍຈ່າຍທັງໝົດ** | **% ຕໍ່ GDP** | **ບໍ່ເກີນ 25%** |
| **ຂາດດຸນງົບປະມານ** | **% ຕໍ່ GDP** | **ບໍ່ເກີນ 5%** |
| ອັດຕາການຂະຫຍາຍຕົວຂອງການສົ່ງອອກ | % | >15 ຕໍ່ປີ |
| ອັດຕາເງິນເຟີ້ | % | <5 ຕໍ່ປີ |
| ຄາດຄະເນ ຈະມີກຳລັງແຮງງານທັງໝົດປະມານ | ລ້ານຄົນ | 4.41 |
| ອັດຕາຄວາມທຸກຍາກ | % | <10% |
| ອັດຕາການຮູ້ໜັງສືຂອງປະຊາຊົນໃນເກນອາຍຸ 15 ປີ ຂຶ້ນໄປ | % | 95% |
| ອັດຕາຊົມໃຊ້ນໍ້າສະອາດ | % | 90% |
| ອັດຕາການຕາຍຂອງເດັກອາຍຸຕໍ່າກວ່າ 1 ປີ | ຕໍ່ເດັກເກີດມີຊີວິດ 1000 ຄົນ | 30 |
| ອັດຕາການຕາຍຂອງແມ່ | ຕໍ່ເດັກເກີດມີຊີວິດ 100000 ຄົນ | 160 |
| ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ມີນໍ້າໜັກຕໍ່າກວ່າມາດຕະຖານ | % | 20% |
| ອັດຕາສ່ວນຂອງເດັກນ້ອຍລຸ່ມ 5 ປີ ທີ່ເຕ້ຍ | % | 32% |
| ຂອບເຂດປົກຄຸມປະກັນສັງຄົມ ແລະ ປະກັນສຸຂະພາບ | % ຂອງພົນລະເມືອງ | 80% |
| ສຳຫຼວດ ແລະ ຂຶ້ນທະບຽນອອກໃບຕາດິນໃນຂອບເຂດທົ່ວປະເທດ | ຕອນ | 400,000 |
| ຈັດສັນ, ກຳນົດເຂດ, ຟື້ນຟູ ແລະ ຂະຫຍາຍເນື້ອທີ່ປ່າໄມ້ | % ຂອງເນື້ອທີ່ທົ່ວປະເທດ | 70% |

# ເອກະສານຊ້ອນທ້າຍ 4: ຕາຕະລາງສັງລວມຄວາມທຸກຍາກ, ຊ່ອງວ່າງ, ຄວາມຮຸນແຮງຂອງຄວາມທຸກຍາກ ແລະ ຄວາມແຕກໂຕນຂອງສັງຄົມ

| ລ/ດ | ຊື່ແຂວງ ແລະ ເຂດ | ການຊົມໃຊ້ຂອງຄົວເຮືອນ | | | ອັດຕາຄວາມທຸກຍາກ | | | | | | | | | | | | ຊ່ອງວ່າງຄວາມທຸກຍາກ | | | ຄວາມຮຸນແຮງຂອງຄວາມທຸກຍາກ | | | ຄວາມບໍ່ສະເໝີພາບ | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | ສະເລ່ຍຕໍ່ເດືອນ | | | ລວມ | | | 2002/2003 | | 2007/2008 | | 2012/2013 | | 2002/2003 | 2007/2008 | 2012/2013 | 2002/2003 | 2007/2008 | 2012/2013 | 2002/2003 | 2007/2008 | 2012/2013 |
| | | 2002/2003 | 2007/2008 | 2012/2013 | 2002/2003 | 2007/2008 | 2012/2013 | ຕົວເມືອງ | ຊົນນະບົດ | ຕົວເມືອງ | ຊົນນະບົດ | ຕົວເມືອງ | ຊົນນະບົດ | | | | | | | | | |
| | **ສປປລາວ** | **1.089,4** | **2.170,7** | **2.047,5** | **33,5** | **27,6** | **23,2** | **19,7** | **37,6** | **17,4** | **31,7** | **10,0** | **28,6** | **8,0** | **6,5** | **5,5** | **2,8** | **2,3** | **1,9** | **32,46** | **35,04** | **36,17** |
| | *ຕົວເມືອງ* | *1.703,0* | *2.950,2* | *2.687,4* | *19,7* | *17,4* | *10,0* | | | | | | | *4,1* | *3,4* | *2,3* | *1,3* | *1,1* | *0,8* | *34,40* | *35,80* | *37,51* |
| | *ຊົນນະບົດ* | *854,3* | *1.826,1* | *1.782,2* | *37,6* | *31,7* | *28,6* | | | | | | | *9,2* | *7,7* | *6,8* | *3,2* | *2,8* | *2,3* | *30,24* | *33,05* | *35,52* |
| **I** | **ພາກເໜືອ** | **975,5** | **1.975,7** | **1.873,0** | **37,9** | **32,5** | **25,8** | **30,6** | **39,1** | **14,6** | **36,5** | **8,9** | **29,9** | **9,4** | **7,7** | **5,9** | **3,3** | **2,7** | **1,9** | **30,7** | **35,2** | |
| 1 | ຜົ້ງສາລີ | 762,5 | 1.258,6 | 1.825,5 | 50,8 | 46,0 | 12,3 | 36,8 | 52,7 | 5,6 | 50,1 | | | 11,8 | 11,8 | 2,1 | 4,0 | 4,2 | 0,5 | 22,2 | 29,8 | |
| 2 | ຫລວງນໍ້າທາ | 1.028,6 | 1.654,6 | 2.423,6 | 22,8 | 30,5 | 16,1 | 26,0 | 22,1 | 7,8 | 35,7 | | | 4,1 | 6,1 | 2,5 | 1,1 | 1,8 | 0,7 | 25,4 | 30,1 | |
| 3 | ອຸດົມໄຊ | 802,6 | 1.734,9 | 1.881,8 | 45,1 | 33,7 | 30,1 | 38,9 | 46,2 | 13,0 | 38,6 | | | 10,8 | 8,6 | 6,4 | 3,6 | 3,3 | 2,0 | 24,7 | 31,6 | |
| 4 | ບໍ່ແກ້ວ | 821,8 | 1.279,0 | 1.560,0 | 21,1 | 32,6 | 44,4 | 24,5 | 20,6 | 17,9 | 35,3 | | | 5,3 | 7,9 | 11,6 | 1,9 | 2,8 | 4,2 | 29,1 | 28,9 | |
| 5 | ຫລວງພະບາງ | 1.116,9 | 2.177,6 | 1.817,7 | 39,5 | 27,2 | 25,5 | 29,7 | 40,6 | 13,5 | 30,8 | | | 10,4 | 5,5 | 5,3 | 3,7 | 1,6 | 1,6 | 31,5 | 31,6 | |
| 6 | ຫົວພັນ | 939,2 | 1.471,5 | 1.734,6 | 51,5 | 50,5 | 39,2 | 26,1 | 54,8 | 28,6 | 52,7 | | | 13,9 | 13,6 | 11,3 | 5,2 | 4,9 | 4,3 | 28,9 | 28,3 | |
| 7 | ໄຊຍະບູລີ | 1.100,6 | 3.035,4 | 1.990,1 | 25,0 | 15,7 | 15,4 | 29,8 | 23,7 | 15,3 | 15,8 | | | 5,8 | 3,0 | 2,9 | 1,9 | 0,9 | 0,8 | 34,6 | 42,0 | |
| 8 | ໄຊສົມບູນ | | | | | | | | | | | | | | | | | | | | | |
| **II** | **ພາກກາງ** | **1.236,7** | **2.389,1** | **1.939,1** | **35,4** | **29,8** | **23,3** | **20,1** | **39,0** | **22,2** | **33,5** | **12,8** | **26,9** | **8,4** | **6,9** | **5,2** | **3,0** | **2,5** | **1,7** | **31,0** | **34,0** | |
| 1 | ນະຄອນຫລວງວຽງຈັນ | 1.898,9 | 3.183,1 | 3.417,4 | 16,7 | 15,2 | 5,9 | 15,6 | 20,2 | 15,3 | 15,2 | | | 3,4 | 3,4 | 1,5 | 1,0 | 1,2 | 0,6 | 36,0 | 38,0 | |
| 2 | ຊຽງຂວາງ | 1.043,5 | 2.191,0 | 1.961,2 | 41,6 | 42,0 | 31,9 | 19,7 | 46,6 | 16,6 | 48,1 | | | 8,4 | 13,4 | 8,3 | 3,0 | 6,0 | 3,0 | 31,5 | 38,0 | |
| 3 | ວຽງຈັນ | 1.189,5 | 1.857,5 | 2.115,1 | 19,0 | 28,0 | 12,0 | 12,4 | 19,9 | 14,9 | 31,7 | | | 12,3 | 6,2 | 1,8 | 5,5 | 2,0 | 0,4 | 31,5 | 32,1 | |
| 4 | ບໍລິຄໍາໄຊ | 961,5 | 2.019,1 | 1.840,9 | 28,7 | 21,5 | 16,4 | 15,1 | 37,0 | 18,1 | 22,4 | | | 3,4 | 4,3 | 3,6 | 0,9 | 1,3 | 1,2 | 27,9 | 33,9 | |
| 5 | ຄໍາມ່ວນ | 872,3 | 1.871,8 | 1.525,6 | 33,7 | 31,4 | 26,4 | 23,8 | 35,9 | 37,2 | 29,8 | | | 5,5 | 6,7 | 6,8 | 1,5 | 2,2 | 2,5 | 28,9 | 31,5 | |
| 6 | ສະຫວັນນະເຂດ | 960,7 | 2.365,0 | 2.053,9 | 43,1 | 28,5 | 27,9 | 23,2 | 48,0 | 22,2 | 34,6 | | | 7,7 | 6,1 | 6,1 | 2,6 | 2,1 | 2,0 | 31,3 | 34,2 | |
| **III** | **ພາກໃຕ້** | **909,3** | **1.948,0** | **1.873,8** | **32,6** | **22,8** | **29,2** | **12,8** | **35,5** | **11,3** | **25,5** | **16,1** | **32,2** | **7,6** | **5,6** | **7,6** | **2,5** | **2,1** | **2,8** | **31,4** | **32,2** | |
| 1 | ສາລະວັນ | 683,8 | 1.455,9 | 1.305,4 | 54,3 | 36,3 | 49,8 | 12,4 | 57,1 | 3,1 | 38,7 | | | 13,1 | 9,1 | 14,7 | 4,3 | 3,3 | 5,7 | 27,1 | 30,0 | |
| 2 | ເຊກອງ | 803,7 | 1.518,7 | 2.085,1 | 41,8 | 51,8 | 42,7 | 25,6 | 44,6 | 19,5 | 59,3 | | | 11,8 | 19,1 | 11,6 | 4,7 | 9,3 | 5,0 | 30,7 | 37,9 | |
| 3 | ຈໍາປາສັກ | 1.053,3 | 2.299,5 | 1.968,6 | 18,4 | 10,0 | 19,9 | 11,0 | 19,8 | 12,0 | 9,3 | | | 3,6 | 1,6 | 4,2 | 1,1 | 0,4 | 1,4 | 29,9 | 28,7 | |
| 4 | ອັດຕະປື | 837,9 | 1.759,7 | 2.559,9 | 44,0 | 24,6 | 8,9 | 16,7 | 47,3 | 9,0 | 28,9 | | | 11,6 | 4,6 | 1,4 | 4,1 | 1,3 | 0,3 | 29,4 | 32,4 | |

ໝາຍເຫດ: * ການຄິດໄລ່ອັດຕາສ່ວນຄວາມທຸກຍາກພາກກາງ ແມ່ນບໍ່ໄດ້ລວມເອົານະຄອນຫລວງວຽງຈັນເຂົ້າ

* ສໍາລັບແຂວງໄຊສົມບູນຍັງບໍ່ທັນມີຕົວເລກ

* ຂໍ້ມູນຈາກ ສູນສະຖິຕິແຫ່ງຊາດ

# ເອກະສານຊ້ອນທ້າຍ 5: ອະທິບາຍຄຳສັບ

- **ຜົນໄດ້ຮັບທີ່ຕ້ອງການໃນໄລຍະຍາວ - Intended Impact**

ແມ່ນສິ່ງທີ່ລັດຖະບານມີໜ້າທີ່ຮັບຊອບ ແລະ ສູ້ຊົນເພື່ອໃຫ້ບັນລຸສິ່ງດັ່ງກ່າວນີ້ ໃນກຳນົດເວລາໃດໜຶ່ງທີ່ສາມາດຄວບຄຸມໄດ້.

- **ໝາກຜົນ ຫຼື ເປົ້າໝາຍໃຫຍ່ - Outcome**

ໝາກຜົນ ຫຼື ເປົ້າໝາຍໃຫຍ່ເປັນສິ່ງທີ່ສະທ້ອນໃຫ້ເຫັນເຖິງຜົນສຳເລັດ ແລະ ການປ່ຽນແປງທີ່ດີຂຶ້ນເມື່ອທຽບໃສ່ຂໍ້ມູນປີຖານ, ຊຶ່ງຈະອະທິບາຍຢູ່ໃນແຖວຕັ້ງຂອງຕົວຊີ້ວັດ ແລະ ຄາດໝາຍທີ່ກ່ຽວຂ້ອງຢູ່ໃນຕາຕະລາງຂອບການຕິດຕາມ ແລະ ປະເມີນຜົນ (ເອກະສານຊ້ອນທ້າຍ 1). ໝາກຜົນ ຫຼື ເປົ້າໝາຍໃຫຍ່ ທີ່ກຳນົດຂຶ້ນຄວນເປັນສິ່ງທີ່ສາມາດບັນລຸໄດ້ພາຍຫຼັງການຈັດຕັ້ງປະຕິບັດແຜນ ພາຍໃຕ້ສົມມຸດຖານ ແລະ ຄວາມສ່ຽງທີ່ເປັນໄປໄດ້ ຊຶ່ງເປັນສິ່ງທີ່ຈຳເປັນເພື່ອກ້າວໄປສູ່ການບັນລຸຜົນໄດ້ຮັບທີ່ຕ້ອງ ການໃນໄລຍະຍາວ.

ໝາກຜົນແມ່ນການປ່ຽນແປງຕົວຈິງ ຫຼື ການປ່ຽນແປງພາຍໃຕ້ເງື່ອນໄຂຂອງການພັດທະນາ ຊຶ່ງຖືກກຳນົດໃຫ້ເປັນຜົນໄດ້ຮັບຂອງການພັດທະນາໃນໄລຍະກາງ ເຊິ່ງຖືກລຳດັບໃຫ້ຢູ່ລະຫວ່າງໜ້າວຽກຈຸດສຸມ (Outputs) ແລະ ຜົນໄດ້ຮັບໃນໄລຍະຍາວ (Impacts).

- **ໜ້າວຽກຈຸດສຸມ - Outputs**

ໜ້າວຽກຈຸດສຸມແມ່ນຜົນໄດ້ຮັບ ແລະ ການບໍລິການທີ່ເກີດຂຶ້ນໂດຍຜ່ານການປະຕິບັດຫຼາຍກິດຈະກຳທີ່ພົວພັນກັນ ບົນພື້ນຖານຂອງປັດໄຈນຳເຂົ້າຕ່າງໆ ເປັນຕົ້ນ ທຶນຮອນສຳລັບການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ. ດັ່ງນັ້ນ, ໜ້າວຽກຈຸດສຸມແມ່ນພົວພັນເຖິງຜົນຂອງການຈັດຕັ້ງປະຕິບັດກິດຈະກຳທີ່ສຳເລັດແລ້ວ (ແມ່ນກິດຈະກຳທີ່ພວມປະຕິບັດຢູ່) ຊຶ່ງມີຂະແໜງການເປັນຜູ້ທີ່ຈັດຕັ້ງປະຕິບັດໃຫ້ເກີດຜົນສຳເລັດ.

- **ກິດຈະກຳ - Activities**

ໝາຍເຖິງບັນດາວຽກງານທີ່ຈັດຕັ້ງປະຕິບັດໂດຍນຳໃຊ້ແຫຼ່ງທຶນຈາກແຜນ 5 ປີ ຄັ້ງທີ VIII ເພື່ອບັນລຸໜ້າວຽກຈຸດສຸມທີ່ຕ້ອງ ການ. ໃນການກຳນົດກິດຈະກຳແນະນຳໃຫ້: (i) ຂຽນບັນຊີກິດຈະກຳທີ່ເປັນຕົວແທນຂອງບາດກ້າວໃນການປ່ຽນແປງ-ປະຕິຮູບ, ເປັນກິດຈະກຳທີ່ປະກອບສ່ວນເຮັດໃຫ້ວຽກງານສຳເລັດຜົນ; (ii) ກິດຈະກຳທີ່ກຳນົດຂຶ້ນຄວນສາມາດນຳມາປະຕິບັດໃຫ້ສຳເລັດໄດ້ເມື່ອນຳໃຊ້ປັດໄຈນຳເຂົ້າຕ່າງໆ; ແລະ (iii) ຄວນລາຍງານວັນທີທີ່ກິດຈະກຳໄດ້ສຳເລັດ ແລະ/ຫຼື ຄວນມີການກຳນົດເວລາທີ່ຕ້ອງການສຳເລັດແຕ່ລະກິດຈະກຳ.

ການກຳນົດກິດຈະກຳທີ່ສຳຄັນໃຫ້ເປັນບັນຊີຄັກແນ່ຈະເປັນພື້ນຖານໃຫ້ແກ່ຂະແໜງການໃນການກະກຽມຈັດຕັ້ງປະຕິບັດແຜນການ 5 ປີ ຄັ້ງທີ VIII.

- **ປັດໄຈນຳເຂົ້າ - Inputs**

ປັດໄຈນຳເຂົ້າໝາຍເຖິງສິ່ງທີ່ສຳຄັນຕົ້ນຕໍ ແລະ ຈຳເປັນໃນການຈັດຕັ້ງປະຕິບັດບັນດາກິດຈະກຳ ກໍ່ຄືບັນລຸໜ້າວຽກຈຸດສຸມທີ່ກຳນົດໄວ້. ປັດໄຈນຳເຂົ້າອາດລວມເຖິງບັນດາການຊ່ວຍເຫຼືອດ້ານວິຊາການ, ພະນັກງານ, ການກໍ່ສ້າງ, ອຸປະກອນຮັບໃຊ້, ເຄື່ອງມື ແລະ ທຶນຮອນສະໜັບສະໜູນດ້ານການບໍລິຫານ, ຊຶ່ງອາດຈະສະໜອງໃຫ້ໂດຍ ລັດຖະບານ, ຜູ້ຮ່ວມໃຫ້ທຶນ ແລະ ພາກສ່ວນ ອື່ນໆ ລວມທັງພາກສ່ວນທີ່ໄດ້ຮັບຜົນປະໂຫຍດຈາກການຈັດຕັ້ງປະຕິບັດບັນດາກິດຈະກຳທີ່ກ່ຽວຂ້ອງ. ການກຳນົດປັດໄຈເຫຼົ່ານີ້ ຄວນລວມເອົາ: (i) ຜູ້ໃຫ້ທຶນ ແລະ ປະເພດຂອງທຶນ ທີ່ເປັນເງິນ ແລະ/ຫຼື ວັດຖຸສິ່ງຂອງ; (ii) ການປະກອບສ່ວນທາງດ້ານປັດໄຈທີ່ເປັນວັດຖຸສິ່ງຂອງຈາກພາກສ່ວນອື່ນໆທີ່ກ່ຽວຂ້ອງ.

- **ຕົວຊີ້ວັດ - Indicators**

ຕົວຊີ້ວັດແມ່ນສິ່ງທີ່ໃຊ້ວັດແທກສະເພາະໃດວຽກງານໜຶ່ງທີ່ສາມາດຕິດຕາມຄວາມຄືບໜ້າທຽບໃສ່ຄາດໝາຍ (ອາດຈະບໍ່ມີຄາດໝາຍ) ທີ່ກ່ຽວຂ້ອງໄດ້. ເງື່ອນໄຂຂອງການກຳນົດຕົວຊີ້ວັດໃຫ້ມີປະສິດທິພາບມັກຮູ້ຈັກກັນດີໃນຄຳຫຍໍ້ທີ່ວ່າ CREAM. ຄຳຫຍໍ້ດັ່ງກ່າວແມ່ນມາຈາກ: (i) clarity - ຊັດເຈນ; (ii) relevance - ມີຄວາມສອດຄ່ອງ; (iii) economic (affordable to measure) - ຢູ່ໃນຂອບເຂດງົບປະມານທີ່ສົມເຫດສົມຜົນ (ເພື່ອສາມາດຕິດຕາມໄດ້); (iv) adequate - ຄົບຖ້ວນພຽງພໍ; ແລະ(v) monitorable - ສາມາດຕິດຕາມໄດ້.

Clarity - ຄວາມຊັດເຈນໝາຍເຖິງຕົວຊີ້ວັດຈະຕ້ອງຊັດເຈນທາງດ້ານຄວາມໝາຍ ໂດຍທີ່ບໍ່ກໍ່ໃຫ້ເກີດຄວາມເຂົ້າໃຈໄປໃນທາງອື່ນໄດ້. Relevance - ຄວາມສອດຄ່ອງເປັນສິ່ງທີ່ສຳຄັນຫຼາຍ: ຕ້ອງການເນັ້ນໜັກເຖິງຕົວຊີ້ວັດໃນລະດັບໝາກຜົນຊຶ່ງຈະຕ້ອງບໍ່ເປັນແບບລວມໆ, ຕ້ອງກຳນົດຂຶ້ນເພື່ອຈຸດປະສົງໃດໜຶ່ງໂດຍສະເພາະແລະບໍ່ສາມາດເປັນຕົວຊີ້ວັດຂອງແຜນການອັນອື່ນໄດ້. Affordability - ຕົວຊີ້ວັດຕ້ອງຢູ່ໃນຂອບເຂດງົບປະມານທີ່ສົມເຫດສົມຜົນເປັນ ໂດຍສະເພາະໃນການເກັບກຳ ແລະ ການວິເຄາະຂໍ້ມູນ: ຖ້າຕົວຊີ້ວັດໃດຫາບໍ່ຢູ່ໃນຂອບເຂດງົບປະມານທີ່ສົມເຫດສົມຜົນ, ຕ້ອງການງົບປະມານທີ່ສູງກວ່າຄວາມສາມາດທີ່ມີ, ກໍ່ບໍ່ຄວນໃຊ້ຕົວຊີ້ວັດດັ່ງກ່າວ. Adequate - ຕົວຊີ້ວັດຄວນມີຄວາມຄົບຖ້ວນ ໝາຍເຖິງຄວາມຄົບຖ້ວນໃນທຸກດ້ານທີ່ກ່ຽວຂ້ອງກັບແຜນ. Monitorability - ຕົວຊີ້ວັດຕ້ອງສາມາດຕິດຕາມໄດ້ ໝາຍວ່າຕ້ອງສາມາດວັດແທກໄດ້ບົນພື້ນຖານຂອງແຫຼ່ງຂໍ້ມູນທີ່ມີ (ທັງໃນດ້ານກຳນົດເວລາ, ຄວາມຖີ່ໃນການເກັບກຳຂໍ້ມູນ ແລະ ຄຸນນະພາບຂອງຂໍ້ມູນ).

- **ຕົວຊີ້ວັດໃນລະດັບຜົນໄດ້ຮັບໃນໄລຍະຍາວ - Indicator Impact - level**

ຕົວຊີ້ວັດໃນລະດັບຜົນໄດ້ຮັບໄລຍະຍາວແມ່ນຕົວຊີ້ວັດສຳລັບວັດແທກຜົນໄດ້ຮັບໃນໄລຍະກາງຫາໄລຍະຍາວຂອງການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສະບັບປະຈຸບັນຫຼືການຈັດຕັ້ງປະຕິບັດແຜນການໃນໄລຍະຕ່າງໆ. ດັ່ງນັ້ນ, ຕົວຊີ້ວັດສຳລັບຜົນໄດ້ຮັບໄລຍະຍາວລວມມີບັນດາຄາດໝາຍບໍ່ນອນຢູ່ໃນໄລຍະເວລາທີ່ກຳນົດໄວ້ໃນແຜນການ 5 ປີ ຄັ້ງທີ VIII. ສະນັ້ນໃນຂະບວນການກຳນົດໂຄງການຈະຕ້ອງມີການກຳນົດໜ້າທີ່ຮັບຜິດຊອບຕໍ່ວຽກງານການຕິດຕາມແລະວັດແທກຕົວຊີ້ວັດຜົນໄດ້ຮັບໄລຍະຍາວ (ເຊັ່ນ: ກົມແຜນການ, ຜທ).

- **ຕົວຊີ້ວັດໃນລະດັບໝາກຜົນ - Outcome - level Indicator**

ຕົວຊີ້ວັດໃນລະດັບໝາກຜົນ ຫຼື ຕົວຊີ້ວັດເພື່ອວັດແທກຜົນໄດ້ຮັບພາຍຫຼັງການຈັດຕັ້ງປະຕິບັດແຜນ ໝາຍເຖິງຜົນໄດ້ຮັບໃນທັນທີ ຫຼື ການປ່ຽນແປງໃນທັນທີທາງດ້ານພຶດຕິກຳຂອງປະຊາຊົນ, ຜູ້ທີ່ໄດ້ຮັບຜົນປະໂຫຍດ ແລະ ການປ່ຽນແປງທີ່ເກີດຂຶ້ນຂອງລະບົບ ຫຼື ສະຖາບັນທີ່ຄາດວ່າຈະເກີດຂຶ້ນທັນທີພາຍຫຼັງການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VIII. ສິ່ງເຫຼົ່ານີ້ແມ່ນເປົ້າໝາຍຂອງແຜນ 5 ປີຄັ້ງທີ VIII ທີ່ຈະຕ້ອງສູ້ຊົນບັນລຸໃຫ້ໄດ້ ແລະ ທັງເປັນຕົວວັດແທກພື້ນຖານໃນການປະເມີນການຈັດຕັ້ງປະຕິບັດແຜນ ການ 5 ປີ ຄັ້ງທີ VIII. ກົມແຜນການ, ຜທ ຈະເປັນຜູ້ຮັບຜິດຊອບໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດຕົວຊີ້ວັດໃນລະດັບໝາກຜົນ.

- **ຕົວຊີ້ວັດໃນລະດັບໜ້າວຽກຈຸດສຸມ - Output - level Indicator**

ການໃຫ້ນິຍາມຕົວຊີ້ວັດໃນລະດັບໜ້າວຽກຈຸດສຸມແມ່ນງ່າຍດາຍທີ່ສຸດ. ຕົວຊີ້ວັດໃນລະດັບວຽກງານຈຸດສຸມ ໝາຍເຖິງສິ່ງທີ່ສາມາດຈັບຕ້ອງໄດ້ ແລະ ການບໍລິການທີ່ຂະແໜງການຈະຕ້ອງສ້າງຂຶ້ນເພື່ອປະກອບສ່ວນເຂົ້າໃນການບັນລຸໝາກຜົນ. ຕົວຊີ້ວັດເຫຼົ່ານີ້ ເປັນຕົວຊີ້ບອກໜ້າທີ່-ວຽກງານທີ່ຕ້ອງສຳເລັດໃຫ້ໄດ້ພາຍໃນໄລຍະທ້າຍຂອງການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VIII. ຂະ ແໜງການຈະເປັນຜູ້ຮັບຜິດຊອບຕິດຕາມຕົວຊີ້ວັດໃນລະດັບໜ້າວຽກຈຸດສຸມ.

- **ຄາດໝາຍສູ້ຊົນ - Performance Targets**

ແມ່ນຕົວຊີ້ວັດທີ່ເປັນຕົວເລກ ທີ່ ສປປ ລາວ ຕ້ອງການຈະບັນລຸໃຫ້ໄດ້ໃນໄລຍະທ້າຍຂອງການຈັດຕັ້ງປະຕິບັດແຜນ. ສູດຂອງການກຳນົດຄາດໝາຍສູ້ຊົນມີງ່າຍໆດັ່ງນີ້: *ຂໍ້ມູນປີຖານ+ລະດັບການປ່ຽນແປງທີ່ຕ້ອງການ = ຄາດໝາຍສູ້ຊົນ.*

ລະດັບການປ່ຽນແປງທີ່ຕ້ອງການ ຈະຊ່ວຍກຳນົດຂອບເຂດ ແລະ ລະດັບຄວາມຕ້ອງການທາງດ້ານປັດໄຈນຳເຂົ້າ, ກິດຈະກຳ ແລະ ໜ້າວຽກຈຸດສຸມ (ຊຶ່ງຈະຕ້ອງມີການປັບຢ່າງເປັນປົກກະຕິ). ໃນແຜນການລະດັບຊາດ, ຄາດໝາຍສູ້ຊົນທີ່ກຳນົດຂຶ້ນສຳລັບຕົວຊີ້ວັດໃນລະດັບໜ້າວຽກຈຸດສຸມ (output level) ແມ່ນເປັນຄາດໝາຍສູ້ຊົນໃນລະດັບໝາກຜົນ (outcome level) ຂອງຂະແໜງການ. ໃນເວລາກຳນົດຄ່າຂອງຄາດໝາຍສູ້ຊົນສຳລັບຕົວຊີ້ວັດທີ່ກ່ຽວຂ້ອງ:

ໃຫ້ກຳນົດຄາດໝາຍໃນຂອບເຂດໃດໜຶ່ງດີກວ່າໃຊ້ຄ່າດ່ຽວ, ເນື່ອງຈາກວ່າມັນບໍ່ພຽງແຕ່ຈະເປັນການຍາກທີ່ຈະກຳນົດຄາດໝາຍດ້ວຍຄ່າດ່ຽວແຕ່ມັນຍັງຊ່ວຍບອກຂອບເຂດຜົນໄດ້ຮັບທີ່ຕ້ອງການຕ່ຳສຸດ ແລະ ຜົນໄດ້ຮັບທີ່ເປັນໄປໄດ້ສູງສຸດ, ຕົວຢ່າງ: ການກຳນົດຄາດໝາຍໃນລະຫວ່າງ x% ຫາ y% ແມ່ນຈະດີກວ່າກຳນົດຄາດໝາຍ y% ຢ່າງດຽວ. ຜົນໄດ້ຮັບທີ່ສູງກວ່າ ຫຼື ຕ່ຳກວ່າຂອບເຂດຄາດໝາຍດັ່ງກ່າວຖືໄດ້ວ່າເປັນ ຜົນໄດ້ຮັບທີ່ຢູ່ໃກ້ກັບຄາດໝາຍ. ດັ່ງນັ້ນ, ກໍ່ອາດຈະສາມາດກຳນົດຄາດໝາຍໄດ້ດ້ວຍການໃຊ້ຄຳເວົ້າວ່າຕ່ຳສຸດ x%.

ກຳນົດຄາດໝາຍສູ້ຊົນ ໂດຍການອ້າງອີງໃສ່ຄາດໝາຍຕົວຊີ້ວັດອື່ນທີ່ໃກ້ຄຽງ. ຖ້າຂໍ້ມູນຈາກຕົວຊີ້ວັດດັ່ງກ່າວຫາກສາມາດໃຊ້ເປັນພື້ນຖານຂອງການວັດແທກ, ມັນກໍ່ຈະຊ່ວຍຄາດຄະເນຜົນການຈັດຕັ້ງປະຕິບັດຄາດໝາຍທີ່ຕ້ອງການໄດ້.

ຖ້າເປັນໄປໄດ້, ຄວນກຳນົດຄາດໝາຍຂັ້ນສອງ (intermediate targets) ຊຶ່ງສາມາດບັນລຸໄດ້ໃນໄລຍະທີ່ກຳລັງຈັດຕັ້ງປະຕິບັດແຜນ ແລະ ພາຍຫຼັງທີ່ການຈັດຕັ້ງປະຕິບັດແຜນສິ້ນສຸດ. ວິທີດັ່ງກ່າວ ຈະຊ່ວຍເຮັດໃຫ້ສາມາດຄາດຄະເນຄາດໝາຍທີ່ເປັນໄປໄດ້ ພ້ອມທັງເປັນພື້ນຖານໃນການປະເມີນຜົນສຳເລັດທີ່ຄາດວ່າຈະໄດ້ຮັບໃນໄລຍະທີ່ກຳລັງຈັດຕັ້ງປະຕິບັດແຜນໄດ້ດີກວ່າ.ຂໍ້ມູນປີຖານ

- **ຂໍ້ມູນປີຖານ**

ເປັນປັດໄຈໜຶ່ງທີ່ສຳຄັນໃນການຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດແຜນ. ຂໍ້ມູນປີຖານຊ່ວຍໃນການປະເມີນວ່າ ພວກເຮົາມາຮອດໃສແລ້ວເມື່ອທຽບໃສ່ຄາດໝາຍທີ່ຕ້ອງການຈະບັນລຸ. ສະນັ້ນ, ຈຶ່ງບໍ່ຄວນມອງຂ້າມການກຳນົດຄ່າຂໍ້ມູນປີຖານໃຫ້ຖືກຕ້ອງ: ຂອບຕິດຕາມ-ປະເມີນຜົນແຜນ 5 ປີ ຄັ້ງທີ VIII ມີຂໍ້ມູນປີຖານທີ່ຈຳກັດຫຼາຍ ແລະ ຖ້າຂາດຂໍ້ມູນເຫຼົ່ານີ້ກໍ່ເປັນການຍາກທີ່ຈະປະເມີນຄວາມຄືບໜ້າຂອງການຈັດຕັ້ງປະຕິບັດແຜນ. ຂໍ້ມູນປີຖານສ່ວນຫຼາຍທີ່ກຳນົດຢູ່ໃນຂອບຕິດຕາມ-ປະເມີນຜົນແມ່ນຂໍ້ມູນເກົ່າ (ເຊັ່ນ: ຂໍ້ມູນປີຖານສຳລັບກະຈັດຕັ້ງປະຕິບັດເປົ້າໝາຍ MDGs ແມ່ນເປັນຂໍ້ມູນປີ 2008). ເຫັນໄດ້ວ່າຂໍ້ມູນດັ່ງກ່າວນີ້ແມ່ນບໍ່ທັນຄົບຖ້ວນສຳລັບປະເມີນຜົນການຈັດຕັ້ງປະຕິບັດແຜນ 5 ປີ ຄັ້ງທີ VII ກ່ຽວກັບເປົ້າໝາຍ MDGs.

ຂໍ້ມູນປີຖານອາດສາມາດເອົາມາຈາກການລາຍງານຂໍ້ມູນສຳລັບແຜນໂດຍສະເພາະ ແລະ ສາມາດເອົາມາຈາກແຫຼ່ງຂໍ້ມູນຂັ້ນສອງຊຶ່ງເປັນຂໍ້ມູນທີ່ເກັບກຳເພື່ອຈຸດປະສົງອື່ນ, ແຕ່ສາມາດໃຊ້ເຂົ້າໃນການຕິດຕາມແຜນໄດ້. ແຫຼ່ງຂໍ້ມູນຂັ້ນສອງສາມາດເອົາມາຈາກພາກສ່ວນຈັດຕັ້ງປະຕິບັດແຜນ, ການສຳຫຼວດຂອງສູນສະຖິຕິແຫ່ງຊາດ, ຂໍ້ມູນຈາກອົງການຈັດຕັ້ງສາກົນ ແລະ ອື່ນໆ. ການນຳໃຊ້ຂໍ້ມູນຂັ້ນສອງສາມາດຫຼຸດຜ່ອນຄ່າໃຊ້ຈ່າຍສຳລັບຕິດຕາມ-ປະເມີນຜົນ, ແຕ່ຕ້ອງເອົາໃຈໃສ່ວ່າຂໍ້ມູນທີ່ໄດ້ມາຈາກແຫຼ່ງຕ່າງໆເຫຼົ່ານີ້ເປັນຂໍ້ມູນທີ່ສອດຄ່ອງກັບຄວາມຕ້ອງການແທ້ໆ.

ການອອກແບບ: Inis Communication www.iniscommunication.com

Empowered lives. Resilient nations.